ພູມີ ວົງວິຈິດ

ຄວາມຊົງຈຳ

ຂອງຊີວິດເຮົາ

ໃນຂະບວນວິວັດແຫ່ງປະຫວັດສາດ

ຂອງປະເທດລາວ

ພູມີ ວົງວິຈິດ

ຄວາມຊົງຈຳ ຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດ ຂອງປະເທດລາວ

1987

ຄຳນຳ

ເພື່ອນນັກອ່ານທີ່ຮັກແພງ

ການຊອກຮູ້ຮ່ຳຮຽນແບບຢ່າງການດຳລົງຊີວິດ ແລະ ການຕໍ່ສູ້ຂອງຜູ້ນຳການປະຕິວັດນັ້ນເປັນຄວາມຕ້ອງການອັນຈຳເປັນ ແລະ ຮີບດ່ວນຂອງຊາວໜຸ່ມຜູ້ເກີດໃໝ່ໃຫຍ່ລຸ່ນ ເຊິ່ງເປັນຜູ້ສືບທອດພາລະກິດປະຕິວັດທີ່ຮຸ່ນກ່ອນໄດ້ດຳເນີນມາຢ່າງມີໄຊແລ້ວນັ້ນ. ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດັ່ງກ່າວນັ້ນ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ຈຶ່ງຂໍຖືເປັນກຽດນຳເອົາປຶ້ມບັນທຶກຄວາມ ຊົງຈຳຂອງທ່ານ ພູມີ ວົງວິຈິດ ມາສະເໜີຕໍ່ພວກເພື່ອນນັກອ່ານທັງຫຼາຍ. ຊື່ຂອງປຶ້ມຫົວນີ້ວ່າ : " ຄວາມຊົງຈຳຂອງຊີວິດເຮົາໃນຂະບວນວິວັດແຫ່ງປະຫວັດສາດຂອງປະເທດລາວ " . ກໍ່ໄດ້ບົ່ງບອກ ໃຫ້ຮູ້ແລ້ວວ່າ ນີ້ແມ່ນບົດບັນທຶກຄວາມຊົງຈຳຂອງ ທ່ານ ພູມີ ວົງວິຈິດ ເອງນັບແຕ່ເວລາອາຍຸຍັງນ້ອຍມາຈົນເຖິງປະຈຸບັນ ໂດຍໄດ້ຕັ້ງໃຈເນັ້ນໜັກເຖິງການຕໍ່ສູ້ແນວຄິດເພື່ອເຝິກຝົນຫຼໍ່ຫຼອມຕົນຈົນກາຍເປັນນັກປະຕິວັດຜູ້ດີເດັ່ນ ແລະ ເປັນຜູ້ນຳທີ່ເຄົາລົບຮັກແພງຂອງການປະຕິວັດລາວ .

ປຶ້ມຫົວນີ້ໄດ້ເລີ່ມບັນທຶກເລື່ອງ ມາແຕ່ຄາວຜູ້ຂຽນຍັງເປັນນັກຮຽນແລ້ວໄດ້ອອກເຮັດການຮັບໃຊ້ລາບອບລ່າເມືອງຂຶ້ນເຄິ່ງສັກດີນາ : ຈາກນາຍພາສາກ້າວຂຶ້ນເປັນຫົວໜ້າສານ, ຫຼັງຈາກນັ້ນ ກໍ່ໄດ້ເປັນເຈົ້າເມືອງ, ເຈົ້າແຂວງ ແລະ ໄດ້ຮັບຍົດຖາບັນດາສັກເປັນເຖິງພະຍາ ອັນເປັນຕຳແໜ່ງ ລະດັບສູງຂອງວົງການສັກດີນາລາວຜູ້ປົກຄອງໃນສະໄໝນັ້ນ .

ໃນເມື່ອປະຊາຊົນລາວໄດ້ພ້ອມພຽງກັນລຸກຮື້ຂຶ້ນຍຶດອຳນາດຈາກກຳມືຂອງພວກຟາຊິດຍີ່ປຸ່ນແລະພວກລ່າເມືອງຂຶ້ນຝະລັ່ງ ໃນເດືອນ ຕຸລາ ປີ 1945 ນັ້ນ ທ່ານ ພູມີ ວົງວິຈິດ ໄດ້ຕັດສິນໃຈ ຮ່ວມແຮງຮ່ວມໃຈກັບປະຊາຊົນ ໂດຍຮ່ວມມືກັບລັດຖະບານລາວອິດສະຫຼະ , ສາມັກຄີກັບປະຊາຊົນຫວຽດນາມ ແລະ ກຳປູເຈຍ ເພື່ອຂັບໄລ່ຝະລັ່ງ , ຍາດເອົາເອກະລາດມາສູ່ປະເທດຊາດຂອງຕົນ. ອາດເວົ້າໄດ້ວ່າ ນີ້ແມ່ນໄລຍະເລີ່ມຕົ້ນແຫ່ງການຕໍ່ສູ້ແນວຄິດອັນດຸເດືອດ ແລະ ເຂັ້ມງວດຂອງທ່ານ ພູມີ ວົງວິຈິດ ເອງ ເຊິ່ງທ້າຍທີ່ສຸດໄດ້ພາໃຫ້ເພິ່ນຕັດສິນໃຈປະຍົດຖາບັນດາສັກ ແລະ ຊີວິດຂຸນນາງ ອັນອິ່ມໜຳສຳລານທີ່ລະບອບເກົ່າເອື້ອອຳນວຍໃຫ້ນັ້ນ ແລ້ວຫັນມາຮ່ວມກັບປະຊາຊົນລາວຜູ້ຮັກຊາດທີ່ ຖືກກົດຂີ່ຂູດຮີດ ສືບຕໍ່ດຳເນີນການຕໍ່ສູ້ອັນຫຍຸ້ງຍາກ, ລຳບາກ, ຍືດເຍື້ອຍາວນານ ຕ້ານພວກລ່າເມືອງຂຶ້ນຝະລັ່ງແລ້ວຕ້ານພວກຈັກກະພັດອະເມລິກາ ແລະ ກຸ່ມປະຕິການສັກດີນາ - ນາຍທຶນຂາຍຊາດ- ເພື່ອໃຫ້ປະເທດລາວເຮົາໄດ້ມີເອກະລາດ, ປະຊາທິປະໄຕ ແລະ ກ້າວຂຶ້ນສູ່ສັງຄົມນິຍົມອັນ ເປັນລະບອບສັງຄົມທີ່ກ້າວໜ້າ ແລະ ຈົບງາມກວ່າລະບອບສັງຄົມອື່ນໃດໃນຍຸກສະໄໝນີ້ .

ເພິ່ນໄດ້ສູ້ຊົນເຝິກຝົນຫຼໍ່ຫຼອມຕົນເອງຢ່າງຕັ້ງໜ້າ ແລະ ເຂັ້ມງວດໃນພຶດຕິກຳແຫ່ງການຕໍ່ສູ້ປະຕິວັດ ຈົນສາມາດຫັນປ່ຽນແນວຄິດຂອງຕົນເອງໃຫ້ກາຍເປັນແນວຄິດຂອງຊົນຊັ້ນກຳມະຊີບຢ່າງ ແທ້ຈິງ ອັນໄດ້ພາໃຫ້ເພິ່ນໄດ້ຮັບກຽດອັນສູງສົ່ງເຂົ້າເປັນສະມາຊິກຂອງພັກກອມມູນິດອິນດູຈີນ ໃນ ປີ 1949 ແລະ ຫຼັງຈາກນັ້ນຕໍ່ມາກໍ່ໄດ້ຖືກເລືອກຕັ້ງເຂົ້າຢູ່ໃນວົງການຂັ້ນນຳຕ່າງໆຂອງການປະຕິວັດ

ລາວເຮົາຄື : ເປັນກຳມະການສູນກາງແນວລາວອິດສະຫຼະ ແລະ ເປັນຮອງນາຍົກລັດຖະມົນຕີ ຂອງ ລັດຖະບານລາວຕໍ່ຕ້ານ, ເປັນກຳມະການສູນກາງທັງເປັນເລຂາທິການໃຫຍ່ຂອງແນວລາວຮັກຊາດ, ເປັນກຳມະການສູນກາງພັກປະຊາຊົນລາວ, ເປັນກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ ທັງເປັນຮອງປະທານສະພາລັດຖະມົນຕີ ແລະ ເປັນຜູ້ວ່າການແທນປະທານປະເທດແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ດັ່ງທີ່ເພິ່ນໄດ້ດຳລົງຢູ່ເທົ່າທຸກວັນນີ້ .

ຊີວິດຕົວຈິງຂອງທ່ານ ພູມີ ວົງວິຈິດ, ການຕໍ່ສູ້ແນວຄິດ ແລະ ການເຝິກຝົນຫຼໍ່ຫຼອມຕົນເອງຂອງເພິ່ນທີ່ໄດ້ນຳມາບັນທຶກໄວ້ໃນປຶ້ມຫົວນີ້ ເປັນແບບຢ່າງອັນຮຽງໂຣດໃຫ້ແກ່ພວກເຮົາທຸກຄົນໂດຍສະເພາະແມ່ນຊາວໜຸ່ມປັນຍາຊົນທີ່ພວມສູ້ຊົນບຸກໜ້າບືນຕົວ ເຝິກຝົນຫຼໍ່ຫຼອມຕົນເອງໃນພຶດຕິກຳຂອງການປະຕິ ບັດໜ້າທີ່ວຽກງານຕ່າງໆ ແຕ່ງພາລະກິດການກໍ່ສ້າງ ແລະ ດັດສ້າງສັງຄົມນິຍົມຢູ່ໃນປະເທດຊາດອັນແສນຮັກຂອງພວກເຮົານີ້. ຄວາມຊົງຈຳຂອງທ່ານ ພູມີ ວົງວິຈິດ ທີ່ບັນທຶກໄວ້ໃນປຶ້ມຫົວນີ້ໄດ້ຢັ້ງຢືນໃຫ້ ເຫັນຢ່າງຈະແຈ້ງວ່າ ຄວາມຕັດສິນໃຈຕໍ່ສູ້ແນວຄິດ ແລະ ບຸກບືນເຝິກຝົນຫຼໍ່ຫຼອມຕົນເອງຢ່າງເຂັ້ມງວດ ໃນພຶດຕິກຳຂອງການປະຕິວັດນັ້ນ ສາມາດເຮັດໃຫ້ຄົນເຮົາຫັນປ່ຽນຈາກຂຸນນາງສັກດີນາຈົນກັບກາຍ ມາເປັນນັກປະຕິວັດທີ່ດີເດັ່ນ ແລະ ກ້າວຂຶ້ນໄປເປັນພະນັກງານຂັ້ນນຳລະດັບສູງຂອງການປະຕິວັດໄດ້ . ຈາກນັ້ນຈຶ່ງຢັ້ງຢືນໄດ້ວ່າ ຊາວໜຸ່ມປັນຍາຊົນພວກເຮົາເຊິ່ງບໍ່ທັນຕິດແສດແນວຄິດແບບຂຸນນາງສັກດີນາ-ນາຍທຶນ ມາກ່ອນນັ້ນ, ຖ້າຫາກຕັດສິນໃຈສູ້ຊົນບຸກໜ້າບືນຕົວເຝິກຝົນຫຼໍ່ຫຼອມຕົນເອງຄືດັ່ງທີ່ໄດ້ກ່າວ ມາແລ້ວ ກໍ່ຍິ່ງຈະມີຄວາມສະດວກຫຼາຍກວ່ານັ້ນ ເພື່ອສ້າງຕົນເອງໃຫ້ກາຍເປັນນັກປະຕິວັດຜູ້ດີເດັ່ນ, ເປັນຜູ້ສືບທອດທີ່ພຽບພ້ອມໄປດ້ວຍຄຸນສົມບັດສິນທຳປະຕິວັດ ແລະ ຄວາມສາມາດສູງໃນທຸກດ້ານ ເພື່ອສືບຕໍ່ດຳເນີນພາລະກິດປະຕິວັດສັງຄົມນິຍົມໃນປະເທດເຮົາໃຫ້ກ້າວຂຶ້ນສູ່ໄຊຊະນະໃໝ່ອັນໃຫຍ່ຫຼວງກວ່າເກົ່າຢ່າງບໍ່ຢຸດຢັ້ງ .

ໂດຍຮັບຮູ້ຄຸນປະໂຫຍດອັນໃຫຍ່ຫຼວງຂອງບົດບັນທຶກຄວາມຊົງຈຳດັ່ງກ່າວມານັ້ນ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ຈຶ່ງຮູ້ສຶກເປັນກຽດຢ່າງສູງທີ່ໄດ້ຮັບພາລະຈັດພິມປຶ້ມຫົວນີ້ເພື່ອເຜີຍແຜ່ຢ່າງ ກວ້າງຂວາງໃຫ້ແກ່ພວກເພື່ອນນັກອ່ານທັງຫຼາຍ .

ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ຂໍຖືໂອກາດນີ້ສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ ທ່ານ ພູມີ ວົງວິຈິດ ທີ່ໄດ້ອົດສາພະຍາຍາມຍາດເວລາອັນມີຄ່າຂຽນບົດບັນທຶກຫົວນີ້ຈົນສຳເລັດຜົນຢ່າງຈົບງາມໄວ້ໃຫ້ແກ່ພວກເພື່ອນນັກອ່ານທຸກຄົນໂດຍສະເພາະແມ່ນຊາວໜຸ່ມຜູ້ເປັນຮຸ່ນ ສືບທອດພາລະກິດການປະຕິວັດຂອງທົ່ວພັກ , ທົ່ວປວງຊົນເຮົາ .

ວຽງຈັນ , ວັນທີ 6 ເມສາ 1987

ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ

ກະຊວງສຶກສາ

ຄຳນຳໜ້າ

ເຮົາຂຽນປຶ້ມຫົວນີ້ ແມ່ນເລີ່ມຂຽນໃນວັນທີ່ 6/4/84 ອັນເປັນວັນເກີດຂອງເຮົາຄົບຮອບ 75 ປີ, ຂຽນດ້ວຍຄວາມຄິດອັນດຽວຄື ຢາກເລົ່າຄືນທຸກສິ່ງທີ່ເຮົາຈື່ຈຳໄດ້ ກ່ຽວກັບຊີວິດຂອງເຮົາໃນຍາມຍັງນ້ອຍ, ໃນຍາມເຮັດວຽກຮັບໃຊ້ພວກລ່າເມືອງຂຶ້ນຝະລັ່ງ ແລະ ໃນຍາມທີ່ເຮົາມີໂອກາດດີ ໄດ້ເຂົ້າຮ່ວມສ້າງຕົວໃນການປະຕິວັດຮັບໃຊ້ປະເທດຊາດ ແລະ ຮັບໃຊ້ປະຊາຊົນລາວ.

ທຸກສິ່ງທຸກຢ່າງທີ່ເຮົາຂຽນລົງໃນປຶ້ມຫົວນີ້ ລ້ວນແຕ່ແມ່ນຄວາມຈິງທີ່ເຮົາຈື່ຈຳໄດ້ ຕັ້ງແຕ່ເວລາເຮົາມີອາຍຸ 5,6 ປີ ມາຮອດປະຈຸບັນນີ້ ; ເຮົາເລົ່າຄືນຊີວິດຂອງເຮົາແນວນັ້ນບໍ່ແມ່ນມີແນວຄິດຢາກສະແດງຄວາມເກັ່ງກາສາມາດຂອງເຮົາ ເພື່ອອວດອ້າງທະນົງຕົວແຕ່ຢ່າງໃດ.

ໃນເວລາຂຽນປຶ້ມຫົວນີ້ ເຮົາກໍ່ສຳຫຼວດເບິ່ງຊີວິດ ແລະ ການຫັນປ່ຽນປັ້ນໄປປັ້ນມາຂອງແນວຄິດຂອງເຮົາໃນແຕ່ລະໄລຍະ. ແນ່ນອນໃນຊ່ວໄລຍະ 75 ປີ ແຫ່ງອາຍຸຂອງເຮົານີ້ ເຮົາໄດ້ຜ່ານຫຼາຍເຫດການທີ່ກະທົບເຖິງແນວຄິດຈິດໃຈຂອງເຮົາ. ໃນນັ້ນ ມີຫຼາຍສິ່ງຫຼາຍແນວທີ່ເຮົາໄດ້ລືມໄປແລ້ວ, ເປັນຕົ້ນແມ່ນສິ່ງທີ່ເກີດຂຶ້ນຕັ້ງແຕ່ເຮົາມີອາຍຸ 5,6 ປີຄືນຫຼັງ .

ສິ່ງທີ່ເຮົາຈື່ໄດ້ແມ່ນເຮົາມີຄວາມມ່ວນຊື່ນ ຕາມພາສາເດັກນ້ອຍໃນເວລາພໍ່ເຮົາ ຍັງມີຊີວິດ. ຫຼັງຈາກພໍ່ຕາຍແລ້ວ ເຮົາຮູ້ສຶກລຳບາກໃຈ ຍ້ອນໄດ້ອອກແຮງງານເຮັດນາຕັ້ງແຕ່ອາຍຸ 11 ປີ ຈົນຮອດ 15 ປີ, ເຮັດໃຫ້ເຮົາໄດ້ຊີມລົດແຫ່ງຊີວິດຂອງຊົນຊັ້ນຊາວນາອອກແຮງງານ,ນັບເປັນການຕໍ່ສູ້ແນວຄິດເທື່ອທຳອິດຂອງເຮົາ. ເຮົາອົດທົນໄປເຮັດໄຮ່ນາສວນ ດ້ວຍຄວາມຈຳເປັນ ແຕ່ເຮົາກໍ່ເສຍດາຍຊີວິດອັນມ່ວນຊື່ນຂອງເຮົາໃນຄາວຍັງຢູ່ນຳພໍ່. ເວລາເຮົາໄປຮຽນໜັງສືນັ້ນ ໃນໃຈກໍ່ຮູ້ສຶກທຸກຍາກລຳບາກ ແຕ່ກໍ່ມີຄວາມຫວັງວ່າ ຖ້າຫາກຮຽນໄດ້ເຮົາຈະໄດ້ເຮັດການ ມີເງິນເດືອນ ແລະ ມີຖານະສູງຂຶ້ນ ແລະ ມີຄວາມສຸກ ; ຄວາມຫວັງອັນນີ້ເປັນສິ່ງຊຸກຍູ້ໃຫ້ເຮົາອົດທົນຜ່ານຜ່າທຸກຄວາມຫຍຸ້ງຍາກ ເພື່ອຮ່ຳຮຽນໃຫ້ດີ.

ເວລາເຮົາເລີ່ງໄດ້ນາຍພາສາ, ແມ່ນເວລາທີ່ເຮົາດີໃຈເຖິງລະດັບສູງ, ແຕ່ນັ້ນຊ້ຳພັດແມ່ນເວລາເຮົາເລີ່ມຕົ້ນເປັນລູກມືຮັບໃຊ້ພວກລ່າເມືອງຂຶ້ນຝະລັ່ງ. ເຈົ້າພັດຊະລາດ ເອົາເຮົາໄປຮ່ວມຄົ້ນຄວ້າພາສາລາວ, ປະຫວັດສາດລາວ ແລະ ພຸດທະສາສະໜາ ເຮັດໃຫ້ເຮົາສາມາດຮັບຮູ້ອັນຖືກ ແລະ ອັນຜິດ, ອັນດີ ແລະ ອັນຊົ່ວ, ແຕ່ອັນນັ້ນ ກໍ່ຍັງແມ່ນ ຄຸນສົມບັດຂອງຊົນຊັ້ນສັກດີນາ. ຕະຫຼອດຊ່ວເວລາທີ່ເຮົາເປັນນາຍພາສາຢູ່ນຳຝະລັ່ງ, ພວກນີ້ ກໍ່ສ້າງໃຫ້ເຮົາສັດຊື່ບໍລິສຸດຕໍ່ເຂົາ ແລະ ເບິ່ງເບົາພວກເຈົ້າເມືອງ, ຂ້າລາຊະການ ເປັນຕົ້ນແມ່ນປະຊາຊົນລາວ , ເພີດເພີນຕໍ່ຄວາມຍ້ອງຍໍຂອງພວກພູ່ . ເຮົາໄດ້ໃຊ້ຊີວິດໃນໄວໜຸ່ມຂອງ

ເຮົາໄປຝຶກຫັດແລ່ນ, ເຕັ້ນສູງ, ເຕັ້ນຍາວ, ແຂ່ງມ້າ, ແຂ່ງລົດຖີບ, ຕີລາຍ, ຕີມວຍ ແລະ ລຳຕໍ່ສູ້ກັບສາວພໍຕອຍ, ເຮັດໃຫ້ເຮົາຕັ້ງໃຈເອົາຊະນະຄູ່ແຂ່ງຂັນ ແລະເກີດມີໃຈອອດ ອົ່ງທະນົງຕົວຫຼາຍຂຶ້ນຈັກໄຊ.

ເມື່ອຖືກຍ້າຍໄປເປັນຫົວໜ້າສານ ເຮົາໄດ້ຕັ້ງໃຈປະຕິບັດກົດໝາຍຂອງພວກລ່າເມືອງຂຶ້ນ ຝະລັ່ງ ທີ່ແນໃສ່ປາບປາມປະຊາຊົນລາວ. ເວລາເສັງເອົາຊັ້ນເຈົ້າເມືອງໄດ້ ແລະຖືກແຕ່ງ ຕັ້ງເປັນເຈົ້າເມືອງຢູ່ຊຽງຂວາງ ເຮົາຮູ້ສຶກວ່າຄວາມຫວັງຂອງເຮົາທີ່ມີມາແຕ່ກ່ອນ ໄດ້ຖືກ ຕອບສະໜອງພົດແລວ ; ມັນຍິ່ງເຮັດໃຫ້ເຮົາຫ້າວຫັນຮັບໃຊ້ພວກຝະລັ່ງ ຈົນວ່າໄດ້ຮັບກາຄຳ ຊອບ 3 ທ່ວຍ ແລະໄດ້ຮັບນາມມະຍົດເປັນພະຍາ, ອັນເຮັດໃຫ້ເຮົາເພີ່ມທະວີຄວາມດີໃຈ ຫຼາຍຂຶ້ນຕື່ມອີກ ໂດຍບໍ່ຮູ້ສຶກຕົວວ່າ ການຮັບໃຊ້ພວກລ່າເມືອງຂຶ້ນຝະລັ່ງດີ ກໍ່ແມ່ນການກົດຂີ່ ຂົ່ມເຫັງປະຊາຊົນລາວນັ້ນເອງ.

ການທີ່ເຈົ້າເພັດຊະລາດ ສັ່ງຍົກຍ້າຍເຮົາໄປເປັນເຈົ້າເມືອງວຽງຈັນ ມັນເຮັດໃຫ້ເຮົາ ອຸກໃຈຍ້ອນຈະໄດ້ເຮັດວຽກຫຍຸ້ງຍາກ, ແຕ່ພ້ອມກັນນັ້ນ ເຮົາກໍ່ຮູ້ສຶກວ່າ ເປັນກຽດອັນສູງ ເພາະວ່າພຽງແຕ່ອາຍຸໄດ້ 33 ປີ ເຮົາໄດ້ເປັນເຈົ້າເມືອງຜູ້ໜຸ່ມນ້ອຍກວ່າເພີ່ນແລະຖືກແຕ່ງ ຕັ້ງໃຫ້ໄປເຮັດວຽກຢູ່ນະຄອນຫຼວງຂອງປະເທດລາວ ອັນເປັນບ່ອນທີ່ເຮົາຈະໄດ້ສະແດງຄວາມ ສາມາດຂອງເຮົາໃຫ້ຂັ້ນເທິງເຫັນ. ເວລາຖືກແຕ່ງຕັ້ງໄປເປັນເຈົ້າແຂວງຢູ່ຊຳເໜືອ ມັນ ເປັນການເພີ່ມຄວາມດີໃຈຂອງເຮົາຂຶ້ນຕື່ມອີກ ໂດຍຮູ້ສຶກວ່າ ເຮົາໄດ້ກ້າວຂຶ້ນເຖິງຂັ້ນສູງສຸດ ຂອງຄົນລາວໃນສະໄໝນັ້ນແລວ, ໂດຍບໍ່ຮູ້ສຶກຕົວວ່າຕຳແໜ່ງຫົວໜ້າສານ, ເຈົ້າເມືອງ ແລະ ເຈົ້າແຂວງໃນລະບອບເກົ່າມັນເຮັດໃຫ້ເຮົາຄ່ອຍໆເກີດມີແນວຄິດສັກດີນາສູງຂຶ້ນຊຸກໄຊ.

ເຮົາເລີ່ມເຮັດການຕໍ່ສູ້ດ້ານແນວຄິດ ຕັ້ງແຕ່ເວລາພວກຟາດຊິດຍີ່ປຸ່ນຕີຂັບໄລ່ຝະລັ່ງອອກ ຈາກອິນດູຈີນ. ເຮົາໄດ້ອ້າງເຫດຜົນເພື່ອບໍ່ໜີໄປນຳທ່ານ ເລຊີດົງເດີໂວ ຢ່າງໄດ້ຜົນດີ. ເວ ລາຍີ່ປຸ່ນເຂົ້າມາຊຳເໜືອ ກໍ່ເຮັດໃຫ້ເຮົາວຸ້ນໃຈບໍ່ໜ້ອຍ, ແຕ່ກໍ່ຜ່ານພົ້ນໄປໄດ້ດີ ບໍ່ມີຜູ້ໃດຖືກ ຈັບ ຫຼື ຖືກຂ້າຕາຍຄືຢູ່ແຂວງອື່ນ, ແຕ່ປະຕິບັດຕາມຄຳສັ່ງຂອງແມ່ທັບຍີ່ປຸ່ນ ເຮົາກໍ່ໄດ້ເກັນ ເອົາປະຊາຊົນໄປຂຸດທາງແຕ່ຊຳເໜືອ ຈົນຮອດແດນດິນຊຽງຂວາງ ເຮັດໃຫ້ປະຊາຊົນໄດ້ຮັບ ຄວາມເດືອດຮ້ອນຍ້ອນຈຳເປັນຕ້ອງປະບ້ານເຮືອນໃນຍາມເຮັດໄຮ່ນາ ໄປຮັບໃຊ້ພວກຟາດ ຊິດຍີ່ປຸ່ນ, ແມ່ນວ່າໄດ້ຮັບເງິນຄ່າຈ້າງຫຼາຍປານໃດຂະເຈົ້າກໍ່ບໍ່ດີໃຈ. ບາດຍີ່ປຸ່ນປະລາໄຊ ແລະ ຖອນໜີໄປ, ທະຫານຝະລັ່ງກັບຄືນມາຊຳເໜືອ ກໍ່ຊ້ຳພັດເຮັດໃຫ້ເຮົາວຸ້ນວາຍໃຈອີກ. ຄວາມວຸ້ນວາຍໃຈຂອງເຮົາຍິ່ງເພີ່ມທະວີຂຶ້ນໃນເມື່ອທະຫານຝະລັ່ງບັງຄັບເອົາເຮົາໜີໄປ ນຳ ເອົາໜ້າການກ້າວເຂົ້າມາຊຳເໜືອຂອງກອງທະຫານຫວຽດນາມ. ຂ່າວການສ້າງຕັ້ງລັດຖະ ບານລາວເອກະລາດຢູ່ວຽງຈັນ ທີ່ຮຽກຮ້ອງໃຫ້ຄົນລາວສາມັກຄີກັບປະຊາຊົນຫວຽດນາມ ຕໍ່ສູ້ ຕ້ານພວກລ່າເມືອງຂຶ້ນຝະລັ່ງ ເປັນສິ່ງຊຸກຍູ້ໃຫ້ເຮົາ ແລະທະຫານປ້ອງກັນເຮົາ 4 ຄົນຕ້ອງ

ຕັດສິນໃຈສົ່ງໄພໂຕນໜີຈາກພວກຝະລັ່ງ ໄປຮ່ວມຂະບວນ ລ.ປ.ລ. ແລະລັດຖະບານລາວເອກະລາດທີ່ຫຼວງພະບາງ. ການທີ່ເຮົາຕັດສິນໃຈໜີຈາກດິນລາວ ອົບພະຍົບໄປຢູ່ ປະເທດໄທ, ໄປເຮັດສວນຢາດູດ ພາຍໃຕ້ການດູຖູກຢຽດຫຍາມຂອງນາຍທຶນ ເຈົ້າຂອງເຕົາບົ່ມຢາ ແລະ ການຕັດສິນໃຈເອົາທະຫານໄປຕັ້ງເຂດຕໍ່ຕ້ານ ເພື່ອເຮັດການຕໍ່ສູ້ປົດປ່ອຍຊາດ ລ້ວນແຕ່ແມ່ນຜົນຂອງການຕໍ່ສູ້ດ້ານແນວຄິດອັນສັບສົນຂອງເຮົາ ທີ່ຫາກໍ່ອອກຈາກຕຳແໜ່ງ ສັກດີນາໄປເຮັດການປະຕິວັດຢ່າງບໍ່ມີຄວາມຮູ້ທາງທິດສະດີ ມາກ-ເລນິນ. ແຕ່ວ່າມູນເຊື້ອອອກແຮງງານໃນເມື່ອກ່ອນ ບວກໃສ່ແນວຄິດຮັກຊາດ ແລະ ຄວາມເຊື່ອໝັ້ນທີ່ໄດ້ເຂົ້າເປັນ ສະມາຊິກພັກຄອມມູນິດອິນດູຈີນ ພາໃຫ້ເຮົາສູ້ທົນຄວາມທຸກຍາກລຳບາກ ຢູ່ໃນເຂດຕໍ່ຕ້ານໄດ້.

ຫຼັງຈາກກອງປະຊຸມໃຫຍ່ແນວລາວຕໍ່ຕ້ານທົ່ວປະເທດ ໃນເດືອນ 8 ປີ 1950 ທີ່ເລືອກຕັ້ງເອົາເຮົາເຂົ້າສູນກາງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານນັ້ນແລ້ວ ຄວາມເຊື່ອໝັ້ນໃນໄຊຊະນະຍິ່ງໜັກແໜ້ນຂຶ້ນຕື່ມອີກ. ຄວາມເຊື່ອໝັ້ນອັນນີ້ ໄດ້ຊ່ວຍໃຫ້ເຮົາ ຮັບເອົາຄວາມຕຳໜິອັນໜັກໜ່ວງແຕ່ຈິງໃຈຂອງພວກສະຫາຍໃນໜ່ວຍພັກ ຈົນຄ່ອຍໆປະຖິ້ມແນວຄິດສັກດີນາ, ອາດຍາສິດ, ຂຸນເສິກທີ່ເຈືອຈານເຂົ້າສະໝອງເຮົາຕະຫຼອດຊົ່ວໄລຍະ ທີ່ເຮົາເຮັດວຽກຮັບໃຊ້ພວກລ່າເມືອງຂຶ້ນຝະລັ່ງນັ້ນໄດ້ເທື່ອລະກ້າວ. ການຄົ້ນຄວ້າຮ່ຳຮຽນທິດສະດີມາກ-ເລນິນ ແລະ ແນວທາງນະໂຍບາຍຂອງພັກ, ການຊ່ວຍເຫຼືອກໍ່ສ້າງຂອງບັນດາ ສະຫາຍໃນພັກ ແລະ ຂອງປະຊາຊົນໄດ້ຊ່ວຍໃຫ້ເຮົາກ້າວຂຶ້ນເທື່ອລະກ້າວ ຕາມເສັ້ນທາງປະຕິວັດສັງຄົມນິຍົມ.

ເຮົາຮູ້ສຶກວ່າ ການທີ່ເຮົາກ້າວຂຶ້ນຕາມເສັ້ນທາງປະຕິການຢ່າງໜັກໜ່ວງ ແລ້ວລົງມາເລີ່ມຕົ້ນເຂົ້າຮ່ວມໃນຊີວິດຕໍ່ຕ້ານໄດ້ນັ້ນ ມັນເປັນໄຊຊະນະອັນໃຫຍ່ຫຼວງຂອງເຮົາ ໃນການຕໍ່ສູ້ແນວຄິດອັນສັບສົນຂອງເຮົາ ແລະ ການທີ່ເຮົາສືບຕໍ່ຕໍ່ສູ້ກັບຕົນເອງໃນແປວໄຟແຫ່ງການປະຕິວັດເພື່ອເດີນຕາມເສັ້ນທາງປົດປ່ອຍຊາດແລະປົດປ່ອຍຕົນເອງຈົນໄດ້ເປັນກຳມະການກົມການເມືອງສູນກາງພັກ ແລະ ຮອງປະທານສະພາລັດຖະມົນຕີໄດ້ນີ້ ມັນສະແດງໃຫ້ເຫັນວ່າ ຖ້າຫາກມີຄວາມຕັດສິນໃຈເດັດຂາດແລ້ວ ການຕໍ່ສູ້ລົບລ້າງແນວຄິດສັກດີນາ ແລະ ນາຍທຶນເປັນສິ່ງທີ່ຄົນເຮົາເຮັດໄດ້, ດັ່ງນັ້ນ ຜູ້ອື່ນທີ່ບໍ່ໄດ້ກ້າວໄປຕາມເສັ້ນທາງປະຕິການຢ່າງໜັກຄືກັນກັບເຮົານີ້ ຍິ່ງຈະສ້າງຕົວກ້າວຂຶ້ນຕາມເສັ້ນທາງປະຕິວັດງ່າຍກວ່າເຮົາ, ຂໍແຕ່ຄົນເຫຼົ່ານັ້ນ ຕັດສິນໃຈຕໍ່ສູ້ກັບແນວຄິດອັນຫຼ້າຫຼັງຂອງຕົນເອງຢ່າງຕັ້ງໜ້າ ແລະເດັດຂາດ./.

ວຽງຈັນ, ວັນທີ 6 ເມສາ 1984.

ພູມີ ວົງວິຈິດ

ທ່ານພູມີ ວົງວິຈິດ

ກຳມະການກົມການເມືອງສູນກາງພັກ, ຮອງປະທານສະພາລັດຖະມົນຕີ

ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ເຮົາເຂົ້າຮ່ວມການປະຕິວັດແນວໃດ?

I. ບັ້ນເຍົາໄວ

ເຮົາເປັນຊາວນາບ້ານນອກຜູ້ໜຶ່ງ ທີ່ມີວາດສະໜາດີໄດ້ເຂົ້າໂຮງຮຽນ ຈົນເສັງອອກເຮັດການເປັນນາຍພາສາໄດ້ ແຕ່ວ່າເຮັດການເວລານັ້ນ ຊ້ຳແມ່ນຮັບໃຊ້ພວກລ່າເມືອງຂຶ້ນຝະລັ່ງ, ໄດ້ເລື່ອນຂັ້ນຂຶ້ນມາເປັນຫົວໜ້າສານເມືອງ, ເຈົ້າເມືອງ ແລະ ເຈົ້າແຂວງ ໃນລະບອບເມືອງຂຶ້ນແບບເກົ່າ ແລ້ວຊ້ຳພັດມີໂຊກດີໄດ້ເຂົ້າຮ່ວມເຮັດການປະຕິວັດ ຕັ້ງແຕ່ມື້ທຳອິດ, ໄດ້ຮັບການອົບຮົມກໍ່ສ້າງຈາກປະຊາຊົນ ແລະ ພັກກອມມູນິດອິນດູຈີນ ແລະ ພັກປະຊາຊົນປະຕິວັດລາວ ເພື່ອສ້າງຕົວໃຫ້ກັບກາຍມາເປັນຄົນຮູ້ຜູ້ດີເທື່ອລະກ້າວ ເຮັດໃຫ້ການປະຕິວັດໄດ້ເຊີດຊູໃຫ້ເຮົາຄ່ອຍໆເລື່ອນຂຶ້ນມາເຖິງຂັ້ນກົມການເມືອງສູນກາງພັກ ແລະ ຮອງປະທານສະພາລັດຖະມົນຕີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ນັ້ນແມ່ນຂະບວນວິວັດແຫ່ງການຕໍ່ສູ້ດ້ານແນວຄິດທີ່ເຮົາຈະພັນລະນາໃນບັ້ນຕໍ່ໄປນີ້.

ເຮົາເກີດຢູ່ບ້ານຄາຍ, ຕາແສງຄາຍ (ເຊິ່ງດຽວນີ້ປ່ຽນມາເອີ້ນຕາແສງຍອດງື່ມ) , ເມືອງແປກ, ແຂວງຊຽງຂວາງ ກົງກັບເດືອນ 4 ແຮມ 13 ຄ່ຳ ປີວອກ ຫຼື ເປີກສັນ, ໃນວັນທີ 6 ເມສາ 1909. ບ້ານເກີດຂອງເຮົາຢູ່ຫ່າງໄກຈາກຕົວເມືອງຊຽງຂວາງ ປະມານ 50 ກິໂລແມັດ ໄປທາງພາກເໜືອ ເວລານັ້ນເປັນບ່ອນຢູ່ຂອງເຈົ້າເມືອງແປກ, ແຕ່ວ່າ, ມັນຍັງແມ່ນໄລຍະຕົ້ນແຫ່ງການປົກຄອງຂອງພວກລ່າເມືອງຂຶ້ນຝະລັ່ງ. ເຈົ້າເມືອງຍັງເຮັດການຢູ່ໃນເຮືອນຂອງເຂົາເອງ ເພາະວ່າຍັງບໍ່ທັນມີໂຮງການ. ພວກຂ້າລາຊະການ ເຊິ່ງສ່ວນຫຼາຍແມ່ນພວກທີ່ສຶກອອກມາຈາກວັດເປັນຊຽງ, ທິດ ຫຼື ຈານ, ໄດ້ຮັບນາມມະຍົດເປັນ ຂຸ ປະຮາດ, ລາຊະວົງ, ລາຊະບຸດ, ວໍລະບຸດ, ເມືອງແສນ, ເມືອງຈັນ ແລະ ສະໝຽນ, ໄດ້ຮັບເງິນເດືອນແຕ່ 20 ກີບ ລົງຮອດ 7 ກີບຕໍ່ເດືອນ.

ຂ້າລາຊະການແຕ່ລະຄົນລ້ວນແຕ່ເຮັດນາ, ລ້ຽງສັດ ຫຼື ເຮັດຊ່າງຫັດຖະກຳຢູ່ເຮືອນໃຜເຮືອນລາວ ເຊິ່ງຢູ່ຄົນລະບ້ານຫ່າງໄກກັນ 4 ຫຼື 5 ກິໂລແມດ. ເມື່ອໃດ ເຈົ້າເມືອງແຕ່ງຄົນໄປເອີ້ນຈຶ່ງພາກັນຍ່າງ ຫຼື ຂີ່ມ້າມາເຮັດການ, ແລ້ວກໍ່ກັບຄືນເມືອນອນເຮືອນຂອງໃຜລາວ.

ພໍ່ເຮົາ, ທ້າວແພງ ວົງວິຈິດ, ເປັນລູກຂອງອາຈານ ວິຈິດ ທີ່ເຄີຍມີຊື່ສຽງ ທາງດ້ານແປພາສາປາລີ ເວລາຍັງບວດເປັນພະຄູຢູ່ໃນວັດ . ພໍ່ເຮົາເຄີຍບວດເປັນສາມະເນນ, ຫຼັງຈາກສຶກອອກມາກໍ່ໄດ້ຖືກແຕ່ງຕັ້ງເປັນຂ້າລາຊະການຊັ້ນກາງຂອງເຈົ້າເມືອງ, ໄດ້ນາມມະຍົດ

ເປັນເມືອງແສນ ຖືກມອບໜ້າທີ່ໃຫ້ເປັນຫົວໜ້າສານເມືອງ, ເຮັດໜ້າທີ່ຂອງເພິ່ນ ຢູ່ໃນເຕົາຫຼໍ່ ເຊິ່ງເປັນບ່ອນທີ່ເພິ່ນເຮັດວຽກ ເພາະວ່າເພິ່ນເປັນຊ່າງຕີເງິນຄຳ. ການແກ້ໄຂຄະດີທີ່ເຂົ້າມາຮອດເພິ່ນສ່ວນຫຼາຍແມ່ນແກ້ໄຂດ້ວຍການໂອບໂລມໃຫ້ຄູ່ຄວາມ ຖືກຕ້ອງຄ່ອງກັນ ເພາະວ່າເວລານັ້ນຍັງບໍ່ມີຄະນະສານ ແລະ ບໍ່ທັນມີກົດໝາຍເພື່ອໃຊ້ໃນການຕັດສິນຄວາມ.

ແມ່ເຮົາ ນາງບຸນເທດ ວົງວິຈິດ ເປັນລູກສາວກົກຂອງອູປະຮາດເກົ້າ, ບໍ່ຮູ້ໜັງສື, ວິຊາຊີບແມ່ນເຮັດໄຮ່ນາ, ລ້ຽງສັດ, ຕ່ຳແຜ່ນແພ ແລະ ຄົວກິນລ້ຽງຄອບຄົວ.

ເຮົາເປັນລູກຜູ້ທີສອງຂອງຄອບຄົວ. ເວລາພວກເພິ່ນຍັງມີຊີວິດຢູ່ນັ້ນ ພໍ່ແມ່ ແລະເອື້ອຍເຮົາຮັກແພງ ແລະ ເອົາອົກເອົາໃຈເຮົາຫຼາຍທີ່ສຸດ ເພາະວ່າເຮົາເປັນລູກຊາຍດຽວ; ນ້ອງສາວເຮົາຄື ນາງບົວພັນ ວົງວິຈິດ ກໍ່ຮັກແພງ ແລະ ນັບຖືເຮົາດັ່ງດຽວກັນ. ພໍ່ເຮົາໄດ້ແອບໃຫ້ຮຽນຕີປອກມີ, ຕີຕ່າງ ແລະ ຮຽນສູເງິນ ແລະ ຍ້ອມຄຳ ຕັ້ງແຕ່ຍັງນ້ອຍພຸ້ນມາ ;ພ້ອມກັນນັ້ນ ເພິ່ນກໍ່ແອບໃຫ້ເຮົາລ້ຽງມ້າ, ງົວ, ຄວາຍ, ເອົາໂຄ້ນເອົາຟືນ ແລະ ຫຼົກກ້າ,ດຳນາ. ເມື່ອອາຍຸເຮົາຮອດຫົກປີ ພໍ່ເຮົາກໍ່ສອນໃຫ້ເຮົາຮຽນອ່ານໜັງສືລາວ ໂດຍໃຊ້ໜັງສືຜູກຄືສຽວສະຫວາດ ແລະ ສິນໄຊເປັນເອກະສານຮ່ຳຮຽນ. ພໍເຮົາອ່ານໄດ້ແລ້ວ ເພິ່ນກໍ່ໃຫ້ເຮົາຫັດຂຽນ ແລະ ຄ່ອຍໆໃຊ້ເຮົາຂຽນຈົດໝາຍບັນທຶກແຕ່ງການໂອບໂລມຄວາມ ຕາມໜ້າທີ່ຂອງເພິ່ນ.

ອາໄສເວລາໄປລ້ຽງມ້າ, ງົວ ແລະ ຄວາຍເຮົາກໍ່ຮຽນຂີ່ມ້າ, ງົວ ແລະ ຄວາຍນັບມື້ນັບເຄີຍຂຶ້ນ, ແຕ່ເຮົາມັກຂີ່ມ້າຫຼາຍກວ່າ ງົວຄວາຍ ແລະ ເອົາໃຈໃສ່ຫັດຂີ່ມ້າ ນັບມື້ນັບຖະໜັດດີ. ເມື່ອອາຍຸຮອດແປດປີຂຶ້ນໄປ ເຮົາສາມາດແອບມ້ານ້ອຍໃຫ້ຂີ່ໄດ້ ແລະ ແອບໃຫ້ມ້າຮູ້ແລ່ນບາດນ້ອຍ, ບາດກາງ, ບາດໃຫຍ່, ສັກສາມຂາ ແລະ ຫອບໄປໄວຈົນສຸດຄວາມສາມາດຂອງມັນ. ພວກໝູ່ຄູ່ທີ່ມີມ້າກໍ່ເອົາມ້າຂອງເຂົາມາແລ່ນແຂ່ງກັນກັບມ້າຂອງເຮົາເກືອບທຸກແລງ ແລະ ພວກເຮົາຖືວ່າການແຂ່ງມ້າເປັນການມ່ວນຊື່ນອັນໜຶ່ງ ທີ່ຊາວບ້ານໃກ້ຄຽງກໍ່ຊອບມາເບິ່ງຄືກັນ.

ໄລຍະນີ້ ເປັນໄລຍະທີ່ເຮົາມີຊີວິດຢູ່ຢ່າງມ່ວນຊື່ນທີ່ສຸດ ເພາະວ່າເຮົາໄດ້ຢູ່ອ້ອມແອ້ມ ພໍ່ ແລະ ແມ່ທີ່ຮັກແພງເຮົາຫຼາຍກວ່າຜູ້ອື່ນ ແລະ ຕັ້ງໃຈຊອກຫາເອົາເຄື່ອງຫຼິ້ນ ແລະ ເຄື່ອງມີ ທຸກຢ່າງມາໃຫ້ເຮົາໃຊ້ຕາມຄວາມຕ້ອງການ. ທຸກມື້, ຫຼັງຈາກແມ່ເຮົາຕ່ຳເຂົ້າແລະເອື້ອຍເຮົາໄປຕັກນ້ຳມາແລ້ວ ພວກເຮົາໄດ້ປັ້ນເຂົ້າເຊົ້າ ແລ້ວສອງເອື້ອຍນ້ອງພວກເຮົາ ພ້ອມກັບຊາວບ້ານຜູ້ອື່ນໄປເອົາໂຄ້ນ ແລະ ຟືນມາດັງໄຟ. ກັບມາເຮືອນກິນເຂົ້າງາຍແລ້ວ, ຖ້າພໍ່ຕ້ອງການໃຊ້ວຽກເຮົາກໍ່ເຮັດວຽກການຕີເງິນຄຳ ຫຼື ຂຽນໜັງສືຊ່ວຍເພິ່ນ ເພື່ອເພີ່ມເຕີມຄວາມຮູ້ໃຫ້ແກ່ເຮົາແດ່. ຖ້າວ່າພໍ່ບໍ່ຕ້ອງການເຮົາ, ເຮົາກໍ່ປ່ອຍມ້າ, ງົວ, ຄວາຍ ໄປກິນຫຍ້າແລ້ວ, ຖ້າຫາກແມ່ນລະດູເຮັດກ້າ ເຮັດນາ, ເຮົາກໍ່ໄປເຝົ້າກ້າ ; ເມື່ອກ້າແກ່ ແລະ

ພໍ່ເຮົາໄຖຄາດ ແລະ ກວາດນາແລ້ວ ເຮົາກໍ່ຊ່ວຍແມ່ ແລະ ເອື້ອຍຫຼົກກ້າ ແລ້ວຫາບມັດກ້າໄປດຳນາ. ຕາຍແລງມາກໍ່ໄປຕ້ອນເອົາມ້າ, ງົວ, ຄວາຍມາແຫຼ່ງໃນເວລາທີ່ແມ່ ແລະ ເອື້ອຍເຮົາເກືອໝູ ເກືອໄກ່ ແລະ ຄົວອາຫານແລງ. ການເຮັດວຽກແຕ່ລະມື້ ພາໃຫ້ເຮົາມີຄວາມອິດເມື່ອຍຫຼາຍສົມຄວນ ເພາະວ່າເປັນການອອກແຮງງານໜັກໃນເວລາທີ່ອາຍຸເຮົາຍັງນ້ອຍ, ແຕ່ເຮົາກໍ່ຮູ້ສຶກພາກພູມໃຈ ເພາະວ່າເຮົາໄດ້ເຮັດລ້ອນໜ້າທີ່ ແລະ ຄ່ຳມາເວລານັ່ງອ້ອມພາແລງ ພໍ່, ແມ່ແລະເອື້ອຍໄດ້ຍ້ອງຍໍຊົມເຊີຍ.

ເວລານັ້ນ ເຮົາບໍ່ມີຄວາມໂສກເຫງົາ. ແນ່ນອນເຮົາໄດ້ຮ້ອງໄຫ້ ແລະ ບໍ່ຍອມໄປເຮັດວຽກບາງຄັ້ງບາງຄາວຕາມພາສາຂອງເດັກນ້ອຍ ໃນເມື່ອເຮົາຢາກໄດ້ເຄື່ອງເສບ, ເຄື່ອງຫຼິ້ນ ຫຼື ເຄື່ອງມືເຮັດວຽກແຕ່ບໍ່ໄດ້ທັນໃຈ. ແຕ່ເມື່ອພໍ່ແມ່ຮັບຮອງວ່າຈະຫາມາໃຫ້ແລ້ວ ເຮົາກໍ່ມ່ວນຊື່ນຄືນ ແລະ ເພິ່ນກໍ່ຊອກຊື້ເອົາມາໃຫ້ເຮົາແທ້. ໃນລະດູໜາວ ແລະ ລະດູຝົນເຮົາກໍ່ໄປເຮັດວຽກຕາມໜ້າທີ່ຂອງເຮົາຕາມເວລາທີ່ໄດ້ວາງໄວ້ ເພາະວ່າສຸຂະພາບຂອງເຮົາແຂງແຮງດີ. ເຮົາມັກເປັນໄຂ້ຫວັດບາງຄັ້ງບາງຄາວ ແຕ່ກໍ່ຫາຍປ່ວຍໄວ ເພາະວ່າພໍ່ເຮົາມີຢາກິນຄາຖົງເສື້ອຢູ່ສະເໝີ ແລະ ແມ່ເຮົາກໍ່ຊ່າງໄປຊອກເອົາໃບໜາດ, ໃບຫຍ້າແຝກ, ໃບສີໄຄ ແລະ ໃບໝາກພຸກມາຕົ້ມໃຫ້ເຮົາອົມ ແລະ ອາບເລື້ອຍໆ.

ເຮືອນເຮົາແມ່ນເຮືອນຮ້ານ, ເສົາໄມ້ຝັງດິນ ພື້ນປູດ້ວຍຟາກໄມ້ທັກ ຫຼັບທາງເທິງດ້ວຍສາດຫວາຍ ແລະ ສາດໄມ້ຊາງ, ມີ 7 ຫ້ອງ, ຫ້ອງລະວາເຄິ່ງຂອງຜູ້ໃຫຍ່, ສອງສີ້ໜາແຕ່ລະດ້ານມີທູບເບື້ອງລະອັນເປັນແປກິ່ງລົງຕ່ຳພຽງປານຊາຍຫຼັງຄາເຮືອນ. ທູບເບື້ອງກອຍກວມງວ່າຊານກ້ວາງທີ່ຫ້ອງເຮືອນທີ່ງເປັນບ່ອນແມ່ ແລະ ເອື້ອຍເຮົາກາງກີ່ຕຳຫູກ, ນ້ຽນຝ້າຍ, ຫຼາ ແລະ ພາເຂົ້າເປືອກທີ່ເອົາເຂົ້າມາໃສ່ແຮໄວ້ເພື່ອຕຳກິນກຸ້ມແຮມື້. ຕໍ່ອອກໄປຈາກຊານໃນທູບແລ້ວ ພໍ່ເຮົາຍັງຝັງ 4 ເສົາເອົາໄມ້ກົມມາວາງລຽນກັນເປັນຊານ ນອກທູບບ່ອນເອື້ອຍເຮົາວາງບັ້ງນ້ຳ ແລະ ລ້າງພ້າ ລ້າງຖ້ວຍເວລາກິນເຂົ້າແລ້ວ. ທູບເບື້ອງໜ້າກວມງວ່າຊານກ້ວາງທີ່ດຽວກັນກັບຊານເບື້ອງກອຍ, ເປັນບ່ອນພາດຂັ້ນໄດເພື່ອຂຶ້ນເຮືອນ ແລະ ນ້ຽນຄາດໄຖພ້ອມດ້ວຍເຄື່ອງມືສຳລັບເຮັດນາ. ຕໍ່ຈາກຊານໃນທູບນັ້ນອອກໄປພໍ່ເຮົາຝັງສອງເສົາໄລຍະກ້ວາງຂອງເຮືອນ, ເອົາຂື່ມາພາດໃສ່ສູງພຽງແອວຂອງຜູ້ໃຫຍ່, ຝັງ 3 ເສົາສູງປະມານວາໜຶ່ງຕ່າງໄກຈາກຊານອອກໄປສອງວາປາຍ, ເອົາໄມ້ພາດໃສ່ເປັນຫຼຽບ ກັ້ງບ່ອນເຮັດຄອກມ້າເຖິງສອງຄອກ ພື້ນແປ້ນສູງພຽງຫົວເຂົ່າ, ມີຮົ້ວອ້ອມກາງ, ມີປະຕູອັດໄດ້ມີຮາງໃຫ້ມັນກິນຫຍ້າທີ່ເອີ້ນວ່າບົມມ້າ ; ເຫຼືອຈາກນັ້ນກໍ່ປະໄວ້ເຮັດຄອກມ້າແມ່ຊູດິນ, ຄາດຮົ້ວຖ້ອນກັບຄອກມ້າເຖິກ. ບົນພື້ນເຮືອນທັງ 7 ຫ້ອງແອ້ມດ້ວຍຝາໄມ້ໄຄສານລາຍສອງເປັນສອງຊັ້ນກັບໃສ່ກັນ, ທາງໜ້າ ແລະ ທາງກອຍເຈາະປະຕູເຂົ້າອອກ, ທາງທິດເໜືອ ເຈາະປ່ອງຢ້ຽມ 3 ປ່ອງ ແລະເຮັດໃຫ້ແປເປັນຫຼຽບຕ່ຳລົງ ເພື່ອໃຫ້ແສງສະຫວ່າງສ່ອງເຂົ້າມາໃນ

ເຮືອນໄດ້. ທາງທິດໃຕ້ປະໄວ້ສອງຫ້ອງເພື່ອຕັ້ງຮ້ານພະ ແລະ ໃຫ້ແຂກນອນ. ຖັດຈາກນັ້ນກໍ່ກັ້ນເປັນສ້ວມນອນກວ້ມສອງຫ້ອງໃຫ້ພໍ່ແມ່ເຮົານອນ ; ເຫຼືອຈາກນັ້ນກໍ່ກັ້ນເປັນສ້ວມລະຫ້ອງໃຫ້ເອື້ອຍ, ນ້ອງ ແລະ ພີ່ນ້ອງຍິງທີ່ມາຢາມນັ້ນນອນ. ໃກ້ປ່ອງຢ້ຽມສອງສົ້ນທາງທິດເໜືອມີເຕົາໄຟເບື້ອງລະເຕົາເປັນບ່ອນຄົວກິນ ແລະ ດັງໄຟຜິງໃນຍາມໜາວ. ລະຫວ່າງເຕົາໄຟກັບປ່ອງຢ້ຽມສອງສົ້ນ ມີຊອງນອນທີ່ເຮັດດ້ວຍໄມ້ແປ້ນບ່ອນລະຊອງເພື່ອໃຫ້ແຂກຜູ້ສະໜິດ ສະໜົມນອນ. ຫ້ອງທາງຫຼັງເຕົາໄຟທາງກອຍ ເປັນບ່ອນຕັ້ງຕູ້ສຳລັບມ້ຽນໝໍ້, ຖ້ວຍ, ພາເຂົ້າ ແລະ ຫົວຟືນທີ່ເກັບຂຶ້ນມາແຮໄວ້ ; ລະຫວ່າງກາງສອງເຕົາໄຟເປັນບ່ອນກິນເຂົ້າ ແລະ ນອນໃນເມື່ອຕ້ອງການ, ຫ້ອງທີ່ຢູ່ລະຫວ່າງເຕົາໄຟກັບຝາທາງໜ້າເປັນບ່ອນປະໄວ້ໃຫ້ແຂກ-ນອນ. ເທິງ ຂ່າແຮ່ງ (ຄ່ວນ) ເບື້ອງສ້ວມນອນປູດ້ວຍຝາໄມ້ໄດ້, ເປັນບ່ອນມ້ຽນສາດ , ຟູກ, ກະຕ່າ, ກະບຸງທີ່ເຫຼືອໃຊ້ ; ທາງເບື້ອງເຕົາໄຟໃສ່ຂາງ ແລະ ຕັ່ງນ້ອຍ ເປັນບ່ອນມ້ຽນຕອກມັດຮົ້ວ ຫຼື ຕອກໄພຫຍ້າທີ່ຕ້ອງການຮັກສາໄວ້ໃຫ້ແຫ້ງ. ແປ, ທູບ ແລະ ທຽບເຮືອນລ້ວນແຕ່ມຸງດ້ວຍຈ່າມຫຍ້າຄາ. ກ້ອງໃຕ້ລ່າງເຮືອນທີ່ສູງວາເຄິ່ງມີຮົ້ວຂັ້ນແບ່ງເປັນ 3 ຫ້ອງ,. ຫ້ອງໜຶ່ງກວ້າງສອງວາ, ຍາວສຸດຊື່ທາງຍາວຂອງເຮືອນ, ເປັນຫ້ອງທາງເຂົ້າຫາຂັ້ນໄດຂຶ້ນເຮືອນ ; ຫ່າງຈາກຂັ້ນໄດໄປສີ່ວາກໍ່ແມ່ນບ່ອນຕັ້ງຄົກມອງຕຳເຂົ້າ ; ຕັ້ງແຕ່ກ້ອງຂັ້ນໄດໄປຮອດຫົວຄົກມອງ ແມ່ນບ່ອນມ້ຽນຟືນເປັນກອງແປະໄປຕາມຮົ້ວ ; ເບື້ອງສົ້ນສຸດທາງກອຍເປັນບ່ອນຕັ້ງຄອກໝູ ແລະ ລົກໄກ່ ; ຫ້ອງນີ້ເອີ້ນວ່າຫ້ອງຂ້ວງແກບ ເພາະວ່າເປັນບ່ອນຕຳເຂົ້າ, ຝັດເຂົ້າຖົມແກບລົງໃຫ້ໄກ່ມາເຂ່ຍກິນ ; ຈາກຮົ້ວຂັ້ນຫ້ອງນີ້ໄປຮອດຮົ້ວອ້ອມເບື້ອງສ້ວມນອນ ມີຫ້ອງໃຫຍ່ກວ່າ ແລະ ຍາວໄປສຸດຊື່ທາງຍາວຂອງເຮືອນເຊິ່ງເອີ້ນວ່າຫ້ອງໃຕ້ຖຸນ ; ຫ້ອງນີ້ມີຮົ້ວຂັ້ນ 3 ຫ້ອງເຮືອນເປັນຄອກງົວ, ປະທາງໃຫ້ຄວາຍເຂົ້າໄປທາງຖຸນຄວາຍ ທີ່ກວມພື້ດສ່ວນທີ່ເຫຼືອນັ້ນ ; ອ້ອມຈອດກ້ອງໃຕ້ລ່າງເຮືອນ ມີຮົ້ວໄມ້ໃຫຍ່ທີ່ຄແຂນມັດຖີ່ເກືອບຕິດກັນໃສ່ຮາວສູງຮອດສົ້ນຫຼັງຄາເຮືອນ. ທາງເບື້ອງນອກຂ້ວງແກບ ເພິ່ນເອົາຈ່າມຫຍ້າບັງແຕ່ສາຍຄາເຮືອນລົງຮອດດິນ, ທາງເບື້ອງຖຸນຄວາຍ ເພິ່ນເອົາໄມ້ຄ້ຳມາຝັງໃສ່ແປະທາງໃນຮົ້ວແລ້ວເອົາໄມ້ຖາກກົມໃຫຍ່ທໍ່ຂາເຮືອນ ສິ່ວເປັນຮູສອງສົ້ນມາສຸບໃສ່ດວດຂອງໄມ້ຄ້ຳ ເພື່ອບໍ່ໃຫ້ຄວາຍຮຸກສີມ້າງຮົ້ວ, ເຊິ່ງເພິ່ນເອີ້ນວ່າເຂື່ອນຄວາຍ.

ເຮືອນເຮົາມີມ້າເຖິກສອງໂຕ ແລະ ມ້າແມ່ສາມໂຕ, ງົວເຖິກສອງໂຕ ແລະ ງົວແມ່ສີ່ໂຕ, ຄວາຍເຖິກໜຶ່ງໂຕ ແລະ ຄວາຍແມ່ສອງໂຕເປັນປະຈຳ ; ແຕ່ລະປີມ້ານ້ອຍເກີດ ໜຶ່ງໂຕ, ງົວນ້ອຍເກີດໜຶ່ງໂຕ ແລະ ຄວາຍນ້ອຍເກີດສອງໂຕ. ແຕ່ລະປີຄອບຄົວເຮົາ ໄດ້ຂາຍສັດໃຫຍ່ຈຳນວນເທົ່າກັບຈຳນວນສັດນ້ອຍທີ່ເກີດໃໝ່ ເພື່ອຮັກສາຈຳນວນສັດທີ່ເກົ່າຢູ່ສະເໝີ.

ທາງຫຼັງ ແລະ ດ້ານຕາເວັນຕົກຂອງເຮືອນເຮົາ ພໍ່ແມ່ເຮົາໄດ້ລ້ອມຮົ້ວເອົາດິນເຮັດສວນໜຶ່ງຕອນ ກວ້າງ 40 ວາ ຍາວ 50 ວາ. ໃນສວນນັ້ນພໍ່ແມ່ເຮົາໄດ້ປູກເລົ້າເຂົ້າເຊິ່ງປູພັນ

ແລະແອ້ມຝາໄມ້ໄຜ່, ມຸງຫຍ້າຄາ ແລະ ໄດ້ປູກກົກໄມ້ກິນໝາກຄື ໝາກພົ້ນ, ໝາກຄາຍໃຫຍ່, ໝາກຫຸ່ງ, ໝາກພຸກ, ໝາກກ້ຽງ ຊະນິດລະ 2 ເຖິງ 10 ຕົ້ນ, ກົກກ້ວຍ 9 ສຸມ, ເຫຼືອຈາກນັ້ນກໍ່ປູກຫຍ້າຄາເພື່ອມຸງເຮືອນ.

ເຮືອນເຮົາມີນາສາມທົ່ງຄື ນາໂພນບ້ານຄາຍ ພິດເຂົ້າປູກ 12 ພື້ນ, ນາໂກ້ຢູ່ຟາກນ້ຳໂກ້ໄປທາງບ້ານແກ່ວ ພິດເຂົ້າປູກ 6 ພື້ນ ແລະ ນາຕາກແດດຢູ່ຂ້າງສົບໂຮມນ້ຳໂກ້ ກັບນ້ຳງື່ມພິດເຂົ້າປູກ 5 ພື້ນ ; ສອງທົ່ງຫຼັງນີ້ແມ່ນນານ້ຳຟ້າ, ປີໃດຝົນຕົກດີຈຶ່ງໄດ້ເຮັດ. ສ່ວນທົ່ງທຳອິດນັ້ນເປັນນານ້ຳເໝືອງ, ໄດ້ເຮັດຕາມລະດູທຸກປີ. ແຕ່ລະປີຮອດເດືອນ 4 ນາແລ້ວພິດທົ່ງບ້ານໄດ້ປ່າວກັນໄປປ້ານຝາຍນ້ຳໂກ້ທີ່ເອີ້ນວ່າຝາຍພາດ ເພື່ອເອົານ້ຳມາໃສ່ກ້າສຳລັບໄຖ, ຄາດແລ້ວຫວ່ານກ້າອອນສັ້ງຂານ, ແປວ່າຫວ່ານກ້າກ່ອນນີ້ສັ້ງຂານໄປຈຸດໜຶ່ງ ແລະ ຫຼັງຈາກນັ້ນສັ້ງຂານໄປແລ້ວກໍ່ຫວ່ານຕື່ມຈຸດໜຶ່ງ ເພື່ອໃຫ້ໄດ້ເລີ່ມລົງມືດຳນາເດືອນຫົກ ແລະ ໃຫ້ແລ້ວທ້າຍເດືອນເຈັດ, ຢ່າງຊ້າທີ່ສຸດກໍ່ແມ່ນຕົ້ນເດືອນແປດ ; ບ່ອນໃດດຳຫຼ້າກວ່ານັ້ນ ແມ່ນບໍ່ດີ ເພາະວ່າຮວງເຂົ້າບໍ່ມາກ ຍ້ອນວ່າບ້ານເຮົາເປັນບ່ອນອາກາດໜາວໄວ.

ການເຮັດນາຢູ່ບ້ານຄາຍຂອງເຮົາ ແມ່ນຍາກກວ່າບ່ອນອື່ນ ເພາະວ່າເປັນບ່ອນດິນທຸກ, ບໍ່ມີຝຸ່ນ. ໃນເດືອນ 4 ເວລາພໍ່ເຮົາໄປປ້ານຝາຍ ເອື້ອຍເຮົາ ແລະ ຕົວເຮົາເອງໄດ້ຂົນຝຸ່ນຂີ້ຄວາຍໄປໃສ່ກ້າ. ເມື່ອນ້ຳມາຮອດບ້ານແລ້ວກໍ່ແບ່ງປັນກັບເອົານ້ຳເຂົ້າກ້າ ; ຫ້ານຫຼັງຈາກນັ້ນ ກໍ່ເລີ່ມລົງມືໄຖກ້າ ; ພໍ່, ແມ່ ແລະເອື້ອຍເຮົາຜັດປ່ຽນກັນເຮັດ. ສ່ວນຕົວເຮົາຍັງນ້ອຍໂພດ ເພິ່ນແບ່ງໜ້າທີ່ໃຫ້ລ້ຽງມ້າ, ງົວ, ຄວາຍ. ຕອນເຊົ້າໄຖກ້າ, ຕອນບ່າຍແມ່ແລະເອື້ອຍເຮົາໄປຮ່ວມເຮັດວຽກນາ ເຮົາຂົນຝຸ່ນຄອກໄປໃສ່ນາ, ນື້ໜຶ່ງເຮັດໃຫ້ເຮືອນໜຶ່ງ, ນື້ໃໝ່ເຮັດໃຫ້ເຮືອນໃໝ່ ຈົນໃຫ້ທຸກເຮືອນແລ້ວທັນເວລາ. ສ່ວນພໍ່ເຮົານັ້ນ ເພິ່ນໄປຕັດໄມ້ມາລ້ອມຮົ້ວກ້າ ; ຫຼັງຈາກແລ້ວຮົ້ວກ້າແລ້ວ ເພິ່ນກໍ່ເອົາເຜືອມາຄາດກ້າ ແລະ ເລີ່ມເອົານ້ຳເຂົ້ານາ. ພໍດີຫວ່ານກ້າຊຸດທຳອິດແລ້ວ, ພໍ່ແມ່ ແລະ ເອື້ອຍເຮົາກໍ່ເລີ່ມລົງມືໄຖນາ. ການໄຖນາ ແລະ ພວນດິນນາເປັນວຽກທີ່ລະອຽດ, ຫຍຸ້ງຍາກ ແລະ ດ່ວນຮ້ອນ. ໄຖນາໄດ້ 5 ມື້ແລ້ວຕ້ອງເອົາເຜືອຄາດເທື່ອໜຶ່ງເອີ້ນວ່າຫັກຂີ້ໄຖ, ຫຼັງຈາກນັ້ນ 3 ຫຼື 4 ມື້ ກໍ່ຍາຍກອງຂີ້ເຜືອທີ່ເອີ້ນວ່າເຂົ້າເຜືອສອງ, 3 ມື້ຕໍ່ມາກໍ່ເຂົ້າເຜືອສາມ, 5 ມື້ຕໍ່ມາກໍ່ເອົາເຜືອຊະ ຂີ້ເຜືອໃຫ້ມັນພຽງ ແລ້ວມື້ລຸນມາກໍ່ເອົາເຜືອ 20 ມາກວາດເພື່ອລົງມືຫຼົກກ້າມາດຳ. ວຽກດັ່ງກ່າວນີ້ ຕ້ອງເຮັດຢ່າງມີກຳນົດໃຫ້ເຂົ້າເກີຍກັນດີ ດ້ວຍວ່າກ້າຄົບຂອບເດືອນແລ້ວ ຕ້ອງໃຫ້ໄດ້ດຳ, ບໍ່ດັ່ງນັ້ນກ້າຈະຂຶ້ນຂໍ້ແລ້ວດຳກໍ່ບໍ່ແພ່ ແລະ ຮວງເຂົ້າຈະບໍ່ໃຫຍ່. ຍ້ອນແນວນັ້ນການໄຖນາ, ຄາດນາ, ກວາດນາ, ຫຼົກກ້າ, ດຳນາ, ກ່ຽວເຂົ້າ, ກອງເຂົ້າ, ຕີເຂົ້າ ແລະ ຂົນເຂົ້າໄປໃສ່ເລົ້າຈຶ່ງລ້ວນແຕ່ເຮັດແບບນາເຮົາທັງນອນ ; ໝາຍຄວາມວ່າເຮືອນໜຶ່ງ ໄປຊ່ວຍເຮືອນອື່ນເທົ່າໃດຄືນ ເຮືອນນັ້ນກໍ່ຕ້ອງໄປຕອບເຮືອນທີ່ກ່ຽວເທົ່ານັ້ນຄືນແລະເຮືອນເຈົ້າ

ຂອງນາຕ້ອງລ້ຽງເຂົ້າງາຍລາບທົ່ງ. ຖ້າບໍ່ເຮັດແນວນັ້ນ ມັນຈະບໍ່ແລ້ວທັນລະດູການ. ສ່ວນການເຮັດຮົ້ວລ້ອມນາ ແລະ ປານຄັນນານັ້ນແມ່ນເຈົ້າຂອງນາໃຜລາວຫາກເຮັດເອົາເອງ.

ໃນເວລາທີ່ເອື້ອຍ ແລະ ແມ່ເຮົາໄປຮ່ວມນາເຮົາເຮັດທົ່ງນາໂພນບ້ານຄາຍຢູ່ນັ້ນ, ພໍ່ເຮົາໄດ້ຈ້າງຄົນມາຊ່ວຍສອງຄົນໄປເຮັດນາໂກ້ ແລະ ນາຕາກແດດ. ນາສອງທົ່ງນີ້ບໍ່ດີປານໃດເພາະເປັນນານໍ້າຟ້າ ແລະ ບໍ່ໄດ້ໃສ່ຝຸ່ນ, ແຕ່ມັນດີຢູ່ບ່ອນມັນຢູ່ແຄມນໍ້າ, ຕາຝັ່ງຊີນແລະຢູ່ທາງນາຂອງຜູ້ອື່ນ, ບໍ່ຈຳເປັນຕ້ອງລ້ອມຮົ້ວ. ເວລາພວກເຮົາວ່າງ, ແມ່ພ້ອມທັງເອື້ອຍ ແລະ ເຮົາເອງກໍ່ໄດ້ພາກັນໄປດຳນາ ແລະ ກ່ຽວເຂົ້ານາໂກ້ ແລະ ນາຕາກແດດຊ່ວຍພໍ່ . ນາສອງທົ່ງນີ້ພວກເຮົາໄດ້ປູກເຂົ້າຈ້າວໃສ່, ປານນັ້ນຜະລິດຕະພາບກໍ່ບໍ່ສູງ. ເຂົ້າປູກກິໂລໜຶ່ງເກັບກ່ຽວໄດ້ພຽງແຕ່ 26 ຫາ 27 ກິໂລເທົ່ານັ້ນ, ບໍ່ຄືນາໂພນບ້ານຄາຍເຊິ່ງເຂົ້າປູກກິໂລໜຶ່ງ ສາມາດເກັບກ່ຽວໄດ້ຮອດ 47 ຫຼື 48 ກິໂລ.

ຄຽງຄູ່ກັບເຮັດນາ, ເຮືອນເຮົາຍັງເຮັດໄຮ່ປີລະໜຶ່ງພື້ນເພື່ອປູກເຂົ້າ, ສາລີ, ມັນຕົ້ນ, ໝາກຟັກ, ໝາກແຕງລາຍ, ໝາກແຕງຈີງ ແລະ ອື່ນໆ ແລະ ເຮັດສວນໜຶ່ງບ່ອນປູກສາລີ , ໝາກເຜັດ, ຜັກກາດ, ຜັກບົ່ວ, ຜັກຫອມ, ໝາກແຕງຄັ້ງ ແລະ ຜັກຫອມອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງຄອບຄົວ. ຫຼັງຈາກແລ້ວນາເຮົາ ຂົນເຂົ້າຂຶ້ນເລົ້າປະຊາຊົນແລ້ວ ພົດທັງບ້ານໄດ້ປ່ອຍມາ, ງົວ, ຄວາຍເຂົ້າກິນຫຍ້າຕາມທົ່ງນາ, ບໍ່ໄດ້ໄປຕິດຕາມລ້ຽງດູຄືໃນລະດູຝົນອີກ. ພໍ່ແມ່ ແລະ ເອື້ອຍເຮົາເລີ່ມຕົ້ນລ້ອມຮົ້ວສວນຢູ່ຕາມແຄມໜອງ ທີ່ເອີ້ນວ່າ ບຸ່ງດ່ຽວ ທີ່ເປັນໜອງລ້ຽງປາໃນຂອງເຮືອນເຈົ້າເມືອງ ; ແລ້ວພໍ່ຂອງເຮົາ ກໍ່ໄປເກາະເອົາໄທບ້ານສອງສາມເຮືອນໄປຊອກບ່ອນໄຮ່, ໄດ້ແລ້ວກໍ່ຊ່ວຍກັນຖາງກົກໄມ້ນ້ອຍ , ບັກກົກໄມ້ໃຫຍ່ຕາມຕີນພູໂຮຍ, ແຄມຫ້ວຍງອຍ ແລະ ຫ້ວຍນ້ອຍອື່ນ, ເມື່ອກົກໄມ້ແຫ້ງພົດແລ້ວກໍ່ພ້ອມກັນຈູດ, ບ່ອນບໍ່ໄໝ້ດີກໍ່ເກັບເອົາຕົ້ນ ແລະ ງ່າໄມ້ທ້ອນເຂົ້າກັນເປັນກອງ ອ້ອມຂອນໄມ້ໃຫຍ່ແລ້ວຈູດຕື່ມອີກ ເຊິ່ງເພິ່ນເອີ້ນວ່າຮ້າໄຮ່. ການສັກເຂົ້າ ແລະ ສັກສາລີແມ່ນສອງສາມເຮືອນເຮົາກັນເຮັດ ; ສ່ວນພືດພັນທັນຍາຫານອື່ນໆນັ້ນ ແມ່ນຕ່າງຄົນຕ່າງປູກເອົາໃຜເອົາລາວ. ການເກັບກ່ຽວເຂົ້າ, ເກັບສາລີ ແລະ ພືດພັນອື່ນໆຂົນມາເຮືອນ ແມ່ນແຕ່ລະຄອບຄົວເຮັດເອົາເອງ. ສຳລັບເຮືອນເຮົາແມ່ນພໍ່ແມ່ ແລະ ເອື້ອຍເປັນຜູ້ເກັບແລະຂົນ, ສ່ວນຕົວເຮົາເຮັດໄດ້ພຽງແຕ່ປັດເຄືອງມື ແລະ ສາລີ ໝາກແຕງລັກນ້ອຍ ສົມກັບແຮງຂອງເຮົາເທົ່ານັ້ນ. ເມື່ອເຮົາຂຽນມາຮອດບ່ອນນີ້ ມັນພາໃຫ້ເຮົາຄຶດຮອດຊີວິດອັນມ່ວນຊື່ນ ຂອງເຮົາ ເວລາເຮົາໄດ້ໄປໄຮ່ນຳພໍ່ແມ່ ແລະ ເອື້ອຍ. ເລາະລຽບໄປຕາມແຄມຫ້ວຍນໍ້າໃສເຢັນ ຢູ່ກາງໄຮ່ເຮົາໄດ້ດົມກິ່ນກົກໄມ້ໄຟໄໝ້ທີ່ປິວມາຕາມສາຍລົມເຢັນ ແລະ ໄດ້ຍິນສຽງນົກກາເວົາ ແລະ ນົກຕ່າງໆຮ້ອງຢູ່ບົນຕົ້ນໄມ້ຫົວໄຮ່ເປັນໜ້າອອນຊອນຈົນວ່າຫຼາຍສິບປີ ຜ່ານມາເຮົາກໍ່ຍັງຈື່ບໍ່ລືມ.

ເລື່ອງໜຶ່ງອີກທີ່ຄົງປະທັບຢູ່ໃນໃຈເຮົາ ແມ່ນພໍ່ແມ່ເຮົາພາພວກເຮົາລ້ຽງປາໃນຢູ່ໃນໜອງ ແລະ ໃນນາ. ຄອບຄົວເຮົາມີໜອງໃຫຍ່ອັນໜຶ່ງຢູ່ໃກ້ໜອງບຸ່ງດ່ຽວ. ທ້າຍເດືອນ 7 ຫຼັງຈາກດຳນາແລ້ວ, ພໍ່ເຮົາພາເຮົາໄປກະກຽມການຈະເອົາປາອອກຈາກໜອງມາໄຂ່ໃສ່ນາ, ທີ່ພວກເຮົາເອີ້ນວ່າ ພວກເຮົາກຽມຟາດປາ. ວຽກທີໜຶ່ງແມ່ນພໍ່ພາເຮົາໄປຕັດເອົາຮາກກົກໄຄ້ ທີ່ປ່ອນລົງເປັນພົ້ວໃຫຍ່ທີ່ອຸ້ມແຂນໜຶ່ງ ທີ່ເອີ້ນວ່າຊວາຍໄຄ້, ຫາບເອົາມາຕາກໄວ້. ວຽກທີ່ສອງແມ່ນພໍ່ເຮົາແປງຄັນນາບ່ອນຕ່ຳໃຫ້ສູງຂຶ້ນທີ່ກັນພິດ, ອັດ ຮູນ້ຳຮົ່ວທຸກບ່ອນ, ຂຸດຫຼຸມທີ່ມີຢູ່ກາງໄຮ່ນາໃຫ້ເລິກກວ່າໜ້າດິນນາທົ່ວໄປ, ແປງທາງນາໃຫ້ເລິກ ຫຼື ຕື້ນພຽງກັນແລ້ວ ເອົາໄມ້ໄຜ່ມາສານແຕະອັດທາງນາ ແລະ ປາກເໝືອງທຸກບ່ອນ. ວຽກທີ່ສາມ ແມ່ນເອົາໄມ້ໄຜ່ນ້ອຍມາຕັດເຮັດຫຼັກ ໂດຍປະສົ້ນງ່າໜຶ່ງໄວ້ເປັນຂໍເກາະ ແລ້ວເອົາຊວາຍໄຄ້ມາວາງຢາຍໃສ່ກາງໄຮ່ນາເປັນຫຍ່ອມໆ, ເອົາຫຼັກໄມ້ໄຜ່ສຽບປັກໄວ້ ເພື່ອບໍ່ໃຫ້ມັນຍ້າຍໄປມາ. ວຽກທີ່ສີ່ແມ່ນ<u>ໂປ່ທາງໜອງ</u>, ເລືອກເອົາປາພໍ່ 10 ໂຕ ປາແມ່ 30 ໂຕ ມາປ່ອຍລົງໃສ່ໄຮ່ນາ ທີ່ກວ້າງ 30 ວາ, ຍາວ 60 ວາ ເຊິ່ງມີຄັນສູງພຽງຫົວເຂົ່າ ມີນ້ຳເຕັມເກືອບພຽງຄັນນາແລະເປັນໄຮ່ນາທີ່ຮາບພຽງດີ. ແຕ່ລະປີພວກເຮົາປ່ອຍປາໃສ່ 3 ໄຮ່ນາທີ່ກວ້າງໃຫຍ່ເກືອບເທົ່າກັນ. ຫຼັງຈາກປ່ອຍປາແລ້ວ ພວກເຮົາເອົາກະທໍໃສ່ຝຸ່ນງົວຄວາຍ ໄປວາງສຽບຫຼັກໄວ້ປາກເໝືອງບ່ອນນ້ຳໄຫຼເຂົ້າ ແລະ ກອງທາງນາບ່ອນນ້ຳຕົກ ເພື່ອເພີ່ມອາຫານໃຫ້ແກ່ປາ. ສອງສາມມື້ຫຼັງຈາກນັ້ນ ພວກເຮົາກໍ່ໄປຍົກເບິ່ງຊວາຍໄຄ້, ຖ້າເຫັນມີໄຂ່ປາຕິດຢູ່ຫັ້ນ ກໍ່ແປວ່າ ປາເລີ່ມໄຂ່ແລ້ວ ; ເມື່ອໃດເຫັນປະລິມານໄຂ່ປາທໍ່ເກົ່າ ຢູ່ຮອດສອງມື້ແລ້ວ ພວກເຮົາກໍ່ຖອນເອົາຊວາຍໄຄ້ທີ່ມີໄຂ່ປາວາງໃສ່ກວຍພຽດທີ່ເອົາໃບກ້ວຍຮອງອ້ອມຈອດແລ້ວ ເອົາຂຶ້ນມາບົ່ມຢູ່ເຫິງຊານເຮືອນເຮົາ ; ພ້ອມກັນນັ້ນກໍ່ຕ່າງທາງນາໃຫ້ນ້ຳແຫ້ງ ເອົາປາພໍ່ປາແມ່ຄືນໄປປ່ອຍໃສ່ໜອງຄືເກົ່າ ແລະ ອັດທາງນາເພື່ອລ້ຽງນ້ຳໄວ້ໃຫ້ເຕັມຄືເກົ່າ.ແຕ່ລະມື້ ພວກເຮົາກວດເບິ່ງໄຂ່ປາ, ຖ້າມັນມີສີໃສງແລ້ວກໍ່ເອົາວາງລົງໃກ້ທານ້ຳໃນແອ່ງເບິ່ງ, ຖ້າມັນແຕກຕົກລົງນ້ຳເປັນປານ້ອຍແລ້ວກໍ່ຫາບເອົາພິດທູກກວຍໄປນາ, ອັດທາງນາພິດທຸກບ່ອນດ້ວຍແຕະສານຖີ່ແລ້ວ ກໍ່ເອົາຊວາຍໄຄໄປປັກຢາຍໄວ້ຕາມທົ່ງນາໃຫ້ປານ້ອຍແຕກອອກ ແລະ ສືບຕໍ່ເອົາຝຸ່ນງົວຄວາຍໄປໃສ່ຕື່ມອີກ. ຮອດທ້າຍເດືອນ 10 ພວກເຮົາຕ່າງນ້ຳອອກນາທັງພິດ ທີ່ເອີ້ນວ່າແຄງນາ ເພື່ອປ່ອຍນ້ຳສົ້ມອອກ ແລະ ຈັບເອົາປາໃນທີ່ໃຫຍ່ທີ່ສອງ ຫຼື ສາມນິ້ວມື ເຊິ່ງພວກເຮົາເອົາ 3 ຫຼື 4 ພັນໂຕເພື່ອປ່ອຍຄືນລົງໜອງ, ສ່ວນເຫຼືອທີ່ມີແສນກວ່າໂຕ ກໍ່ເອົາເຮັດປາແດກ, ປາເຄັມ ຫຼື ເອົາປຸງແຕ່ງອາຫານດ້ວຍວິທີຕ່າງໆ. ເຮົາຖືວ່າ ການລ້ຽງປາ ແລະ ຈັບປາແບບນີ້ເປັນວຽກອັນໜຶ່ງທີ່ມ່ວນຊື່ນ ແລະ ຈັບໃຈຫຼາຍແທ້. ຫຼັງຈາກຈັບເອົາປາພິດແລ້ວ ພວກເຮົາກໍ່ເປີ່ງນ້ຳເຂົ້ານາອີກ ເພື່ອລ້ຽງເມັດເຂົ້າໃຫ້ມາກ, ຈົນຮອດເດືອນສິບເອັດແຮມ, ຮວງເຂົ້າກົ້ມ ແລະ ເລີ່ມເຫຼືອງຫາງແລ້ວ ພວກເຮົາຈຶ່ງຕັດນ້ຳນາ, ອັດປາກ

ເໝືອງບ່ອນນ້ຳໄຫຼເຂົ້າ ແລະ ໄຂທາງນາໃຫ້ນ້ຳໄຫຼອອກ ເພື່ອໃຫ້ພື້ນດິນນາແຫ້ງໄປ ເວລາກ່ຽວເຂົ້າ.

ແຕ່ລະປີຄອບຄົວເຮົາສືບຕໍ່ເຮັດວຽກແນວນັ້ນໄປຕາມລະດູການ. ອາຍຸເຮົາແກ່ຂຶ້ນເທົ່າໃດກໍ່ໄດ້ຮ່ຳຮຽນວິທີເຮັດການປູກຝັງ ແລະ ລ້ຽງສັດນຳພໍ່ແມ່ເຮົາເຖິງລະດັບສູງຂຶ້ນ ແລະ ໄດ້ປະກອບສ່ວນເຂົ້າໃນການເຮັດວຽກການເພີ່ມພູນຜະລິດພົນຫຼາຍຂຶ້ນເທົ່ານັ້ນ. ສິ່ງທີ່ດີຂອງຄອບຄົວເຮົາແມ່ນຜູ້ໃດກໍ່ສາມັກຄີຮັກແພງກັນ, ຟັງຄວາມສັ່ງສອນຂອງພໍ່ແມ່, ແມ່ນຈະໄດ້ອອກແຮງງານຜະລິດພົນຈົນສຸດກຳລັງກໍ່ບໍ່ມີໃຜຈົ່ມວ່າ ຫຼື ກຽດຄ້ານແຕ່ປະການໃດ. ຄອບຄົວເຮົາບໍ່ອຶດເຂົ້າ ແລະ ກໍ່ບໍ່ໄດ້ຂາຍເຂົ້າຈັກປີ ; ການເກັບກ່ຽວແຕ່ລະປີພໍແຕ່ກຸ້ມກິນ ແລະ ລ້ຽງສັດໃຫຍ່ນ້ອຍ. ລາຍໄດ້ຈາກການຕຳຫູກຂອງແມ່ ແລະເອື້ອຍ, ຈາກການຕີເງິນຄຳຂອງພໍ່ເຮົາ, ຈາກການຂາຍມ້າ, ງົວ, ຄວາຍ ແລະ ຈາກການຂາຍໝາກໄມ້ໃນສວນເປັນທຶນສະສົມເພື່ອຊື້ເຄື່ອງນຸ່ງ ແລະ ເຄື່ອງມືຂອງພວກເຮົາ.

ໃນຕົ້ນປີ 1918 ເປັນເວລາທີ່ອາຍຸເຮົາຍ່າງເຂົ້າປີທີ 9. ຄອບຄົວເຮົາ ມີຄວາມມ່ວນຊື່ນເບີກບານເພາະວ່າແມ່ເຮົາໄດ້ປະສູດລູກນ້ອຍຕື່ມຜູ້ໜຶ່ງເປັນຜູ້ຍິງ, ເຮັດໃຫ້ສະມາຊິກຄອບຄົວເພີ່ມຈຳນວນຂຶ້ນຕື່ມ ແລະ ເຮັດໃຫ້ເຮົາເອງມີນ້ອງຍິງເປັນຜູ້ທີສອງ ຊື່ວ່າ ນາງວັນສີ ວົງວິຈິດ. ພີ່ນ້ອງລຸງຕາທີ່ຢູ່ບ້ານໃຕ້ບ້ານເໜືອຕ່າງກໍ່ທະຍອຍກັນມາຊົມເຊີຍ ສົມລະເສີນແລະອວຍພອນໃຫ້ແກ່ພໍ່ແມ່ ແລະ ພວກເຮົາເອງ. ເມື່ອສະສາງວຽກງານໃນຄອບຄົວແລ້ວ ພໍ່ເຮົາໄດ້ພາເຮົາຂີ່ມ້າໄປຢາມພີ່ນ້ອງຢູ່ບ້ານໄຜ່, ບ້ານປຸງ, ວັງວຽງ ແລະ ເມືອງກັດ ໂດຍຄ້າງຄືນບາງບ່ອນກໍ່ຄືນໜຶ່ງ ຫຼື ສອງຄືນ ; ນັ້ນແມ່ນເວລາທີ່ເຮົາຮູ້ສຶກວ່າເປັນຍອດສູງ ແຫ່ງຄວາມມ່ວນຊື່ນ ໃນຊີວິດຍາມເຍົາໄວຂອງເຮົາ.

ເດືອນມິຖຸນາ ປີ 1918 ໄດ້ເຮັດໃຫ້ຄອບຄົວເຮົາພົບກັບຄວາມໂສກເສົ້າ ເຫງົາໜອງຢ່າງບໍ່ໄດ້ຄາດຝັນ, ພໍ່ເຮົາໄດ້ລົ້ມປ່ວຍເປັນໄຂ້ຍຸງ ນັບມື້ນັບໜັກລົງ. ແມ່ເຮົາພ້ອມທັງພີ່ນ້ອງທຸກຄົນລ້ວນແຕ່ເປັນຫ່ວງ, ຮັກແພງ ແລະ ວິ່ງເຕັ້ນຈົນສຸດຄວາມສາມາດ ເພື່ອປົວເອົາພໍ່ເຮົາ, ຢາຫຼວງ ແລະ ຢາພື້ນເມືອງທີ່ແລ່ນຊອກຫາມາໄດ້ ພ້ອມທັງຮີດຄອງປະເພນີ ທີ່ເຄີຍໃຊ້ຢູ່ໃນທ້ອງຖິ່ນ ແມ່ນໄດ້ຖືກຮີບໂຮມເອົາມາໃຊ້ເຂົ້າໃນການປິ່ນປົວ ອັນພວກເຮົາ ຖືວ່າມີຄວາມສຳຄັນທີ່ສຸດນັ້ນ. ແຕ່ວ່າຄວາມຮັກແພງຊ່ວຍເຫຼືອຂອງພີ່ນ້ອງຍາດວົງ, ຢູກຢາທຸກຢ່າງທີ່ຊອກຫາມາໄດ້ ພ້ອມທັງຮີດຄອງປະເພນີທຸກຊະນິດທີ່ເຕົ້າໂຮມມາໃຊ້ ກໍ່ບໍ່ສາມາດກອບກູ້ເອົາຊີວິດຂອງພໍ່ເຮົາໄດ້. ຫຼັງຈາກທົນທຸກທໍລະມານມາໄດ້ 5 ເດືອນແລ້ວ, ມາຮອດທ້າຍເດືອນ 10 ພໍ່ຂອງເຮົາທີ່ມີອາຍຸພຽງ 47 ປີ ໄດ້ສິ້ນຊີວິດລົງທ່າມກາງຄວາມຮ້ອງໄຫ້ສະຫຼົດໃຈຂອງໝົດທັງຄອບຄົວ ແລະ ພີ່ນ້ອງຍາດວົງເຮົາ, ປະແຕ່ແມ່ໄວ້ໃຫ້ລ້ຽງລູກ 4 ຄົນທີ່ຍັງອ່ອນນ້ອຍໄຮ້ດຽງສາ.

ຖ້າເວົ້າຕາມປະເພນີແລ້ວ, ເຮົາເປັນລູກຊາຍຕ້ອງບວດເປັນສາມະເນນ ເພື່ອຈູງພໍ່ໄປປ່າຊ້າ. ແຕ່ວ່າລະບຽບທາງສາສະໜາຊ້ຳພັດບົ່ງໄວ້ວ່າ ອາຍຸຄົບ 10 ປີບໍລິບູນ ຈຶ່ງໃຫ້ບວດເປັນສາມະເນນໄດ້. ດັ່ງນັ້ນ ຮອດເດືອນ 4 ປີຕໍ່ມາ, ກົງກັບມື້ບຸນປີໃໝ່ລາວ ເຮົາຈຶ່ງໄດ້ບວດເພື່ອສູດຮຽນສົ່ງກຸສົນໄປຕອບແທນບຸນຄຸນໃຫ້ແກ່ພໍ່ຜູ້ໄດ້ບັງເກີດເກົ້າ. ຫຼັງຈາກບວດແລ້ວເຮົາກໍ່ໄດ້ຕັ້ງໃຈຮຽນບົດສູດ ແລະ ໜັງສືເທດ ເຮັດໃຫ້ພະຊາກອງຜູ້ເປັນເຈົ້າອາທິການວັດບ້ານຄາຍໃນເວລານັ້ນ ຮັກແພງ ແລະ ເອົາໃຈໃສ່ສອນໜັງສືໃຫ້ເຮົາ. ຮອດເດືອນ 8ເພັງ ອັນເປັນມື້ເຂົ້າພັນສາ ເຮົາສາມາດຮຽນສູດພາກສູດມົນນ້ອຍ ແລະ ເລີ່ມເຂົ້າຮຽນ ພາກສູດມົນກາງ ແລະ ຮຽນອ່ານໜັງສືທຳໄປພ້ອມກັນ. ເວລາອອກພັນສາມື້ເດືອນ 11 ເພັງ ປີ 1919 ເຮົາຮຽນໜັງສືສູດຈົບບົດທຳມະຈັກ ແລະ ຮຽນໜັງສືທຳຈົນເທດໄດ້ລ່ຽນໄຫຼດີ. ອອກພັນສາແລ້ວເຮົາໄດ້ຂໍສິກໂລດ ເພາະວ່າຢູ່ໃນຄອບຄົວບໍ່ມີຜູ້ຈະເຮັດວຽກຊ່ວຍແມ່ ແລະເອື້ອຍເຮົາ, ແຕ່ເຈົ້າອາທິການວັດໄດ້ລຸ້ລົ້ງໃຫ້ເຮົາຢູ່ວັດຕໍ່ໄປຕື່ມອີກ 3 ເດືອນ, ເພາະລະຫວ່າງນັ້ນແມ່ນໄລຍະທີ່ຊາວບ້ານຕ່າງໆ ພາກັນຈັດຕັ້ງບຸນວັດຂຶ້ນ ເຊິ່ງໃນນັ້ນ ມີການເທສະໜາເລື່ອງພະເວສັນຕະລະຊາດົກ. ພະສົງ ແລະ ສາມະເນນວັດບ້ານເຮົາມັກໄດ້ຮັບອັນນິມົນໃຫ້ເທດອົງລະໜຶ່ງ ຫຼື ສອງກັນ. ສ່ວນຕົວເຮົາມັກຖືກນິມົນໃຫ້ໄປເທດກັນ "ມະທີ" ຫຼື " ກຸມມານ " ເລື້ອຍໆ, ເພາະວ່າສຽງຂອງເຮົານ້ອຍ ເທດກັນດັ່ງກ່າວນັ້ນເຮັດໃຫ້ຜູ້ຟັງເປັນໜ້າອີດູຕົນ.

ເດືອນກຸມພາ ປີ 1920 ເຮົາໄດ້ສິກອອກຈາກວັດມາຢູ່ເຮືອນນຳແມ່ ແລະເອື້ອຍນ້ອງ. ການສູນເສຍພໍ່ໄດ້ເຮັດໃຫ້ຄອບຄົວຂອງເຮົາທຸກຍາກເສົ້າໝອງລົງຫຼາຍທີ່ສຸດ ; ວຽກທີ່ຕ້ອງເຮັດເພື່ອລ້ຽງຄອບຄົວແມ່ນໜັກໜ່ວງໜວງຫຼາຍ, ແຕ່ວ່າພັດທັງເຮືອນມີແຕ່ແມ່ ແລະ ເອື້ອຍເຮົາເປັນກຳລັງຕົ້ນຕໍ ເພື່ອເຮັດວຽກເຫຼົ່ານັ້ນ ທີ່ປະກົດວ່າບໍ່ເຄີຍມີມາແລ້ວຈັກເທື່ອ. ແມ່ເຮົາເວລານັ້ນອາຍຸ 40 ປີ, ເອື້ອຍເຮົາ ນາງພິມພາ ວົງວິຈິດ ອາຍຸ 14 ປີ ເປັນຜູ້ຕາງໜ້າຄອບຄົວເຮົາໄປເຮັດວຽກຂອງສັງຄົມນຳເພິ່ນ. ການປ່ານຝາຍເອົານ້ຳມາເຂົ້າກ້າເຂົ້ານາ, ການຂົນຝຸ່ນໄປໃສ່ນາ, ການໄຖກ້າ ໄຖນາ, ຄາດກ້າຄາດນາ, ກວາດກ້າ ກວາດນາ , ຫວ່ານກ້າ, ຫຼົກກ້າດຳນາ, ກ່ຽວເຂົ້າ, ຕີເຂົ້າ ແລະ ຂົນເຂົ້າໄປໃສ່ເລົ້າແມ່ນພັດທັງບ້ານເຮົາກັນເຮັດ ; ແບບທຳມາຫາກິນແບບນີ້ເປັນອັນດີແທ້, ມັນໄດ້ຊ່ວຍໃຫ້ຄອບຄົວເຮົາ ເຮັດນາໂພນບ້ານຄາຍແລ້ວທັນລະດູ. ພີ່ນ້ອງເຮົາທີ່ຢູ່ບ້ານໄຜ່, ບ້ານງາ, ຄົວວຽງ, ບ້ານໜຽງ, ນາລານ ກໍ່ໄດ້ພັດປ່ຽນກັນມາເຮັດວຽກຊ່ວຍພວກເຮົາຜູ້ລະເດືອນ ຫຼື ສອງເດືອນ ເພື່ອສະແດງຄວາມຮັກແພງ ແລະ ອົບອຸ່ນແກ່ພວກເຮົາ.

ເຖິງຢ່າງນັ້ນກໍ່ຕາມ, ຊີວິດໃນຄອບຄົວຂອງເຮົາກໍ່ຍັງສືບຕໍ່ເສົ້າໂສກຂາດເຂີນຢູ່ສະເໝີ. ຫຼັງຈາກພໍ່ເຮົາຕາຍໄປແລ້ວ ພວກເຮົາເຮັດລອນແຕ່ນາໂພນບ້ານຄາຍເທົ່ານັ້ນ. ພວກເຮົາ

ບໍ່ມີແຮງພໍຈະໄປເຮັດນາໂກ້ ແລະ ນາຕາກແດດອີກ. ນາສອງທົ່ງນີ້ ພວກເຮົາພຽງແຕ່ໄປປ້ານຄັນ, ແປງທ້າງແລ້ວທ້າງສ້ອນເອົາປາມາກິນຕື່ມໜ້ອຍໜຶ່ງເທົ່ານັ້ນ. ເຮັດນາທົ່ງດຽວພວກເຮົາກໍ່ບົວລະບັດບໍ່ໄດ້ດີ. ຜະລິດຕະພາບຂອງນາຕ່ຳກວ່າແຕ່ກ່ອນ. ແຕ່ລະປີຄອບຄົວເຮົາຂາດເຂົ້າ ກິນເດືອນໜຶ່ງ ຫຼືສອງເດືອນ. ບາງປີແມ່ເຮົາໄດ້ຂາຍມ້າ, ງົວ, ຄວາຍ ຕົວໜຶ່ງ ຫຼື ຫຼາຍຕົວເພື່ອຊື້ເຂົ້າມາລ້ຽງລູກ, ເຮັດໃຫ້ທຶນຮອນທີ່ພໍ່ເຮົາປະໄວ້ໃຫ້ນັ້ນ ນັບມື້ນັບບົກແຫ້ງລົງ. ເອື້ອຍເຮົາເຄີຍເຕືອນເຮົາເລື້ອຍວ່າ ໃຫ້ເຮົາອົດທົນເຮັດວຽກຊ່ວຍແມ່ ເພາະວ່າແມ່ເຮົາບໍ່ມ່ວນຊື່ນຍອມເປັນຫ່ວງນຳຊີວິດຂອງພວກລູກໃນຄອບຄົວ. ຍາມນັ້ນ ພວກເຮົາຍັງມີແມ່ເຖົ້າທີ່ມີເຮືອນຢູ່ນຳກັບເຮືອນເຮົາ ແລະ ນຳພາຫຼານຂອງເພິ່ນເຮັດນາຕິດກັບນາໂພນ ບ້ານຄາຍຂອງເຮົາ, ເຮົາມີນ້າບ່າວຜູ້ໜຶ່ງເຮັດນາຢູ່ຮ່ວມບ້ານກັບເຮົາ, ຜູ້ໜຶ່ງເຮັດນາຢູ່ລາດບອກໄກຈາກບ້ານເຮົາ 16 ກິໂລແມັດ, ຜູ້ໜຶ່ງເຮັດການເປັນຜູ້ຊ່ວຍຢູ່ນຳເຈົ້າເມືອງຈູມ ທີ່ຊຽງຂວາງ. ບາງຄັ້ງບາງຄາວ ແມ່ເຖົ້າ ແລະ ນ້າບ່າວເຮົາກໍ່ສົ່ງເຂົ້າ ຫຼື ສະບຽງອາຫານມາໃຫ້ພວກເຮົາ, ແຕ່ການຊ່ວຍເຫຼືອອັນນັ້ນກໍ່ບໍ່ສາມາດຈະລ້ຽງພວກເຮົາພໍກຸ້ມໜຶ່ງເດືອນໄດ້.

ເວລານັ້ນ ເຮົາໄດ້ຮ່ວມກັບເອື້ອຍເຮົາເຮັດວຽກໜັກແຫ ເພື່ອຊ່ວຍແບ່ງເບົາພາລະຂອງແມ່, ເພາະວ່ານ້ອງສາວເຮົາສອງຄົນກໍ່ຍັງນ້ອຍ, ບໍ່ທັນສາມາດເຮັດວຽກໜັກຊ່ວຍພວກເຮົາໄດ້. ອາຍຸພຽງແຕ່ 11 ຢ່າງເຂົ້າ 12 ປີ ເຮົາໄດ້ຮຽນປ້ານຄັນນາ, ຮຽນໄຖກ້າ, ໄຖນາ ຄາດນາ, ໄປປ້ານຝາຍນ້ຳ ແລະ ກ່ຽວຫຍ້າຄາມຸງເຮືອນຮ່ວມກັບຊາວບ້ານ. ແມ່ແລະເອື້ອຍໄດ້ສອນ ແລະ ພາເຮົາໄພຫຍ້າເພື່ອມຸງເຮືອນ, ເພາະວ່າສອງປີໃດພວກເຮົາໄດ້ຖ່າຍຫຍ້າມຸງຫຼັງຄາເຮືອນເບື່ອງໜຶ່ງ.

ເມື່ອໄຖນາ, ຄາດນາ ແລະ ກວາດນາເປັນແລ້ວ, ເຮົາໄດ້ຮ່ວມກັນກັບເອື້ອຍເຮົາໄປເຮັດນາເອົາແຮງຊ່ວຍພີ່ນ້ອງຊາວບ້ານ ; ພວກນັ້ນກໍ່ຮັກແພງອີດູຕົນພວກເຮົາ ແລະ ໃຫ້ຜູ້ໃຫຍ່ມາຕອບແທນແຮງງານຂອງພວກເຮົາ. ເວລາພວກເຮົາໄປນາເອົາແຮງ ແມ່ນແມ່ເຮົາກຳກັບວຽກ–ເຮືອນ ແລະ ວຽກນາຂອງເຮືອນເຮົາ. ກັບມາຈາກນາເອົາແຮງແລ້ວ ເອື້ອຍເຮົາໄປບົວລະບັດສວນຜັກ ເກືອໝູ ເປັດໄກ່ ແລະ ເຮົາໄດ້ໄປຕ້ອນເອົາມ້າ, ງົວ, ຄວາຍມາແຫຼ່ງ, ໃນເວລາທີ່ແມ່ກຳກັບການນຸ່ງການກິນໃຫ້ພວກນ້ອງນ້ອຍ ແລະ ໜຶ້ງເຂົ້າຄົວກິນທັງແລງ ແລະງາຍ. ເມື່ອມີຍາມວ່າງ ແມ່ເຮົາກໍ່ຍາດເວລາສອນໃຫ້ເອື້ອຍເຮົາຄົວກິນ ແລະຕຳຫູກ. ເຮົາໄດ້ຮຽນຈັກຕອກໄພຫຍ້າ, ຈັກຕອກມັດເຂົ້າ, ຈັກແລະເຫຼົາໄມ້ໄຜ່ເພື່ອສານກະຕ່າເກັບຜັກ, ສານກວຍຫາບຫຍ້າມ້າ, ກວຍຫາບຂີ້ຝຸ່ນ ແລະ ກວຍໃຫ້ເອື້ອຍເຮົາໄປຫາບເອົາຟືນມາດັງໄຟ. ນອກຈາກນັ້ນກໍ່ຍັງຮຽນເຮັດວຽກອື່ນທີ່ເປັນປະໂຫຍດໃຫ້ແກ່ການຜະລິດພືນ, ລ້ຽງສັດ ແລະ ການໃຊ້ສອຍໃນເຮືອນ. ເມື່ອຕອນຄືນເບິ່ງແລ້ວ ແມ່ນພວກເຮົາເຮັດຫຼາຍວຽກທີ່ໜັກໜ່ວງທີ່ສຸດ, ແຕ່ພວກເຮົາກໍ່ເຮັດວຽກເຫຼົ່ານັ້ນດ້ວຍຄວາມຫາວຫັນມ່ວນຊື່ນ, ຍ້ອນວ່າແມ່ເຮົາຮູ້ຊີ້ນຳ ແລະລະ

ດິນເປັນປະຈຳ ແລະ ຍ້ອນພວກເຮົາເອງກໍ່ເຫັນວ່າເດັກນ້ອຍຊາວບ້ານທັງຫຼາຍ ເຂົາກໍ່ເຮັດຄືດຽວກັນ.

ປີ 1918 ເປັນປີທີ່ມີຂ່າວວ່າຊົນຊາດລາວສູງເຜົ່າມົ້ງ ນຳໂດຍເຈົ້າຟ້າປາໄຈໄດ້ພາກັນລຸກຂຶ້ນເຮັດເສິກຢູ່ທີ່ພູຈອມຈິກຈອມຈັນ ແຂວງນ້ຳທາ ເພື່ອຕ້ານພວກລ່າເມືອງຂຶ້ນຝະລັ່ງ. ສົງຄາມນັ້ນຄ່ອຍໆລາມລົງມາຕາມບ່ອນທີ່ມີຊົນເຜົ່າມົ້ງ ຕັ້ງພູມລຳເນົາຢູ່. ເຫດຜົນອ້າງອີງແມ່ນຕ້ານການທີ່ພວກລ່າເມືອງຂຶ້ນຝະລັ່ງເກັບເງິນສ່ວຍ ແລະຄ່າໄຖ່ການພັກ, ເກັບຊື້ເອົາຢາຝິ່ນດ້ວຍລາຄາຖືກ, ບໍ່ໃຫ້ພໍ່ຄ້າເອົາເກືອ ແລະ ແຜ່ນແພຂຶ້ນໄປຂາຍໃຫ້ຊົນເຜົ່າມົ້ງ. ມາຮອດປີ 1920, ເສິກມົ້ງນັ້ນໄດ້ແຜ່ລາມລົງມາຮອດພູເລີຍແຂວງຫຼວງພະບາງ, ພູພາທີ, ພູກັງພູເງິນ ເມືອງຊອນ, ຊຳເຕີ້ ແລະ ຫົວເມືອງແຂວງຫົວພັນ, ພູສູງ ພູວຽງ ພູດ່າພໍ່ ພູເລີດ ເມືອງຮຽມພັນລໍແຂວງຫຼວງພະບາງ, ຖ້ຳລານາຄັງ ນາມອນ ພັກແຄະ ໜອງແຮດ ແກ້ງຄວາຍ ປ່າຄານາຊຽງ ຖ້ຳທາວ ພັກເຫຼັ້ງ ເມືອງຕົ້ນ ພູແຄ ຊຳທອງ ລອງແຈງ ຊຽງແດດ ແຂວງຊຽງຂວາງ. ຂະບວນການຕໍ່ສູ້ຂະຫຍາຍໄປຮອດບ່ອນໃດ ກໍ່ມີການຕັ້ງເຈົ້າຟ້າຂຶ້ນບ່ອນນັ້ນ ບາງບ່ອນກໍ່ແມ່ນຜູ້ຊາຍ ບາງບ່ອນກໍ່ແມ່ນແມ່ຍິງເປັນເຈົ້າຟ້າ ເຊິ່ງທຸກຄົນມີຄວາມເຊື່ອຖືຢ່າງຕາຍໃຈທີ່ສຸດ ເພາະຖືວ່າເປັນຕົວແທນຂອງເຈົ້າຟ້າປາໄຈ.

ພວກລ່າເມືອງຂຶ້ນຝະລັ່ງໄດ້ເກນເອົາຊາວໜຸ່ມລາວລຸ່ມ ແລະ ລາວເທິງ ເຂົ້າເປັນທະຫານຂອງ ແລ້ວກໍ່ເອົາໄປຕີພວກຊົນເຜົ່າມົ້ງ ; ເຮັດແນວນັ້ນຊົນເຜົ່າມົ້ງຍິ່ງຄຽດແຄ້ນໃຫ້ຊົນເຜົ່າລາວລຸ່ມ ແລະລາວເທິງ ແລ້ວກໍ່ພາກັນຫຼັ່ງກັນລົງມາຈູດບ້ານເຮືອນຂອງພວກນີ້ ເຮັດໃຫ້ປະຊາຊົນຢ້ານກົວ ແລະ ບ້ານເມືອງເກີດມີການວຸ້ນວາຍຢ່າງຮ້າຍແຮງ. ພວກຝະລັ່ງໄດ້ສັ່ງເອົາທະຫານແດງຈາກຫວຽດນາມເປັນຈຳນວນຫຼາຍຂຶ້ນມາຕັ້ງຄ້າຍຢູ່ໜອງແຮດ ແລະຊຽງຂວາງ ໂດຍແມ່ນນາຍທະຫານທີ່ເປັນຄົນຝະລັ່ງບັນຊາ, ແລ້ວກໍ່ເອົາທະຫານຫວຽດນາມນັ້ນໄປສູ້ຮົບກັບຊົນເຜົ່າມົ້ງ. ເມື່ອເຂົາຈັບເອົາໄດ້ຄົນເຜົ່າມົ້ງຜູ້ໃດ ເຂົາກໍ່ເອົາມາຂ້າຖິ້ມ ຢູ່ທີ່ເມືອງຊຽງຂວາງ ແລະ ໜອງແຮດຢ່າງປ່າເຖື່ອນທີ່ສຸດ. ຊົນເຜົ່າມົ້ງຍິ່ງຄຽດແຄ້ນໃສ່ທັງຝະລັ່ງ, ທັງຫວຽດນາມ, ທັງລາວລຸ່ມ ແລະ ລາວເທິງ ແລ້ວກໍ່ລະດົມກັນຕີປົ້ນເພິ່ງຂອງເຂົາ, ຕຳພົ້ນທົ່ວທຸກແຫ່ງ, ຕັດເອົາປອກແຂນ ແລະ ປອກຄໍເງິນເຮັດລູກປືນ ແລ້ວກໍ່ຂະຫຍາຍສົງຄາມໃຫ້ກວ້າງຂວາງອອກຊຶກໄຊ, ເຮັດໃຫ້ມີຄົນຖືກບາດເຈັບ ແລະ ລົ້ມຕາຍເປັນຈຳນວນຫຼວງຫຼາຍ. ມາຮອດດຽວນີ້ເຮົາຈຶ່ງເຫັນແຈ້ງວ່າ ອັນນັ້ນແມ່ນຜົນຂອງເລກົນແບ່ງແຍກ ເພື່ອປົກຄອງຂອງພວກລ່າເມືອງຂຶ້ນຝະລັ່ງທີ່ເລິກເຊິ່ງ ແລະ ໂຫດຫ້ຽມທີ່ສຸດ.

ຕະຫຼອດປີ 1920 ແລະ 1921 ປະຊາຊົນທຸກບ້ານໃນທ້ອງຖິ່ນຂອງເຮົາ ໄດ້ມີເວລາທຳມາຫາກິນໜ້ອຍທີ່ສຸດ ເພາະວ່າຜູ້ເຖົ້າ, ແມ່ຍິງ ແລະ ເດັກນ້ອຍພາກັນຢ້ານເສິກ ແລະ ພວກຊາຍສະກັນຊ້ຳພັດຢ້ານພວກຝະລັ່ງຈະມາເກນເອົາໄປເປັນທະຫານ ; ທຸກຄົນ ໄດ້ເອົາ

ເຄື່ອງຂອງເຂົ້າໄປລີ້ຢູ່ລຸ້ງໃນປ່າເລິກ, ແຕ່ງໃຫ້ແຕ່ພວກຄົນທີ່ຫາວຫັນແລ່ນໄວ. ອອກມາຊ່ວຍກັນເຮັດນາ. ສອງປີນັ້ນການເຮັດນາຂອງທຸກເຮືອນໄດ້ຫຼຸດແຕ່ກ່ອນຫຼາຍ ເພາະວ່າແຮງງານນ້ອຍ, ໄຮ່ສວນບໍ່ໄດ້ເຮັດຫຼາຍ, ນາບໍ່ໄດ້ຮັບການບົວລະບັດດີ. ແຕ່ລະເຮືອນພວກເຮົາທີ່ໄປຢູ່ລຸ້ງນຳກັນ ໄດ້ໄປຖາງປ່າເຫຼົ່າເຮັດໄຮ່ລິກ ເອົາຈົກສັບເອົາຢູ່ຕາມເປີ້ນພູໂຮຍເພື່ອປູກສາລີ, ມັນຕົ້ນ, ເຜືອກ ແລະ ພາກຟັກສຳລັບກິນຕາງເຂົ້າ. ນອກຈາກນັ້ນ ຍັງໄດ້ໄປຊອກຂຸດມັນອ້ອນ, ມັນຮິບ, ມັນໄງຢູ່ຕາມປ່າມາກິນຕື່ມອີກ ຈົ່ງພໍ້ກຸ້ມຮອດເຂົ້າໃໝ່. ສອງປີນັ້ນ ເປັນສອງປີທີ່ຊີວິດໃນຄອບຄົວເຮົາພົບຄວາມຫຍຸ້ງຍາກອຶດຢາກຫຼາຍທີ່ສຸດ.

ມາຮອດຕົ້ນປີ 1922, ພວກລ່າເມືອງຂຶ້ນຝະລັ່ງໄດ້ປາບຂະບວນຮັກຊາດ ຂອງເຜົ່າມົ້ງລົງໄດ້ທົ່ວທຸກບ່ອນ, ການຮົບເລວກັນໄດ້ສິ້ນສຸດລົງ. ປະຊາຊົນທີ່ໄປລີ້ຢູ່ລຸ້ງ ໄດ້ຍົກຄືວກັບຄືນບ້ານເດີມຂອງໃຜລາວ. ແມ່ເຮົາໄດ້ພາລູກໄປຮ່ວມກັບຊາວບ້ານເຮັດໄຮ່ຢູ່ບ່ອນລຸ້ງເກົ່າແລະໄດ້ຂາຍມ້າແມ່ຕົວໜຶ່ງ ແລະ ຄວາຍແມ່ສອງຕົວເພື່ອໄປຊື້ເຂົ້າມາກິນ ແລະ ມາເຮັດເຂົ້າປູກ ເມື່ອຮອດລະດູມາກໍ່ໄດ້ສືບຕໍ່ເຮັດກ້າ ແລະ ເຮັດນາໄປຕາມເດີມ.

ທ້າຍປີນັ້ນ ເຈົ້າເມືອງແປກຜູ້ເກົ່າຊື່ທາວ ວັນທອງ ໄດ້ຕາຍໄປ. ເຈົ້າເມືອງຜູ້ໃໝ່ ຊື່ທ້າວພັນ ມາປ່ຽນເລີຍບໍ່ຢູ່ບ້ານຄາຍອີກ, ເພິ່ນໄປຕັ້ງສຳນັກງານຢູ່ກາງດົງໃກ້ກັບບ້ານທາດ, ດົງວຽງຕາແສງດົງທີ່ເພິ່ນໃຫ້ຊື່ວ່າບ້ານອິນແປງ. ຮອດກາງປີ 1923 ເພິ່ນຊ້ຳພັດຍ້າຍ ສຳນັກງານເມືອງແປກໄປຕັ້ງຢູ່ບ້ານເທີນຕາແສງຄາຍ. ເພິ່ນໄດ້ປູກໂຮງການເຈົ້າເມືອງ ແລະເຮືອນຂ້າລາຊະການຂຶ້ນຫຼາຍຫຼັງ, ມີທັງໂຮງພໍ ແລະ ໂຮງຮຽນດ້ວຍ. ເວລານັ້ນພໍດີເອື້ອຍເຮົາເອົາຜົວ, ຄອບຄົວເຮົາມີອ້າຍເຂີຍເປັນແຮງງານຕື່ມຕໍ່ຮ່ວມກັບແມ່ ແລະເອື້ອຍເຮັດກ້າ, ເຮັດນາ ແລະ ລ້ຽງສັດ. ແມ່ເຮົາຈຶ່ງຕົກລົງໃຫ້ເຮົາໄປເຂົ້າໂຮງຮຽນເພື່ອສືບຕໍ່ຮຽນໜັງສື. ທຸກວັນ, ເວັ້ນແຕ່ວັນອາທິດ ແລະ ວັນພະຫັດ, ເຮົາໄດ້ພາຍຖົງຫໍ່ເຂົ້າ ແລະ ຖົງປຶ້ມຈາກບ້ານຄາຍແຕ່ເຊົ້າໆ ຍ່າງໄປຮຽນໜັງສືທີ່ບ້ານເທີນ, ເປັນໄລຍະທາງ 9 ກິໂລແມັດ; ຕອນທ່ຽງເຮົາກິນເຂົ້າງາຍຢູ່ກັບໂຮງຮຽນ, ເລີກໂຮງຮຽນຕອນແລງເຮົາຈຶ່ງກັບມາກິນເຂົ້າແລງທີ່ເຮືອນເຮົາ. ມື້ວັນອາທິດ ແລະ ວັນພະຫັດໃນລະດູແລ້ງເຮົາໄດ້ໄປປັກຄືນເອົານົກກູ້, ນົກເຂົາແຕ່ເຊົ້າໆ, ສວາຍມາກໍ່ໄປຕໍ່ໄກ່ປ່າ, ຕໍ່ນົກຂໍ່ ຫຼື ຫາງຕັງບານໃສ່ນົກເປົ້ານົກກຸມ ;ລະດູການາ ແລະດຳນາເຮົາຈຶ່ງໄປນາເຮົາຊ່ວຍອ້າຍເຂີຍແລະເອື້ອຍ, ປະໃຫ້ແມ່ເຮົາ ຢູ່ເຮືອນລ້ຽງພວກນ້ອງສາວທີ່ຍັງນ້ອຍ. ເຮົາຮູ້ສຶກວ່າເວລານັ້ນ ຊີວິດຂອງຄອບຄົວເຮົາ ມ່ວນຊື່ນເບີກບານກວ່າເກົ່າ ເພາະວ່າແຕ່ລະປີເຮົາມີເຂົ້າພໍກິນກຸ້ມປີ, ບໍ່ໄດ້ອຶດເຂົ້າຄືແຕ່ກ່ອນ ແລະຕົວເຮົາກໍ່ມີເວລາໄປຮຽນໜັງສື ຫຼື ໄປພັກຜ່ອນຢ່ອນອາລົມຮ່ວມກັບເດັກນ້ອຍຊາວບ້ານຜູ້ອື່ນ. ຕະຫຼອດປີ 1923, ເຮົາໄດ້ຮຽນໜັງສືຢູ່ຫ້ອງທີ່ 4 (cours préparatoire). ເພາະວ່າໜັງສືລາວທີ່ເຮົາໄດ້ຮຽນນຳພໍ່ເຮົານັ້ນ ຍັງແມ່ນລະດັບຕ່ຳ, ພຽງແຕ່ຮູ້ອ່ານ ແລະ

ຂຽນໜ້ອຍໜຶ່ງເທົ່ານັ້ນ, ເຮົາຍັງຕ້ອງຮຽນຄິດເລກ ແລະ ຮຽນໜັງສືຝະລັ່ງຕື່ມອີກ.

ຕົ້ນປີ 1924, ນ້າບ່າວເຮົາທີ່ເຮັດການເປັນຜູ້ຊ່ວຍຢູ່ໂຮງການເຈົ້າເມືອງວຽງ-ໄດ້ມາຕ້ອນເອົາເຮົາໄປຮຽນໜັງສືຕໍ່ຢູ່ໂຮງຮຽນປະຖົມຊຽງຂວາງ. ຍ້ອນວ່ານາຍຄູເປັນຄົນຮັກແພງກັບນ້າບ່າວເຮົາ, ເພິ່ນຈຶ່ງຮັບເອົາເຮົາເຂົ້າຮຽນຫ້ອງທີ 3 (cours élémentaire) ການຮຽນເຫັນວ່າຍາກໃຫ້ແກ່ເຮົາໃນ 3 ເດືອນທຳອິດ ; ແຕ່ຫຼັງຈາກນັ້ນເຮົາພໍບຸກບືນຮຽນໄປນຳໝູ່ໄດ້ ເພາະວ່າເຮົາໄດ້ຕັ້ງໜ້າຮຽນເລກ ແລະ ພາສາຝະລັ່ງຢ່າງເອົາໃຈໃສ່ທີ່ສຸດ . ໂຄງການສອນໃນໂຮງຮຽນແມ່ນເຮັດເປັນພາສາຝະລັ່ງເປັນສ່ວນຫຼາຍ ; ອາທິດໜຶ່ງຮຽນໜັງສືລາວແຕ່ສອງມື້ຄືວັນຈັນ ແລະ ວັນສຸກຕອນເຊົ້າ, ຮຽນມື້ລະໜຶ່ງຊົ່ວໂມງ ; ຍ້ອນແນວນັ້ນເຮົາຈຶ່ງຮຽນກ້າວໜ້າທາງດ້ານພາສາຝະລັ່ງຫຼາຍກວ່າພາສາລາວ. ວັນອາທິດ, ວັນພະຫັດ ແລະ ວັນພັກໂຮງຮຽນເຮົາຍັງໄດ້ໄປອອກແຮງງານດຳນາ, ກ່ຽວເຂົ້າ, ຕີເຂົ້າ ແລະເຮັດສວນປູກພັກຊ່ວຍນ້າບ່າວເຮົາທີ່ໄດ້ໃຫ້ເຮົາຢູ່ເຮືອນ ແລະ ລ້ຽງເຂົ້າໂດຍບໍ່ຄິດເອົາຄ່າຢູ່ກິນ-ແຕ່ປະການໃດ. ເຮົາຖືວ່າອັນນີ້ເປັນການຊ່ວຍເຫຼືອອັນໃຫຍ່ຫຼວງໃຫ້ແກ່ເຮົາທີ່ສຸດ.

ເມື່ອມາຫວນຄືນເບິ່ງຊີວິດບັ້ນໜຸ່ມນ້ອຍຂອງເຮົາແລ້ວ ເຮົາຮູ້ສຶກວ່າສະພາບແວດລ້ອມບັງຄັບໃຫ້ເຮົາໄດ້ຜ່ານຄວາມຫຍຸ້ງຍາກຫຼາຍປະການ. ຕັ້ງແຕ່ພໍ່ເຮົາຕາຍຕໍ່ມາ ໝົດທັງຄອບຄົວເຮົາແມ່ນຢູ່ໃນຄວາມທຸກຍາກລຳບາກຫາສິ່ງປຽບທຽບບໍ່ໄດ້. ຖ້າວ່າເຮົາຮູ້ຄິດ ແມ່ນເຮົາຈະເສົ້າໂສກຫງອຍເຫງົາທີ່ສຸດ, ເປັນຕົ້ນແມ່ນຄາວຈຳເປັນຕ້ອງອອກແຮງເຮັດໄຮ່ນາສວນ ແຕ່ເວລາອາຍຸຍັງອ່ອນນ້ອຍ, ຄາວຜ່ານສົງຄາມລະຫວ່າງເຜົ່າມົ້ງກັບຝະລັ່ງ ທີ່ຄອບຄົວເຮົາພົບຄວາມທຸກຍາກຂາດເຂີນ, ຫວັງເພິ່ງພາພີ່ນ້ອງກໍ່ໄດ້ແຕ່ພຽງເລັກນ້ອຍ ເພາະວ່າ ຜູ້ໃດກໍ່ຕົກໃນສະພາບຄືດຽວກັນ. ແຕ່ວ່າຈິດໃຈເຮົາຫາກມ່ວນຊື່ນເບີກບານຢູ່ສະເໝີ ເພາະວ່າ ຊາວບ້ານທັງເຖົ້າໜຸ່ມໃຫຍ່ນ້ອຍຜູ້ໃດກໍ່ຮັກແພງເຮົາ. ເວລາເຮົາບວດເປັນສາມະເນນຢູ່ຜູ້ເຖົ້າທັງຍິງ ແລະ ຊາຍໄດ້ຍ້ອງຍໍໃຫ້ຄວາມອົບອຸ່ນເຮົາ ໃນເວລາເຮົາເທດນະທີ ແລະ ກຸມມານຢູ່ໃນປາງບຸນພະເຫວດ. ບາດເຮົາສິກມາແລ້ວ ພວກເພິ່ນກໍ່ພາກັນໄປຊອກເອົາໜັງສືສິນໄຊ, ກາລະເກດ, ສູ່ລິວົງ, ຈຳປາສີ່ຕົ້ນ, ບົວຮົມບົວຮອງ, ສຽວສະຫວາດ, ທ້າວຄາວີ, ຄັນຄາກປາກປານ, ຂຸນລູນາງອົ້ວ, ທ້າວສີທົນ ມາໃຫ້ເຮົາອ່ານໃຫ້ເພິ່ນຟັງໃນຍາມຄ່ຳ ຈົນເດິກຈຶ່ງໄດ້ເຊົາ.

ເວລາຈາກບ້ານໄປຮຽນໜັງສືທີ່ຊຽງຂວາງ ເຮົາຄິດຮອດ ແລະ ເປັນຫ່ວງແມ່ຂອງເຮົາຫຼາຍທີ່ສຸດ ເພາະວ່າເພິ່ນໄດ້ຕັກເຕືອນເປັນການໃຫ້ກຳລັງໃຈຫຼາຍແນວ ເຊິ່ງມາຮອດດຽວນີ້ເຮົາກໍ່ຍັງຈື່ບໍ່ລືມ. ເພິ່ນວ່າໃຫ້ເຮົາຕັ້ງໃຈຮ່ຳຮຽນໃຫ້ໄດ້ດີ, ຢ່າເຫັນແກ່ຫຼິ້ນແກ່ກິນ, ໃຫ້ຈື່ຈຳໄວ້ໃນໃຈວ່າເຮົາເປັນຄົນໃນຄອບຄົວທຸກ, ເຮົາຕ້ອງສ້າງຕົວມາເປັນທີ່ເພິ່ງພາອາໄສໃຫ້ແກ່ແມ່ ແລະເອື້ອຍນ້ອງ, ຢ່າໄປເອົາແບບຢ່າງຂອງລູກເຈົ້ານາຍທີ່ຮັ່ງມີ, ຢູ່ນຳນ້າບ່າວ ກໍ່

ໃຫ້ເຮັດວຽກຊ່ວຍເພິ່ນຄືກັນກັບຢູ່ເຮືອນເຮົາເອງນັ້ນ, ບໍ່ໃຫ້ລືມຖານະຂອງເຮົາ ທີ່ເປັນຄົນທຸກຈົນ, ເວລາພັກໂຮງຮຽນນັ້ນ ຖາຫາກມີເງິນໄຂກໍ່ໃຫ້ນາຍປານແມ່ ແລະເອື້ອຍນ້ອງ, ຖາບໍ່ມີເງິນໄຂມາໄດ້ກໍ່ໃຫ້ເຮັດສວນ, ເຮັດນາ ແລະເຮັດວຽກເຮືອນທຸກອັນຊ່ວຍນ້າບ່າວ, ເຮັດໃຫ້ເພິ່ນ ແລະ ລູກເມຍຂອງເພິ່ນຮັກແພງ. ຄວາມເວົ້າອັນນີ້ແມ່ນເວົ້າຢູ່ໃນພາສູ່ຂວັນ ທີ່ແມ່ແລະເອື້ອຍນ້ອງເຮົາຈັດຂຶ້ນເພື່ອລ້ຽງສົ່ງເຮົາ ໃນເວລາເຮົາກຽມອອກເດີນທາງໄປຊຽງ - ຂວາງ. ເຮົາຕັ້ງໃຈປະຕິບັດຄຳສັ່ງສອນຂອງແມ່ນັ້ນທຸກເວລາ. ທຸກມື້ເຮົາໄດ້ເຮັດວຽກເຮືອນຊ່ວຍນ້າບ່າວ ແລະ ຕັ້ງໃຈຮ່ຳຮຽນໜັງສື ເຮັດໃຫ້ນ້າບ່າວ ແລະ ນາຍຄູຮັກແພງ.

ຕົ້ນປີ 1925, ນ້າບ່າວເຮົາຖືກສົ່ງໄປເຂົ້າໂຮງຮຽນກົດໝາຍ ແລະການປົກຄອງທີ່ວຽງຈັນ. ນ້າບ່າວເຮົາໄດ້ເອົາເຮົາໄປນຳພ້ອມກັບລູກອ້າຍຂອງນ້າບ່າວນັ້ນຜູ້ໜຶ່ງ ເພື່ອໄປສືບຕໍ່ຮຽນໜັງສືຢູ່ທີ່ວຽງຈັນ. ໄປຮອດວຽງຈັນແລ້ວ ພວກເຮົາສອງອ້າຍນ້ອງໄດ້ພ້ອມກັນໄປສະເໜີຕົວຕໍ່ຫົວໜ້າໂຮງຮຽນທີ່ແມ່ນຄົນຝະລັ່ງຊື່ ຕາໂຟແລງ. ເມື່ອອ່ານເບິ່ງໜັງສືສະເໜີຂອງຫົວໜ້າໂຮງຮຽນຊຽງຂວາງແລ້ວ ທ່ານຜູ້ນັ້ນກໍ່ໄດ້ມອບຕົວເຮົາໃຫ້ນາຍມູນ ເພື່ອເອົາເຮົາໄປຮຽນ ຢູ່ຫ້ອງທີ່ສາມ. ສ່ວນລູກນ້າບ່າວເຮົາຜູ້ຊື່ວ່າທ້າວອຸ່ນຄຳນັ້ນ ເພິ່ນໄດ້ມອບໃຫ້ນາຍພອນ ເພື່ອເອົາໄປຮຽນຢູ່ຫ້ອງທີ່ສີ່.

ນາຍມູນນີ້ ແມ່ນລູກຊາຍອົງແກ້ວ ທີ່ນຳພາຂະບວນລາວເທິງເຜົ່າລະເວັນລຸກຂຶ້ນຕ້ານຝະລັ່ງ. ຫຼັງຈາກຂ້າອົງແກ້ວຜູ້ເປັນພໍ່ແລ້ວ ພວກຝະລັ່ງກໍ່ເອົານາຍມູນໄປຮຽນໜັງສື ທີ່ເມືອງໄຊງ່ອນປະເທດໂກແຊງຊິນ. ເມື່ອນາຍມູນເສັງອອກໂຮງຮຽນສາງຄູໄດ້ແລ້ວ ເຂົາກໍ່ເອົາເພິ່ນມາສອນໜັງສືຢູ່ວຽງຈັນ. ນາຍມູນເຄີຍເວົ້າເລື່ອງນີ້ໃຫ້ພວກເຮົາຟັງ ແລະ ສະແດງຄວາມຄຽດແຄ້ນຝະລັ່ງຫຼາຍເທື່ອ, ແຕ່ເຮົາບໍ່ເຂົ້າໃຈວ່າ ເລື່ອງນີ້ມີຄວາມສຳຄັນແນວໃດ, ເພາະເຮົາຄິດແຕ່ວ່າຢາກຮຽນໜັງສືໃຫ້ໄດ້ເພື່ອກັບເມືອບ້ານເຮັດການລ້ຽງແມ່ ແລະນ້ອງເທົ່ານັ້ນ.

ຕະຫຼອດປີ 1925 ພວກເຮົາພັກຢູ່ນຳເຮືອນພັກຂອງນ້າບ່າວເຮົາ ແລະ ກິນເຂົ້ານຳເພິ່ນໂດຍບໍ່ໄດ້ເສຍຄ່າ. ເຮົາບໍ່ມີເງິນຈ່າຍຊື້ເຂົ້າໜົມ ຫຼື ໝາກໄມ້ກິນຈັກເທື່ອ ເພາະວ່າພວກເຮົາບໍ່ໄດ້ຮັບເບັ້ຍອຸດໜູນຄືດັ່ງບາງຄົນທີ່ເປັນລູກຜູ້ໃຫຍ່ ແລະ ມີຜູ້ຊ່ວຍເຫຼືອ. ໃນປີນັ້ນນ້າບ່າວໄດ້ຊື້ໂສ້ງເສື້ອໃຫ້ພວກເຮົາຄົນລະສອງຊຸດ ເຊິ່ງແມ່ນໂສ້ງລາວ ແລະ ເສື້ອຄໍມົນທີ່ເຮັດດ້ວຍແພ່ນຝ້າຍສີຂາວ. ແມ່ນວ່າຈະທຸກຍາກຂາດເຂີນພຽງໃດກໍ່ຕາມ, ເຮົາກໍ່ອົດທົນຕັ້ງໃຈຮ່ຳຮຽນເພື່ອໃຫ້ທັນພວກຜູ້ທີ່ຮຽນກ່ອນເຮົາໃນຫ້ອງນີ້, ເປັນຕົ້ນແມ່ນໃຫ້ທັນຜູ້ທີ່ນາຍຄູຍ້ອງວ່າຮຽນເກັ່ງ. ແຕ່ລະເດືອນເວລາສົ້ນເດືອນ ນາຍຄູສອບເສັງເທື່ອໜຶ່ງ. ຜູ້ໃດຮຽນໄດ້ຄະແນນດີ ເພິ່ນໃຫ້ຍ້າຍຂຶ້ນໄປນັ່ງແຖວໜ້າ, ຜູ້ທີ່ໄດ້ຄະແນນໜ້ອຍ ເພິ່ນໃຫ້ຍ້າຍລົງໄປນັ່ງທາງຫຼັງ. ວິທີເຮັດແນວນີ້ເຮັດໃຫ້ລູກສິດມີມານະພາກພຽນຮຽນດີແທ້. ເດືອນທຳອິດຄືເດືອນມັງກອນເຮົາເສັງໄດ້ເປັນທີ່ 30 ໃນຈຳນວນລູກສິດ 42 ຄົນ. ທ້າຍເດືອນກຸມພາເຮົາໄດ້ເປັນທີ່ 22 .

ທ້າຍເດືອນມີນາ ເຮົາໄດ້ຂຶ້ນເປັນທີ 11. ທ້າຍເດືອນເມສາເຮົາໄດ້ຂຶ້ນເປັນທີ 6. ທ້າຍເດືອນພຶດສະພາເຮົາໄດ້ຂຶ້ນເປັນທີ 2. ເວລານັ້ນມີຄຳສັ່ງຈາກລັດຖະບານມາວ່າ ພວກລູກສິດທີ່ຮຽນຫ້ອງທີ 3 ຈະຕ້ອງສອບເສັງເອົາໄຊຍະບັດມູນລະສຶກສາເປັນພາສາລາວເປັນເທື່ອທຳອິດໃນປະຫວັດການສຶກສາຢູ່ປະເທດລາວ. ນາຍຄູໄດ້ສອນພາສາລາວເພີ່ມຂຶ້ນ ອາທິດລະໜຶ່ງມື້. ເຮົາຮູ້ສຶກໜັກໃຈເພາະວ່າເຮົາໄດ້ຮຽນພາສາລາວບໍ່ເປັນລະບົບ, ແຕ່ກໍໄດ້ຕັ້ງໃຈຮຽນທັງຢູ່ໃນໂຮງຮຽນ ແລະ ຮຽນກາງຄືນຢູ່ເຮືອນ. ທ້າຍເດືອນພຶດສະພາເພິ່ນໃຫ້ສອບເສັງ - ເອົາໄຊຍະບັດນັ້ນແທ້. ເຮົາຮູ້ສຶກວ່າໄດ້ເຮັດທຸກຫົວຂໍ້ບົດສອບເສັງໄດ້ດີ, ແຕ່ເມື່ອຄະນະກຳມະການປະກາດອອກເຫັນວ່າເຮົາໄດ້ເປັນທີ 6, ເພາະວ່າຄະນະກຳມະການຜູ້ໃດ ກໍ່ຊ່ວຍເອົາລູກຫຼານຂອງເພິ່ນ ; ຜູ້ທີ່ຮຽນຢູ່ໃນຫ້ອງເປັນທີ 10 ຫຼືທີ 20 ກໍ່ໄດ້ຂຶ້ນເປັນທີ 1, ທີ 2 ຫຼືທີ 3.

ຫຼັງຈາກເສັງໄຊຍະບັດມູນລະສຶກສາແລ້ວ ຫົວໜ້າໂຮງຮຽນໄດ້ປະກາດວ່າ ພວກທີ່ເສັງໄດ້ນັ້ນຕ້ອງເສັງຕື່ມເທື່ອໜຶ່ງ ເພື່ອຂຶ້ນຫ້ອງທີ 2 ໃຫຍ່ (cours moyen 2è année) ຜູ້ເສັງຕົກຈະຕ້ອງຮຽນຢູ່ຫ້ອງທີ 2 ນ້ອຍ (cours moyen 1ère année); ບົດສອບເສັງຈະມີທັງພາສາຝະລັ່ງ ແລະ ລາວ. ເຮົາໄດ້ບຸກໜ້າບືນຕົວຈົນສຸດຄວາມສາມາດ. ຜົນຂອງການເສັງຂຶ້ນຫ້ອງທີສອງໃຫຍ່ເທື່ອນີ້ ເຮົາໄດ້ເປັນທີ 1, ເຮັດໃຫ້ນາຍຄູ ແລະ ໜ້າບ່າວເຮົາຍ້ອງຍໍຊົມເຊີຍ. ນາຍຄູໄດ້ເອົາປຶ້ມອ່ານ ແລະ ປຶ້ມຂຽນໃຫ້ເຮົາຈຳນວນໜຶ່ງ. ນ້າບ່າວເຮົາໄດ້ຊື້ພວກແກບພາສີກາກີໜ່ວຍໜຶ່ງ ແລະ ເກີບແຕະພື້ນຢາງໃຫ້ເຮົາຄູ່ໜຶ່ງ ເພາະວ່າມາຮອດເວລານັ້ນເຮົາບໍ່ເຄີຍມີພວກ ແລະ ເກີບຖືຈັກເທື່ອ. ຄວາມດີໃຈອັນລົ້ນເຫຼືອ ຂອງເຮົາໄດ້ເຊີດຊູກຳລັງໃຈໃຫ້ເຮົາຕັ້ງໜ້າຮ່ຳຮຽນແຂງແຮງຂຶ້ນກວ່າເກົ່າ, ເຮັດໃຫ້ເຮົາ ເສັງໄດ້ເປັນທີ 1 ທຸກໆເດືອນຕະຫຼອດປີ 1925. ສ່ວນນ້ອງຊາຍເຮົາ, ທ້າວອຸ່ນຄຳ, ກໍ່ໄດ້ຂຶ້ນຫ້ອງທີ 3.

ຕົ້ນປີ 1926, ນ້າບ່າວເຮົາເສັດສິ້ນການຮຽນ ແລະ ກັບຄືນໄປຊຽງຂວາງ. ກ່ອນຈະຈາກວຽງຈັນ ເພິ່ນໄດ້ເອົາພວກເຮົາສອງອ້າຍນ້ອງໄປຝາກໄວ້ນຳສະເດັດເພັດຊະລາດເຊິ່ງເປັນຜູ້ກວດລາຊະການແຜ່ນດິນເອີ້ນວ່າ ເຈົ້າລາຊະພາຄີໄນ ແລະ ທີ່ມີເຮືອນຢູ່ຄຸ້ມເພຍວັດ. ຢູ່ນຳກັນມີຫຼາຍຄົນ ເຊິ່ງມາຈາກເມືອງສິງ, ຜົ້ງສາລີ, ໄຊຍະບູລີ, ເມືອງບໍລິຄັນ ແລະ ມີອີກຜູ້ໜຶ່ງມາຈາກດິນຫວຽດນາມຊື່ ແດວັນຍຸນ, ຫຼານຂອງແດວັນຖີ ຜູ້ບັນຊາການກອງທະຫານຫໍ້ເກີດຳ ມາຍຶດພະລາຊະວັງຫຼວງພະບາງ ໃນປີ 1893 ກ່ອນນັ້ນ. ພວກເຮົາກິນເຂົ້າບໍ່ໄດ້ເສຍຄ່າ ແຕ່ເພິ່ນຫາກແບ່ງວຽກໃຫ້ເຮັດຄົນລະຢ່າງຄື ເອົາຟືນ, ຕັກນ້ຳ, ຕຳເຂົ້າ , ເຮັດສວນ, ລ້ຽງໝູເປັດໄກ່, ຊັກເຄື່ອງ, ຄົວກິນ, ແປງບ່ອນນອນ ແລະ ຜັດປືນ. ເຮົາໄດ້ຖືກແບ່ງໃຫ້ຄົວກິນ, ແປງບ່ອນນອນ ແລະ ຜັດປືນ. ວຽກເຫຼົ່ານີ້ຫຍຸ້ງຍາກຫຼາຍ ເພາະມັນ

ພາໃຫ້ບໍ່ມີເວລາຮ່ຳຮຽນໜັງສື, ແຕ່ເຮົາກໍ່ອົດທົນເຮັດເພື່ອປະຢັດເງິນໄວ້ຊື້ສິ່ງຂອງທີ່ຈຳເປັນໃຫ້ແກ່ການຮຽນ. ຫຼັງຈາກທົດລອງເບິ່ງຮອດ 6 ເດືອນແລ້ວ ເຮົາເຫັນວ່າຈະອົດທົນຕໍ່ໄປບໍ່ໄດ້ ເພາະວ່າການຮຽນໜັງສືຂອງເຮົາຊຸດໂຊມລົງ, ເສັງທ້າຍເດືອນໃດເຮົາກໍ່ຫຼຸດລົງເປັນທີ່ 5,6,7 ແລະສຸຂະພາບເຮົາກໍ່ອ່ອນເພຍ. ໃນເວລາພັກໂຮງຮຽນ ເຮົາໄດ້ອອກມາຢູ່ເຮືອນຜູ້ຊ່ວຍ ທາວ ພິມ ທີ່ຄຸ້ມວັດຊຽງຍືນ. ສ່ວນນ້ອງຊາຍເຮົາ, ທ້າວອຸ່ນຄຳ, ໄດ້ກັບຄືນເມືອບ້ານເພາະເຫັນວ່າອົດທົນຕໍ່ໄປບໍ່ໄດ້.

ເມື່ອມາຢູ່ບ່ອນໃໝ່, ເຮົາໄດ້ຈ້າງກິນເຂົ້າເດືອນລະ 3 ກີບ ເງິນນັ້ນແມ່ນນ້າບ່າວເຮົາສົ່ງມາໃຫ້ເຮົາ 3 ເດືອນໃດ 20 ກີບ. ຢູ່ບ່ອນໃໝ່ນີ້ ເຮົາກໍ່ມີເວລາພຽງພໍເພື່ອຮ່ຳຮຽນ , ເຮົາຈຶ່ງຕັ້ງໃຈຮຽນທວນຄືນທຸກສິ່ງທີ່ເຮົາອ່ອນເພື່ອໃຫ້ຮັບປະກັນການສອບເສັງທ້າຍປີຮຽນ . ເມື່ອກັບເຂົ້າຮຽນພາກທີ່ 2 ເຮົາກໍ່ໄດ້ຮັບຄະແນນດີຄືນ. ແຕ່ລະເດືອນເຮົາໄດ້ເປັນທີ່ 3,ທີ່ 2 ແລະທີ່ 1 ເລື້ອຍໄປ. ເມື່ອເສັງຂຶ້ນຫ້ອງທີ່ 1 ແລະຕະຫຼອດເວລາຮຽນຢູ່ຫ້ອງນີ້ ເຮົາກໍ່ເປັນທີ່ 1 ຢູ່ເລື້ອຍໆ. ເວລາເສັງເອົາໄຊຍະບັດປະຖົມສຶກສາໃນເດືອນມິຖຸນາ 1927 ເຮົາໄດ້ລົງມາເປັນທີ່ 4 ຍ້ອນເຮົາເຮັດເລກຜິດໂຕໜຶ່ງ ;ເລື່ອງນີ້ເຮັດໃຫ້ເຮົາເສຍໃຈຫຼາຍທີ່ສຸດ ທີ່ບໍ່ໄດ້ກວດເບິ່ງບົດສອບເສັງຄັກແນ່ ແລະ ເຮັດໃຫ້ເຮົາຖອນບົດຮຽນ ແລະ ລະມັດລະວັງຫຼາຍກວ່າເກົ່າ. ບາດເສັງເຂົ້າໂຮງຮຽນໃຫຍ່ (Lycée Pavie) ເພື່ອຮຽນຊັ້ນມັດທະຍົມ ເຮົາກັບໄດ້ເປັນທີ່ 1 ຄືນ ຈຶ່ງເຮັດໃຫ້ເຮົາດີໃຈຄືນມາ. ຕະຫຼອດໄລຍະ ເວລາຮຽນໜັງສື, ເຮົາບໍ່ມີຄວາມຄິດອື່ນໃດ ນອກຈາກຄວາມຄິດຢາກຮຽນໃຫ້ເກັ່ງ ເສັງໃຫ້ໄດ້ທຸກປີ ເພື່ອໃຫ້ໄດ້ອອກເຮັດການຢ່າງມີຖານະດີ ເພື່ອຈະກັບຄືນເມືອບ້ານຊ່ວຍແມ່ແລະເອື້ອຍລ້ຽງນ້ອງ ແລະ ຮັບໃຊ້ພວກພີ່ນ້ອງທີ່ໄດ້ຊ່ວຍລ້ຽງດູເຮົາມາແຕ່ຍາມຍັງນ້ອຍ. ການທີ່ເຮົາເສັງຂ້າມຫ້ອງທີ່ 2 ນ້ອຍຂຶ້ນຫ້ອງທີ່ 2 ໃຫຍ່ ໃນປີ 1925 ໄດ້ເຮັດໃຫ້ເຮົາດີໃຈຫຼາຍທີ່ສຸດ. ນອກຈາກການຫັດກາຍະບໍລິຫານຄືແລ່ນ, ເຕັ້ນສູງ, ເຕັ້ນຍາວ ແລະ ຫັດກິລາຄືເຕະບານແລະຕີມວຍແລ້ວ ເຮົາບໍ່ເຮັດການລະຫຼິ້ນອື່ນໆຄື ຫຼິ້ນສາວ, ຫຼິ້ນການພະນັນ ຫຼື ຊຸມແຊວກິນເຫຼົ້າເມົາຢາຄືດັ່ງຫຼາຍຄົນທີ່ເປັນລູກເຈົ້ານາຍຜູ້ຮັ່ງມີເຄີຍເຮັດກັນ. ດັ່ງນັ້ນ ເຮົາຈຶ່ງໄດ້ຮັບຄວາມຮັກແພງຈາກນາຍຄູ, ຈາກໝູ່ຄູ່ ແລະ ຈາກພີ່ນ້ອງບ້ານໃກ້ເຮືອນຄຽງເປັນຢ່າງດີ.

II. ບັ້ນເຮັດການບຳຝະລັ່ງ

ຮອດເດືອນທັນວາ 1927, ເຮົາມີອາຍຸ 18 ປີກວ່າແລ້ວ ແລະ ຢາກອອກເຮັດການເພື່ອກັບເມືອລ້ຽງແມ່ ແລະ ນ້ອງ. ເຮົາເສັງນາຍພາສາໄດ້ເປັນທີ່ 2 ໃນ 7 ຄົນ ທີ່ເສັງໄດ້ນຳກັນ ແລະ ໃນຈຳນວນ 297 ຄົນທີ່ເຂົ້າເສັງນຳກັນ. ວັນທີ່ 27 ທັນວາ 1927 ເຮົາຖືກແຕ່ງຕັ້ງໃຫ້ເປັນນາຍພາສາເຮັດການຢູ່ໂຮງການທ່ານຜູ້ໃຫຍ່ຫົວຽງຈັນ. ວຽກທີ່ເຮົາ

ເລີ່ມເຮັດແມ່ນຮຽນຕີພິມດີດ, ຮຽນແປເອກະສານພາສາຝະລັ່ງອອກເປັນພາສາລາວ, ແປເອກະສານພາສາລາວອອກເປັນພາສາຝະລັ່ງ, ຮຽນເກັບມ້ຽນເອກະສານ ແລະ ໄປຮ່ວມກັບເຈົ້າຈິດຕະລາດ, ມະຫາແກ້ວ, ປີແອວິນ, ກູອາໄພ ຄົ້ນຄວ້າພາສາລາວຊ່ວຍເຈົ້າເພັດຊະລາດ ທີ່ມີໂຮງການຢູ່ໃກ້ກັບບ່ອນເຮັດການຂອງເຮົານັ້ນ. ວຽກທີ່ເພິ່ນມອບໃຫ້ເຮົາເຮັດນີ້ແມ່ນຍາກ ເພາະວ່າເປັນວຽກໃໝ່ທີ່ເຮົາບໍ່ທັນເຄີຍເຮັດ. ນາຍຝະລັ່ງຜູ້ເປັນຫົວໜ້າຫ້ອງການທີ່ມີຊື່ວ່າ ໂລລັງໄມແຢ (Roland Meyer) ຊ້ຳພັດເຄັ່ງຄັດຫຼາຍ. ເວລາຖາມເອົາເອກະສານອັນໜຶ່ງ ລາວກໍ່ຈຳໃຫ້ບອກກ່ອນວ່າ ເອກະສານນັ້ນຢູ່ເສື້ອປົກເລກທີເທົ່າໃດ, ຢູ່ໃນກາກຕົງເລກທີເທົ່າໃດ, ຢູ່ໃນລິ້ນຊັກທີເທົ່າໃດຂອງຕູ້ເລກທີເທົ່າໃດ ; ເຮົາຕອບແລ້ວໄປໄຂເອົາມາໃຫ້ລາວຖືກຕາມແນວນັ້ນ ລາວຈຶ່ງວ່າດີ, ຖ້າບໍ່ຖືກລາວກໍ່ຮ້າຍໃສ່ໂລດ. ການແປເອກະສານກໍ່ຍາກທີ່ສຸດເພາະວ່າຕົວໄມແຢເອງກໍ່ຮູ້ພາສາລາວ ເຖິງຂັ້ນຂຽນປຶ້ມເລື່ອງກ່ຽວກັບປະເທດລາວ ແລະ ປຶ້ມສັບພະນຸກົມຝະລັ່ງ-ລາວ ໄດ້ ; ຖ້າຫາກແປຜິດຄວາມໜຶ່ງກໍ່ຖືກລາວຮ້າຍໃຫ້ຢ່າງນ້ອຍກໍ່ ໔໐ ນາທີ. ເຮົາຕີຈັກລາວກໍ່ມາກວດເບິ່ງເລື້ອຍໆ, ເຫັນເຮົາຕີຜິດ ຫຼື ໃຊ້ເຈ້ຍຂາວ ແລະ ເຈ້ຍກາກບອນຫຼາຍລາວກໍ່ຮ້າຍ. ເຮົາທຸກໃຈຫຼາຍກໍ່ມີແຕ່ແລ່ນໄປຫາເຈົ້າເພັດຊະລາດ ເພື່ອຂໍໃຫ້ເພິ່ນຊ່ວຍໃຫ້ເຮົາໄດ້ກັບຄືນເມືອເຮັດການ ຢູ່ຊຽງຂວາງອັນເປັນບ້ານເກີດຂອງເຮົາ.

ເຮົາຖ້າມາຮອດປີໜຶ່ງກໍ່ບໍ່ໄດ້ກັບເມືອ ; ເຈົ້າເພັດຊະລາດບອກວ່າ ຢູ່ຊຽງຂວາງຍັງບໍ່ມີບ່ອນວ່າງ. ປີໜຶ່ງທີ່ຜ່ານມາຈຶ່ງແມ່ນຄືວ່າເຫິງທໍ່ສິບປີ ເພາະວ່າເຮົາທັງຖ້າທັງອອກຈາກບ່ອນເຮັດວຽກນີ້, ທັງຕັ້ງສະຕິລະວັງຕົວຢູ່ບໍ່ຂາດ, ຜິດພາດໜ້ອຍໜຶ່ງກໍ່ຖືກດ່າເປັນເວລາເຫິງນານ. ເງິນເດືອນໃນປີນັ້ນ ເຮົາໄດ້ຮັບເດືອນລະ 48 ກີບ ເພາະເຮົາຍັງເປັນນາຍພາສາຝຶກຫັດ. ເຮົາພະຍາຍາມທ້ອນທ້ອມເອົາໄວ້, ບໍ່ຫຼິ້ນບໍ່ກິນ ແລະ ນຸ່ງແບບປະຢັດທີ່ສຸດ ເພື່ອວ່າເມື່ອໃດຫາກໄດ້ກັບເມືອບ້ານຈະໄດ້ມີເງິນໄປຊ່ວຍແມ່ໃຫ້ລ້ຽງນ້ອງທີ່ຍັງນ້ອຍ.

ຕົ້ນເດືອນພຶດສະພາ 1929 ເຈົ້າເພັດຊະລາດໄດ້ເອີ້ນເອົາເຮົາໄປບອກວ່າກາງເດືອນນັ້ນຈະມີບ່ອນວ່າງຢູ່ຊຽງຂວາງ, ຖ້າເຮົາຢາກເມືອເຮັດການຢູ່ພຸ້ນ ເພິ່ນຈະຊ່ວຍໃຫ້ເຮົາໄດ້ຍ້າຍເມືອ. ຂ່າວອັນນັ້ນ ຈຶ່ງແມ່ນເຮັດໃຫ້ເຮົາດີໃຈ ຈິນວ່າໄດ້ບໍ່ມີບເຈົ້າເພັດຊະລາດ ຂໍໃຫ້ເພິ່ນຊ່ວຍໃຫ້ເຮົາໄດ້ກັບເມືອໄວ. ນໍ່ຕໍ່ມາ ເຈົ້າເພັດຊະລາດໄດ້ມາຫານາຍເຮົາ, ທ່ານໂລລັງໄມແຢ, ເພື່ອຖາມຄຳເຫັນໃນການທີ່ຈະຍ້າຍເຮົາໄປຢູ່ຊຽງຂວາງ. ທ້າວນັ້ນໄດ້ຂັດຂວາງຢ່າງໃຫຍ່ໂດຍອ້າງເຫດຜົນວ່າ ລາວໄດ້ເຝິກແອບເຮົາເຮັດວຽກໃນຫ້ອງການ ທີ່ສອງຂອງລາວຄ່ອງເຄີຍດີແລ້ວ, ເອົາຜູ້ອື່ນມາເຝິກແອບແທນຈະຫຍຸ້ງຍາກ ແລະ ເຫິງນານ. ຫຼັງຈາກຖຽງກັນເຫິງເຕີບແລ້ວ ທ້າວໄມແຢ ໄດ້ເອີ້ນເອົາເຮົາເຂົ້າໄປຍອງຍໍຕໍ່ໜ້າເຈົ້າເພັດຊະລາດ ວ່າເຮົາເຮັດວຽກການໜ້າໄວ, ລະອຽດຖີ່ຖ້ວນດີ, ວ່າລາວພໍໃຈກັບເຮົາຫຼາຍ ແລະ

ພວມກຽມຈະເລື່ອນຂັ້ນໃຫ້ເຮົາໃນໄວໆນີ້. ວ່າຈະເອົາຄ່າບຳເນັດໃຫ້ເຮົາ ໃນການທີ່ເຮົາແປເອກະສານໄດ້ຫຼາຍ ແລະ ດີ, ທ້າຍສຸດກໍ່ເວົ້າວ່າໃຫ້ເຮົາເຮັດວຽກນຳລາວຕໍ່ໄປຕື່ມ. ເຈົ້າເພັດຊະລາດເວົ້າຕອບວ່າ ແຂວງຊຽງຂວາງກໍ່ຕ້ອງການນາຍພາສາຜູ້ທີ່ດີ ເພາະວ່າຢູ່ທີ່ນັ້ນຈະມີນາຍພາສາລາວແຕ່ຜູ້ດຽວ, ນອກຈາກເຮົາເພິ່ນບໍ່ເຫັນໃຜຈະໄປຮັບໃຊ້ຢູ່ຊຽງຂວາງໄດ້ ; ວ່າແລ້ວ ເພິ່ນກໍ່ບອກທ້າວ ໄມແຢ ຖາມເຮົາເບິ່ງ, ຖ້າເຮົາຍິນດີຢູ່ວຽງຈັນແລ້ວເພິ່ນຈະຊອກຜູ້ອື່ນໄປຊຽງຂວາງ ຖ້າວ່າເຮົາຢາກໄປຊຽງຂວາງກໍ່ຄວນໃຫ້ເຮົາໄປ. ທ້າວໄມແຢ ໄດ້ງວາກມາເວົ້ານຳເຮົາດ້ວຍຄວາມເວົ້າອັນຊື່ໃຫ້ເຫັນອະນາຄົດອັນສົດໃສສະຫວ່າງແຈ້ງ ຖ້າເຮົາຫາກສືບຕໍ່ເຮັດວຽກຢູ່ນຳລາວ, ແຕ່ຖ້າເຮົາໄປຊຽງຂວາງແລ້ວອະນາຄົດຂອງເຮົາຈະບໍ່ແນ່ນອນ ເພາະວ່ານາຍຜູ້ໃໝ່ຈະບໍ່ຮູ້ຄຸນງາມຄວາມດີຂອງເຮົາ. ເຮົາໄດ້ຕອບທັນທີໂລດວ່າ ເຮົາຂໍໄປຊຽງຂວາງເພື່ອລ້ຽງແມ່ ແລະ ນ້ອງທີ່ພວມຄອຍຖ້າເຮົາ ເພາະວ່າເຮົາມາຮຽນໜັງສື ແລະ ເຮັດການຢູ່ວຽງຈັນເປັນເວລາ 4 ປີແລ້ວບໍ່ໄດ້ກັບເມືອຢາມຄອບຄົວຈັກເທື່ອ, ຖ້າວ່າທ່ານໄມແຢຫາກເປັນຫ່ວງນຳອະນາຄົດຂອງເຮົານັ້ນ ເຮົາຂໍໃຫ້ທ່ານ ຈົ່ງແນະນຳຄຸນຄວາມດີຂອງເຮົາໄປໃຫ້ ທ່ານກອມມີແຊຊຽງຂວາງ ເພື່ອໃຫ້ເພິ່ນຮັກແພງເຮົາ, ເຮົາຂໍຂອບໃຈຕໍ່ທ່ານໄມແຢທີ່ໄດ້ຮັກແພງ ແລະ ເຝິກແອບໃຫ້ເຮົາຮູ້ເຮັດວຽກການໃນປີໜຶ່ງທີ່ຜ່ານມາ ແລະ ເຊື່ອວ່າຜູ້ມາແທນເຮົາຄົງຈະຕັ້ງໃຈຮ່ຳຮຽນເຮັດວຽກດີຄືເຮົາ. ເຮົາເວົ້າຮອດພໍ້ເຈົ້າເພັດຊະລາດເລີຍສະຫຼຸບວ່າຄວນໃຫ້ເຮົາຍົກຍ້າຍໄປຊຽງຂວາງ ແລະ ໃຫ້ເຮົາ ກຽມອອກເດີນທາງໃນ 3 ວັນທາງໜ້ານີ້. ທ້າວໄມແຢ ໄດ້ຍົກບ່າໄຫຼ່ຂຶ້ນ, ອ້າແຂນອອກ ແລ້ວເວົ້າວ່າສຸດແລ້ວແຕ່ສະເດັດຈະຕົກລົງ. ເປັນອັນວ່າເຮົາຈະໄດ້ກັບຄືນເມືອບ້ານເດີມ ຕາມຄວາມມຸ່ງມາດປາຖະໜາຂອງເຮົາ, ເຊິ່ງເຮັດໃຫ້ເຮົາດີໃຈຫຼາຍ ຈຶ່ງໄດ້ນຳໄປສະແດງຄວາມຂອບໃຈຂອງເຮົາຕໍ່ເຈົ້າເພັດຊະລາດທີ່ເຮືອນຂອງເພິ່ນ ແລະ ສັ່ງລາເພິ່ນດ້ວຍຄວາມເຄົາລົບ ແລະ ຮູ້ບຸນຄຸນເປັນຢ່າງສູງ.

ວັນທີ 20/5/29 ເຮົາໄດ້ຂຶ້ນຂອງລົງກຳປັ່ນແຕ່ເຊົ້າ ; ກຳປັ່ນຕະລັງຕີຍັງ ທີ່ໃຊ້ຟືນເປັນເຊື້ອໄຟ ໄດ້ພາເຮົາລ່ອງລົງຕາມລຳນ້ຳຂອງອັນກວ້າງຍາວສຸດຊື່ວຕາ ໄປຮອດເມືອງປາກຊັນໃນຕອນຄ່ຳຂອງມື້ນັ້ນເອງ. ພວກເຮົາໄດ້ພັກຢູ່ທີ່ນັ້ນມື້ໜຶ່ງເພື່ອກຽມມ້າຂີ່ ແລະຄົນຂົນຂອງທີ່ເອີ້ນກັນວ່າ "ກຸລີ". ວັນທີ 22/5/29 ພວກເຮົາໄດ້ຈາກປາກຊັນໄປທາງບົກ ຜ່ານເມືອງບໍລິຄັນ, ເມືອງເທືອງ, ຫ້ວຍປ່າຍຸງ, ວັງອົ້ນ, ທ່າໂທມ, ນ້ຳແຈ ແລະເມືອງຕັນ.

ຮ່ວມໄປໃນກຳປັ່ນນັ້ນມີນາຍພາສາຄົນຫວຽດນາມຜູ້ໜຶ່ງ ຊື່ ຫງວຽນວັນເອີນ ທີ່ຫາກໍ່ເສັງນາຍພາສາໄດ້ໃນຕົ້ນປີ 1929 ນີ້. ລາວກໍ່ຈະໄປເຮັດການຢູ່ຊຽງຂວາງ ແລະລາວກໍ່ມີພໍ່ແມ່ຢູ່ຊຽງຂວາງຄືກັນ, ດັ່ງນັ້ນ ພວກເຮົາຈຶ່ງມີຄວາມຊື່ນຊົມຍິນດີທີ່ດຽວກັນ ທີ່ໄດ້ກັບຄືນເມືອບ້ານເດີມຂອງຕົນ ແລະ ຕ່າງກໍ່ໄດ້ເລົ່າເລື່ອງໃນອະດີດການໃຫ້ຟັງດ້ວຍຄວາມຊື່ນບານ.

ໃນການເດີນທາງ ພວກເຮົາໄດ້ຂຶ້ນພູລົງຫ້ວຍຫຼາຍເທື່ອ ພາໃຫ້ອິດເມື່ອຍຫຼາຍສົມຄວນ, ໄດ້ແຂງແດດຮ້ອນ ແລະ ຖືກຝົນຮໍາຫຼາຍມື້ຕິດໆກັນ ; ຮົ້ນຍຸງເຫຼືອກແລະທາກອົບທຸກໆວັນ ; ແຕ່ອັນນັ້ນບໍ່ພາໃຫ້ລົດຜ່ອນຄວາມຊື່ນຊົມໃນໃຈຂອງພວກເຮົາລົງໄດ້. ຈິດໃຈຂອງພວກເຮົາຈົດຈໍ່ຢູ່ບ່ອນວ່າຮອດຊຽງຂວາງແລ້ວ ພວກເຮົາຈະເຫັນແມ່ ແລະພີ່ນ້ອງມາຕ້ອນຮັບພວກເຮົາດ້ວຍຄວາມດີອົກດີໃຈ ແລະ ມ່ວນຊື່ນເບີກບານ.

ວັນທີ່ 30/5/29 ຕອນບ່າຍ, ພ້ອມເພິ່ນຮ້ອມພູລົງໄປຮອດບໍລິເວນທ່າພັງພາຍ ບ່ອນທີ່ພວກເຮົາເຄີຍໄດ້ພ້ອມກັບໝູ່ເພື່ອນຊາວບ້ານມາສົ່ງພະ ໃນໂອກາດບຸນປີໃໝ່ເມື່ອກ່ອນນັ້ນ. ນະທີ່ນັ້ນ ຫົວໃຈເຮົາເຕັ້ນໄວຜິດປົກກະຕິ ໃນເວລາທີ່ຕາເຮົາຫຼຽວເຫັນທົ່ງຊຽງຂວາງອັນກວ້າງຍາວ ບ່ອນເຮົາເຄີຍດໍາລົງຊີວິດແຕ່ຍາມຍັງນ້ອຍ. ເຮົາຮູ້ສຶກດີໃຈຫຼາຍທີ່ສຸດ ໃນເມື່ອຄຶກໃຈວ່າ ພາຍໃນສອງຊົ່ວໂມງທາງໜ້ານີ້ ເຮົາຈະໄປຮອດເມືອງຊຽງຂວາງ, ຈະໄດ້ເຫັນແມ່ ແລະພີ່ນ້ອງທີ່ຄິດເຖິງເຮົາ ແລະ ທີ່ເຮົາກໍ່ຄິດເຖິງເທົ່າດຽວກັນ. ຕັ້ງແຕ່ຂາມຂົວນ້ຳລິນສູງໄປແລ້ວ ຄວາມດີໃຈ ແລະ ມ່ວນຊື່ນຂອງເຮົາໄດ້ເພີ່ມທະວີຂຶ້ນຢ່າງບໍ່ພົນລະນາໄດ້ ໃນເມື່ອເຮົາເຫັນໝູ່ຄູ່ເກົ່າ ແລະ ພີ່ນ້ອງຜູ້ຢູ່ຄຸ້ມເພຍວັດແລ່ນມາຕ້ອນຮັບ ແລະ ຖາມຂ່າວຄວາມສະບາຍ. ເຮົາຕ້ອງລົງຈາກຫຼັງມ້າມາຍ່າງເປັນໝູ່ດຽວກັບພວກເພິ່ນ ທີ່ຕິດຕາມໄປສົ່ງເຮົາ . ຜ່ານຄຸ້ມຕະຫຼາດຈົນຮອດຄຸ້ມສີພົມ ອັນເປັນຄຸ້ມທີ່ເຮົາຈະພັກຢູ່ ມີແຕ່ສຽງຄົນຮ້ອງໃສ່ ແລ່ນມາຈັບມືຖາມຂ່າວສຸຂະພາບ ແລະ ສະແດງຄວາມດີໃຈ ເພາະວ່າໃນ 4 ປີ ທີ່ເຮົາພາກຈາກໄປຈົນມາຮອດເວລາເຮົາຕ່າວກັບມາ ພີ່ນ້ອງທຸກຄົນຍັງຈື່ຈໍາໄດ້ ແລະ ມີຄວາມຮັກແພງເຮົາຢ່າງດູດດື່ມຢູ່ຄືເກົ່າ.

ວັນທີ່ 31/5/29 ເຮົາໄດ້ໄປສະເໜີຕົວຕໍ່ທ່ານກອມມີແຊ ໂດຍເອົາຂໍ້ດໍາລັດ ຍົກຍ້າຍຂອງເຮົາມອບໃຫ້ເພິ່ນ, ທັງເວົ້າໃຫ້ເພິ່ນຟັງວ່າ ເຮົາດີໃຈມາເຮັດການຢູ່ຊຽງຂວາງເພາະແມ່ນບ້ານເດີມຂອງເຮົາ, ເຮົາຈະພະຍາຍາມເຮັດວຽກຈົນສຸດຄວາມສາມາດ, ຖ້າຫາກຍັງມີອັນທີ່ເຮົາຮູ້ບໍ່ຮອດ ຫຼື ຂາດຕົກບົກພ່ອງກໍ່ຂໍໃຫ້ເພິ່ນສັ່ງສອນກ່າວເຕືອນເຮົາ ເພື່ອຊ່ວຍໃຫ້ເຮົາຮັບໃຊ້ເພິ່ນໄດ້ດີ. ທ່ານກອມມີແຊຜູ້ນັ້ນຊື່ວ່າ ໂດຊາ (Daugeard) ; ເພິ່ນວ່າດີໃຈທີ່ເຮົາມາເຮັດການນໍາເພິ່ນ, ວ່າຫວັງຈະໄດ້ຮັບການຊ່ວຍເຫຼືອອັນດີຈາກເຮົາ ; ເວົ້າແລ້ວເພິ່ນກໍ່ມອບໜ້າວຽກໃຫ້ເຮົາໂລດ. ວຽກນັ້ນມີ : ເປັນຜູ້ແປພາສາໃຫ້ທ່ານກອມມີແຊເອງ, ແປຈົດໝາຍຈາກພາສາຝະລັ່ງເປັນພາສາລາວ ເພື່ອສົ່ງໃຫ້ເຈົ້າເມືອງທັງ 4 ເມືອງ ແລະ ແປຈົດໝາຍຂອງເຈົ້າເມືອງທີ່ເປັນພາສາລາວ ມາເປັນພາສາຝະລັ່ງ ເພື່ອໃຫ້ທ່ານກອມມີແຊອ່ານ, ການຂຽນເປັນພາສາຝະລັ່ງແມ່ນຕີຈັກ, ສ່ວນການຂຽນເປັນພາສາລາວແມ່ນ ຂຽນດ້ວຍມື. ນອກຈາກນັ້ນ ເຮົາຍັງຕ້ອງໄປສາລະວັນນໍາທ່ານກອມມີແຊເພື່ອແປພາສາ, ກັບມາໂຮງການເຮົາຕ້ອງແປສໍານວນຄະດີ ແລະ ແປການສືບສວນກັບປາກຢູ່ສານແຂວງ ທີ່ແມ່ນ

ກອມມິແຊທີ່ສອງເປັນຫົວໜ້າສານ, ທ່ານລັງເວີນເປັນຕຸລາການສານ, ທ່ານຫົວໜ້າ ທະຫານຂອງເປັນຈ່າສານ ແລະ ທ່ານເຈົ້າເມືອງຄູນເປັນຄະນະກຳມະການສານ. ຈົດໝາຍຂາເຂົ້າຂາອອກ ທີ່ສົ່ງຫາເຈົ້າເມືອງ ຫຼືມາຈາກເຈົ້າເມືອງ ແລະ ເອກະສານຂອງສານທຸກສະບັບແມ່ນເຮົາເປັນຜູ້ຂຽນ. ສ່ວນເອກະສານທີ່ແລກປ່ຽນກັບທ່ານຜູ້ໃຫຍ່ ຫຼື ຫົວໜ້າພະແນກການຕ່າງໆຂອງແຂວງ ທີ່ແມ່ນຄົນຝະລັ່ງ, ຄົນຫວຽດນາມ ແລະ ລາວເປັນຫົວໜ້າ ແມ່ນນາຍພາສາຫວຽດນາມຜູ້ໜຶ່ງເປັນຜູ້ດີດຈັກ, ຈັດສົ່ງ ແລະ ເກັບມ້ຽນ. ແຕ່ບາງຄັ້ງບາງຄາວເຮົາກໍ່ຍັງໄດ້ຊ່ວຍເຮັດ, ເປັນຕົ້ນແມ່ນວັນທິດ ຫຼື ວັນບຸນທີ່ເຮົາຖືກພ້ອມໄປຢູ່ຍາມພິດມໍ.

ການເຮັດວຽກຢູ່ນຳທ່ານກອມມິແຊນີ້ຍາກຫຼາຍ ເພາະວ່າໂຕທ່ານໂດຊາເອງ ກໍ່ຮູ້ຄວາມລາວ, ຖ້າເຮົາແປຜິດ ຫຼື ລືມຄວາມໃດລາວກໍ່ໂຈດຖາມຄືນ ແລະ ຮ້າຍໃສ່ເຮົາ ຕໍ່ໜ້າເຈົ້າເມືອງ ຫຼື ທຸກຄົນທີ່ລົມນຳລາວ. ເຮົາກໍ່ມີແຕ່ຂໍໂທດດ້ວຍຄວາມອ່ອນຫວານ ແລະ ຂໍໃຫ້ລາວຕັກເຕືອນເຮົາ ແລະ ຖ້າວ່າມີບ່ອນໃດບໍ່ແຈ້ງ ແລະ ບໍ່ຖືກພາສາຝະລັ່ງ ໃນການແປຈົດໝາຍຂອງເຈົ້າເມືອງ ທີ່ຂຽນດ້ວຍມື ຫຼື ຕີຈັກນັ້ນກໍ່ຂໍໃຫ້ລາວຊ່ວຍກວດ ແລະ ຊີ້ແຈງອະທິບາຍວິທີຂຽນໜັງສືຝະລັ່ງໃຫ້ເຮົາ ເພື່ອໃຫ້ເຮົາກ້າວໜ້າທາງພາສາຝະລັ່ງ ແລະ ເຮັດວຽກຮັບໃຊ້ທ່ານກອມມິແຊ ດີກວ່າເກົ່າອີກຈັກໜ້ອຍ. ເຮົາເວົ້າຄວາມນີ້ປະກົດວ່າເຮັດໃຫ້ການຮ້າຍ ຂອງທ່ານກອມມິແຊຄ່ອຍອ່ອນລົງ, ບາງຄັ້ງບາງຄາວລາວກໍ່ເອົາປາກກາແດງ ກວດບົດແປຂອງເຮົາທີ່ບໍ່ຖືກສຳນວນຂອງຝະລັ່ງ ແລະ ບາງຄັ້ງບາງຄາວ ລາວກໍ່ເອີ້ນເອົາເຮົາໄປຊີ້ແຈງບ່ອນຜິດ ແລະ ວິທີແກ້ໃຫ້ເຮົາ. ເຮົາເຫັນວ່າເຮັດແນວນັ້ນເປັນການດີໃຫ້ແກ່ເຮົາ ເພາະວ່າມັນເຮັດໃຫ້ທ່ານກອມມິແຊຮ້າຍເຮົາໜ້ອຍເທື່ອ ທັງເວົ້າເບົາລົງ ແລະເຮັດໃຫ້ເຮົາມີຄວາມກ້າວໜ້າໃນການຂຽນ ແລະປາກພາສາຝະລັ່ງ. ໃນເວລານັ້ນແນວຄິດຂອງເຮົາມີແຕ່ຢາກໃຫ້ທ່ານກອມມິແຊບໍ່ຮ້າຍ, ຢາກໃຫ້ໄດ້ເລື່ອນຂັ້ນທຸກປີ, ຢາກໄດ້ກາຄຳຊອບຫຼາຍໜ້ອຍແລະຢາກທ້ອນເງິນ ຫຼື ຫາເງິນໃຫ້ໄດ້ຫຼາຍເພື່ອມາສ້າງບ້ານແປງເຮືອນ ເພື່ອວ່າຮອດມື້ອອກກິນເບັ້ຍບຳນານ ໃຫ້ມີເງິນໃຊ້ຈ່າຍພຽງພໍເທົ່ານັ້ນ.

ຕັ້ງແຕ່ປີ 1929 ໄປຮອດປີ 1935 ເຮົາໄດ້ຮັບໃຊ້ທ່ານກອມມິແຊ ແລະ ເລຊີດັງ 8 ຄົນ ຄື : ໂດຊາ (Daugeard), ໂລເກີ (Roques), ລູປີ (Loupy), ຟອກຕຸຍເນ (Fortuné), ເດີແມດ (De maistre), ປາລີດ (Paris), ແອມມານູຍແອນລີ (Emmanuelli) ແລະ ດາວິດ ໂບລີເອີ(David Beaulieu). ບັນດາທ່ານກອມມິແຊ ແລະ ເລຊີດັງແຕ່ລະຄົນມີນິໄສຕ່າງກັນ, ແຕ່ວ່າທຸກຄົນກໍ່ໄດ້ ສືບຕໍ່ກວດບົດແປຂອງເຮົາ ແລະ ຊ່ວຍສອນພາສາຝະລັ່ງໃຫ້ເຮົາ, ເຮັດແນວນັ້ນ ດ້ານໜຶ່ງກໍ່ແມ່ນເພື່ອສະດວກໃຫ້ແກ່ເຂົາ ແລະ ພ້ອມກັນນັ້ນ ເຮົາກໍ່ໄດ້ມີຄວາມກ້າວໜ້າທາງດ້ານພາສາຝະລັ່ງຂຶ້ນຕື່ມອີກ.

ໃນໄລຍະດຽວກັນນັ້ນເຮົາໄດ້ເລື່ອນຊັ້ນຂຶ້ນປີລະເທື່ອ, ຄືປີ 1929 ເຮົາຖືກເລື່ອນຈາກນາຍພາສາຝຶກຫັດມາເປັນນາຍພາສາຊັ້ນທີ 6 ແລະແຕ່ລະປີເຮົາຖືກເລື່ອນຂຶ້ນຊັ້ນໜຶ່ງໄດ້ຮັບເງິນເດືອນເພີ່ມຂຶ້ນເດືອນລະ 5 ກີບ. ມາຮອດປີ 1935 ເຮົາໄດ້ເປັນນາຍພາສາຊັ້ນທີ 2 ໄດ້ຮັບເງິນເດືອນໆລະ 63 ກີບ. ໃນປີນັ້ນເອງເຮົາໄດ້ຍ້າຍໄປເປັນຂ້າລາຊະການ ຝ່າຍປົກຄອງ, ໄດ້ຖືກແຕ່ງຕັ້ງເປັນອຸປະຮາດຊັ້ນທີ 1 ທີ່ໄດ້ຮັບເງິນເດືອນເທົ່າດຽວກັນ ແລະ ພ້ອມກັນນັ້ນກໍ່ໄດ້ຖືກແຕ່ງຕັ້ງໄປເປັນຫົວໜ້າສານຊັ້ນຕົ້ນທີ່ເມືອງງຶມ (ຊຽງຂວາງ).

ຕະຫຼອດຊົ່ວໄລຍະນີ້ ເຮົາມີຄວາມມ່ວນຊື່ນເບີກບານ ເພາະວ່າໄດ້ຢູ່ໃກ້ແມ່ ແລະເອື້ອຍນ້ອງທີ່ໄດ້ຍ້າຍຈາກບ້ານຄາຍເມືອງແປກມາຢູ່ບ້ານເພາະ ແລ້ວຊ້ຳພັດຍ້າຍອອກມາຢູ່ນາຫີນຕັ້ງ ທີ່ຂຶ້ນກັບບ້ານນາຊູ່ ໄກຈາກຕົວເມືອງຊຽງຂວາງພຽງແຕ່ 4 ກິໂລແມັດ ; ນາບ່າວ ແລະພີ່ນ້ອງຂອງເຮົາຫຼາຍຄົນກໍ່ຢູ່ໃກ້ກັນ, ມື້ວັນທິດ ຫຼື ມື້ພັກການ ເຮົາໄປຢ້ຽມຢາມພວກເພິ່ນກໍ່ສະດວກ. ພວກເພິ່ນທຸກຄົນກໍ່ຮັກແພງເຮົາ ແລະດີໃຈທີ່ເຫັນເຮົາກັບຄືນເມືອເຮັດການຢູ່ໃກ້ຄຽງກັນ ເພື່ອແລກປ່ຽນຄຳຄິດຄຳເຫັນນຳກັນໃນເມື່ອຕ້ອງການ. ການທີ່ເຮົາຮ່ວມກັບໝູ່ຄູ່ສືບຫຼິ້ນກິລາ ເຕະບານ,, ຕີເຕັນນິດ, ແຂ່ງລົດຖີບ, ແຂ່ງມ້າ, ຕີມວຍລາຍ ແລະລຳຕໍ່ສູ້ກັບສາວພໍ່ຕອບໃນບາງບຸນຕ່າງໆຫຼາຍເທື່ອ ໄດ້ເຮັດໃຫ້ຄົນທັງຫຼາຍຮູ້ຈັກເຮົາຫຼາຍຂຶ້ນຊຶກໄຊ້. ການທີ່ເຮົາໄປສາລະວະນຳທ່ານກອມມີແຊ ປີລະເທື່ອໃນທ້ອງຖິ່ນຕ່າງໆຍິ່ງເຮັດໃຫ້ເຮົາ ລຶ້ງເຄີຍກັບປະຊາຊົນທຸກຊົນເຜົ່າ ທົ່ວແຂວງຊຽງຂວາງ.

ເດືອນ 10 ປີ 1938 ເຮົາໄດ້ໄປແຕ່ງດອງສ້າງຄອບຄົວກັບ ນາງຄຳສຸກ ແສງສະຖິດ, ລູກສາວພະຍາເມືອງຂວາ (ທ້າວຫຼັກ ແສງສະຖິດ) ຊັ້ນຕຳແໜ່ງເປັນເຈົ້າແຂວງ ວ່າໜ້າທີ່ການເປັນຫົວໜ້າສານແຂວງຫຼວງພະບາງ . ການໄປແຕ່ງດອງຂອງເຮົາເທື່ອນັ້ນ ມີເຫດການອັນບໍ່ດີເກີດຂຶ້ນ. ລົດຍົນທີ່ເຮົາຂັບໄປໄດ້ຜ່ານບ່ອນທາງເຈື່ອນຍ້ອນຫາກໍ່ອອກລະດູຝົນໃໝ່, ໄດ້ຕົກລົງຈາກຫີນທາງລົງໄປຊາວກວ່າແມັດ ຫ່າງຈາກຫຼວງພະບາງ 80 ກວ່າກິໂລແມັດ , ເຮັດໃຫ້ນາບ່າວເຮົາສອງຄົນທີ່ໄປນຳລົດນັ້ນເສຍຊີວິດກັບທີ່ນັ້ນໂລດ. ຄວາມເສົ້າໂສກ ເສຍໃຈຂອງເຮົາໃນເວລານັ້ນ ແມ່ນຫາທີ່ປຽບບໍ່ໄດ້ເພາະວ່າຕາມຮີດຄອງຂອງແຂວງຊຽງຂວາງເຮົາ ຖ້າມີເຫດເກີດຂຶ້ນແນວນີ້ ແມ່ນຕ້ອງຢຸດເຊົາການແຕ່ງດອງໄປຮອດປີໃໝ່. ສິ່ງທີ່ພາໃຫ້ບັນເທົາຄວາມໂສກເສົ້າຂອງເຮົາ ແມ່ນພໍ່ແມ່ພີ່ນ້ອງຂອງສາວໃພ້ໄດ້ເຮັດທຸກສິ່ງທຸກຢ່າງເພື່ອຊ່ວຍໃຫ້ເຮົາແກ້ໄຂວຽກງານທີ່ຈຳເປັນສະເພາະໜ້າ ຄືຈັດການສົ່ງສະການຫາພີ່ນ້ອງ ທີ່ຕາຍໄປນັ້ນ ແລ້ວຈຶ່ງສະເໜີຕໍ່ພີ່ນ້ອງທີ່ໄປນຳເຮົານັ້ນວ່າ ຄວນແຕ່ງດອງໃຫ້ພວກເຮົາໄດ້ສ້າງຄອບຄົວນຳກັນ ເພື່ອໃຫ້ຄວາມທຸກໂສກຂອງພວກເຮົາເບົາບາງລົງ. ເມື່ອພີ່ນ້ອງ ຂອງທັງສອງຝ່າຍເຫັນດີນຳກັນແລ້ວ ກໍ່ໄດ້ພ້ອມກັນຈັດການແຕ່ງດອງ ໃນວັນທີ 11/11/38. ຫຼັງຈາກແຕ່ງດອງອາທິດໜຶ່ງແລ້ວ ເຮົາກໍ່ໄດ້ພາເມຍຂຶ້ນລົດຍົນຄັນເກົ່າທີ່ສ້ອມແປງແລ້ວນັ້ນ ກັບຄືນ

ເມືອສືບຕໍ່ເຮັດວຽກຫົວໜ້າສານເມືອງຄູນ (ແຂວງຊຽງຂວາງ) ຕໍ່ໄປຄືເກົ່າ ແລະ ໄດ້ຈັດການກິນທານຫາພວກນ້າບ່າວເຮົາທີ່ຕາຍໄປນັ້ນ ຕາມຮີດຄອງປະເພນີ ເພື່ອໃຫ້ເບົາບາງຄວາມໂສກເສົ້າເສຍໃຈຂອງຄອບຄົວຂອງພວກເພິ່ນ. ເຫດການອັນນີ້ເປັນການເຈັບແສບສະໝອງອັນໜຶ່ງ ທີ່ຝັງເລິກລົງໃນດວງໃຈຂອງເຮົາຢ່າງບໍ່ມີວັນລືມ ; ມັນສ້າງທັງຄວາມໂສກເສົ້າໃຫ້ແກ່ເຮົາ ທີ່ສູນເສຍນ້າບ່າວສອງຄົນໄປ ແຕ່ພ້ອມກັນນັ້ນມັນກໍ່ໄດ້ສ້າງຄວາມດີໃຈທີ່ໄດ້ສ້າງຄອບຄົວ ແລະ ມີພໍ່ແມ່ພີ່ນ້ອງໃໝ່ທີ່ຮັກແພງ ແລະ ຊ່ວຍເຫຼືອເຮົາໃນທຸກດ້ານ ເຮັດໃຫ້ຊີວິດຂອງເຮົາຄ່ອຍໆມຸ່ງມາຍມາເຂົ້າສູ່ຄວາມເປັນປົກກະຕິ.

ທ່ານ ພູມີ ວົງວິຈິດ ແລະ ພັນລະຍາ ຖ່າຍເມື່ອປີ 1979

ຕົ້ນປີ 1939 ທາງການໄດ້ປະກາດໄປທົ່ວປະເທດວ່າ ຈະມີການເສັງເອົາເຈົ້າເມືອງຊັ້ນທີ 5 ແລະ ວ່າຄົນຜູ້ມີຊັ້ນອຸປະຮາດ ຫຼື ນາຍພາສາຊັ້ນທີ 2 ຂຶ້ນໄປມີສິດ ເຂົ້າສອບເສັງໄດ້. ເຮົາເຫັນວ່າ ອັນນີ້ເປັນໂອກາດດີໃຫ້ແກ່ເຮົາ ເພາະວ່າຖ້າເຮົາບໍ່ເສັງ ແມ່ນຈະຕ້ອງຂຶ້ນເປັນເຈົ້າເມືອງຊັ້ນທີ 6 ແລ້ວ 3 ປີຕື່ມອີກຈິ່ງຈະຂຶ້ນເປັນເຈົ້າເມືອງຊັ້ນທີ 5 ໄດ້. ອີກດ້ານໜຶ່ງເຮົາກໍ່ເຊື່ອວ່າເຮົາມີຄວາມອາດສາມາດຈະເສັງໄດ້ ເພາະວ່າດ້ວຍຄວາມຊ່ວຍເຫຼືອຂອງໝູ່ເພື່ອນຫຼາຍຄົນ, ລວມທັງທ່ານກອມມີແຊບາງຄົນ ເຮົາໄດ້ຊອກເອົາເອກະສານ ທີ່ຈຳ

ເປັນມາຄົ້ນຄວ້າຮ່ຳຮຽນໄດ້ຫຼາຍປີແລ້ວ ເພື່ອກຽມໄປເສັງເອົາຊັ້ນກອມມີແຊອິນດູຈີນ. ໃນການສອບເສັງດ້ວຍການຂຽນ ທີ່ເຮັດຢູ່ຊຽງຂວາງເອງ ແລະ ໃນການສອບເສັງ ດ້ວຍປາກເປົ່າທີ່ຕ້ອງໄປເຮັດຢູ່ວຽງຈັນນັ້ນ ເຮົາຕອບບັນຫາໄດ້ດີ ຈຶ່ງເສັງໄດ້ເປັນທີ່ໜຶ່ງ ໃນຈຳນວນສອງຄົນທີ່ເສັງໄດ້ນຳກັນ. ນອກຈາກນັ້ນ ເຮົາຍັງອາໄສໂອກາດນີ້ ສອບເສັງພາສາຫວຽດນາມ ແລະ ພາສາໄທຕື່ມອີກ ໂດຍໄດ້ຜົນສຳເລັດເປັນຢ່າງດີ ເພາະວ່າການເສັງໄດ້ແຕ່ລະພາສານັ້ນເຮັດໃຫ້ເຮົາມີສິດໄດ້ຮັບເງິນເດືອນ ພາສາໜຶ່ງເດືອນລະຫ້າກີບ. ການເສັງໄດ້ແນວນີ້ເຮັດໃຫ້ເຮົາມ່ວນຊື່ນເບີກບານຫຼາຍທີ່ສຸດ ເພາະວ່າມັນເຮັດໃຫ້ເຮົາກະໂດດຂ້າມ ຊັ້ນໜຶ່ງ, ໄດ້ຮັບເງິນເດືອນສູງກວ່າເກົ່າເຖິງສອງຂັ້ນ ແລະ ໄດ້ຮັບເງິນເພີ່ມພາສາອີກ ເດືອນລະສິບກີບ, ທັງຍັງໄດ້ຮັກສາປີການໄວ້ຄືເກົ່າ ເພື່ອວ່າທ້າຍປີນີ້ກໍ່ເລື່ອນຂຶ້ນເຈົ້າເມືອງຊັ້ນທີ່ສີ່ໂລດ. ມັນບໍ່ແມ່ນວ່າມີແຕ່ເຮົາ ແລະ ຄອບຄົວທີ່ນັ້ນທີ່ມີຄວາມມ່ວນຊື່ນເບີກບານ, ພໍ່ແມ່ພີ່ນ້ອງທັງມວນກໍ່ລ້ວນແຕ່ຊົມຊື່ນຍິນດີ ແລະ ໝູ່ຄູ່ເພື່ອນຝູງທຸກຄົນທັງຢູ່ໃກ້ ແລະ ຢູ່ໄກກໍ່ມາໂດຍຕົນເອງ ຫຼື ຂຽນຈົດໝາຍ ແລະ ສົ່ງໂທລະເລກມາຍ້ອງຍໍຊົມເຊີຍ ເພາະວ່າເຮົາ ໄດ້ເປັນຄົນລາວຜູ້ທຳອິດ ທີ່ໄດ້ເປັນເຈົ້າເມືອງເວລາອາຍຸຫາກໍ່ໄດ້ສາມສິບປີ, ແປວ່າ ເປັນເຈົ້າເມືອງຜູ້ໜຸ່ມກວ່າໝູ່ໝົດໃນທົ່ວປະເທດລາວ.

ເວລາເຮົາກັບຄືນຮອດຊຽງຂວາງ ກໍ່ເຫັນໂທລະເລກຂອງເຈົ້າພົດຊະລາດໄປຍົກຍ້າຍເຈົ້າເມືອງທ້າວຕູ່ຍທີ່ຍັງເປັນເຈົ້າເມືອງຊັ້ນທີ່ຫົກນັ້ນ ອອກຈາກເມືອງຄູນ ໄປຢູ່ເມືອງໝອກ ແລະແຕ່ງຕັ້ງເຮົາເປັນເຈົ້າເມືອງຄູນ (ຊຽງຂວາງ) ແທນເຈົ້າເມືອງທ້າວຕູ່ຍໂລດ. ໃນປີນັ້ນເອງ, ລັດຖະບານໄທທີ່ມີພວກຟາດຊິດຍີ່ປຸ່ນໜູນຫຼັງ ໄດ້ກຽມຕົວຄຶກຄັກ ເພື່ອຈະຕີ ຝະລັ່ງຕາມຊາຍແດນປະເທດຂະເໝນ ແລະລາວ. ພວກຝະລັ່ງຮູ້ເລື່ອງນີ້ກໍ່ເພີ່ມຈຳນວນທະຫານຝະລັ່ງ ທີ່ມາຕັ້ງຄ້າຍຢູ່ລັ້ງໄຂ ແຕ່ປີ 1937 ນັ້ນໃຫ້ຫຼາຍຂຶ້ນອີກ, ໃນນັ້ນມີທັງກອງທະຫານ ໂກໂລຍານ (colonial) ແລະ ກອງທະຫານເລໂຢແນ (Légionnaire),ເຮັດໃຫ້ລັ້ງໄຂ ເຊິ່ງເມື່ອກ່ອນນີ້ເປັນທົ່ງເປົ່າແປນ ກາຍມາເປັນເມືອງໜຶ່ງທີ່ເຕັມໄປດ້ວຍ ຄົນຝະລັ່ງ, ແຂກດຳ, ຫວຽດນາມ ແລະ ມີຊີວິດຊີວາອັນເນືອງນັນທີ່ສຸດ.

ທ້າຍປີ 1940, ກອງທະຫານໄທໄດ້ບຸກຕີທະຫານຝະລັ່ງ ແລະ ລາວຢູ່ສອງແຂວງ ໄຊຍະບູລີ ແລະ ຈຳປາສັກ ແລະ ຍິງກັນຕາມຊາຍແດນລາວ-ໄທ ແຕ່ເໜືອຮອດໃຕ້ ; ພ້ອມກັນນັ້ນ ພວກເຂົາກໍ່ບຸກຕີທະຫານຝະລັ່ງ ແລະ ຂະເໝນຕາມແຂວງສາມລ່ຽມ, ພັດຕະບອງ ແລະອື່ນໆ. ຕົ້ນປີ 1941, ເຮືອບິນໄທໄດ້ຖິ້ມລະເບີດຫຼາຍລູກລົງໃສ່ຄ້າຍທະຫານຝະລັ່ງ ທີ່ລັ້ງໄຂ, ຫຼັງຈາກນັ້ນ ກໍ່ມາຖິ້ມລະເບີດ 4 ລູກລົງໃສ່ຕົວເມືອງຊຽງຂວາງ, ແຕ່ບໍ່ມີການເສຍຫາຍຢ່າງໃດ ເພາະວ່າເຮືອບິນໄທບິນສູງ, ລະເບີດທີ່ຖິ້ມລົງມານັ້ນ ກໍ່ຕົກລົງນອກຂອບເຂດຄ້າຍທະຫານ ແລະ ນອກຂອບເຂດຕົວເມືອງຊຽງຂວາງ.

ໃນເວລານັ້ນ ປະເທດຝະລັ່ງພວມຖືກພວກຟາດຊິດຮິດແລ ໄປຍຶດຄອງຢູ່, ເຮັດໃຫ້ພວກຝະລັ່ງທີ່ຢູ່ອິນດູຈີນທຸກຍາກຂາດເຂີນ ແລະ ຕໍ່ສູ້ຕ້ານທານການບຸກຕີຂອງກອງທັບໄທ ທີ່ມີຍີ່ປຸ່ນໜູນຫຼັງນັ້ນບໍ່ໄດ້. ພວກຝະລັ່ງຈຳຕ້ອງຫັນປ່ຽນຍຸດໂທບາຍໃໝ່ ມາເຊີດຊູແນວຄິດຮັກຊາດຂອງຄົນລາວຂຶ້ນ ດ້ວຍວິທີປະດິດເພັງຊາດລາວ, ໃຊ້ທຸງຊ້າງສາມຫົວອັນເປັນທຸງຂອງເຈົ້າ ຊີວິດຫຼວງພະບາງ ເປັນທຸງຊາດຂອງທົ່ວປະເທດລາວ, ຈັດຕັ້ງໜັງສືພິມລາວສະບັບໃໝ່ຂຶ້ນ ທີ່ເອີ້ນວ່າ "ຈົດໝາຍເຫດລາວໃຫຍ່", ຊຸກຍູ້ການຂຽນປຶ້ມເລື່ອງ, ກາບກອນ ແລະການແຕ່ງເພັງລາວສະໄໝໃໝ່ຂຶ້ນ ເພື່ອສ້າງຄວາມຄຽດແຄ້ນໃຫ້ແກ່ຄົນລາວ ຕໍ່ການທີ່ສັກດິນາໄທ ໄດ້ກວາດຕ້ອນເອົາຄົນລາວໜີໄປຢູ່ດິນໄທ ແລະ ໄດ້ຍຶດເອົາດິນຝັ່ງຂວາແມ່ນ້ຳຂອງທີ່ເປັນຂອງລາວໄປເປັນດິນໄທ. ເວລາດຽວກັນນັ້ນ ພວກຝະລັ່ງກໍ່ໄດ້ລະດົມເອົາຊາວໜຸ່ມລາວເຂົ້າເປັນທະຫານແດງໄປຊ່ວຍຝະລັ່ງຕີໄທ. ແຕ່ເຮັດແນວໃດ ພວກຝະລັ່ງກໍ່ສູ້ໄທບໍ່ໄດ້ ; ມາຮອດ ກາງປີ 1941 ຝະລັ່ງຕ້ອງຍອມໃຫ້ຍີ່ປຸ່ນເຂົ້າມາໄກ່ເກ່ຍ ເພື່ອແກ້ໄຂຂໍ້ພິພາດລະຫວ່າງຝະລັ່ງກັບໄທ. ກອງປະຊຸມໄກ່ເກ່ຍນັ້ນໄດ້ໄຂຂຶ້ນຢູ່ທີ່ນະຄອນໂຕກຽວ ແລະ ໃນທີ່ນັ້ນຍີ່ປຸ່ນ ແລະ ໄທ ໄດ້ບັງຄັບໃຫ້ຝະລັ່ງຕ້ອງຍອມເຊັນສັນຍາໃນປີນັ້ນເອງ, ຍອມມອບສອງແຂວງໄຊຍະບູລີ ແລະ ຈຳປາສັກໃຫ້ແກ່ໄທ. ຕະຫຼອດປີ 1941 ພວກຝະລັ່ງໄດ້ຕັ້ງວິທະຍຸກະຈາຍສຽງຂຶ້ນ ທີ່ວຽງຈັນ ເພື່ອປຸກຈິດໃຈຊາດ ແລະ ຄວາມຄຽດແຄ້ນຂອງຄົນລາວຂຶ້ນໃນການເສຍດິນແດນໃຫ້ແກ່ໄທ. ພວກເຮົາຢູ່ຊຽງຂວາງໄດ້ຟັງກອນລຳ ບົດເພັງຮ້ອງ, ບົດໂຄສະນາ ແລະ ໄດ້ຮັບໜັງສືພິມ " ລາວໃຫຍ່ " ທີ່ມີເນື້ອໃນດັ່ງກ່າວຂ້າງບົນນັ້ນເປັນປະຈຳ.

ທາງດ້ານການຈັດຕັ້ງ, ພວກຝະລັ່ງກໍ່ໄດ້ມີການປ່ຽນແປງໃໝ່ບາງປະການຄື ເອົາແຂວງວຽງຈັນ ແລະ ຊຽງຂວາງໄປຂຶ້ນກັບເຈົ້າຊີວິດຫຼວງພະບາງ ເພື່ອທົດແທນການສູນເສຍແຂວງໄຊຍະບູລີໃຫ້ແກ່ໄທ, ໄດ້ໃຫ້ບັນດາແຂວງພາກໃຕ້ຂຶ້ນກັບເຈົ້າໜ້າທີ່ຝະລັ່ງໂດຍກົງ . ເພື່ອເອົາໃຈເຈົ້າຫຍຸຍທີ່ເປັນເຈົ້ານະຄອນຈຳປາສັກ, ພວກຝະລັ່ງໄດ້ໃຫ້ນາມມະຍົດແກ່ຜູ້ນັ້ນໃຫ້ມີຊື່ວ່າ ເຈົ້າລາຊະດາໄນ ແລະຍົກເອົາຂຶ້ນເປັນເຈົ້າລາວຜູ້ທີ່ 4 ຖັດຈາ. ເຈົ້າຊີວິດ , ເຈົ້າລາຊະພາຄີໄນ (ເພັດຊະລາດ) ແລະເຈົ້າສະຫວ່າງວັດທະນາທີ່ເປັນລູກ ຜູ້ຈະສືບແທນເຈົ້າຊີວິດ. ຖັດຈາກນັ້ນມາ ພວກຝະລັ່ງກໍ່ແຕ່ງຕັ້ງຕຳແໜ່ງເຈົ້າແຂວງໃຫ້ຄົນລາວ ໄປຢູ່ຄຽງຂ້າງກັບທ່ານ ເລຊີດັງຝະລັ່ງ, ແລະ ໄດ້ເພີ່ມເງິນເດືອນໃຫ້ພວກຂ້າລາຊະການຊັ້ນຕ່ຳກວ່າຄືເຈົ້າເມືອງ, ອຸປະຮາດ, ຜູ້ຊ່ວຍ, ສະໝຽນ ແລະ ຂ້າລາຊະການໃນບັນດາພະແນກອື່ນອີກດ້ວຍ.

ໃນເດືອນມີນາ ປີ 1942 ເຈົ້າເພັດຊະລາດໄດ້ສັ່ງມາທາງໂທລະເລກ ໃຫ້ຍົກຍ້າຍເຮົາຈາກຊຽງຂວາງໄປເປັນເຈົ້າເມືອງວຽງຈັນ. ເລື່ອງນີ້ໄດ້ນຳເອົາຄວາມຕື່ນເຕັ້ນດີໃຈມາໃຫ້ແກ່ເຮົາ ແລະພີ່ນ້ອງຂອງເຮົາທຸກຄົນ. ດ້ານໜຶ່ງເຮົາບໍ່ຢາກໜີຈາກຊຽງຂວາງອັນເປັນ

ບ້ານເດີມຂອງເຮົາ, ບໍ່ປາກທີ່ໄກແມ່, ພີ່ນ້ອງ ແລະ ໝູ່ຄູ່ຮ່ວມຊີວິດນຳກັນທີ່ລ້ວນແຕ່ຮັກແພງເຮົາ. ດ້ານໜຶ່ງອີກເຮົາບໍ່ຢາກໄປເຮັດວຽກການຢູ່ວຽງຈັນ ທີ່ເຮົາເຫັນວ່າມີຄວາມຫຍຸ້ງຍາກຫຼາຍ ເພາະວ່າມັນແມ່ນເມືອງໃຫຍ່ທີ່ເປັນນະຄອນຫຼວງຂອງປະເທດລາວ. ເຮົາໄດ້ຕີສາຍໄປຫາເຈົ້າເພັດຊະລາດ ຂໍໃຫ້ຍົກຍ້າຍເຮົາໄປຢູ່ເມືອງໃດເມືອງໜຶ່ງ ໃນແຂວງຊຽງຂວາງ ແລ້ວເອົາເຈົ້າເມືອງຜູ້ອາຍຸແກ່ກວ່າເຮົານັ້ນໄປວຽງຈັນ, ແຕ່ເຈົ້າເພັດຊະລາດຕອບມາວ່າບໍ່ໄດ້. ເຮົາໄດ້ຕີສາຍໄປອີກເພື່ອຂໍພັກການໜຶ່ງປີ ໂດຍບໍ່ຮັບເງິນເດືອນ, ແຕ່ເຈົ້າເພັດຊະລາດກໍ່ຕີສາຍຕອບມາວ່າບໍ່ອະນຸຍາດ. ເມື່ອບໍ່ມີທາງອອກແນວນັ້ນເຮົາກໍ່ຈຳເປັນໄດ້ໄປ ແລະ ໄປດ້ວຍຄວາມອຸກອັ່ງບໍ່ມ່ວນຊື່ນ, ແຕ່ໃນໃຈນ້ອຍ ກໍ່ຖືວ່າເປັນກຽດທີ່ຖືກຄັດເລືອກໃຫ້ໄປປົກຄອງເມືອງທີ່ສຳຄັນນັ້ນ.

ເຮົາໄປຮອດວຽງຈັນກໍ່ເຫັນຄວາມຫຍຸ້ງຍາກຄືດັ່ງເຮົາຄິດໄປແຕ່ບ້ານແທ້. ການມອບວຽກກໍ່ເປັນການຫຍຸ້ງຍາກ ເພາະວ່າເຈົ້າເມືອງເກົ່າ ຜູ້ຊື່ວ່າ ທ້າວນິນ ແມ່ນຜູ້ເຖົ້າ, ເຮັດວຽກບໍ່ສູ້ມີບັນຊິມບັນຊີ. ເຮົາເອງຈະຊອກຫາເຮືອນພັກເຊົາກໍ່ຍາກ ເພາະເຈົ້າເມືອງຜູ້ເກົ່າເພິ່ນຢູ່ເຮືອນສ່ວນຕົວຂອງເພິ່ນເອງ ; ເພິ່ນຖືກຍ້າຍໄປຢູ່ເມືອງເຊໂປນກໍ່ໄປແຕ່ຕົວເພິ່ນ, ຄອບຄົວຂອງເພິ່ນຍັງປະໃຫ້ຢູ່ເຮືອນຂອງເພິ່ນຕໍ່ໄປ. ໃນປີໜຶ່ງເຮົາຕ້ອງທັງເຮັດວຽກ ແລະ ທັງແລ່ນໄປຊອກເຊົ່າເຮືອນຢູ່ຮອດສາມບ່ອນຄື ຢູ່ຄຸ້ມວັດອົງຕື້, ຄຸ້ມຂຸນຕາ ແລະ ຄຸ້ມວັດອິນແປງ. ໃນເມືອງວຽງຈັນ ເຮົາຊອກຊື້ລົດຖີບຄັນໜຶ່ງມາຂີ່ກໍ່ບໍ່ໄດ້, ຈຳເປັນຕ້ອງຍ່າງມາເຮັດການເປັນໄລຍະທາງສາມກິໂລແມັດ ມື້ລະ 4 ເທື່ອທັງໄປແລະກັບ. ທ້າຍປີນັ້ນ ເຮົາໄດ້ລົງໄປຮອດປາກຊັນ ຈຶ່ງຊື້ລົດຖີບຄັນໜຶ່ງມາໃຊ້ໄດ້. ວຽກການຈັ່ງແມ່ນມັນຫຼາຍ ເພາະວ່າແມ່ນເວລາທີ່ພວກຝະລັ່ງພວມກຽມຈະຕໍ່ສູ້ກັບຍີ່ປຸ່ນ. ແຕ່ລະມື້ມີແຕ່ຄຳສັ່ງໃຫ້ເກນກຸລີໄປສ້ອມແປງທາງແຕ່ວຽງຈັນຫາພູຄູນ, ໄປຂຸດທາງໃໝ່ທີ່ປາກກະດິງຫາທ່າແຂກ, ໄປບ້ານຄູນຄຳຕັ້ງແຕ່ ບ້ານເກົ້າລ້ຽວຮອດສີຖານໃຕ້ ເພື່ອປ້ອງກັນບໍ່ໃຫ້ນ້ຳຂອງຂຶ້ນຖ້ວມວຽງຈັນ, ໄປຟັນເຮືອກຸມ ຮ້ອຍກວ່າລຳໃຫ້ກອງທະຫານ. ເມືອງວຽງຈັນມີ 29 ຕາແສງ, 260 ບ້ານ, ພົນລະເມືອງ 114.500 ຄົນ ລວມທັງຕົວເມືອງວຽງຈັນທີ່ບໍ່ທັນໄດ້ຕັ້ງເປັນກຳແພງນະຄອນເທື່ອ. ປະຊາຊົນຈຳນວນນັ້ນຕ້ອງໄປເຮັດການເກນຜູ້ລະ 3 ເທື່ອ ຕໍ່ປີ, ອັນນີ້ທາງໆທີ່ເຮົາໄດ້ແລ່ນໄປປຶກສານຳເຈົ້າເພັດຊະລາດ ແລະ ເຈົ້າແຂວງຄຳມາວ ແລ້ວຕໍ່ສູ້ບໍ່ປະຕິບັດຄຳສັ່ງປີລະ 5 ຫຼື 6 ເທື່ອ ເພາະວ່າເຫັນອົກເຫັນໃຈປະຊາຊົນທີ່ບໍ່ມີເວລາຈະຢູ່ເຮືອນເພື່ອເຮັດໄຮ່ນາສວນ.

ນອກຈາກເຮັດວຽກຫຼວງທີ່ຖິ້ມຕົວຢູ່ເລື້ອຍໆແນວນັ້ນ ເຮົາຍັງໄດ້ຖືກແຕ່ງຕັ້ງ ໃຫ້ເປັນປະທານຄະນະກຳມະການວັດທະນະທຳອີກ ເພື່ອກຳກັບໜັງສືພິມ "ລາວໃຫຍ່", ກຳກັບການຂຽນ ແລະແປປຶ້ມ, ການເສັງເພັງ, ເສັງກາບກອນ ແລະ ກວດກາການຫຼິ້ນລະຄອນ ໂດຍແມ່ນທ່ານໂລເຊ (Rochet) ເປັນທີ່ປຶກສາ, ເມື່ອທ່ານໂລເຊຕາຍແລ້ວ ກໍ່ແມ່ນທ່ານມີໂຊ

ແດນ (Michaudel) ມາເປັນທີ່ປຶກສາແທນ. ເວລານັ້ນ ພວກຝະລັ່ງ ໃຊ້ລູກມືຂອງເຂົາທີ່ຮຽນໜັງສືມາແຕ່ເມືອງຝະລັ່ງມາສູ້ຖຽງ ເພື່ອຈະໃຫ້ໃຊ້ຕົວໜັງສືລາຕິນແທນ ແລ້ວຍຸບເລີກຕົວໜັງສືລາວ ໂດຍອ້າງເຫດຜົນວ່າ ມັນບໍ່ຄົບສຽງຂອງຕ່າງປະເທດ ແລະ ວ່າຈະໄປເຮັດພິມດີດມາຕີ ແລະ ໄປຫຼໍ່ຕົວໜັງສືມາພິມເປັນໂຮງພິມກໍ່ຍາກ. ກອງປະຊຸມແຕ່ລະເທື່ອ ມີແຕ່ສູ້ຖຽງກັນໃນບັນຫານີ້ ; ບາງເທື່ອກໍ່ເກີດຕີກັນຢູ່ໃນກອງປະຊຸມ, ເປັນຕົ້ນແມ່ນເວລາກິນເຫຼົ້າເມົາ. ຜູ້ທີ່ສູ້ຖຽງກັນໃນບັນຫາຕົວໜັງສື ແລະ ວິທີຂຽນໜັງສືລາວນັ້ນມີ 3 ພວກດ້ວຍກັນຄື ພວກໜຶ່ງແມ່ນພວກທີ່ຮຽນໜັງສືມາແຕ່ເມືອງຝະລັ່ງ ເຊິ່ງຢາກຍຸບເລີກຕົວໜັງສືລາວ ແລ້ວຂຽນພາສາລາວດ້ວຍຕົວໜັງສືລາຕິນ ແລະ ຂຽນໜັງສືທາງການຫາກັນເປັນພາສາຝະລັ່ງເລີຍ ; ເຊິ່ງຕົວຕັ້ງຕົວຕີແມ່ນ ທ້າວຫຍຸຍ ອະໄພ, ກະຕ່າຍ ໂດນສະໂສລິດ, ອູລິດ ສຸວັນນະວົງ , ສຸພັນບະລັງຊາ ເດລາບະລິດ, ພວກທີ່ສອງແມ່ນພວກຄົນລາວທີ່ເຄີຍຮຽນໜັງສືໄທ ແລະມະຫາທີ່ສິກອອກຈາກວັດທີ່ຢາກໃຫ້ເພີ່ມຕື່ມຕົວໜັງສືລາວໃຫ້ຄົບຕາມສຽງສາກົນ ແລະ ຂຽນນິຕົວສະກົດກາລັນຕາມວາດຂຽນຂອງໄທ, ເຊິ່ງຕົວຕັ້ງຕົວຕີແມ່ນມະຫາພູມີ, ມະຫາເຮືອງ, ມະຫາອ້ວນ, ທ້າວເກື້ອງ ປະທຸມຊາດ, ທ້າວແກວຕາ, ພຸຍ ປັນຍາ ; ພວກທີ່ສາມແມ່ນພວກທີ່ຢາກຮັກສາການຂຽນໜັງສືລາວໄວ້ຕາມເດີມຄືຂຽນຕາມສຽງປາກຂອງຄົນລາວ, ເພີ່ມແຕ່ໄມ້ເອກ ໄມ້ໂທ ໄມ້ຕີ ໄມ້ຈັດຕະວາ, ເຊິ່ງຕົວຕັ້ງຕົວຕີແມ່ນປີແອວີນ, ທ້າວບົງ ສຸວັນນະວົງ, ທ້າວຄຳສີ, ທ້າວເກນ ແລະ ເຮົາເອງ. ການຖົກຖຽງກັນກິນເວລາຫຼາຍເດືອນບໍ່ຕົກລົງກັນໄດ້, ທ້າຍສຸດແມ່ນເຈົ້າເພັດຊະລາດຕັດສິນໃຫ້ ໂດຍໃຫ້ເອົາຕາມຄຳເຫັນຂອງພວກທີ່ສາມນັ້ນທັງໝົດ.

ຕະຫຼອດໄລຍະທີ່ເປັນເຈົ້າເມືອງວຽງຈັນນັ້ນ ເຮົາໄດ້ເຮັດວຽກຫຼາຍອັນທີ່ສຸດ. ນອກຈາກການເກັບເງິນສ່ວຍ, ຄ່າໄຖ່ການ, ຕີພິມມ້າ, ງົວ, ຄວາຍ, ຕີພິມດິນບ້ານ, ດິນສວນ, ດິນນາ ແລະເກນກູລີໄປເຮັດການຕ່າງໆແລ້ວ, ຍັງໄດ້ຈັດການເບີກລາບາສີໃຫ້ແຂກຕ່າງປະເທດ ແລະ ເຈົ້ານາຍຜູ້ໃຫຍ່ທີ່ຜ່ານໄປມາ ແລະ ໄດ້ຈັດພິທີບຸນທານ ຕາມປະເພນີທຸກຢ່າງເຊັ່ນ ບຸນທາດຫຼວງ, ບຸນບັ້ງໄຟ, ບຸນຊ່ວງເຮືອ, ບຸນປີໃໝ່, ບຸນສາສະໜາ ແລະ ບຸນລຽງຜີເມືອງຕາມຮີດສິບສອງຄອງສິບສີ່ອີກດ້ວຍ. ພວກນາຍຝະລັ່ງກໍ່ຈ້າງແມ່ນຫຼາຍທີ່ສຸດ, ມີທັງທ່ານເລຊີດັງ, ຮອງເລຊີດັງ, ຫົວໜ້າທະຫານແດງ ແລະ ທະຫານຂຽວ, ຫົວໜ້າຕຳຫຼວດ, ທ່ານພາສີ, ທ່ານໝໍປົວສັດ, ທ່ານໝໍປົວຄົນ, ຫົວໜ້າຫ້ອງການທ່ານຜູ້ໃຫຍ່ ແລະອື່ນໆອີກ; ຜູ້ໃດຕ້ອງການຈ້າງຄົນໄປເປັນຄົນໃຊ້, ຕ້ອງການຊື້ເຂົ້າໃຫ້ພວກຄົນໃຊ້ກິນ, ຕ້ອງການຊື້ຫຍ້າໃຫ້ມ້າກິນ ຫຼື ຊອກໝາບໍ່ເຫັນກໍ່ມາບອກເຈົ້າເມືອງໄປຊອກໃຫ້ທັງນັ້ນ. ເປັນເຫດໃຫ້ເກີດມີການສູ້ຖຽງກັນແຮງຫຼາຍເທື່ອ.

ເວລາເຮົາເປັນເຈົ້າເມືອງຢູ່ວຽງຈັນນັ້ນ ເປັນເວລາທີ່ພວກຝະລັ່ງພວມກຽມຈະຕໍ່ສູ້ຍີ່ປຸ່ນ

ແລະ ເປັນເວລາທີ່ພວກຍີ່ປຸ່ນກໍ່ເລີ່ມເຂົ້າມາປະເທດຫວຽດນາມ, ຂະເໝນ, ລາວ ແລະປະເທດອາຊີອາຄະເນອື່ນໆອີກ. ພວກຍີ່ປຸ່ນເຂົ້າມາວຽງຈັນມີຈຳນວນຫຼາຍຂຶ້ນຊັກໃຈ. ມາໃນຖານະນັກທ່ອງທ່ຽວ ຫຼື ນັກການຄ້າ ແຕ່ກໍ່ມີທ່າທີສູງຕໍ່ພວກຝະລັ່ງ ແລະ ທ່າທີສະໜິດສະໜົມຕໍ່ຄົນລາວ ເຮັດໃຫ້ພວກຝະລັ່ງເພີ່ມທະວີການຄວບຄຸມຄົນລາວເຄັ່ງຄັດຂຶ້ນຕື່ມ ; ທຸກເທື່ອທີ່ພວກຍີ່ປຸ່ນໄປຢາມເຈົ້າແຂວງ ຫຼື ມາຢາມເຮົາ ທ່ານເລຊີດັງ ແລະ ຜູ້ຮອງຂອງເພິ່ນກໍ່ເອີ້ນພວກເຮົາໄປສືບຖາມໂລດ, ເຮັດໃຫ້ພວກເຮົາຢູ່ຍາກທີ່ສຸດ. ມີຫຼາຍເທື່ອເຮົາອົດທົນບໍ່ໄດ້ ກໍ່ໄດ້ຖຽງກັນແຮງ ກັບພວກນາຍຝະລັ່ງຫຼາຍຄົນ, ລວມທັງຮອງເລຊີດັງດ້ວຍ ແຕ່ຖືກເຈົ້າແຂວງເອີ້ນໄປຕັກເຕືອນໃຫ້ອົດທົນຮັກສາທ່າທີອ່ອນນ້ອມຕໍ່ພວກຝະລັ່ງ. ເຮົາບໍ່ດີໃຈໄດ້ແລ່ນໄປເວົ້າຕໍ່ເຈົ້າເພັດຊະລາດຫຼາຍເທື່ອ ເພື່ອຂໍຍ້າຍໜີຈາກວຽງຈັນ, ເພາະວ່າເຮົາຢ້ານຈະອົດທົນບໍ່ໄດ້ຈະໜີງຕີກັບຮອງເລຊີດັງ ຄືດັ່ງເຮົາໄດ້ຕີທ່ານຫົວໜ້າທະຫານຂອງຢູ່ຊຽງຂວາງໃນປີ 1933 ຈົນໄດ້ຈ້າງທະນາຍຄວາມສູ້ກັນເຖິງ 5 ເດືອນຈຶ່ງເປັນການເລີກແລ້ວແກ່ກັນ. ແຕ່ວ່າເຈົ້າເພັດຊະລາດກໍ່ຊ່ວຍແນວໃດບໍ່ໄດ້, ມີແຕ່ບອກໃຫ້ອົດທົນເອົາຈົນຮອດເມື່ອໃດມີໂອກາດດີ ຈຶ່ງຈະຍົກຍ້າຍໃຫ້ໄປຢູ່ບ່ອນໃໝ່.

ທ້າຍເດືອນ 12 ປີ 1944 ເຈົ້າເພັດຊະລາດໄດ້ເອີ້ນເຮົາໄປບອກວ່າ ເຈົ້າແຂວງທ້າວຫຼັກ ແສງສະຖິດ (ພະຍາເມືອງຂວາ) ພໍ່ເມຍເຮົາ ທີ່ຖືກແຕ່ງຕັ້ງໄປເປັນເຈົ້າແຂວງຫົວພັນ ແຕ່ປີ 1941 ນັ້ນຈະຖືກຍ້າຍໄປເປັນເຈົ້າແຂວງຊຽງຂວາງ, ວ່າເພິ່ນກະວ່າຈະແຕ່ງຕັ້ງໃຫ້ເຮົາໄປເປັນເຈົ້າແຂວງຫົວພັນ ແລະ ຖາມເຮົາວ່າຈະເຫັນດີໄປບໍ່. ເຮົາຕອບໂລດວ່າເຮົາເຫັນດີໄປ ເພາະວ່າຢາກໜີຈາກວຽງຈັນບ່ອນເຮົາດຳລົງຊີວິດຢູ່ຍາກທີ່ສຸດນີ້ . ເພິ່ນເວົ້າວ່າຖ້າເປັນແນວນັ້ນກໍ່ເປັນອັນວ່າຕົກລົງ, ໃຫ້ເຮົາກຽມມອບວຽກໃຫ້ເຈົ້າສົມສະໜິດທີ່ເປັນຜູ້ຮອງເຮົານັ້ນ ແລະ ກຽມເຄື່ອງຂອງເພື່ອອອກເດີນທາງໃນອາທິດຈະມານີ້. ເຮົາກັບຄືນມາເຮືອນກໍ່ຮີບລົງມືກຽມເຄື່ອງຂອງ ແລະ ກຽມມອບວຽກຢ່າງຫ້າວຫັນທີ່ສຸດ. ສາມມື້ຫຼັງມາກໍ່ມີຂໍ້ດຳລັດແຕ່ງຕັ້ງມາຮອດແທ້. ເຮົາຮີບຈັດການມອບວຽກແລ້ວກໍ່ອອກເດີນທາງ ຈາກວຽງຈັນໃນວັນທີ 2 ມັງກອນ ປີ 1945 ໄປຊຳເໜືອໂດຍຜ່ານປາກຊັນ, ທ່າໂທມ, ຊຽງຂວາງ, ລາດບວກ, ບານລາວ, ໂພນຫອງ, ສີບໍ້, ເມືອງລາບ, ຫົວເມືອງ, ເມືອງເປີນ ແລະ ເມືອງຮາມ. ໃນເວລານັ້ນ ຈິດໃຈເຮົາແມ່ນມ່ວນຊື່ນທີ່ໄດ້ໜີຈາກວຽງຈັນ, ແຕ່ກໍ່ເປັນຫ່ວງວ່າໄປຮອດຊຳເໜືອແລ້ວການດຳລົງຊີວິດ ແລະ ການເຮັດວຽກການຂອງເຮົາຈະເປັນໄປແນວໃດ ເພາະວ່າເຮົາບໍ່ຮູ້ວ່າຈິດໃຈທ່ານເລຊີດັງແຂວງຫົວພັນ ທີ່ຊື່ວ່າ ມັກເດີໂວທີ່ເຮົາບໍ່ເຄີຍໄດ້ພົບຈັກເທື່ອນັ້ນຈະເປັນແນວໃດ ແລະ ປະຊາຊົນແຂວງຫົວພັນ ເຮົາກໍ່ບໍ່ທັນລຶ້ງເຄີຍກັນ ເພາະວ່າເປັນເທື່ອທຳອິດທີ່ເຮົາຈະໄດ້ໄປແຂວງນີ້.

ການເດີນທາງແຕ່ວຽງຈັນໄປຮອດຊຳເໜືອ ກິນເວລາໜຶ່ງເດືອນເຕັມ. ບາງບ່ອນໄດ້ໄປ

ທາງເຮືອ, ຄືແຕ່ປາກຊັນຮອດທ່າໂທມ, ນອກຈາກນັ້ນກໍ່ແມ່ນໄປທາງບົກ ໂດຍໃຊ້ມ້າຂີ່ແລະ ໃຊ້ກຸລີຫາບເຄື່ອງຂອງ. ບາງບ່ອນກໍໄດ້ພັກຢາມພື້ນອງບ່ອນລະສອງຫາສາມມື້, ຄືຢູ່ຊຽງຂວາງ, ລາດຮວງ ແລະ ລາດບວກ. ການເດີນທາງແມ່ນອິດເມື່ອຍທີ່ສຸດ ເພາະໄດ້ຂຶ້ນພູລົງຫ້ວຍ, ບາງບ່ອນກໍ່ຂຶ້ນລົງຊັນຈົນວ່າຂີ່ມ້າບໍ່ໄດ້, ຈຳເປັນຕ້ອງຍ່າງເອົາ. ບາງບ່ອນກໍໄດພັກຮອດ 5 ມື້, ຄືຢູ່ເມືອງລາບ ເພາະວ່າເມຍເຮົາເປັນໄຂ້ຮ້ອນຫຼາຍ ແລະ ລູກລ້ຽງຂອງພວກເຮົາທັງສອງຄົນ, ຍິງໜຶ່ງ ຊາຍໜຶ່ງ, ທີ່ພວກເຮົາໄດ້ຂໍເອົາລູກພີ່ນ້ອງຢູ່ຫົວຽງຈັນ ແລະ ຫຼວງພະບາງມາລ້ຽງ ແລະ ທີ່ຍັງນ້ອຍພຽງແຕ່ 4 ແລະ 3 ປີ, ກໍ່ບໍ່ສະບາຍຄືກັນ. ຕະຫຼອດເວລາເດີນທາງ ແນວຄິດຂອງເຮົາມີທັງດີໃຈທີ່ໄດ້ໜີຈາກວຽງຈັນ, ມີທັງຄິດຮອດພີ່ນ້ອງທີ່ຍັງຢູ່ຊຽງຂວາງ, ມີທັງອິດເມື່ອຍຂຶ້ນພູລົງຫ້ວຍ, ມີທັງອຸກອັ່ງຫົວໃຈຍ້ອນເມຍ ແລະ ລູກບໍ່ສະບາຍ, ມີທັງເປັນຫ່ວງນຳໜ້າທີ່ວຽກງານອັນໃໝ່ ທີ່ບໍ່ທັນເຄີຍເຮັດ, ຈຶ່ງແມ່ນມັນສົນລະວົນໃຈຢ່າງບໍ່ເຄີຍເຫັນມາແຕ່ກ່ອນ. ເຂົ້າຮອດດິນເມືອງເປີນ, ເມືອງຮາມ ແລະ ຊຳເໜືອແລ້ວເຮົາຮູ້ສຶກລົງໃຈຍ້ອນວ່າ ອາກາດເຢືອກເຢັນດີ ແລະ ພູມປະເທດສວຍງາມ ຄ້າຍຄືແຂວງຊຽງຂວາງ ອັນເປັນບ້ານເກີດຂອງເຮົາ.

ວັນທີ 2 ກຸມພາ 1945 ຕອນບ່າຍເຮົາເຂົ້າໄປຮອດຕົວເມືອງຊຳເໜືອ. ເມືອງຊຳເໜືອເປັນຕົວເມືອງນ້ອຍໜຶ່ງທີ່ຕັ້ງຢູ່ສອງຝັ່ງນ້ຳຊຳ, ມີຖະໜົນຜ່ານກາງເມືອງແຕ່ເສັ້ນດຽວ ທີ່ມາແຍກກັນເປັນ 3 ເສັ້ນຢູ່ໜ້າເຮືອນ 3 ແປ ອັນເປັນເຮືອນຂອງທ່ານເລຊິດັງ, ເສັ້ນໜຶ່ງແຍກໄປເມືອງເປີນ, ເມືອງຮາມ, ເມືອງອີ້ ແລະ ຫົວເມືອງ, ເສັ້ນໜຶ່ງຂ້າມນ້ຳຊຳ ໄປທາງຕາເວັນອອກຜ່ານເມືອງລຽດ, ເມືອງປົວ, ສົບຮາວ, ເມືອງຊຽງຄໍ້, ເມືອງແອດ ໄປຫາດິນຫວຽດນາມ, ເສັ້ນໜຶ່ງຜ່າກາງເມືອງໄປຫາບ້ານຫໍ້, ຫົວຊຽງ, ເມືອງຢຶດແລະເມືອງຊ່ອນ ເພື່ອໄປຫາແຂວງຫຼວງພະບາງ. ເມື່ອຖາມຫາເຮືອນເຈົ້າແຂວງຮູ້ແລ້ວ ພວກເຮົາພາກັນເດີນຜ່າກາງເມືອງຂຶ້ນໄປຕາມທິດຫົວຊຽງ ແລະ ເມືອງຊ່ອນ. ໄປຮອດໜ້າໂຮງການທ່ານເລຊິດັງ ມີຂາລາຊະການທີ່ເຮັດວຽກຢູ່ຫ້ອງການເຈົ້າແຂວງອອກມາຖາມເຮົາ, ຂໍ່ານັບທັກທາຍກັນແລ້ວ ຂາລາຊະການຜູ້ນັ້ນກໍ່ພາພວກເຮົາຂຶ້ນໄປຫາເຮືອນເຈົ້າແຂວງອັນເປັນເຮືອນກໍ່ດ້ວຍດິນຈີ່, ສອງຊັ້ນ, ມຸງດິນຂໍ, ມີເຮືອນຄົວຢູ່ນອກ ; ເຮືອນຫຼັງນີ້ຕັ້ງຢູ່ໃກ້ກັນ ກັບວັດເມືອງຊຳ, ມີທາດລູກໜຶ່ງສູງສົມຄວນຕັ້ງຢູ່ທາງໜ້າເຮືອນ. ຫຼັງຈາກເຮົາເຂົ້າຢູ່ເຮືອນຄາວໜຶ່ງກໍ່ເຫັນພວກເຈົ້າເມືອງ ແລະ ຂາລາຊະການຫຼາຍຄົນມາຕ້ອນຮັບ ແລະເລົ່າຂ່າວສະພາບການບ້ານເມືອງໃຫ້ເຮົາຟັງ.

ວັນທີ 3 ກຸມພາ 1945 ເຮົາໄປຍື່ນໃບຍົກຍ້າຍຂອງເຮົາຕໍ່ທ່ານເລຊິດັງ ມັກເດີໂວ , ສະແດງຄວາມຂໍ່ານັບ ແລະ ຄວາມດີໃຈທີ່ທາງການແຕ່ງຕັ້ງໃຫ້ເຮົາມາຮ່ວມເຮັດວຽກ ນຳເພິ່ນ, ເຮົາເວົ້າວ່າ ເປັນເທື່ອທຳອິດທີ່ເຮົາມາຮັບຕຳແໜ່ງອັນສູງນີ້, ແນ່ນອນເຮົາຍັງຈະບໍ່

ທັນເຄີຍວຽກ, ຈຶ່ງຂໍໃຫ້ທ່ານເລຂີດ້ງຕັກເຕືອນສັ່ງສອນເອົາ. ທ່ານມັກເດີໂວເວົ້າຕອບເຮົາ ວ່າ ດີໃຈທີ່ໄດ້ມີເຈົ້າແຂວງໜຸ່ມນ້ອຍມາເຮັດວຽກນຳ, ວ່າເຂົາກໍ່ໄດ້ຍິນຊື່ສຽງຂອງເຮົາມາ ແດ່ແລ້ວ ເພາະວ່າເຈົ້າແຂວງເກົ່າຜູ້ເປັນພໍ່ເມຍເຮົາກໍ່ໄດ້ຝາກຝັນເຮົາໄວ້ກັບເຂົາແລະທ່ານ ຮອງເລຂີດ້ງແຂວງວຽງຈັນ ກໍ່ໄດ້ຂຽນຈົດໝາຍແນະນຳເຮົາໃຫ້ເຂົາແລ້ວ. ເວົ້າແລ້ວກໍ່ເອີ້ນ ເອົາຂາລາຊະການໂຮງການເຈົ້າແຂວງມາໂຮມກັນ ແລ້ວກໍ່ເຮັດພິທີມອບທັງຄົນ ທັງເອກະ ສານ ທັງວຽກທີ່ຈະຕ້ອງເຮັດໃຫ້ແກ່ເຮົາ, ຕໍ່ຈາກນັ້ນໄປ ເຮົາກໍ່ໄປເຮັດວຽກການທຸກວັນ , ເວັ້ນແຕ່ວັນອາທິດ ແລະ ວັນພັກ. ວຽກຂອງເຈົ້າແຂວງບໍ່ມີຫຼາຍທໍ່ວຽກຂອງເຈົ້າເມືອງວຽງ ຈັນ. ທຸກວຽກແມ່ນທ່ານເລຂີດ້ງເອົາມາປຶກສາ ແລະ ຕົກລົງແບ່ງກັນເຮັດ. ອັນໃດພົວພັນ ເຖິງພະແນກໂຍທາ, ສາທາລະນະສຸກ, ສຶກສາ, ປົວສັດ, ທະຫານ, ຕຳຫຼວດ, ແຂວງ ຕ່າງໆ ແລະ ວຽງຈັນ ແມ່ນທ່ານເລຂີດ້ງກຳກັບ ແລະ ເຊັນໂດຍກົງ. ອັນໃດພົວພັນເຖິງ ວຽກຂອງເຈົ້າເມືອງຕ່າງໆດີ ເຮັດສຳມະໂນຄົວ, ເກັບເງິນສ່ວຍ, ຄ່າໄຖ່ການ, ການເກນ ກູລີ ຫຼື ເກນສະບຽງອາຫານມາລ້ຽງຕົວເມືອງ ແມ່ນເຈົ້າແຂວງເຊັນເອງ, ແຕ່ວ່າກ່ອນຈະ ຕົກລົງບັນຫາໃດກໍ່ຕ້ອງຖາມຄຳເຫັນດີຂອງທ່ານເລຂີດ້ງກ່ອນ, ເພື່ອໃຫ້ເຂົາຮັບຜິດຊອບ ນຳ ກັນ ແລະ ຫຼີກເວັ້ນການຮ້າຍດ່າທີ່ເຮົາເຄີຍໄດ້ພົບພໍ້ໃນໄລຍະທີ່ເຮັດວຽກຢູ່ແຂວງອື່ນ. ເຮັດ ວຽກແບບນີ້ເຮົາເຫັນວ່າເປັນການເບົາບາງ, ບໍ່ສັ້ນເປືອງເຫື່ອແຮງ ແລະບໍ່ອິນສະໝອງປານ ໃດ. ມັນຄ້າຍຄືກັນກັບເວລາເຮົາເປັນເຈົ້າເມືອງຢູ່ຊຽງຂວາງ ແຕ່ພັດມີຖານະສູງກວ່າ, ໄດ້ ຮັບເງິນເດືອນຫຼາຍກວ່າ ແລະ ມີເວລາວ່າງເພື່ອໂອ້ລົມກັບບັນດາຂາລາຊະການ, ຕາແສງ, ນາຍບ້ານ ແລະ ປະຊາຊົນຫຼາຍກວ່າ. ໄລຍະນີ້ເປັນໄລຍະທີ່ເຮົາມີຄວາມສະບາຍໃຈກວ່າ ເວລາຢູ່ວຽງຈັນຫຼາຍ.

ຕັ້ງແຕ່ເຮົາເສັງນາຍພາສາໄດ້ ເຮົາກໍ່ມີຄວາມດີໃຈຫຼາຍ ເພາະວ່າໃນສະໄໝນັ້ນເພິ່ນ ຖືກັນວ່ານາຍພາສາມີຖານະດີ ແລະ ເງິນເດືອນກໍ່ສູງກວ່າຂາລາຊະການພະແນກອື່ນ.ແຕ່ວ່າ ເຮົາຍັງບໍ່ທັນພໍໃຈຢ່າງສຸດໃຈແທ້ ເພາະວ່າຕຳແໜ່ງນາຍພາສາແມ່ນຂາລາຊະການ ຊັ້ນກາງ (cadre secondaire) ເຮົາຍັງຢາກບິນຂຶ້ນສູງຕື່ມອີກ ; ດ້ວຍເຫດນັ້ນ ເຮົາຈຶ່ງ ຕັ້ງໃຈຮ່ຳຮຽນເພື່ອຈະໄປເສັງເອົາຊັ້ນກອມມີ (commis) ທີ່ເປັນຂາລາຊະການ ຊັ້ນສູງ (cadre supérieur) ; ແຕ່ວ່າການສອບເສັງດັ່ງກ່າວນັ້ນ ໄດ້ເລື່ອນໄປທຸກໆປີເຮັດ ໃຫ້ເຮົາບໍ່ມີໂອກາດຈະໄດ້ເສັງອີກ. ເຮົາຂໍປ່ຽນໄປເຮັດການໃນຝ່າຍປົກຄອງ ໄດ້ຊັ້ນອຸປະ ຮາດເຮົາກໍ່ພໍໃຈ ເພາະວ່າເວລານັ້ນເຮົາຍັງມີອາຍຸພຽງ 26 ປີ ແລະມີຫວັງຈະຂຶ້ນເຖິງຊັ້ນ ເຈົ້າເມືອງໄດ້. ເມື່ອເຮົາເສັງເອົາເຈົ້າເມືອງຊັ້ນ 5 ໄດ້ ກໍ່ຍິ່ງເຮັດໃຫ້ເຮົາດີໃຈຫຼາຍຂຶ້ນ ຕື່ມອີກ. ຫຼັງຈາກນັ້ນມາ ເຮົາຖືກແຕ່ງຕັ້ງໄປເປັນເຈົ້າເມືອງວຽງຈັນ ເຮົາກໍ່ຮູ້ວ່າວຽກການ ຈະຫຼາຍ ແຕ່ເຮົາກໍ່ດີໃຈເພາະວ່າເຮົາຖືວ່າເປັນກຽດໃຫ້ແກ່ເຮົາ ທີ່ໄດ້ໄປເປັນ ເຈົ້າເມືອງ

ປົກຄອງນະຄອນຫຼວງຂອງລາວ ໃນເວລາທີ່ເຮົາຫາກໍ່ມີອາຍຸພຽງ 33 ປີ. ເວລາເຮົາຖືກແຕ່ງຕັ້ງໄປເປັນເຈົ້າແຂວງຫົວພັນ ເຮົາຮູ້ສຶກວ່າຍອດສູງແຫ່ງຄວາມປາຖະໜາຂອງເຮົາບັນລຸຜົນແລ້ວ ; ເພາະວ່າຕະຫຼອດຊົ່ວຊີວິດເຮັດການຂອງເຮົານັ້ນ ເຮົາມີແຕ່ແນວຄິດຢາກເລື່ອນຊັ້ນຂຶ້ນເຖິງຂັ້ນສູງສຸດ, ຢາກໃຫ້ໄດ້ເພີ່ມເງິນເດືອນຫຼາຍຂຶ້ນເລື້ອຍ ແລະ ຢາກໄດ້ກາຄຳຊອບຫຼາຍໜ່ວຍເພື່ອສະແດງເປັນໜ້າເປັນຕາຕໍ່ໝູ່ຄູ່ ແລະ ເມື່ອອາຍຸແກ່ມາແລ້ວ ໃຫ້ໄດ້ກິນເບັ້ຍບຳນານຫຼາຍເພື່ອພັກຜ່ອນຢູ່ໃນເຮືອນຂອງໂຕເອງເທົ່ານັ້ນ.

III. ບັ້ນຍີ່ປຸ່ນມາໄລ່ຝະລັ່ງ

ໃນເດືອນກຸມພາ 1945 ເຮົາໄດ້ໄປສາລະວົດຮ່ວມກັບທ່ານເລຊີດັງທີ່ເມືອງແອດຊຽງຄໍ້; ມັນເປັນໂອກາດດີໃຫ້ເຮົາໄດ້ພົບກັບເຈົ້າເມືອງ, ຂາລາຊະການ, ຕາແສງນາຍບ້ານ ແລະ ປະຊາຊົນທ້ອງຖິ່ນເປັນເທື່ອທຳອິດ. ການໄປມາກໍ່ມີຄວາມສະດວກ ເພາະວ່າໄດ້ຮ່ວມໄປນຳລົດຂອງທ່ານເລຊີດັງເອງ.

ມາຮອດຕົ້ນເດືອນມີນາ ທ່ານເລຊີດັງໄດ້ຊວນເຮົາໄປສາລະວົດທາງຕາແສງບ້ານເຮົາ, ເມືອງຊຳເໜືອອີກ. ເຮົາກໍ່ຕອບຮັບໄປນຳ. ເທື່ອນີ້ແມ່ນຂີ່ມ້າໄປຕາມທາງນ້ອຍ, ຂຶ້ນພູລົງພູຫຼາຍເທື່ອ, ນອນທາງຄືນໜຶ່ງຮອດບ້ານເຮົາ. ໄປຮອດບ້ານນີ້ ທ່ານເລຊີດັງພັກເຊົານອນຢູ່ນຳເຮືອນຕາແສງ ເພື່ອເອົາປືນໃຫ້ປະຊາຊົນໄປຍິງກວາງມາໃຫ້. ສ່ວນເຮົາກັບສະໝຽນຕາແສງໄດ້ພາກັນໄປນອນບ້ານເດີມເພື່ອຢ້ຽມຢາມປະຊາຊົນ. ຕື່ນມື້ເຊົ້າແມ່ນວັນທີ 11/3/45 ເຮົາກັບມາບ້ານເຮົາເລີຍບໍ່ເຫັນທ່ານເລຊີດັງແລ້ວ, ເຂົາຂຽນຈົດໝາຍນ້ອຍປະໄວ້ ໃຫ້ເຮົາບອກວ່າ ເຂົາໄດ້ຮັບຈົດໝາຍດ່ວນຈາກຊຳເໜືອ ຈຳເປັນຕ້ອງກັບເມືອແຕ່ເຊົ້າ, ເຮົາມາຮອດແລ້ວໃຫ້ຮີບກັບເມືອຫາເຂົາ. ເຮົາຮີບມັດຮຽນເຄື່ອງຂອງແລ້ວອອກເດີນທາງກັບໂລດ. ວັນທີ 12/3/45 ຕອນບ່າຍເຮົາໄປຮອດຊຳເໜືອ, ເລີຍແວ່ພັກທີ່ເຮືອນທ່ານເລຊີດັງ ເພື່ອຖາມຫາເຫດການ, ທ່ານມັກເດີໂວເອົາໂທລະເລກປິດລັບຂອງທ່ານຜູ້ໃຫຍ່ວຽງຈັນ ໃຫ້ເຮົາເບິ່ງທັງເຕືອນໃຫ້ເຮົາຮັກສາຄວາມລັບ. ໂທລະເລກສະບັບນັ້ນບອກວ່າ ທະຫານຍີ່ປຸ່ນໄດ້ເຂົ້າຢຶດເອົາເມືອງທ່າໂນ່ຍ ແຕ່ເຊົ້າວັນທີ 9/3/45, ເຂົາໄດ້ຈັບຝະລັ່ງຫຼາຍຄົນ, ພວກຝະລັ່ງທີ່ໂຕນໜີພົ້ນໄດ້ເດີນທາງມາສູ່ທິດຊຳເໜືອ, ໃຫ້ທ່ານເລຊີດັງແຕ່ງຄົນອອກໄປລັດຕ້ອນ ເອົາສົ່ງໄປທາງເມືອງຮີບ ເພື່ອໄປໂຮມກັນຢູ່ເຊີມ້າວ ປະເທດຈີນ.

ຕໍ່ຈາກນັ້ນມາ ບ້ານເມືອງໄດ້ປົກຄຸມໄປດ້ວຍຄວາມງຽບເຫງົາ ເຊິ່ງບໍ່ມີປະຊາຊົນຜູ້ໃດຈະເຂົ້າໃຈເຫດຜົນ. ພວກຝະລັ່ງຂຸ້ນຂ້ຽວກຽມເຄື່ອງຂອງຢ່າງມິດງຽບ. ຫຼັງຈາກນັ້ນສອງສາມມື້ຄວາມລັບໄດ້ແຕກອອກ. ພວກຝະລັ່ງທີ່ໂຕນມາຈາກຫວຽດນາມ ໄດ້ລັດປ່າລັດພູມາຮອດຊຳເໜືອດ້ວຍໂສ້ງເສື້ອອັນຂາດສ້ອຍ ແລະ ອຶດເຂົ້າຫິວໂຫຍ. ທ່ານເລຊີດັງ ໄດ້ສັ່ງໃຫ້

ພວກເຂົາພັກຜ່ອນນື້ໜຶ່ງ, ເອົາເຄື່ອງນຸ່ງ, ເກີບໝວກ ແລະສິ່ງຂອງທີ່ຕ້ອງການ ມາເບີກໃຫ ແລ້ວ ກໍ່ໃຫ້ພວກເຂົາຄ່ອຍທະຍອຍກັນອອກເດີນທາງໄປເມືອງຣິບ ເພື່ອຈະໄປເຊີນ້າວ ຕາມຄຳສັ່ງ. ທ່ານເລຊີດັ້ງໄດ້ຈອບອອຍເອົາເຮົາເອງ ແລະ ຂ້າລາຊະການລາວຫຼາຍຄົນ ໃຫ້ໜີໄປນຳເພິ່ນ ໂດຍອ້າງເຫດຜົນວ່າຈະບໍ່ໄປໄກ, ວ່າບໍ່ເຫິງຍີ່ປຸ່ນຈະປະລາໄຊ ແລະ ເມື່ອຍີ່ປຸ່ນປະລາໄຊແລ້ວ ພວກເຮົາຈະໄດ້ກັບມາດ້ວຍຍົດສັກ ແລະ ຖານະສູງກວ່າເກົ່າຫຼາຍເທົ່າ. ມີແຕ່ນາຍພໍປົວສັດຜູ້ໜຶ່ງໄປນຳເຂົາ, ນອກຈາກນັ້ນບໍ່ມີໃຜໄປນຳ ໂດຍອ້າງເຫດຜົນວ່າ ພວກເຮົາຈຳເປັນຢູ່ເພື່ອປົກຄອງປະຊາຊົນ ບໍ່ໃຫ້ຍີ່ປຸ່ນເຂັ່ນຂ້າຮາວີ ແລະ ບໍ່ໃຫ້ປະຊາຊົນແຕກຕື່ນວຸ່ນວາຍ. ຝ່າຍຄົນຝະລັ່ງທີ່ເປັນນາຍທະຫານຂຽວ ກໍ່ຍົວະເຍົ້າ ແລະ ບັງຄັບເອົານາຍແລະພົນທະຫານໄປນຳ. ມີນາຍທະຫານຊັ້ນນາຍຈ່າ ແລະ ພົນທະຫານສອງກອງຮ້ອຍໄປນຳເຂົາ, ສ່ວນພວກອື່ນພາກັນໂຕນໜີເມືອບ້ານໝົດ. ພວກສອງກອງຮ້ອຍທີ່ໄປນຳຝະລັ່ງນັ້ນ ໄປເຖິງກາງທາງມີຫຼາຍຄົນເຮັດຕັ້ງຕີເຈັບຕີນ, ເຈັບຫົວ ຫຼື ໄຂ້ນອນເຮ່ຍຮວາຍໄປຕາມທາງ, ທ້າຍສຸດກໍ່ລັກໂຕນໜີກັບຄືນເມືອບ້ານໝົດ.

ວັນທີ 11/4/45 ກອງທະຫານຍີ່ປຸ່ນມາຮອດສີບຮາວ, ວັນທີ 12/4/45 ພວກເຂົາມາຮອດເມືອງປົວ, ວັນທີ 13/4/45 ທ່ານເລຊີດັ້ງພ້ອມດ້ວຍຝະລັ່ງທຸກຄົນ ໜີອອກຈາກຊຳເໜືອໄປນອນຢູ່ບ້ານປຸ່ງ ແລະ ໄດ້ສັ່ງໃຫ້ເຮົາລາຍງານສະພາບການໄປໃຫ້ເປັນປົກກະຕິ. ມື້ດຽວກັນນັ້ນພວກຍີ່ປຸ່ນມາຮອດເມືອງລຽດ. ມື້ລຸນມາເປັນວັນທີ 14/4/45 ພວກຝະລັ່ງຍ້າຍໄປນອນຫົວຊຽງ ແລະ ພວກຍີ່ປຸ່ນເຂົ້າມາຊຳເໜືອ. ພວກເຮົາໄດ້ຈັດເອົາຂ້າລາຊະການແລະປະຊາຊົນໄປຕ້ອນຮັບເຂົາທີ່ນາວຽງ, ໄດ້ເວົ້ານຳເຂົາວ່າ ພວກເຮົາທັງໝົດ ຍິນດີຕ້ອນຮັບກອງທະຫານຍີ່ປຸ່ນ ທີ່ເຂົ້າມາຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ແລະ ປົດປ່ອຍເອົາ ປະຊາຊົນແຂວງຫົວພັນ ແລະ ວ່າພວກເຮົາຍິນດີຮ່ວມມືກັບຍີ່ປຸ່ນໃນການປາບປາມພວກຝະລັ່ງ ແລະ ສ້າງສາບ້ານເມືອງ. ເມື່ອເຂົ້າມາຮອດບ່ອນພັກແລ້ວ ແມ່ທັບຜູ້ບັນຊາກອງທະຫານຍີ່ປຸ່ນ ໄດ້ເວົ້ານຳພວກເຮົາວ່າ ພວກຝະລັ່ງໝົດສິດອຳນາດຢູ່ທົ່ວອິນດູຈີນແລ້ວ, ກອງທັບຍີ່ປຸ່ນໄດ້ມາໄລ່ພວກຝະລັ່ງເພື່ອປົດປ່ອຍປະເທດຕ່າງໆໃນທ້ອງຖິ່ນອິນດູຈີນເປັນເອກະລາດ, ກອງທັບຍີ່ປຸ່ນເຂົ້າມາຊຳເໜືອແມ່ນເພື່ອຊ່ວຍໃຫ້ຄົນລາວ ໃນແຂວງນີ້ເປັນເຈົ້າດິນແດນແຂວງນີ້, ທາງດ້ານການປົກຄອງນັ້ນ ຍີ່ປຸ່ນບໍ່ປ່ຽນແປງຫຍັງ ຂໍແຕ່ໃຫ້ເຈົ້າແຂວງ, ຂ້າລາຊະການ ແລະ ປະຊາຊົນທັງໝົດຮ່ວມມືກັບກອງທັບຍີ່ປຸ່ນ ໃນການກວາດລ້າງພວກຝະລັ່ງ ແລະ ລູກມືຂອງມັນອອກຈາກແຂວງນີ້ໃຫ້ໝົດ, ຂາຍສະບຽງອາຫານໃຫ້ແກ່ກອງທັບຍີ່ປຸ່ນຕາມຄວາມຕ້ອງການ ແລະ ເກນເອົາຄົນມາຊ່ວຍກອງທະຫານຍີ່ປຸ່ນຂຸດທາງລົດຕິດຕໍ່ ແຕ່ຊຳເໜືອໄປຫາແຂວງຊຽງຂວາງ ໄວທີ່ສຸດເທົ່າທີ່ຈະໄວໄດ້ໂດຍແມ່ນກອງທັບຍີ່ປຸ່ນຈະຈ່າຍເງິນຄ່າແຮງງານໃຫ້ຕາມລະບຽບ . ສ່ວນການພົວພັນຮ່ວມມືກັນແນວໃດນັ້ນຂໍໃຫ້ທ່ານເຈົ້າແຂວງ, ເຈົ້າເມືອງ ແລະ ເຈົ້າໜ້າທີ່

ລາວເປີກສາກັນ ແລ້ວຈຶ່ງມາສະເໜີຕໍ່ແມ່ທັບຜູ້ບັນຊາການທະຫານຍີ່ປຸ່ນ.

ເວລານັ້ນເປັນເວລາວຶ້ນວຸ່ນສະໝອງໃຫ້ແກ່ເຮົາຫຼາຍທີ່ສຸດ ; ມາປະຊຸມກັບເຈົ້າເມືອງ ແລະຂ້າລາຊະການອື່ນກໍບໍ່ມີຜູ້ໃດອອກຄຳເຫັນ ອັນມີລັກສະນະກໍ່ສ້າງແນວໃດ ; ຜູ້ໃດກໍ່ມີແຕ່ວ່າສຸດແລ້ວແຕ່ທ່ານເຈົ້າແຂວງຈະສັ່ງ, ໃຜກໍຍິນດີປະຕິບັດຕາມ. ຂ້າລາຊະການ ແລະ ປະຊາຊົນລາວທົ່ວເມືອງຊຳເໜືອ ລ້ວນແຕ່ຢ້ານຍີ່ປຸ່ນເພາະວ່າ ໃຜໆກໍ່ໄດ້ເຮັດວຽກຮັບໃຊ້ຝະລັ່ງມາແລ້ວ, ຢ້ານແຕ່ຍີ່ປຸ່ນຈະສົງໄສ, ຢ້ານແຕ່ຄົນລາວ, ຄົນຫວຽດນາມ ແລະ ຄົນຈີນທີ່ຢາກສວຍໂອກາດຍາດເອົາຄວາມດີຈາກຍີ່ປຸ່ນ ຈະໄປຟ້ອງວ່າຜູ້ນັ້ນນິຍົມຝະລັ່ງ , ຜູ້ນັ້ນເວົ້າບໍ່ດີໃສ່ຍີ່ປຸ່ນ ແລ້ວຈະມີຄົນຖືກຈັບ ຫຼື ຖືກຂ້າຢ່າງບໍ່ມີການສືບສວນຕັດສິນ, ເພາະວ່າບັດນີ້ບ້ານເມືອງຂອງເຮົາຕົກຢູ່ໃນສະພາບສົງຄາມແລ້ວ.

ທົ່ວເມືອງຊຳເໜືອຖືກປົກຄຸມໄປດ້ວຍບັນຍາກາດອັນມືດງຽບ ທີ່ເຕັມໄປແຕ່ແນວຄິດຫວັ່ນໄຫວຢ້ານກົວ. ປະຊາຊົນຕົວເມືອງພາກັນຊອກທາງໜີອອກໄປລີ້ຢູ່ນຳພີ່ນ້ອງ ຕາມບ້ານນອກທາງໄກ ນັບມື້ນັບຫຼາຍຂຶ້ນ. ຖ້າປ່ອຍໃຫ້ສືບຕໍ່ເປັນໄປແນວນັ້ນ ພວກຍີ່ປຸ່ນກໍ່ຈະເຫັນວ່າຍ້ອນພວກເຂົາມາຢູ່ຊຳເໜືອ ປະຊາຊົນເມືອງຊຳເໜືອເຊິ່ງແຕ່ກ່ອນມີຢູ່ເປັນຈຳນວນຫຼາຍນັ້ນ ມາບັດນີ້ຈຶ່ງມີຈຳນວນນ້ອຍລົງ ແລ້ວກໍ່ຈະລະແວງສົງໄສພວກເຮົາ, ຈະເຂົ້າໃຈວ່າ ປະຊາຊົນລາວໜີໄປຮ່ວມມືກັບຝະລັ່ງ ແລະຈະເຮັດຮ້າຍໃສ່.

ຫຼັງຈາກເປີກສານຳເຈົ້າເມືອງ ແລະ ຂ້າລາຊະການພະແນກການຕ່າງໆ ທີ່ເຫັນດີນຳແລ້ວ, ເຮົາໄດ້ເຂົ້າໄປຫາແມ່ທັບຜູ້ບັນຊາການກອງທັບຍີ່ປຸ່ນ ເພື່ອສ້າງຄວາມເຂົ້າໃຈ ແລະຄວາມເຊື່ອໝັ້ນຕໍ່ກັນ. ເຮົາໄດ້ລາຍງານສະພາບການບ້ານເມືອງໃຫ້ເຂົາຟັງ ແລະ ສະເໜີແຜນການຮ່ວມມືກັນໃນຂັ້ນຕໍ່ໄປ. ການເວົ້າລົມກັນແມ່ນເຮັດຜ່ານນາຍພາສາຄົນຫວຽດນາມທີ່ນຸ່ງເຄື່ອງແບບທະຫານຍີ່ປຸ່ນມານຳກອງທະຫານຍີ່ປຸ່ນ. ພວກນາຍທະຫານຍີ່ປຸ່ນໄດ້ສ້ຖາມເຮົາຫຼາຍແນວ ກ່ຽວກັບການກະທຳຂອງພວກຝະລັ່ງໃນເວລາພວກເຂົາປົກຄອງລາວ, ກ່ຽວກັບການກະກຽມປ້ອງກັນຕົວຂອງພວກຝະລັ່ງ ເວລາຮູ້ຂ່າວວ່າຍີ່ປຸ່ນຈະມາເຖິງ, ກ່ຽວກັບເສັ້ນທາງໄປຂອງພວກຝະລັ່ງ ເວລາພວກເຂົາໜີຈາກຊຳເໜືອ, ກ່ຽວກັບບ່ອນຢູ່ຂອງພວກຝະລັ່ງຫຼືນັກສືບຂອງເຂົາໃນເວລານີ້ ແລະ ກ່ຽວກັບມາດຕາການທີ່ພວກເຮົາກະກຽມ ເພື່ອຮັບປະກັນຄວາມປອດໄພ ໃຫ້ແກ່ກອງທະຫານຍີ່ປຸ່ນທີ່ຕົວເມືອງຊຳເໜືອ ແລະ ທົ່ວແຂວງຫົວພັນ.

ເມື່ອໄດ້ຟັງຄຳຕອບຂອງເຮົາຢ່າງພໍໃຈແລ້ວ ແມ່ທັບຍີ່ປຸ່ນທີ່ມີຊື່ວ່າ ຢາມາກິ ແລະຜູ້ຮອງຊື່ວ່າ ນາມິກິ ໄດ້ຢືນຢັນຕື່ມອີກເທື່ອໜຶ່ງວ່າ ກອງທັບຍີ່ປຸ່ນເຂົ້າມາເມືອງລາວ ແມ່ນມາຂັບໄລ່ພວກຝະລັ່ງ, ຊ່ວຍໃຫ້ລາວເປັນເອກະລາດ, ຊ່ວຍໃຫ້ລາວສ້າງສາບ້ານເມືອງ ຢູ່ໃນວົງໄພບູນອາຊີຕາເວັນອອກ. ວຽກທີ່ກອງທັບຍີ່ປຸ່ນຈະຕ້ອງເຮັດແມ່ນກວາດລ້າງພວກຝະລັ່ງໃນແຂວງຫົວພັນນີ້ໃຫ້ໝົດກ້ຽງ ເຮັດໃຫ້ບ້ານເມືອງມີຄວາມສະຫງົບ ແລະ ແມ່ນຈະຕ້ອງລົງມື ຂຸດທາງ

ຖະໜົນແຕ່ຊຳເໜືອໄປຫາແຂວງຊຽງຂວາງ ; ຂໍໃຫ້ທ່ານເຈົ້າແຂວງຊ່ວຍບອກໃຫ້ ປະຊາຊົນມາລົງຕະຫຼາດຂາຍສະບຽງອາຫານໃຫ້ທະຫານຍີ່ປຸ່ນກິນ ແລະ ຂໍໃຫ້ທ່ານເຈົ້າແຂວງ ເກນເອົາຄົນຖ້ຽວລະ 100 ຄົນ ມາຮ່ວມກັບທະຫານຍີ່ປຸ່ນຂຸດທາງໄປຊຽງຂວາງ ; ໂດຍແມ່ນແມ່ທັບຍີ່ປຸ່ນຈະຈ່າຍເງິນຄ່າແຮງງານໃຫ້ເອງ. ເຮົາໄດ້ຕອບວ່າຍິນດີຮ່ວມມືກັບແມ່ທັບຍີ່ປຸ່ນເຮັດສາມວຽກໃຫຍ່ດັ່ງກ່າວນັ້ນ, ນອກຈາກນັ້ນ ຖ້າຫາກມີວຽກອື່ນອີກທີ່ເປັນປະໂຫຍດໃຫ້ແກ່ທັງສອງຝ່າຍ ແມ່ນເຮົາກຽມພ້ອມຈະຮ່ວມມືກັບກອງທັບຍີ່ປຸ່ນທຸກເວລາ. ອາໄສໂອກາດນັ້ນເຮົາໄດ້ສະເໜີຕໍ່ແມ່ທັບຍີ່ປຸ່ນວ່າ ເພື່ອຄວາມປອດໄພໃຫ້ແກ່ທັງສອງຝ່າຍ ແລະແກ່ບ້ານເມືອງນັ້ນ ຂໍໃຫ້ທຸກຄົນທີ່ຢາກເຂົ້າມາຫາກອງທັບຍີ່ປຸ່ນຢູ່ຊຳເໜືອນັ້ນຕ້ອງໃຫ້ຜ່ານໂຮງການເຈົ້າແຂວງກ່ອນ, ເຮົາຈະຖາມຫາຊີວະປະຫວັດຂອງຜູ້ກ່ຽວ ແລະ ເຫດຜົນທີ່ຢາກເຂົ້າພົບກອງທັບຍີ່ປຸ່ນເສຍກ່ອນ, ເມື່ອເຫັນສົມຄວນແລ້ວຈຶ່ງຈະອະນຸຍາດໃຫ້ເຂົ້າພົບ ; ເພື່ອຮັບປະກັນຄວາມສັກສິດຂອງວິທີການນັ້ນ ເຮົາສະເໜີຫຍິບແຖບຜ້າສີແດງເຕັງສີຂາວ 20 ອັນ ໂດຍແມ່ນແມ່ທັບຍີ່ປຸ່ນ ແລະ ເຈົ້າແຂວງເຊັນຊື່ຕີກາໃສ່ໄວ້ ; ຖ້າຜູ້ໃດຫາກຖືແຖບຜ້າອັນນີ້ ມັດໃສ່ແຂນເບື້ອງຊ້າຍແລ້ວຈຶ່ງໃຫ້ທະຫານຍາມຍີ່ປຸ່ນອະນຸຍາດໃຫ້ເຂົ້າພົບກອງທະຫານຍີ່ປຸ່ນໄດ້. ແມ່ທັບຍີ່ປຸ່ນເຫັນດີ ແລະ ຮັບວ່າຈະເອົາເຜີຍແຜ່ໃຫ້ກອງທະຫານຮູ້ທຸກຄົນເພື່ອປະຕິບັດ.

ແມ່ທັບຍີ່ປຸ່ນໄດ້ຖາມເຮົາອີກວ່າ ຢູ່ທາງຂ້າງເຮືອນພັກຂອງເຂົານັ້ນມີຄຸກຫຼັງໜຶ່ງ, ມີນັກໂທດທີ່ພວກຝະລັ່ງເອົາໄປກັກຂັງໄວ້ຫຼາຍ, ດຽວນີ້ແມ່ທັບຍີ່ປຸ່ນຢາກປ່ອຍອອກ, ທ່ານເຈົ້າແຂວງຈະເຫັນແນວໃດ. ເມື່ອເຮົາຕອບວ່າເຫັນດີ ແລ້ວເຂົາກໍ່ເອົາທະຫານຈຳນວນໜຶ່ງ ມາລວມກັນແລ້ວ ພວກເຮົາກໍ່ພາກັນໄປໂຮມນັກໂທດທຸກຄົນຢູ່ໃນຄຸກ, ອົບຮົມສັ່ງສອນໃຫ້ຄຽດຊັງຝະລັ່ງ ແລະ ໃຫ້ທຳມາຫາກິນຢ່າງຖືກກົດໝາຍ ແລະ ຖືກຕາມຮີດຄອງປະເພນີ ຂອງບ້ານເມືອງ ແລ້ວກໍ່ໄຂປະຕູປ່ອຍນັກໂທດທຸກຄົນໃຫ້ກັບຄືນເມືອບ້ານເຮືອນຂອງໃຜລາວ, ເຮັດໃຫ້ນັກໂທດທັງໝົດນັ້ນຮ້ອງໂຮສະແດງຄວາມດີໃຈ ແລະ ຂອບໃຈຕໍ່ກອງທະຫານຍີ່ປຸ່ນ. ນັ້ນກໍ່ເປັນການແບ່ງເບົາພາລະຂອງເຮົາ ທີ່ຕ້ອງລ້ຽງອາຫານແຕ່ລະວັນໃຫ້ນັກໂທດຈຳນວນ ຮ້ອຍຊາວກວ່າຄົນນັ້ນ.

ທ່ານເລຊິດັງດີໂວ ທີ່ຄອຍຖອຍໄປເທື່ອລະກ້າວ, ຄືຈາກຊຳເໜືອໄປພັກຢູ່ບ້ານປຸ່ງ , ຈາກບ້ານປຸ່ງໄປພັກຢູ່ຫົວຊຽງ, ໄປຮອດບ່ອນໃດເຂົາກໍ່ແຕ່ງຄົນຂີ່ມ້າມາຖາມເອົາ ລາຍງານສະພາບການນຳເຮົາ, ເຮັດໃຫ້ເຮົາບໍ່ຫຸ່ນຫ່ຽງ ເພາະຢ້ານຍີ່ປຸ່ນຮູ້ຈະເປັນອັນຕະລາຍແກ່ຕົວເຮົາເອງ. ເທື່ອສຸດທ້າຍນັ້ນເຮົາລາຍງານວ່າຍີ່ປຸ່ນເຂົ້າມາຕັ້ງຢູ່ຊຳເໜືອຢ່າງແໜ້ນໜາແລ້ວ, ມີຈຳນວນພົນປະມານ 4 ກອງພັນ. ພວກເຂົາພວມກຽມຈະອອກໄປກວາດລ້າງ ເພື່ອຊອກຈັບເອົາຄົນຝະລັ່ງ. ພວກເຂົາຈະໄປ 3 ດ້ານຄື : ຊຳເຕ້, ຫົວເມືອງ ແລະ ເມືອງຊ່ອນ . ໃຫ້ທ່ານເລຊິດັງ ແລະ ພັກພວກຮີບໜີໄປໄວໆ ແລະ ຢ່າຊູ່ແຕ່ງຄົນມາຫາເຮົາອີກ ເພາະຄົນ

ຜູ້ນັ້ນຈະຖືກຍີ່ປຸ່ນຈັບ ແລະ ຕົວເຮົາເອງກໍ່ຈະບໍ່ປອດໄພ. ຕັ້ງແຕ່ນັ້ນມາ ທ່ານເລຊີດັ່ງເດີໂວ ກໍ່ບໍ່ຕິດຕໍ່ກັບເຮົາອີກ. ເຮົາພ້ອມກັບເຈົ້າເມືອງແຕ່ລະເມືອງ ແລະ ຂ້າລາຊະການພະແນກ ຕ່າງໆຂອງແຂວງ ໄດ້ຮ່ວມມືກັບຍີ່ປຸ່ນ, ຊອກຈັບເອົາພວກຝະລັ່ງທີ່ແຕກໜີມາຈາກຫວຽດນາມ ແລະ ຄົ້ນຊອກເອົາເຄື່ອງຂອງໆຝະລັ່ງທີ່ຝາກໄວ້ນຳປະຊາຊົນນັ້ນ ມາມອບໃຫ້ຍີ່ປຸ່ນ. ພວກ ສະເລີຍເສິກຝະລັ່ງເຫຼົ່ານັ້ນຖືກກອງທະຫານຍີ່ປຸ່ນເອົາມາຮັກສາໄວ້ໄລຍະໜຶ່ງແລ້ວ ກໍ່ເອົາ ເຂົາຂົ້ນລົດການີຍິງສົ່ງກັບຄືນໄປໃຫ້ກອງບັນຊາການທະຫານຍີ່ປຸ່ນທີ່ທ່າໂນ່ຍ. ໃນຊ່ວໄລຍະ 5 ເດືອນກວ່າທີ່ເຂົາປະຈຳຢູ່ແຂວງຫົວພັນນີ້ ພວກຍີ່ປຸ່ນຈັບພວກຝະລັ່ງໄດ້ 58 ຄົນ ແລະຄົ້ນ ຊອກເອົາເຄື່ອງຂອງໆເຂົາເປັນຈຳນວນມາກຫຼາຍ ; ບາງອັນພວກເຂົາກໍ່ເອົາ ເຊັ່ນ ປືນ, ລູກປືນ, ຖ້ວຍ, ຈານ, ຈອກກິນນ້ຳ ແລະ ບາງອັນພວກເຂົາກໍ່ຈູດຖິ້ມ ຫຼື ເອົາໃຫ້ປະຊາ ຊົນຜູ້ເອົາມາສົ່ງໃຫ້ເຊັ່ນ ເຄື່ອງນຸ່ງຫົ່ມ ແລະ ແຜ່ນແພ. ໃນເວລານັ້ນ ບ້ານເມືອງວຽບ ເຫງົາ ແລະ ຖືກປົກຄຸມໄປດ້ວຍບັນຍາກາດອັນວຸ່ນວາຍຢ້ານກົວ. ປະຊາຊົນຜູ້ທີ່ພວກຝະລັ່ງ ເອົາເຄື່ອງຂອງໄປຝາກໄວ້ນຳນັ້ນ ກໍ່ພາກັນຫາບຫາມເອົາເຄື່ອງຂອງເຫຼົ່ານັ້ນ ມາແຈ້ງຕໍ່ ເຈົ້າແຂວງ ເພື່ອເອົາເຄື່ອງໝາຍມັດແຂນ ແລ້ວໃຫ້ພະນັກງານແຂວງພາໄປມອບໃຫ້ແມ່ທັບຍີ່ ປຸ່ນ.

ສ່ວນຕົວເຮົານີ້, ຕັ້ງແຕ່ມີກອງທັບຍີ່ປຸ່ນເຂົ້າມາຕັ້ງຢູ່ແຂວງຫົວພັນແລ້ວ, ແມ່ນມີຈິດໃຈ ເຕັມໄປແຕ່ຄວາມຫຍຸ້ງຍາກສັບສົນຫາທີ່ປຽບບໍ່ໄດ້. ໃຈໜຶ່ງຢ້ານພວກຍີ່ປຸ່ນລະແວງສົງໄສຜູ້ນັ້ນ ຜູ້ນີ້ແລ້ວຈັບເອົາໄປຂັງຖິ້ມຄືດັ່ງມີຂ່າວມາຈາກແຂວງອື່ນ ; ໃຈໜຶ່ງຢ້ານບໍ່ມີເງິນມາຈ່າຍເປັນ ເງິນເດືອນໃຫ້ແກ່ພວກຂ້າລາຊະການ ; ໃຈໜຶ່ງຢ້ານບໍ່ເກນເອົາຄົນມາຂຸດທາງໄປຊຽງຂວາງ ໄດ້ຕາມຈຳນວນທີ່ຍີ່ປຸ່ນຕ້ອງການແລ້ວພວກເຂົາຈະບໍ່ເຊື່ອໃຈ ແລະ ຈະເຮັດຮ້າຍໃສ່ ; ໃຈ ໜຶ່ງຢ້ານປະຊາຊົນຢ້ານກົວແຕກຕື່ນ, ບໍ່ເຮັດໄຮ່ເຮັດນາແລ້ວພວກເຮົາຈະພາກັນອຶດເຂົ້າ, ໃຈ ໜຶ່ງຄິດອຸກອັ່ງຍ້ອນຕິດຕໍ່ກັບໃຜກໍ່ບໍ່ໄດ້ ; ໂຮງສາຍທອງເຊິ່ງແມ່ນຄົນຫວຽດນາມ ເປັນຫົວໜ້າ ຍັງມີສະພາບດີຢູ່, ແຕ່ວ່າຕີສາຍຫາໃຜກໍ່ບໍ່ຕອບ, ບໍ່ຮູ້ຈັກວ່າຢູ່ແຂວງອື່ນເພິ່ນປົກຄອງ ບ້ານ ເມືອງແນວໃດ, ແລະ ອັນທີ່ເຮົາພວມເຮັດຢູ່ໃນເວລານັ້ນ ເປັນການຖືກຫຼືຜິດແນວໃດ. ຍິ່ງ ຄິດຫຼາຍກໍ່ຍິ່ງຫຍຸ້ງ ເພາະບໍ່ມີຜູ້ເພິ່ງພາອາໄສ, ໄປປຶກສາກັບຜູ້ໃດກໍ່ຕອບວ່າ ສຸດແລ້ວແຕ່ ເຮົາ ແລະ ກຽມພ້ອມຈະປະຕິບັດຕາມຄຳສັ່ງຂອງເຮົາທຸກຢ່າງ. ຄິດສຸດທາງແລ້ວ ເຮົາຈຶ່ງ ຕົກລົງວ່າຈະຕ້ອງເຕົ້າໂຮມພວກຂ້າລາຊະການທຸກພະແນກຂອງແຂວງທີ່ມີຢູ່ເວລານັ້ນໃຫ້ພ້ອມ ພຽງສາມັກຄີກັນ, ຮັກສາພວກເຈົ້າເມືອງ, ຕາແສງ, ນາຍບ້ານໄວ້ຄືເກົ່າ, ສືບຕໍ່ປົກຄອງ ບ້ານເມືອງຕາມທີ່ເຄີຍໄດ້ເຮັດມາ, ສືບຕໍ່ເກັບເງິນສ່ວຍສາອາກອນຕາມອັດຕາເກົ່າ ເພື່ອ ມາລ້ຽງພວກຂ້າລາຊະການ, ພ້ອມກັນເຮັດ 3 ໜ້າທີ່ທີ່ແມ່ທັບຍີ່ປຸ່ນໄດ້ບອກໄວ້ ແລະ ພ້ອມ ກັນອົບຮົມປະຊາຊົນທຸກຊົນຊາດຊົນເຜົ່າ ໃຫ້ຕັ້ງໜ້າເຮັດໄຮ່ນາສວນ ແລະ ລ້ຽງສັດຕາມເຄີຍ

ແລະ ບໍ່ໃຫ້ຫາເລື່ອງໄປຟ້ອງກັນຕໍ່ກອງທັບຍີ່ປຸ່ນ. ຫຼັງຈາກຂຽນອອກເປັນແຜນການແລ້ວເຮົາກໍ່ເຕົ້າໂຮມບັນດາຫົວໜ້າພະແນກ ແລະ ຂ້າລາຊະການໃນຂອບເຂດຂອງແຂວງ ແລະເມືອງຊຳເໜືອເພື່ອສະເໜີແຜນການ ແລະ ວຽກຈະຕ້ອງເຮັດເພື່ອຮັບປະກັນຊີວິດການເປັນຢູ່ໃຫ້ທຸກຄົນ ແລະ ປ້ອງກັນຄວາມປອດໄພໃຫ້ແກ່ບ້ານເມືອງ. ເມື່ອທຸກຄົນເຫັນດີຕາມແນວນັ້ນແລ້ວເຮົາກໍ່ອອກຄຳສັ່ງໃຫ້ທຸກພາກສ່ວນໃນທົ່ວແຂວງປະຕິບັດຕາມ. ສະພາບການບ້ານເມືອງເດີນໄປຕາມປົກກະຕິ, ພົນທຸກຄົນມີຄວາມເຊື່ອໝັ້ນ ແລະ ມ່ວນຊື່ນເບີກບານ, ແມ່ທັບຍີ່ປຸ່ນກໍ່ພໍໃຈມອບພຶດທຸກວຽກງານບໍລິຫານໃຫ້ເຈົ້າແຂວງ ແລະ ເຈົ້າເມືອງສືບຕໍ່ເຮັດໄປຕາມທີ່ເຄີຍໄດ້ເຮັດມາ.

ການຂຸດທາງໄປຕາມນ້ຳເນີນ ເປັນວຽກສຳຄັນອັນໜຶ່ງທີ່ແມ່ທັບຍີ່ປຸ່ນເອົາໃຈໃສ່ທີ່ສຸດ ແລະ ພວກເຮົາເອງກໍ່ເຫັນວ່າເປັນປະໂຫຍດ ເພາະມັນຈະເຮັດໃຫ້ພວກເຮົາໄດ້ເສັ້ນທາງລັດ ໄປປ່ອງໃສ່ແຂວງຊຽງຂວາງ ເຊິ່ງໃນສະໄໝຝະລັ່ງປົກຄອງພວກເຮົາເຮັດບໍ່ໄດ້. ອາໄສການຮ່ວມມືຂອງພວກເຈົ້າເມືອງ, ຕາແສງ, ນາຍບ້ານ ພວກເຮົາສາມາດລະດົມເອົາຄົນໄປຂຸດທາງເປັນຈຳນວນຮ້ອຍຫາຮ້ອຍຫ້າສິບຄົນເປັນປົກກະຕິ, ຕື່ມໃສ່ກອງທະຫານຍີ່ປຸ່ນ ກອງພັນໜຶ່ງທີ່ເຂົາມອບໃຫ້ຮ່ວມກັນຂຸດທາງເສັ້ນນີ້. ປະຊາຊົນຜູ້ໜຶ່ງຂຸດທາງ 15 ມື້ ພາຍໃຕ້ການຄຸ້ມຄອງດູແລຂອງພະນັກງານແຂວງ ແລະ ເມືອງ ເຊິ່ງກອງບັນຊາການທະຫານຍີ່ປຸ່ນຈ່າຍເງິນເບ້ຍລ້ຽງໃຫ້ທັງໝົດ, ປະຊາຊົນຜູ້ໜຶ່ງວັນລະ 20 ກີບ ແລະ ພະນັກງານຜູ້ໜຶ່ງວັນລະ 40 ກີບ. ກອງທະຫານຍີ່ປຸ່ນມີເງິນຫຼາຍທີ່ສຸດ, ແຕ່ລະມື້ລົດການີຍັງຂອງພວກເຂົາຂົນເງິນທະນາຄານອິນດູຈີນຂຶ້ນມາຫຼາຍຮ້ອຍຫີບ ເຊິ່ງລ້ວນແຕ່ແມ່ນໃບ 50 ແລະ ໃບ 100 ກີບ ໃໝ່ໆທັງມວນ, ແລະຂົນກະເປົາເຂົ້າຈ້າວຈາກພາກໃຕ້ຫວຽດນາມ ມາແຈກໃຫ້ກອງທະຫານ ຂອງເຂົາ ແລະແກ່ປະຊາຊົນກັບພະນັກງານລາວທີ່ເຮັດທາງນັ້ນກິນ.

ການເຮັດວຽກນຳກອງທະຫານຍີ່ປຸ່ນ ມີຄວາມສະດວກຫຼາຍອັນ, ເປັນຕົ້ນແມ່ນເຂົາບໍ່ກ່ຽວນຳວຽກການປົກຄອງພາຍໃນບ້ານເມືອງເຊິ່ງເຂົາມອບໃຫ້ເຈົ້າແຂວງ ແລະ ເຈົ້າເມືອງກຳກັບເອົາເອງ. ສິ່ງທີ່ເຂົາເອົາໃຈໃສ່ແມ່ນໃຫ້ປ່າວໃຫ້ປະຊາຊົນເອົາຊີ້ນໝູ, ງົວ, ຄວາຍ , ປາ ແລະ ຜັກມາຂາຍທີ່ຕະຫຼາດໃຫ້ທະຫານຍີ່ປຸ່ນໄດ້ຊື້ກິນຕາມລາຄາບ້ານເມືອງ ແລະ ເກນເອົາຄົນໄປເຮັດທາງໄປຊຽງຂວາງຕາມກຳນົດທີ່ກະໄວ້. ເລື່ອງທີ່ກ່າວມານັ້ນ ເຮົາໄດ້ພ້ອມກັນເຮັດເປັນທີ່ພໍໃຈແກ່ແມ່ທັບຍີ່ປຸ່ນ. ແຕ່ສິ່ງທີ່ຍາກໃຈເຮົາຫຼາຍທີ່ສຸດແມ່ນ ກອງທະຫານຍີ່ປຸ່ນໄດ້ປ່ຽນກັນໄປມາລະຫວ່າງຊຳເໜືອ, ຊຽງຂວາງ ແລະ ຫວຽດນາມເດືອນລະເທື່ອ. ນາຍທະຫານຜູ້ມາຮອດໃໝ່ ແລະ ຜູ້ຈະຈາກໄປໄດ້ມາຂໍໃຫ້ເຮົາເຮັດການບາສີມັດແຂນໃຫ້, ເຊີນກິນເຂົ້າແລງ ແລະ ເອົາພວກນາງສາວມາເຕັ້ນແຊ ແລະ ລຳວົງນຳຄືກັນກັບອັນທີ່ພວກເຮົາໄດ້ເຮັດໃຫ້ແມ່ທັບຍີ່ປຸ່ນໃນເວລາເຂົາມາຮອດຊຳເໜືອທຳອິດນັ້ນ. ແມ່ທັບນັ້ນມັກແນວນັ້ນຫຼາຍ

ຈຶ່ງມາສະເໜີໃຫ້ເຮົາເຮັດໃຫ້ຜູ້ອື່ນ ; ເຮັດແນວນັ້ນຈຶ່ງແມ່ນກັງວົນໃຈເຮົາຫຼາຍທີ່ສຸດ ເພາະວ່າດ້ານໜຶ່ງມັນເປັນການສິ້ນເປືອງເງິນເຮົາເອງ, ສິ້ນເປືອງເວລາ ແລະ ລົບກວນຈິດໃຈປະຊາຊົນຫຼາຍ ; ແຕ່ວ່າກັງວົນໃຈປານໃດກໍ່ຕ້ອງເຮັດ ເພື່ອຫຼີກເວັ້ນຄວາມລະແວງສົງໄສຂອງພວກຍີ່ປຸ່ນຕໍ່ພວກເຮົາ ແລະ ຫຼີກເວັ້ນອັນຕະລາຍແກ່ບ້ານເມືອງ.

IV. ບັ້ນຍີ່ປຸ່ນປະລາໄຊ

ມາຮອດເດືອນ 9 ປີ 1945 ເສັ້ນທາງແຕ່ຊຳເໜືອໄປຮອດນ້ຳເນີນ ອັນເປັນຊາຍແດນແຂວງຊຽງຂວາງນັ້ນ ໄດ້ສຳເລັດໃນດ້ານພື້ນຖານ. ແມ່ທັບຍີ່ປຸ່ນກໍ່ພໍໃຈ ໃນການທີ່ວຽກຕົ້ນຕໍຂອງເຂົາສຳເລັດລົງໂດຍບໍ່ມີເຫດຮ້າຍແນວໃດມາເຮັດໃຫ້ເຂົາເດືອດຮ້ອນ. ບັນດາຂ້າລາຊະການພະແນກ ແລະ ຂັ້ນຕ່າງໆພ້ອມທັງປຮຊາຊົນທົ່ວແຂວງຫົວພັນ ກໍ່ດີໃຈ ຍ້ອນຊີວິດການເປັນຢູ່ໄດ້ເປັນປົກກະຕິ ແລະ ບໍ່ມີຜູ້ໃດຖືກກອງທັບຍີ່ປຸ່ນຈັບ ຫຼື ຂ້າຕາຍ ຄືດັ່ງທີ່ເປັນໄປໃນແຂວງອື່ນ.

ໃນທ້າຍເດືອນ 9 ນີ້ ເລີ້ມມີເຫດການຫຼາຍອັນເກີດຂຶ້ນ, ເຮັດໃຫ້ເຮົາກັບມາມີຄວາມກັງວົນໃຈຄືນອີກ. ທົ່ວໂລກໄດ້ປະກາດການປະລາໄຊຂອງພວກຟາດຊິດເຢລະມັນ ແລະອີຕາລີໃນພາກຢູໂລບ ແລະການປະລາໄຊຂອງພວກຟາດຊິດຍີ່ປຸ່ນຢູ່ພາກອາຊີ.ວິທະຍຸກະຈາຍສຽງຍີ່ປຸ່ນໄດ້ກະຈາຍຄວາມຮຽກຮ້ອງຂອງພະເຈົ້າຈັກກະພັດຍີ່ປຸ່ນ ທີ່ຮຽກເອີ້ນເອົາກອງທະຫານຍີ່ປຸ່ນກັບຄືນເມືອປະເທດຂອງເຂົາ. ພ້ອມກັນນັ້ນກໍ່ມີຂ່າວກະຈາຍອອກໄປທົ່ວໂລກວ່າ ທະຫານຈີນຈຽງໄກເຊັກຈະມາປົດອາວຸດຍີ່ປຸ່ນຢູ່ພາກເໜືອ ແລະ ກອງທະຫານອັງກິດ ຈະມາປົດອາວຸດຍີ່ປຸ່ນຢູ່ພາກໃຕ້ຂອງລາວ. ຂ່າວນີ້ໄດ້ເຮັດໃຫ້ນາຍ ແລະ ພົນທະຫານຍີ່ປຸ່ນໂສກເສົ້າຫງ່ອມເຫງົາທີ່ສຸດ. ນາຍທະຫານຍີ່ປຸ່ນ 3 ຄົນໄດ້ຖອດໄລລູກແຕກຂ້າຕົວຕາຍຢູ່ແຄມນ້ຳເນີນ. ນອກຈາກນັ້ນ ພວກເຂົາກໍ່ຖອນໜີກັບຄືນໄປຫວຽດນາມຢ່າງບໍ່ໄດ້ສັ່ງລາໃຜເລີຍ.

ໃນທັນໃດນັ້ນກໍ່ມີຂ່າວວ່າກອງທະຫານຝະລັ່ງກອງຮ້ອຍໜຶ່ງ ມາຮອດເມືອງຮາມ ແລະ ກຽມຈະເຂົ້າສູ່ເມືອງຊຳເໜືອ. ເຮົາບໍ່ຮູ້ຈະແກ້ໄຂແນວໃດຈຶ່ງໄດ້ຮຽກປະຊຸມ ຂ້າລາຊະການທຸກພະແນກ ແລະ ຜູ້ຕາງໜ້າປະຊາຊົນທຸກຊົນຊາດທີ່ຢູ່ໃນເມືອງຊຳເໜືອ ເພື່ອຖາມຄຳເຫັນວ່າພວກເຮົາຈະເຕົ້າໂຮມກຳລັງໄປຕໍ່ສູ້ ຫຼືວ່າຈະປ່ອຍໃຫ້ພວກຝະລັ່ງ ເຂົ້າມາເມືອງຊຳເໜືອ ແລະວ່າການຕົກລົງແຕ່ລະດ້ານຂອງພວກເຮົາ ມັນຈະນຳຄວາມຮ້າຍ ແລະຄວາມດີມາສູ່ພວກເຮົາແນວໃດ. ມີບາງຄົນວ່າຢາກລະດົມເອົາຊາວໜຸ່ມເປັນກຳລັງເພື່ອໄປຕີຝະລັ່ງ,ແຕ່ສຽງສ່ວນຫຼາຍບໍ່ເຫັນດີ ເພາະວ່າພວກເຮົາບໍ່ມີອາວຸດຍຸດທະພັນ ແລະ ຜູ້ບັງຄັບບັນຊາ,ຢ້ານຕີບໍ່ແພ້ແລ້ວຈະນຳເອົາອັນຕະລາຍມາສູ່ບ້ານເມືອງ ແລະ ປະຊາຊົນ. ທ້າຍສຸດ ກອງປະຊຸມກໍ່ເປັນເອກະສັນກັນວ່າຄວນປ່ອຍໃຫ້ພວກຝະລັ່ງເຂົ້າມາຊຳເໜືອດ້ວຍດີ, ຄວນໃຫ້ມີການຈັດ

ຕັ້ງຕ້ອນຮັບເຂົາ ແລະ ຄວນໃຫ້ທຸກຄົນລະມັດລະວັງຢ່າໄປຟ້ອງກັນຕໍ່ຝະລັ່ງ ເພື່ອຫຼີກເວັ້ນການວຸ້ນວາຍທີ່ອາດຈະເກີດຂຶ້ນໄດ້. ເມື່ອກອງປະຊຸມເປັນເອກະສັນກັນແນວນັ້ນ ພວກເຮົາກໍ່ໄດ້ພ້ອມກັນກຽມຕ້ອນຮັບກອງທະຫານຝະລັ່ງ.

ວັນທີ 8/10/45 ເວລາບ່າຍ 2 ໂມງ ກອງທະຫານຝະລັ່ງ ໄດ້ເຄື່ອນເຂົ້າເມືອງຊຳເໜືອ ໂດຍມີຕາແສງນາຍບ້ານ ແລະ ທ້າວຂຸນເມືອງຮາມລ່ວງໜ້າມາກ່ອນ. ຫຼັງຈາກພວກເຮົາຈັດການຕ້ອນຮັບຂຶ້ນເມືອຢູ່ເຮືອນ 3 ແປແລ້ວ. ຜູ້ບັນຊາກອງທະຫານຝະລັ່ງ ຜູ້ຊື່ວ່າກູຍໂຢ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຂອງພວກເຮົາ ແລະ ໄດ້ເວົ້າວ່າ ພວກຟາດຊິດເຢລະມັນ, ອີຕາລີ ແລະ ຍີ່ປຸ່ນ ໄດ້ປະລາໄຊຢ່າງຮາບຄາບໃນທົ່ວໂລກແລ້ວ, ວ່າຕາມຄຳຕົກລົງຂອງຝ່າຍສຳພັນທະມິດນັ້ນ ພວກຝະລັ່ງໄດ້ຖືກແຕ່ງຕັ້ງໃຫ້ເຂົ້າມາປົກຄອງ ອິນດູຈີນຝະລັ່ງເສດຄືນອີກ, ວ່າການປົກຄອງຈະມີການດັດແປງໃຫ້ລາວເປັນເອກະລາດຫຼາຍຂຶ້ນກວ່າແຕ່ກ່ອນ ຕາມຮູບການທີ່ລັດຖະບານຝະລັ່ງ ແລະ ເຈົ້າຊີວິດລາວ ຈະເປີກສາຕົກລົງກັນຕາມຫຼັງ. ວ່າໃນສະເພາະໜ້ານັ້ນແມ່ນໃຫ້ເຈົ້າແຂວງ ແລະ ເຈົ້າເມືອງສືບຕໍ່ປົກຄອງ ບ້ານເມືອງໄປຄືດັ່ງທີ່ເຄີຍເຮັດມາແລ້ວ, ອັນໃດສົງໄສ ຫຼື ແກ້ບໍ່ໄດ້ຈຶ່ງໃຫ້ຖາມຄຳເຫັນ ຂອງຜູ້ບັນຊາການທະຫານຝະລັ່ງ.

ກອງທະຫານຝະລັ່ງທີ່ເຂົ້າມາເມືອງຊຳເໜືອເທື່ອນີ້ ມີທັງໝົດ 24 ຄົນ ແຕ່ເຂົາຫາກເອີ້ນວ່າເປັນກອງຮ້ອຍໜຶ່ງ ມີທ່ານຮ້ອຍເອກກູຍໂຢເປັນຜູ້ບັນຊາ. ອາທິດຕໍ່ມາມີເຮືອບິນເອົາຄົນມາໂດດຈ້ອງລົງຕື່ມ 12 ຄົນ ແລະ ເອົາສະບຽງອາຫານມາຖິ້ມລົງໃຫ້ຕື່ມ, ໃນນັ້ນມີທັງວິທະຍຸນ້ອຍ ແລະ ປືນຈັກຊະນິດນ້ອຍ (mitraillette) ທີ່ເຂົາເອົາມາແຈກໃຫ້ເຈົ້າແຂວງ, ເຈົ້າເມືອງ, ຫົວໜ້າໂຮງໝໍ, ຂ້າລາຊະການ ແລະ ຊາວໜຸ່ມທີ່ເຂົາລະດົມ ເອົາເຂົ້າເປັນທະຫານຫຼາຍຂຶ້ນຈັກໄຊ. ວຽກປະຈຳວັນທີ່ເຂົາເຮັດມີແຕ່ຝຶກແອບທະຫານໃໝ່, ຊອກຄົນຫາທະຫານຍີ່ປຸ່ນທີ່ເຂົາຢ້ານວ່າຈະລີ້ຊ່ອນຢູ່ນຳປະຊາຊົນ ແລະ ສືບສວນ ເພື່ອຊອກຮູ້ວ່າຜູ້ໃດຈະເປັນສອດແນມຂອງຍີ່ປຸ່ນ ແລະ ຂອງຫວຽດນາມ ; ເພາະວ່າເວລານັ້ນ ປະຊາຊົນຫວຽດນາມ ພາຍໃຕ້ການນຳຂອງພັກກອມມູນິດອິນດູຈີນ ອັນມີປະທານໂຫ້ຈິມິນ ເປັນຜູ້ນຳໄດ້ຍຶດອຳນາດ ແລະ ປະກາດການສ້າງຕັ້ງສາທາລະນະລັດ ປະຊາທິປະໄຕຫວຽດນາມຂຶ້ນແລ້ວ. ພວກຂະເຈົ້າຫວ່ານໃບປິວມາຮອດຊຳເໜືອ ເພື່ອຊັກຊວນຄົນທັງຫຼາຍໃຫ້ຕີໄລ່ທັງພວກຟາດຊິດຍີ່ປຸ່ນ ແລະ ພວກລ່າເມືອງຂຶ້ນຝະລັ່ງ ; ໃບປິວນັ້ນເຊັນຊື່ແນວໂຮມຫວຽດມິນ. ແຕ່ວ່າໃບປິວນັ້ນບໍ່ມີສຽງກ້ອງກັງວານກວ້າງຂວາງຢູ່ແຂວງຫົວພັນ, ເພາະວ່າເວລານັ້ນ ຢູ່ເມືອງຊຳເໜືອຍັງບໍ່ທັນມີຜູ້ໃດຈະມີຄວາມຄິດຢາກປົດປ່ອຍຊາດ ຍ້ອນບໍ່ຮູ້ວ່າຈະປົດປ່ອຍແນວໃດ, ປົດປ່ອຍແລ້ວຈະເຮັດຫຍັງ ; ຜູ້ໃດກໍ່ເຂົ້າໃຈວ່າການຕໍ່ສູ້ປົດປ່ອຍຊາດ ເປັນຂອງປະຊາຊົນຫວຽດນາມ ທີ່ພວມເຮັດຢູ່ໃນປະເທດຫວຽດນາມ. ພວກເຮົາລາຍງານການເຂົ້າຊຳເໜືອໄປ

ໃຫ້ລັດຖະບານລາວທີ່ຫຼວງພະບາງ ແລະ ຖາມຄຳເຫັນວ່າ ຈະຄວນເຮັດແນວໃດ ກໍ່ບໍ່ມີໃຜຕອບ.

ແຂວງຫົວພັນເວລານັ້ນ ເປັນຄືປະເທດເອກະລາດນ້ອຍໜຶ່ງ ທີ່ຖືກຕັດຂາດຈາກໂລກພາຍນອກໂດຍສິ້ນເຊີງ, ບໍ່ຮູ້ວ່າຢູ່ແຂວງອື່ນເພິ່ນຢູ່ກິນຕາມແບບໃດ ; ພວກທະຫານຍີ່ປຸ່ນ ທີ່ເສດເຫຼືອຢູ່ຕາມບ້ານນອກຈະມາຫຼອນຕີພວກຝະລັ່ງ ແລະ ປຸ້ນຈີ້ປະຊາຊົນຫຼືບໍ່. ຫຼັງຈາກກອງທະຫານຝະລັ່ງເຂົ້າມາເມືອງຊຳເໜືອແລ້ວ ພວກຄົນຫວຽດນາມກໍ່ຄ່ອຍທະຍອຍກັນລັກໜີໄປປະເທດຫວຽດນາມເກືອບໝົດ. ພະແນກວິທະຍຸໂທລະເລກ, ໄຟຟ້າ, ໂຍທາ ແລະ ໝໍປົວສັດບໍ່ມີຜູ້ຮັບຜິດຊອບ. ປະຊາຊົນເກີດກະວົນກະວາຍ, ທັງຢ້ານຍີ່ປຸ່ນຈະມາຕີປຸ້ນ, ທັງຢ້ານຝະລັ່ງຈະສືບສວນຫາຜູ້ຮ່ວມມືກັບຍີ່ປຸ່ນ ແລ້ວຈັບມາລົງໂທດ. ທັງຢ້ານບໍ່ມີເກືອ ແລະສະບຽງອາຫານຈະກິນ, ຢ້ານບໍ່ມີແພ່ນແພຈະນຸ່ງ ແລະ ບໍ່ມີເຄື່ອງໃຊ້ສອຍທີ່ຈຳເປັນ ເພາະວ່າ ທຸກສິ່ງທຸກຢ່າງດັ່ງກ່າວນັ້ນ ລ້ວນແຕ່ເອົາມາຈາກຫວຽດນາມ. ພວກຂ້າລາຊະການພະແນກຕ່າງໆບໍ່ອຸ່ນອຽນທຸ່ນທ່ຽງ ເພາະຢ້ານວ່າຈະບໍ່ມີເງິນພຽງພໍ ຈ່າຍເງິນເດືອນໃຫ້ຂະເຈົ້າຕໍ່ໄປ, ຈະເອົາໄສ່ພວກຝະລັ່ງກໍ່ບໍ່ໄດ້ ເພາະວ່າພວກເຂົາເອງກໍ່ອາໄສກິນນຳແຕ່ອາຫານ ທີ່ເຮືອບິນມາປ່ອຍຈ້ອງລົງໃຫ້ແຕ່ລະອາທິດເທົ່ານັ້ນ.

ໃນເວລານັ້ນ ເຮົາຟັງວິທະຍຸໄດ້ຍິນວ່າ ທະຫານຝະລັ່ງພາຍໃຕ້ການບັນຊາ ຂອງຮ້ອຍເອກອິມແຟນ (Imfeld) ໄດ້ເຂົ້າໄປຢູ່ເມືອງຫຼວງພະບາງ ບ່ອນເຊິ່ງທະຫານຈີນຈຽງໄກເຊັກໄດ້ມາປົດອາວຸດທະຫານຍີ່ປຸ່ນນັ້ນແລ້ວ, ວ່າພາກໃຕ້ລາວມີທະຫານອັງກິດເຂົ້າມາປົດອາວຸດຍີ່ປຸ່ນ ໄດ້ເອົາກອງທະຫານຝະລັ່ງເຂົ້າມາພ້ອມ ແລະ ວ່າປະຊາຊົນແຂວງວຽງຈັນໄດ້ລຸກຂຶ້ນຍຶດອຳນາດຈາກກອງທະຫານຍີ່ປຸ່ນ ແລ້ວຈັດຕັ້ງກອງທະຫານຂຶ້ນເພື່ອປ້ອງກັນຕົວເມືອງເຮັດໃຫ້ກອງທະຫານຝະລັ່ງເຂົ້າໄປຢູ່ວຽງຈັນບໍ່ໄດ້. ເຮົາເຫັນວ່າທົ່ວປະເທດລາວມີສະພາບການສັບສົນທີ່ສຸດ. ເຈົ້າເມືອງ ແລະ ຫົວໜ້າພະແນກການແພດທີ່ໄດ້ຮັບວິທະຍຸຄືກັນ ກໍ່ໄດ້ຟັງແລະ ຮູ້ຂ່າວດັ່ງກ່າວນັ້ນ ແລະ ພາກັນແລ່ນມາຫາເຮົາເພື່ອຖາມວ່າ ພວກເຮົາຈະຄວນເຮັດແນວໃດ. ເຮົາກໍ່ມີແຕ່ວາງທ່າທີ່ທຸ່ນທ່ຽງແລ້ວຕອບວ່າ ພວກເຮົາພະຍາຍາມຕິສາຍຫາຫຼວງພະບາງ ແລະ ວຽງຈັນຫຼາຍເທື່ອແລ້ວ, ບໍ່ມີໃຜຮັບໂທລະເລກຂອງເຮົາ, ດັ່ງນັ້ນພວກເຮົາຈຶ່ງມີທາງດຽວຄື ສືບຕໍ່ປົກຄອງບ້ານເມືອງໄປຕາມແບບເກົ່າ ແລະພ້ອມກັນພາຂ້າລາຊະການແລະ ປະຊາຊົນລະມັດລະວັງເພື່ອບໍ່ໃຫ້ຝະລັ່ງລະແວງສົງໄສພວກເຮົາ.

ວັນທີ 18 ເດືອນ 10 ປີ 1945 ກອງທະຫານຫວຽດນາມກອງຮ້ອຍໜຶ່ງ ໄດ້ເຂົ້າມາໃນດິນລາວ, ມຸ່ງໜ້າເຂົ້າໃສ່ເມືອງຊຳເໜືອ. ພວກຝະລັ່ງຮູ້ເລື່ອງນີ້ກະວົນກະວາຍ, ເພາະວ່າກອງທະຫານຝະລັ່ງມີຈຳນວນນ້ອຍ ຢ້ານຈະສູ້ບໍ່ໄດ້ ; ເຂົາຈຶ່ງຕິສາຍຂໍກອງໜູນມາຊ່ວຍແລະຂໍອາວຸດຍຸດທະພັນເພີ່ມຕື່ມ. ຖ້າອາທິດໜຶ່ງກໍ່ບໍ່ເຫັນຂຶ້ນເທິງຕອບ ແຕ່ວ່າ ໃນເວລາ

ນັ້ນຊ້ຳພັດມີຂ່າວວ່າ ກອງທະຫານຫວຽດນາມຫຍັບເຂົ້າມາໃກ້ເມືອງຊຳເໜືອຈັກໄຊ້. ນາຍທະຫານຝະລັ່ງເອີ້ນເອົາເຮົາກັບເຈົ້າເມືອງ ເຈົ້າຕົນ ແລະ ທ່ານພໍ່ທອງດີ ຫົວໜ້າພະແນກສາທາລະນະສຸກໄປຫາແລ້ວເວົ້າວ່າ ກອງທະຫານຝະລັ່ງ ຈະຖອນໜີອອກຈາກຕົວເມືອງຊຳເໜືອໄປທາງເມືອງຮາມ ເພື່ອຄອຍຖ້າກອງໜູນຈະມາຮອດແລ້ວຈຶ່ງຈະມາຕີເອົາ ເມືອງຊຳເໜືອຄືນ ແລະ ເວົ້າວ່າໃຫ້ພວກເຮົາທັງ 3 ຄົນໄປນຳເຂົາ. ພວກເຮົາທັງ 3 ຄົນໄດ້ພ້ອມກັນຊີ້ແຈງວ່າ ພວກເຮົາບໍ່ສາມາດຈະໜີຈາກເມືອງຊຳເໜືອໄປໄດ້ ເພາະວ່າ ມັນຈະເຮັດໃຫ້ປະຊາຊົນຢ້ານກົວແຕກຕື່ນ ແລະ ຈະເຮັດໃຫ້ບ້ານເມືອງວຸ່ນວາຍ ; ເວລາທ່ານເລຊີດັງເດີໄວໜີຈາກຊຳເໜືອໄປເທື່ອແລ້ວນີ້ ພວກເຮົາກໍ່ບໍ່ໄດ້ໄປນຳ, ພວກເຮົາຈຶ່ງສາມາດເຕົ້າໂຮມເອົາປະຊາຊົນເຂົ້າເປັນລະບຽບໄວ້ໄດ້. ຫຼັງຈາກເອົາເຫດເອົາຜົນມາຖົກຖຽງກັນເຫິງນານຫຼາຍຊົ່ວໂມງແລ້ວ ທ້າຍສຸດ ນາຍທະຫານຝະລັ່ງໄດ້ເວົ້າວ່າ ໃຫ້ເຈົ້າເມືອງ ແລະ ທ່ານພໍ່ທີ່ເປັນຫົວໜ້າພະແນກສາທາລະນະສຸກນັ້ນຢູ່, ແຕ່ວ່າຕົວເຈົ້າແຂວງຕ້ອງໄປນຳເຂົາ. ເມື່ອເວົ້າແນວໃດກໍ່ບໍ່ໄດ້ແລ້ວ ເຮົາກໍຈຳຕ້ອງຮັບໄປນຳເຂົາ, ແຕ່ເຮົາໄດ້ຮ້ອງຂໍກັບເມືອເຮືອນຈັດສົ່ງເມຍແລະລູກເຮົາໄປຫາພໍ່ແມ່ຂອງລາວທີ່ຫຼວງພະບາງກ່ອນ. ເພາະຄຳອ້ອນວອນ ຂອງເຮົາແນວນັ້ນ, ນາຍທະຫານຝະລັ່ງກໍ່ເຫັນດີ ແລະ ບອກນາຍທະຫານຜູ້ໜຶ່ງມາຊ່ວຍເຮົາ ກຽມເຄື່ອງຂອງທັງເປັນການຄຸມເຮົາທາງອ້ອມ. ຫຼັງຈາກຊີ້ແຈງອະທິບາຍໃຫ້ເມຍເຮົາກຽມມ້ຽນເຄື່ອງຂອງ ແລະ ອອກເດີນທາງໃນຕອນບ່າຍມື້ນັ້ນແລ້ວ ໃນຕອນຄ່ຳມື້ນັ້ນເອງເຮົາໄດ້ທາງເອົາເຄື່ອງນຸ່ງທີ່ມີລະດັບຕ່ຳສຸດ, ມອບໝາຍວຽກງານ ແລະ ວັດຖຸສິ່ງຂອງ ໃຫ້ເຈົ້າເມືອງແລ້ວເຮົາກໍ່ອອກຈາກເຮືອນໄປກິນເຂົ້າແລງນຳກອງທະຫານຝະລັ່ງ ແລະ ພ້ອມກັນເປ້ເຄື່ອງຂອງອອກເດີນທາງໄປເມືອງຮາມໃນເວລາທ່ຽງຄືນ. ນັ້ນແມ່ນມື້ເຮົາເລີ່ມຕົ້ນດຳລົງຊີວິດແບບທະຫານ. ການຍ່າງນຳທາງ ແລະ ໃນຫົວຄິດຂອງເຮົາໃນເວລານັ້ນ ແມ່ນມືດມົນຢ່າງບໍ່ເຄີຍພົບມາກ່ອນ ບໍ່ຮູ້ວ່າເມຍແລະລູກເຮົາເດີນທາງໄປແນວໃດ, ບໍ່ຮູ້ວ່າຊີວິດຂອງເຮົາຢູ່ນຳທະຫານຝະລັ່ງຈະເປັນແນວໃດ ແລະ ອະນາຄົດຂອງເຮົາຈະເປັນແນວໃດ ຄວາມອຸກອັ່ງຫງ່ວມເຫງົາຂອງເຮົາແມ່ນແຮງສຸດຂະໜາດ.

ພວກເຮົາໄປຮອດເມືອງຮາມພໍດີແຈ້ງ. ພວກເຮົາພາກັນຄົວກິນເພື່ອປັ້ນເຂົ້າເຊົ້າ. ຕາແສງເມືອງຮາມໃຫ້ເມຍຂອງລາວ ແລະ ເອື້ອຍນ້ອງແມ່ຍິງສອງຄົນມາຄົວຊ່ວຍ ແລະ ຮ່ວມກິນນຳກັນ. ພວກທະຫານຝະລັ່ງເອົາຊີ້ນກາເຟກິນກັບເຂົ້າໜົມປັງ. ເຂົາໄດ້ແບ່ງມາໃຫ້ເຮົາກິນຈຳນວນໜຶ່ງ ແຕ່ເຮົາໄດ້ເອົາໃຫ້ລູກຕາແສງເມືອງຮາມກິນ ເພາະເຮົາຊອບກິນເຂົ້າໜຽວໜຶ້ງກັບປີ້ງປາ ແລະ ແຈ່ວປານ້ຳຫຼາຍກວ່າ. ພໍດີເຮົາກິນເຂົ້າແລ້ວກໍ່ເຫັນທະຫານ ປາກຕີຊັງ 4 ຄົນ ທີ່ຮັບໃຊ້ວຽກຢູ່ເຮືອນເຮົານັ້ນ ເອົາຈົດໝາຍຂອງເຈົ້າເມືອງໄປສົ່ງຂ່າວໃຫ້ເຮົາວ່າ ກອງທະຫານຫວຽດນາມຍັງພັກຢູ່ເມືອງປົວ ແລະ ວ່າຄອບຄົວເຮົາໄດ້ໄປນອນບ້ານ ຫົວຊຽງ

ໂດຍແມ່ນທ້າວຂຸນເມືອງຊຳເໜືອຈຳນວນໜຶ່ງໄປສົ່ງຮອດປາກລາວແລ້ວຈຶ່ງຈະກັບຄືນ. ເຮົາຮູ້ສຶກດີໃຈຕໍ່ຂ່າວອັນນັ້ນ ແລະ ເຊື່ອວ່າເມຍ ແລະລູກເຮົາຈະໄປຮອດຫຼວງພະບາງ ຢ່າງປອດໄພ. ແຕ່ວ່າຕົວເຮົາໄປຜູ້ດຽວຮູ້ສຶກປ່ຽວໃຈ, ທັງຖືເຄື່ອງທັງຍ່າງມາມື້ຄືນກ່ອນນັ້ນ ຮູ້ສຶກວ່າອິດເມື່ອຍຫຼາຍ ; ເຮົາຈຶ່ງຊັກຊວນເອົາທະຫານປາກຕີຊົ໊ງ 4 ຄົນນັ້ນໃຫ້ໄປນຳເຮົາ ເພື່ອຊ່ວຍຖືເຄື່ອງຂອງ, ເປັນເພື່ອນເດີນທາງ, ເບິ່ງອາຫານການກິນ ແລະ ເຮັດວຽກປ້ອງກັນໃຫ້ເຮົາ. ເມື່ອເຂົາເຫັນດີໄປນຳເຮົາແລ້ວ ເຮົາກໍ່ພາເຂົາໄປຫານາຍທະຫານຝະລັ່ງ, ແປຈົດໝາຍຂອງເຈົ້າເມືອງໃຫ້ເຂົາຟັງ ແລະ ສະເໜີຕໍ່ເຂົາວ່າ ເຮົາຈະເອົາຊາວໜຸ່ມ 4 ຄົນທີ່ຮັບໃຊ້ຢູ່ເຮືອນເຮົາ ແລະ ທີ່ຖືຈົດໝາຍຂອງເຈົ້າເມືອງມາໃຫ້ເຮົານັ້ນໄປນຳເຮົາ ແລະ ຂໍໃຫ້ນາຍທະຫານຝະລັ່ງແຈກຢາຍປືນໃຫ້ເຂົາຄົນລະກະບອກ ພ້ອມທັງຜ້າຫົ່ມຜູ້ລະຜືນ ເພາະວ່າອາກາດເລີ້ມໜາວມາແລ້ວ. ນາຍທະຫານຝະລັ່ງເຫັນດີນຳ ຈຶ່ງໄດ້ເອົາປືນມິດຕາໄລແຢດ ມາແຈກໃຫ້ຄົນຂອງເຮົາຄົນລະກະບອກ ພ້ອມດ້ວຍລູກປືນຄົນລະ 200 ນັດ, ຜ້າຫົ່ມຄົນລະຜືນ ແລະ ຖົງເປ້ຜູ້ລະໜ່ວຍ. ເຮົາຮູ້ສຶກດີໃຈທີ່ມີຜູ້ທີ່ໄວ້ວາງໃຈໄດ້ມາຢູ່ນຳ ແລະ ຊ່ວຍຖືເຄື່ອງຂອງໄປຊ່ວຍກັນ.

ໃນຄືນນັ້ນ ພວກເຮົາພັກທຸກຄົນພ້ອມກັນນອນຢູ່ເມືອງຮາມ. ເຮົາໄດ້ຂຽນຈົດໝາຍໃຫ້ຕາແສງເມືອງຮາມສົ່ງໄປຕອບໃຫ້ເຈົ້າເມືອງ ເພື່ອຂອບໃຈໃນການທີ່ລາວສົ່ງຂ່າວມາໃຫ້ເຮົາ ແລະໄດ້ຊ່ວຍຈັດການເດີນທາງໃຫ້ເມຍ ແລະ ລູກເຮົາ. ຮຸ່ງຂຶ້ນມາເປັນມື້ໃໝ່ ພວກເຮົາພ້ອມກັນອອກເດີນທາງໄປຮອດເມືອງເປີນ ແລະ ໄດ້ພັກຢູ່ທີ່ນັ້ນ 3 ມື້ ໂດຍຂໍໃຫ້ຕາແສງເມືອງເປີນຈັດການເວນຍາມຮັກສາຄວາມປອດໄພໃຫ້. ນະທີ່ນັ້ນເຮົາຟັງວິທະຍຸນ້ອຍ ຂອງເຮົາທີ່ຝະລັ່ງເອົາໃຫ້ນັ້ນ ຮູ້ຂ່າວວ່າຢູ່ທີ່ວຽງຈັນ ໄດ້ມີການຈັດຕັ້ງລັດຖະບານລາວເອກະລາດຂຶ້ນ ໂດຍແມ່ນພະຍາຄຳມ້າວເປັນນາຍົກລັດຖະມົນຕີ ພາຍໃຕ້ການຊີ້ນຳ ຂອງເຈົ້າເພັດຊະລາດ ຜູ້ເຊິ່ງໄດ້ປະກາດອອກວິທະຍຸກະຈາຍສຽງທີ່ວຽງຈັນວ່າ ປະເທດລາວ ໄດ້ເປັນເອກະລາດ ແລະ ເອກະພາບກັນທົ່ວປະເທດ ໃນວັນທີ 12 ຕຸລາ 1945 ແລ້ວຮຽກຮ້ອງ ໃຫ້ປະຊາຊົນທົ່ວປະເທດລາວພ້ອມກັນລຸກຂຶ້ນຕ້ານ ບໍ່ໃຫ້ພວກຝະລັ່ງກັບຄືນມາປົກຄອງປະເທດລາວອີກ. ມື້ລຸນມາ ວິທະຍຸອັງກິດຊ້ຳພັດບອກວ່າ ເຈົ້າຊີວິດສີສະຫວ່າງວົງ ໄດ້ສົ່ງໂທລະເລກໄປປົດຕຳແໜ່ງເຈົ້າເພັດຊະລາດ ບໍ່ໃຫ້ເປັນເຈົ້າມະຫາອຸປະຫຼາດ (ເຈົ້າຊີວິດຜູ້ທີ 2) ອີກ, ແລະ ພ້ອມກັນນັ້ນກໍ່ປະກາດປົດຕຳແໜ່ງໝົດທຸກຄົນ ທີ່ປະກອບເຂົ້າເປັນຄະນະລັດຖະບານລາວເອກະລາດນັ້ນດ້ວຍ.

ຕັ້ງແຕ່ນັ້ນມາເຮົາກໍ່ຍິ່ງເອົາໃຈໃສ່ຕິດຕາມຂ່າວພາຍໃນ ແລະຕ່າງປະເທດເລື້ອຍໆ. ວິທະຍຸກະຈາຍສຽງທ່າໂນຍຟັງແຈ້ງກວ່າວິທະຍຸບ່ອນອື່ນ ແລະ ສືບຕໍ່ລົງຂ່າວວ່າ ຢູ່ວຽງຈັນໄດ້ຈັດຕັ້ງສະພາຜູ້ແທນລາດສະດອນຂຶ້ນ, ສະພາອັນນີ້ໄດ້ລົງມະຕິຮັບຮອງເອົາ ລັດຖະບານລາວ

ເອກະລາດ, ຮັບຮອງເອົາທຸງຊາດທີ່ເຮັດຂຶ້ນໃໝ່ ແລະ ຮັບຮອງເອົາເພງຊາດທີ່ໃຊ້ທຳນອງເກົ່າແຕ່ປ່ຽນເອົາເນື້ອຮ້ອງອັນໃໝ່. ແຕ່ລະມື້ມີການອ່ານຄຳຮຽກຮ້ອງຂອງລັດຖະບານໃຫ້ປະຊາຊົນລາວທັງມວນສາມັກຄີພ້ອມພຽງກັນຕ້ານພວກລ່າເມືອງຂຶ້ນຝະລັ່ງ ເພື່ອປົກປັກຮັກສາເອກະລາດແຫ່ງຊາດ. ຂ່າວອັນນັ້ນ ເຮັດໃຫ້ເຮົາອຸກອັ່ງທັງໃຈຫຼາຍທີ່ສຸດ ເພາະເຫັນວ່າຕົນເອງເດີນທາງຜິດແລ້ວ. ເຮົານອນຄິດທັງກາງວັນແລະກາງຄືນ ເພື່ອຈະຊອກທາງອອກ ທີ່ດີສຳລັບກັບຄືນໄປຫາຊາດ, ຫາປະຊາຊົນ. ເຮົາຄິດໄປຄິດມາຢູ່ແຕ່ຜູ້ດຽວ ຈຶ່ງແມ່ນມັນອຸກອັ່ງຈົນວ່າລືມພິດທຸກສິ່ງທຸກຢ່າງທີ່ຢູ່ອ້ອມຂ້າງເຮົາ. ປະຊາຊົນເມືອງເປີນທີ່ກຽວເຂົ້າໄຮ່ແລ້ວ , ເລືອກເຂົ້າໜຽວຫອມໜຶ້ງໃສ່ແອບມາສົ່ງເຮົາຊຸມ, ເອົາເຂົ້ານາມາເຮັດເຂົ້າເໜົາມາໃຫ້ເຮົາກິນ ພ້ອມທັງໝາກກ້ວຍງາວອັນເຫຼືອງຫອມໜ້າແຊບທີ່ສຸດ, ແຕ່ເຮົາກໍກິນບໍ່ໄດ້ ເພາະວ່າຈິດໃຈເຮົາພວມເວີ້ນຢູ່ບັນເນກ ເພື່ອຊອກຫາເສັ້ນທາງອອກອັນຖືກຕ້ອງ ແລະ ປອດໄພ;ໝຽວເບິ່ງເຂົ້າໜຽວຫອມ, ເຂົ້າເໜົາ, ໝາກກ້ວຍ ຕະຫຼອດຮອດພາເຂົ້າ ເຮົາກໍບໍ່ມີຄວາມນຶກຄິດຢາກກິນຈັກເມັດ. ແຕ່ລະມື້ເຮົາໄດ້ອົດຢັ້ນເອົາເຂົ້າຄາບລະປັ້ນໜ່ວຍໄຂ່ໄກ່ມາຈ້ຳອັນນັ້ນອັນນີ້ແລ້ວອົດຫຍ້ຳກິນລົງຕາມຄຳເຊີນຂອງອ້າຍນ້ອງ ແລະ ຕາແສງເມືອງເປີນ. ແຕ່ວ່າເມື່ອນາຍທະຫານຝະລັ່ງມາລົມນຳເຮົາກໍ່ເຮັດໜ້າມ່ວນຊື່ນເບີກບານ ເພື່ອບໍ່ໃຫ້ເຂົາສົງໄສ. ເມື່ອເຂົາຖາມເຮົາວ່າ ເຮົາຟັງວິທະຍຸໄດ້ຍິນຂ່າວເລື່ອງ ເຈົ້າຊີວິດປົດຕຳແໜ່ງເຈົ້າເພັດຊະລາດນັ້ນບໍ່, ເຮົາຕອບວ່າເຮົາກໍໄດ້ຍິນຂ່າວນັ້ນ ແລະ ບໍ່ຖ້າໃຫ້ເຂົາທັນຖາມ ເຮົາກໍເວົ້າຄຳເຫັນຂອງເຮົາອອກໂລດວ່າ ປະພຶດຕົວບໍ່ດີຖືກປົດອອກກໍ່ເປັນການຖືກຕ້ອງແລ້ວ. ນາຍທະຫານຝະລັ່ງຈຶ່ງເວົ້າຕໍ່ວ່າແມ່ນແລ້ວ, ເຈົ້າຊີວິດລາວດີຫຼາຍ ແລະ ຊື່ສັດບໍລິສຸດຕໍ່ຝະລັ່ງ ຜູ້ມີບຸນຕໍ່ບ້ານເມືອງຂອງຕົນ.

ອອກຈາກເມືອງເປີນ ພວກເຮົາທັງໝົດເດີນທາງຜ່ານເມືອງອື້ໄປພັກຢູ່ຫົວເມືອງ. ນາຍຮ້ອຍເອກກຸຍໂຢນອນຢູ່ເຮືອນນາຍກອງ , ນອກຈາກນັ້ນ ກໍ່ແຍກກັນອອກໄປນອນຢາຍ ຢູ່ນຳເຮືອນປະຊາຊົນເຮືອນລະ 2 ຫຼື 3 ຄົນ. ເຮົາກັບອ້າຍນ້ອງ 4 ຄົນ ພາກັນໄປພັກໃນເຮືອນປະຊາຊົນຫຼັງໜຶ່ງຢູ່ແຄມບ້ານ. ໃນເຮືອນມີແຕ່ລູກສາວນ້ອຍຂອງເຈົ້າເຮືອນ ຢູ່ເຝົ້າເຮືອນ, ພໍ່ແມ່ ແລະ ເອື້ອຍຂອງມັນໄປນອນໄຮ່ເພື່ອຕີເຂົ້າ. ທຸກເຊົ້າ ເຮົາໄປຂ້ຳນັບທ່ານຮ້ອຍເອກກຸຍໂຢ ເພື່ອເລົ່າຂ່າວຄາວໃຫ້ກັນຟັງ. ນາຍທະຫານນັ້ນບອກໃຫ້ເຮົາຮູ້ວ່າເຂົາຈະພັກຢູ່ທີ່ນີ້ຈົນກວ່າຈະມີກອງກຳລັງໜູນມາຮອດ ແລ້ວຈຶ່ງຈະກັບຄືນໄປຕີເອົາເມືອງຊຳເໜືອ. ມື້ທີ່ສອງກະໂຕທ່ານຮ້ອຍເອກກຸຍໂຢເຈັບທ້ອງຊຸ, ກິນຢາຫຼວງກໍ່ພໍແຕ່ຫວາງ,ບໍ່ທັນດີແທ້, ເຮັດໃຫ້ຕົວລາວອິດເມື່ອຍ. ເຮົາໄດ້ບອກນາຍກອງໄປຊອກຢາພື້ນເມືອງມາໃຫ້ກິນກໍ່ຍັງດີເກົ່າ . ມື້ລູນມາທະຫານ 2 ຄົນກໍ່ເຈັບທ້ອງຄືກັນ ແລະ ຍັງມີຜູ້ໜຶ່ງອີກເປັນໄຂ້ຮ້ອນ ຈົ່ມຮ້ອງຈົນເຕັມແຮງ. ເຮົາໄດ້ບອກໃຫ້ຕາແສງແຕ່ງຄົນໄປບ້ານໃຕ້ບ້ານເໜືອ ເພື່ອຊອກຢາມາຕົ້ມໃຫ້ກິນ .

ຜູ້ຕິສາຍໄດ້ຕິລາຍງານໃຫ້ຂັ້ນເທິງຂອງເຂົາ, ແຕ່ 2 ມື້ຜ່ານມາແລ້ວບໍ່ເຫັນຕອບ ແລະ ກໍ່ບໍ່ເຫັນເຮືອບິນມາຖິ້ມເຄື່ອງກິນ ແລະ ຢູກຢາໃຫ້ອີກ. ສະພາບການທົ່ວໄປແມ່ນຫງວມເຫງົາ. ປະຊາຊົນກໍ່ຢ້ານກອງທະຫານຫວຽດນາມຈະຕິດຕາມມາຕີ. ພວກນາຍ ແລະ ພົນທະຫານອິດເມື່ອຍ ແລະ ເຈັບປ່ວຍນອນຢູ່ເທິງເຮືອນທັງກາງວັນ ແລະ ກາງຄືນ, ມີພວກທະຫານປາກຕີຕິຊັງຂອງກອງຫົວເມືອງພັດປ່ຽນກັນ ໄປຢູ່ຍາມທີ່ຝາກນ້ຳເນີນເບື້ອງເມືອງອູ້ ແລະບ່ອນປາກທາງເຂົ້າບ້ານທາງໄປເມືອງລາບ.

ມື້ທີ 3 ຜ່ານໄປ, ມື້ທີ 4 ຜ່ານໄປໂດຍບໍ່ມີຫຍັງປ່ຽນແປງ, ຄົນຍັງອິດເມື່ອຍແລະເຈັບທ້ອງຢູ່ຄືເກົ່າ, ຜູ້ໄຂ້ກໍ່ບໍ່ທັນດີ ພັດມີຜູ້ເປັນຫວັດເປັນໄອຕື່ມອີກ. ຟັງວິທະຍຸຊ້ຳມີແຕ່ ຄຳຮຽກຮ້ອງໃຫ້ປະຊາຊົນລາວລຸກຂຶ້ນຕ້ານພວກລ່າເມືອງຂຶ້ນຝະລັ່ງ. ເຮົານອນຄິດເບິ່ງຄັກໆແລ້ວເຫັນວ່າ ສະພາບການເປັນແນວນີ້ມອງເບິ່ງບໍ່ເຫັນເສັ້ນທາງອັນສະຫວ່າງແຈ້ງແນວໃດ. ປະຊາຊົນລາວຈະຮ່ວມມືກັບປະຊາຊົນຫວຽດນາມຕ້ານຝະລັ່ງແລ້ວ ເຮົາກໍ່ຈະກາຍເປັນຄົນ ຂາຍຊາດໄປລາງ ບໍ່ມີຍາມຈະໄດ້ພົບກັບລູກເມຍ ແລະ ພີ່ນ້ອງອີກ. ເຮົາຈຶ່ງເອີ້ນເອົາທິດທຳ ທີ່ເປັນຫົວໜ້າອ້າຍນ້ອງເຮົານັ້ນ ມາລົມນອຍກັນເພາະວ່າທາວນີ້ເປັນຄົນຊັ້ນຈ່າຂອງເຮົາທີ່ພໍໄວ້ວາງໃຈໄດ້. ເຮົາໄດ້ເວົ້າສະພາບການບ້ານເມືອງເຮົາ ແລະ ສະພາບທີ່ບໍ່ມີທາງອອກຂອງພວກຝະລັ່ງນັ້ນໃຫ້ຟັງແລ້ວ ລອງຖາມເບິ່ງຄວາມເຫັນຂອງລາວວ່າພວກເຮົາຄວນສືບຕໍ່ອິດທົນຢູ່ແນວນີ້ຕໍ່ໄປຈົນຮອດມື້ທະຫານຫວຽດນາມມາຕີຝະລັ່ງ ຫຼື ເຂົາເຫັນວ່າພວກເຮົາ ຈະມີທາງອອກແນວໃດດີກວ່ານີ້. ທິດທຳກໍ່ຄິດຄືດຽວກັນກັບເຮົາ ແລະ ຕາມໃຈເຂົາແມ່ນຢາກໂຕນໜີໄປຫຼວງພະບາງ ເພື່ອຊອກຫົນທາງໄປຮ່ວມມືກັບລັດຖະບານລາວເອກະລາດ. ເຮົາເວົ້າວ່າຄວາມຄິດແນວນັ້ນແມ່ນດີ ແຕ່ອ້າຍນ້ອງສາມຄົນທີ່ມານຳເຮົານັ້ນຈະເຫັນດີນຳເຮົາບໍ່ ແລະບັນຫານີ້ແມ່ນເລື່ອງເປັນຕາຍທີ່ຕ້ອງຮັກສາຄວາມລັບໄວ້ຢ່າງເດັດຂາດ ; ຖ້າເຮັດໃຫ້ຄວາມລັບນີ້ຜົ່ວອອກໄປໃຫ້ພວກຝະລັ່ງ ຫຼື ຄົນລາວຜູ້ອື່ນຮູ້ແມ່ນພວກເຮົາຕ້ອງຕາຍຢ່າງແນ່ນອນ. ທິດທຳຮັບຮອງວ່າອ້າຍນ້ອງ 3 ຄົນນັ້ນຕ້ອງເຫັນດີນຳພວກເຮົາຢ່າງແນ່ນອນ ເພາະວ່າຂະເຈົ້າກໍ່ໄດ້ເລີ່ມເວົ້າບັນຫານີ້ນຳທິດທຳແດ່ແລ້ວ. ເຮົາບອກວ່າຖ້າເປັນແນວນັ້ນແທ້ ໃຫ້ໄປລອງທາບທາມເບິ່ງເທື່ອລະຄົນ, ຖ້າເຂົາເຫັນດີຈຶ່ງພາກັນມາຫາເຮົາ. ຕອນຄ່ຳໃນມື້ທີ 5 ນັ້ນ ອ້າຍນ້ອງທັງ 4 ຄົນໄດ້ມາສະແດງຄວາມເຫັນດີຕໍ່ເຮົາ. ເມື່ອເປັນແນວນັ້ນ ເຮົາຈຶ່ງບອກໃຫ້ອ້າຍນ້ອງເອົາເຂົ້າຈ້າວທີ່ເພິ່ນແບ່ງມາໃຫ້ພວກເຮົານັ້ນມາຈາວໃຫ້ແຂນ, ເອົາເກືອ ແລະຫອມພັກບົ່ວໃສ່ແລ້ວເອົາລົງຂົ້ວໃສ່ໝໍ້ຂາງຂອງເຮືອນບ່ອນເຮົາເຊົານັ້ນ, ຕອນງາຍແລະແລງນັ້ນພວກເຮົາກິນເຂົ້າຈ້າວຂົ້ວ ແລະ ເອົາຜ້າເຊັດໜ້າມາຫໍ່ເອົາໃສ່ຖົງເປ້ຂອງໃຜລາວໄວ້ໃຫ້ພໍກິນກຸ່ມ 5 ມື້, ແຕ່ຕ້ອງລະວັງຢ່າໃຫ້ການກະທຳຂອງພວກເຮົາເປັນໜ້າສົງໄສ ແກ່ຜູ້ອື່ນຢ່າງເດັດຂາດ.

ໃນຄືນນັ້ນ ພວກເຮົານອນຕາມປົກກະຕິ. ຮອດ 11 ໂມງກາງຄືນ ເຮົາແຕ່ງທິດທຳໄປກວດກາຕາມບ້ານຫົວເມືອງ ເພື່ອເບິ່ງສະພາບການ. ເຄິ່ງໂມງຕໍ່ມາທິດທຳກັບຄືນມາບອກວ່າ ພວກຝະລັ່ງນອນພັກແລ້ວ, ມີແຕ່ທະຫານລາວຢູ່ຍາມບ່ອນທາງມາແຕ່ເມືອງລາຍ ແລະ ຟາກນ້ຳເນີນເບື້ອງນັ້ນບ່ອນທາງໄປເມືອງອີ້. ເຮົາເຫັນວ່າເປັນເວລາເໝາະສົມແລ້ວ ຈຶ່ງເວົ້າໃຫ້ທິດທຳບອກອ້າຍນ້ອງກຸ່ມເອົາເຂົ້າ, ໂສ້ງເສື້ອຄົບຊຸດ, ຜ້າເຊັດໜ້າ ແລະຜ້າຢາງກັນຝົນຄົນພົນໃສ່ຖົງເປ້, ສ່ວນຜ້າຫົ່ມ ແລະ ເສື່ອຝົນທີ່ພັກນັ້ນໃຫ້ປະໄວ້ກັບບ່ອນນອນ ເພື່ອນກັບວ່າພວກເຮົາຍັງຈະກັບຄືນມາ ; ແນ່ນອນແລ້ວ ປືນມິຕະໄລແຍກຄົນລະກະບອກ ແລະລູກປືນນັ້ນພວກເຮົາເອົາໄປນຳພົກ. ພໍດີ 12 ໂມງກາງຄືນພວກເຮົາພາກັນຄ່ອຍຍ່າງລົງເຮືອນໜີໄປ ຕາມເສັ້ນທາງໄປຫາຈອມກະສານ ແລະ ເມືອງຊ່ອນ. ຄືນນັ້ນເປັນຄືນມື້ເດືອນ 10 ແຮມ 8 ຫຼື 9 ຄ່ຳ, ເດືອນບໍ່ແຈ້ງດີເພາະທ້ອງຟ້າລະດູຫາວມີໝອກຫຸ້ມຫາທົ່ວປ່າດົງ, ແຕ່ວ່າພວກເຮົາກໍ່ພໍເຫັນຫົນທາງໂດຍບໍ່ຈຳເປັນຕ້ອງບິບໂຄມໄຟສາຍທີ່ພວກເຮົາກໍ່ມີຄົນລະອັນ. ຈິດໃຈພວກເຮົາເວລານັ້ນແມ່ນມ່ວນຊື່ນເບີກບານ ທີ່ໄດ້ມີໂອກາດກັບຄືນເຂົ້າສູ່ເສັ້ນທາງຮັກຊາດ ແຕ່ຮູ້ສຶກເລື່ອນລອຍຢູ່ລະຫວ່າງອັນຕະລາຍ ແລະ ໄຊຊະນະ. ພວກເຮົາຕົກລົງກັນແລ້ວວ່າ ຖ້າພວກຝະລັ່ງ ຫຼື ຜູ້ອື່ນໃດຫາກຕິດຕາມພວກເຮົາມາ ແມ່ນພວກເຮົາຈະພ້ອມກັນຕໍ່ສູ້ຈົນເຖິງໄຊຊະນະ ຫຼື ຕາຍນຳກັນໝົດທຸກຄົນ ໂດຍບໍ່ປ່ອຍໃຫ້ພວກມັນຈັບໄດ້. ເວົ້ານຳກັນ ຜູ້ໃດກໍ່ວ່າກ້າຫານ ແລະ ຮັບປະກັນ, ແຕ່ວ່າໃນໃຈຜູ້ໃດກໍ່ເປັນຫ່ວງກັບຊີວິດຂອງຕົນຫຼາຍທີ່ສຸດ ວ່າມັນຈະຈົບລົງແນວໃດ. ຖ້າພວກຝະລັ່ງຫາກຮູ້ເນື້ອ ແລະ ຕິດຕາມມາກໍ່ແມ່ນພວກເຮົາຕ້ອງຕາຍນຳກັນຢ່າງແນ່ນອນ.

ພວກເຮົາໄປຮອດໄຮ່ເຂົ້າໄຫບ້ານຫົວເມືອງ ເຫັນເຂົ້າຮວງກົ້ມໝົດແລ້ວ ; ໄຮ່ແຕ່ລະຜືນມີຖຽງໄຮ່ນ້ອຍໆຕັ້ງຢູ່ ແຕ່ຫາກບໍ່ມີຄົນນອນ. ພວກເຮົາໄປຕາມທາງສຸດໄຮ່ຜືນໜຶ່ງ ເຫັນມີທາງນ້ອຍພີກອອກຈາກທາງໄປຈອມກະສານລົງທາງເບື້ອງຊ້າຍມື. ພວກເຮົາພິກລົງຕາມທາງເສັ້ນນັ້ນ ມຸ່ງໜ້າໃສ່ດົ້ນຕາແສງສະກົກ. ເສັ້ນທາງນີ້ບໍ່ສູ້ມີຄົນທຽວ, ຫຍ້າຮົກ ພໍແຕ່ເຫັນຮອຍທາງ, ເມື່ອເຂົ້າປ່າດົງໜາແລ້ວ ບາງຄັ້ງບາງຄາວແຕ່ລະຄົນພວກເຮົາ ກໍ່ບິບໂຄມໄຟສາຍຊື່ລົງດິນ ໂດຍເອົາມືບັງໄວ້ບໍ່ໃຫ້ແສງສ່ອງອອກໄປໄກ. ຕັ້ງແຕ່ເກີດມາເຮົາເຫັນວ່າເວລານັ້ນແມ່ນເວລາທີ່ເຮົາທຸກໃຈຫຼາຍທີ່ສຸດ. ພວມເປັນນາຍພາສາ, ເຈົ້າເມືອງ, ເຈົ້າແຂວງຢູ່ ເຮົາໄປທາງໃດກໍ່ໄດ້ຂີ່ລົດຍົນ ຫຼື ຂີ່ມ້າ, ມີຄົນຫາມຫີບເຄື່ອງຂອງນຳຫຼັງ. ເທື່ອນີ້ ໂຕຕ້ອງຖືປືນເຂົ້າເອົາເອງຍ່າງໄປຕາມທາງທີ່ຮົກເຮື້ອ, ຈິດໃຈຄິດແຕກສ່ານໄປຫາຫຼາຍເລື່ອງ, ທັງຢ້ານພວກຝະລັ່ງຈະນຳມາຂ້າ, ທັງເປັນຫ່ວງຢ້ານມີຄົນມາພົບຈະເສຍຄວາມລັບ, ທັງເປັນຫ່ວງວ່າລູກເມຍຢູ່ຫຼວງພະບາງຈະຄິດຮອດຫາ ເພາະວ່າວິທະຍຸທ່າໂນ່ຍປະກາດວ່າ ກອງທະຫານຫວຽດນາມເຂົ້າຢຶດເອົາເມືອງຊຳເໜືອໄດ້ແລ້ວ, ເຈົ້າແຂວງໄດ້ໜີໄປນຳຝະລັ່ງ. ຄວາມ

ສຶດວ້າເວຂອງພວກເຮົາພາໃຫ້ບຸປ່າຜ່າດົງໄປໂດຍລືມຄວາມອິດເມື່ອຍ ແລະ ບໍ່ເອົາຫົວຊາຕໍ່ຝູງທາກທີ່ຂຶ້ນຕາມແຄ່ງຕາມຂາ, ຄິດຄືນເບິ່ງແລ້ວ ເປັນຄືກັນເສຍສະຕິໄປເຄິ່ງໜຶ່ງແລ້ວ ຄວາມຄິດຜູ້ໃດກໍ່ລອຍໄປຕາມເມກ ; ພໍແຕ່ຮູ້ສຶກຢາກໜີໄປໃຫ້ພົ້ນພວກຝະລັ່ງ ແລະ ໄປຮອດເມືອງຫຼວງພະບາງເພື່ອພົບລັດຖະບານໃໝ່ ແລະ ລູກເມຍພີ່ນ້ອງ, ທັງໆທີ່ບໍ່ຮູ້ວ່າ ຢູ່ຫຼວງພະບາງຈະມີສະພາບການເປັນແນວໃດ ເພາະວ່າບ່ອນນັ້ນກໍ່ມີພວກຝະລັ່ງເຂົ້າໄປຢູ່ແລ້ວ.

ກາງຄືນນັ້ນຜິດໄປໂດຍບໍ່ມີເຫດໄພຫຍັງເກີດຂຶ້ນ. ຕາເວັນສ່ອງປ່າໄມ້ລົງມາບອກວ່າ ມື້ໃໝ່ໄດ້ມາຮອດແລ້ວ. ພວກເຮົາໄດ້ພາກັນໜີອອກຈາກຮ່ອງຮອຍທາງໄປພັກຜ່ອນຢູ່ກາງປ່າດົງໄກຈາກນັ້ນປະມານເຄິ່ງກິໂລແມດ ເພື່ອກິນເຂົ້າ ແລະ ເປີກສາວາງແຜນການໃໝ່. ສຽງໄກປ່າອັນແຊວໆ, ສຽງນົກກາເວົ້າ, ນົກຖິວ ແລະ ນົກອື່ນໆນາໆຊະນິດໃນຂົງເຂດນັ້ນໃນເວລານັ້ນບໍ່ເປັນສິ່ງຈັບໃຈຂອງພວກເຮົາແຕ່ຢ່າງໃດ. ທິດທາກໍ່ຜູ້ຮູ້ຈັກຂົງເຂດນັ້ນດີ ເປັນຜູ້ຂີດເສັ້ນທາງເດີນຂອງພວກເຮົາໃນຂັ້ນຕໍ່ໄປ. ບັດນີ້ພວກເຮົາບໍ່ເດີນຕາມຮອຍທາງ ເພາະຢ້ານມີຄົນມາພານພົບ. ພວກເຮົາໄປຕາມປ່າດົງລົງໄປທົ່ງພຽງ, ຜ່ານທາງນາເມືອງລານ ເບັດໃສ້ດິນຕາແສງສະກົກນໍ້າໜຶ່ງ ແລະ ຄືນໜຶ່ງພວກເຮົາເຊົາພັກແຕ່ສອງເທື່ອ, ກາງຄືນແມ່ນເຊົາກິນເຂົ້າແລ້ວພັກຜ່ອນໜ່ອຍໜຶ່ງ, ມື້ສວາຍແມ່ນພັກກິນເຂົ້າ ແລະ ນອນຈິວໂມງໜຶ່ງ ແລ້ວກໍ່ພາກັນລັດປ່າລັດດົງໄປ ; ການໜີຕາຍແບບນີ້ບໍ່ຮູ້ຈັກອິດເມື່ອຍ ຫຼື ຫິວນອນຈັກເມັດ, ທັງເຫັນວ່າຄວາມຮັກແພງສະໜິດສະໜົມລະຫວ່າງພວກເຮົາທັງ 5 ຄົນແໜ້ນແຟ້ນຂຶ້ນກວ່າເກົ່າ; ກາງຄືນຜ່ານໄປ, ມື້ໃໝ່ມາຮອດຢ່າງປອດໄພ ເປັນສິ່ງດຽວທີ່ພາໃຫ້ພວກເຮົາມ່ວນຊື່ນເບີກບານ, ແຕ່ກໍ່ບໍ່ທັນໝົດຄວາມຫ່ວງໃຍຕໍ່ຊາຕາກຳຂອງຕົນ ໃນໄລຍະທີ່ຈະຕ້ອງຜ່ານໄປໃນພາຍໜ້າ.

ຫຼັງຈາກບຸປ່າຜ່າດົງໄປເປັນເວລາ 6 ວັນເຕັມ ພວກເຮົາກໍ່ໄປຮອດບ້ານປາກລາວ . ຮອດບ່ອນນີ້ພວກເຮົາກ້າເຂົ້າໄປໃນບ້ານ ເພາະວ່າຕາແສງປາກລາວເປັນຜູ້ລັ້ງເຄີຍກັບເຮົາເວລາລາວໄປຊໍາເໜືອລາວກໍ່ໄປຢ້ຽມຢາມ ແລະ ກິນເຂົ້ານໍາເຮົາຫຼາຍເທື່ອ. ເຮົາໄດ້ເວົ້າຄວາມຈິງນໍາລາວກ່ຽວກັບການມາຂອງພວກເຮົາ ແລະ ໄດ້ຂ່າວຄາວນໍາລາວກ່ຽວກັບສະພາບການຢູ່ຫຼວງພະບາງ. ລາວໄດ້ເວົ້າໃຫ້ເຮົາຟັງວ່າ ຫວ່າງກ່ອນນີ້ ລາວກໍ່ໄດ້ຈັດເອົາເຮືອສົ່ງຄອບຄົວຂອງເຮົາໄປຮອດຫຼວງພະບາງ ແລະ ວ່າເວລານີ້ທະຫານຈີນໄດ້ເຂົ້າໄປປົດ ອາວຸດທະຫານຍີ່ປຸ່ນແລ້ວ, ພວກຝະລັ່ງກໍ່ເຂົ້າໄປຫຼວງພະບາງ ແຕ່ບໍ່ໄດ້ມີການເຄື່ອນໄຫວຫຍັງ, ລັດຖະບານລາວເອກະລາດທີ່ຕັ້ງຂຶ້ນຢູ່ວຽງຈັນສົ່ງຂ່າວມາວ່າ ຈະສົ່ງຄະນະຜູ້ແທນ ມາພົບເຈົ້າຊີວິດ ແລະ ຄະນະຜູ້ແທນແນວໂຮມລາວເປັນລາວໄດ້ຂຶ້ນມາຮອດຫຼວງພະບາງແລ້ວ ແລະພວມຂະຫຍາຍສະມາຊິກ ; ຂ່າວອັນນີ້ເຮັດໃຫ້ພວກເຮົາລົງອົກລົງໃຈຫຼາຍທີ່ສຸດ. ອັນທີ່ເຮັດໃຫ້ພວກເຮົາດີໃຈຍິ່ງກວ່ານັ້ນ ແມ່ນຕາແສງປາກລາວໄດ້ເວົ້ານໍາເຮົາວ່າລາວເອງພ້ອມກັບທ້າວຊຸນ ແລະ ນາຍບ້ານບາງຄົນກໍ່ພວມກຽມເຮືອ ເພື່ອຈະໄປຮ່ວມບຸນເດືອນ 12 ທີ່ຫຼວງພະບາງ ແລະ ຖ້າວ່າພວກເຮົາຈະໄປນໍາເຮືອຂອງລາວກໍ່ໄດ້ ແຕ່ຕ້ອງຖ້າອີກມື້ໜຶ່ງ ຈຶ່ງຈະອອກ

ເດີນທາງໄດ້ ; ພວກເຮົາກໍ່ຕົກລົງລອບໄປນຳເຮືອຂອງລາວນັ້ນໂລດ. ຈາກປາກລາວໄປພວກເຮົາຕ້ອງນອນທາງ 4 ຄືນ ຈຶ່ງຮອດຫຼວງພະບາງ. ຮອດບ້ານຄີລວງພວກເຮົາໄດ້ເອົາປືນ ແລະ ລູກປືນຝາກໄວ້ນຳນາຍບ້ານນັ້ນ ທີ່ໄດ້ເຮັດໃບຮັບໃຫ້ພວກເຮົາ, ເພາະວ່າ ຢ້ານເພິ່ນກວດ ແລະ ຈະພົບຄວາມຫຍຸ້ງຍາກທີ່ຫຼວງພະບາງ. ເວລາເຮືອເຮົາຈອດທີ່ທ່າບ້ານຊຽງມ່ວນ ຕົວເມືອງຫຼວງພະບາງ, ຈິດໃຈຂອງພວກເຮົາກໍ່ມ່ວນຊື່ນຫຼາຍທີ່ສຸດ ເວລາເຫັນລູກເມຍ ແລະ ພີ່ນ້ອງມາຕ້ອນຮັບເຮົາຢ່າງມາກມາຍ ແລະ ອົບອຸ່ນ ; ຕ່າງຄົນກໍ່ຕ່າງເລົ່າສະພາບການທີ່ຫຼວງພະບາງ ແລະ ວຽງຈັນໃຫ້ເຮົາຮູ້ຄວາມຈິງ, ເຮັດໃຫ້ພວກເຮົາເຊື່ອໝັ້ນວ່າອັນຕະລາຍຈາກພວກຝະລັ່ງ ຈະບໍ່ມາເຖິງເຮົາອີກແລ້ວ ແລະ ພວກເຮົາກໍ່ຕົກລົງໃຈ ໄປນຳການປະຕິວັດໃນທັນໃດນັ້ນໂລດ.

ຢູ່ຫຼວງພະບາງຕັ້ງແຕ່ທ້າຍເດືອນຕຸລາ 1945 ເປັນຕົ້ນມາ, ໄດ້ມີພວກຊາວໜຸ່ມພາຍໃຕ້ການນຳຂອງບັນດາບຸກຄົນຜູ້ຮັກຊາດ ທີ່ເປັນສະມາຊິກແນວໂຮມ ລ.ປ.ລ (ໝາຍຄວາມວ່າ ລາວເປັນລາວ) ໄດ້ລຸກຂຶ້ນໂຄ່ນລົ້ມ ແລະຈັບເຈົ້າສຸກບົວວົງ ທີ່ເປັນເຈົ້າແຂວງເກົ່າ ພ້ອມດ້ວຍຄະນະຫຼາຍຄົນ ແລ້ວແຕ່ງຕັ້ງເຈົ້າບຸນຍະວັດ (ນາຍພາສາເກົ່າຂອງຝະລັ່ງ) ຂຶ້ນເປັນເຈົ້າແຂວງແທນ. ເຮົາທີ່ໄດ້ຖືກຮັບເຂົ້າເປັນສະມາຊິກ ລ.ປ.ລ ຜູ້ທີ 12 ກໍ່ໄດ້ຖືກແຕ່ງຕັ້ງໃຫ້ເປັນທີ່ປຶກສາຂອງເຈົ້າແຂວງ. ຂະບວນປະຕິວັດໃນເວລານັ້ນຟົດເດືອດທີ່ສຸດ. ພໍ່ຄ້າຊາວຂາຍ, ຂ້າລາຊະການ, ທະຫານ, ຕຳຫຼວດ, ລວມທັງກອງທະຫານຮັກສາພະລາຊະວັງໄດ້ເຂົ້າມາຮ່ວມມືກັບພວກເຮົາເປັນຈຳນວນຫຼວງຫຼາຍ. ຍ້ອນການໂຄສະນາອັນແຜ່ກວ້າງ ຂອງພວກເຮົາ, ກອງທະຫານລາວທີ່ຢູ່ນຳຝະລັ່ງ ບັນຊາໂດຍທ້າວອ້ວນ ລາທິກຸນ, ບຸນຈັນ ພົມມະລິນ ແລະ ອື່ນໆກໍ່ໄດ້ໜີກັບມາຮ່ວມມືກັບພວກເຮົາ. ທົ່ວທຸກຄຸ້ມຂອງນະຄອນຫຼວງພະບາງລ້ວນແຕ່ມີການໂຄສະນາຂະຫຍາຍແນວໂຮມ ລ.ປ.ລ., ກາງຄືນພວກຊາວໜຸ່ມຍິງຊາຍ ພາກັນຂັບລຳຮ້ອງເພງດ່າພວກລ່າເມືອງຂຶ້ນຝະລັ່ງ ແລະ ສະແດງນ້ຳໃຈຮັກເອກະລາດ ຂອງຊາດຢ່າງຟົດສະນັ່ນນັນເນືອງ.

ໃນຕົ້ນເດືອນ 11 ປີ 1945 ຄະນະຜູ້ແທນລັດຖະບານລາວເອກະລາດ ໂດຍແມ່ນທ້າວສິງ ລັດຕະນະສະໄໝ, ລັດຖະມົນຕີກະຊວງປ້ອງກັນຊາດເປັນຫົວໜ້າ, ທ້າວເກື້ອງ ປະທຸມຊາດ, ຮອງລັດຖະມົນຕີກະຊວງໂຄສະນາເປັນຮອງຫົວໜ້າ ແລະ ຄະນະລັດຖະບານພ້ອມກັບພະນັກງານຫຼາຍຄົນເປັນກຳມະການໄດ້ມາຮອດຫຼວງພະບາງດ້ວຍລົດຍົນ. ຄະນະຜູ້ແທນນີ້ໄດ້ນຳເອົາລັດຖະທຳມະນູນໃໝ່ມາໃຫ້ເຈົ້າຊີວິດສີສະຫວ່າງວົງເຊັນຊື່ ເພື່ອມອບສິດເປັນເທື່ອທຳອິດ ໃຫ້ລັດຖະບານບໍລິຫານບ້ານເມືອງ. ການພົບພໍ້ເຈລະຈາກັນໄດ້ດຳເນີນໄປເກືອບອາທິດໜຶ່ງ. ແຕ່ເຈົ້າຊີວິດສີສະຫວ່າງວົງບໍ່ຍອມເຊັນຊື່ຢ່າງເດັດຂາດ ເພາະເພິ່ນເຄີຍປົກຄອງແບບສົມບູລະພາຍາສິດທິລາດ, ແປວ່າເພິ່ນຢາກສືບຕໍ່ໃຊ້ສິດປົກຄອງແຜ່ນດິນແຕ່ຜູ້ດຽວ. ຂ່າວ

ຄວາມດື້ດ້ານຂອງເຈົ້າຊີວິດນີ້ໄປຮອດຫູປະຊາຊົນ ເຮັດໃຫ້ຄົນສ່ວນຫຼາຍທີ່ກ້າວໜ້າບໍ່ພໍໃຈ, ຈຶ່ງພ້ອມກັນຕີກລິງປິດສິດເພີ່ມລົງ ແລ້ວກວດປຶດເອົາເຄື່ອງຂອງເງິນຄຳ ແລະ ອາວຸດຍຸດທະພັນທີ່ພວກຝະລັ່ງໄດ້ເອົາໄປຝາກໄວ້ກອງຕະລ່າງຂອງພະລາຊະວັງ ກ່ອນຈະຖອນໜີໄປ ໃນຄາວຍີ່ປຸ່ນເຂົ້າມາຍຶດຄອງອິນດູຈີນ. ພວກເຮົາເອົາກອງທະຫານອາສາສະໝັກ ແລະ ຊາວໜຸ່ມເຂົ້າປະຈຳຢູ່ຕາມປະຕູທັງ 4 ດ້ານ, ແລ້ວຍິງປືນຂຶ້ນນາບຂູ່. ເຕັມຖະໜົນຫົນທາງ ອ້ອມພະລາຊະວັງມີປະຊາຊົນທັງຍິງຊາຍ ລວມທັງກອງທະຫານໂສ້ງເສື້ອແດງທີ່ຮັກສາພະລາຊະວັງກໍ່ເຂົ້າມາຮ່ວມມືກັບພວກເຮົາໂຫ່ຮ້ອງເລັ່ງທວງໃຫ້ປົດເຈົ້າຊີວິດລົງ. ເຈົ້າຊີວິດສີສະຫວ່າງວົງເຫັນວ່າຈະສູ້ພວກເຮົາບໍ່ໄຫວກໍ່ແຕ່ງໃຫ້ເຈົ້າສີສະຫວ່າງວັດທະນາຜູ້ເປັນອົງມົງກຸດ ລາຊະກຸມມານລົງມາເຈລະຈາກັບພວກເຮົາວ່າ ຈະປະຕິບັດຕາມຄຳຕ້ອງການ ຂອງພວກເຮົາທຸກປະການ. ເມື່ອຟັງຄວາມຮຽກຮ້ອງຂອງພວກເຮົາແລ້ວ ເຂົາກໍ່ກັບຂຶ້ນຄືນເມືອພະລາຊະວັງ , ຊາວນາທີຕໍ່ມາ ເຂົາກໍ່ເອົາຂໍກະແຈໄຂປະຕູກອງຕະລ່າງພະລາຊະວັງມາມອບໃຫ້ພວກເຮົາ. ປະໂຫເອີຍ ! ກອງຕະລ່າງພະລາຊະວັງຈັ່ງແມ່ນມີຂອງຝະລັ່ງຝາກໄວ້ຫຼາຍ, ມີທັງປືນຈັກແລະ ປືນເລັກຍາວ ແລະ ປືນພົກຫຼາຍພັນກະບອກ : ລູກປືນ, ລູກແຕກ, ພາກມິນ ແລະ ເຄື່ອງສ້ອມແປງປືນຫຼາຍພັນຫີບ ; ເງິນຂາວເປັນຫຼັ້ມ ແລະ ເງິນກີບຫົວຫານ ພ້ອມທັງເງິນ 5 ບັ້, 2 ບັ້ ແລະ 1 ບັ້ ສິບກວ່າໂຕນ ; ແພດຳ, ແພແຫຼ, ແພໄໝແດງ, ເຫຼືອງ ແລະ ຂຽວຫຼາຍພັນໄມ້ ເຊິ່ງເປັນເຄື່ອງຂອງທີ່ເຂົາເອົາມາເພື່ອແລກເອົາຢາຝິ່ນນຳຊົນເຜົ່າມົ້ງ . ນອກຈາກນັ້ນຍັງມີເຄື່ອງນຸ່ງທະຫານ ແລະ ເຄື່ອງໃຊ້ທະຫານຫຼາຍພັນຊຸດທີ່ຍັງໃໝ່ຢູ່. ພວກປະຊາຊົນທີ່ຮັກຊາດຍິນດີເອົາກຽນງົວ, ລົດມ້າ ແລະ ລົດກາມີຍົງຫຼາຍສິບຄັນມາຮັບໃຊ້ພວກເຮົາຂົນສິ່ງຂອງເຫຼົ່ານັ້ນໄປໄວ້ສາງຂອງແຂວງຫຼວງພະບາງ ທີ່ແມ່ນຕຳຫຼວດ ແລະ ພະນັກງານແຂວງເປັນຜູ້ຮັກສາ.

ຫຼັງຈາກເຈົ້າຊີວິດບໍ່ຍອມເຊັນກົດໝາຍລັດຖະທຳມະນູນ ແລະ ໄດ້ປົດເຈົ້າຊີວິດ ລົງແລ້ວຄະນະຜູ້ແທນລັດຖະບານລາວເອກະລາດ ກໍ່ໄດ້ແຕ່ງຕັ້ງຄະນະປົກຄອງແຂວງຄືນທຸກພະແນກ-ເພື່ອປ່ຽນຄະນະປົກຄອງແຂວງຊຸດເກົ່າທີ່ຖືກຈັບ ໂດຍໃຫ້ເຈົ້າບຸນຍະວັດເປັນເຈົ້າແຂວງແລະເຮົາເປັນທີ່ປຶກສາຂອງເຈົ້າແຂວງ.

ຄະນະປົກຄອງແຂວງໄດ້ປະກາດລົບລ້າງລະບອບລູກລ່າມຂອງພະລາຊະວັງ ເຊິ່ງແມ່ນໝົດທັງຕາແສງພານົມທີ່ມີໜ້າທີ່ກ່ຽວຫຍ້າມາ ແລະ ຕັດຟືນມາໃຫ້ເຈົ້າຊີວິດ, ສົ່ງຊາວໜຸ່ມທີ່ເປັນລູກຫຼານຂອງເຂົ້າມາຮັບໃຊ້ເຮັດວຽກກວາດແຜ້ວເຮືອນຊານ ແລະ ກາງບ້ານ, ເຝິກແອບລູກຫຼານມາຟ້ອນນາງແກ້ວໃຫ້ເຈົ້າຊີວິດເບິ່ງເວລາບຸນກຸດສົງການ ແລະ ບຸນຫາດຫຼວງ ແລະ ເປັນສີພາຍເອົາເຈົ້າຊີວິດໄປເບິ່ງບຸນຊ່ວງເຮືອມື້ເດືອນ 9 ດັບ. ພວກທະຫານປ້ອງກັນ ພະລາຊະວັງກໍ່ຖືກຍຸບເລີກ ເພາະວ່າພວກເຮົາໄດ້ແຕ່ງຕຳຫຼວດແຂວງ ໄປຮັກສາພະລາຊະວັງ

ແທນແລ້ວ.

ພວກລູກຫຼານຊາຍເຈົ້າຊີວິດພາກັນສະແດງຄວາມເສົ້າໂສກ ເສຍໃຈ ດ້ວຍວິທີ ມາລວມກັນຢູ່ໃນພະລາຊະວັງ ແລະ ໃນເຮືອນເຈົ້າສີສະຫວ່າງວັດທະນາ ແລ້ວພ້ອມກັນແຖຫົວຫຼອນເພື່ອນດັ່ງພະສົງແຕ່ຫາກຈຶ່ງໜວດຍາວຄືແບບລີສີ. ພວກເຂົາອາດຈະມີເຄື່ອງຈັກ ເພື່ອຕິດຕໍ່ກັບກອງທະຫານຝະລັ່ງ ເພາະວ່າພວກເຮົາບໍ່ໄດ້ໄປກວດຄົ້ນເຮືອນພວກເຂົາ. ນານໆມາພວກເຂົາກໍ່ສົ່ງສຽງອອກມາໃຫ້ພວກເຮົາໄດ້ຍິນວ່າ "ເວລານັ້ນນ້ຳລົດແມ່ນມົດກິນປາ, ເມື່ອໃດນ້ຳມາປາຫາກຈະໄດ້ກິນມົດ". ນັ້ນເປັນຄວາມມາບຊູ່ພວກເຮົາຕາມແຜນການຂອງສັດຕູ.

ຫຼັງຈາກຍຶດອຳນາດທົ່ວແຂວງມາໃນກຳມືຂອງພວກເຮົາແລ້ວ, ພວກເຮົາໄດ້ແຕ່ງຕັ້ງຫົວໜ້າພະແນກຕ່າງໆໂດຍແມ່ນຄົນຂອງຄະນະ ລ.ປ.ລ ທັງໝົດເປັນຜູ້ກຳອຳນາດ. ພວກກອງທະຫານຈີນກົກມິນຕັງ ທີ່ມາປົດອາວຸດຍີ່ປຸ່ນກໍ່ບໍ່ຂັດຂວາງອຳນາດຂອງພວກເຮົາ ແລະ ຍັງຄວບຄຸມພວກທະຫານຝະລັ່ງທີ່ແມ່ນ ທາວຮ້ອຍເອກອິມແຟນ ເປັນຜູ້ບັນຊາມັ້ນໃຫ້ຢູ່ແຕ່ໃນຄ້າຍ, ນອກຈາກໄປຕະຫຼາດຊື້ອາຫານມາກິນແລ້ວບໍ່ໃຫ້ມາກ້ຽວຂອງກັບອຳນາດປະຕິວັດ ຂອງພວກເຮົາ. ທ້າຍສຸດມາ ເຫັນປະຊາຊົນຫຼວງພະບາງດີນຂະບວນຮ້ອງດ່າ ພວກເຂົາຫຼາຍຂຶ້ນຊຶກໄຊ້ ພວກເຂົາກໍ່ພາກັນໜີໄປ ໂດຍອາໄສການຄຸ້ມກັນຂອງພວກທະຫານຈີນກົກມິນຕັງ.

ອາທິດໜຶ່ງຫຼັງຈາກພວກເຮົາຍຶດອຳນາດແລ້ວ, ເຈົ້າເພັດຊະລາດທີ່ເປັນປະມຸກລັດ, ພະຍາຄຳມາວທີ່ເປັນນາຍົກລັດຖະມົນຕີພ້ອມດ້ວຍລັດຖະມົນຕີ ແລະ ຮອງລັດຖະມົນຕີຫຼາຍຄົນໄດ້ຂຶ້ນມາຫຼວງພະບາງເພື່ອຊົມອຳນາດ. ຄະນະລັດຖະບານຈຳນວນໜຶ່ງຍັງຢູ່ວຽງຈັນເພື່ອນຳພາປະຊາຊົນປ້ອງກັນນະຄອນຫຼວງທີ່ພວກທະຫານຝະລັ່ງມາບຊູ່ວ່າ ຈະເຂົ້າຍຶດເອົາ ຈາກທິດບ້ານເກີນ ບ່ອນພວກເຂົາມາເຕົ້າໂຮມກັນຢູ່ແຕ່ຕົ້ນແລ້ວ.

ພວກເຮົາເຮັດການປະຕິວັດຍອນມີຄວາມຮັກຊາດ, ຊັງພວກສັກດີນາ ແລະ ພວກລ່າເມືອງຂຶ້ນຝະລັ່ງມາແຕ່ຕົ້ນແລ້ວ, ແຕ່ພວກເຮົາຫາກຍັງຂາດບົດຮຽນໃນທຸກດ້ານ.ພວກເຮົາໄດ້ອາວຸດ ແລະ ເຄື່ອງຂອງຈາກພະລາຊະວັງມາແລ້ວ ກໍ່ປະກາດຮັບເອົາຊາວໜຸ່ມເຂົ້າເປັນທະຫານ ແລະ ຈັດຕັ້ງເຍົາວະຊົນ ແລະ ເຍົາວະນາລີຢູ່ໃນຕົວເມືອງຫຼວງພະບາງ, ພາຍໃຕ້ການນຳພາຂອງແນວໂຮມ ລ.ປ.ລ. ແລະ ອຳນາດການປົກຄອງແຂວງ, ເມືອງ ແລະ ຕາແສງ. ໃນເວລາອາທິດດຽວ ພວກເຮົາສ້າງກອງທະຫານໄດ້ 4 ກອງພັນ, ຕື່ມໃສ່ກຳລັງເກົ່າທີ່ມີແລ້ວເປັນ 5 ກອງພັນໝົດທັງມວນ. ຜູ້ບັນຊາການທະຫານແຂວງແມ່ນທ່ານ ຄຳຜາຍ ບຸບຜາ ທີ່ໄດ້ຮັບຍົດເປັນພັນຕີ ; ຜູ້ຮອງແມ່ນຮ້ອຍເອກ ອວນ ລາທິກຸນ ແລະ ຮ້ອຍໂທ ບຸນຈັນ ພົມມະລົມ ທີ່ຫາກໍ່ໜີຈາກພວກຝະລັ່ງມາຮ່ວມກັບພວກເຮົາ. ທ່ານ ຄຳເຜົ້າ ບຸບຜາເປັນຫົວໜ້າພະແນກຕຳຫຼວດ, ທ່ານ ຄຳເຫຼັກ ໄຊຍະສິດ ເປັນຫົວໜ້າພະແນກໂຄສະນາ,

ທ່ານທິດ ຄຳແພງ ໄຊຍະສິດ ເປັນຫົວໜ້າພະແນກຕິດຕໍ່ກັບກອງທັບຈີນ ແລະ ບຸກຄົນອື່ນທີ່ຫ້າວຫັນຮ່ວມມືກັບພວກເຮົາກໍ່ລ້ວນແຕ່ໄດ້ຖືກແຕ່ງຕັ້ງເຂົ້າເປັນພະນັກງານ ຊ່ວຍວຽກພະແນກຕ່າງໆຂອງແຂວງ. ຫົວໜ້າພະແນກປົກຄອງແຂວງ ແລະ ພະນັກງານຊ່ວຍວຽກດັ່ງກ່າວນີ້ ລ້ວນແຕ່ເຮັດວຽກດ້ວຍນ້ຳໃຈຮັກຊາດ ບໍ່ໄດ້ຮັບເງິນເດືອນຈັກຄົນ.

ການເຝິກແອບທະຫານພວກເຮົາ ກໍ່ມອບໃຫ້ພວກນາຍທະຫານເກົ່າ ທີ່ອອກມາຈາກກອງທະຫານຝະລັ່ງເປັນຜູ້ເຝິກແອບໄປຕາມແບບເກົ່າຄື ຫັດລຽນແຖວ ແລະ ຍ່າງໃຫ້ຖືກກັນເປັນລະບຽບ, ຫັດຊ້ອມຮົບ ແລະ ຍິງແບ່ນດ້ວຍລູກປືນແທ້ ເພາະວ່າພວກເຮົາມີລູກປືນຫຼາຍ . ນອກຈາກລູກປືນທີ່ພວກເຮົາຢຶດເອົາໄດ້ຈາກພະລາຊະວັງເຈົ້າຊີວິດແລ້ວ ພວກທະຫານກົກມິນຕັງ ກໍ່ຍັງເອົາປືນແລະລູກປືນທີ່ພວກເຂົາຢຶດໄດ້ຈາກຍີ່ປຸ່ນມາໃຫ້ພວກເຮົາຕື່ມຈຳນວນໜຶ່ງ . ພວກຈີນເອົາອາວຸດມາໃຫ້ພວກເຮົາແນວນັ້ນກໍ່ເພື່ອລະດົມກຳລັງທະຫານ ແລະ ປະຊາຊົນໃຫ້ເຕົ້າໂຮມກັນໄປປິດລ້ອມ ແລະ ນາບຊູ່ວ່າຈະເຂົ້າບຸກຕີພວກຝະລັ່ງ, ແຕ່ພວກຈີນ ຊ້ຳພັດທຳທ່າວ່າປ້ອງກັນບໍ່ໃຫ້ພວກເຮົາເຮັດຮ້າຍໃສ່ພວກຝະລັ່ງ ແລ້ວເຈລະຈາກັບພວກຝະລັ່ງໃຫ້ເອົາເງິນໃຫ້ພວກຈີນເປັນເງິນກີບ ແລະ ເງິນໂດລາເປັນຈຳນວນຫຼາຍ ແລ້ວພວກເຂົາກໍ່ປ້ອງກັນໃຫ້ພວກຝະລັ່ງໜີໄປຢ່າງປອດໄພ.

ຂະບວນປະຕິວັດຂອງພວກເຮົາເທື່ອນີ້ ແມ່ນເກີດຂຶ້ນຍ້ອນຄວາມຮັກຊາດຂອງພວກຂ້າລາຊະການ ແລະ ທະຫານເກົ່າ, ພ້ອມກັບພໍ່ຄ້າຊາວຂາຍ, ຊາວໜຸ່ມ ແລະ ຊາວນາທີ່ຄຽດຊັງພວກສັກດີນາ ແລະ ພວກລ່າເມືອງຂຶ້ນຝະລັ່ງມາແຕ່ເຫິງແລ້ວ. ຄົນພວກນີ້ແມ່ນລ້ວນແຕ່ເຫັນດີນຳຄວາມໂຄສະນາອົບຮົມຂອງຄະນະ ລ.ປ.ລ. ທີ່ເວົ້າວ່າ ຄົນລາວພວກເຮົາ ທີ່ຕົກເປັນຂ້ອຍຂ້າຂອງຊາດອື່ນ ຕ້ອງຈັບໂອກາດອັນດີນີ້ເພື່ອລວມກັນເປັນຄົນລາວຄືນ, ປົກຄອງປະເທດຊາດໄປຕາມແບບລາວເອກະລາດ, ບໍ່ເປັນຂ້ອຍຂ້າຂອງຊາດອື່ນອີກ. ແຕ່ວ່າ ການໂຄສະນາອົບຮົມແບບນີ້ ກໍ່ຍັງເຮັດຢູ່ແຕ່ໃນຕົວເມືອງຫຼວງພະບາງ ແລະ ບັນດາບ້ານອ້ອມແອ້ມນັ້ນ, ບໍ່ທັນຂະຫຍາຍອອກໄປຮອດຊາວຊົນນະບົດ ແລະ ບໍ່ທັນໄດ້ຈັດຕັ້ງປະຊາຊົນ ເຂົ້າແນວໂຮມຢ່າງກວ້າງຂວາງ ເພື່ອເປັນກຳລັງຂອງການປະຕິວັດ, ເພາະວ່າໃນຈຳນວນພວກເຮົານັ້ນບໍ່ທັນມີຈັກຄົນທີ່ຮູ້ແນວທາງການປະຕິວັດ. ເວລານັ້ນມີຊາວຫວຽດນາມທີ່ເປັນພໍ່ຄ້າ ແລະຂ້າລາຊະການຫຼາຍຄົນເຂົ້າມາຮ່ວມມືນຳພວກເຮົາຢ່າງຫ້າວຫັນທີ່ສຸດ, ແຕ່ຜູ້ໃດກໍ່ຍັງຂາດທິດສະດີປະຕິວັດຄືດຽວກັນ.

ຍ້ອນເຫດຜົນທີ່ກ່າວຂ້າງບົນນີ້, ພວກເຮົາຈຶ່ງເຮັດຫຍັງກໍ່ເຮັດຢ່າງເປີດເຜີຍໝົດ. ການລະດົມເອົາທະຫານໃໝ່ກໍ່ປະກາດໄປຢ່າງເປີດເຜີຍ. ການເຝິກແອບທະຫານ ແລະ ຈັດບ່ອນໃຫ້ທະຫານຢູ່ກໍ່ເຮັດຢ່າງເປີດເຜີຍ. ການຮຽກຮ້ອງໃຫ້ປະຊາຊົນເລ່ຍລາຍເງິນ ແລະ ວັດຖຸສິ່ງຂອງມາລ້ຽງກອງທະຫານກໍ່ເຮັດຢ່າງເປີດເຜີຍ. ການຈະສົ່ງກອງທະຫານອອກໄປຕີພວກ

ຝະລັ່ງ ທີ່ໄປລວມກັນຕັ້ງຄ້າຍຢູ່ບ້ານປາກຊ້າກໍ່ປ່າວໃຫ້ປະຊາຊົນຮູ້ ເພື່ອວ່າຮອດຍາມກອງທະຫານຈະເດີນທາງອອກຈາກຕົວເມືອງໄປນັ້ນ ໃຫ້ຊາວເມືອງຫລວງພະບາງໄປຢືນລຽນແຖວກັນຢູ່ສອງຟາກທາງ ແກວ່ງທຸງຊາດຂະໜາດນ້ອຍ ຕົບມືຮອງໂຮຊົມເຊີຍກອງທະຫານທີ່ຍ່າງຜ່ານໄປ, ພວກນາງສາວເຍົາວະນາລີຕ່າງກໍ່ເອົາພວງດອກໄມ້ ແລະ ມັດບຸລີທີ່ຕົນເຮັດເອົາດ້ວຍຈິດໃຈຮັກຊາດອັນຜ່ອງໃສ ໄປມອບໃຫ້ແກ່ທະຫານແຕ່ລະຄົນ ທັງເວົ້າອວຍພອນໄຊ ດ້ວຍໃບໜ້າອັນຍິ້ມແຍ້ມແຈ່ມໃສ, ພວກຜູ້ເຖົ້າຜູ້ແກ່ກໍ່ກ່າວຄວາມອວຍພອນ ແລະ ບັນດາພະສົງ ກໍ່ຟົດພວງດອກໄມ້ໂປຍນ້ຳມົນພ້ອມສູດໄຊຍັນໂຕໃຫ້ກອງທະຫານ ໄປຕີສັດຕູໄດ້ໄຊຊະນະ. ຖ້າຈະເວົ້າຕາມທິດສະດີປະຕິວັດແລ້ວ ແມ່ນພວກເຮົາເຮັດຜິດຫຼັກການ. ຍ້ອນບໍ່ຮູ້ຮັກສາຄວາມລັບ . ແຕ່ໃນຕົວຈິງຂອງການສູ້ຮົບກອງທະຫານຊ້ຳພັດໄດ້ຮັບໄຊຊະນະຍ້ອນບຸກຕີຄ້າຍສັດຕູ ທີ່ບ້ານປາກຊ້າແຕກ, ສັດຕູຕາຍຫຼາຍຄົນ, ສ່ວນເຫຼືອນັ້ນກໍ່ແຕກກະຈັດກະຈາຍໄປ, ປະວັດຖຸສິ່ງຂອງ, ຊັບສິນບັດ ແລະ ອາວຸດຍຸດທະພັນໄວ້ເປັນຈຳນວນຫຼວງຫຼາຍ. ພວກຝະລັ່ງປະລາໄຊແນວນັ້ນກໍ່ຍ້ອນພວກເຂົາມີກຳລັງໜ້ອຍ, ບໍ່ມີປະຊາຊົນຮ່ວມມື ແລະ ຂາດບົດຮຽນຄືກັນ. ໄຊຊະນະເທື່ອນີ້ເຮັດໃຫ້ກອງທະຫານເຮົາເພີ້ມກຳລັງໃຈຂຶ້ນຫຼາຍ, ປະຊາຊົນພົນລະເມືອງທັງມວນຊື່ນມ່ວນເບີກບານຕ້ອນຮັບກອງທະຫານເຮົາ ທີ່ກັບຄືນມາຢ່າງຄົບຖ້ວນ ແລະ ປອດໄພ ສະຫວັດດີນັ້ນຢ່າງມະໂຫລານກວ່າເວລາເຮັດພິທີສົ່ງໄປນັ້ນຫຼາຍສ່ວນ ໂດຍເຕົ້າໂຮມກັນເປັນແຕ່ລະຄຸ້ມໄປກິນລ້ຽງຕ້ອນຮັບ ແລະ ລຳວົງຊື່ນມ່ວນຢ່າງໃຫຍ່ຫຼວງ ເຮັດໃຫ້ຂ່າວດີ ແລະ ຊື່ສຽງຂອງກອງທະຫານເຮົາແຜ່ກ້ວາງອອກໄປທົ່ວທຸກທິສານຸທິດ.

ມາເຖິງທ້າຍເດືອນທັນວາປີດຽວນັ້ນ ເຮົາຊ້ຳພັດໄດ້ຮັບຄຳສັ່ງຈາກລັດຖະບານລາວ ເອກະລາດແຕ່ງຕັ້ງໃຫ້ເຮົາກັບຄືນໄປເປັນເຈົ້າແຂວງຫົວພັນອີກ ເພື່ອຮ່ວມມືກັບກອງທະຫານຫວຽດນາມທີ່ພະ ກຢຶດຄອງຢູ່ແຂວງນີ້. ເຮົາບໍ່ຮູ້ວ່າຈະໄປປະຕິບັດໜ້າທີ່ຂອງເຮົາແນວໃດ , ເພາະວ່າຢ້ານກອງທະຫານຫວຽດນາມຈະບໍ່ໄວ້ວາງໃຈເຮົາ ເຊິ່ງເມື່ອກ່ອນນີ້ ເຮົາໄດ້ຖືກກອງທະຫານຝະລັ່ງເອົາໜີຈາກຊຳເໜືອໄປນຳເຂົາແລ້ວ. ແຕ່ວ່າ ເມື່ອລັດຖະບານສັ່ງແລ້ວເຮົາກໍ່ປະຕິບັດຕາມ. ລັດຖະບານໄດ້ສົ່ງທະຫານລາວອິດສະຫຼະກອງຮ້ອຍໜຶ່ງໄປພ້ອມເຮົາໂດຍແມ່ນຮ້ອຍເອກຄຳກ້ອງເປັນຜູ້ບັນຊາ ເພື່ອໄປຮ່ວມມືກັບກອງທະຫານຫວຽດນາມປ້ອງກັນຕົວເມືອງຊຳເໜືອ ແລະ ແຂວງຫົວພັນ. ໄປຮອດເມືອງຊ່ອນ ພວກເຮົາຮູ້ວ່າກອງທະຫານຝະລັ່ງກອງຮ້ອຍໜຶ່ງ ມາຕັ້ງຄ້າຍຢູ່ບ້ານນາເວີງໃກ້ກັບບ້ານສົບຊາງ. ພວກເຮົາໄດ້ເປີກສາ ວາງແຜນການນຳກັນກັບກອງທະຫານທ້ອງຖິ່ນ ແລ້ວກໍ່ພ້ອມກັນໄປຕີທະຫານຝະລັ່ງ ແລະ ທະຫານທຸ່ນທີ່ຄ້າຍນາເວີງແຕກ, ຂ້າສັດຕູຕາຍຄາທີ່ຈຳນວນໜຶ່ງ, ສ່ວນທີ່ເຫຼືອ ກໍ່ໄດ້ແຕກກະຈັດກະຈາຍໄປ ; ພວກເຮົາຈັບເອົາສັດຕູບໍ່ໄດ້ ຍ້ອນວ່າແຜນການສົມທົບກັບທະຫານທ້ອງຖິ່ນຍັງເຮັດບໍ່ທັນດີ, ແຕ່ກໍ່ຢຶດເອົາອາວຸດຍຸດທະພັນ ແລະ ວັດຖຸສິ່ງຂອງຈຳນວນຫຼາຍສົມ

ຄວນ. ຫຼັງຈາກໄຊຊະນະແລ້ວ ພວກເຮົາໄດ້ກັບມາເມືອງຈ່ອນ ເພື່ອພ້ອມກັນສຳຫຼວດເບິ່ງຈຸດດີ ແລະ ຈຸດອ່ອນໃນການຕີສັດຕູເທື່ອນີ້. ພວກເຮົາໄດ້ເຫັນວ່າຈຸດດີພວກເຮົາ ແມ່ນຕີຄາຍສັດຕູແຕກ ເຮັດໃຫ້ພວກເຮົາໄດ້ຮັບໄຊຊະນະເປັນເທື່ອທຳອິດໃນການປະທະກັບສັດຕູ ທີ່ເຄີຍເປັນນາຍພວກເຮົາມາເປັນເວລາ 60 ກວ່າປີ, ເຮັດໃຫ້ກຳລັງໃຈຂອງກອງທະຫານລາວເຮົາຂຶ້ນແຮງກວ່າເກົ່າ ແລະ ປະຊາຊົນກໍ່ເຊື່ອໝັ້ນຕໍ່ຄວາມສາມາດຂອງກຳລັງ ປະຕິວັດ ແລ້ວກໍ່ລະດົມລູກຫຼານຂອງຂະເຈົ້າໃຫ້ສະໝັກເຂົ້າເປັນທະຫານ ແລະ ເປັນພະນັກງານ ປະຕິວັດຫຼາຍຂຶ້ນຕື່ມ. ພວກເຮົາຜ່ານໄປ ຫຼືແວ່ເຊົາຢູ່ບ່ອນໃດ ພວກເຍົາວະຊົນ ແລະ ເຍົາວະນາລີພາຍໃຕ້ການຊີ້ນຳຂອງອົງການປົກຄອງທ້ອງຖິ່ນ ກໍ່ລະດົມເອົາກຳລັງວັດຖຸ ແລະ ກຳລັງແຮງຈາກປະຊາຊົນມາຕ້ອນຮັບ ແລະ ລ້ຽງເກືອພວກເຮົາຢ່າງອີ່ມໜຳສຳລານ ແລະ ຮ່ວມກັບພວກເຮົາຈັດການມ່ວນຊື່ນຢ່າງສຸດອົກສຸດໃຈຫຼາຍຄືນຕິດກັນ.

ຈຸດອ່ອນຂອງພວກເຮົາແມ່ນວິທີຕີຂອງພວກເຮົາ ບໍ່ທັນສາມາດດັບສູນສັດຕູທັງໝົດໄດ້, ຍັງປະໃຫ້ສັດຕູຈຳນວນໜຶ່ງໂຕນໜີໄປໄດ້, ການກະກຽມທີ່ກຳບັງຂອງພວກເຮົາຍັງບໍ່ທັນດີຈຶ່ງເຮັດໃຫ້ອ້າຍນ້ອງພວກເຮົາເສຍຊີວິດ ແລະ ບາດເຈັບຈຳນວນໜຶ່ງ, ການວາງແຜນການປະສານງານລະຫວ່າງປືນເຄີກ, ປືນຈັກ, ປືນເລັກຍາວ ແລະ ການປະສານງານລະຫວ່າງ ທະຫານຫຼວງກັບທະຫານລາດກອງຫຼອນຍັງບໍ່ທັນແໜ້ນແຟ້ນ, ປ່ອຍໃຫ້ສັດຕູໂຕນໜີໄປໝົດແລ້ວ ທະຫານລາດກອງຫຼອນຈຶ່ງມາຮອດ ; ອັນສຳຄັນແມ່ນພວກເຮົາຍັງບໍ່ທັນຮູ້ລະດົມ ແລະ ຈັດຕັ້ງປະຊາຊົນໃຫ້ຮ່ວມມືກັບພວກເຮົາ, ໝາຍຄວາມວ່າ ພວກເຮົາຍັງໜັກໄປແຕ່ທາງການທະຫານ ແຕ່ດ້ານດຽວ.

ຫຼັງຈາກພັກຜ່ອນຢູ່ເມືອງຈ່ອນສາມມື້ແລ້ວ ພວກເຮົາໄດ້ອອກເດີນທາງໄປຫາຊຳເໜືອ . ໄປຮອດເມືອງຍີດ ພວກເຮົາໄດ້ພົບກອງທະຫານຫວຽດນາມ ທີ່ມາຕ້ອນພວກເຮົາຢູ່ທີ່ນັ້ນ . ພວກເຮົາທັງສອງຝ່າຍໄດ້ຊີ້ແຈງເລື່ອງຕ່າງໆກ່ຽວກັບສະພາບການແຂວງຫົວພັນ ແລະ ສະພາບການຂອງປະເທດລາວໃຫ້ກັນຟັງ, ຕ່າງຝ່າຍຕ່າງຍິນດີຮ່ວມມືກັນ ຕີຕ້ານພວກລ່າເມືອງຂຶ້ນຝະລັ່ງ ແລະ ປົກປັກຮັກສາເອກະລາດຂອງຊາດ ແລະ ວາງແຜນການນຳກັນ ເປັນເອກະພາບແລ້ວກໍ່ພ້ອມກັນເດີນທາງຕໍ່ໄປຊຳເໜືອ. ນະທີ່ນີ້ແມ່ປະຊາຊົນຫຼາຍຮ້ອຍຄົນໄດ້ເອົາຊໍ່ດອກໄມ້ ຕີຄ້ອງຕີກອງມາຕ້ອນຮັບພວກເຮົາທີ່ເປັນຜູ້ແບກທຸງຊາດລາວເອກະລາດ ຜືນທຳອິດເຂົ້າໄປໃນຕົວເມືອງນີ້. ຄືນມື້ນັ້ນປະຊາຊົນຕົວເມືອງຊຳເໜືອພ້ອມກັບກອງທະຫານ ຫວຽດນາມໄດ້ຈັດການກິນລ້ຽງ ແລະ ມ່ວນຊື່ນຕ້ອນຮັບພວກເຮົາຢ່າງຄຶກຄື້ນມ່ວນຊື່ນທີ່ສຸດ. ມື້ລຸນມາຄະນະຮັບຜິດຊອບຝ່າຍປະຕິວັດທັງທ້ອງຖິ່ນ ແລະ ທັງພວກທີ່ສູນກາງແຕ່ງຕັ້ງມາກັບຄະນະຮັບຜິດຊອບກອງທະຫານຫວຽດນາມ ໄດ້ປະຊຸມກັນເປັນເທື່ອທຳອິດ ເພື່ອພ້ອມກັນຕີລາຄາສະພາບການ ແລະ ວາງແຜນການວຽກງານທີ່ທັງສອງຝ່າຍຈະຕ້ອງພ້ອມກັນປະຕິບັດ ເພື່ອປົກ

ປົກປັກຮັກສາເອກະລາດແຫ່ງຊາດ ຕ້ານພວກລ່າເມືອງຂຶ້ນຝະລັ່ງທີ່ອາດຈະຕ່າວຄືນມາ ຮຸກຮານແຂວງຫົວພັນອີກ. ໃນກອງປະຊຸມເທື່ອນີ້ ເຮົາໄດ້ມີໂອກາດພົບກັບສະຫາຍເຊີນ ຜູ້ບັງຄັບກອງຮ້ອຍ, ສະຫາຍຮຽນມາຍ ຜູ້ບັນຊາການສູງສຸດຂອງກອງທະຫານຫວຽດນາມ ແລະ ບັນດາພະນັກງານຫວຽດນາມຜູ້ອື່ນອີກ.

ການປະຊຸມໄດ້ເປັນໄປຢ່າງສະໜິດສະໜົມ ແລະ ເຂົ້າໃຈກັນດີ. ຕໍ່ຈາກນັ້ນ ແຕ່ລະຝ່າຍກໍ່ປະຕິບັດແຜນການທີ່ຕົກລົງກັນນັ້ນຕາມໜ້າທີ່ຂອງໃຜລາວ ; ເມື່ອຝ່າຍໃດ ຫາກເຫັນຕ້ອງການກໍ່ໄປພົບພໍ້ກັບອີກຝ່າຍໜຶ່ງ ເພື່ອແລກປ່ຽນຄຳຄິດຄຳເຫັນກັນ ເພື່ອດັດແປງວຽກງານ ໃຫ້ໄດ້ຮັບຜົນດີຂຶ້ນຈັກໄຊ. ວຽກງານທີ່ພວກເຮົາພ້ອມກັນເຮັດແຕ່ລະວັນ ແມ່ນອົບຮົມພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນໃຫ້ເຂົ້າໃຈວ່າສະພາບການຂອງໂລກ ມີການປ່ຽນແປງໃໝ່ ; ຕັ້ງແຕ່ມື້ປະຊາຊົນລັດເຊຍ ພາຍໃຕ້ການນຳພາຂອງທ່ານເລນິນໄດ້ເຮັດການປະຕິວັດໂຄ່ນລົ້ມພະເຈົ້າຊາລົງແລ້ວ ຈັດຕັ້ງປະເທດເປັນລະບອບສັງຄົມນິຍົມແຕ່ປີ 1917 ພຸ້ນມາ , ໂລກມະນຸດຂອງເຮົາໄດ້ແບ່ງເປັນສອງຝ່າຍ ຄືຝ່າຍໜຶ່ງແມ່ນຝ່າຍປົດປ່ອຍຊາດ ເພື່ອກ້າວຂຶ້ນສັງຄົມນິຍົມ, ແລະ ຝ່າຍໜຶ່ງແມ່ນຝ່າຍຈັກກະພັດລ່າເມືອງຂຶ້ນ ທີ່ປາບປາມປະຊາຊົນປະເທດໂຕເອງ ແລະ ປະເທດຕ່າງໆໃນໂລກ,ເອົາປະເທດເຫຼົ່ານັ້ນໄປເປັນເມືອງຂຶ້ນຂອງໂຕເພື່ອຂູດຮີດປະຊາຊົນໄປສ້າງຄວາມຮັ່ງມີໃຫ້ພວກເຂົາ ; ຍ້ອນແນວທາງອັນຜິດພາດ ແລະ ບໍ່ຍຸຕິທຳຂອງພວກເຂົານັ້ນ ອິດທິພົນຂອງພວກເຂົາຈຶ່ງອ່ອນລົງ ແລະ ນັບມື້ນັບຈະປະລາໄຊ , ຝ່າຍສັງຄົມນິຍົມ ແລະ ປົດປ່ອຍຊາດນັບມື້ນັບຈະແຂງຂຶ້ນ ແລະ ມີໄຊຊະນະໃນທົ່ວໂລກ; ປະຊາຊົນລາວພວກເຮົາຄວນເຊື່ອໝັ້ນຕໍ່ແນວທາງຂອງລັດຖະບານເອກະລາດຂອງພວກເຮົາແລະຕັ້ງໜ້າຮ່ວມມືກັບກອງທະຫານ ແລະ ປະຊາຊົນຫວຽດນາມເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາໃຫ້ຈະເລີນຮຸ່ງເຮືອງ, ເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນເຮົາອີ່ມໜຳສຳລານກວ່າເກົ່າຂຶ້ນເລື້ອຍໆ. ຜົນທີ່ໄດ້ຮັບກໍ່ຄືປະຊາຊົນມ່ວນຊື່ນເບີກບານຕັ້ງໜ້າເກັບກ່ຽວເຂົ້າ ແລະ ເຮັດໄຮ່ສວນ ພ້ອມທັງປັບປຸງການຈັດຕັ້ງອຳນາດການປົກຄອງ, ກອງທະຫານແຂວງ, ທະຫານລາດກອງໜອນ ແລະ ອົງການມະຫາຊົນເພື່ອປ້ອງກັນບ້ານຊ່ອງ . ການພົວພັນຊື້ຂາຍເຄື່ອງຂອງກັບປະເທດຫວຽດນາມ ໄດ້ຂະຫຍາຍຕົວດີຂຶ້ນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນອຸດົມສົມບູນຂຶ້ນກວ່າເກົ່າ.

ມາຮອດກາງເດືອນກຸມພາ 1946 ເຮົາໄດ້ຮັບໂທລະເລກຈາກລັດຖະບານສັ່ງມາໃຫ້ຍົກຍ້າຍເຮົາຄືນໄປຢູ່ຫຼວງພະບາງ ແລະ ແຕ່ງຕັ້ງທ້າວອອນທີ່ເປັນເຈົ້າເມືອງຊຽງຄໍ້ ມາວ່າໜ້າທີ່ເຈົ້າແຂວງຫົວພັນແທນເຮົາ. ຫຼັງຈາກມອບວຽກໃຫ້ເຈົ້າແຂວງຜູ້ໃໝ່ແລ້ວ ເຮົາໄດ້ອອກເດີນທາງຈາກຊຳເໜືອໄປຫຼວງພະບາງໂລດ.

IV. ຝະລັ່ງກັບຄືນມາລາວ

ເມື່ອເຈົ້າໄປຮອດຫຼວງພະບາງແລ້ວ ເຈົ້າເພັດຊະລາດໄດ້ເອີ້ນເອົາເຈົ້າເຂົ້າຮ່ວມກອງປະຊຸມລັດຖະບານນຳ ; ເພິ່ນໄດ້ແຈ້ງໃຫ້ທຸກຄົນຮູ້ວ່າ ສະພາບການທົ່ວປະເທດມີຄວາມຫຍຸ້ງຍາກສັບສົນຫຼາຍ, ເພາະວ່າກອງທະຫານຝະລັ່ງທີ່ເຂົ້າມາແຂວງສະຫວັນນະເຂດ ພ້ອມກັບກອງທະຫານອັງກິດທີ່ມາປົດອາວຸດທະຫານຍີ່ປຸ່ນນັ້ນ ໄດ້ຂະຫຍາຍກຳລັງຂອງພວກເຂົາ ແລະ ພວມຈະຂຶ້ນມາຕີຢຶດເອົາແຂວງຄຳມ່ວນບ່ອນທີ່ເຈົ້າສຸພານຸວົງ ບັນຊາການກອງທະຫານ ປ້ອງກັນຢູ່ນັ້ນ. ຖ້າວ່າພວກເຂົາຢຶດໄດ້ແຂວງຄຳມ່ວນແລ້ວ ພວກເຂົາຈະກ້າວຂຶ້ນມາຕີວຽງຈັນ . ເພາະສະນັ້ນແຜນການພວກເຈົ້າຈຶ່ງແມ່ນສຸມກຳລັງປ້ອງກັນທ່າແຂກ ແລະ ວຽງຈັນ, ແຕ່ພ້ອມກັນນັ້ນພວກເຈົ້າກໍຕ້ອງກຽມຕັ້ງຖານທີ່ໝັ້ນຂອງພວກເຈົ້າຢູ່ພາກເໜືອ ; ຖ້າແຂວງຫຼວງພະບາງຖືກມາບຸກ ພວກເຈົ້າກໍຈະຂຶ້ນໄປຕັ້ງຢູ່ປາກແບງ, ປາກທາ ຫຼື ຫ້ວຍຊາຍ ເພື່ອສືບຕໍ່ຕໍ່ສູ້ປົດປ່ອຍຊາດ. ດັ່ງນັ້ນ ລັດຖະບານຈຶ່ງແຕ່ງຕັ້ງໃຫ້ເຈົ້າໄປເປັນເຈົ້າເມືອງງຣຸນ, ແຕ່ໃຫ້ປະຈຳຢູ່ປາກແບງເພື່ອກະກຽມສະບຽງອາຫານໄວ້ລ້ຽງພາກສ່ວນລັດຖະບານ ແລະ ກອງທະຫານທີ່ຈະຄ່ອຍທະຍອຍກັນຂຶ້ນໄປທີ່ນັ້ນ. ຕັ້ງແຕ່ນັ້ນຕໍ່ມາເຈົ້າກໍເອົາຄອບຄົວຂອງເຈົ້າຂຶ້ນໄປຢູ່ປາກແບງ, ຈັດຕັ້ງກອງພະລາທິການຂຶ້ນເພື່ອກຳກັບການເກັບໂຮມສະບຽງອາຫານ ແລ້ວຕົວເຈົ້າກໍແລ່ນລົງມາລາຍງານຕໍ່ລັດຖະບານອາທິດລະເທື່ອ, ພາຍຄວາມວ່າປະຈຳຢູ່ສອງບ່ອນນີ້ບ່ອນລະອາທິດ.

ຢູ່ທີ່ຫຼວງພະບາງ ພວກເຈົ້າໄດ້ຊາບຂ່າວວ່າກອງທະຫານຝະລັ່ງ ໄດ້ຂຶ້ນມາບຸກຕີເຂົ້າແຂວງຄຳມ່ວນຕັ້ງແຕ່ຕົ້ນເດືອນມີນາ ແລະ ຄືບໜ້າຫາຕົວເມືອງທ່າແຂກເລື້ອຍໆ, ປະຊາຊົນ ແລະ ກຳລັງປະກອບອາວຸດໄດ້ຮ່ວມແຮງ ແລະ ຮ່ວມໃຈກັນຕໍ່ສູ້ສັດຕູຢ່າງແຂງແຮງ. ວັນທີ 21 ມີນາເປັນວັນທີ່ພວກລ່າເມືອງຂຶ້ນຝະລັ່ງບຸກຕີເຂົ້າຕົວເມືອງທ່າແຂກ ຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ. ພວກເຂົາໃຊ້ທັງກອງທະຫານຮາບບຸກເຂົ້າທາງພື້ນດິນໂດຍມີປືນໃຫຍ່ຍິງໜູນຫຼັງ ແລະ ໃຊ້ເຮືອບິນຖິ້ມລະເບີດ ແລະ ລະດົມຍິງໃສ່ປະຊາຊົນ ; ພວກເຂົາຂ້າຜູ້ເຖົ້າ ແລະ ແມ່ຍິງຢ່າງໄຮ້ສິນທຳ ແລະ ຈັບເອົາເດັກນ້ອຍເປັນຈຳນວນຫຼາຍຍັດເຂົ້າກະເປົາປ່ານ ມັດຕິດກັບກ້ອນຫີນຖິ້ມລົງນ້ຳຂອງຢ່າງໄຮ້ມະນຸດສະທຳທີ່ສຸດ. ລັດຖະບານຈຶ່ງຕົກລົງເອົາວັນທີ 21 ມີນາເປັນວັນຄຽດແຄ້ນຂອງຊາດ.

ຫຼັງຈາກຢຶດໄດ້ແຂວງຄຳມ່ວນແລ້ວ, ພວກລ່າເມືອງຂຶ້ນຝະລັ່ງໄດ້ເກນເອົາຊາວໜຸ່ມເຂົ້າເປັນທະຫານ, ແຕ່ງໃຫ້ລູກມືທີ່ໂຕນໜີຈາກຊາດໄປຫາພວກເຂົານັ້ນ ບັນຊາ ແລະ ກຽມສືບຕໍ່ຂຶ້ນມານະຄອນຫຼວງວຽງຈັນ. ຕໍ່ໜ້າກຳລັງອັນຫຼາຍກວ່າຂອງສັດຕູແນວນັ້ນ, ພາກສ່ວນລັດຖະບານ ແລະ ກອງທະຫານລາວເອກະລາດ ໄດ້ເອົາຕົວຫຼີກໜີເຂົ້າໄປສູ່ດິນແດນ ປະເທດ

ທວຽດນາມ ແລະ ປະເທດໄທໃນທ້າຍເດືອນມີນາ ແລະ ຕົ້ນເດືອນເມສາ 1945 ເພື່ອເຕົ້າໂຮມ ແລະ ປັບປຸງກຳລັງສຳລັບກັບຄືນໄປເຮັດການໂຈມຕີປົດປ່ອຍຊາດ. ສ່ວນພວກກອງທະຫານທີ່ໄດ້ໄປຢູ່ນຳປະຊາຊົນຕາມຊົນນະບົດນັ້ນ ຍັງສືບຕໍ່ດັກສະກັດຕີສັດຕູ ຕາມຄວາມສາມາດຂອງຕົນຢູ່ຕາມແຂວງຕ່າງໆ.

ຢູ່ທີ່ຫຼວງພະບາງ, ຫຼັງຈາກຮູ້ຂ່າວວ່າກອງທະຫານຝະລັ່ງ ເຂົ້າຢຶດເອົານະຄອນວຽງຈັນແລ້ວ, ເຈົ້າເພັດຊະລາດພ້ອມດ້ວຍຄະນະລັດຖະບານ ແລະ ນາຍທະຫານຈຳນວນໜຶ່ງໄດ້ພາກັນໜີຂ້າມນ້ຳຂອງໄປຢູ່ແຂວງອຸຕະລະດິດຂອງປະເທດໄທ, ຫຼັງຈາກນັ້ນກໍ່ໄປຫາໝູ່ຄະນະຂອງເພິ່ນທີ່ບາງກອກ. ສ່ວນພວກເຮົາທີ່ເປັນຄະນະປົກຄອງແຂວງ ແລະ ເມືອງ ໄດ້ພາກັນໄປມອບຕຳແໜ່ງເຈົ້າຊີວິດຄືນໃຫ້ເຈົ້າສີສະຫວ່າງວົງ ພ້ອມທັງມອບໜ້າທີ່ໃຫ້ເຂົາປ້ອງກັນເອົາປະຊາຊົນບ້ານເມືອງ ແລ້ວໄດ້ທະຍອຍກັນຂຶ້ນເມືອທາງພາກເໜືອຕາມແຜນການ. ໃນເມື່ອຮູ້ວ່າກອງທະຫານ ແລະ ພະນັກງານຊັ້ນສູງໄດ້ໜີອອກຈາກປະເທດໄປ ແລະ ແຂວງຕ່າງໆໄດ້ຖືກກອງທະຫານຝະລັ່ງເຂົ້າຢຶດຄອງເກືອບໝົດແລ້ວ ກໍ່ພາກັນຂ້າມໄປພັກຢູ່ດົນແຂວງຊຽງຂອງ ແລະ ຊຽງຮາຍປະເທດໄທ.

ກາງຄືນກ່ອນມື້ເຮົາຈະໜີອອກຈາກດິນລາວໄປນັ້ນ, ເຮົາພ້ອມກັບຄອບຄົວເຊິ່ງລວມມີທັງເມຍເຮົາ, ລູກຍິງໜຶ່ງ ແລະ ຊາຍໜຶ່ງຄົນທີ່ຍັງນ້ອຍ, ນ້ອງສາວເມຍເຮົາສອງຄົນ, ນ້ອງຊາຍເມຍເຮົາໜຶ່ງຄົນທີ່ຍັງນ້ອຍຄືກັນ ແລະ ຜູ້ຄົວກິນຍິງໜຶ່ງຄົນນັ້ນ ໄດ້ພັກຢູ່ທີ່ສາລາປາກແບງ ເພື່ອກຳກັບສະບຽງອາຫານທີ່ເປັນຈຳນວນຫຼວງຫຼາຍ ເຊິ່ງເຮົາເອົາເຕົ້າໂຮມໄວ້ຖ້າລ້ຽງກອງທະຫານຕາມຄຳສັ່ງຂອງລັດຖະບານ. ຄືນນັ້ນເປັນຄືນທີ່ອຸກອັ່ງທີ່ສຸດສຳລັບເຮົາ ແລະ ຄອບຄົວ. ການເປິກສາກັນວ່າຈະໜີໄປປະເທດໄທ ຫຼື ຈະລົງໄປຫາເຈົ້າຊີວິດທີ່ຫຼວງພະບາງນັ້ນ ແມ່ນສັບສົນ ແລະ ຕັດສິນໃຈຍາກທີ່ສຸດ. ດ້ານໜຶ່ງພວກເຈົ້ານາຍຊັ້ນສູງທີ່ເປັນນ້ອງແລະລູກຫຼານເຈົ້າຊີວິດຫຼາຍຄົນໄດ້ຂຽນຈົດໝາຍມາເຊີນເອົາເຮົາໄປເຮັດວຽກນຳ ໂດຍພວກເພິ່ນວ່າຈະຮັບຮອງຄວາມປອດໄພທຸກປະການ. ດ້ານໜຶ່ງເຮົາຮູ້ວ່າກອງທະຫານຝະລັ່ງ ເຂົ້າມາຢູ່ຫຼວງພະບາງແລ້ວ ; ເວລາປີໜຶ່ງທີ່ຜ່ານມາ ເຮົາໄດ້ຄົ້ນຊອກຈັບຄົນຝະລັ່ງມອບໃຫ້ຍີ່ປຸ່ນແລະນຳກອງທະຫານລາວອິດສະຫຼະໄປຕີພວກເຂົາຢູ່ນາເວິງໃນປີ 1945, ພວກຝະລັ່ງ ຈະຕ້ອງຄຽດແຄ້ນຕໍ່ເຮົາ, ພະຍາເມືອງຂວາ (ທາວເຫຼັກ ແສງສະຖິດ) ພໍ່ເມຍຂອງເຮົາ ທີ່ເປັນເຈົ້າແຂວງຊຽງຂວາງ ຖືກພວກຝະລັ່ງຈັບໄດ້ເອົາກໍ່ຍັງຂັງຖິ້ມ ຍ້ອນວ່າເປັນຄົນຂອງ ລັດຖະບານລາວເອກະລາດ ດ້ານໜຶ່ງພວກເຮົາເຫັນວ່າ ຕົວເຮົາເອງກໍ່ໄດ້ໄປຮ່ວມເຮັດການປົດຕຳແໜ່ງເຈົ້າຊີວິດ, ພວກເຂົາ ແລະ ລູກຫຼານຂອງເຂົາຈະຕ້ອງຈັບໂອກາດນີ້ອ້າງໃສ່ຝະລັ່ງເພື່ອແກ້ແຄ້ນພວກເຮົາ. ດ້ານໜຶ່ງເຮົາເຫັນວ່າໄປຢູ່ເມືອງໄທ ກໍ່ຈະມີຊີວິດຢູ່ດ້ວຍຄວາມ ລຳບາກຍາກແຄ້ນທີ່ສຸດ ເພາະວ່າເປັນດິນແດນທີ່ພວກເຮົາບໍ່ເຄີຍ, ບໍ່ຮູ້ວ່າຈະພາກັນທຳມາຫາກິນ

ແນວໃດ, ອາດຈະບໍ່ພົ້ນການໄປຕີພວກຝະລັ່ງຄືນໃໝ່ ເພາະວ່າຕາບໃດບໍ່ປົດປ່ອຍປະເທດໄທ ເປັນເອກະລາດໄດ້, ຕາບນັ້ນວຽກຕໍ່ຕ້ານຂອງພວກເຮົາກໍ່ຄົງຈະບໍ່ແລ້ວ. ພົວເມຍເຮົາແລກປ່ຽນຄຳຄິດຄຳເຫັນພິດຄືນຈົນຈອດແຈ້ງ ເພື່ອຊັ່ງຊາເບິ່ງພົນຮ້າຍພົນດີ ທີ່ຈະບັງເກີດຂຶ້ນແກ່ພວກເຮົາໃນການຢູ່ ແລະ ໜີອອກຈາກປະເທດ, ທ້າຍສຸດ ພວກເຮົາກໍ່ເຫັນເປັນເອກະພາບກັນວ່າ ເພື່ອຊີວິດຂອງຕົນເອງ ແລະ ເພື່ອກຽດສັກສີຂອງປະເທດຊາດພວກເຮົາ ບໍ່ຄວນຫຼົງເຊື່ອສັດຕູ, ແຫງໄປອົດທົນທຸກຍາກຕາມເສັ້ນທາງກູ້ຊາດ ເພື່ອກັບຄືນປະເທດ ພ້ອມດ້ວຍໄຊຊະນະ ; ດັ່ງນັ້ນ ແມ່ນວ່າຈະຄິດຮອດພໍ່ແມ່ພີ່ນ້ອງພຽງໃດ ພວກເຮົາກໍ່ຕັດສິນໃຈ ໜີຈາກດິນແດນລາວໄປເພິ່ງພາຊົ່ວຄາວຢູ່ປະເທດໄທ ເພື່ອຄວາມປອດໄພໃນສະເພາະໜ້າ ແລະ ເພື່ອສືບຕໍ່ຕໍ່ສູ້ເອົາສັນຕິພາບມາສູ່ບ້ານເມືອງ ແລະ ອະນາຄົດອັນຜາສຸກມາສູ່ປະຊາຊົນລາວທຸກຊົນເຜົ່າ ເວລານັ້ນເປັນເວລາທີ່ປະເທດຊາດອັນແສນຮັກຂອງພວກເຮົາໄດ້ພົບເຫັນຄວາມເດືອດຮ້ອນຂອງປະຊາຊົນລາວທົ່ວທັງຊາດ. ຕັ້ງແຕ່ເໜືອເຖິງໃຕ້ສຽງຍິນ ແລະ ສຽງປືນຂອງສັດຕູດັງສະນັ່ນຢູ່ຕາມລຳນ້ຳຂອງອັນນອງໄປດ້ວຍເລືອດຂອງຄົນລາວຜູ້ຮັກຊາດ. ສຽງຮ້ອງໄຫ້ນຳພີ່ນ້ອງທີ່ເສຍຊີວິດດັ່ງວິງວອນປະສານກັບສຽງຮ້ອງໄຫ້ສັ່ງລາຂອງພີ່ນ້ອງ ທີ່ພັດພາກຈາກກັນໄປຊອກຫາເສັ້ນທາງແຫ່ງຄວາມຍຸດຕິທຳ ທີ່ຈະສາມາດນຳເອົາກຽດອັນສົດໃສ ມາໃຫ້ແກ່ຊາດລາວ. ເມືອງລາວເຊິ່ງຄົນຖືສາສະໜາພຸດເປັນສ່ວນຫຼາຍ ໄດ້ກາຍເປັນບ່ອນທີ່ພວກລ່າເມືອງຂຶ້ນຝະລັ່ງ ແລະ ພວກຄົນລາວຂາຍຊາດໃຊ້ອາວຸດທຸກຊະນິດສັງຫານຊາວລາວລຸ່ມ, ລາວເທິງ ແລະ ລາວສູງຜູ້ຮັກຊາດ, ຮັກຄວາມເປັນເອກະລາດ, ຮັກມະນຸດສະທຳ ແລະ ສັນຕິພາບຍິ່ງກວ່າຊີວິດຂອງຕົນເອງນັ້ນ ຢ່າງໜ້າສົມເພດເວທະນາທີ່ສຸດ. ບໍ່ວ່າແຕ່ຢູ່ຕາມລຳແມ່ນ້ຳຂອງເທົ່ານັ້ນ, ຢູ່ຕາມແຂວງຕ່າງໆທີ່ຢູ່ໄກຈາກຝັ່ງນ້ຳຂອງ ພວກລ່າເມືອງຂຶ້ນຝະລັ່ງ ກໍ່ໃຊ້ກຳລັງບຸກຕີຂ້າຟັນລົ້ມແທງເຜົາຜານບ້ານເມືອງ ແລະ ປະຊາຊົນລາວຢ່າງໂຫດຮ້າຍປ່າເຖື່ອນ ດືດຽວກັນ. ພວກຄົນລາວຂາຍຊາດທີ່ໂຕນໜີຈາກບ້ານເມືອງ ໄປຢູ່ນຳພວກຝະລັ່ງລ່າເມືອງຂຶ້ນເມື່ອກ່ອນນີ້, ເວລາກັບຄືນເຂົ້າມາເມືອງເປັນນາຍທະຫານ ແລະ ຂ້າລາຊະການຊັ້ນສູງກໍ່ວາງຕົວສູງ ຂົ່ມຂູ່ເອົາພີ່ນ້ອງຂອງຕົນ ຫຼື ຜູ້ທີ່ເອົາສິນບົນມາໃຫ້ແກ່ຕົນຫຼາຍ ແລ້ວກໍ່ຊອກປາບປາມປະຊາຊົນຜູ້ທີ່ໄດ້ຮ່ວມມືກັບພວກລາວອິດສະຫຼະ ຫຼື ມີພີ່ນ້ອງລູກຫຼານທີ່ໄປເປັນຄົນລາວອິດສະຫຼະ.

ພວກເຮົາໜີອອກຈາກປາກແບງດ້ວຍເຮືອຖໍ່ ຂຶ້ນໄປຕາມນ້ຳຂອງ, ຜ່ານປາກທາ, ຂ້າມໄປຝັ່ງໄທພັກຢູ່ບ້ານຈຳປອງ, ພັກນຳເຮືອນຄົນລາວທີ່ໄດ້ໜີຈາກດິນລາວ ໄປຕັ້ງທຳມາຫາກິນຢູ່ດິນໄທໄດ້ຫຼາຍປີແລ້ວ. ເຈົ້າຂອງເຮືອນມີໃຈດີຮັກແພງ ແລະ ຊ່ວຍເຫຼືອພວກເຮົາ ໃນທຸກດ້ານ ເພື່ອເຮັດໃຫ້ຊີວິດອົບພະຍົບຂອງພວກເຮົາບໍ່ມີຄວາມເດືອດຮ້ອນຫຼາຍ. ແຕ່ເຖິງປານນັ້ນກໍ່ຕາມ, ພວກເຮົາກໍ່ຍັງຮູ້ສຶກລຳບາກໃຈຢູ່ບໍ່ໜ້ອຍ ເພາະວ່າຫາອາຊີບເພື່ອລ້ຽງຕົວຍາກ,

ດິນທຸກຕອນມີເຈົ້າຂອງໝົດ ; ບໍ່ອອກເງິນຈ້າງກໍບໍ່ມີດິນຈະເຮັດໄຮ່ເຮັດສວນ ; ເຈົ້າໜ້າທີ່ໄທກໍບໍ່ຕັ້ງໜ້າຊ່ວຍເຫຼືອພວກເຮົາຄືກັບພວກເຂົາຊ່ວຍເຫຼືອປະຊາຊົນເກົ່າຂອງພວກເຂົາ. ພວກເຮົາຈຶ່ງໄດ້ຕິດຕໍ່ກັບພີ່ນ້ອງພວກເຮົາ ທີ່ອົບພະຍົບໄປຢູ່ກິ່ງອຳເພີຊຽງແສນກ່ອນເຮົານັ້ນ ເອົາເຮືອຈັກມາຕອນເອົາພວກເຮົາຂຶ້ນໄປຢູ່ນຳກັນ. ທີ່ຊຽງແສນພວກເຮົາໄປພັກຢູ່ນຳເຮືອນ ຄົນລາວຜູ້ໜຶ່ງ ທີ່ໄດ້ອົບພະຍົບໄປທຳມາຫາກິນຢູ່ທີ່ນັ້ນແຕ່ເຫິງນານມາແລວ. ແຕ່ວ່າ ລາວຍັງບໍ່ລືມຊາດລາວ, ບໍ່ລືມວ່າລາວໄດ້ເກີດຢູ່ໃນດິນແດນລາວ, ລາວໜີມາຢູ່ໃນດິນໄທກໍ່ຍ້ອນພວກລູກມືຂອງພວກລ່າເມືອງຂຶ້ນຝະລັ່ງ ກົດຂີ່ຂົ່ມເຫັງລາວຢ່າງເຫຼືອທົນ ; ດັ່ງນັ້ນ ເຫັນພວກເຮົາໄປຮອດລາວກໍ່ໃຫ້ພວກເຮົາພັກຢູ່ໃນເຮືອນຂອງລາວເຖິງ 3 ເດືອນ ໂດຍບໍ່ໄລ່ເອົາເງິນນຳຈັກສະຕາງ ; ບາດຄົນຜູ້ເຊົ່າເຮືອນຂອງລາວຢູ່ທາງເມືອງໜຶ່ງອອກຈາກເຮືອນລາວແລ້ວ ລາວກໍ່ໃຫ້ໝົດທັງຄອບຄົວເຮົາໄປຢູ່ຊັ້ນລຸ່ມຂອງເຮືອນສອງຊັ້ນຫຼັງນັ້ນ ໂດຍບໍ່ຄິດເອົາຄ່າເຊົ່າ ຄືດຽວກັນ ; ເຫັນພວກເຮົາບໍ່ມີວຽກເຮັດ ລາວກໍ່ຂາຍດິນສວນຂອງລາວຢູ່ປາກນ້ຳທາງໃຕ້ບ້ານນັ້ນພ້ອມທັງເຮືອກູນລຳໜຶ່ງ ໂດຍເອົາເງິນນຳເຮົາແຕ່ພຽງຮ້ອຍບາດ.

ຕັ້ງແຕ່ຊື້ໄດ້ດິນແລວ ເຮົາກໍ່ປ່ຽນອາຊີບຈາກເຈົ້າແຂວງ ແລະ ທີ່ປຶກສາຂອງແຂວງມາດຳລົງຊີບເປັນຊາວສວນ. ແຕ່ລະມື້ໝົດທັງຄອບຄົວຂອງເຮົາ ຕ້ອງຖາງປ່າໄມ້ອັນດົກໜາຈົນເປົ່າແປນຮອດ 16 ໄລ່. ນ້ອງສາວແລະນ້ອງເຂີຍຂອງເມຍເຮົາທັງລູກນ້ອຍ 3 ຄົນຂອງຂະເຈົ້າທີ່ອົບພະຍົບໜີຈາກເມືອງລາວມາຄືກັນກໍ່ມາຢູ່ນຳເຮົາ. ຕໍ່ຈາກນັ້ນມາ ກໍ່ມີໝູ່ເພື່ອນຂອງພວກເຮົາ ແລະ ທະຫານລາວອິດສະຫຼະຫຼາຍຄົນມາຮ່ວມກັບພວກເຮົາເຮັດສວນ ບ່ອນນັ້ນ. ພວກເຮົາປູກກົກຢາດູດຂາຍໃບຢາຂຽວໃຫ້ເຈົ້າຂອງເຕົາບົ່ມໃບຢາ ທີ່ເປັນຄົນລາວຄືດຽວກັນ, ແຕ່ຫາກໜີມາທຳມາຫາກິນຢູ່ທ້ອງຖິ່ນນີ້ຫຼາຍປີ ຈົນກາຍເປັນຄົນຮັ່ງມີຜູ້ໜຶ່ງ. ຢູ່ໃນທ້ອງຖິ່ນອຳເພີຊຽງແສນນີ້ ມີເຕົາບົ່ມໃບຢາຫຼາຍແຫ່ງ, ໃນນັ້ນເປັນຂອງຄົນລາວຢູ່ 4 ແຫ່ງ. ບັນດາເຈົ້າຂອງເຕົາບົ່ມ ແລະ ເຈົ້າໜ້າທີ່ທ້ອງຖິ່ນໄດ້ຕົກລົງແບ່ງດິນສວນໃຫ້ແກ່ກັນ ເປັນຈຳນວນອັນເໝາະສົມກັບຄວາມສາມາດຜະລິດພົນຂອງແຕ່ລະແຫ່ງ, ໂດຍໃຫ້ພວກຕຳຫຼວດຢູ່ຍາມ ຮັກສາບໍ່ໃຫ້ຊາວສວນທີ່ຢູ່ໃນເຂດແດນດິນຂອງເຕົາບົ່ມໜຶ່ງ ລັກເອົາໃບຢາໄປຂາຍໃຫ້ເຕົາບົ່ມອື່ນ. ຕາມລະບຽບຂອງເຂົາແມ່ນຮອດທ້າຍເດືອນກັນຍາແລວ ເຈົ້າຂອງເຕົາບົ່ມທຸກແຫ່ງ ຕ້ອງໄຖແລະ ພວນດິນໃຫ້ມຸ່ນ, ແປງເປັນໜານຍາວຄືກັນກັບພາກພົນທຳມະດາ ແລວເອົາແກ່ນແນວກົກຢາວຽກຢີນີມາຫວ່ານໃສ່, ໃສ່ຝຸ່ນຫົດນ້ຳໃຫ້ພຽງພໍແລວ ເອົາຜ້າຂາວປົກເທິງກົງໄມ້ໄຜ່ທີ່ປັກສອງສົ້ນລົງໃສ່ດິນແຄມໜານທຸກຂ້າງ ເພື່ອກັ້ງແດດໃນກາງວັນ, ກາງຄືນມາຮອດແລ້ວກໍ່ຮື້ຜ້າອອກຫຼຽດໄວ້ຂ້າງໜຶ່ງ ເພື່ອໃຫ້ເບ້ຍຢາຮັບເອົານ້ຳໝອກ. ເມື່ອເບ້ຍຢາມີອາຍຸຮອດເດືອນໜຶ່ງແລ້ວ ເຈົ້າຂອງເຕົາບົ່ມກໍ່ປ່າວໃຫ້ຊາວສວນມາເອົາເບ້ຍຢາໄປປົ່ງໃສ່ສວນຂອງຕົນ ໂດຍບໍ່ຕ້ອງໃຊ້ຄ່າໃຫ້ເຈົ້າຂອງເຕົາບົ່ມ ; ນັ້ນແມ່ນສິດຜູກຂາດຂອງເຈົ້າຂອງເຕົາບົ່ມຕໍ່ຊາວສວນ

ຫ້ອນກັບຕົນ.

ຮອດການເດືອນກັນຍາແລ້ວ ພວກເຮົາທີ່ເປັນຊາວສວນອ້ອມກັບເຕົາບົ່ມແຫ່ງໜຶ່ງ ກໍຖາງສວນໃຫ້ກ້ຽງ. ຂຸດດິນເປັນຂຸມໄກກັນ 1 ແມດທຸກດ້ານ ແລ້ວກໍໄປຮັບເອົາເບ້ຍຢາດູດ ຈາກເຈົ້າຂອງເຕົາບົ່ມມາປັງໃສ່, ຫົດນ້ຳລຽນຕິດກັນ 3 ມື້ ແລະທຸກໆຕອນເຊົ້າຕ້ອງເອົາໄມ້ລັດໃບໄມ້ສັກມາບັງແສງຕາເວັນໄວ້ຕະຫຼອດ 3 ມື້ ຫຼື 4 ມື້ຈົນກວ່າເບ້ຍຢາຂຽວດີ ແລ້ວຈຶ່ງເຊົາ 2 ມື້ໃດແຕ່ລະຂຸມກໍຫົດນ້ຳແຕ່ເຊົ້າຈົນຕົ້ນສູງຂຶ້ນມາມີ 3 ໃບແລ້ວຈຶ່ງເຊົາ. ຖ້າວ່າຕົ້ນຢາໃດຫາກຂຶ້ນບໍ່ແຮງ ພວກເຮົາກໍເອົານ້ຳຝຸ່ນວິທະຍາສາດມາຫົດໃສ່ ຫຼື ຫາກມີສັດຕູພືດມາທຳລາຍ ພວກເຮົາກໍເອົານ້ຳຢາຂ້າແມງໄມ້ໄປສີດໃສ່. ຢາປາບສັດຕູພືດ ແລະ ຝຸ່ນວິທະຍາສາດພ້ອມດ້ວຍເຄື່ອງມືເຄື່ອງໃຊ້ລ້ວນແຕ່ແມ່ນພວກເຮົາຊື້ເອົາເອງທັງມວນ, ໂດຍແມ່ນເຈົ້າຂອງເຕົາບົ່ມຊື້ຈາກບາງກອກມາຂາຍໃຫ້ພວກເຮົາ.

ໜ້າວຽກຊາວສວນຢາດູດເປັນໜ້າທີ່ອັນບໍ່ທັນຊິນເຄີຍສຳລັບພວກເຮົາ ເຊິ່ງໄດ້ 20 ກວ່າປີແລ້ວເຄີຍແຕ່ນັ່ງຕັ່ງຮຽນໜັງສື ແລ້ວຕໍ່ມາຊ້ຳພັດໄດ້ເປັນຂ້າລາຊະການຝ່າຍປົກຄອງ ທີ່ເຄີຍໃຊ້ແຕ່ຜູ້ອື່ນເຮັດວຽກໜັກແທນເລື້ອຍມາ. ໂດຍແດ່ແຕ່ວ່າເມື່ອຍັງນ້ອຍ ເຮົາເຄີຍອອກແຮງງານເຮັດໄຮ່ນາສວນ ແລະ ລ້ຽງສັດ 4 ປີກວ່າ, ຈຶ່ງມີທຶນຮອນໃນການອອກແຮງງານໃນເວລາອັນຈຳເປັນນີ້. ສິ່ງທີ່ພາໃຫ້ເຮົາຫຍຸ້ງຍາກໃຈ ແມ່ນທ່າທີອັນບໍ່ຮັກແພງ ຂອງເຈົ້າຂອງເຕົາບົ່ມຕໍ່ພວກເຮົາ. ແຕ່ລະວັນພວກເຮົາໄດ້ຕັ້ງໜ້າຂຸດດິນ, ຫຼົກຫຍ້າ ແລະ ຫົດນ້ຳສວນຢາເພື່ອສະໜອງໃບຢາຫຼາຍ ແລະດີໃຫ້ເຈົ້າຂອງເຕົາບົ່ມ. ການພົບຄວາມລຳບາກເປັນຄັ້ງທຳອິດແນວນີ້ ມັນເຮັດໃຫ້ພວກເຮົາທຸກໃຈພໍແຮງແລ້ວ ; ທ່າທີຂອງເຈົ້າຂອງ ເຕົາບົ່ມຕໍ່ພວກເຮົາ ຢ່າງບໍ່ເຫັນວ່າໂຕເອົາເອງກໍເປັນຄົນລາວຄືກັນ ແລະ ບໍ່ເຫັນຄວາມທຸກຮ້ອນ ທີ່ພວມໄໝ້ຢູ່ໃນຫົວອົກຕັ້ງແຕ່ມື້ເລີ່ມຕົ້ນອົບພະຍົບ ມາເພິ່ງພາອາໄສຫາຄວາມຊ່ວຍເຫຼືອ ແລະອົບອຸ່ນນີ້ມັນພາໃຫ້ພວກເຮົາອຶດກັ້ນຕໍ່ຄວາມຄຽດແຄ້ນຍາກທີ່ສຸດ. ຄວາມເວົ້າທີ່ເຂົາໃຊ້ຕໍ່ພວກເຮົາເວລາເຂົາມາກວດສວນພວກເຮົາວ່າ : " ຫຍ້າສຸມນັ້ນແມ່ນແພງໄວ້ບູຊາຜີພໍ່ຜູ້ໃດ ? ຫຼືວ່າກົກຢາໃບເຫຼືອງຮອມຈະຕາຍແມ່ນແພງໄວ້ຕົ້ມກິນບໍ, ເປັນຫຍັງບໍ່ຫຼົກຖິ້ມ " ນັ້ນພວກເຮົາຖືວ່າເປັນຄວາມດູຖູກທີ່ພວກເຮົາອຶດທົນຟັງຍາກທີ່ສຸດ. ບາງຄົນໃນໝູ່ພວກເຮົາ ວ່າຈະເວົ້າເຈັບຕອບເຂົາຄືນ ຖ້າເຂົາຫາກດ່າຄືນກໍຈະດ່າຕອບ ຫຼືວ່າຈະຕີເຂົາກໍຈະຕີລອງເບິ່ງ ; ແຕ່ເຮົາໄດ້ໃຊ້ຄວາມດີຕົບໄວ້ເພື່ອບໍ່ໃຫ້ອັນບໍ່ດີງາມເກີດຂຶ້ນໃນສວນຂອງພວກເຮົາ. ເວລາໃບຢາແກ່ເປັນເກັບແລ້ວ ເຈົ້າຂອງເຕົາບົ່ມຊ້ຳພັດແຕ່ງຄົນໃຊ້ຂອງເຂົາມາບອກພວກເຮົາວ່າ : "ເວລານີ້ເຕົາບົ່ມຂາດຟືນ, ເຈົ້າຂອງສວນບ່ອນໃດຢາກຂາຍໃບຢາ ຕ້ອງໄປຕັດຟືນໄປຂາຍໃຫ້ເຕົາບົ່ມ, ຖ້າບໍ່ເຮັດແນວນັ້ນຈະບໍ່ຊື້ໃບຢາສວນນັ້ນ". ພວກເຮົາໄດ້ຈັກຈອນກັນໃຫ້ອຶດທົນເອົາເຮືອໄປຕັດຟືນ, ເມື່ອເອົາເຮືອຟືນມາຈອດທ່າແລ້ວ ພວກເຮົາໄປຂໍຢືມກຽນເຕົາບົ່ມມາ

ແກ່ຝິ່ນໄປໃຫ້ເຂົາ ເຂົາກໍ່ໃຫ້ຢືມແຕ່ກ່ອນ, ບໍ່ໃຫ້ຢືມງົວ ; ພວກເຮົາກໍ່ໄດ້ໃຊ້ສອງຄົນ ແທນງົວແກ່ກ່ອນ, ໃນນັ້ນມີເຮົາຜູ້ໜຶ່ງ ແລະ ສອງຄົນອີກຊຸກກ່ອນຢູ່ທາງຫຼັງ ໄປຈາກທ່ານ້ຳຂອງຮອດເຕົາບົ່ມເປັນໄລຍະທາງ 2 ກິໂລແມດ ; ເຮັດແນວນັ້ນເດືອນລະເທື່ອ ຫຼື ສອງເທື່ອຈົນຂາຍໃບຢາໝົດ, ເປັນເວລາປະມານ 3 ເດືອນ ; ເວລາມາຮັບເອົາຝິ່ນຈາກພວກເຮົາເຂົາກໍ່ໃຊ້ທ່າທີວ່າບໍ່ຕ້ອງການ, ຈັບຝິ່ນດ້ອນນັ້ນດ້ອນນີ້ຖຸ້ມ ວ່າບໍ່ຖືກຕາມມາດຖານ, ແລ້ວກໍ່ຕີລາຄາຕາມລຳພັງໃຈວ່າ ຈະໃຊ້ເງິນແຕ່ແມດກ່ອນລະໜຶ່ງບາດ ຫຼື ໜຶ່ງບາດເຄິ່ງ ຖ້າບໍ່ພໍໃຈຂາຍກໍ່ເອົາຝິ່ນຄືນເມືອ ; ເຂົາກໍ່ຮູ້ວ່າພວກເຮົາຈະບໍ່ເອົາຝິ່ນກັບຄືນເມືອ ແລະ ດີໃຈ ຫຼື ບໍ່ດີໃຈກໍ່ຈະຕ້ອງຂາຍໃຫ້ເຂົາ ; ທ່າທີແບບນັ້ນກໍ່ເຮັດໃຫ້ພວກເຮົາອົດທົນເບື້ງຍາກທີ່ສຸດ. ໃນການຊື້ໃບຢາກໍ່ຄືດຽວກັນ, ເຂົາເລືອກເອົາໃບຢາຂອງພວກເຮົາແຕ່ລະໃບ ໄປຖິ້ມໃສ່ກະດົ້ງຂອງເຂົາ ໂດຍແບ່ງເປັນປະເພດ ແລ້ວກໍ່ຕີລາຄາວ່າກະດົ້ງນີ້ 40 ສະຕາງ, ກະດົ້ງນີ້ 35 ສະຕາງ, ກະດົ້ງນັ້ນ 30 ຫຼື 25 ສະຕາງ ; ຖ້າພວກເຮົາວ່າຖືກໂພດ ຂໍຂຶ້ນລາຄາໃຫ້ຕື່ມແດ່, ເຂົາກໍ່ຕອບຢ່າງເສີຍໆວ່າ : " ບໍ່ໄດ້, ຖ້າບໍ່ພໍໃຈຂາຍກໍ່ເອົາຄືນເມືອ " ; ເຂົາກໍ່ຮູ້ຢູ່ແລ້ວວ່າພວກເຮົາຈະບໍ່ເອົາຄືນເມືອ ແລະ ຕ້ອງຂາຍໃຫ້ເຂົາ ເພາະວ່າຈະເອົາໄປຂາຍໃຫ້ເຕົາບົ່ມອື່ນກໍ່ບໍ່ໄດ້, ພວກຕຳຫຼວດຈະຕ້ອງບັງຄັບໃຫ້ພວກເຮົາຕ້ອງເອົາໃບຢາ ກັບຄືນໄປຂາຍໃຫ້ເຕົາບົ່ມນັ້ນ, ບໍ່ຟັງກໍ່ຢຶດເອົາໃບຢາລາງ ຫຼື ປັບໃໝຕື່ມອີກ. ພວກເຮົາອົດທົນດຳລົງຊີວິດຢູ່ຕາມແບບນັ້ນໝົດລະດູສວນຢາໜຶ່ງ. ຜົນໄດ້ຂອງມັນແມ່ນພວກເຮົາສາມາດດຳລົງຊີວິດຢູ່ໄດ້ ແລະ ສາມາດລ້ຽງອ້າຍນ້ອງພະນັກງານ ແລະ ທະຫານທີ່ມາຮ່ວມຢູ່ນຳພວກເຮົານັ້ນໄດ້ ຢ່າງບໍ່ມີກຳໄລຫຍັງ ນອກຈາກໄດ້ຝຶກແອບພວກເຮົາໃຫ້ຊິນເຄີຍຄືນ ໃນການອອກແຮງງານ ແລະ ອົດທົນຕໍ່ທ່າທີ ແລະ ຄວາມເວົ້າອັນບໍ່ເປັນມິດຂອງພວກນາຍທຶນ.

VII. ການເຂົ້າໄປຕັ້ງເຂດຕໍ່ຕ້ານໃນດິນລາວ

ຕໍ່ໜ້າສະພາບການແນວນີ້ ພວກເຮົາບໍ່ມອງເຫັນອະນາຄົດອັນຊື່ນບານຢ່າງໃດແລ້ວ, ມີແຕ່ຈະຕ້ອງຂຸດດິນຝັງຫຍ້າສ້າງຄວາມຮັ່ງມີໃຫ້ແກ່ຜູ້ທີ່ຮັ່ງແລ້ວນັ້ນ ກັບມາດຳໂຕເທົ່ານັ້ນ. ນ້ອງສາວ ແລະ ນ້ອງເຂີຍເມຍເຮົາພ້ອມກັບລູກ ແລະ ພະນັກງານບາງຄົນໄດ້ຍ້າຍໄປຢູ່ນຳຄະນະລັດຖະບານທີ່ບາງກອກ. ພວກເຮົາທີ່ຍັງຢູ່ ໄດ້ລວມປະຊຸມກັນເຫັນດີວ່າ ຄວນໄປສ້າງເຂດຕໍ່ຕ້ານໃນດິນລາວ ເພື່ອສືບຕໍ່ເຮັດການປະຕິວັດທີ່ພວກເຮົາໄດ້ເລີ່ມຕົ້ນເຮັດມາແລ້ວ. ໃນເມື່ອຄວາມເຫັນເປັນເອກະພາບກັນແນວນັ້ນ, ທຸກຄົນເຫັນດີມອບໜ້າທີ່ໃຫ້ເຮົາໄປຕິດຕໍ່ເຕົ້າໂຮມໝູ່ຄູ່ທີ່ໄປຮັບໃຊ້ຢູ່ບ່ອນອື່ນ ແລະ ໄປຊອກເອົາອາວຸດຍຸດທະພັນ, ເງິນຄຳ ແລະ ວັດຖຸສິ່ງຂອງທີ່ຈຳເປັນໃຫ້ແກ່ການດຳລົງຊີວິດຕໍ່ຕ້ານຂອງພວກເຮົາ. ເຮົາໄດ້ໄປແລກປ່ຽນຄວາມເຫັນກັບຄະນະບໍລິຫານສະມາຄົມລາວອົບພະຍົບ, ຜູ້ໃດກໍ່ເຫັນດີໃຫ້ພວກເຮົາໄປສ້າງເຂດຕໍ່ຕ້ານເພື່ອ

ສ້າງເງື່ອນໄຂໃຫ້ພວກອົບພະຍົບ ໄດ້ກັບຄືນບ້ານເດີມ, ຮັບຮອງວ່າຈະລະດົມຊາວໜຸ່ມໃຫ້ໄດ້ຫຼາຍ ເພື່ອໄປເພີ່ມກຳລັງໃຫ້ພວກເຮົາ ແລະ ຮັບຮອງວ່າຈະເລ່ຍລາຍເງິນກັນຊີ້ສະບຽງອາຫານ ແລະ ທຸກສິ່ງທີ່ຈຳເປັນສິ່ງໃຫ້ພວກເຮົາ.

ເມື່ອໄດ້ຮັບພາລະອັນໜັກໜ່ວງແນວນັ້ນ, ເຮົາໄດ້ມາຊອກຫາວິທີເຮັດ ເພື່ອສຳເລັດໜ້າທີ່ສຳຄັນອັນນີ້. ຫຼັງຈາກຝາກຝັງຄອບຄົວເຮົາໄວ້ນຳສະມາຄົມລາວອົບພະຍົບແລ້ວ ເຮົາໄດ້ໄປອຳເພີແມ່ສະລຽງ ເພື່ອເບິ່ງວິທີສູ້ຮົບຂອງພວກຊົນຊາດກະຫຼຽງ ທີ່ຕ້ານລັດຖະບານ ພະມ້າຕາມຊາຍແດນປະເທດໄທ, ໄປບາງກອກເພື່ອພົບຄະນະລັດຖະບານອົບພະຍົບ ແລະ ຜູ້ແທນຫວຽດນາມເພື່ອຊອກຮູ້ວິທີຈະເຮັດເພື່ອປົດປ່ອຍດິນແດນລາວ ໄປຢ້ຽມຢາມອຳເພີຊຽງຄານບ່ອນ ທ້າວອ້ວນ ລາທິກຸນ ແລະ ບຸນຈັນ ພົມມະລິນ ຈັດຕັ້ງກອງທະຫານຂຶ້ນເພື່ອຕີຝະລັ່ງ , ໄປຢ້ຽມຢາມຊາວລາວອົບພະຍົບທີ່ບ້ານໝໍ້, ສີຊຽງໃໝ່ ແລະ ໜອງຄາຍ ເພື່ອຊອກຮູ້ການຈັດຕັ້ງກຳລັງປະກອບອາວຸດຕີສັດຕູຢູ່ທີ່ແຂວງວຽງຈັນ, ໄປຢ້ຽມຢາມຊາວລາວອົບພະຍົບທີ່ອຳເພີມຸກດາຫານ ແລະ ຈັງຫວັດອຸບົນ ເພື່ອຊອກຮູ້ຊີວິດການເປັນຢູ່ຂອງຂະເຈົ້າ ແລະ ພ້ອມກັນນັ້ນ ກໍ່ຊອກຮູ້ຂ່າວຄາວກ່ຽວກັບການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງຢູ່ໃນດິນລາວ ພາກໃຕ້ ແລະ ດິນກຳປູເຈຍ. ການໄປຂອງເຮົາເທື່ອນັ້ນ ເປັນປະໂຫຍດໃຫ້ເຮົາຫຼາຍ ເພາະມັນເຮັດໃຫ້ເຮົາເຂົ້າໃຈວ່າ ທຸກພາກຂອງລາວມີປະຊາຊົນລຸກຂຶ້ນຕໍ່ສູ້ ພວກລ່າເມືອງຂຶ້ນຝະລັ່ງເພື່ອປົດປ່ອຍຊາດ ແລະ ເພື່ອໂຄ່ນລົ້ມລະບອບເມືອງຂຶ້ນ ແລະ ສັກດີນາທີ່ເຂົາເບື່ອໜ່າຍ ແລະ ທຸກບ່ອນທີ່ມີການຕໍ່ສູ້ຢູ່ໃນດິນກຳປູເຈຍ ແລະ ລາວລ້ວນແຕ່ມີຄົນຫວຽດນາມໄປຮ່ວມນຳເພາະປະເທດຫວຽດນາມໄດ້ເຮັດການປະຕິວັດປົດປ່ອຍຊາດແລ້ວ ແຕ່ເດືອນ 8 ປີ 1945 ແລະ ພວມເຮັດການຕໍ່ສູ້ຢູ່ໃນທົ່ວປະເທດໃນເມື່ອພວກລ່າເມືອງຂຶ້ນຝະລັ່ງກັບຄືນມາ. ເທື່ອນີ້ເປັນເທື່ອທຳອິດທີ່ເຮົາໄດ້ຮູ້ວ່າ ການຕໍ່ສູ້ກູ້ຊາດຂອງປະຊາຊົນຫວຽດນາມ ແມ່ນເຮັດໄປຕາມແນວທາງຂອງພັກກອມມູນິດອິນດູຈີນ ພາຍໃຕ້ການນຳຂອງປະທານໂຫ້ຈີ່ມິນ ແລະ ວ່າປະຊາຊົນຫວຽດນາມເຊື່ອໝັ້ນໃນແນວທາງ ແລະ ການນຳອັນນັ້ນຢ່າງເລິກເຊິ່ງ ແລະ ໜັກແໜ້ນທີ່ສຸດ.

ເຮົາກັບຄືນມາຊຽງແສນດ້ວຍຄວາມຮູ້ສຶກອັນໃໝ່ ແລະ ມອງເຫັນອະນາຄົດແຫ່ງການ ຕໍ່ຕ້ານໃສແຈ້ງຂຶ້ນກວ່າເກົ່າຫຼາຍ. ເຮົາເຫັນແຈ້ງວ່າຢາກເຮັດການຕໍ່ຕ້ານສັດຕູ ຢູ່ໃນປະເທດລາວ ພວກເຮົາຕ້ອງຮ່ວມມືກັບຄົນຫວຽດນາມ ທີ່ປະຕິບັດຕາມການນຳຂອງປະທານ ໂຫ້ຈີ່ມິນ ແລະ ວ່າບ່ອນໃດບໍ່ເຮັດແນວນັ້ນຈະບໍ່ສຳເລັດຜົນ. ດ້ວຍຄວາມຮູ້ສຶກແນວນັ້ນ ເຮົາຈຶ່ງໄປຊອກຫາຄົນຫວຽດນາມຜູ້ຈະຮ່ວມມືກັບເຮົາ ໃນການຈະເປີດເຂດຕໍ່ຕ້ານຂຶ້ນ ໃນດິນລາວລຽບໄປຕາມຊາຍແດນໄທ ແລະ ພະມ້າ. ການຄົ້ນຊອກຫາຄົນຫວຽດນາມທີ່ໄວ້ວາງໃຈໄດ້ ຢູ່ໃນດິນໄທເປັນສິ່ງເຮັດໄດ້ຍາກທີ່ສຸດ, ເພາະວ່າຂະເຈົ້າກໍ່ຮັກສາຄວາມລັບຢ່າງເຄັ່ງຄັດທີ່ສຸດ.

ຫຼັງຈາກຄົ້ນຊອກຫາຄົນທວຽດນາມ ຜູ້ເຊິ່ງຜູ້ແທນທວຽດນາມທີ່ບາງກອກໄດ້ສະເໜີຊື່ ໃຫ້ເຮົາເວລາເຮົາໄປບາງກອກນັ້ນ, ຫຼາຍອາທິດເຮົາຈຶ່ງໄດ້ພົບເຂົາ ແລະ ຈຶ່ງຮູ້ວ່າເຂົາເອງກໍ່ຊອກພົບເຮົາຄືກັນ. ຄົນທວຽດນາມຜູ້ນັ້ນຊື່ວ່າ ນາຍວັນກວາງ ຫຼື ກວາງບິວ ໄດ້ສະເໜີຕົວຂອງເຂົາຕໍ່ເຮົາ ແລະ ໄດ້ສະເໜີໃຫ້ເຮົາຮູ້ວ່າ ນອກຈາກເຂົາເອງແລ້ວ ຍັງມີອີກຫຼາຍຄົນທີ່ພວມເຄື່ອນໄຫວຢູ່ຕາມຂົງເຂດນີ້. ພວກເຮົາດີໃຈ ແລະ ຊື່ນມ່ວນເບີກບານທີ່ໄດ້ຮູ້ຈັກກັນ. ຫຼັງຈາກນັ້ນ ພວກເຮົາກໍ່ໄດ້ປຶກສາກັນກ່ຽວກັບການວາງແຜນການ ເພື່ອເຂົ້າໄປສ້າງເຂດຕໍ່ຕ້ານຂຶ້ນໃນພາກເໜືອຂອງລາວ. ຫຼັງຈາກແບ່ງໜ້າທີ່ວຽກງານ ແລະ ຕ່າງຝ່າຍຕ່າງປະຕິບັດໜ້າທີ່ນັ້ນໄດ້ພົມພຽງພໍແລ້ວ ພວກເຮົາກໍ່ພ້ອມກັນລົງໄປສ້າງເຂດຕໍ່ຕ້ານຂຶ້ນທາງພາກເໜືອຂອງລາວ.

ມື້ເດືອນ 9 ດັບພໍດີ ຂອງປີ 1947 ເວລາ 10 ໂມງກາງຄືນ ພວກເຮົາໄດ້ລົງເຮືອຖີ່ທີ່ທ່າເມືອງຊຽງແສນພ້ອມດ້ວຍອາວຸດ ແລະ ເຄື່ອງໃຊ້ທີ່ພວກເຮົາຫາມາໄດ້ ເພື່ອພ້ອມກັນລ່ອງລົງໄປຫາຈຸດທີ່ພວກເຮົານັດໝາຍ. ເວລານັ້ນແມ່ນກາງລະດູຝົນ, ແມ່ນ້ຳຂອງນອງເຕັມຝັ່ງ, ເດືອນມືດປານກຳຕາ, ນາຍທ້າຍເຮືອຂອງເຮົາຊື່ວ່າອ້າຍບາວຈານອຸ່ນ ທີ່ມີອາຊີບຂັດທ້າຍເຮືອຢາງຝົນພີພາສີແຕ່ປາງກ່ອນ ໄດ້ພາໃຫ້ເຮືອສຳຄັນປະຫວັດສາດຂອງພວກເຮົາລົງຖືກປ່ອງລ່ອງຖືກແປວດີທີ່ສຸດ. ສອງແກ້ງໃຫຍ່ທີ່ເພິ່ນເອີ້ນວ່າ "ລູກຫຼີ່ ແລະ ຜາຄັນທຸງ" ຢູ່ເບື້ອງເໜືອຫ້ວຍຊາຍ ແລະ ຊຽງຂອງເວລານັ້ນນ້ຳລົບແກ້ງໄຫຼເຕັມຟາດຟອງດັງ ປານສຽງຟ້າຮ້ອງ. ບ່ອນເຫຼົ່ານີ້ເຮືອພໍ່ຄ້າລ່ອງລົງມີສວາຍກໍ່ຍັງຫຼົ້ມຈົມໄປແລ້ວຫຼາຍໆລຳ ເຮັດໃຫ້ຄົນເສຍຊີວິດໄປຫຼາຍສິບຄົນ ແລະ ເຄື່ອງຂອງເສຍຫາຍເປັນຈຳນວນມາກຫຼາຍ. ແກ້ງບ່ອນຊື່ວ່າ " ຜາກຸບ " ທີ່ຢູ່ເບື້ອງໃຕ້ຫ້ວຍຊາຍ ແລະ ຊຽງຂອງນັ້ນເປັນບ່ອນທີ່ມີພູເຜືອນແຕກປົ່ນວຽນເປັນວົງກວ້າງ ເຄີຍໄດ້ເຮັດໃຫ້ເຮືອຖີ່ຕະຫຼອດຮອດເຮືອຈັກນ້ອຍ ທີ່ລ່ອງລົງມີສວາຍໄປຜິດທາງ ຖືກພາໄປວຽນວົນອ້ອມກຽວນ້ຳເອົາຫົວສັກລົງທ້າຍຊີ້ຂຶ້ນຟ້າບາງລຳຈົມຫັກຖອງ. ເຮືອທີ່ລ່ອງນ້ຳຂອງລົງສາມບ່ອນນີ້ພາກັນຢ້ານກົວຫຼາຍທີ່ສຸດ. ແຕ່ວ່າເຮືອປະຕິວັດພວກເຮົາລ່ອງກາງຄືນເດືອນມືດ ເອົາເງົາກົກໄມ້ເປັນສິ່ງໝາຍບອກປ່ອງທາງ ໄດ້ລ່ອງຜ່ານພາຍ ລົງໄປຢ່າງປອດໄພ.

ມື້ຄ່ຳທີ່ງຂອງເດືອນ 10 ອອກໃໝ່ເວລາ 7 ໂມງເຊົ້າ ພວກເຮົາໄປເຖິງທີ່ໝາຍ. ບ່ອນນັ້ນກໍ່ເປັນດິນໄທແຕ່ເຕັມໄປແຕ່ພວກລາວອົບພະຍົບ ເຊິ່ງສ່ວນຫຼາຍເປັນພີ່ນ້ອງ ຫຼືຄົນລຶ້ງເຄີຍກັບເຮົາ. ພວກຂະເຈົ້າໄດ້ຮ່ວມມືກັບອ້າຍນ້ອງທະຫານອິດສະຫຼະ ທີ່ລ່ອງລົງໄປກ່ອນພວກເຮົານັ້ນມາຊ່ວຍພວກເຮົາຂົນຂອງອອກຈາກເຮືອ ແລະ ສະແດງຄວາມດີໃຈທີ່ເຫັນວ່າ ພວກເຮົາຈະພາກັນໄປຕັ້ງເຂດຕໍ່ຕ້ານ. ພວກຂະເຈົ້າຍັງມີຄວາມເປັນຫ່ວງນຳຄວາມປອດໄພຂອງພວກເຮົາ ແຕ່ກໍ່ເຊື່ອໝັ້ນວ່າ ພວກເຮົາຈະປະສົບໄຊຊະນະ ແລະ ສ້າງເງື່ອນໄຂໃຫ້ພວກຂະ

ເຈົ້າໄດ້ມີໂອກາດກັບຄືນເມືອບ້ານ.

ເຊົ້າມື້ນັ້ນເອງ, ຫຼັງຈາກປັ້ນເຂົ້າເຊົ້າບໍາພີ່ນ້ອງແລ້ວ ພວກເຮົາພ້ອມກັນຂົນເອົາຂອງຂຶ້ນໄປຫາບ່ອນຕັ້ງທັບຂອງພວກເຮົາ. ບ່ອນນັ້ນເອີ້ນວ່າຜາແດງ ເຊິ່ງຕັ້ງຢູ່ບໍ່ໄກ ກັບຝັ່ງຂວາແມ່ນ້ຳຂອງ ກົງກັນຂ້າມກັບປາກທາທີ່ຢູ່ຝັ່ງຊ້າຍບ່ອນທີ່ກອງຮ້ອຍທະຫານຫຸ່ນລາວປະຈຳຢູ່ໂດຍແມ່ນນາຍທະຫານຝະລັ່ງເປັນຜູ້ບັນຊາ. ພໍດີມື້ນັ້ນພວກເຮົາພ້ອມກັນໄປຕັດໄມ້ ແລະ ຫຍ້າຄາມາປຸກຕູບຢູ່. ບ່ອນນັ້ນເປັນປ່າດົງໜາສົມຄວນ, ສິ່ງຂອງທີ່ພວກເຮົາຕ້ອງການເພື່ອເຮັດຕູບມີຄົບພໍດີ, ແຕ່ຫາກບໍ່ມີໄມ້ປ່ອງເພື່ອຈະສັບຟາກປູນອນ ; ພວກເຮົາຈຳເປັນຕ້ອງເອົາໄມ້ຈິງນ້ອຍມາລຽນລຳເປັນຂາງ ແລ້ວເອົາຜ້າຢາດປົກໃສ່ເພື່ອປູນອນ ເຮັດໃຫ້ເຈັບຕົນຕົວໃນເມື່ອນອນລົງ. ຄ່ຳມາພວກເຮົາລວມພະນັກງານ ແລະ ທະຫານທຸກຄົນເພື່ອຈົດບັນຊີ ແລະຕົກລົງການຈັດຕັ້ງ. ກ່ອນອື່ນເຮົາໄດ້ສະເໜີຕໍ່ອ້າຍນ້ອງທຸກຄົນວ່າ ພວກເຮົາມາໂຮມກັນມື້ນີ້ ແມ່ນເພື່ອພ້ອມກັນຕັ້ງເຂດຕໍ່ຕ້ານຂຶ້ນໃນດິນລາວພາກເໜືອ ສຳລັບປະສານກັບເຂດຕໍ່ຕ້ານ ທີ່ຈັດຕັ້ງຂຶ້ນແລ້ວໃນທົ່ວປະເທດ ; ເທື່ອນີ້ພວກເຮົາຈະເຮັດການປະຕິວັດ ປົດປ່ອຍຊາດຢ່າງແທ້ຈິງໂດຍອີງໃສ່ກຳລັງຂອງປະຊາຊົນ ແລະ ຂະຫຍາຍການຕໍ່ຕ້ານຂອງປະຊາຊົນ ເພື່ອຂະຫຍາຍກຳລັງຂອງພວກເຮົາ ; ພ້ອມກັນນັ້ນເຮົາກໍ່ສະເໜີໃຫ້ອ້າຍນ້ອງຮູ້ສະຫາຍ ນາຍວັນກວາງ ຜູ້ຈະເປັນຫົວໜ້າກອງທະຫານອາສາສະໝັກຫວຽດນາມ ທີ່ຈະມາຮ່ວມກັບພວກເຮົາເຮັດການປະຕິວັດເທື່ອນີ້. ເຮົາໄດ້ຊີ້ແຈງໃຫ້ອ້າຍນ້ອງຕື່ມວ່າ ການປະຕິວັດເທື່ອນີ້ ແມ່ນແນໃສ່ປົດປ່ອຍທົ່ວອິນດູຈີນ, ດັ່ງນັ້ນ ປະຊາຊົນລາວ, ຫວຽດນາມ ແລະ ຂະແມ ຈຶ່ງຕ້ອງຮ່ວມມືກັນ ຢ່າງແໜ້ນແຟ້ນທີ່ສຸດ. ສະຫາຍ ນາຍວັນກວາງ ໄດ້ຊີ້ແຈງຕື່ມຈຸດປະສົງໃນການຮ່ວມມືກັນ ແລະໜ້າທີ່ຂອງຝ່າຍຫວຽດນາມທີ່ຈະມາຮ່ວມມືກັນໃນເທື່ອນີ້. ຫຼັງຈາກນັ້ນ ອ້າຍນ້ອງຕ່າງກໍ່ແລກປ່ຽນຄຳຄິດຄຳເຫັນກັນ ດ້ວຍຄວາມມ່ວນຊື່ນເບີກບານ. ທີ່ປະຊຸມເທື່ອທຳອິດ ໄດ້ເລືອກເອົາເຮົາເອງເປັນປະທານເຂດຕໍ່ຕ້ານນີ້ ທີ່ໃຫ້ຊື່ວ່າແມ່ນເຂດ 2, ຮັບຜິດຊອບວຽກງານປົກຄອງແລະ ໂຄສະນາອົບຮົມ, ຮອະໂທ ກາຍອວນ ເປັນຜູ້ບັນຊາການທະຫານ ຮັບຜິດຊອບທັງວຽກພະລາທິການ, ມະຫາຄຳພັນ ວິລະຈິດ ເປັນກຳມະການຮັບຜິດຊອບວຽກງານສຶກສາແລະ ສາສະໜາ. ມື້ລຸນມາກອງທະຫານອາສາສະໝັກຫວຽດນາມ ກໍ່ໄດ້ມາຮອດ ເຮັດໃຫ້ຈຳນວນພົນນັບມື້ນັບເພີ່ມທະວີຂຶ້ນຊົກໄຊ.

ໃນເດືອນຫຼັງຕໍ່ຈາກນັ້ນໄປ ແມ່ນພວກເຮົາສຸມໃສ່ອົບຮົມພະນັກງານ ແລະ ທະຫານໃຫ້ເຊື່ອໝັ້ນໃນການຕໍ່ສູ້ອັນເປັນທຳຂອງພວກເຮົາ ທີ່ເຮັດເພື່ອປົດປ່ອຍປະເທດຊາດ ແລະ ບໍ່ຮຸກຮານໃຜ ; ໃຫ້ອົບຮົມ ແລະ ຈັດຕັ້ງສະມາຄົມລາວອິດສະຫຼະໃນໝູ່ປະຊາຊົນ ແລະ ນຳພາປະຊາຊົນເຮັດການຕໍ່ສູ້ປະຕິວັດຢ່າງກວ້າງຂວາງ. ເພື່ອຈະໃຫ້ປະຊາຊົນເຂົ້າຮ່ວມເຮັດການປະຕິວັດນັ້ນ ຕ້ອງໃຫ້ພະນັກງານ ແລະ ທະຫານທຸກຄົນເຂົ້າໃຈເຊື່ອມຊຶມເນື້ອໃນ ໃຈຄວາມ

ຂອງປຶ້ມ ຂອງປະທານໂຫຈິມິນທີ່ມີຊື່ວ່າ : "ການດັດແປງວິທີເຮັດວຽກ" ເຮັດໃຫ້ປະຊາຊົນຮັກແພງ, ເຊື່ອຖື ແລະ ນັບຖືພວກເຮົາ ; ພ້ອມກັນນັ້ນກໍ່ໃຫ້ປະຊາຊົນຄຽດແຄ້ນ ພວກລ່າເມືອງຂຶ້ນຝະລັ່ງ ແລະ ອຳນາດການປົກຄອງຫຸ່ນລູກມືຂອງມັນ.

ການໂຄສະນາອົບຮົມປະຊາຊົນຂົງເຂດນີ້ບໍ່ຍາກປານໃດ ເພາະວ່າປະຊາຊົນສ່ວນຫຼາຍແມ່ນໄທລາວ, ໄທລື້, ໄທຍວນ, ຢູ່ເທິງພູຈຶ່ງມີເຜົ່າມົ້ງ, ຢາວ ແລະ ລາວເທິງທີ່ຄຽດຊັງທັງທະຫານໄທ ແລະ ຝະລັ່ງທີ່ເຄີຍມາກົດຂີ່ຂູດຮີດຂະເຈົ້າເປັນເວລາເຫິງນານມາແລ້ວ.

ເມື່ອພະນັກງານ ແລະ ທະຫານລາວ ແລະຫວຽດນາມເຂົ້າໃຈ ແລະ ເຊື່ອໝັ້ນຕໍ່ໜ້າທີ່ວຽກຂອງຕົນແລ້ວ, ພວກເຮົາກໍ່ຈັດຕັ້ງເປັນໜ່ວຍປະສົມ ໂດຍມີລາວ 3 ຄົນ ແລະ ຫວຽດນາມ 2 ຄົນເພື່ອແບ່ງກັນລົງໄປຂົນຂວາຍປະຊາຊົນ. ໃນເດືອນຕໍ່ມາ ພວກເຮົາສາມາດເຂົ້າໄປຈັດຕັ້ງປະຊາຊົນບ້ານຫ້ວຍເລົາ ແລະ ນ້ຳຄາ. ເມື່ອໜ່ວຍຂົນຂວາຍ ຂອງພວກເຮົາຂະຫຍາຍໄປຮອດບ້ານມ່ວງ ຕາແສງເມືອງຄອບແລ້ວ ຄະນະຮັບຜິດຊອບເຂດຕໍ່ຕ້ານ ຂອງພວກເຮົາ ກໍ່ຍ້າຍໄປຕັ້ງຢູ່ບ້ານນ້ຳຄາ, ຫົວເມືອງ ແລະ ທ້າຍສຸດພວກເຮົາກໍ່ຂະຫຍາຍ ລົງໄປຮອດບ້ານຫວາຍ ແລະ ບ້ານຫາດ ຕາແສງຊຽງຮ່ອນຊຽງລົມ ແລ້ວກໍ່ສົ່ງກຳລັງລົງໄປຈັດຕັ້ງນຳພາປະຊາຊົນ ຕາແສງເມືອງເງິນໃຫ້ສົ່ງພະນັກງານຂົນຂວາຍຂອງພວກເຮົາ ເຂົ້າໄປຮອດຕົວເມືອງໄຊຍະບູລີ.

ເມື່ອພື້ນຖານການເມືອງຂະຫຍາຍກວ້າງສົມຄວນແລ້ວ ພວກເຮົາກໍ່ຈັດຕັ້ງອຳນາດ ການປົກຄອງທ້ອງຖິ່ນ ແລະ ກອງທະຫານຮັກສາບ້ານຂຶ້ນໃນທຸກບ້ານ, ຈາກນັ້ນ ກໍ່ກ້າວຂຶ້ນຈັດຕັ້ງເປັນກອງຫຼອນປະກອບອາວຸດດ້ວຍປືນຍີ່ປຸ່ນ ທີ່ພວກເຮົາຊອກຫາມາໄດ້ ແລະ ປືນແກບປືນເພີງໜ້າທອງ ທີ່ປະຊາຊົນສ້າງເອົາເອງ. ພວກທະຫານຫຸ່ນທີ່ມີນາຍຝະລັ່ງບັນຊາ ເຊິ່ງຕັ້ງຄ້າຍຢູ່ປາກຄອບຮູ້ວ່າພວກເຮົາສ້າງກຳລັງປະຕິວັດຢູ່ໃນຂົງເຂດນີ້, ກໍ່ສົ່ງກຳລັງຂອງເຂົາອອກມາປາບ ແຕ່ກໍ່ຖືກກອງຫຼອນທ້ອງຖິ່ນຕີໃຫ້ລ່າຖອຍໄປຫຼາຍຄັ້ງ ; ຄັ້ງທຳອິດ ແມ່ນຕີກັນຢູ່ບ້ານກອນຕື່ນ, ກອງປາກແບງ ; ເທື່ອທີສອງແມ່ນຕີກັນຢູ່ບ້ານຫ້ວຍເລົາ ເຮັດໃຫ້ສັດຕູແຕກໜີກັບຄືນຄືກັນ ; ຕໍ່ຈາກນັ້ນມາ ກອງຫຼອນຫຼາຍທ້ອງຖິ່ນກໍ່ຕີຕ້ານການກວາດລ້າງ ຂອງສັດຕູຢ່າງມີໄຊ. ອັນນີ້ເຮັດໃຫ້ກຳລັງໃຈຂອງກອງຫຼອນເຂັ້ມແຂງຂຶ້ນຈັກໄຊ.

ຕັ້ງແຕ່ນີ້ໄປມັນບໍ່ແມ່ນບັ້ນທີ່ພວກເຮົາດັກສະກັດຕີສັດຕູເທົ່ານັ້ນ ; ແຕ່ຫາກແມ່ນບັ້ນທີ່ພວກເຮົາເຂົ້າຕີຄ້າຍສັດຕູຫຼາຍຂຶ້ນເລື້ອຍໆ ຄືຕີຄ້າຍປາກຄອບຕາແສງເມືອງຄອບ, ຕີຄ້າຍບ້ານຫາດຕາແສງຊຽງລົມ ແລະ ຕີເຮືອຈັກສັດຕູທີ່ຂຶ້ນຕາມນ້ຳຂອງເພື່ອຂົນເງິນ ແລະ ອາວຸດໄປສົ່ງໃຫ້ກອງທະຫານ ແລະ ຂ້າລາຊະການຂອງເຂົາທີ່ຫ້ວຍຊາຍ. ການຕີທຸກເທື່ອ ໄດ້ຮັບໄຊຊະນະຢ່າງງົດງາມ ເຮັດໃຫ້ພວກເຮົາມີຄວາມສາມາດປະກອບອາວຸດ ແລະ ວັດຖຸສິ່ງຂອງຈຳເປັນໃຫ້ແກ່ພື້ນຖານການທະຫານ ແລະ ການເມືອງຫຼາຍກວ່າເກົ່າຂຶ້ນຈັກໄຊ.

ເວລາເຮົາເຂົ້າໄປຫາເຈົ້າເພັດຊະລາດເທື່ອທຳອິດນັ້ນ ເພິ່ນຊົມເຊີຍ ການທີ່ພວກເຮົາຕັ້ງເຂດຕໍ່ຕ້ານຂຶ້ນໄດ້ ແຕ່ຫາກຮ້ອງຂໍໃຫ້ເຮົາຢ່າຊູ່ໄປຕີຝະລັ່ງອີກ ເພາະວ່າຕ້ອງຄອຍຖ້າເບິ່ງມະຕິຂອງສະຫະປະຊາຊາດເສຍກ່ອນ, ບາງທີສະຫະປະຊາຊາດຈະປະຊຸມກັນ ແລະລົງມະຕິບອກໃຫ້ຝະລັ່ງມອບເອກະລາດໃຫ້ແກ່ລາວ, ຖ້າວ່າພວກເຮົາຫາກຕີພວກຝະລັ່ງ ເຮົາຈະຫາວ່າພວກເຮົາກະຫາຍສົງຄາມ ແລ້ວຈະບໍ່ໄດ້ຮັບເອກະລາດນັ້ນ. ເວລານັ້ນ ເຮົາບໍ່ໄດ້ຕອບຫຍັງ, ແຕ່ວ່າເມື່ອເຮົາກັບຄືນໄປເຂດຕໍ່ຕ້ານໄດ້ລາຍງານຕໍ່ຄະນະ,ພັກທຸກຄົນເຫັນດີໃຫ້ສືບຕໍ່ຕີສັດຕູ ເພື່ອຂະຫຍາຍກຳລັງຂອງພວກເຮົາ. ບໍ່ພຽງແຕ່ພວກເຮົາຂະຫຍາຍເຂດ ຂອງພວກເຮົາເທົ່ານັ້ນ, ແຕ່ພວກເຮົາຍັງຂະຫຍາຍເຂດຕໍ່ຕ້ານເຂົ້າໄປແຂວງນ້ຳທາຕື່ມອີກ; ຕັ້ງແຕ່ເມືອງຊຽງກົກ, ເມືອງລອງ, ເມືອງສະ, ເມືອງກາງ ຮອດເມືອງສິງ ແມ່ນພວກເຮົາຄວບຄຸມຊົນນະບົດເກືອບທັງໝົດ ; ພວກລ່າເມືອງຂຶ້ນຝະລັ່ງ ແລະ ລູກມືຢູ່ໄດ້ແຕ່ໃນຄ້າຍຂອງພວກເຂົາເທົ່ານັ້ນ ; ເຂດຕໍ່ຕ້ານນີ້ ພວກເຮົາເອີ້ນວ່າເປັນເຂດ 1 ແລະ ຢູ່ໃຕ້ການຊີ້ນຳດູແລຂອງພວກເຮົາຄືກັນ. ພາຍຫຼັງມາ, ໃນເມື່ອເຫັນວ່າກຳລັງຂອງພວກເຮົາຂະຫຍາຍຕົວກວ້າງຂວາງອອກແນວນັ້ນ, ເຈົ້າເພັດຊະລາດຈຶ່ງແຕ່ງຕັ້ງໃຫ້ເຮົາເປັນຜູ້ແທນລັດຖະບານປະຈຳເຂດ 1 ແລະ ເຂດ 2 ພ້ອມກັນໄປເລີຍ. ເຮົາເວົ້າເຖິງແຕ່ເຈົ້າເພັດຊະລາດເພາະວ່າຕັ້ງແຕ່ເວລາອົບພະຍົບໄປຢູ່ດິນໄທແລ້ວ ຄະນະລັດຖະບານ ໂດຍສະເພາະຢ່າງຍິ່ງແມ່ນນາຍົກພະຍາຄຳມາວ, ບໍ່ໄດ້ມີການເຄື່ອນໄຫວຫຍັງເພື່ອຮັບໃຊ້ການປະຕິວັດ, ເຈົ້າເພັດຊະລາດທີ່ຖືກແຕ່ງຕັ້ງເປັນປະມຸກລັດ ຈຶ່ງສວມມືເຂົ້າກ່ວຍການບໍລິຫານປະເທດໂດຍກົງ.

ຢູ່ໃນປະເທດໄທເວລານັ້ນ ແມ່ນພວກເສລີໄທກຳອຳນາດ ໂດຍແມ່ນນາຍ ປລີດີ ພະນົມຍົງ (ຫຼວງປະດິດມະນູທຳ) ເປັນຜູ້ມີອິດທິພົນສູງ. ເມື່ອເຈົ້າຊີວິດໄທ (ອະນັນທະມະຫິດົນ) ຖືກລອບສັງຫານ ແລະ ເອົານ້ອງຊາຍຄື ພູມິພົນ ອະດຸລິຍະເດດ ຂຶ້ນແທນແລ້ວ ນາຍ ປລີດີ ພະນົມຍົງ ໄດ້ໂຕນໜີໄປຢູ່ຕ່າງປະເທດ. ລັດຖະບານໄທຊຸດຕໍ່ໄປນັ້ນໄດ້ປ່ຽນນະໂຍບາຍໃໝ່. ພວກທະຫານສຳພັນທະມິດຂອງຫຼາຍປະເທດທີ່ເຂົ້າໄປປົດອາວຸດທະຫານຍີ່ປຸ່ນ ໃນປະເທດໄທ ໄດ້ຄ່ອຍທະຍອຍກັນຖອນໜີໄປ, ຍັງເຫຼືອແຕ່ກອງທະຫານອາເມລິກາ ທີ່ຄອບຄອງປະເທດໄທແຕ່ຜູ້ດຽວ. ພວກກຸ່ມເສລີໄທເມື່ອກ່ອນນີ້ໄດ້ເສຍອິດທິພົນ ; ນາຍປລີດີ ພະນົມຍົງ ໄດ້ຖືກກ່າວຫາວ່າເປັນກອມມູນິດ ; ພວກລັດຖະມົນຕີທີ່ເປັນຄົນພາກອິສານຫຼາຍຄົນ ຄື ນາຍທອງອິນ ພູລິພັດ, ນາຍຖະຫວິນ ອຸດົມ, ນາຍທອງເປົວ ຊົນລະພູມ ແລະ ນາຍຕຽງ ສີລິຂັນ ໄດ້ຖືກຈັບກຸມໂດຍຖືກຫາວ່າມີເລກົນຈະແບ່ງແຍກດິນແດນພາກອິສານອອກຈາກປະເທດໄທ , ທ້າຍສຸດມາກໍ່ຖືກປະຫານຊີວິດໝົດທຸກຄົນ. ເມື່ອສະພາບການເປັນແນວນັ້ນ ພວກທີ່ຊ່ວຍເຫຼືອລັດຖະບານລາວໃຫ້ດຳລົງຊີວິດ ຢູ່ໃນດິນໄທກໍ່ນັບມື້ນັບໜ້ອຍລົງ, ຄະນະລັດຖະບານລາວ ພົບ

ຄວາມຫຍຸ້ງຍາກນັບມື້ນັບຫຼາຍຂຶ້ນ, ເພາະວ່າພວກອາເມລິກາທີ່ມີອຳນາດເໜືອແຜ່ນດິນໄທ ບໍ່ເຫັນດີໃຫ້ພວກລາວອິດສະຫຼະໄປຕີພວກລ່າເມືອງຂຶ້ນຝະລັ່ງ ທີ່ເປັນສຳພັນທະມິດກັບພວກເຂົາ ແລະ ແນະນຳໃຫ້ລັດຖະບານລາວພາກັນກັບຄືນເຂົ້າໄປຍອມຈຳນົນຕໍ່ພວກຝະລັ່ງ ແລ້ວຍຸດຕິທຸກການຕໍ່ຕ້ານຝະລັ່ງຢູ່ໃນທົ່ວປະເທດລາວ.

ຢູ່ໃນເຂດຕໍ່ຕ້ານ 1 ແລະ 2, ວຽກງານດຳເນີນໄປຢ່າງມີຜົນດີ. ຕັ້ງແຕ່ຕົ້ນປີ 1949 ຕໍ່ມາ ຈຳນວນພົນພວກເຮົາໄດ້ເພີ່ມຂຶ້ນຫຼາຍ. ທ່ານເພົ້າ ພິມພະຈັນ, ທ່ານອຸຕະມະ ຈຸລາມະນີ ແລະ ນ້ອງຊາຍຂະເຈົ້າຜູ້ລະຄົນ ໄດ້ເດີນທາງຈາກເຂດໜອງຄາຍມາຫາພວກເຮົາ , ເຮັດໃຫ້ພວກເຮົາມີຜູ້ມາຊ່ວຍຮັບຜິດຊອບພະແນກປົກຄອງ ແລະ ພະແນກສຶກສາ ເຮັດໃຫ້ວຽກງານສະດວກດີກວ່າເກົ່າ. ກອງທະຫານຝະລັ່ງ ແລະ ຫຸ່ນລາວທີ່ອອກໄປກວາດລ້າງ - ລ້ອມແຕ່ຖືກກອງຫຼອນ ແລະ ປະຊາຊົນດັກສະກັດຕີໃຫ້ແຕກຫະລາຍໄປ. ປະຊາຊົນລາວທ້ອງຖິ່ນນັ້ນຄຽດຊັງທັງອຳນາດການປົກຄອງຝະລັ່ງ ແລະໄທຢູ່ແລ້ວ ກໍ່ດີໃຈຮ່ວມມື ກັບພວກເຮົາຢ່າງຫ້າວຫັນ. ພຽງແຕ່ພວກເຮົາລວມປະຊຸມນຳອົງການປົກຄອງ ແລະ ສະມາຄົມລາວອິດສະຫຼະເພື່ອຕີລາຄາສະພາບການ ແລະ ວາງແຜນການ 6 ເດືອນ, 3 ເດືອນ ແລະປະຈຳເດືອນນຳກັນແລ້ວ ຂະເຈົ້າຫາກລະດົມປະຊາຊົນທ້ອງຖິ່ນຂອງຂະເຈົ້າເຮັດ ເພາະຂະເຈົ້າເຫັນວ່າ ແຜນການນັ້ນມັນນຳເອົາຄວາມສະຫງົບສຸກ ແລະ ຊີວິດການເປັນຢູ່ອັນນັບມື້ນັບດີຂຶ້ນມາໃຫ້ພວກຂະເຈົ້າ. ເຂົ້າປາອາຫານປະຈຳວັນຂອງພະນັກງານ ແລະ ກອງທະຫານພວກເຮົາກໍ່ແມ່ນປະຊາຊົນບ້ານຕ່າງໆ ແບ່ງກັນເອົາມາລ້ຽງພວກເຮົາ ; ບາງບ່ອນ ໄດ້ຮັບເອົາພະນັກງານເຮົາໄປປະຈຳຢູ່ນຳຂະເຈົ້າ, ຮ່ວມຢູ່, ຮ່ວມກິນ, ຮ່ວມເຮັດວຽກງານ ເພີ່ມພູນ ແລະ ວຽກງານປ້ອງກັນບ້ານຊ່ອງກັບຂະເຈົ້າ. ນອກຈາກນັ້ນແຕ່ລະບ້ານ ຍັງສົ່ງເຂົ້າສານ ແລະ ອາຫານການກິນມາໃຫ້ຄະນະຮັບຜິດຊອບເຂດພວກເຮົາກິນຢູ່ກັບບ່ອນທີ່ປິດລັບ. ມີບຸນສິນກິນທານທາງພຸດທະສາສະໜາພວກເຮົາ ກໍ່ຮ່ວມກັບປະຊາຊົນເຮັດໃຫ້ຖືກເການຮີດຄອງ ຢ່າງມ່ວນຊື່ນ. ນອກຈາກນັ້ນ ທຸກວັນເສົາ ຫຼື ວັນສິນພວກເຮົາກໍ່ໄປຮ່ວມກັບປະຊາຊົນ ຈັດການມ່ວນຊື່ນ ໂດຍສົມທົບການຟ້ອນລຳພື້ນເມືອງກັບການຮ້ອງເພັງ ແລະ ການຟ້ອນລຳວົງທີ່ພວກເຮົາປະດິດແຕ່ງຂຶ້ນ ເຮັດໃຫ້ທົ່ວເຂດຕໍ່ຕ້ານມີຄວາມຟົດຟື້ນມ່ວນຊື່ນຫຼາຍກວ່າແຕ່ກ່ອນ. ຕັ້ງແຕ່ຕົ້ນປີ 1948 ຕໍ່ມາ, ທີ່ເຂດ 2 ໄດ້ພິມໜັງສືພິມຂຶ້ນເດືອນລະສອງເທື່ອ ໂດຍໃຊ້ການຂຽນດ້ວຍມືໃສ່ກະດາດໄຂ ແລ້ວພິມດ້ວຍເຄື່ອງໂລເນໂອ ທີ່ພວກເຮົາຢຶດເອົາມາໄດ້ຈາກຄ້າຍທະຫານຝະລັ່ງ. ໜັງສືພິມນັ້ນໃສ່ຊື່ວ່າ "ກູ້ຊາດ" ເນື້ອໃນຂອງມັນແມ່ນຂ່າວການຄືບໜ້າ ຂອງການປະຕິວັດໃນເຂດ 1 ແລະ ເຂດ 2, ຂ່າວທີ່ຟັງວິທະຍຸຂອງເຂດອື່ນໃນທົ່ວປະເທດ , ຂ່າວໂລກທີ່ປະຊາຊົນລາວຄວນຮູ້, ກາບກອນ ແລະ ເພັງຮ້ອງທີ່ອ້າຍນ້ອງເຮົາແຕ່ງຂຶ້ນ , ຂ່າວການລົບລ້າງຄວາມບໍ່ຮູ້ໜັງສື ແລະ ການສອບເສັງໃນໂຮງຮຽນ ແລະບ້ານຕ່າງໆ; ທັງ

ພົດນັ້ນແມ່ນແນໃສ່ເຮັດໃຫ້ປະຊາຊົນລາວຮູ້ສຶກທະນົງໃຈ ທີ່ໄດ້ເກີດມາເປັນຄົນລາວ ຢູ່ບົນພື້ນແຜ່ນດິນລາວທີ່ອຸດົມຮັ່ງມີ, ຮູ້ສຶກຄຽດແຄ້ນອຳນາດການປົກຄອງສັກດີນາ ແລະພວກລ່າເມືອງຂຶ້ນຟະລັ່ງທີ່ກົດຂີ່ຂູດຮີດປະຊາຊົນ ແລະ ກົດໜ່ວງຄວາມກ້າວໜ້າຂອງປະເທດຊາດ ແລະຮູ້ສຶກດີໃຈທີ່ມີໂອກາດສາມັກຄີທຸກຊົນຊາດຊົນເຜົ່າ, ສາມັກຄີກັບປະຊາຊົນຫວຽດນາມ ແລະ ກຳປູເຈຍ ເພື່ອເຮັດການຕໍ່ສູ້ປົດປ່ອຍຊາດ.

ຫຼາຍລະດູໄດ້ຜ່ານໄປ, ໝົດລະດູຝົນແລ້ວເຂົ້າສູ່ລະດູໜາວ, ລະດູບານໃໝ່, ລະດູຮ້ອນ ແລະລະດູຝົນອີກ, ແຕ່ພວກເຮົາບໍ່ໄດ້ເອົາໃຈໃສ່ສິ່ງທີ່ເປັນໄປໃນແຕ່ລະລະດູ ເຊິ່ງພວກເຮົາເຫັນວ່າຜ່ານໄປໄວທີ່ສຸດ. ຫົວໃຈເຮົາມັນຈົດຈໍ່ໃສ່ແຕ່ຂ່າວກ່ຽວກັບສັດຕູ, ການຂະຫຍາຍຕົວຂອງເຂດຕໍ່ຕ້ານ ແລະ ຄວາມປອດໄພຂອງປະຊາຊົນ.

ເຮົາມາຄິດເບິ່ງຕົນເອງໃນເວລານັ້ນເຫັນວ່າ ຄວາມຫ້າວຫັນເຮັດວຽກງານມີຫຼາຍທີ່ສຸດ, ແຕ່ເຮົາຍັງຂາດທິດສະດີ ແລະ ບົດຮຽນ, ມີແຕ່ປຶກສາຫາລືກັບຄະນະຮັບຜິດຊອບຝ່າຍລາວ ແລະຝ່າຍຫວຽດນາມ ແລ້ວກໍ່ເຮັດໄປໂດຍຫງ່ຽງຫູຟັງຄວາມຍອງ ແລະ ຄວາມຕິຂອງປະຊາຊົນແຕ່ລະທ້ອງຖິ່ນ ແລ້ວແກ້ໄຂດັດແປງວຽກງານຂອງຕົນແຕ່ລະເວລາ. ແຕ່ລະປີ ເຮົາໄດ້ໄປບາງກອກສອງເທື່ອ ຄືຕົ້ນປີ ແລະກາງປີເພື່ອຖາມເບິ່ງແນວທາງເດີນ ຂອງລັດຖະບານ ແລະ ເຈົ້າເພັດຊະລາດ. ທຸກໆເທື່ອເຮົາກໍ່ໄດ້ເຂົ້າໄປຢາມຜູ້ຕາງໜ້າຫວຽດນາມ ເພື່ອຂໍຄຳຕັກເຕືອນ ແລະ ຂໍປຶ້ມທິດສະດີທີ່ພວກເພິ່ນຮຽນກັນຢູ່ໃນປະເທດຫວຽດນາມ, ທັງຂໍໃຫ້ເພິ່ນສົ່ງຜູ້ຊ່ຽວຊານດ້ານການເມືອງ, ການທະຫານ ແລະ ການໂຄສະນາມາຊ່ວຍພວກເຮົາຕາມທີ່ພວກເຮົາໄດ້ຕົກລົງກັນກັບຄະນະຮັບຜິດຊອບຝ່າຍຫວຽດນາມທີ່ເຂດຕໍ່ຕ້ານ. ແຕ່ລະເທື່ອເຮົາບໍ່ໄດ້ຮັບຄຳແນະນຳແນວໃດ ຈາກຄະນະລັດຖະບານລາວ. ສ່ວນຜູ້ແທນຫວຽດນາມ ນັ້ນເພິ່ນຮັບວ່າຈະໃຫ້ຄວາມຊ່ວຍເຫຼືອແກ່ເຮົາຕາມຄຳຕ້ອງການ ແລະ ຕໍ່ມາບໍ່ນານ ພະນັກງານການເມືອງ ແລະການທະຫານກໍ່ໄດ້ເອົາເອກະສານທີ່ຕ້ອງການນັ້ນ ຈາກປະເທດຫວຽດນາມມາຫາພວກເຮົາແທ້. ຕັ້ງແຕ່ນັ້ນມາພວກເຮົາກໍ່ມີຄວາມສະດວກຫຼາຍປະການ ແລະເຫັນຊ່ອງທາງເດີນແຈ້ງຂຶ້ນກວ່າເກົ່າ ໃນການຊີ້ນຳວຽກງານຕໍ່ສູ້ໃຫ້ຂະຫຍາຍຕົວໄວກວ່າເກົ່າທັງທາງກ້ວາງ ແລະ ທາງເລິກ

ທ້າຍປີ 1948 ເຈົ້າເພັດຊະລາດໄດ້ຂຽນຈົດໝາຍສົ່ງມາໃຫ້ເຮົາ ບອກວ່າ ຈະສົ່ງກອງທະຫານທີ່ເອີ້ນຊື່ວ່າກອງອານຸວົງ ບັນຊາໂດຍທ້າວ ອ້ວນ ລາທິກຸນ ມາໃຫ້ພວກເຮົາ. ທະຫານກອງນັ້ນແຕ່ກ່ອນຕັ້ງຂຶ້ນຢູ່ອຳເພີຊຽງຄານ ແລ້ວພັ້ນຫຼຽວເຂົ້າມາຕີຄ້າຍທະຫານຟະລັ່ງແລະລາວຫຸ່ນທີ່ເມືອງບໍ່ແຕນ ແລະ ແກ່ນທ້າວ, ເມື່ອຕີແລ້ວກໍ່ກັບຄືນໄປຕັ້ງຢູ່ດິນໄທ, ບໍ່ໄດ້ຈັດຕັ້ງເຂດຕໍ່ຕ້ານຂຶ້ນໃນດິນລາວຈັກບ່ອນ. ມາຮອດປີ 1948 ລັດຖະບານໄທທີ່ຢູ່ໃຕ້ອຳນາດ ຂອງອາເມລິກາ ເລີຍຫ້າມທະຫານກອງນັ້ນບໍ່ໃຫ້ຕັ້ງຢູ່ໃນດິນໄທຕໍ່ໄປອີກ, ຖ້າບໍ່ຟັງເຂົາຈະປົດອາວຸດ.

ເຮົາໄດ້ຮັບຈົດໝາຍນັ້ນແລ້ວກໍ່ລວມບຸກຄົນສຳຄັນຂອງລາວ ແລະ ຫວຽດນາມ ເພື່ອຖາມຄຳເຫັນວ່າຈະຄວນຕອບໃຫ້ເຈົ້າເພັດຊະລາດວ່າແນວໃດ. ຂ່າວນີ້ຈຶ່ງແມ່ນເຮັດໃຫ້ພວກເຮົາຫຍຸ້ງໃຈທີ່ສຸດ ; ຖ້າພວກເຮົາຕອບໄປວ່າບໍ່ຮັບກໍ່ຈະເກີດມີການຂັດແຍ້ງກັນລະຫວ່າງ ພວກເຮົາກັບລັດຖະບານ ; ຖ້າວ່າຕອບຮັບກໍ່ຈະເກີດຄວາມຫຍຸ້ງຍາກໃຫ້ແກ່ພວກເຮົາຫຼາຍເພາະວ່າມັນຈະເປັນການມ້າງແຜນການຈັດຕັ້ງຂອງພວກເຮົາ ແລະ ກໍ່ບໍ່ຮູ້ດີກວ່າ ພວກຄົນທີ່ຈະມາຢູ່ນຳພວກເຮົານັ້ນ ຈະເປັນຄົນແນວໃດ.

ພວມພວກເຮົາເປິກສາກັນຢູ່, ບໍ່ທັນຕອບຈົດໝາຍຂອງເຈົ້າເພັດຊະລາດ, ພວກທ້າວອ້ວນ ລາທິກຸນ, ທ້າວບຸນຈັນ ພົມມະລິນ ແລະ ທ້າວສຸເທບ ກໍ່ເຂົ້າມາຫາພວກເຮົາ ພ້ອມດ້ວຍຈົດໝາຍຂອງເຈົ້າເພັດຊະລາດທີ່ສະເໜີວ່າ ທ້າວ ອ້ວນ ລາທິກຸນ ມີຍົດເປັນ ຮ້ອຍເອກເປັນຜູ້ບັນຊາກອງ, ທ້າວບຸນຈັນ ພົມມະລິນ ແລະ ສຸເທບ (ຄົນໄທ) ມີຍົດເປັນຮ້ອຍໂທເປັນຮອງ ແລະ ຄະນະຕື່ມຫຼາຍຄົນອີກເປັນຈຳນວນ 30 ກວ່າຄົນທີ່ຄ່ອຍທະຍອຍກັນມາຮອດຕາມຫຼັງ. ພວກເຮົາໄດ້ໃຫ້ການຕ້ອນຮັບແກ່ພວກເຂົາຢ່າງອົບອຸ່ນ.

ຫຼັງຈາກປະຊຸມລຸລີ້ງກັນພາຍໃນພວກເຮົາແລ້ວ ພວກເຮົາໄດ້ປະຊຸມລວມກັນພິດ. ເຮົາໄດ້ຊີ້ແຈງເຖິງສະພາບການສັດຕູ ແລະເຮົາ, ຊີ້ແຈງໜ້າທີ່ສະເພາະໜ້າ ແລະ ຍາວນານຂອງພວກເຮົາ, ສິ່ງທີ່ພວກເຮົາທຸກຄົນຕ້ອງເຮັດເພື່ອປັບປຸງຄຸນສົມບັດ ແລະ ສົນທຳປະຕິວັດເຮັດໃຫ້ພວກເຮົາທຸກຄົນເປັນຄົນຂອງປະຊາຊົນ ທີ່ເຮັດວຽກເພື່ອປະເທດຊາດ ແລະ ປະຊາຊົນ. ຫຼັງຈາກນັ້ນກໍ່ໄດ້ສະເໜີການປັບປຸງການຈັດຕັ້ງໃໝ່ ໂດຍເຮົາເປັນຫົວໜ້າເຂດຄີເກົ້າ, ທ້າວ ອ້ວນ ລາທິກຸນ ເປັນຜູ້ບັນຊາກອງທະຫານ ເພາະວ່າເປັນຜູ້ມີຍົດສູງກວ່າ, ຮ້ອຍໂທກາຍອ້ວນ, ຮ້ອຍໂທ ບຸນຈັນ ພົມມະລິນ ແລະ ຮ້ອຍໂທສຸເທບ ເປັນຮອງ, ທ່ານເພົ້າ ພົມພະຈັນ ເປັນຫົວໜ້າພະແນກປົກຄອງ ແລະການຄັງ, ທ່ານອຸຕະມະ ຈຸລາມະນີ ເປັນຫົວໜ້າພະແນກສຶກສາ ແລະ ທ່ານມະຫາຄຳພັນ ວິລະຈິດ ເປັນຫົວໜ້າພະແນກໂຄສະນາ ແລະ ວັດທະນະທຳ. ນອກຈາກນັ້ນຜູ້ໃດມີຄວາມສາມາດໃນວິຊາໃດ ກໍ່ຊ່ວຍວຽກວິຊານັ້ນ. ຕັ້ງແຕ່ນັ້ນມາ ຄະນະຮັບຜິດຊອບຝ່າຍປົກຄອງ ແລະການເມືອງພ້ອມກັນກັບກອງທະຫານປ້ອງກັນໄດ້ຕັ້ງຢູ່ຕ່າງຫາກ, ກອງບັນຊາການທະຫານລາວຕັ້ງຢູ່ບ່ອນໜຶ່ງ, ກອງບັນຊາການທະຫານ ອາສາສະໝັກຫວຽດນາມ ຕັ້ງຢູ່ຕ່າງຫາກ, ເມື່ອຕ້ອງການປະຊຸມກັນຈຶ່ງມາລວມກັນ,ວາງແຜນການເປັນເອກະພາບກັນ ແລ້ວຕ່າງຝ່າຍຕ່າງນຳເອົາໄປປະຕິບັດ.

ການກໍ່ສ້າງເຂດຕໍ່ຕ້ານຂອງພວກເຮົາສືບຕໍ່ຂະຫຍາຍຕົວໃນທຸກດ້ານ, ເຮັດໃຫ້ປະຊາຊົນ ແລະ ພວກເຮົາເອງເຊື່ອໝັ້ນໃນໄຊຊະນະ ແລະ ຫ້າວຫັນມ່ວນຊື່ນຂົ້ນຈັກໄຊ. ແຕ່ວ່າພ້ອມກັນນັ້ນຄວາມຫຍຸ້ງຍາກຈຸດອ່ອນ ແລະ ຂໍ້ບົກພ່ອງຂອງພວກເຮົາກໍ່ມີຫຼາຍ ເພາະວ່າມັນເປັນເທື່ອທຳອິດໃນຊີວິດຂອງພວກເຮົາທີ່ໄດ້ນຳພາການປະຕິວັດຢ່າງຮອບດ້ານຄືແນວນັ້ນ ; ພວກ

ເຣົາຂາດທັງທິດສະດີ ແລະ ທັງບົດຮຽນຕົວຈິງ ; ພະນັກງານ ແລະທະຫານພວກເຣົາ ມີຄວາມສັບສົນໃນຕົວຂອງຂະເຈົ້າ ຍ້ອນວ່າບາງຄົນແມ່ນຊາວນາ, ບາງຄົນແມ່ນພໍ່ຄ້າເກົ່າ , ບາງຄົນແມ່ນຂ້າລາຊະການຂອງລະບອບເກົ່າ, ບາງຄົນຍັງບວດເປັນພະສົງຢູ່, ບາງຄົນບວດສິກແລ້ວໄດ້ຮຽນໃນວັດຈີນເສັງໄດ້ມະຫາ 3, ມະຫາ 6 ຫຼືມະຫາ 9 ປະໂຫຍກ, ບາງຄົນເປັນທະຫານເກົ່າຂອງຝະລັ່ງ ຫຼື ຂອງໄທ ; ຄົນພວກນີ້ມາເຮັດການປະຕິວັດນຳພວກເຣົາກໍ່ຍ້ອນວ່າຂະເຈົ້າມີຄວາມຄຽດແຄ້ນຕໍ່ການກົດຂີ່ຂູດຮີດຂອງສັດຕູ ແລະ ຢາກເຫັນປະເທດເປັນເອກະລາດແຕ່ຫາກບໍ່ທັນເຂົ້າໃຈແຈ້ງວ່າ ຈະສ້າງໂຕເອງແນວໃດ ຈຶ່ງຈະສ້າງປະຊາຊົນໃຫ້ເປັນກ້ອນກຳລັງປະຕິວັດໄດ້. ປະຊາຊົນສ່ວນຫຼາຍແມ່ນເຊື່ອໝັ້ນພວກເຣົາ ແລະ ໄປນຳພວກເຣົາຢ່າງຕາຍໃຈແທ້ ; ແຕ່ກໍ່ຍັງມີບາງຄົນຢູ່ເຄິ່ງໆກາງໆ, ເຮັດນຳພວກເຣົາຍ້ອນຢ້ານ ຫຼື ຍ້ອນຖຽງບໍ່ແພ້ ແລະ ພ້ອມກັນນັ້ນກໍ່ເຮັດນຳສັດຕູຍ້ອນຢ້ານທັງສອງຝ່າຍຄືກັນ ; ປະຊາຊົນຈຳນວນນ້ອຍໜຶ່ງເປັນລູກມືທີ່ສັດຕູປ່ອຍໄວ້ໃຫ້ສອດແນມເບິ່ງພວກເຣົາ ແລ້ວລາຍງານໃຫ້ພວກເຂົາ, ບາງທີກໍ່ພາປະຊາຊົນຂັດຂວາງ ຫຼື ຕ້ານພວກເຣົາ. ນີ້ທຳອິດ, ການລະດົມປະຊາຊົນໃຫ້ເຮັດນາເຣົ່າ ຫຼື ໜ່ວຍສາມັກຄີເພີ່ມພູນກໍ່ເປັນການຍາກ, ການຊັກຊວນເອົາເດັກນ້ອຍມາເຂົ້າໂຮງຮຽນ ແລະ ເອົາຜູ້ໃຫຍ່ມາລົບລ້າງຄວາມບໍ່ຮູ້ໜັງສື ຫຼື ບຳລຸງວັດທະນະທຳ ກໍ່ເປັນການຍາກຄືກັນ. ແຕ່ວ່າປີໜຶ່ງຜ່ານມາ ເມື່ອປະຊາຊົນເຫັນວ່າ ປະຕິບັດຕາມການຊີ້ນຳຂອງພວກເຣົາຂະເຈົ້າເກັບກ່ຽວເຂົ້າໄດ້ຫຼາຍກວ່າເກົ່າ, ໄດ້ຮູ້ອ່ານຮູ້ຂຽນ ແລະ ລູກຂອງຂະເຈົ້າກໍ່ຮູ້ໜັງສືຫຼາຍ ວຽກງານຂອງພວກເຣົາໃນທຸກດ້ານກໍ່ສະດວກຂຶ້ນ ແລະ ຂະຫຍາຍຕົວໄປທາງດີ, ເຮັດໃຫ້ເຂດຕໍ່ຕ້ານຂອງພວກເຣົາຂະຫຍາຍຕົວກວ້າງຂວາງອອກເລື້ອຍໆ. ກາງປີ 1949 ເຣົາໄດ້ໄປບາງກອກເພື່ອລາຍງານສະພາບເຂດຕໍ່ຕ້ານຂອງພວກເຣົາ ໃຫ້ຄະນະລັດຖະບານ ແລະ ເຈົ້າເພັດຊະລາດ ແລະ ຂໍຄຳເຫັນຈາກພວກເພິ່ນ. ກະຕ່າຍ ໂດນສະໂສລິດ ທີ່ເປັນລັດຖະມົນຕີກະຊວງການຄັງ ໄດ້ເວົ້າຕໍ່ເຣົາວ່າ ສະພາບການຢູ່ປະເທດໄທໄດ້ມີການປ່ຽນແປງແລ້ວ, ກອງທະຫານອາເມລິກາພວມຄຸມລັດຖະບານໄທ ແລະກົດຂວາງບໍ່ໃຫ້ພວກນີ້ຊ່ວຍພວກເຣົາອີກ, ຊ້ຳບໍ່ໜຳພວກເຂົາຍັງບອກໃຫ້ພວກເຣົາກັບຄືນໄປຢູ່ນຳຝະລັ່ງແລະໄດ້ລົດພ່ອນການຊ່ວຍເຫຼືອທີ່ພວກເຂົາເຄີຍໃຫ້ແກ່ພວກເຣົານັ້ນ ; ພວກເຂົາເວົ້າວ່າ ພົດປີ 1949 ຈະບໍ່ຊ່ວຍເຫຼືອພວກເຣົາອີກ, ເມື່ອເປັນແນວນັ້ນ ຄະນະລັດຖະບານເຣົາ ຈະຢູ່ປະເທດໄທຕໍ່ໄປບໍ່ໄດ້ອີກ, ມັກ ຫຼື ບໍ່ມັກກໍ່ຈະຕ້ອງໄດ້ພາກັນກັບຄືນໄປຫາຝະລັ່ງ. ເຣົາໄປຫາພະຍາຄຳມາວ ກໍ່ເວົ້າແນວດຽວກັນ, ເຂົາຍັງຊັກຊວນໃຫ້ພວກເຣົາຍຸບເຂດຕໍ່ຕ້ານ ແລ້ວກັບຄືນເມືອນຳກັນ, ເຂົາເວົ້າວ່າໄດ້ຕິດຕໍ່ກັບທູດຝະລັ່ງແລ້ວ ໄດ້ການຮັບປະກັນ ໃຫ້ມີໜ້າທີ່ສູງ ແລະ ໃຫ້ຈັດຕັ້ງພັກການເມືອງທີ່ກ້າວໜ້າຂຶ້ນໄດ້. ເຣົາໄດ້ຕອບວ່າພວກເຣົາບໍ່ເຫັນດີ ໃຫ້ກັບຄືນໄປຫາຝະລັ່ງ ເພາະວ່າເຮັດແນວນັ້ນແມ່ນໄປຍອມຈຳນົນຕໍ່ສັດຕູ ແລະ ປະເທດຊາດຈະບໍ່

ເປັນເອກະລາດຈັກເທື່ອ, ມື້ລຸນມາ ພະຍາຄຳມ້າວໄດ້ລວມຄະນະລັດຖະບານ ຈຳນວນໜຶ່ງ ເພື່ອລຸ້ງເຮົາໃຫ້ກັບຄືນເມືອງລາວພ້ອມກັນກັບພວກເຂົາ ແລະ ຮັບຮອງວ່າ ຈະໃຫ້ເຮົາໄດ້ເປັນລັດຖະມົນຕີກະຊວງມະຫາດໄທ ໃນເມື່ອພວກເຂົາຫາກຕັ້ງລັດຖະບານໄດ້ໃນພາຍໜ້າ . ເຮົາຮູ້ສຶກເສຍໃຈຕໍ່ການຕັດສິນໃຈຂອງຄະນະລັດຖະບານແນວນັ້ນ ; ເຮົາໄດ້ຍົກເອົາເຫດຜົນຫຼາຍອັນມາສະເໜີໃຫ້ພວກເຂົາພິຈາລະນາ. ການຖົກຖຽງກັນດຳເນີນໄປພໍດງາຍໜຶ່ງ. ຄະນະລັດຖະບານທີ່ມາຮ່ວມປະຊຸມກັນນັ້ນ ເປັນເອກະພາບກັນ ຮັກສາແຜນການເກົ່າຂອງເຂົາ ເພາະວ່ານອກຈາກເສັ້ນທາງນັ້ນ ແມ່ນພວກເຂົາບໍ່ມີທາງອອກອື່ນໃດອີກ. ເມື່ອເຮົາຂໍເຊີນພວກເຂົາໄປຢູ່ເຂດຕໍ່ຕ້ານນຳພວກເຮົາ ພວກເຂົາກໍ່ເປັນເອກະພາບກັນ ເວົ້າຕອບເຮົາວ່າ ພວກເຂົາບໍ່ມີຄວາມສາມາດຈະພາຍຖົງເປ້ຫ່ອໄປນອນກາງປ່າກາງດົງຄືພວກເຮົາໄດ້. ເປັນອັນວ່າພວກເຮົາກັບຄະນະລັດຖະບານອົບພະຍົບໄດ້ຕັດສິນໃຈແຍກກັນໄປຄົນລະທາງເສຍແລ້ວ.

ອອກຈາກຄະນະລັດຖະບານຊຸດນີ້ ເຮົາໄດ້ໄປຫາເຈົ້າເພັດຊະລາດ ເພື່ອສະແດງຄວາມບໍ່ພໍໃຈຂອງເຮົາຕໍ່ເຂົາຟັງ. ເຈົ້າເພັດຊະລາດໄດ້ບອກໃຫ້ເຮົາຮູ້ວ່າເຂົາກໍ່ບໍ່ເຫັນດີນຳຄວາມຕັດສິນໃຈຂອງຄະນະລັດຖະບານ, ວ່າຕົວເຂົາກໍ່ຈະບໍ່ກັບເມືອ ຈົນກວ່າປະເທດລາວໄດ້ເປັນເອກະລາດຢ່າງສົມບູນ, ແຕ່ໃຫ້ເຮົາຮັກສາເປັນຄວາມລັບໄວ້ ເພື່ອຄວາມປອດໄພ ຂອງທຸກຄົນ.

ພ້ອມກັນກັບເຮົານັ້ນ ທ້າວອ້ວນ ລາທິກຸນ ແລະ ໝູ່ຂອງເຂົາສອງສາມຄົນ ກໍ່ໄດ້ໄປບາງກອກຄືກັນ, ແຕ່ພວກເຂົາຫາກໄປນອນກັບກະຕ່າຍ ແລະ ເຄື່ອນໄຫວພໍເຂົາຕ່າງຫາກ. ມີຄົນມາບອກໃຫ້ເຮົາຮູ້ວ່າ ທ້າວສຸເທບ ພາທ້າວອ້ວນ ລາທິກຸນໄປພົວພັນກັບພວກຄົນໄທປະຕິການ ແລະໄດ້ເອົາໄປຫາສະຖານທູດຝະລັ່ງ. ເຮົາຮູ້ຈັກແນວນັ້ນກໍ່ຮູ້ສຶກເສຍໃຈ ຈຶ່ງຮີບກັບຄືນໄປຫາເຂດຕໍ່ຕ້ານ ເພື່ອລາຍງານໃຫ້ພວກທີ່ເຮົາໄວ້ວາງໃຈໄດ້ນັ້ນຮູ້ ແລະພ້ອມກັນສັງຊອມເບິ່ງປະກົດການຕົວຈິງ ເພື່ອມີວິທີການກີດກັ້ນບໍ່ໃຫ້ສະພາບການອັນບໍ່ດີເກີດຂຶ້ນໄດ້. ທ້າວອ້ວນ ລາທິກຸນ ກັບຄືນມາລຸນຫຼັງເຮົາອາທິດໜຶ່ງ ແລະ ພາກັນສະແດງທ່າທີແຕກຕ່າງເກົ່າ, ພາກັນເອົາເມຍຢູ່ຕາມບ້ານທາດ ແລະ ບ້ານອອນແອ້ນນັ້ນ, ພາກັນໄປເປີດກອງປະຊຸມ ຕ່າງຫາກຫຼາຍເທື່ອ, ສັ່ງໃຫ້ທະຫານຂອງເຂົາລະເມີດລະບຽບວິໄນທີ່ໄດ້ພ້ອມກັນວາງໄວ້, ແບ່ງແຍກພາຍໃນ ແລະ ນາບຂູ່ຮ້ອຍໂທກາຍອ້ວນ ຈົນຜູ້ນັ້ນຢູ່ນຳບໍ່ໄດ້ກໍ່ເລີຍໜີກັບຄືນເມືອບ້ານ. ເຮົາໄດ້ເຊີນພະນັກງານລາວທີ່ໄວ້ວາງໃຈໄດ້ ແລະຄະນະບັນຊາການກອງທະຫານອາສາສະໝັກຫວຽດນາມມາປຶກສາກັນ ກ່ຽວກັບເລື່ອງນີ້ ແລະ ໄດ້ຕັກເຕືອນກັນໃຫ້ເພີ່ມທະວີສະຕິລະວັງຕົວໃຫ້ສູງຢູ່ສະເໝີ.

ທ້າຍປີ 1949 ມີຂ່າວວ່າພະຍາຄຳມ້າວ ແລະ ຄະນະລັດຖະບານຂອງເຂົາຫຼາຍຄົນໄດ້ພ້ອມກັບເຂົາໄປຍອມຈຳນົນຕໍ່ພວກລ່າເມືອງຂຶ້ນຝະລັ່ງແລ້ວ, ຍັງແຕ່ເຈົ້າເພັດຊະລາດ ແລະ

ເຈົ້າສຸພານຸວົງບໍ່ຍອມກັບຄືນ. ຫຼັງຈາກນັ້ນກໍ່ມີຂ່າວວ່າ ເຈົ້າສຸພານຸວົງໄດ້ໂຮມຊຸມນຸມ ໜັງສືພິມ ແລ້ວປະກາດວ່າ ເພິ່ນບໍ່ເຫັນພ້ອມກັບຄະນະລັດຖະບານທີ່ເຂົ້າໄປຍອມຈຳນົນຕໍ່ສັດຕູ ແລະຕົວເພິ່ນເອງຈະຮ່ວມມືກັບປະຊາຊົນລາວ, ປະຊາຊົນຫວຽດນາມ ແລະ ປະຊາຊົນກຳປູເຈຍ ທີ່ເຮັດການຕໍ່ສູ້ກູ້ຊາດຈົນເຖິງໄຊຊະນະ. ຫຼັງຈາກນັ້ນເຈົ້າສຸພານຸວົງກໍ່ໜີຈາກບາງກອກ ພ້ອມດ້ວຍບັນດາບຸກຄົນທີ່ຮ່ວມງານກັບເພິ່ນ ເພື່ອເຂົ້າໄປຮ່ວມກັບພວກກອງຫຼອນທີ່ເຮັດການຕໍ່ຕ້ານຢູ່ໃນປະເທດລາວ.

ຕົ້ນເດືອນມັງກອນ 1950, ສະພາບການໃນເຂດ 2 ເກີດມີຄວາມເຄັ່ງຕຶງຂຶ້ນ. ກອງທະຫານຝະລັ່ງ ແລະ ລູກມືທີ່ຕັ້ງຢູ່ຄ້າຍປາກຄອບ ໄດ້ອອກມາເຮັດການກວາດລ້າງ ໃນເຂດເມືອງຄອບ ແລະ ຊຽງຮ່ອນ. ພວກເຂົາປ່າວຂ່າວວ່າຈະມາຮອດເຂດຊຽງລົມ ບ່ອນພວກເຮົາເຄື່ອນໄຫວຢູ່. ທ່າທີຂອງທ້າວ ອ້ວນ ລາທິກຸນ ແລະ ພັກພວກຂອງເຂົາມີຫຼາຍອັນ ຜິດປົກກະຕິ. ພວກເຂົາລະເມີດລະບຽບວິໄນດ້ວຍການໄປຂູ່ເອົາໝູ, ໄກ່ ແລະ ຊັບສິນບັດຂອງປະຊາຊົນໄປກິນ ແລະ ໃຊ້ທ່າທີຄືກັນກັບແບບທະຫານເລວຮັບຈ້າງ ຂອງພວກລ່າເມືອງຂຶ້ນຝະລັ່ງ. ພວກເຮົາໄດ້ເຂັ້ນເອົາພວກເຂົາມາສຳຫຼວດ ແລະ ຕັກເຕືອນຫຼາຍເທື່ອ ; ພວກເຂົາຮັບສາລະພາບວ່າໄດ້ເຮັດຜິດ ແຕ່ບາດກັບຄືນເມືອບ່ອນຢູ່ຂອງພວກເຂົາ ຊ້ຳພັດເຮັດຜິດຫຼາຍກວ່າເກົ່າ. ພວກເຂົາຮ້າຍຂາດໃສ່ປະຊາຊົນ, ກອງຫຼອນ ແລະທະຫານ ອາສາສະໝັກຫວຽດນາມ ທີ່ເຄີຍຮ່ວມມືກັບພວກເຂົາແຕ່ເທິງມາແລ້ວ ແລະ ທີ່ບໍ່ເຫັນດີກັບທ່າທີ ແລະການກະທຳທີ່ຜິດພາດຂອງພວກເຂົາ, ກາງຄືນວັນທີ 31/12/49, ໃນເວລາຮ່ວມກັນມ່ວນຊື່ນເພື່ອຕ້ອນຮັບວັນປີໃໝ່ສາກົນຢູ່ບ້ານທາດ (ຕາແສງຊຽງລົມ) ພວກເຂົາໄດ້ເອົາກຳລັງໄປປົດອາວຸດກອງຫຼອນ ແລະ ທະຫານອາສາສະໝັກຫວຽດນາມ ທີ່ໄປຮ່ວມມ່ວນຊື່ນນຳກັນນັ້ນ. ເມື່ອອ້າຍນ້ອງໃນກອງປ້ອງກັນຄວາມປອດໄພ ມາລາຍງານເລື່ອງນີ້ເຮົາເຂົ້າໃຈໂລດວ່າ ທ້າວອ້ວນ ລາທິກຸນ ແລະ ພັກພວກພວມກຽມຕ້ອນຮັບ ແລະ ຮ່ວມມືນຳກອງທະຫານຝະລັ່ງ ແລະພວກທະຫານຫຸ່ນທີ່ອອກມາກວາດລ້າງນັ້ນ. ເຮົາໄດ້ເຂັ້ນເອົາຄະນະຮັບຜິດຊອບທີ່ໄວ້ວາງໃຈໄດ້ມາໂຮມກັນແລ້ວ ແລ້ວພາກັນໜີຈາກບ້ານດອນໄຈ ໄປນອນຢູ່ກາງປ່າໃກ້ກັບຊາຍແດນໄທ-ເພື່ອຖ້າຟັງຂ່າວການເຄື່ອນໄຫວຕົວຈິງຂອງພວກ ທ້າວອ້ວນ ລາທິກຸນ. ສະພາບການມັນເປັນໄປຕາມການກະຕວງຂອງພວກເຮົາແທ້. ກາງຄືນນັ້ນເອງ ທ້າວອ້ວນ ລາທິກຸນ ແລະ ພັກພວກໄດ້ເຕົ້າໂຮມທະຫານ ແລ້ວເຜີຍແຜ່ແຜນການຂອງພວກເຂົາ ທີ່ກຽມຈະອອກໄປຍອມຝະລັ່ງ.

ວັນທີ 1/1/50, ພວກເຮົາໄດ້ພ້ອມກັນອອກເດີນທາງມຸ່ງໜ້າໄປສູ່ດິນໄທ ເພື່ອຫຼີກເວັ້ນເຫດຮ້າຍທີ່ອາດຈະເກີດຂຶ້ນ. ພໍພວກເຮົາໄປຮອດຫ້ວຍນ້ຳ ຕີນພູຊາຍແດນໄທ ກໍ່ມີ ທ້າວຕະລຸນະ (ນ້ອງຊາຍທ່ານອຸຕະມະ), ທ້າວບຸນເຮືອງ, ມະຫາເຊົາ ແລະ ໝູ່ເພື່ອນ 3 ຄົນບັນ

ຊາໂດຍ ຄຳເຜີກ ພຸດທະສັກຕິດຕາມມາຮອດ, ເອົາປືນກົນພົກກະບອກໜຶ່ງຕັ້ງລົງ ແລະ ປົດປືນທີ່ພາຍໃສ່ບ່າລົງແລ້ວເວົ້າວ່າ ໃຫ້ພວກເຮົາຢຸດເພື່ອເວົ້າລົມກັນ. ຄຳເຜີກຮອງຖາມຂຶ້ນວ່າ : "ຈະພາກັນໄປໃສ ? ຂໍໃຫ້ກັບຄືນໄປຫາກຳລັງປະຕິວັດລາວ ເພາະວ່າ ທ້າວອ້ວນ ລາທິກຸນຄອຍຖ້າຢູ່ບ້ານຫາດ ແລະ ຂໍໃຫ້ກັບຄືນໄປພ້ອມພວກເຂົາດຽວນີ້ໂລດ". ເຮົາໄດ້ພາໝູ່ຄະນະນັ່ງລົງ ແລະ ບອກໃຫ້ພວກເຂົາກໍ່ນັ່ງລົງເພື່ອເວົ້າລົມກັນ, ສ່ວນປືນໃຫ້ເອົາມາ ຮັກສາໄວ້ພໍໃຜພໍລາວ, ບໍ່ຈຳເປັນຈະຕັ້ງປືນກົນພົກໃສ່ກັນ ເພາະພວກເຮົາບໍ່ແມ່ນສັດຕູກັນ.

ເມື່ອທຸກຄົນນັ່ງລົງແລ້ວ ເຮົາໄດ້ເວົ້າຂຶ້ນວ່າ " ຕາມທຳມະດາແລ້ວຖ້າມີສະພາບການຫຼືແຜນການອັນໃດຕ້ອງແມ່ນເຮົາເອີ້ນເອົາ ທ້າວອ້ວນ ລາທິກຸນ ແລະ ຄະນະບັນຊາ ກອງທະຫານມາປະຊຸມເປີກສາກັນ. ເທື່ອນີ້ເປັນຫຍັງຈຶ່ງວ່າ ທ້າວອ້ວນ ລາທິກຸນ ເອີ້ນເຮົາໄປຫາລາວ, ແມ່ນດ້ວຍເຫດຜົນແນວໃດຈຶ່ງແຕ່ງໃຫ້ຄົນຖືປືນເລັກຍາວ ແລະ ປືນກົນພົກມາຕັ້ງເພື່ອບັງຄັບເຮົາໄປຫາ ທ້າວອ້ວນ ລາທິກຸນ, ພວກເຈົ້າທີ່ເຄີຍມາຢູ່ນຳເຮືອນຂ້ອຍ ຈົນຮອດມື້ເຂົ້າມາເຂດ 2 ແລະເຄີຍໄດ້ຟັງການຊີ້ແຈງອະທິບາຍບັນຫາການເມືອງ, ສິນທຳ, ກົດໝາຍ ແລະຮີດຄອງປະເພນີບ້ານເມືອງຈາກຂ້ອຍຫຼາຍສິບເທື່ອ ຈົນເວົ້າວ່າເຂົ້າໃຈດີແລ້ວນັ້ນ, ບັດນີ້ເປັນຫຍັງຈຶ່ງມາຮັບໃຊ້ຄຳສັ່ງອັນບໍ່ຖືກຕ້ອງຂອງ ທ້າວອ້ວນ ລາທິກຸນແນວນີ້. ພວກເຈົ້າຈົ່ງຄິດບໍ່ວ່າແມ່ນໃຜລ້ຽງເກືອ ພວກເຈົ້າຢູ່ຊຽງແສນ , ແມ່ນໃຜໄປຊ່ວຍເອົາຄຳເຜີກໃຫ້ພົ້ນອອກຈາກກອງທະຫານຈີນ ທີ່ມາຕັ້ງຢູ່ທ່າຂີ້ເຫຼັກດິນພະມ້າ, ແມ່ນໃຜພາພວກເຈົ້າມາຕັ້ງເຂດ ຕໍ່ຕ້ານຢູ່ເມືອງຫົງສາ ແລ້ວຈຶ່ງຂະຫຍາຍມາຮອດຊຽງຮ່ອນຊຽງລົມ. ພວກເຈົ້າຈື່ບໍ່ວ່າ ທ້າວອ້ວນ ລາທິກຸນ ແລະພັກພວກຫາກໍ່ມາຢູ່ນຳພວກເຮົາໄດ້ປີກວ່າມານີ້. ດຽວນີ້ ພວກເຈົ້າຟັງທ້າວອ້ວນ ລາທິກຸນ ແລ້ວຈະມາບັງຄັບເອົາຂ້ອຍໄປຫາລາວຊັ້ນບໍ ?

ຄຳເຜີກຕອບ : ຫຼານຮູ້ຈັກບຸນຄຸນທີ່ລຸງມີຕໍ່ຫຼານ. ດຽວນີ້ອ້າຍອ້ວນ ພວມປະຊຸມນາຍທະຫານເພື່ອຕີລາຄາສະພາບການ ແລະ ວາງແຜນການໃໝ່, ລາວຢາກເຊີນລຸງໄປຮ່ວມ, ແລ້ວຈຶ່ງແຕ່ງພວກຫຼານມາຫາລຸງ.

- ເຮົາ : ກ່ອນທ້າວອ້ວນ ລາທິກຸນ ຈະປະຊຸມນາຍທະຫານ ເປັນຫຍັງລາວບໍ່ມາຖາມຄຳເຫັນຂອງຂ້ອຍກ່ອນ. ພວກເຈົ້າກໍ່ຮູ້ຈັກວ່າ ຂ້ອຍເປັນປະທານເຂດນີ້ ແລະ ສະເດັດເຈົ້າເພັດຊະລາດທີ່ເປັນປະມຸກລັດກໍ່ໄດ້ແຕ່ງຕັ້ງໃຫ້ຂ້ອຍເປັນຜູ້ແທນລັດຖະບານ ປະຈຳຢູ່ເຂດ 1 ແລະ ເຂດ 2 ນີ້, ເຊິ່ງທັງທ້າວອ້ວນ ລາທິກຸນ ພ້ອມດ້ວຍຄະນະ, ທັງກອງທະຫານເຂດ 2 ທີ່ຂ້ອຍສ້າງຂຶ້ນ ແລະ ທັງກອງທະຫານອາສາສະໝັກຫວຽດນາມກໍ່ລ້ວນແຕ່ຂຶ້ນກັບຂ້ອຍໝົດ . ເປັນຫຍັງພວກເຈົ້າຈຶ່ງໄປຮັບໃຊ້ຜູ້ເຮັດບໍ່ຖືກຕ້ອງແນວນີ້ ?

- ບຸນເຣືອງ : ຫຼານຮູ້ບຸນຄຸນຂອງລຸງທີ່ໄດ້ລ້ຽງຫຼານມາຕັ້ງແຕ່ນ້ອຍພະຍົບມາຮອດຊຽງ

ແສນ, ໄດ້ເອົາຫຼານມາຮັບໃຊ້ຢູ່ເຂດ 2 ນີ້. ເທື່ອນີ້ຜູ້ບັນຊາທະຫານບອກໃຫ້ຫຼານ ມາເຊີນ
ລຸງ, ຫຼານໄດ້ມາຕາມຄຳສັ່ງຂອງຂັ້ນເທິງ.

- ຕະລຸນະ : ຫຼານເປັນຫົວໜ້າກອງເສນາຮັກ, ຂັ້ນເທິງສັ່ງໃຫ້ຫຼານມານຳໝູ່ເພື່ອເບິ່ງ
ສຸຂະພາບຂອງລຸງ, ຫຼານກໍ່ເລີຍມາດ້ວຍຄວາມຄິດທີ່ຈະໄດ້ກອດພະຍາດໃຫ້ລຸງ ແລະ ປິ່ນປົວ
ລຸງ.

- ມະຫາເຊົາ : ພວກຫຼານມາຫາລຸງນີ້ກໍ່ເພື່ອເຊີນລຸງໄປຮ່ວມເປີກສາວາງແຜນ ການ
ສືບຕໍ່ເຮັດການປະຕິວັດລາວດ້ວຍຄົນລາວເອງ ເພື່ອບໍ່ຫາຍໃຈຮ່ວມຮູດັງຂອງຊາດອື່ນ. ພວກ
ຫຼານເຫັນວ່າເຮັດແນວນັ້ນຈະເປັນເອກະລາດ ແລະ ມີກຽດກວ່າ.

- ເຮົາ : ພວກເຈົ້າຮູ້ບໍ່ວ່າຢູ່ບາງກອກພະຍາຄຳມາວ ແລະ ກະຕ່າຍ ພວມກຽມຈະ
ດຶງເຂົ້າໄປຍອມຝະລັ່ງ ແລະ ເດືອນແລ້ວນີ້ ທ້າວອອນ ລາທິກຸນ ແລະພັກພວກໄປບາງກອກ
ໄດ້ໄປເຊົາຢູ່ນຳກະຕ່າຍ ແລະ ໄປຫາທູດຝະລັ່ງ. ເມື່ອເປັນແນວນັ້ນກໍ່ແປວ່າ ທ້າວອອນ
ລາທິກຸນ ໄດ້ເຫັນພ້ອມນຳກະຕ່າຍ ແລະ ໄດ້ຮັບເງິນຈາກທູດຝະລັ່ງແລ້ວ, ດຽວນີ້ແມ່ນທ້າວ
ອອນ ລາທິກຸນ ພວມວາງແຜນການທີ່ຈະເຂົ້າໄປຍອມຈຳນົນຕໍ່ຝະລັ່ງ. ຂ້ອຍບໍ່ເຫັນດີນຳແຜນ
ການນັ້ນ ແລະ ຈະສືບຕໍ່ເຮັດການຕໍ່ຕ້ານພາຍໃຕ້ການຊີ້ນຳຂອງສະເດັດເພັດຊະລາດ ແລະ
ສະເດັດສຸພານຸວົງທີ່ບໍ່ເຂົ້າໄປຍອມສັດຕູ ແລະ ຈະຕໍ່ສູ້ໄປຈົນເຖິງໄຊຊະນະ.

- ບຸນເຮືອງ : ພວກຫຼານກໍ່ບໍ່ແມ່ນວ່າຈະໄປຍອມຈຳນົນຕໍ່ສັດຕູ. ພວກຫຼານຈະເຮັດການ
ຕໍ່ສູ້ໄປເຖິງໄຊຊະນະຄືກັນ. ພວກຫຼານຢາກເຊີນລຸງໄປຢູ່ນຳພວກຫຼານ ເພື່ອຊີ້ນຳພວກຫຼານ
ເຮັດການຕໍ່ສູ້ຄືດັ່ງໄດ້ເຮັດມາແລ້ວ.

- ຄຳເຫຼັກ : ຄັນລຸງບໍ່ຢູ່ນຳພວກຫຼານ ລຸງຊິໄປໃສ ? ພວກຫຼານຍັງຖືວ່າ ລຸງເປັນປະ
ທານເຂດ 2 ຢູ່. ພວກຫຼານບໍ່ໄປຍອມສັດຕູດອກ. ແມ່ນວ່າອ້າຍອ້ອນໄປຍອມສັດຕູພວກຫຼານ
ກໍ່ບໍ່ໄປນຳ. ຂໍແຕ່ລຸງໄປຢູ່ຊີ້ນຳພວກຫຼານ.

- ມະຫາເຊົາ : ພວກຫຼານໄດ້ຕັດສິນໃຈມາເຮັດການຕໍ່ສູ້ກູ້ຊາດແລ້ວ, ພວກຫຼານບໍ່ໄປ
ຍອມສັດຕູຢ່າງເດັດຂາດ. ແຕ່ເພື່ອຄວາມສະດວກຂອງວຽກງານ ພວກຫຼານຈະເຮັດໃຫ້ເປັນ
ເອກະລາດຕັ້ງແຕ່ດຽວນີ້ໄປ, ຈະບໍ່ຫາໃຈຮ່ວມຮູດັງຜູ້ໃດອີກ. (ເມື່ອໄດ້ຍິນຄວາມນີ້ ອ້າຍ
ນ້ອງຫວຽດນາມທີ່ຢູ່ນຳເຮົາ ກໍ່ພາກັນແລ່ນໜີເຂົ້າປ່າໄປຄົນລະທາງ, ເຮົາໄດ້ບອກວ່າຢ່າໃຫ້
ຜູ້ໃດຍິງປືນໃສ່ເຂົາ).

- ເຮົາ : ພວກເຈົ້າຈະບໍ່ຫາຍໃຈຮ່ວມຮູດັງຜູ້ອື່ນ ແປວ່າພວກເຈົ້າຈະບໍ່ຮ່ວມມືນຳຫວຽດ
ນາມແມ່ນບໍ ? ຖ້າເປັນແນວນັ້ນພວກເຈົ້າຈະບໍ່ໄປເຖິງໄຊຊະນະໄດ້ຢ່າງເດັດຂາດ. ພວກ
ເຈົ້າຈະເອົາທຶນຮອນ, ອາວຸດຍຸດທະພັນ ແລະ ບົດຮຽນມາແຕ່ໃສ ? ນອກຈາກຫວຽດນາມ
ແລ້ວມີປະເທດໃດຕໍ່ສູ້ຝະລັ່ງແດ່ ? ພວກເຈົ້າບໍ່ຮ່ວມມືກັບປະເທດທີ່ເຮັດການຕໍ່ສູ້ສັດຕູໂດຍຮວ

ກັນ ພວກເຈົ້າຈະບໍ່ສາມາດມີໄຊຊະນະ ແລະມີເອກະລາດຢ່າງເດັດຂາດ. ຫົນທາງດຽວທີ ຂ້ອຍເຫັນແມ່ນພວກເຈົ້າຈະແຍກຕົວອອກຈາກຫວຽດນາມເພື່ອໄປຍອມຝະລັ່ງ, ຂ້ອຍໄປນຳ ເສັ້ນທາງຂອງພວກເຈົ້າບໍ່ໄດ້ ແລະ ຂ້ອຍກໍ່ຈະບໍ່ກັບເມືອຫາທ້າວອ້ວນ ລາທິກຸນ ຄືດັ່ງພວກ ເຈົ້າເວົ້ານັ້ນໄດ້ ຂ້ອຍຈະໄປຫາບ່ອນທີ່ນັກປະຕິວັດລາວເຮົາຮ່ວມມືກັບຫວຽດນາມເຮັດການຕໍ່ ຕ້ານ. ຂ້ອຍຂໍບອກໃຫ້ເຈົ້າຢ່າງຈະແຈ້ງວ່າ ຂ້ອຍບໍ່ກັບຄືນໄປຫາທ້າວອ້ວນ ລາທິກຸນ ຢ່າງ ເດັດຂາດ. ແມ່ນວ່າຂ້ອຍບໍ່ໄປດ້ວຍດີ ພວກເຈົ້າຈະໃຊ້ອາວຸດຂູ່ຂ້ອຍກໍ່ເຊີນໂລດ. ຖ້າຂ້ອຍ ປ້ອງກັນຕົວບໍ່ໄຫວພວກເຈົ້າຈະຍິງຂ້ອຍຕາຍກໍ່ຕາມໃຈ. ຖ້າພວກເຈົ້າຫາກຄິດເຫັນບຸນຄຸນ ທີ່ ຂ້ອຍໄດ້ລ້ຽງເກືອສັ່ງສອນພວກເຈົ້າມາຈົນຮອດດຽວນີ້ນັ້ນ ໃຫ້ພວກເຈົ້າໄປບອກທ້າວອ້ວນລາ ທິກຸນ ວ່າຂ້ອຍບໍ່ຍອມໄປຫາລາວ ເພາະລາວຈະໄປຍອມຝະລັ່ງ. ຖ້າພວກເຈົ້າຫາກ ບໍ່ເຫັນ ບຸນຄຸນ ແລະ ຄວາມຮັກແພງອັນນັ້ນຈະໃຊ້ປືນຍິງໃສ່ຂ້ອຍກໍ່ບໍ່ເປັນຫຍັງ ຖ້າຂ້ອຍຫາກປ້ອງກັນ ຕົວບໍ່ໄຫວແລ້ວ ຂ້ອຍຍອມຕາຍດີກວ່າຈະກັບຄືນໄປເປັນຂ້ອຍຝະລັ່ງອີກ. ເວລານັ້ນເຮົາຮູ້ສຶກ ວ່າຊີວິດຂອງເຮົາຕົກຢູ່ໃນຂ່າຍອັນຕະລາຍທີ່ສຸດ. ເຮົາກຳປືນກາລາບິນຂອງເຮົາ ໄວ້ໃນມື ແລະ ກະວ່າຖ້າພວກເຂົາຍົກປືນຂຶ້ນຈະຍິງເຮົານັ້ນ ເຮົາຈະຍິງໃຫ້ເຂົາຕາຍສອງສາມຄົນ - ກ່ອນເຮົາຈະຕາຍ.

- ຄຳເຫຼັກໄດ້ປຶກສາກັບບຸນເຮືອງແລ້ວເວົ້າວ່າ : "ຄັນຊັ້ນກໍ່ເຊີນລຸງໄປພັກຜ່ອນ ຢູ່ ເມືອງໄທກ່ອນສາ, ພວກຫຼານຈະກັບເມືອລາຍງານອ້າຍອ້ວນ ".

- ເຮົາ : ແນວໃດຂ້ອຍກໍ່ຈະໄປເມືອງໄທແລ້ວ ຈະໄປຮ່ວມກັບກອງທະຫານລາວ ທີ່ ຮ່ວມມືກັບກອງທະຫານອາສາສະໝັກຫວຽດນາມ ເຮັດການຕໍ່ສູ້ກູ້ຊາດຈົນເຖິງໄຊຊະນະ. ເວົ້າ ແລ້ວເຮົາກໍ່ອອກເດີນທາງມຸ່ງໜ້າເຂົ້າສູ່ດິນໄທ. ທ່ານອຸຕະມະ ຈຸລາມະນີ ແລ່ນມາຕອບເຮົາ ວ່າ ຂໍຕາມໄປດຶງເອົາທ້າວຕະລຸນະອອກຈາກພວກເຂົາ ແລ້ວຈະຕາມໄປຫາເຮົາທີ່ເຂດ 1. ມະຫາຄຳພັນ ແລະ ຈ່າພື້ນຄອບເຮົາວ່າຈະຄືນໄປເອົາເຄື່ອງຂອງທີ່ປະໄວ້ເມືອງຄອບ ແລ້ວ ຈະນຳໄປຫາເຮົາ. ທ່ານເພົ້າ ພິມພະຈັນ ໄດ້ແລ່ນໜີມານຳເຮົາ, ໂສປະຖຸມທ້າວແກ້ວ ພິມ ພະຈັນ ທີ່ເປັນນ້ອງຊາຍຂອງລາວເຊິ່ງເປັນແພດຢູ່ໂຮງໝໍເມືອງຄອບ.

ພວກເຮົາທັງ 2 ຄົນ ເດີນທາງຜ່ານພູຜາປ່າດົງໄປດ້ວຍຈິດໃຈອາໄລອາວອນເຖິງເຂດ ຕໍ່ຕ້ານທີ່ພວກເຮົາໄດ້ສ້າງຂຶ້ນດ້ວຍເລືອດເນື້ອ ແລະ ເຖິງປະຊາຊົນທີ່ເຄີຍຮັກແພງແລະຮ່ວມ ມືກັບເຮົາໃນທຸກດ້ານ. ພວກເຮົາເຊື່ອວ່າ ປະຊາຊົນເຫຼົ່ານັ້ນທີ່ເຄີຍຮັກແພງ ແລະ ເຊື່ອຖື ພວກເຮົາມາຕັ້ງສອງປີກວ່າແລ້ວ ຄົງຈະຄິດເຖິງພວກເຮົາ ແລະ ຄົງຈະສັດຊື່ຕໍ່ການປະຕິວັດ ທີ່ໄດ້ນຳເອົາ ແລະ ຈະນຳເອົາສິດປະໂຫຍດອັນຊອບທຳມາໃຫ້ຂະເຈົ້າ ; ປະຊາຊົນ ທົ່ວ ເຂດຕໍ່ຕ້ານຄົງຈະບໍ່ປ່ອຍໃຫ້ພວກລູກຫຼານຂອງຂະເຈົ້າທີ່ເປັນທະຫານລາດກອງຫຼອນນັ້ນ ໄປ

ຍອມຈຳນົນຕໍ່ສັດຕູນຳທ້າວອ້ວນ ລາທິກຸນ. ເວລາເດີນໄປຕາມທາງ ທ້າວເພົ້າ ພິມພະຈັນ ແລະ ເຮົາໄດ້ແລກປ່ຽນຄຳຄິດຄຳເຫັນນຳກັນ ກ່ຽວກັບອະນາຄົດຂອງເຂດຕໍ່ຕ້ານທີ່ພວກເຮົາໄດ້ພ້ອມກັນສ້າງຂຶ້ນ. ພວກເຮົາເປັນເອກະສັນນຳກັນວ່າ ພະນັກງານອັນເປັນຈຳນວນ ຫຼາຍຮ້ອຍຄົນ ທີ່ຢາຍຢູ່ຕາມບ້ານຕ່າງໆ ຄົງຈະໜັກແໜ້ນຢູ່ຄືເກົ່າ ແລະ ຈະຮ່ວມມືກັບພວກທະຫານອາສາສະໝັກຫວຽດນາມ ປົກປັກຮັກສາດິນແດນເຂດ 2 ນີ້ໄວ້ຈົນຮອດມື້ພວກເຮົາ ຈະກັບຄືນມາຮ່ວມມືນຳກັນອີກໃນເມື່ອໂອກາດຫາກອຳນວຍ.

ພວກເຮົາພາກັນເດີນຂຶ້ນພູລົງຫ້ວຍຫຼາຍຍ່ານຈົນພົດພົ້ນ ແຕ່ພວກເຮົາລືມຄວາມອິດເມື່ອຍ-ໄປໝົດ ເພາະວ່າຈິດໃຈຄຶດຄຽດໃສ່ພວກຄົນລາວ ທີ່ພວກເຮົາໄດ້ລ້ຽງເກືອສິ່ງສອນ ຢ່າງຈິງໃຈເລີຍມາຫັກຫຼັງກັນຢ່າງບໍ່ນຶກຝັນ. ພວກເຮົາເປັນຫ່ວງນຳປະຊາຊົນພົ້ນຖານ ແລະ ພະນັກງານທີ່ໄດ້ຮ່ວມມືນຳພວກເຮົາດ້ວຍຄວາມເຊື່ອໝັ້ນມາຕັ້ງຫຼາຍປີ, ຢ້ານວ່າພວກປະຕິການຂາຍຊາດຈະບັງຄັບເອົາຂະເຈົ້າໄປຍອມຈຳນົນຕໍ່ຝະລັ່ງ. ພວກເຮົາເປັນຫ່ວງນຳພວກທະຫານອາສາສະໝັກຫວຽດນາມ ທີ່ຈະພົບຄວາມຫຍຸ້ງຍາກໃນເມື່ອບໍ່ມີພວກເຮົາຢູ່ນຳ, ຢ້ານວ່າພວກທ້າວອ້ວນ ລາທິກຸນ ຈະພາພັກພວກໄປຊອກຕີໃຫ້ບາດເຈັບລົ້ມຕາຍ ກ່ອນຈະເຂົ້າໄປຍອມສັດຕູ. ເສັ້ນທາງທີ່ພວກເຮົາໄປແມ່ນຜ່ານປ່າດ້າວດົງໜາ, ສຽງໄກ່ປ່າ ແລະ ນົກເຂົາອັນ,ນົກໃຫຍ່ນ້ອຍ ແລະ ຮອກຈອນຮ້ອງເນື່ອງນັນບົນຕົ້ນໄມ້ບາງຊະນິດຢູ່ໃນອາກາດໜາວເຢັນ ຂອງເດືອນມັງກອນ, ແຕ່ປະກົດວ່າພວກເຮົາບໍ່ໄດ້ຍິນສຽງ ແລະ ບໍ່ໄດ້ຮູ້ສຶກເຖິງລົດຊາດ ອັນໃດເພາະວ່າຈິດໃຈຂອງພວກເຮົາມົວເມົາເປັນຫ່ວງນຳແຕ່ຊີວິດຂອງປະຊາຊົນ ແລະ ອະນາຄົດຂອງເຂດຕໍ່ຕ້ານຢ່າງບໍ່ມີຍາມຫາຍ. ຄວາມຄິດບາງຊະນິດຄູມສະຕິອາລົມຂອງເຮົາ ຢູ່ທຸກເວລາ. ເຮົາຖາມຕົນເອງເບິ່ງວ່າ ການທີ່ພວກເຮົາຮັບເອົາທ້າວອ້ວນ ລາທິກຸນ ແລະ ກອງທະຫານຂອງເຂົາມາຢູ່ນຳພວກເຮົາ ເປັນການຜິດພາດຊັ້ນບໍ ? ມັນເປັນສິ່ງທີ່ພວກເຮົາປະຕິເສດບໍ່ໄດ້, ຖ້າພວກເຮົາບໍ່ຮັບກໍ່ຈະແມ່ນພວກເຮົາບໍ່ຟັງຄຳສັ່ງຂອງເຈົ້າເພັດຊະລາດ ທີ່ຮັກແພງ ແລະ ເຊື່ອຖືເຮົາຕະຫຼອດມາ. ພວກເຮົາບໍ່ຕັ້ງໃຈອົບຮົມທະຫານພວກນັ້ນບໍ ? ພວກເຮົາກໍ່ໄດ້ເຮັດຈົນສຸດຄວາມສາມາດຂອງພວກເຮົາ ແລະ ນາຍທະຫານອາສາສະໝັກຫວຽດນາມກໍ່ໄດ້ຊ່ວຍພວກເຮົາຢ່າງຕັ້ງໜ້າແທ້. ແຕ່ວ່າກອງທະຫານພວກນີ້ສ້າງຕົວເປັນນັກປະຕິວັດຍາກທີ່ສຸດ, ເພາະວ່າພວກເຂົາລ້ວນແຕ່ແມ່ນພວກນັກເລງຂີ້ເຫຼົ້າ ຂີ້ລັກ ມີສັນດານດື້ດ້ານທີ່ທ້າວອ້ວນ ລາທິກຸນ ເກັບເອົາມາຈາກອຳເພີຊຽງຄານ, ດ່ານຊ້າຍ, ຈັງຫວັດເລີຍ ໂດຍບໍ່ມີການເລືອກເຟັ້ນ. ພວກເຂົາມາສະໝັກເປັນທະຫານເພື່ອອາໄສຖານະອັນນີ້ ໄປຕີປຸ້ນເອົາສິນເສີກຈາກຄ້າຍທະຫານຝະລັ່ງ ຫຼື ນາບຂູ່ເອົາສິ່ງຂອງເງິນຄຳ ຕະຫຼອດຮອດລູກສາວຂອງປະຊາຊົນໄປສ້າງຄວາມສຸກສ່ວນຕົວຂອງພວກເຂົາ. ພວກເຂົາບໍ່ເປັນຄືພວກພະນັກງານແລະທະຫານທີ່ພວກເຮົາສ້າງຂຶ້ນຢູ່ໃນເຂດ 2 ທີ່ເປັນລູກຫຼານຂອງປະຊາຊົນ, ມີນ້ຳໃຈຮັກຊາດ

ສູງ, ມີຄຸນສົມບັດ ແລະ ສິນທຳປະຕິວັດດີ, ມີຄວາມສັດຊື່ຮັກແພງປະຊາຊົນ ແລະ ຮ່ວມມືຢ່າງແໜ້ນແຟ້ນກັບກອງທະຫານອາສາສະໝັກຫວຽດນາມ. ແມ່ນວ່າ ທ້າວອ້ວນ ລາທິກຸນແລະກອງທະຫານຂອງມັນຫາກໜີໄປຍອມຈຳນົນຕໍ່ຝະລັ່ງ, ພະນັກງານ ແລະ ກອງທະຫານທີ່ພວກເຮົາໄດ້ສ້າງຂຶ້ນນັ້ນກໍ່ຄົງຈະສືບຕໍ່ຮ່ວມມືກັບກອງທະຫານອາສາສະໝັກຫວຽດນາມ ປົກປັກຮັກສາເຂດ 2 ໄວ້ໄດ້ຕໍ່ໄປ.

ພວກເຮົາເຊື່ອງອາວຸດໄວ້ຢູ່ໂກນໄມ້ໃນປ່າ ແລ້ວເດີນທາງຜ່ານ ອຳເພີປົວ ໄປພັກນອນທີ່ເມືອງແພ່. ຮຸ່ງເຊົ້າມາກໍ່ຂຶ້ນລົດການີຍົງແລ່ນຜ່ານ ເມືອງນ່ານ ໄປຫາສະຖານີລົດໄຟ ທີ່ເດັ່ນໄຈ. ພວກເຮົາພັກຢູ່ທີ່ນັ້ນເພື່ອຂຽນຈົດໝາຍຝາກໄປສະນີ ໄປລາຍງານສະພາບການໃຫ້ເຈົ້າເພັດສະລາດຮູ້ ແລ້ວພວກເຮົາກໍ່ຂຶ້ນລົດໄຟໄປນອນທີ່ ເມືອງລຳປາງ. ຕື່ນມາເປັນມື້ໃໝ່ພວກເຮົາກໍ່ຂຶ້ນລົດການີຍົງໄປຊຽງຮາຍ ແລ້ວຊອກລົດຂີ່ຕໍ່ໄປ ກິ່ງອຳເພີຊຽງແສນ ເພື່ອຢັ່ງຢຽມເບິ່ງຄອບຄົວເຮົາ ແລະ ລາຍງານສະພາບການໃຫ້ສະມາຄົມລາວອົບພະຍົບຮູ້ນຳ. ພໍດີໃນເວລານັ້ນ ພວກເຮົາຟັງວິທະຍຸບາງກອກ ໄດ້ຍິນຂ່າວວ່າພວກພະຍາຄຳມາວ, ກະຕ່າຍ ແລະ ພັກພວກໄດ້ກັບຄືນເມືອຍອມຈຳນົນຕໍ່ພວກຝະລັ່ງທີ່ວຽງຈັນ ແລະ ພວກທ້າວອ້ວນ ລາທິກຸນ ກໍ່ໄດ້ພາພັກພວກເຂົ້າໄປຍອມຈຳນົນຕໍ່ພວກຝະລັ່ງທີ່ບ້ານຫ້ວຍຊາຍ. ຊາວລາວອົບພະຍົບທຸກຄົນໄດ້ຍິນຂ່າວນີ້ ກໍ່ພາກັນຄຽດແຄ້ນ ແລະ ເບື່ອໜ່າຍຕໍ່ການກະທຳຂອງ ທ້າວອ້ວນ ລາທິກຸນ ແລະ ພວກຄົນລາວຂາຍຊາດເຫຼົ່ານັ້ນຫຼາຍທີ່ສຸດ.

ຫຼັງຈາກພັກຢູ່ຊຽງແສນສອງມື້ແລ້ວ ພວກເຮົາກໍ່ອອກເດີນທາງໄປຫາເຂດ 1 ທີ່ແຂວງຫົວຂອງ ແລະ ນ້ຳທາ. ໄປຮອດອຳເພີແມ່ສາຍ (ດິນໄທ) ແລະ ທ່າຂີ້ເຫຼັກ (ດິນພະມ້າ) ພວກເຮົາກໍ່ເຫັນ ທ່ານອຸຕະມະ, ຕະລຸນະ, ມະຫາຄຳພັນ, ຈ່າພົນ ແລະ ມະຫາສົມບູນ - (ເຊິ່ງເມື່ອກ່ອນນີ້ເປັນພະສົງມາຢູ່ໃນເຂດ 2 ນຳພວກເຮົາ, ແຕ່ບັດນີ້ໄດ້ສິກແລ້ວ), ເດີນທາງມາຮອດ ແລະເລົ່າຂ່າວລະອຽດໃຫ້ພວກເຮົາຊາບ. ທ່ານເພົາ ພິມພະຈັນ ຮູ້ສຶກໂສກເສົ້າເສຍໃຈໃນເມື່ອຮູ້ວ່າ ທ້າວແກ້ວ ພິມພະຈັນ (ນ້ອງຊາຍຂອງເຂົາ) ໄດ້ຖືກທ້າວອ້ວນ ລາທິກຸນ ແລະ ພັກພວກແກ໊ງເອົາໄປຍອມຈຳນົນຕໍ່ສັດຕູ. ພວກເຮົາຮູ້ສຶກດີໃຈໃນເມື່ອຮູ້ວ່າມີແຕ່ກອງທະຫານທ້າວອ້ວນ ລາທິກຸນ ແລະ ພວກຄືເລເກບັງຈຳນວນນ້ອຍໜຶ່ງ ໄປຫາສັດຕູທີ່ເມືອງຄອບແລ້ວ ພາກັນລ່ອງນ້ຳຂອງລົງໄປຫ້ວຍຊາຍ. ສ່ວນພະນັກງານ ແລະ ກອງຫຼອນທີ່ພວກເຮົາສ້າງຂຶ້ນ ພ້ອມທັງກອງທະຫານອາສາສະໝັກຫວຽດນາມ ມີຄວາມປອດໄພ ແລະຍັງສືບຕໍ່ເຄື່ອນໄຫວເຮັດການປະຕິວັດຢູ່ຄືເກົ່າ.

ຈາກທ່າຂີ້ເຫຼັກ ພວກເຮົາພ້ອມກັນເດີນທາງໄປນອນເມືອງເລັນ, ບ້ານປ່າແລວ ແລະ ຊຽງລາຍ (ແຄມນ້ຳຂອງຝັ່ງຂວາ, ດິນພະມ້າ). ພວກເຮົາພັກຢູ່ທີ່ນັ້ນອາທິດໜຶ່ງ ເພື່ອຊອກຫາສາຍຕິດຕໍ່ເພື່ອເຂົ້າໄປເຂດ 1. ນະທີ່ນີ້ ພວກເຮົາໄດ້ມີໂອກາດພົບພໍ້ ແລະ ລົ້ງເຄີຍກັບ

ເຈົ້າເມືອງຊຽງລາບ, ຂ້າລາຊະການ ແລະ ຕຳຫຼວດຂອງເຂົາຫຼາຍຄົນ ພ້ອມທັງພະສົງອົງຄະເຈົ້າທີ່ມີຖານະສູງຫຼາຍອົງ. ຜູ້ໃດກໍ່ຮັກແພງພວກເຮົາ, ເຫັນດີນຳພວກເຮົາ ໃນການຕໍ່ສູ້ຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ອອກຈາກປະເທດລາວທີ່ເປັນບ້ານພີ່ເມືອງນ້ອງກັນ. ພວກເຂົາໄດ້ຊ່ວຍເຫຼືອພວກເຮົາເປັນເງິນ ແລະ ເຂົ້າປາອາຫານທັງໄດ້ສັ່ງໄວ້ວ່າ ໃນຂັ້ນຕໍ່ໄປຖ້າພວກເຮົາຕ້ອງການຫຍັງ ກໍ່ໃຫ້ແຕ່ງຄົນມາຫາເຂົາ. ຕັ້ງແຕ່ທ່າຂີ້ເຫຼັກໄປຮອດຊຽງລາຍ-ແມ່ນແຕ່ຊົນເຜົ່າລື້ຢູ່ທັງມວນ. ພວກເຂົາຍັງຈື່ບໍ່ລືມວ່າ ເມື່ອກ່ອນນີ້ບ້ານເມືອງຂອງພວກເຂົາກໍ່ຂຶ້ນກັບປະເທດລາວ, ຫາກໍ່ແຍກອອກໄປເປັນດິນພະມ້າໃນປີ 1893 ເວລາອັງກິດ ກັບຝະລັ່ງຕົກລົງກັນເອົາແມ່ນ້ຳຂອງເປັນຊາຍແດນ. ແມ່ນ້ຳຂອງຢູ່ບ່ອນນີ້ແຄບ, ເລິກຂຽວຈື່ມອື່ມ ແລະໄຫຼເຫັ້ນແຮງຫຼາຍ. ນອງເບິ່ງນ້ຳຂອງໄຫຼລົງໄປສູ່ດິນລາວ ເຮົາຮູ້ສຶກຄິດຮອດພໍ່ແມ່ ພີ່ນ້ອງປະຊາຊົນລາວທີ່ພວມຖືກພວກລ່າເມືອງຂຶ້ນຝະລັ່ງ ແລະ ລູກມືກົດຂີ່ຂົ່ມເຫັງ ແລະ ຢາກຝາກຄຳໃນໃຈຂອງເຮົາລົງໄປບອກໃຫ້ພີ່ນ້ອງຮ່ວມຊາດເຫຼົ່ານັ້ນວ່າ ຢູ່ທາງເໜືອສຸດຂອງແຜ່ນດິນລາວ ຍັງມີລູກຫຼານປະຊາຊົນລາວຫຼາຍຄົນທີ່ມີນ້ຳໃຈຮັກຊາດຢ່າງໜັກແໜ້ນ ແລະທີ່ຈະສືບຕໍ່ເຮັດການຕໍ່ສູ້ປົດປ່ອຍຊາດຈົນເຖິງໄຊຊະນະ, ຂໍໃຫ້ພີ່ນ້ອງຈົ່ງສູ້ທົນຕໍ່ຄວາມກົດຂີ່ຂົ່ມເຫັງແລະຄວາມທໍລະມານລຳບາກໄປດ້ວຍຄວາມເຊື່ອໝັ້ນ.

ຫຼັງຈາກພັກຜ່ອນຢູ່ຊຽງລາຍ ແລະ ຊອກສາຍຕິດຕໍ່ກັບເຂດ 1 ໄດ້ແລ້ວ ພວກເຮົາກໍ່ພ້ອມກັນຂ້າມນ້ຳຂອງໄປບ້ານຊຽງກົກ ແລ້ວຂຶ້ນໄປຫາສຳນັກງານຂອງພວກເຮົາທີ່ຕັ້ງຢູ່ເມືອງລອງ. ທີ່ນັ້ນ ພວກເຮົາໄດ້ພົບກັບສະຫາຍຄຳແສງ ສະມາຊິກອາວຸໂສລາວ ຢູ່ໃນພັກກອມມູນິດອິນດູຈີນ ທີ່ໄດ້ຮ່ວມມືກັບພະນັກງານ ແລະ ກອງທະຫານລາວ ແລະ ທະຫານອາສາສະໝັກຫວຽດນາມກໍ່ສ້າງເຂດຕໍ່ຕ້ານແຫ່ງນີ້. ຫຼັງຈາກແລກປ່ຽນລາຍງານສະພາບການໃຫ້ແກ່ກັນແລ້ວ ເຮົາໄດ້ອອກເດີນທາງໄປຢ້ຽມຢາມພະນັກງານ, ກອງທະຫານ ແລະປະຊາຊົນເມືອງນັງ, ເມືອງກາງ ແລະ ເມືອງສິງ ; ທ່ານມະຫາຄຳພັນໄປຢ້ຽມຢາມເມືອງເມິງ, ວຽງພູຄາ ແລະ ບ້ານຕົ້ນເຜິ້ງ. ເວລານັ້ນ ພວກລ່າເມືອງຂຶ້ນຝະລັ່ງ ແລະລູກມືຂອງເຂົາຕັ້ງຄ້າຍຢູ່ເມືອງສິງ, ຫ້ວຍຊາຍ, ນ້ຳທາ, ເມືອງເມິງ, ບ້ານຕົ້ນເຜິ້ງ, ປາກທາ ແລະ ປາກແບງ ; ແຕ່ວ່າພວກເຂົາຢູ່ແຕ່ໃນຄ້າຍ, ເທິງໆຈຶ່ງສົ່ງກອງຮ້ອຍໜຶ່ງ ຫຼື ສອງສາມໝວດອອກໄປກວາດລ້າງເພື່ອປຸ້ນເອົາເຂົ້າ ແລະ ໝູເປັດໄກ່ຂອງປະຊາຊົນມາກິນ. ແຕ່ວ່າ ພວກເຂົາອອກໄປທາງໃດກໍ່ຖືກທະຫານລາດກອງຫຼອນຂອງພວກເຮົາຕີເກືອບທຸກຄັ້ງ. ເພາະສະນັ້ນເມື່ອບໍ່ຈຳເປັນຍ້ອນຂາດສະບຽງອາຫານແທ້ ພວກເຂົາຈຶ່ງນອນຢູ່ແຕ່ໃນຄ້າຍ,ວາງປ້ອມຍາມຂອງມັນຢູ່ອ້ອມແອ້ມນັ້ນລະຫວ່າງ 500 ແມດ ຫຼື ກິໂລແມດໜຶ່ງເພື່ອປ້ອງກັນຕົວ. ສັດຕູເຮັດແນວນັ້ນກໍ່ເປັນການສະດວກໃຫ້ພວກເຮົາໄປໂຄສະນາອົບຮົມ ແລະຈັດຕັ້ງປະຊາຊົນ.

ໃນເຂດ 1 ນີ້, ນອກຈາກລ້ອງຊຽງກົກໄປເມືອງລອງ, ເມືອງນັງ, ເມືອງກາງແລະ

ເມືອງສິງທີ່ເປັນທົ່ງພຽງແລ້ວ ຈະໄປທາງໃດກໍ່ແມ່ນຕ້ອງຂຶ້ນພູສູງຊັນ ທີ່ຕິດຕໍ່ໄປຫາຊາຍແດນຈີນ, ປະຊາຊົນເຂດນີ້ສ່ວນຫຼາຍແມ່ນໄທລື້ ແລະ ໄທຍວນທີ່ຢູ່ຕາມທົ່ງພຽງ, ລາວເທິງ, ມົ້ງ ຢ້າວ, ກໍ້, ກຸ່ຍ, ມູເຊີ, ລານແຕນທີ່ຢູ່ຕາມພູດອຍ. ໄທລື້ມີຈຳນວນຫຼາຍກວ່າໝູ່ ແລະ ຖືສາສະໜາພຸດ ; ໄທຍວນກໍ່ຖືສາສະໜາພຸດຄືກັນ ແຕ່ຫາກມີຈຳນວນນ້ອຍກວ່າ ; ນອກຈາກນັ້ນແມ່ນຊົນເຜົ່າພູດອຍທັງມວນ. ປະຊາຊົນເຂດນີ້ຕ່າງປະຊາຊົນເຂດ 2 ຢູ່ບ່ອນວ່າ ຂະເຈົ້າບໍ່ເຄີຍໄດ້ປ່ຽນໄປຂຶ້ນກັບຝະລັ່ງ ແລະ ໄທຫຼາຍເທື່ອ, ແຕ່ກໍ່ມີບ່ອນຄືກັນຢູ່ບ່ອນວ່າ ຂະເຈົ້າຢາກພົ້ນຈາກເປັນຂ້ອຍຝະລັ່ງ, ສະໜັບສະໜູນນະໂຍບາຍແນວທາງຂອງພັກເຮົາ ແລະ ຮ່ວມມືນຳພວກເຮົາດີໃນທຸກບ່ອນ ທີ່ພວກເຮົາໄປ ແລະ ທຸກວຽກງານທີ່ພວກເຮົາມອບໝາຍໃຫ້.

ສິ່ງທີ່ເຮັດໃຫ້ພວກເຮົາພາກພູມໃຈ ແມ່ນໃນເວລາທີ່ພວກເຮົາເຄື່ອນໄຫວຢູ່ເຂດ 1 ນັ້ນ ພວກເຮົາໄດ້ຮັບລາຍງານຈາກພະນັກງານທ້ອງຖິ່ນ ທີ່ເຄື່ອນໄຫວຢູ່ເຂດ 2 ບອກວ່າທ້າວອ້ວນ ລາທິກຸນ ທີ່ໄປຍອມຈຳນົນຕໍ່ຝະລັ່ງກໍ່ສາມາດແກ່ດຶງເອົາຄົນທີ່ລັ່ງເລຈຳນວນນ້ອຍໜຶ່ງ - ເທົ່ານັ້ນ ໄປນຳພວກເຂົາ ; ສ່ວນພະນັກງານທ້ອງຖິ່ນຍັງຢູ່ພິດ ແລະ ຮ່ວມມືກັບກອງທະຫານອາສາສະໝັກຫວຽດນາມດີຢູ່ຄືເກົ່າ ; ເຂດ 2 ບໍ່ໄດ້ຖືກພວກທ້າວອ້ວນ ລາທິກຸນ ນາງເພຢ່າງໃດ ແລະ ພື້ນຖານການທະຫານ ແລະ ການເມືອງຍັງແໜ້ນໜາຢູ່ທຸກບ່ອນ. ຂ່າວນີ້ຊີ້ໃຫ້ເຮົາເຫັນແຈ້ງຕື່ມວ່າ ພວກຄົນທີ່ເຄີຍເປັນລູກມືຂອງພວກລ່າເມືອງຂຶ້ນຝະລັ່ງ ທີ່ປະປ່ອຍໃຫ້ເຮັດການກົດຂີ່ຂົ່ມເຫັງ ແລະ ປຸ້ນຈີ້ປະຊາຊົນນັ້ນ ແມ່ນຈະຣ່ຳຮຽນທິດສະດີ ແລະ ນະໂຍບາຍແນວທາງຫຼາຍປານໃດກໍ່ຕື່ນຕົວປະຕິວັດຍາກທີ່ສຸດ ; ມັນຕ່າງກັບປະຊາຊົນຜູ້ອອກແຮງ-ງານທີ່ເຫັນການກົດຂີ່ຂູດຣີດຂອງສັດຕູງ່າຍກວ່າ ແລະ ເມື່ອເຫັນວ່ານະໂຍບາຍ ແນວທາງຂອງພວກເຮົາທີ່ແນໃສ່ປົດປ່ອຍປະເທດຊາດ ແລະ ສ້າງຄວາມອິ່ມໜຳສຳລານ ໃຫ້ແກ່ປະຊາຊົນກໍ່ຕົກລົງໃຈເຮັດນຳພວກເຮົາຢ່າງສັດຊື່ ແລະ ໜັກແໜ້ນດີ.

ເຮົາຍັງຈື່ບໍ່ລືມວ່າແມ່ນຢູ່ໃນເຂດ 1 ນີ້ເອງ, ສະຫາຍຄຳແສງ ແລະ ສະຫາຍຫວຽດນາມໄດ້ຕັ້ງໃຈກໍ່ສ້າງຫຼັກພື້ນຊົນຊັ້ນ ແລະ ທັດສະນະນິດສັດຕູໃຫ້ແກ່ເຮົາ, ຊ່ວຍໃຫ້ເຮົາເຂົ້າໃຈໂລກ, ເຂົ້າໃຈການວິວັດກ້າວໜ້າຂອງສັງຄົມ ແລະ ເຊື່ອໝັ້ນຕໍ່ໄຊຊະນະ ຂອງການປະຕິວັດ ; ແລ້ວທ້າຍສຸດ ພວກສະຫາຍເຫຼົ່ານີ້ກໍ່ໄດ້ຈັດຕັ້ງພິທີຮັບເອົາເຮົາເຂົ້າເປັນສະມາຊິກພັກກອມມູນິດອິນດູຈີນ ຢູ່ໃນປ່າແຫ່ງໜຶ່ງຂອງເມືອງສະ ເຊິ່ງເປັນຖານທີ່ໝັ້ນຂອງພວກເຮົາ ໃນວັນທີ 29/4/50. ເຫດການອັນນີ້ໄດ້ເຮັດໃຫ້ເຮົາເຫັນວ່າ ເປັນກຽດອັນສູງ ທີ່ເຮົາໄດ້ຮັບໃນຊີວິດຂອງເຮົາ, ເຮັດໃຫ້ເຮົາມີຄວາມທະນົງໃຈຫາທີ່ປຽບບໍ່ໄດ້ ແລະ ເພີ່ມທະວີຄວາມຕັດສິນໃຈໄປນຳການປະຕິວັດຢ່າງໜັກແໜ້ນ ແລະ ເດັດຂາດກວ່າເກົ່າ. ຕັ້ງແຕ່ນັ້ນມາເຮົາກໍ່ໝັ່ນຍາດເວລາໄປຖ້ອຍຖາມ ແລະ ຮ່ຳຮຽນທິດສະດີປະຕິວັດນຳສະຫາຍຄຳແສງ ແລະ ສະຫາຍຫວຽດນາມ ເພື່ອຍົກລະດັບຄວາມສາມາດ ແລະ ຄຸນສົມບັດຂອງເຮົາ ໃຫ້ຂຶ້ນສູງກວ່າ

ເກົ່າຈັກໄຈ້. ພວກສະຫາຍຫວຽດນາມກໍ່ເຊື່ອໝັ້ນ, ໄວ້ວາງໃຈ ແລະ ຮັກແພງເຮົາຫຼາຍຂຶ້ນອີກ, ແລະ ພະຍາຍາມຂົນຂວາຍຊອກເອົາເອກະສານ ທີ່ປະທານໂຮຈິມິນຂຽນ ແລະ ທິດສະດີມາກ-ເລນິນ ທີ່ພໍຊອກຫາເອົາໄດ້ນັ້ນມາໃຫ້ເຮົາອ່ານ. ອັນນີ້ຍິ່ງເຮັດໃຫ້ເຮົາດີໃຈຫຼາຍຂຶ້ນຕື່ມ ເພາະວ່າເຮົາໄດ້ມີໂອກາດປັບປຸງຄວາມຮູ້ດ້ານພາສາຫວຽດນາມ ແລະຄວາມຮູ້ດ້ານທິດສະດີປະຕິວັດຂຶ້ນຕື່ມ. ເທື່ອນີ້ແມ່ນເຮົາຕັດສິນໃຈໄປນຳການປະຕິວັດຈົນສຸດກົກສຸດປາຍ ແລະລືມໄປພົດຖານະເຈົ້າເມືອງ ແລະ ເຈົ້າແຂວງທີ່ເຮົາຍັງຄິດເສຍດາຍ ໃນເວລາເຮົາ ແລະ ຄອບຄົວພວມຕໍ່ສູ້ແນວຄິດກ່ອນຈະຕັດສິນໃຈໜີອອກຈາກປາກແບງ ເພື່ອອົບພະຍົບຂ້າມນ້ຳຂອງໄປສູ່ປະເທດໄທໃນປີ 1946.

ໃນກາງເດືອນ 5 ປີ 1950 ຄະນະກຽມກອງປະຊຸມໃຫຍ່ແນວລາວຕໍ່ຕ້ານ ໄດ້ສົ່ງໂທລະເລກມາເຊີນເອົາພວກເຮົາ ແລະ ຜູ້ແທນເຂດ 1 ແລະເຂດ 2 ໄປຮ່ວມກອງປະຊຸມໃຫຍ່ຜູ້ແທນແນວລາວຕໍ່ຕ້ານທີ່ຈະໄຂຂຶ້ນຢູ່ເຂດທີ່ໝັ້ນແຫ່ງໜຶ່ງຂອງກຳລັງຕໍ່ຕ້ານຂອງລາວ ຢູ່ໃກ້ຊາຍແດນຫວຽດນາມ. ພວກເຮົາໄດ້ເຊີນທຸກສະຫາຍທີ່ຮັບຜິດຊອບເຂດ 1 ແລະເຂດ 2 ຮ່ວມກັນນັ້ນມາປະຊຸມກັນ, ພ້ອມກັນສັງເກດຕີລາຄາສະພາບການຂອງທັງສອງເຂດແລະພ້ອມກັນຕົກລົງແຕ່ງຕັ້ງຜູ້ຢູ່ ແລະ ຜູ້ໄປຮ່ວມກອງປະຊຸມ. ສະຫາຍອຸຕະມະ ຈຸລາມະນີ, ມະຫາຄຳພັນ, ມະຫາສົມບຸນ ແລະອື່ນໆຖືກແຕ່ງຕັ້ງໃຫ້ຢູ່ຊີ້ນຳເຂດ 1 ແລະ ພະນັກງານອີກຈຳນວນໜຶ່ງຢູ່ຊີ້ນຳເຂດ 2. ເຮົາເອງຖືກແຕ່ງຕັ້ງໃຫ້ນຳພາຜູ້ແທນເມືອງສະ (ໄພ່ທຳດີ) , ເມືອງລອງ (ໄພ່ຄຳດີ), ເມືອງກາງ (ພະຍາສິງຄຳ) ແລະ ເມືອງນັງ (ພະຍາເມືອງນັງ) ໄປຮ່ວມກອງປະຊຸມ. ສະຫາຍຄຳແສງ ແລະ ເພົ້າ ພິມພະຈັນ ຖືກແຕ່ງຕັ້ງໃຫ້ໄປປັບປຸງພະນັກງານຊີ້ນຳເຂດ 2 ແລ້ວຄັດເລືອກເອົາຜູ້ແທນພະສິງ, ຊົນເຜົ່າລື້, ຊົນເຜົ່າຍວນ ແລະ ເພດຍິງໄປຮ່ວມກອງປະຊຸມ. ຫຼັງຈາກນັ້ນກໍ່ຕ່າງຄົນຕ່າງກຽມແລ້ວໆ ກໍ່ອອກເດີນທາງ

ຄະນະຜູ້ແທນພວກເຮົາມາຮອດທ່າຂີ້ເຫຼັກ (ດິນພະມ້າຕໍ່ກັບດິນໄທ) ໃນກາງເດືອນ 5 ປີ 1950 ແລະໄດ້ພັກຜ່ອນຢູ່ທີ່ນັ້ນເພື່ອກຽມໜັງສືຜ່ານແດນ. ເວລານັ້ນເຮົາໄດ້ຍາດເວລາ-ໄປຊຽງແສນເພື່ອພົບພໍ່, ລຸລົ່ງ ແລະຝາກຝັງຄອບຄົວເຮົາໄວ້ນຳສະມາຄົມລາວອົບພະຍົບປະຈຳທ້ອງຖິ່ນນັ້ນ. ເຮົາເປັນຫ່ວງນຳຄອບຄົວຂອງເຮົາຫຼາຍທີ່ສຸດ ເພາະວ່າເທື່ອນີ້ ເຮົາຈຳເປັນຕ້ອງໜີຈາກໄປໄກ ບໍ່ຮູ້ວ່າເວລາໃດຈຶ່ງຈະໄດ້ກັບຄືນມາ, ແຕ່ໃນເມື່ອສະມາຄົມລາວອົບພະຍົບຮັບຮອງຈະເບິ່ງແຍງ ແລະ ຊ່ວຍເຫຼືອແລ້ວ ລູກເມຍເຮົາ ແລະ ຕົວເຮົາເອງກໍ່ລົ່ງອົກລົ່ງໃຈຮັບປະຕິບັດໜ້າທີ່ອັນຫຍຸ້ງຍາກສັບສົນນີ້. ຫຼັງຈາກນັ້ນເຮົາໄດ້ກັບຄືນໄປທ່າຂີ້ເຫຼັກພາຄະນະຜູ້ແທນຂ້າມເຂດແດນໄປຂຶ້ນລົດການີຍົງທີ່ແມ່ສາຍ (ດິນໄທ) ເພື່ອໄປຊຽງຮາຍ ແລະ ລຳປາງ. ຈາກທີ່ນັ້ນພວກເຮົາໄດ້ຂຶ້ນລົດໄຟໄປພາຊີ ແລະອຸດອນ ແລ້ວຂຶ້ນລົດການີຍົງ ໄປໜອງຄາຍ ເພື່ອຂີ່ນກຳປັ່ນໄຫລ່ອງລົງໄປຫາບົ່ງການ. ລົງໄປຮອດໂພນພີໄສ ພວກເຮົາຈຶ່ງ

ເຫັນພວກສະຫາຍຄຳແສງ, ເພົ້າ ພິມພະຈັນ ແລະ ຄະນະມາລິງກຳປັ້ນນຳກັນໄປ ຈົນຮອດບົງການຈຶ່ງພ້ອມກັນອອກໄປພັກເຊົານຳເຮືອນ ສະຫາຍ ເຈົ້າສຸກ ວົງສັກ ທີ່ມີໜ້າທີ່ຕ້ອນຮັບ ແລະ ກຽມທຸກສິ່ງທຸກຢ່າງໃຫ້ພວກເຮົາ ເພື່ອຈະອອກເດີນທາງຕໍ່ໄປ. ຫຼັງຈາກພັກຢູ່ທີ່ນັ້ນສອງມື້ແລ້ວ ພວກເຮົາກໍ່ອອກເດີນທາງຂ້າມນ້ຳຂອງໄປຂຶ້ນສາຍພູຫຼວງທີ່ສູງຊັນ, ຂຶ້ນພູລົງຫ້ວຍຫຼາຍຍ່ານເປັນເວລາ 11 ວັນ ຈຶ່ງໄປຮອດດິນຫວຽດນາມ. ການເດີນທາງຜ່ານດິນໄທບໍ່ອິດເມື່ອຍປານໃດ ເພາະວ່າໄດ້ຂີ່ລົດກາມິຍົງ, ລົດໄຟ ແລະ ກຳປັ່ນ, ແຕ່ວ່າ ຕ້ອງມີສະຕິລະວັງຕົວ ແລະ ພົບໄຫວຕໍ່ໜ້າເຈົ້າໜ້າທີ່ໄທໃນແຕ່ລະດ່ານຂອງສາຍທາງ ເພາະວ່າ ໃນເວລານັ້ນ ລັດຖະບານໄທບໍ່ຊ່ວຍນັກປະຕິວັດລາວອີກແລ້ວ, ຖ້າບໍ່ລະວັງເຮັດເສຍຄວາມລັບ ແມ່ນພວກເຮົາຈະຕ້ອງຖືກຈັບສົ່ງໃຫ້ຝະລັ່ງ. ສ່ວນການເດີນທາງຂ້າມສາຍພູຫຼວງນັ້ນ ຊ້ຳພັດມີຄວາມຫຍຸ້ງຍາກແນວອື່ນ, ຕ້ອງຫຼີກເວັ້ນຄ້າຍທະຫານຝະລັ່ງ, ຂຶ້ນພູສູງ, ລົງຫ້ວຍເລິກ ຈົນອິດເມື່ອຍເຫື່ອໄຫຼບໍ່ເຫືອດຄົງ, ທັງອົດທົນຕໍ່ເຫຼືອກຍຸງ ແລະ ທາກທີ່ຂົບກິນເລືອດພວກເຮົາ–ຕະຫຼອດທາງ ; ບາງມື້ກໍ່ຝົນຕົກຮຳທັງກາງວັນ ແລະ ກາງຄືນຈົນບໍ່ເປັນກິນເປັນນອນ ;ທັງຕ້ອງລະວັງຕົວຕໍ່ສັດຕູ ເຊິ່ງມີຂ່າວອອກກວາດລ້າງລັດໜ້າລັດຫຼັງພວກເຮົາ ; ທັງຊອກບ່ອນລີ້ເຮືອບິນຂອງພວກເຂົາທີ່ບິນມາສອດແນມ, ຖິ້ມລະເບີດ ແລະ ຍິງທຳລາຍນັ້ນຢ່າງທັນເວລາ. ເມື່ອໄປຮອດດິນຫວຽດນາມແລ້ວ ພວກເຮົາກໍ່ຍັງຈຳເປັນຕ້ອງເດີນລັດປ່າດ້າວດົງໜາ, ຫຼີກຄ້າຍທະຫານສັດຕູຫຼາຍບ່ອນ ຈົນຮອດໜຶ່ງເດືອນຈຶ່ງໄປຮອດເຂດປອດໄພ ບ່ອນຈະໄຂກອງປະຊຸມ. ໄດ້ຮອດບ່ອນນັ້ນແລ້ວ ພວກເຮົາກໍໄດ້ປະກອບສ່ວນເຂົ້າໃນການປຸກທີ່ປະຊຸມ, ປຸກທີ່ພັກໃຫ້ພວກຜູ້ແທນເຂດອື່ນທີ່ຈະມາເຖິງ ແລະ ຂຸດຂຸມຫຼົບໄພເພື່ອຮັບປະກັນຄວາມປອດໄພໃຫ້ກັນໝົດທຸກຄົນ.

ເມື່ອຜູ້ແທນມາຄົບໝົດ ແລະ ການກະກຽມເສັດສິ້ນແລ້ວກອງປະຊຸມທີ່ເອີ້ນວ່າ ກອງປະຊຸມໃຫຍ່ຜູ້ແທນແນວລາວຕໍ່ຕ້ານທົ່ວປະເທດ ກໍ່ໄດ້ໄຂຂຶ້ນໃນວັນທີ 13/ 8/ 50 ໂດຍມີຜູ້ແທນມາຮ່ວມນຳ 150 ຄົນ, ປະກອບດ້ວຍຕົວແທນເຂດຕໍ່ຕ້ານ, ຕົວແທນຂອງພະສົງ, ຂອງນັກບວດສາສະໜາເຍຊູ, ຂອງກຳມະກອນ, ຊາວນາ, ກອງທະຫານ, ຂອງແມ່ຍິງ ແລະຜູ້ຊົງຄຸນວຸດທິ ຕັ້ງແຕ່ພາກເໜືອລົງມາຮອດພາກໃຕ້, ຕັ້ງແຕ່ທິດຕາເວັນຕົກຮອດທິດຕາເວັນອອກຂອງປະເທດລາວ. ຜູ້ແທນກອງທະຫານອາສາສະໝັກຫວຽດນາມ ແລະ ຜູ້ແທນແນວໂຮມ ຫວຽດມິນ– ລຽນຫວຽດພ້ອມທັງຜູ້ແທນຂອງທຸກອົງການມະຫາຊົນຫວຽດນາມ ກໍ່ໄດ້ໃຫ້ກຽດມາຮ່ວມນຳພວກເຮົາ.

ມື້ໄຂກອງປະຊຸມໃຫຍ່ແນວລາວຕໍ່ຕ້ານ ແມ່ນມື້ບຸນໃຫຍ່ຂອງພວກເຮົາ, ມັນເປັນໂອກາດໃຫ້ບັນດາຕົວແທນຂອງປະຊາຊົນລາວທັງ 3 ລ້ານຄົນໄດ້ມາພົບພໍ້ກັນ ແລະ ໄຂຄວາມໃນໃຈໃຫ້ກັນຟັງຢ່າງສະໜິດສະໜົມ ແລະ ມ່ວນຊື່ນເບີກບານທີ່ສຸດ. ພວກທະຫານລາດກອງຫຼອນ –

ແລະ ປະຊາຊົນບັນດາຊົນເຜົ່າໃນທ້ອງຖິ່ນບ່ອນໄຂກອງປະຊຸມໃຫຍ່ໃສ່ນັ້ນ ກໍ່ມີຄວາມມ່ວນຊື່ນເບີກບານຮັບປະກັນຄວາມປອດໄພ ແລະ ຄວາມຢູ່ຄວາມກິນໃຫ້ຜູ້ແທນທັງມວນທີ່ມາຮ່ວມກອງປະຊຸມ ແລະ ຄົ້ນຄວ້າຮ່ຳຮຽນການເມືອງນັ້ນ.

ຫຼັງຈາກໄຂກອງປະຊຸມແລ້ວ ຜູ້ຕາງໜ້າຄະນະກຽມກອງປະຊຸມ ໄດ້ອ່ານລາຍງານ ການເມືອງທີ່ຊີ້ແຈງເຖິງສະພາບການຂອງໂລກ, ຂອງພາຍໃນປະເທດ, ຜົນທີ່ພວກເຮົາ ໄດ້ຮັບຕະຫຼອດ 4 ປີ ທີ່ຜ່ານມາ, ຈຸດດີ, ຈຸດອ່ອນ, ແນວທາງນະໂຍບາຍແຫ່ງການປະຕິວັດຂອງພວກເຮົາ ແລະ ໜ້າທີ່ສະເພາະໜ້າທີ່ພວກເຮົາຕ້ອງເຮັດ. ຕໍ່ຈາກນັ້ນ ແມ່ນບົດປະກອບຄຳເຫັນຂອງຜູ້ແທນເຂດຕ່າງໆ, ຜູ້ແທນທະຫານກອງລາຊະວົງ, ຜູ້ແທນແມ່ຍິງ, ຜູ້ແທນຊາວໄຮ່ນາ, ຜູ້ແທນຊົນເຜົ່າຕ່າງໆ ຜູ້ແທນພະສົງ ແລະ ຜູ້ແທນຜູ້ຖືສາສະໜາເຢຊູ, ຜູ້ແທນແນວໂຮມຫວຽດມິນ-ລຽນຫວຽດ ແລະຜູ້ແທນແມ່ຍິງຫວຽດນາມກໍ່ໄດ້ຂຶ້ນມາກ່າວຄຳຊົມເຊີຍ ຂອງປະຊາຊົນຫວຽດນາມ ຕໍ່ກອງປະຊຸມໃຫຍ່ຂອງພວກເຮົາ. ຫຼັງຈາກນັ້ນ ຜູ້ຕາງໜ້າຄະນະກຽມກອງປະຊຸມໄດ້ອ່ານຮ່າງມະຕິຂອງກອງປະຊຸມສ້າງຕັ້ງແນວໂຮມແຫ່ງຊາດໂດຍໃຫ້ຊື່ວ່າ : " ແນວລາວອິດສະຫຼະ ", ອ່ານຮ່າງກົດລະບຽບຂອງແນວລາວອິດສະຫຼະ, ອ່ານຮ່າງມະຕິສ້າງຕັ້ງລັດຖະບານລາວຕໍ່ຕ້ານ ທີ່ເວົ້າເຖິງໂຄງປະກອບ ແລະ ໜ້າທີ່ສະເພາະໜ້າຂອງມັນ. ເອກະສານຕ່າງໆເຫຼົ່ານັ້ນ ໄດ້ເວົ້າວ່າປະເທດລາວອັນແສນຮັກຂອງພວກເຮົາ ຖືກພວກລ່າເມືອງຂຶ້ນຝະລັ່ງ ມາຍຶດຄອງເປັນເວລາ 60 ກວ່າປີແລ້ວ, ພວກສັກດີນາປະຕິການໄດ້ຍອມມອບບ້ານເມືອງຂອງພວກເຮົາໃຫ້ພວກເຂົາ, ພວກເຂົາໄດ້ວາງແຜນການກົດຂີ່ຂູດຮີດປະຊາຊົນລາວ, ເມື່ອຊົນເຜົ່າຕ່າງໆລຸກຂຶ້ນຕໍ່ສູ້ຕ້ານການກົດຂີ່ຂູດຮີດນັ້ນ ພວກເຂົາກໍ່ໃຊ້ກຳລັງທະ-ຫານປາບປາມຢ່າງປ່າເຖື່ອນ ມາຮອດປີ 1945 ອາໄສເວລາພວກຟາດຊິດຍີ່ປຸ່ນ ມາຂັບໄລ່ຝະລັ່ງ ແລ້ວຍີ່ປຸ່ນຊ້ຳພັດປະລາໄຊຕໍ່ຝ່າຍສຳພັນທະມິດ ປະຊາຊົນແຂວງວຽງຈັນ ໄດ້ລຸກຂຶ້ນຍຶດອຳນາດ ແລະ ສ້າງຕັ້ງລັດຖະບານລາວເອກະລາດຂຶ້ນ, ປະກາດລວມປະເທດລາວ ທຸກພາກເຂົ້າເປັນອັນດຽວກັນ, ເວລາພວກຝະລັ່ງກັບຄືນມາ ລັດຖະບານລາວເອກະລາດໄດ້ອົບພະຍົບໜີໄປຢູ່ປະເທດໄທ, ທ້າຍປີ 1949 ກໍ່ໄດ້ກັບຄືນໄປຍອມຈຳນົນຕໍ່ພວກຝະລັ່ງ ແຕ່ວ່າປະຊາຊົນຜູ້ຮັກຊາດໃນເຂດຕ່າງໆທົ່ວປະເທດ ໄດ້ສືບຕໍ່ເຮັດການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ-ຝະລັ່ງ ຢູ່ໃນເຂດກອງຫຼອນຂອງຕົນ. ການຕໍ່ສູ້ມີໄຊໃນທຸກບ່ອນເຮັດໃຫ້ເຂດຕໍ່ຕ້ານ ນັບມື້ນັບຂະຫຍາຍຕົວກວ້າງອອກ ຈົນບາງບ່ອນພວກລ່າເມືອງຂຶ້ນຝະລັ່ງບໍ່ກ້າເຂົ້າໄປກວາດລ້າງ, ແຕ່ໃນເຂດຕໍ່ຕ້ານເຫຼົ່ານັ້ນ ຍັງໃຊ້ແຜນນະໂຍບາຍ ແລະ ວິທີປະຕິບັດແຕກຕ່າງກັນ, ຈຶ່ງຕ້ອງໄຂກອງປະຊຸມໃຫຍ່ຜູ້ແທນແນວລາວຕໍ່ຕ້ານຂຶ້ນ ເພື່ອສ້າງຄວາມເປັນເອກະພາບຂຶ້ນ ທັງທາງດ້ານແນວທາງນະໂຍບາຍ, ຮູບການ ແລະ ວິທີປະຕິບັດເພື່ອເຮັດໃຫ້ທຸກທ້ອງຖິ່ນ ຂອງດິນລາວກ້າວໜ້າຂະຫຍາຍຕົວ ໄປສູ່ໄຊຊະນະພ້ອມກັນ. ແນວທາງລວມທີ່ເປັນເອກະພາບ ຜ່ານ

ໃນກອງປະຊຸມນີ້ແມ່ນ : "ສາມັກຄີປວງຊົນທັງຊາດ, ສາມັກຄີແໜ້ນແຟ້ນກັບປະຊາຊົນຫວຽດ ນາມ ແລະ ຂະແມ, ໂຄ່ນລົ້ມພວກລ່າເມືອງຂຶ້ນຝະລັ່ງ ແລະ ພວກສັກດີນາປະຕິການ,ຕ້ານ ການແຊກແຊງຮຸກຮານຂອງຈັກກະພັດອາເມລິກາ, ເຮັດໃຫ້ປະເທດລາວເປັນເອກະລາດ , ເອກະພາບ ແລະ ຮັ່ງມີເຂັ້ມແຂງ. ເຮົາເອງໄດ້ຮັບກຽດຖືກເລືອກຕັ້ງໃຫ້ເປັນຄະນະປະຈຳ ແຫ່ງຄະນະບໍລິຫານສູນກາງແນວລາວອິດສະຫຼະ ແລະ ຮອງລັດຖະມະຫາເສນາ ທັງເປັນລັດ ຖະເສນາກະຊວງມະຫາດໄທ. ທ່ານສຸພານຸວົງ ເປັນລັດຖະມະຫາເສນາ (ນາຍົກລັດຖະມົນ ຕີ) ແລະ ປະທານແນວລາວອິດສະຫຼະ, ທ່ານໜູຮັກ ພູມສະຫວັນ ເປັນຄະນະປະຈຳສູນກາງ ແນວລາວອິດສະຫຼະ ແລະ ລັດຖະເສນາກະຊວງເສດຖະກິດການເງິນ, ທ່ານໄກສອນ ພົມວິ ຫານ ເປັນຄະນະປະຈຳສູນກາງແນວລາວອິດສະຫຼະ ແລະ ລັດຖະເສນາກະຊວງປ້ອງກັນປະ ເທດ, ທ່ານສຸກ ວົງສັກ ເປັນກຳມະການສູນກາງແນວລາວອິດສະຫຼະ ແລະ ລັດຖະເສນາ ກະຊວງສຶກສາ, ທ່ານໄຟດ່າງ ເປັນຮອງປະທານແນວລາວອິດສະຫຼະ ແລະ ລັດຖະເສນາບໍ່ ວ່າການກະຊວງ, ທ່ານສີທົນ ກົມມະດຳ ເປັນຮອງປະທານແນວລາວອິດສະຫຼະ ແລະລັດຖະ ເສນາບໍ່ວ່າການກະຊວງ. ນອກນັ້ນ ຍັງກຳມະການສູນກາງແນວລາວອິດສະຫຼະທີ່ປະຈຳຢູ່ສູນ ກາງ ແລະ ກັບຄືນເມືອທ້ອງຖິ່ນຫຼາຍຄົນ.

ຄະນະລັດຖະບານລາວຕໍ່ຕ້ານທີ່ຖືກກອງປະຊຸມໃຫຍ່
ຜູ້ແທນລາວຕໍ່ຕ້ານແຕ່ງຕັ້ງຂຶ້ນໃນປີ 1950 .

ກອງປະຊຸມໃຫຍ່ນີ້ໄດ້ອັດລົງໃນວັນທີ 15/8/50. ຫຼັງຈາກອັດກອງປະຊຸມເຮົາໄດ້ພ້ອມກັບຜູ້ແທນທຸກໆເຂດຄົ້ນຄວ້າຮ່ຳຮຽນບັນດາມະຕິຂອງກອງປະຊຸມ, ໂດຍສະເພາະແມ່ນ ສະພາບການຂອງໂລກທີ່ຊີ້ໃຫ້ເຫັນວ່າ ແນວທາງແຊກແຊງຮຸກຮານຂອງພວກຈັກກະພັດລ່າເມືອງຂຶ້ນແມ່ນຜິດພາດ, ວ່າແນວທາງຜິດສິນທຳນັ້ນຈະເຮັດໃຫ້ພວກຈັກກະພັດລ່າເມືອງຂຶ້ນ ປະລາໄຊເທື່ອລະກ້າວໄປເຖິງຄວາມປະລາໄຊຢ່າງຮາບຄາບ ວ່າແນວທາງຕໍ່ສູ້ປົດປ່ອຍຊາດ ແລະ ນຳເອົາຄວາມສຸກສີວິໄລມາໃຫ້ແກ່ປະຊາຊົນທຸກຊົນເຜົ່ານັ້ນແມ່ນຖືກຕ້ອງ. ເຖິງວ່າພວກເຮົາຈະເລີ່ມຕົ້ນດ້ວຍ 2 ຝາມືເປົ່າ ແລະ ກຳລັງຂອງພວກເຮົາຍັງອ່ອນນ້ອຍພຽງໃດກໍ່ຕາມພວກເຮົາກໍ່ຈະຄ່ອຍໆເຂັ້ມແຂງຂຶ້ນເທື່ອລະກ້າວ ແລ້ວທ້າຍສຸດກໍ່ຈະໄຊຊະນະຢ່າງສົມບູນ.

ຄະນະກຳມະການສູນກາງແນວລາວອິດສະລະ ເຊິ່ງຖືກເລືອກຕັ້ງຈາກກອງປະຊຸມໃຫຍ່ຜູ້ແທນແນວລາວອິດສະລະ (1950).

ເພື່ອຕອບສະໜອງການທີ່ລັດຖະບານ ແລະ ແນວໂຮມຫວຽດມິນ - ລຽນຫວຽດ ທີ່ໄດ້ສົ່ງຄະນະຜູ້ແທນຂອງພວກເພິ່ນມາຮ່ວມໃຫ້ກຽດແກ່ກອງປະຊຸມໃຫຍ່ຂອງພວກເຮົານັ້ນຫຼັງຈາກອັດກອງປະຊຸມໃຫຍ່ນັ້ນແລ້ວພວກເຮົາກໍ່ໄດ້ແຕ່ງຄະນະຜູ້ແທນຂອງພວກເຮົາປະກອບດ້ວຍ ຜູ້ຕ່າງໜ້າທຸກຊົນເຜົ່າ, ທຸກເພດໄວ ແລະ ພະສົງໄປຢາມລັດຖະບານສາທາລະນະລັດປະຊາທິປະໄຕຫວຽດນາມ . ເຮົາຮູ້ສຶກດີໃຈທີ່ໄດ້ຮັບກຽດໃຫ້ໄປນຳຄະນະຜູ້ແທນນັ້ນ. ຄະນະລັດຖະບານ ແລະ ແນວໂຮມຫວຽດນາມທີ່ຕັ້ງຢູ່ປ່າດົງອັນເປັນເຂດທີ່ພັກຂອງພວກເພິ່ນຢູ່ພາກເໜືອ

ຄະນະຜູ້ແທນກອງປະຊຸມໃຫຍ່ແນວລາວຕໍ່ຕ້ານທົ່ວປະເທດໄປຢ້ຽມຢາມລັດຖະບານ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ໃນເດືອນ ກັນຍາ ປີ 1950 .

ໄປຢາມປະທານ ໂຫ້ຈິມິນ ທີ່ປາກບໍ່ ຫຼັງຈາກສ້າງຕັ້ງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ ເດືອນ 9 - 1950

ຫວຽດນາມໄດ້ຕ້ອນຮັບພວກເຮົາຢ່າງຍິ້ມແຍ້ມແຈ່ມໃສ ແລະ ອົບອຸ່ນທີ່ສຸດ . ເຮົາຮູ້ສຶກ ຕື່ນເຕັ້ນດີໃຈຫາອັນປຽບບໍ່ໄດ້ທີ່ໄດ້ເຫັນໜ້າທ່ານປະທານໂຫ່ຈີ່ມິນທີ່ເວົ້າລົມນຳພວກເຮົາດ້ວຍທ່າທີອັນສະໜິດສະໜົມທີ່ສຸດ. ທ່ານ ຝ່າມວັນດົ່ງ , ເຈື່ອງຈິງ , ຫວ່າງວຽນຢາບ , ຫວ່າງກວກຫວຽດ ແລະ ຄະນະຂອງເພິ່ນຫຼາຍຄົນໄດ້ເຂົ້າຮ່ວມໃນການຕ້ອນຮັບພວກເຮົາ ແລະເວົ້າລົມກັບພວກເຮົາເໝືອນດັ່ງວ່າເປັນຊາຍນ້ອງໃນຄອບຄົວດຽວກັນ. ທ່ານປະທານໂຫ່ຈີ່ມິນ ໄດ້ໃຊ້ເວລາຮອດ 4 ມື້ ແລະ 4 ຄືນ ເພື່ອເວົ້າລົມກັບພວກເຮົາ ; ເພິ່ນເວົ້າເລື່ອງນາຍທຶນຈັກກະພັດພວມຢູ່ໃນທ່າລົງຄ້ອຍໄປສູ່ຄວາມປະລາໄຊຢ່າງຫຼີກເວັ້ນບໍ່ໄດ້ , ວ່າຂະບວນປະຕິວັດໃນທົ່ວໂລກທີ່ມີສະຫະພາບໂຊຫວຽດເປັນເສົາຄ້ຳພວມຂະຫຍາຍຕົວກວ້າງຂວາງ ແລະ ເຂັ້ມແຂງຂຶ້ນຈຸກໃຈ, ບັນມັ້ນຍຶດໄດ້ທ່າດີ ແລະ ຈະໄດ້ຮັບໄຊຊະນະຂັ້ນສຸດທ້າຍຢ່າງແນ່ນອນ . ເພິ່ນໄດ້ອະທິບາຍທິດສະດີມາກ - ເລນິນ ໃຫ້ພວກເຮົາຟັງຢ່າງລະອຽດ, ຈະແຈ້ງແລະຄົບຖ້ວນພໍຄວນ, ເຮັດໃຫ້ພວກເຮົາເຫັນເສັ້ນທາງເດີນແຈ້ງກວ່າເກົ່າ ແລະ ເຊື່ອໝັ້ນໃນໄຊຊະນະຢ່າງໜັກແໜ້ນຂຶ້ນກວ່າເກົ່າ, ຍິ່ງຟັງກໍ່ຍິ່ງຈັບໃຈ ແລະ ຊື່ນມ່ວນຈົນວ່າກາງຄືນກໍ່ບໍ່ຮູ້ສຶກ - ຢາກນອນ ແລະ ຮອດມື້ກັບຄືນແລ້ວກໍ່ບໍ່ຢາກໜີຈາກເພິ່ນທີ່ສ້າງບັນຍາກາດອັນຮັກແພງ ແລະ ມ່ວນຊື່ນໃຫ້ແກ່ພວກເຮົາ. ພວກເຮົາໄປຮ່ວມກອງປະຊຸມບຳລຸງການເມືອງໃຫ້ພະນັກງານ - ຂອງເພິ່ນພວກເຮົາກໍ່ໄດ້ພົບທ່ານປະທານໂຫ່ຈີ່ມິນທີ່ໄປໂອ້ລົມນຳ ເຮັດໃຫ້ເຮົາເຂົ້າໃຈທິດສະດີປະຕິວັດ ແລະ ໜ້າທີ່ທິດທາງແຈ້ງຂຶ້ນຕື່ມອີກ.

ຫຼັງຈາກນັ້ນພວກເຮົາກໍ່ໄດ້ພົບເພິ່ນອີກເວລາເພິ່ນໄປຮ່ວມກອງປະຊຸມຊາວນາບ່ອນໜຶ່ງ ເຮັດໃຫ້ພວກເຮົາຮູ້ຈັກວິທີຂົນຂວາຍປະຊາຊົນເພື່ອສ້າງຄວາມສາມັກຄີປວງຊົນເຂົ້າຮ່ວມເຮັດການຕໍ່ສູ້ກູ້ຊາດ . ເຮົາຕິດໃຈຫຼາຍກັບວິທີດຳລົງຊີວິດຂອງທ່ານປະທານໂຫ່ຈີ່ມິນທີ່ງ່າຍດາຍ, ເປີດເຜີຍກະເຈົ້າກະຈ່າທີ່ເຮັດໃຫ້ເພິ່ນປັບຕົວເຂົ້າຢູ່ຮ່ວມກັບປະຊາຊົນຢ່າງສະໜິດສະໜົມດີ ; ເຮົາດີໃຈທີ່ໄດ້ຮ່ຳຮຽນທັງທິດສະດີການເມືອງອັນແຈ່ມໃສ ແລະ ຈັບໃຈຂອງເພິ່ນ ແລະ ໄດ້ຟັງວິທີໂອ້ລົມອັນງ່າຍດາຍ , ແທດເຖິງຕົວຈິງ ແລະ ຕິດພັກຕິດໃຈຂອງເພິ່ນເຊິ່ງລ້ວນ ແຕ່ແມ່ນວິທີອົບຮົມສັ່ງສອນອັນຍັງບໍ່ຮູ້ອິດເມື່ອຍ. ລາໜີຈາກເພິ່ນມາເຮົາຍັງຈື່ຈຳທ່າທີກິລິຍາແລະຄວາມເວົ້າຂອງເພິ່ນຢ່າງບໍ່ມີວັນຈະຫຼົງລືມ ;· ເພິ່ນສົມແລ້ວວ່າເປັນອາຈານໃຫຍ່ຜູ້ຄວນເຄົາລົບນັບຖື , ເປັນດັ່ງສາງທິດສະດີປະຕິວັດອັນບໍ່ຮູ້ບົກແຫ້ງ , ເປັນແວ່ນແຍງອັນໃສແຈ້ງ ແລະ ເປັນຜູ້ນຳທີ່ໜ້າເຄົາລົບຮັກບໍ່ພຽງແຕ່ຂອງປະຊາຊົນຫວຽດນາມຜູ້ພິລະອາດຫານເທົ່ານັ້ນແຕ່ຍັງເປັນຜູ້ນຳຂອງປະຊາຊົນລາວ , ຂະແມ ແລະ ອື່ນໆອີກດ້ວຍ .

ເວລາກັບມາຮອດບ່ອນປະຊຸມໃຫຍ່ຂອງພວກເຮົາແລ້ວ , ພວກເຮົາໄດ້ເລົ່າບົດຮຽນອັນລ້ຳຄ່າຂອງທ່ານປະທານໂຫ່ຈີ່ມິນທີ່ພວກເຮົາໄດ້ຮັບມານັ້ນໃຫ້ເພື່ອນສະຫາຍທຸກຄົນທີ່ພວມ ຄົ້ນຄວ້າຮ່ຳຮຽນແນວທາງປະຕິວັດນັ້ນຟັງ , ເຮັດໃຫ້ທຸກຄົນມ່ວນຊື່ນເບີກບານ ແລະ ເຊື່ອໝັ້ນໃນ

ໄຊຊະນະຂອງພວກເຮົາເພີ່ມຂຶ້ນຕື່ມ .

ເມື່ອພວກເຮົາທັງໝົດເຂົ້າໃຈເປັນເອກະພາບກັນ ກ່ຽວກັບສະພາບການຂອງໂລກ, ສະພາບການພາຍໃນປະເທດລາວເຮົາ, ເຂົ້າໃຈແນວທາງປະຕິວັດ ແລະ ທິດທາງວຽກງານສະເພາະໜ້າດີແລ້ວ, ຜູ້ແທນແຕ່ລະເຂດແຂວງກໍ່ໄດ້ກັບຄືນເມືອທ້ອງຖິ່ນຂອງໃຜລາວ ໂດຍໄດ້ສັ່ງລາກັນຢ່າງສະໜິດສະໜົມ ແລະ ຈັບມືແຂ່ງຂັນກັນວ່າ ຈະສ້າງຜົນງານໃຫ້ໄດ້ຫຼາຍເທົ່າທີ່ຫຼາຍໄດ້. ສ່ວນຕົວເຮົາແມ່ນໄດ້ຢູ່ນຳສູນກາງແນວລາວອິດສະຫຼະ ເພື່ອພ້ອມກັນກັບໝູ່ຄູ່ຄົນຄວາວາງແຜນການລະອຽດ ກ່ຽວກັບວຽກງານການເມືອງ, ການທະຫານ, ເສດຖະກິດ , ການສຶກສາ, ສິລະປະກຳ, ວັດທະນະທຳ ແລະ ສັງຄົມ ເພື່ອສົ່ງລົງໄປໃຫ້ແຕ່ລະທ້ອງຖິ່ນປະຕິບັດໃຫ້ເປັນເອກະພາບກັນ . ສິ່ງສຳຄັນອັນໜຶ່ງທີ່ພວກເຮົາເຮັດໄດ້ໃນເວລານັ້ນແມ່ນພວກເຮົາໄດ້ພ້ອມກັນວາງຫຼັກການປາກເວົ້າ ແລະ ຂຽນໜັງສືລາວເຊິ່ງຫຼາຍສິບປີມາແລ້ວ ຄົນລາວຖືກຖຽງ ແລະ ບໍ່ຕົກລົງກັນໄດ້ .

VIII. ການສ້າງກຳລັງການເມືອງແລະກຳລັງປະກອບອາວຸດ

ຕົ້ນປີ 1951 ເຮົາຖືກແຕ່ງຕັ້ງໄປຮັບຜິດຊອບການສ້າງພື້ນຖານການເມືອງ ແລະ ກຳລັງປະກອບອາວຸດໃນແຂວງຊຽງຂວາງ ອັນເປັນແຂວງບ້ານເກີດຂອງເຮົາ. ເຮົາຮູ້ສຶກດີໃຈທີ່ຈະໄດ້ໄປເຫັນພີ່ນ້ອງ ແລະ ບຸກຄົນຜູ້ທີ່ເຮົາລຶ້ງເຄີຍແຕ່ກ່ອນມາ. ພວກເຮົາໄດ້ຈັດຕັ້ງເປັນກອງປະກອບອາວຸດໂຄສະນາເພື່ອເລັດລອດເຂົ້າໄປເຜີຍແຜ່ແນວທາງນະໂຍບາຍ ຂອງແນວລາວອິດສະຫຼະ ແລະ ສ້າງພື້ນຖານການເມືອງໃນໝູ່ປະຊາຊົນ. ໝົດປີ 1951 ພວກເຮົາມີແຕ່ຫຼີກເວັ້ນບໍ່ໃຫ້ໄດ້ປະທະກັບສັດຕູ, ເຂົ້າໄປຮອດບ່ອນໃດໄດ້ ກໍ່ຊີ້ແຈງໂທດກຳອັນໂຫດຮ້າຍຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ລູກມືຂອງເຂົາທີ່ກົດຂີ່ຂູດຮີດປະຊາຊົນລາວ ແລະຊີ້ແຈງເຫດຜົນທີ່ພາໃຫ້ພວກເຮົາລຸກຂຶ້ນເຮັດການປະຕິວັດປົດປ່ອຍຊາດ ແລະ ປົດປ່ອຍປະຊາຊົນລາວໃຫ້ເປັນອິດສະຫຼະ ແລະ ເປັນເຈົ້າຕົນເອງຕາມນະໂຍບາຍແນວທາງຂອງພັກ ທີ່ໄດ້ສະແດງອອກໃນຮູບຂອງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ, ເຮັດໃຫ້ປະຊາຊົນບັນດາເຜົ່າເຫັນແຈ້ງວ່າ ນະໂຍບາຍຂອງແນວລາວອິດສະຫຼະ ມີຈຸດປະສົງແຕ່ອັນດຽວ ຄືນຳເອົາຄວາມສຸກ ແລະ ຄວາມຢູ່ດີກິນດີມາໃຫ້ແກ່ປະຊາຊົນລາວທັງມວນ. ປະຊາຊົນລາວຜູ້ທີ່ເຫັນດີເຫັນພ້ອມຕາມນະໂຍບາຍແນວທາງດັ່ງກ່າວນັ້ນ ກໍ່ຖືກແຕ່ງຕັ້ງເປັນຕົວແທນ ຂອງພວກເຮົາເພື່ອສືບຕໍ່ເຮັດການໂຄສະນາອົບຮົມປະຊາຊົນຜູ້ອື່ນຕໍ່ໄປຢ່າງກວ້າງຂວາງ ເທົ່າທີ່ຈະກວ້າງຂວາງໄດ້. ບ່ອນໃດຂະບວນການຂອງປະຊາຊົນກ້າວຂຶ້ນແຮງແລ້ວ ພວກເຮົາກໍ່ຈັດຕັ້ງເປັນໜ່ວຍແນວລາວອິດສະຫຼະ ໂດຍໃຊ້ວິທີການ 5 ບາດກ້າວຂອງການຂົນຂວາຍປະຊາຊົນຄື: ສືບຂ່າວ, ໂຄສະນາ, ຈັດຕັ້ງ, ອົບຮົມ ແລະ ນຳພາຕໍ່ສູ້.

ຊີວິດການເປັນຢູ່ ແລະ ການເຄື່ອນໄຫວເຮັດວຽກໃນເວລານັ້ນ ແມ່ນທຸກຍາກລຳບາກທີ່ສຸດ ; ໄປທາງໃດກໍ່ຕ້ອງຖືເປັດເຄື່ອງນຸ່ງເຄື່ອງກິນ ແລະ ອາວຸດຍຸດທະພັນອົນພູລົງຫວຍ, ມັດແພອູ່ໃສ່ກົກໄມ້ນອນຢູ່ກາງປ່າ, ຫຼີກຄາຍສັດຕູຊອກເຂົ້າໄປຕິດຕໍ່ກັບປະຊາຊົນ ໂດຍເລີ່ມຈາກຜູ້ທີ່ລາງເຄີຍຮັກແພງ. ແຕ່ວ່າເຮົາກໍ່ປະຕິບັດໜ້າທີ່ຂອງເຮົາດ້ວຍຄວາມສັດຊື່ບໍລິສຸດຕໍ່ພັກ, ຕໍ່ປະຊາຊົນ, ດ້ວຍຄວາມອົດທົນຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະ ດ້ວຍຄວາມເຊື່ອໝັ້ນໃນໄຊຊະນະອັນສຸດທ້າຍຂອງການປະຕິວັດຂອງພວກເຮົາ.

ໃນກາງປີ 1951 ເມຍແລະລູກຂອງເຮົາໄດ້ອົບພະຍົບໄປເຂດ 1 ເພື່ອຊອກທັນທາງ ມາຫາເຮົາ. ເມື່ອໄປຕາມເສັ້ນທາງນັ້ນບໍ່ໄດ້ ຂະເຈົ້າກໍພາກັນເຂົ້າໄປຫາໝູ່ທີ່ບາງກອກ ແລ້ວພ້ອມກັນຂຶ້ນເຮືອບິນຈາກທີ່ນັ້ນໄປລົງນະຄອນຫຼວງຢາງກຸ້ງຂອງພະມ້າ, ຂຶ້ນກໍ່ປີນຜ່ານສິງກະໂປ ແລະ ຮ່ອງກົງ ເຂົ້າປະເທດຈີນ ແລະ ຫວຽດນາມແລ້ວກໍ່ມາຮອດເຮົາ. ເມຍເຮົາໄດ້ເຂົ້າຮຽນທິດສະດີມາກ-ເລນິນ ແລະແນວທາງນະໂຍບາຍປະຕິວັດລາວແລ້ວ ກໍ່ໄດ້ເຂົ້າເປັນພະນັກງານລົງໄປຂົນຂວາຍປຸກລຸກປະຊາຊົນຢູ່ທ້ອງຖິ່ນຕ່າງໆຂອງແຂວງຫົວພັນ. ສ່ວນລູກເຮົາທັງສອງຄົນໄດ້ຖືກສົ່ງໄປຮຽນໜັງສືທີ່ປະເທດຫວຽດນາມຕັ້ງແຕ່ຊັ້ນປະຖົມຂຶ້ນໄປ. ຜູ້ນ້ອຍຊື່ນາງວິໄລ ວົງວິຈິດ ຮຽນຈົບຊັ້ນອຸດົມແລ້ວກໍ່ຮຽນຕໍ່ທີ່ມະຫາວິທະຍາໄລການແພດ. ຈົບແພດຊັ້ນສູງແລ້ວກໍ່ກັບມາຮັບໃຊ້ປະເທດຊາດ ; ຜູ້ນ້ອງຊື່ທາວດາລາ ວົງວິຈິດ ຮຽນຈົບມັດທະຍົມແລ້ວໄດ້ຖືກສົ່ງໄປຮຽນຢູ່ສະຖາບັນຊັ້ນກາງ (ເຕັກນິກກົນ) ຢູ່ສະຫະພາບໂຊວຽດ, ຈົບແລ້ວໄດ້ເຂົ້າຮຽນຕໍ່ທີ່ມະຫາວິທະຍາໄລສະຖາປະນິກ ຈົບແລ້ວກໍ່ກັບມາຮັບໃຊ້ປະເທດຊາດ.

ມາຮອດຕົ້ນປີ 1952, ຂະບວນການມະຫາຊົນໄດ້ເຂັ້ມແຂງຂຶ້ນ ແລະຂະຫຍາຍຕົວອອກໄປເຖິງທຸກຊົນຊາດຊົນເຜົ່າ. ພວກເຮົາໄດ້ຈັດຕັ້ງທະຫານລາດກອງຫຼອນຂຶ້ນເກືອບທຸກບ້ານ, ໃຊ້ປືນລາເນື້ອ, ປືນແກບ, ປືນເພີງ ແລະ ໜ້າໜອງເປັນອາວຸດ, ໃຊ້ຂວາກຫ່າວ, ໃຊ້ກອນຫີນ ແລະ ກົກໄມ້ຢູ່ເທິງຝັ່ງທາງເພື່ອດັກສະກັດຕີສັດຕູ. ຄຳຂວັນຂອງພວກເຮົາ ແມ່ນດັບສູນກຳລັງສັດຕູເພື່ອຢາດເອົາອາວຸດຈາກພວກເຂົາມາເພີ່ມກຳລັງພວກເຮົາ ແລ້ວສືບຕໍ່ຕີສັດຕູຕໍ່ໄປ. ວິທີຕີຂອງພວກເຮົາແມ່ນເຮັດສົງຄາມປະຊາຊົນ, ເດັກນ້ອຍ, ຊາວໜຸ່ມ, ຍິງສາວ ແລະ ຜູ້ເຖົ້າກໍ່ເຂົ້າຮ່ວມຕີສັດຕູຕາມຄວາມສາມາດຂອງໃຜລາວ, ທັງຕີສັດຕູໃນບ່ອນທີ່ມີເງື່ອນໄຂພຽງພໍ, ທັງເຮັດການເພີ່ມພູນພະລິດພົນເພື່ອລ້ຽງກຸ່ມຕົວເອງ, ທັງຮ່ຳຮຽນໜັງສື ຢ່າງນ້ອຍກໍໃຫ້ອ່ານອອກຂຽນໄດ້ ໃນໝູ່ປະຊາຊົນອາຍຸແຕ່ 7 ປີໄປຮອດ 45 ປີ ;ບ່ອນໃດພໍເຮັດໄດ້ກໍ່ປຸກໂຮງຮຽນມູນລະສຶກສາ ແລະ ປະຖົມສຶກສາຂຶ້ນ ; ຜູ້ມີອາຍຸກາຍ 45 ປີ ຫາກຮຽນໜັງສືຈົນລຶບລ້າງຄວາມບໍ່ຮູ້ໜັງສືໄດ້ ກໍ່ໄດ້ຮັບຄວາມຍ້ອງຍໍຊົມເຊີຍ.ໃນບ້ານທີ່ມີໂຮງຮຽນຂອງອົງການປົກຄອງທຸ່ນຕັ້ງຂຶ້ນນັ້ນ ພວກເຮົາອອກແຮງຍາດແຍ່ງເອົານາຍຄູ ເພື່ອສອນທັງຢູ່ໃນໂຮງຮຽນ ແລະ ສອນປະຊາສຶກສາໃນຍາມກາງຄືນ. ບ່ອນບໍ່ມີໂຮງຮຽນພວກເຮົາໃຊ້ພະສົງ

ສາມະເນນສອນໜັງສືຢູ່ຕາມວັດ ຫຼື ໂຮມປະຊາຊົນມາໃຫ້ພະນັກງານ ແລະທະຫານກອງຫຼອນ ຜູ້ຮູ້ໜັງສືມາອະທິບາຍວິທີຮຽນແລ້ວຂຽນໜັງສືໃສ່ເຈ້ຍ ໃຫ້ແຕ່ລະຄົນເອົາໄປຮຽນ ເອົາເອງ ໂດຍອາໄສຜູ້ຮູ້ກວ່າເປັນຜູ້ສອນ. ພ້ອມກັບສອນໜັງສືນັ້ນ ພວກເຮົາຍັງສອນໃຫ້ເດັກນ້ອຍແລະ ຊາວໜຸ່ມຮ້ອງເພັງຕໍ່ຕ້ານ, ເພັງປະເທດລາວ, ເພັງລາວເດີມ, ເພັງລາວຮັກລາວ ຫຼືເພັງ ອື່ນໆ ແລະ ສອນໃຫ້ຂະເຈົ້າຟ້ອນລຳວົງ ຫຼື ຫຼິ້ນລະຄອນກ້ອມກາງຄືນອ້ອມກອງໄຟ, ເຮັດ ໃຫ້ບັນຍາກາດຟົດຟື້ນມ່ວນຊື່ນກວ່າແຕ່ກ່ອນ.

ໃນບ່ອນທີ່ມີຄ້າຍສັດຕູຕັ້ງຢູ່ນັ້ນ ກອງຂົນຂວາຍພວກເຮົາກໍ່ຕັ້ງຢູ່ໃນປ່າ, ໃຫ້ແຕ່ຜູ້ທີ່ເປັນ ຫຼັກແຫຼ່ງແກ່ນສານຜູ້ໄວ້ໃຈໄດ້ຮູ້ບ່ອນຢູ່ຂອງພວກເຮົາ ເພື່ອສົ່ງເຂົ້າປ່າອາຫານໃຫ້ພວກເຮົາ; ໃນບາງບ້ານພວກເຮົາໃຫ້ປະຊາຊົນຮີບໂຮມເອົາເຂົ້າສານ ຫຼື ອາຫານແຕ່ງມາໄວ້ນຳພະສົງ ໃນວັດ ແລ້ວພວກເຮົາກໍ່ໄປຂົນເອົາທັງຖາມເອົາຂ່າວຄາວສັດຕູພ້ອມ. ໃນໄລຍະນີ້ພວກເຮົາ ພົບຄວາມຫຍຸ້ງຍາກຫຼາຍທີ່ສຸດ ເພາະວ່າສັດຕູຮູ້ຈັກ ແລະ ເອົາໃຈໃສ່ການເຄື່ອນໄຫວ ຂອງ ພວກເຮົາ, ຖ້າຫາກເສຍຄວາມລັບ ພວກເຂົາກໍ່ສົ່ງທະຫານມາເຮັດການກວາດລ້າງ. ບາງ ເທື່ອທະຫານສັດຕູກໍ່ມາຕັ້ງຢູ່ບ້ານອ້ອມແອ້ມບ່ອນຢູ່ຂອງພວກເຮົາເປັນກຳນົດຫຼາຍມື້, ເຮັດໃຫ້ ພວກເຮົາໄປເອົາເຂົ້າ ແລະ ອາຫານມາກິນບໍ່ໄດ້, ພວກເຮົາຈຳເປັນຕ້ອງອົດອາຫານ ຫຼື ກິນໝາກໄມ້ ແລະ ໃບໄມ້ຕາງເຂົ້າເຖິງ 3 ຫຼື 4 ມື້ ຫຼືບາງທີກໍ່ຮອດອາທິດໜຶ່ງກໍ່ມີ. ແຕ່ວ່າ ຈິດໃຈຂອງພວກເຮົາຫາກຍັງມ່ວນຊື່ນເບີກບານຢູ່ ເພາະວ່າເຫັນປະຊາຊົນ ຮ່ວມມືນຳພວກ ເຮົານັບມື້ນັບຫຼາຍ ແລະ ແຂງແຮງຂຶ້ນຊຸກໄຊ.

ພະນັກງານພວກເຮົາໄດ້ນຳພາປະຊາຊົນ ແລະ ທະຫານລາດກອງຫຼອນດັກສະກັດຕີສັດຕູ ໄດ້ຮັບໄຊຊະນະຫຼາຍເທື່ອ ກໍ່ເຮັດໃຫ້ປະຊາຊົນ ແລະ ທະຫານລາດກອງຫຼອນເຫຼົ່ານັ້ນ ກ້າ ຫານ, ຫ້າວຫັນ ແລະ ເຊື່ອໝັ້ນໃນການນຳ ແລະ ເຊື່ອໝັ້ນໃນຄວາມສາມາດ ຂອງຕົນເອງ ຫຼາຍຂຶ້ນຕື່ມ. ພະນັກງານ ແລະ ກອງທະຫານອາສາສະໝັກຫວຽດນາມມາຊ່ວຍກໍ່ຍິ່ງເຮັດໃຫ້ ກຳລັງປະຕິວັດຂອງພວກເຮົາເຂັ້ມແຂງຂຶ້ນຕື່ມ : ທ່າທີ ແລະຄຸນສົມບັດອັນດີຂອງພະນັກງານ ແລະ ທະຫານອາສາສະໝັກຫວຽດນາມໄດ້ເຮັດໃຫ້ພະນັກງານ, ທະຫານ ແລະ ປະຊາຊົນ ລາວຮັກແພງຂະເຈົ້າ ແລະ ຍ້ອນອັນນັ້ນ ຈຶ່ງເຮັດໃຫ້ຄວາມສາມັກຄີລາວ-ຫວຽດນາມທີ່ພ້ອມ ກັນສ້າງຂຶ້ນດ້ວຍເລືອດເນື້ອນັ້ນຍິ່ງໜັກແໜ້ນກວ່າເກົ່າຂຶ້ນຊຸກໄຊ, ເຊິ່ງເປັນຕົ້ນເຫດເຮັດໃຫ້ ໄຊຊະນະຂອງພວກເຮົາໃນຕະຫຼອດປີ 1952 ນັ້ນຂະຫຍາຍຕົວກວ້າງຂວາງອອກຢ່າງບໍ່ຢຸດ- ຢັ້ງ, ເຮັດໃຫ້ສັດຕູຈຳຕ້ອງຫົດຕົວໄປຢູ່ແຕ່ໃນຕົວເມືອງໃຫຍ່, ປ່ອຍໃຫ້ພວກເຮົາ ໄດ້ເປັນ ເຈົ້າຊົນນະບົດນັບມື້ນັບກວ້າງ ແລະ ແຂງແຮງຂຶ້ນເລື້ອຍໆ. ສິ່ງທີ່ກ່າວມານັ້ນ ມັນເຮັດໃຫ້

ເຮົາຮູ້ສຶກດີໃຈຫຼາຍ ເພາະເຮົາເຫັນວ່າເຮົາມີຄວາມສາມາດນຳເອົາທິດສະດີປະຕິວັດ ແລະ ແນວທາງຂອງພັກທີ່ໄດ້ຮ່ຳຮຽນມານັ້ນ ມາປະຕິບັດເຂົ້າໃນວຽກງານຕົວຈິງ ຢ່າງໄດ້ຜົນດີ, ເຮັດໃຫ້ເຂດທີ່ເຮົາຮັບຜິດຊອບນັ້ນກ້າວໜ້າຂະຫຍາຍຕົວຂຶ້ນຊາກັນກັບເຂດອື່ນໃນທົ່ວປະເທດ.

ມາຮອດຕົ້ນປີ 1953, ການຊິງຊາກຳລັງລະຫວ່າງພວກເຮົາກັບສັດຕູ ເປັນພຽງແຕ່ລ້ຳລຶດກັນ. ພວກເຮົາລື່ນສັດຕູທາງດ້ານການເມືອງ ແລະ ກຳລັງປະຊາຊົນ. ສັດຕູລື່ນເຮົາທາງດ້ານກອງທະຫານຫຼວງ ແລະ ທາງດ້ານອາວຸດ. ສູນກາງພັກຕົກລົງໃຫ້ພວກເຮົາຕີສັດຕູເປັນຂັ້ນຮີບໃຫຍ່ ເພື່ອສົມທົບກັບແຂວງອື່ນ, ກັບຫວຽດນາມ ແລະ ກຳປູເຈຍ. ລະດູແລ້ງປີນັ້ນ, ໃນເວລາທີ່ແຂວງອື່ນເປີດສາກຕີສັດຕູຈົນປົດປ່ອຍແຂວງຜົ້ງສາລີ, ຫົວພັນ ແລະ ອັດຕະປື, ພວກເຮົາກໍ່ຕີສັດຕູປົດປ່ອຍໜອງແຮດ, ຍອດຮວາຍ, ບ້ານບານ, ສົງໄຂ ແລະ ຊຽງຂວາງ ແຕ່ພວກເຮົາບໍ່ສາມາດຕີປົດປ່ອຍຄົງແກແລນທີ່ຄົນມັກເອີ້ນວ່າທົ່ງໄຫຫີນນັ້ນ, ເພາະວ່າສັດຕູໄປໂຮມກັນຢູ່ຫັ້ນເປັນຈຳນວນຫຼາຍ, ມີທັງເຮືອບິນ ແລະ ອາວຸດທຸກຊະນິດ. ຫຼັງຈາກຂຸດຂຸມກຳບັງລຽບຕາມແຄມນ້ຳຫງຳ ແລະ ພູບົ້ເພື່ອສົ່ງໃບປິວໄປຮຽກເອີ້ນເອົາທະຫານຫຸ່ນຂອງສັດຕູອອກມາຍອມໄດ້ຈຳນວນໜຶ່ງແລ້ວ, ພວກເຮົາໄດ້ອອກໄປຕາມເສັ້ນທາງນ້ອຍຜ່ານພູບົ້, ດົງດານ ເຂົ້າໄປພັກຢູ່ຄົງເພາະ ບ່ອນທີ່ເປັນສວນກົກຊາທິດລອງຂອງສັດຕູ ແລ້ວໄດ້ເອົາທະຫານຈຳນວນໜຶ່ງໄປນຳ ຂຶ້ນໄປຕາມເປັນພູແຄເພື່ອຢ້ຽມຢາມອົບຮົມປະຊາຊົນ ທີ່ອົບພະຍົບຂຶ້ນໄປລີ້ຢູ່ກາງປ່າ ; ປະຊາຊົນເຫຼົ່ານັ້ນສ່ວນຫຼາຍແມ່ນພີ່ນ້ອງ ຫຼື ຄົນລື້ງເຄີຍຂອງເຮົາ ; ເຮົາໄດ້ຊີ້ແຈງອະທິບາຍໃຫ້ຂະເຈົ້າເຂົ້າໃຈວ່າພວກເຮົາເຂົ້າມາເທື່ອນີ້ ບໍ່ແມ່ນເພື່ອເຮັດຮ້າຍໃສ່ປະຊາຊົນ, ແຕ່ຫາກແມ່ນເພື່ອຕີພວກລ່າເມືອງຂຶ້ນຝະລັ່ງ ທີ່ມາຄອບຄອງເອົາບ້ານເມືອງເປັນເມືອງຂຶ້ນ ແລະ ກົດຂີ່ຂູດຮີດປະຊາຊົນລາວເຮົາ ; ເຮົາໄດ້ຢັ້ງຢືນຢ່າງໜັກແໜ້ນວ່າໃນການຕີກັບປະຊາຊົນລາວເທື່ອນີ້ ພວກຝະລັ່ງຕ້ອງປະລາໄຊ ເພາະວ່າພວກເຂົາປະລາໄຊໃຫ້ເຢລະມັນ ຢູ່ໃນກະໂຕປະເທດຝະລັ່ງເອງ ແລະ ໄດ້ປະລາໄຊໃຫ້ຍີ່ປຸ່ນຢູ່ອິນດູຈີນ ເຮັດໃຫ້ພວກເຂົາອ່ອນເພຍ ແລະ ປະລາໄຊຢູ່ປະເທດຫວຽດນາມ, ພວກເຮົາຮ່ວມມືຢ່າງແໜ້ນແຟ້ນກັບປະຊາຊົນຫວຽດນາມ ແລະ ກຳປູເຈຍ ພວກເຮົາຈະຕ້ອງມີໄຊຊະນະຢ່າງແນ່ນອນ, ຂໍແຕ່ໃຫ້ປະຊາຊົນລາວເຮົາສາມັກຄີກັນຢ່າງໜັກແໜ້ນ ລະຫວ່າງທຸກຊົນຊາດຊົນເຜົ່າ ແຕ່ພາກເໜືອຮອດພາກໃຕ້ ແລະ ພ້ອມກັນເຮັດການຕໍ່ສູ້ພວກລ່າເມືອງຂຶ້ນຝະລັ່ງ ຕາມຄວາມສາມາດຂອງໃຜລາວ ພາຍໃຕ້ການນຳພາຂອງແນວລາວອິດສະຫຼະ. ແນ່ນອນ ພວກສັດຕູຈະກໍ່ຄວາມຫຍຸ້ງຍາກໃຫ້ພວກເຮົາຫຼາຍຢ່າງເປັນເວລາຍາວນານສົມຄວນ, ແຕ່ທ້າຍສຸດ ຕ້ອງແມ່ນພວກເຮົາມີໄຊຊະນະ, ພວກລ່າເມືອງຂຶ້ນຝະລັ່ງຕ້ອງປະລາໄຊ, ຕ້ອງຖອນໜີຈາກປະເທດເຮົາ ເຮັດໃຫ້ປະເທດລາວທັງໝົດເປັນເອກະລາດ, ໃຫ້ປະຊາຊົນລາວເຮົາທັງມວນ ເປັນເຈົ້າປະເທດຊາດຂອງຕົນຢ່າງສົມບູນ. ປະຊາຊົນທັງໝົດພ້ອມກັນດີໃຈທີ່ໄດ້ເຫັນເຮົາ ແລະ ຢາກໃຫ້

ພວກເຮົາປະຈຳຢູ່ນຳເພື່ອປ້ອງກັນເອົາພວກເຂົາ. ເຮົາໄດ້ຕອບວ່າ ສຳລັບເທື່ອນີ້ພວກເຮົາຢູ່ນຳບໍ່ທັນໄດ້ ເພາະວ່າສັດຕູຍັງຢູ່ຄັງພາແລນ ແລະ ພີ່ນ້ອງປະຊາຊົນຍັງບໍ່ທັນພ້ອມກັນລຸກຂຶ້ນຮ່ວມມືກັບພວກເຮົາເທື່ອ, ເຮົາຈະມາຢາມພີ່ນ້ອງທຸກປີ ແລະ ໃນສອງສາມປີທາງໜ້ານີ້ ຫຼັງຈາກປົດປ່ອຍທົ່ວປະເທດແລ້ວ ພວກເຮົາຈະມາຢູ່ນຳພີ່ນ້ອງແທ້, ວ່າແລ້ວພວກເຮົາກໍ່ລາໜີລົງມາຄັງເພາະ.

ໃນຕອນຄ່ຳມື້ນັ້ນເອງ ສູນກາງໄດ້ຕີສາຍມາບອກເຮົາວ່າ ສັດຕູຕິດຕາມເຮົາຢ່າງໃກ້ຊິດທີ່ສຸດ ແລະ ພວກເຂົາໄດ້ສັ່ງໃຫ້ນັກບິນມາຖິ້ມລະເບີດໃສ່ບ່ອນພັກເຊົາຂອງພວກເຮົາ. ຫຼັງຈາກກິນເຂົ້າແລງແລ້ວ ພວກເຮົາໄດ້ຍົກຍ້າຍຈາກຄັງເພາະໄປນອນບ້ານແຊຟ້າ. ຕອນເຊົ້າມື້ລຸນມາສັດຕູໄດ້ມາຖິ້ມລະເບີດລົງທຳລາຍເຮືອນ ແລະ ປ່າໄມ້ຢູ່ອ້ອມແອ້ມຄັງເພາະນັ້ນ ມຸ່ນທະລາຍໄປໝົດ. ຕອນບ່າຍມື້ດຽວກັນນັ້ນ ພວກເຂົາກໍ່ມາຖິ້ມລະເບີດໃສ່ບ້ານຫູມ ທີ່ຢູ່ຫ່າງຈາກບ້ານແຊຟ້າ 3 ກິໂລແມດ. ກາງຄືນມື້ນັ້ນ ພວກເຮົາອອກຈາກບ້ານແຊຟ້າ ໄປຮອດເມືອງພ່າງເກືອບແຈ້ງ. ເຮົາໄດ້ຊວນພະສົງໄປລີ້ຢູ່ກາງປ່ານຳພວກເຮົາ, ແຕ່ເພິ່ນບໍ່ຍອມໄປໂດຍອ້າງວ່າຝະລັ່ງບໍ່ເຮັດຫຍັງໃສ່ພະສົງ ແລະ ວັດວາອາຣາມ. ພວກເພິ່ນບໍ່ໄປນຳແລ້ວກໍ່ຢ່າ, ພວກເຮົາພ້ອມທັງທະຫານໝວດໜຶ່ງໄດ້ພາກັນຂຶ້ນໄປພັກຜ່ອນຢູ່ຫົວຫ້ວຍເທິງພູ ໄກຈາກນັ້ນ 5 ກິໂລແມດ. ມື້ນັ້ນເວລາ 10 ໂມງ ເຮືອບິນສັດຕູໄດ້ມາຮອດ ແລະ ວົນອ້ອມບ້ານເມືອງພ່າງ ; ພວກພະສົງສາມະເນນໄດ້ພາກັນເອົາຜ້າເຫຼືອງອອກມາຕາກໄວ້ແຄມຮົ້ວເພື່ອສະແດງວ່າບ່ອນນັ້ນແມ່ນວັດ. ສັດຕູໄດ້ຖິ້ມລະເບີດລົງໃສ່ບ້ານເມືອງພ່າງ 10 ລູກ, ໃນນັ້ນຕົກຖືກວັດ 4 ລູກ ເຮັດໃຫ້ພະສົງຕາຍໄປໜຶ່ງອົງ ແລະ ສາມະເນນສອງຕົນ. ພໍຕາເວັນຕົກແລ້ວພວກເຮົາໄດ້ພາກັນລົງມາ, ເຫັນວັດ ແລະ ກຸດຕິມຸ່ນມິນໄຟເປັນເທົ່າຖ່ານໝົດ, ບໍ່ຈົກວ່າພະສົງສາມະເນນ, ບໍ່ຈົກວ່າປະຊາຊົນຮ້ອງໄຫ້ຟົດສະນັ່ນຢູ່ເຕັມກາງວັດ ແລະ ເຂົ້າໃຈດີແລ້ວວ່າ ສັດຕູຂອງຊາດກໍ່ແມ່ນສັດຕູຂອງພະສົງສາມະເນນ ແລະ ສາສະໜາພຸດເຊັ່ນດຽວກັນ.

ໃນກາງຄືນນັ້ນ ຫຼັງຈາກເອົາເງິນໂມທະນາກິນທານຫາຜູ້ທີ່ຕາຍໄປນັ້ນແລ້ວ ພວກເຮົາໄດ້ອອກເດີນທາງໄປເມືອງງານ. ໄປຮອດເມືອງງານພໍດີແຈ້ງ ພວກເຮົາໄດ້ພາກັນຂຶ້ນ ໄປພັກເຊົາຢູ່ໃນປ່າໄມ້ຫົວພູເຕີງ, ໄກຈາກບ້ານຕີນເຕີງປະມານ 5 ກິໂລແມດ, ແລະ ພັກຢູ່ທີ່ນັ້ນ 3 ມື້ ໂດຍໃຫ້ອ້າຍນ້ອງພະນັກງານລົງໄປຕິດຕໍ່ກັບຫຼັກແຫຼ່ງແກ່ນສານ ເພື່ອຊອກຊື້ອາຫານມາກິນ. ມີແມ່ເຖົ້າຜູ້ໜຶ່ງຢູ່ບ້ານຕີນເຕີງຮູ້ວ່າ ເຮົາມາພັກເຊົາຢູ່ກາງປ່າໃກ້ກັບບ້ານນັ້ນ ກໍ່ເອົາເຂົ້າສຸກ, ເຂົ້າສານ, ປາເຄັມ ແລະ ອາຫານຈຳເພາະເມືອງງານມາໃຫ້ເຮົາ ແລະ ພັກຢູ່ລົມນຳເຮົາຈົນໝົດມື້, ສະແດງຄວາມຄຽດແຄ້ນສັດຕູ ແລະ ເຊື່ອໝັ້ນໄຊຊະນະຂອງພວກເຮົາ. ຕອນບ່າຍມື້ນັ້ນ ສັດຕູໄດ້ເອົາເຮືອບິນມາຖິ້ມລະເບີດໃສ່ສອງບ້ານ ຂອງເມືອງງານ ໂດຍບິນວຽນວົນຢູ່ຮອດສອງຊົ່ວໂມງຈຶ່ງໜີກັບເມືອ. ມື້ລຸນມາສັດຕູໄດ້ເອົາເຮືອບິນ ໄປຖິ້ມລະ

ເບີດໃສ່ບ້ານທາງທາງໄປເມືອງໂນ້ທັງເຊົ້າທັງແລງ, ຄືຊິແມ່ນພວກເຂົາຄິດວ່າ ພວກເຮົາຈະອອກເມືອງງານໄປເມືອງໂນ້ໃນມື້ນັ້ນ. ແຕ່ວ່າ 3 ມື້ຫຼັງຈາກນັ້ນ ພວກເຮົາຈິ່ງອອກຈາກເມືອງງານໄປນອນກາງປ່າ, ຄືນລູນມາພວກເຮົາຈິ່ງອອກເດີນທາງຜ່ານເມືອງໂນ້ ຂຶ້ນໄປພັກຢູ່ກາງປ່າຖ້ຳຄີບ. ພວກເຮົາໄດ້ພັກຢູ່ທີ່ນັ້ນ 3 ອາທິດເພື່ອເປີດການອົບຮົມພະນັກງານ. ໃນທີ່ນັ້ນແມ່ນປະຊາຊົນເຜົ່າມົ້ງມາຊ່ວຍປຸກສະໂນສອນກັບເຮືອນນອນໃຫ້ ແລະ ເອົາເຂົ້າພ້ອມທັງສະບຽງອາຫານມາຮັບໃຊ້ກອງປະຊຸມຈົນສຳເລັດ. ຫຼັງຈາກຈົບການອົບຮົມ ແລະແຈກພະນັກງານລົງໄປແຕ່ລະທ້ອງຖິ່ນແລ້ວ ເຮົາກໍ່ກັບຄືນເມືອລາຍງານຜົນງານຕໍ່ສູນກາງ.

ແຕ່ວ່າການໂຈມຕີປົດປ່ອຍແຂວງຊຽງຂວາງເທື່ອນີ້ ເປັນພຽງແຕ່ການລອງແຮງກັບສັດຕູເບິ່ງຊື່ງ. ພວກເຮົາຕີປົດປ່ອຍແລ້ວ ພວກເຮົາກໍ່ຖອນກອງທະຫານຫຼວງກັບຄືນເມືອ, ປະແຕ່ກອງທະຫານທ້ອງຖິ່ນ ແລະ ທະຫານລາດກອງຫຼອນຢູ່ ເພື່ອປົກປັກຮັກສາເຂດປົດປ່ອຍເທົ່າທີ່ຈະຮັກສາໄດ້. ແຕ່ວ່າ ຫຼັງຈາກພວກເຮົາຖອນໜີໄປແລ້ວ ສັດຕູກໍ່ກັບຄືນມາຍຶດຄອງ ບ້ານເມືອງຄືນ. ເຂດທີ່ກອງທະຫານທ້ອງຖິ່ນ ແລະ ທະຫານລາດກອງຫຼອນຂອງພວກເຮົາຮັກສານັ້ນ ກໍ່ຕ້ອງຫົດແຄບເຂົ້າໄປຢູ່ແຕ່ເຂດພູດອຍຫ່າງໄກຈາກທາງຫຼວງ. ພວກສັດຕູກັບຄືນມາກໍ່ໄດ້ຈັບເອົາປະຊາຊົນຜູ້ທີ່ໄດ້ຮ່ວມມືກັບພວກເຮົານັ້ນ ໄປກັກຂັງລົງໂທດ ຫຼື ຂ້າຖິ້ມກໍ່ຫຼາຍຄົນ, ເຮັດໃຫ້ພວກເຮົາມີຄວາມສົມເພດເວທະນາ ແລະ ຄຽດແຄ້ນຫຼາຍທີ່ສຸດ, ແຕ່ບໍ່ຊ່າງຈະເຮັດແນວໃດ ເພາະວ່າພວກເຮົາຍັງບໍ່ທັນມີກຳລັງພຽງພໍ ເພື່ອປົກປັກຮັກສາເຂດປົດປ່ອຍໄວ້ໄດ້. ພີ່ນ້ອງປະຊາຊົນຜູ້ຂັດຂ້ອງ ແລະ ເສຍໃຈໃຫ້ພວກເຮົາກໍ່ຄົງຈະມີ, ແຕ່ພວກເຮົາເຊື່ອວ່າພາຍຫຼັງມາຂະເຈົ້າຄົງຈະເຂົ້າໃຈພວກເຮົາດີ ເພາະວ່າເວລາພວກເຮົາຜ່ານໄປ ບ່ອນໃດພວກເຮົາກໍ່ໄດ້ຖືໂອກາດນັ້ນຊີ້ແຈງອະທິບາຍໃຫ້ພີ່ນ້ອງຮ່ວມຊາດເຂົ້າໃຈວ່າ ພວກເຮົາປະຕິບັດໄປຍ້ອນຄວາມຮັກຊາດ, ຮັກປະຊາຊົນ, ຮັກຄວາມເປັນເອກະລາດ, ຄວາມຈະເລີນກ້າວໜ້າຂອງບ້ານເມືອງ ແລະ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບຂອງໂລກ. ພວກເຮົາໄດ້ເວົ້າແຈ້ງວ່າ ໂລກເວລານີ້ໄດ້ເລີ່ມເຂົ້າສູ່ຍຸກສະໄໝແຫ່ງຄວາມຍຸດຕິທຳ, ສະໄໝທີ່ລະບອບເມືອງຂຶ້ນຕ້ອງພັງທະລາຍ ແລະ ສະໄໝທີ່ຄົນປະເທດໃດຈະຕ້ອງເປັນເຈົ້າປົກຄອງປະເທດຊາດຂອງຕົນ ແລະ ສາມັກຄີຮັກແພງກັນ, ພ້ອມກັນສ້າງບ້ານແປງເມືອງ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງຕົນ ດ້ານວັດຖຸ ວັດທະນະທຳ ແລະ ຈິດໃຈໃຫ້ນັບມື້ນັບດີຂຶ້ນ.

ຕົ້ນປີ 1954 ເຮົາໄດ້ໄປນຳກອງທະຫານ ເພື່ອປົດປ່ອຍແຂວງຊຽງຂວາງອີກ. ຄາວນີ້ເຮົາກໍ່ໄດ້ພົບປະຊາຊົນຊຽງຂວາງທີ່ໄປໂຮມກັນຢູ່ຖ້ຳກາບ ແລະ ຖ້ຳມາດ. ທຸກຄົນມີຄວາມມ່ວນຊື່ນເບີກບານເມື່ອໄດ້ພົບເຮົາ, ແຕ່ກໍ່ມີບາງຄົນທີ່ລົງເລີຍກັນນັ້ນເວົ້າໃສ່ເຮົາວ່າ ມາຊຽງຂວາງເທື່ອໃດ ກໍ່ເອົາແຕ່ເສິກມາຍາມໃດຈຶ່ງຈະມາຜູກດອງເພື່ອນມາຢູ່ນຳກັນ. ເຮົາຖືວ່າເປັນຄວາມເວົ້າຢອກກັນຫຼິ້ນ ແລະ ຕອບວ່າ ເຮົາຈຳເປັນຕ້ອງເອົາກອງທະຫານມາເພື່ອຂັບ

ໄລ່ສັດຕູອອກຈາກແຂວງ, ເມື່ອໃດປະຊາຊົນຊຽງຂວາງ ພ້ອມກັນລຸກຂຶ້ນຕີສັດຕູໃຫ້ໜີໄປໝົດ
ເຮົາຈຶ່ງຈະມາຢູ່ນຳ.

ຫຼັງຈາກປົດປ່ອຍເມືອງຊຽງຂວາງແລ້ວ ເຮົາໄດ້ລົງໄປນຳກອງທະຫານອີກເພື່ອປົດປ່ອຍ
ຕົວເມືອງທ່າແຂກ ແລະ ເຄິ່ງໜຶ່ງຂອງແຂວງສະຫວັນນະເຂດ. ພວກເຮົາໄດ້ຜ່ານດິນຫວຽດ
ນາມໄປຕັ້ງແຕ່ແຂວງເງ້ອານ ລົງໄປຟູກຕົດ ແລ້ວເຂົ້າໄປບ້ານນາພາວ, ເມືອງມະຫາໄຊ,
ປົດປ່ອຍຕົວເມືອງທ່າແຂກ ແລ້ວກັບຂຶ້ນມາຕາມນ້ຳເຊນອຍ, ເຊບັ້ງໄຟ, ຜ່ານໄປນ້ຳໂມນາ
ກະປໍ, ບ້ານຫ້ວຍຫອຍ, ທ່າພະໂຈມ, ເມືອງແສນ ເມືອງຈັນ ແລະ ເມືອງພີນ ພາຍໃຕ້
ຫ່າລູກລະເບີດ ແລະ ລູກປືນກົນທີ່ສັດຕູຍິງລົງມາຈາກເຮືອບິນ. ແຕ່ພວກເຮົາກໍ່ຮູ້ສຶກຊົມຊື່ນ
ເບີກບານຍ້ອນປະຊາຊົນທຸກທ້ອງຖິ່ນຕ້ອນຮັບພວກເຮົາດ້ວຍຄວາມຮັກແພງສະໜິດສະໜົມ ເປັນ
ຢ່າງດີ. ພວກເຮົາໄປຮອດເມືອງພີນແມ່ນເດືອນພຶດສະພາ, ອາກາດອົບເອົ້າ ເພາະວ່າຟ້າ
ກຽມຈະສົ່ງຝົນລົງໂຮຍຮ່ຳພື້ນແຜ່ນດິນ ທີ່ຫາກໍ່ປົດປ່ອຍໃໝ່. ສາມມື້ຫຼັງຈາກພວກເຮົາໄປຮອດ
ເມືອງພີນ, ເຮົາໄດ້ຮັບໂທລະເລກຈາກສູນກາງວ່າ ກອງທະຫານຫວຽດນາມ ໄດ້ຮັບໄຊຊະ
ນະໃຫຍ່ທີ່ດຽນບຽນຟູ, ເຮັດໃຫ້ພວກລ່າເມືອງຂຶ້ນຝະລັ່ງ ຍອມໄປຮ່ວມກອງປະຊຸມເຊີແນວ
ກ່ຽວກັບອິນດູຈີນ. ຂ່າວດີອັນນີ້ເຮັດໃຫ້ເຮົາມ່ວນຊື່ນເບີກບານຫຼາຍ ແລະເຊື່ອໝັ້ນວ່າປະເທດ
ຊາດຂອງເຮົາແນວໃດກໍ່ຈະໄດ້ຖືກປົດປ່ອຍມາເປັນເອກະລາດ. ທ້າຍເດືອນກໍລະກົດປີ1954
ກໍ່ມີຂ່າວມາວ່າ ພວກລ່າເມືອງຂຶ້ນຝະລັ່ງຍອມເຊັນສັນຍາເຊີແນວແລ້ວ, ຍອມຖອນກອງທະ
ຫານຂອງພວກເຂົາທັງໝົດ ອອກຈາກອິນດູຈີນ ແລະຍອມຮັບຮູ້ເອກະລາດ, ອຳນາດອະທິປະ
ໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງປະເທດຫວຽດນາມ, ລາວ ແລະກຳປູເຈຍ. ຂ່າວ
ອັນນີ້ຍິ່ງເຮັດໃຫ້ເຮົາຊົມຊື່ນຍິນດີຂຶ້ນຕື່ມອີກ ເພາະເຫັນວ່າ ປະເທດນ້ອຍ ແລະ ດ້ອຍພັດທະ
ນາຄືປະເທດລາວເຮົາທີ່ເລີ່ມຕົ້ນເຮັດການປະຕິວັດ ດ້ວຍສອງຝາມືເປົ່າ ກໍ່ສາມາດຕີຊະນະ
ພວກລ່າເມືອງຂຶ້ນຝະລັ່ງ ທີ່ເປັນນາຍທຶນຈັກກະພັດໃຫຍ່ໂຕໜຶ່ງນັ້ນໄດ້. ນັ້ນແມ່ນໄຊຊະນະ
ອັນໃຫຍ່ຫຼວງງົດງາມ ແລະ ເປັນກຽດອັນສູງທີ່ສຸດໃຫ້ແກ່ພວກເຮົາ, ມັນແມ່ນຜົນຂອງຄວາມ
ສາມັກຄີອັນໜັ້ນແຟ້ນລະຫວ່າງທຸກຊົນຊາດຊົນເຜົ່າໃນລາວ, ມັນແມ່ນຜົນຂອງຄວາມສາມັກຄີ
ແບບພິເສດທີ່ໄດ້ຜູກພັນດ້ວຍເລືອດເນື້ອ ແລະ ຊີວິດລະຫວ່າງລາວ, ຫວຽດນາມ ແລະກຳ
ປູເຈຍ, ທັງແມ່ນຜົນຂອງຄວາມສາມັກຄີໜັ້ນແຟ້ນ ແລະ ຄວາມຮ່ວມມືຮອບດ້ານ ກັບສະຫະ
ພາບໂຊວຽດ ແລະ ປະເທດສັງຄົມນິຍົມອື່ນໆທີ່ໄດ້ໃຫ້ຄວາມຊ່ວຍເຫຼືອອັນໃຫຍ່ຫຼວງ ແລະສັກ
ສິດແກ່ການປະຕິວັດພວກເຮົາ. ໄຊຊະນະຂອງພວກເຮົານີ້ ມັນກໍ່ແມ່ນໄຊຊະນະລວມຂອງປະ
ຊາຊົນບັນດາປະເທດ ທີ່ຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ
ຄວາມກ້າວໜ້າທາງສັງຄົມທີ່ໄດ້ສະໜັບສະໜູນການຕໍ່ສູ້ກູ້ຊາດຂອງປະຊາຊົນລາວຕະຫຼອດມາ.

ສັນຍາເຊີແນວປີ 1954 ນັ້ນ ໄດ້ບົ່ງໄວ້ວ່າ ຝ່າຍກຳລັງປະເທດລາວ (ແນວລາວຮັກ

ຊາດ) ໄດ້ມີສອງແຂວງເຕົ້າໂຮມຄື ແຂວງຫົວພັນ ແລະ ຜົ້ງສາລີ ໂດຍມີແຖບທາງໄປມາຫາກັນຜ່ານແຂວງຫຼວງພະບາງ ບ່ອນຕິດກັບຊາຍແດນຫວຽດນາມ ແລະ ພ້ອມກັນກັບຝ່າຍລາຊະອານາຈັກເຮັດການເລືອກຕັ້ງຮ່ວມກັນ ເພື່ອລວມກັນເຂົ້າ ໃນສະພາຜູ້ແທນລາດສະດອນ ແລະ ລັດຖະບານໃຫ່ພາຍໃຕ້ການດູແລ ແລະ ຮັບປະກັນຄວາມປອດໄພ ຈາກຄະນະກັມາທິການສາກົນ ອັນປະກອບດ້ວຍຄະນະຜູ້ແທນປະເທດອິນເດຍທີ່ເປັນປະທານ, ຄະນະຜູ້ແທນປະເທດການາດາ ທີ່ມີໜ້າທີ່ກວດກາການປະຕິບັດສັນຍາເຈນີວ. ປະຕິບັດຕາມສັນຍາເຈນີວນັ້ນ, ຕັ້ງແຕ່ເດືອນກໍລະກົດຮອດເດືອນທັນວາປີນັ້ນ ພວກເຮົາໄດ້ຕ້ອນຮັບເອົາພວກພະນັກງານແລະທະຫານທີ່ພາກັນອອກຈາກ 10 ແຂວງອື່ນຂຶ້ນມາຢູ່ເຂດເຕົ້າໂຮມ ຊາມຊາຖາການລວມຄົນລາວເຂົ້າເປັນອັນດຽວກັນ ໂດຍສົນຕອບທີ່ສົມດັ່ງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວທົ່ວທັງຊາດ.

VIII. ຈັກກະພັດອາເມລິກາແຊກແຊງຣຸກຮານລາວ

ຫຼັງຈາກໄດ້ຮັບໂທລະເລກຂອງລັດຖະບານລາຊະອານາຈັກ ອັນແມ່ນກະຕ່າຍໂດນຊະໂສລິດເປັນນາຍົກລັດຖະມົນຕີ ວ່າເຫັນດີຕາມຄວາມສະເໜີຂອງຝ່າຍປະເທດລາວ ແລະເຊີນຄະນະຜູ້ແທນຝ່າຍເຮົາໄປເຈລະຈາກັນຢູ່ທີ່ທົ່ງໄຫຫີນ (ຕົງພາແລນ) ບ່ອນພວກເຂົາເອົາເຮັດສະໜາມບິນ ແລະທີ່ຕັ້ງກອງທະຫານຂອງພວກເຂົານັ້ນແລ້ວ, ເຮົາໄດ້ຖືກແຕ່ງຕັ້ງເປັນຫົວໜ້າຄະນະຜູ້ແທນຝ່າຍເຮົາໄປຮ່ວມໃນການເຈລະຈາ ແລະ ໄປຮອດທົ່ງໄຫຫີນໃນວັນທີ 29 ທັນວາ 1954 ຫຼັງຈາກຄະນະຜູ້ແທນພວກເຮົາໄປຮອດທົ່ງໄຫຫີນອາທິດໜຶ່ງ ຄະນະຜູ້ແທນຝ່າຍລາຊະອານາຈັກອັນມີທ່ານພໍທອງດີ ເປັນຫົວໜ້າ, ພູມີໜໍ່ສະຫວັນ, ສຸກັນ ວິໄລສານ, ສີສຸກ ນະຈຳປາສັກ, ອິນແປງ ສູລິຍະໄທ, ບົວວັນ ນໍລະສິງ ເຊິ່ງແມ່ນພວກປິ່ນຍາຕິຝ່າຍກົດໝາຍມາຈາກປະເທດຝະລັ່ງ, ໂຮງຮຽນນາຍຮ້ອຍທະຫານ ແລະ ໂຮງຮຽນກົດໝາຍຢູ່ລາວ ເປັນກຳມະການ, ກໍ່ມາຮອດທົ່ງໄຫຫີນ. ເຮົາ ແລະ ທ່ານພໍທອງດີຕ່າງກໍດີໃຈທີ່ໄດ້ພົບກັນເພາະວ່າພວກເຮົາທັງສອງເຄີຍໄດ້ເປັນເພື່ອນເກົ່າ ເຮັດວຽກນຳກັນແຕ່ຄາວຢູ່ຊຽງຂວາງ ແລະ ຊຳເໜືອ. ວັນທີ 6 ມັງກອນ 1955 ທັງສອງຝ່າຍໄດ້ລົ້ມຕົ້ນເຈລະຈາກັນ. ມື້ທຳອິດແມ່ນມີຕ່າງຝ່າຍຕ່າງອ່ານຄຳປາໄສຂອງຕົນ ທີ່ສະແດງໃຫ້ເຫັນຈຸດປະສົງຂອງແຕ່ລະຝ່າຍ ໃນການມາຮ່ວມການເຈລະຈານັ້ນ. ຈຸດປະສົງຂອງຝ່າຍປະເທດລາວແມ່ນສະແດງຄວາມດີໃຈໃນການທີ່ພວກຝະລັ່ງຍອມຖອນໜີຈາກບ້ານເມືອງລາວ, ປ່ອຍໃຫ້ປະເທດລາວເປັນເອກະລາດ, ມີອຳນາດອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນ, ສ້າງເງື່ອນໄຂໃຫ້ຄົນລາວ ທັງສອງຝ່າຍໂຮມເຂົ້າເປັນຄົນລາວອັນດຽວກັນ ແລະ ພ້ອມກັນສ້າງບ້ານແປງເມືອງໃຫ້ຮຸ່ງເຮືອງຈະເລີນ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບຂອງໂລກ. ຄຳປາໄສຂອງຝ່າຍລາ

ຊະອານາຈັກເວົ້າວ່າ ຍິນດີທີ່ເຫັນຄະນະຜູ້ແທນຝ່າຍປະເທດລາວມາຮ່ວມເຈລະຈາ ຫວັງວ່າການເຈລະຈາຈະໄດ້ຮັບຜົນສຳເລັດເປັນຢ່າງດີ ເພາະວ່າຝ່າຍລາຊະອານາຈັກພ້ອມແລ້ວ ທີ່ຈະນິລະໂທສະກຳໃຫ້ແກ່ຝ່າຍປະເທດລາວ ເພື່ອໃຫ້ຝ່າຍປະເທດລາວໄດ້ເຂົ້າຮ່ວມວົງຄະນາຍາດຂອງຊາດລາວ ຕາມຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວທັງມວນ.

ເມື່ອຖົກຖຽງກັນເຂົ້າຕົວຈິງ ພວກເຮົາເຫັນວ່າຫຼັກພົ້ນຂອງແຕ່ລະຝ່າຍມີຫຼາຍບ່ອນໄກກັນ; ຝ່າຍວຽງຈັນບໍ່ຍອມຮັບຮູ້ລັດຖະບານລາວຕໍ່ຕ້ານ, ຖືວ່າພວກເຮົາຕີພວກລ່າເມືອງຂຶ້ນຝະລັ່ງ ເພື່ອປົດປ່ອຍຊາດແມ່ນຜິດ, ຕ້ອງຂໍໃຫ້ລັດຖະບານວຽງຈັນທີ່ເປັນລູກມືຝະລັ່ງ ນິລະໂທສະກຳໃຫ້ແລ້ວຈຶ່ງຈະເຂົ້າລວມເປັນປະຊາຊົນລາວໄດ້. ແຕ່ພວກເຮົາບໍ່ຍອມວ່າເປັນຝ່າຍຜິດ ແລະ ບໍ່ຍອມຮັບການນິລະໂທສະກຳ ເພາະວ່າພວກເຮົາຕີຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ເພື່ອປົດປ່ອຍໃຫ້ປະເທດເປັນເອກະລາດແມ່ນຖືກຕ້ອງ ແລະ ມີກຽດ. ເມື່ອທັງສອງຝ່າຍຖົກຖຽງກັນຢ່າງຍືດຍາວແລ້ວ ກໍ່ພ້ອມກັນເຫັນດີວ່າ ຄວນຊອກຫາວິທີອັນເໝາະສົມ ເພື່ອໃຫ້ທັງສອງຝ່າຍຮັບເອົາໄດ້. ຫຼັງຈາກເຈລະຈາແລ້ວເທື່ອໃດ ຄະນະຜູ້ແທນພວກເຮົາກໍ່ໄດ້ລາຍງານ ໃຫ້ສູນກາງຂອງພວກເຮົາ ເພື່ອຂໍຄຳເຫັນ ແລະ ທິດທາງໃນການເຈລະຈາຂັ້ນຕໍ່ໄປ, ເພາະພວກເຮົາເຫັນວ່າ ການເຈລະຈາຈະຫຍຸ້ງຍາກສັບສົນ ຍ້ອນວ່າຄະນະຜູ້ແທນຝ່າຍວຽງຈັນປະກອບດ້ວຍບຸກຄົນຫຼາຍພາກສ່ວນ ທີ່ຂັດແຍ້ງກັນ ແລະ ບໍ່ກ້າຮັບຜິດຊອບເອົາເອງ. ແຕ່ວ່າຫຼັງຈາກເຈລະຈາກັນເກືອບເດືອນໜຶ່ງແລ້ວ ທັງສອງຝ່າຍສາມາດເປັນເອກະສັນກັນເຊັນ ຖະແຫຼງການຮ່ວມສະບັບໜຶ່ງ. ຖະແຫຼງການຮ່ວມສະບັບນັ້ນໄດ້ເວົ້າວ່າ ທັງສອງຝ່າຍພ້ອມກັນ ເຫັນດີວ່າຈະຊອກທຸກວິທີທາງໃຫ້ໄປເຖິງບ່ອນຕົກລົງກັນໄດ້ ໃນທຸກບັນຫາຢ່າງພໍໃຈແກ່ທັງສອງຝ່າຍ ເພື່ອພ້ອມກັນສ້າງສາບ້ານເມືອງລາວ ໃຫ້ມີສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

ຫຼັງຈາກເຊັນຖະແຫຼງການຮ່ວມແລ້ວ ແຕ່ລະຝ່າຍກໍ່ໄດ້ສົ່ງສິ່ງທີ່ໄດ້ເຊັນກັນນັ້ນ ຂຶ້ນໄປໃຫ້ສູນກາງຂອງໃຜລາວ. ສູນກາງຝ່າຍປະເທດລາວພວກເຮົາເຫັນດີເຫັນພ້ອມນຳຖະແຫຼງການຮ່ວມສະບັບນັ້ນທຸກປະການ ແລະ ໄດ້ເອົາອອກປະກາດໃນວິທະຍຸກະຈາຍສຽງ ແລະໜັງສືພິມ ເພື່ອໃຫ້ປະຊາຊົນລາວເຫັນຄວາມຄືບໜ້າຂອງການເຈລະຈາ. ແຕ່ວ່າລັດຖະບານຝ່າຍລາຊະອານາຈັກບໍ່ເຫັນພ້ອມນຳຖະແຫຼງການຮ່ວມສະບັບນັ້ນໃນບ່ອນເວົ້າວ່າ : "ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ" ໂດຍເວົ້າວ່າຄວາມເວົ້າເຫຼົ່ານັ້ນ ລ້ວນແຕ່ແມ່ນຄວາມເວົ້າຂອງຊາວກອມມູນິດ. ທ່ານພໍ່ຫອງດີໄດ້ຖືກຕິຕຽນໜັກ, ຖືກຮຽກຕົວກັບຄືນໄປວຽງຈັນ ແລະ ຖືກປົດອອກຈາກຕຳແໜ່ງຫົວໜ້າຄະນະ ແລ້ວແຕ່ງຕັ້ງໃຫ້ເພຍອຸ່ນເຮືອນ ນໍລະສິງ ມາເປັນຫົວໜ້າຄະນະຜູ້ແທນຝ່າຍວຽງຈັນ.

ເພຍອຸ່ນເຮືອນ ນໍລະສິງ ເປັນລູກເຂີຍພີ່ອາຍແມ່ເມຍຂອງເຮົາ ແລະ ພ້ອມກັນນັ້ນເອົາ

ກໍຍັງສົ່ງພະຍາພົນລູກທ້າວ ແລະ ທິດຄຳແພງ ໄຊຍະສິດ ທີ່ເປັນພີ່ອ້າຍ ແລະ ນ້ອງຊາຍແມ່ເມຍຂອງເຮົາມານຳອີກ. ຝ່າຍວຽງຈັນນຶກວ່າເອົາພີ່ນ້ອງຂອງເຮົາມາແກ້ງເອົາເຮົາ ຈະໄດ້ງ່າຍ. ແມ່ນວ່າຝ່າຍລາຊະອານາຈັກຈະປ່ຽນຫົວໜ້າຄະນະຜູ້ແທນກໍຕາມ, ຫຼັກພື້ນຂອງພວກເຂົາກໍບໍ່ມີຫຍັງປ່ຽນແປງ, ຄືຍັງຢາກໃຫ້ພວກເຮົາວາງອາວຸດຍອມຈຳນົນ ແລະ ພວກເຂົາຈະອະໄພໂທດ. ເລື່ອງນີ້ເປັນເລື່ອງທີ່ພວກເຮົາຮັບເອົາບໍ່ໄດ້ ເພາະວ່າ ພວກເຮົາເປັນຜູ້ຕີຊະນະພວກລ່າເມືອງຂຶ້ນຝະລັ່ງ, ພວກເຮົາຕີຝະລັ່ງແມ່ນຮັກຊາດ, ຢາກໃຫ້ປະເທດຊາດເປັນເອກະລາດ, ພວກເຮົາຕີຝະລັ່ງຊະນະ ແລະ ຮັກຊາດແນວນີ້ແມ່ນບໍ່ມີຄວາມຜິດຫຍັງ ແລະ ພວກເຮົາກໍບໍ່ໄດ້ຂໍຄວາມອະໄພໂທດຈາກຝ່າຍລາຊະອານາຈັກ ; ເມື່ອຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງພົ້ນໄປແລ້ວ ພວກເຮົາມີແຕ່ຢາກໃຫ້ຄົນລາວທັງສອງຝ່າຍລວມເຂົ້າກັນ, ພ້ອມກັນເຮັດການເລືອກຕັ້ງທົ່ວໄປ, ພ້ອມກັນສ້າງຕັ້ງລັດຖະສະພາຊຸດໃໝ່ ແລະ ຈັດຕັ້ງລັດຖະບານປະສົມຕາມທີ່ບົ່ງໄວ້ໃນສັນຍາເຈີແນວ ປີ 1954. ຄວາມຫຍຸ້ງຍາກ ໃນການເຈລະຈາຄາວນີ້ແມ່ນເປັນຍ້ອນຄະນະຜູ້ແທນຝ່າຍວຽງຈັນ ຢ້ານຖືກຕິຕຽນຈາກຂັ້ນເທິງຂອງເຂົາ, ບໍ່ກ້າຕົກລົງອັນໃດກັບພວກເຮົາ; ຄວາມເວົ້າແຕ່ລະຄວາມເຂົາກໍຕ້ອງຕີສາຍ ຫຼືສົ່ງຄົນໄປຖາມຂັ້ນເທິງຂອງເຂົາ, ກ່ອນຈະໄດ້ຄວາມຕອບກໍເປັນເວລາອັນຊ້ານານ. ເພື່ອແກ້ໄຂຂໍ້ຫຍຸ້ງຍາກໃຫ້ພວກເຂົານັ້ນ ພວກເຂົາໄດ້ຮ້ອງຂໍໃຫ້ຄະນະຜູ້ແທນພວກເຮົາ ເຂົ້າໄປດຳເນີນການເຈລະຈາຢູ່ວຽງຈັນ. ເມື່ອສູນກາງພວກເຮົາເຫັນດີນຳ ແລະຝ່າຍລາຊະອານາຈັກຮັບປະກັນຄວາມປອດໄພທຸກຢ່າງໃຫ້ແລ້ວ ຄະນະຜູ້ແທນພວກເຮົາກໍຍິນດີຮັບຕາມຄຳຂໍຮ້ອງ ຂອງຄະນະຜູ້ແທນຝ່າຍລາຊະອານາຈັກ ແລະ ໄດ້ພ້ອມກັນເຂົ້າໄປວຽງຈັນໃນເດືອນ ພຶດສະພາ ປີ 1955.

ເວລາພວກເຮົາໄປຮອດວຽງຈັນ ພວກເຮົາເຫັນວ່າມີສິ່ງປ່ຽນແປງຫຼາຍແນວ. ເພຍອຸ່ນເຮືອນຖືກປົດອອກຈາກຕຳແໜ່ງຫົວໜ້າຄະນະຜູ້ແທນ ແລ້ວເອົາທ້າວຫຍຸຍ ອະໄພ ມາເປັນຫົວໜ້າແທນ. ທ້າວຫຍຸຍ ອະໄພ ມາຕ້ອນຮັບພວກເຮົາຢູ່ສະໜາມບິນ, ບອກພວກເຮົາວ່າເຂົາເອງຖືກແຕ່ງຕັ້ງເປັນຫົວໜ້າຜູ້ແທນຝ່າຍລາຊະອານາຈັກ, ວ່າຕົວເຂົາກັບຕົວເຮົາ ເຄີຍຮັກແພງກັນມາແຕ່ກ່ອນ, ວ່າຍ້ອນແນວນັ້ນເຂົາຈຶ່ງເຊື່ອວ່າການເຈລະຈາຂັ້ນຕໍ່ໄປນີ້ ຕ້ອງບັນລຸຜົນສຳເລັດ, ວ່າເຮົາຕ້ອງການຫຍັງໃຫ້ບອກເຂົາ, ຈະເອົາມາໃຫ້ທຸກອັນຢ່າງພໍໃຈ. ເຮົາຕອບວ່າ ເຮົາຍິນດີເຈລະຈາກັບພົດທຸກຄົນ ທີ່ຈະເຮັດໃຫ້ຄົນລາວລວມກັນໄດ້ຢ່າງສັນຕິ,ດ້ວຍຄວາມຍຸດຕິທຳ ແລະ ພໍໃຈໃຫ້ແກ່ທັງສອງຝ່າຍ. ເວົ້າເຖິງຄວາມຕ້ອງການ ແມ່ນເຮົາຕ້ອງການຫຼາຍສິ່ງຫຼາຍແນວ ເພື່ອສະດວກໃຫ້ແກ່ການຢູ່ ແລະ ການໄປມາ ເພາະວ່າ ເຮືອນທີ່ຝ່າຍວຽງຈັນເອົາໃຫ້ພວກເຮົາຢູ່ ແມ່ນມີແຕ່ເຮືອນເປົ່າລ້າງ, ບໍ່ມີຕຽງນອນ, ບໍ່ມີໂຕະຕັ່ງກິນເຂົ້າ ແລະຂຽນໜັງສື ບໍ່ມີໂຕະຕັ່ງຊາລົງໃສ່ຫ້ອງຮັບແຂກ, ບໍ່ມີໝໍ້ຖ້ວຍຈານເພື່ອຄົວກິນ ແລະ ບໍ່ມີລົດເພື່ອໄປຕະຫຼາດ ແລະ ໄປປະຊຸມ. ທ້າວຫຍຸຍວ່າເລື່ອງນີ້ບໍ່ຍາກ, ມື້ແລງຈະ

ເອົາມາໃຫ້ສ່ວນໜຶ່ງ ແລະ ມື້ອື່ນຈະເອົາມາໃຫ້ຄົບໝົດ. ເຂົາກັບເມືອແລ້ວກໍ່ສົ່ງໝໍ້ ຄຸຕັກນ້ຳ ແລະ ຖ້ວຍຈານສ້ອມບ່ວງມາໃຫ້ພວກເຮົາ, ສົ່ງຄົນເອົາຕຽງນອນມາໃຫ້ພໍນອນທຸກຄົນ, ສົ່ງຊ່າງໄຟຟ້າເອົາດອກໄຟ ແລະ ພັດລົມມາຕິດໃສ່ທຸກຫ້ອງ. ມື້ອື່ນມາເຂົາຊ້ຳມາຫາເຮົາ ອີກ ໂດຍເອົາລົດເຕົ່າ ຍີ່ຫໍ້ ຟອດສີດຳໜຶ່ງຄັນ ແລະ ລົດຈິບວາກົງສີແດງອີກໜຶ່ງຄັນ ມາໃຫ້ພວກເຮົາ, ແລ້ວຖາມວ່າເຮົາຕ້ອງການຫຍັງອີກ. ເຮົາຕອບວ່າຕ້ອງການສາດປູກາງເຮືອນ, ມຸ້ງໃສ່ຕຽງທຸກຕຽງເພາະວ່າຢູ່ວຽງຈັນມີຍຸງຫຼາຍ, ຕ້ອງການຈົກຊວານຫຼົ້ວສຽມ ເພື່ອເຮັດສວນປູກຜັກ ແລະ ຄົນຂັບລົດສອງຄົນເພື່ອຂັບລົດສອງຄັນນັ້ນ ໂດຍແມ່ນຝ່າຍວຽງຈັນທີ່ເປັນຜູ້ຕອນຮັບເຮົາຈ່າຍເງິນເດືອນໃຫ້ເຂົາ. ທ້າວຫຍຸຍຕອບວ່າບໍ່ຍາກ, ເຂົາຈະຈັດການໃຫ້ມື້ແລງນີ້, ແລະ ຖາມວ່າຕຳຫຼວດປ້ອງກັນຈະເອົາເທົ່າໃດ. ເຮົາຕອບວ່າລ້ຽງຕຳຫຼວດ ສຸດແລ້ວແຕ່ຝ່າຍວຽງຈັນຈະຈັດໃຫ້ ເພາະວ່າກ່ອນພວກເຮົາຈະມາວຽງຈັນນີ້ ເພຍອຸ່ມເຮືອນໄດ້ເຊັນສັນຍາຮ່ວມກັບເຮົາ ຮັບຮອງວ່າຈະຮັບປະກັນຄວາມປອດໄພໃຫ້ພວກເຮົາຮ້ອຍສ່ວນຮ້ອຍແລ້ວ . ທ້າວຫຍຸຍກັບເມືອ ກໍ່ໄດ້ສົ່ງເຄື່ອງຂອງດັ່ງກ່າວນັ້ນມາໃຫ້ພວກເຮົາຢ່າງຄົບຖ້ວນ ພ້ອມທັງຕຳຫຼວດໜຶ່ງໝູ່ ເພື່ອມາຢູ່ຍາມຄວບຄຸມເຮືອນພວກເຮົາ ທັງສົ່ງຈັດພາຍມາຖາມເຮົາວ່າ ມື້ໃດຈະເລີ່ມຕົ້ນປະຊຸມ. ພວກເຮົາເປີກສາກັນຕົກລົງວ່າຄວນພັກຜ່ອນຈັກ 5 ມື້ກ່ອນ ເພາະຍັງອິດເມື່ອຍຍ້ອນອາກາດຮ້ອນ ແລະ ເພື່ອກວດເບິ່ງວ່າຍັງຈະຕ້ອງການຫຍັງຕື່ມ ສຳລັບອຳນວຍຄວາມສະດວກໃຫ້ແກ່ການຢູ່ກິນຂອງພວກເຮົາ. ມື້ລຸນມາ ທ້າວຫຍຸຍ ຊ້ຳພັດມາຫາພວກເຮົາອີກ ແລ້ວພ້ອມກັບພວກເຮົາໄປກວດເບິ່ງແຕ່ລະຫ້ອງເຮືອນ, ເຫັນວ່າ ຍັງຕ້ອງການອັນໃດເຂົາກໍ່ສົ່ງມາໃຫ້ຢ່າງຄົບຖ້ວນ. ພວກເຮົາເຍື້ອນເວລາໄປແນວນັ້ນ ກໍ່ແມ່ນເພື່ອໃຫ້ຝ່າຍວຽງຈັນປະກອບເຄື່ອງເຮືອນທີ່ຕ້ອງການໃຫ້ຄົບໝົດເສຍກ່ອນ ເພາະວ່າເມື່ອເລີ່ມເຈລະຈາກັນພວກເຮົາບໍ່ເຮັດຕາມຄວາມຮຽກຮ້ອງຕ້ອງການຂອງພວກເຂົາແລ້ວ ພວກເຂົາຈະບໍ່ໃຫ້ຫຍັງອີກ.

ເມືອງວຽງຈັນເວລານັ້ນຈັ່ງແມ່ນຫງຽບເຫງົາ, ລັດຖະບານຂອງຝ່າຍວຽງຈັນ ຄວບຄຸມປະຊາຊົນຢ່າງເຄັ່ງຄັດທີ່ສຸດ ຈົນວ່າບໍ່ສູ້ມີຄົນກ້າຍ່າງກາຍໜ້າບ້ານພວກເຮົາ. ພວກທີ່ມາກາຍເຮືອນເຮົານັ້ນກໍ່ຢ້ານຕຳຫຼວດຈົນບໍ່ກ້າຕອບພວກເຮົາ ເວລາພວກເຮົາຖາມສະບາຍ, ທັງໆທີ່ເປັນຄົນລ້ຽງເຄີຍກັນມາແຕ່ກ່ອນກໍ່ຕາມ. ເມື່ອພວກເຮົາໄປຊອກຢາມຄົນທີ່ລຽງເຄີຍກັນກໍ່ມີໜ້ອຍຄົນທີ່ສຸດ ທີ່ກ້າຕອນຮັບພວກເຮົາ, ເຖິງນັ້ນກໍ່ແລ່ນໜີເຂົ້າສວນ ແລ້ວໃຫ້ເດັກນ້ອຍມາຄອບພວກເຮົາວ່າ ພໍ່ບໍ່ຢູ່ເຮືອນດັ່ງນັ້ນເລື້ອຍໆ. ອາຍນ້ອງຄົວກິນຂອງພວກເຮົາໄປຕະຫຼາດກໍ່ຕ້ອງໃຫ້ຕຳຫຼວດໄປນຳ, ເວົ້າວ່າໄປເພື່ອປ້ອງກັນຄວາມປອດໄພ ແຕ່ທີ່ແທ້ແລ້ວ ແມ່ນໄປເພື່ອຕິດຕາມການເຄື່ອນໄຫວຂອງພວກເຮົາ ແລະ ນາບຂູ່ປະຊາຊົນບໍ່ໃຫ້ປາກລົມນຳພວກເຮົາ.

ຫຼັງຈາກພັກຜ່ອນຢູ່ອາທິດໜຶ່ງແລ້ວ ພວກເຮົາກໍ່ຮັບໄປເຈລະຈາກັບຄະນະຜູ້ແທນຝ່າຍວຽງ

ຈັນ. ການເຈລະຈາໄຂຂຶ້ນທີ່ສຳນັກນາຍົກລັດຖະມົນຕີ. ຝ່າຍເຮົາສະເໜີໃຫ້ພ້ອມກັນ ເຮັດການເລືອກຕັ້ງທົ່ວປະເທດລວມກັນ ແລ້ວຕັ້ງລັດຖະບານໃໝ່ລວມກັນ ເພື່ອຕ້ານການແຊກແຊງຮຸກຮານຂອງຈັກກະພັດອາເມລິກາ. ຝ່າຍວຽງຈັນຫວງບໍ່ໃຫ້ພວກເຮົາເອີ້ນຄະນະຜູ້ແທນເຮົາວາ ເປັນຜູ້ແທນລັດຖະບານລາວຕໍ່ຕ້ານ, ຫວງໃຫ້ພວກເຮົາວາງອາວຸດ ຍອມຂຶ້ນກັບລັດຖະບານລາຊະອານາຈັກ ທີ່ຈະອອກກົດໝາຍນິລະໂທດກຳ. ເມື່ອຫຼັກໝັ້ນຂອງແຕ່ລະຝ່າຍ ແຕກຕ່າງກັນຢ່າງເອົາເຂົ້າກັນບໍ່ໄດ້ແນວນີ້ ຝ່າຍວຽງຈັນກໍ່ປ່ຽນທ່າທີຕໍ່ພວກເຮົາໂລດ. ສິ່ງທີ່ພວກເຮົາຫວງເອົາແຕ່ເຂົາບໍ່ທັນເອົາມາໃຫ້ນັ້ນ ເຂົາບໍ່ໃຫ້ເລີຍ. ມີລູນມາ ເຂົາມາຖອດເອົາລົດຜອດຄືນ, ປະໄວ້ໃຫ້ພວກເຮົາແຕ່ລົດຈິບອາກົງ. ຫ້າມຂາດບໍ່ໃຫ້ຜູ້ໃດເຂົ້າມາຢາມເຮົາແລະບໍ່ໃຫ້ຜູ້ໃດຕ້ອນຮັບເຮົານອກຈາກຕົວທ້າວຫຍຸຍເອງ. ການເຈລະຈາດຳເນີນໄປ ອາທິດລະສອງເທື່ອ. ຕ່າງຝ່າຍຕ່າງຢືນຢັນຫຼັກໝັ້ນຂອງໃຜລາວ. ພວກເຮົາຫວງໃຫ້ປະຕິບັດສັນຍາເຈນີແນວຢ່າງຖືກຕ້ອງຄືດັ່ງເວົ້າມາເທິງນັ້ນ.

ເວລານັ້ນເປັນເວລາທີ່ຈັກກະພັດອາເມລິກາເຂົ້າມາລາວ ເພື່ອແທນບ່ອນພວກລ່າເມືອງຂຶ້ນຝະລັ່ງທີ່ຖອນອອກໄປ. ພວກເຂົາກຳເອົາກະຕ່າຍ ໂດນສະໂສລິດ ທີ່ເປັນນາຍົກລັດຖະມົນຕີ, ກຳເອົາກອງທະຫານ, ອົງການປົກຄອງແລະຕຳຫຼວດ ທີ່ເປັນເຄື່ອງມືພວກລ່າເມືອງຂຶ້ນຝະລັ່ງເມື່ອກ່ອນນັ້ນໄປເປັນເຄື່ອງມືຂອງພວກເຂົາ, ປ່ຽນເຄື່ອງແບບທະຫານ ແລະ ຕຳຫຼວດ ແລະ ຊື້ຈ້າງເອົາຄະນະລັດຖະບານ ແລະ ເຈົ້າແຂວງເຈົ້າເມືອງໄປຮັບໃຊ້ພວກເຂົາ, ຊອກກຳເອົາພວກຄົນທີ່ສັດຊື່ບໍລິສຸດຕໍ່ພວກເຂົາມາກຳຕຳແໜ່ງສູງ ແລະ ສ້າງຄວາມຮັ່ງມີໃຫ້ຢ່າງໄວວາ. ຕາມຄຳສັ່ງຂອງຈັກກະພັດອາເມລິກາ, ກະຕ່າຍ ໂດນສະໂສລິດ ສັ່ງໃຫ້ຢຸດການເຈລະຈາກັບຝ່າຍເຮົາ ແລະ ບອກໃຫ້ຄະນະຜູ້ແທນພວກເຮົາກັບຄືນໄປຊຳເໜືອ. ແຕ່ວ່າຄະນະກຳມະການສາກົນ ແລະ ປະທານຄູ່ຂອງກອງປະຊຸມເຈນີວ ຄືເອກອັກຄະລັດຖະທູດໂຊວຽດ ແລະ ອັງກິດ ໄດ້ຂັດຂວາງໄວ້, ບໍ່ໃຫ້ພວກເຮົາໜີຈາກວຽງຈັນ ແລະ ໄປຫວງໃຫ້ຝ່າຍວຽງຈັນສືບຕໍ່ເຈລະຈາກັບພວກເຮົາ. ກະຕ່າຍ ໂດນສະໂສລິດ ຈຳຕ້ອງຮັບເອົາຕາມຄຳສະເໜີຂອງປະທານຄູ່ ແລະ ຄະນະກຳມະການສາກົນ, ບໍ່ຫວງໃຫ້ພວກເຮົາ ໜີຈາກວຽງຈັນ ແຕ່ກໍ່ບໍ່ຍອມໃຫ້ຄະນະຜູ້ແທນຂອງເຂົາມາເຈລະຈາກັບພວກເຮົາ. ທ່ານປະທານ ສຸພານຸວົງ ຕີສາຍມາໃຫ້ກະຕ່າຍ ໂດນສະໂສລິດ ເພື່ອເຊີນເຂົາໄປພົບກັນຢູ່ນະຄອນຫຼວງຢ່າງກຸ້ງ ປະເທດພະມ້າ. ເຂົາຕອບຮັບ ແລະ ພວກເຮົາໄດ້ຮ່ວມກັບປະທານສຸພານຸວົງ ໄປພົບເຂົາຢູ່ນະຄອນຫຼວງຢ່າງກຸ້ງ ໃນເດືອນ 6 ປີ 1955, ການເຈລະຈາກິນເວລາ 5 ວັນແຕ່ບໍ່ຕົກລົງກັນໄດ້ຈັກຢ່າງ ແລະ ຕ່າງຝ່າຍຕ່າງໜີຈາກກັນລາໆ.

ພວກເຮົາໄດ້ກັບຄືນໄປຊຳເໜືອເພື່ອປຶກສາກັນ ກ່ຽວກັບສິ່ງທີ່ພວກເຮົາຈະຕ້ອງເຮັດໃນໄລຍະຕໍ່ໄປ. ໃນເວລານັ້ນເອງ ສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ໄດ້ຮຽກ

ປະຊຸມສູນກາງພັກ ຫຼັງຈາກໄດ້ເຮັດກອງປະຊຸມໃຫຍ່ຄັ້ງທີໜຶ່ງຂອງພັກປະຊາຊົນລາວແລ້ວ. ໃນເວລານັ້ນເອງ ສະຫາຍເລຂາທິການໃຫຍ່ໄດ້ບອກໃຫ້ເຮົາຮູ້ວ່າ ເຮົາໄດ້ຖືກກອງປະຊຸມໃຫຍ່ເຊິ່ງເຮົາບໍ່ໄດ້ເຂົ້າຮ່ວມນຳນັ້ນໄດ້ເລືອກຕັ້ງເອົາເຮົາເປັນກຳມະການ ແລະ ເປັນຄະນະປະຈຳສູນກາງພັກປະຊາຊົນລາວ. ຫຼັງຈາກຄົ້ນຄວ້າຮ່ຳຮຽນມະຕິຂອງກອງປະຊຸມໃຫຍ່ ຄັ້ງທີໜຶ່ງຂອງພັກແລ້ວ ພວກເຮົາກໍ່ໄດ້ກັບຄືນໄປວຽງຈັນ ເພື່ອສືບຕໍ່ການເຈລະຈາ. ແຕ່ວ່າຝ່າຍວຽງຈັນຍັງບໍ່ຍອມເຈລະຈາກັບພວກເຮົາ ໂດຍອ້າງເຫດຜົນວ່າ ພວກເຂົາມີຫຼາຍວຽກ. ຕາມພວກເຮົາເບິ່ງນັ້ນ ພວກເຂົາກໍ່ມີຫຼາຍວຽກແທ້ ເພາະວ່າພວກຈັກກະພັດອາເມລິກາໄດ້ປ່ຽນເຄື່ອງແບບຂອງຂ້າລາຊະການຝ່າຍພົນລະເຮືອນ, ທະຫານ ແລະ ຕຳຫຼວດໃໝ່ ໃຫ້ປະຖິ້ມເຄື່ອງແບບຂອງຝະລັ່ງ ນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍຂອງອາເມລິກາ. ນາຍທະຫານ, ນາຍຕຳຫຼວດ ແລະ ຂ້າລາຊະການຊັ້ນສູງຫຼາຍຄົນ ກໍ່ຖືກສັບປ່ຽນໜ້າທີ່ ໂດຍເອົາພວກທີ່ສັດຊື່ບໍລິສຸດຕໍ່ອາເມລິກາ ເຂົ້າກຳຕຳແໜ່ງທີ່ສຳຄັນ.

ໃນເວລາລໍຖ້ານັ້ນ ພວກເຮົາກໍ່ພະຍາຍາມໄປຊອກຢ້ຽມຢາມບຸກຄົນທີ່ຮູ້ຈັກເຄີຍ ເພື່ອສະແດງນ້ຳໃສໃຈຈິງຂອງພວກເຮົາ. ມີຫຼາຍຄົນເຫັນອົກເຫັນໃຈ ແລະ ໄດ້ຕ້ອນຮັບພວກເຮົາ, ເວລາມີພິທີສຳຄັນຝ່າຍວຽງຈັນກໍ່ໄດ້ເຊີນພວກເຮົາໄປຮ່ວມນຳ, ເຮັດໃຫ້ພວກເຮົາມີໂອກາດໄດ້ພົບພໍ້ເວົ້າລົມນຳຫຼາຍຄົນ, ເຮັດໃຫ້ບັນຍາກາດຜ່ອນຍານລົງ. ມີຫຼາຍຄົນຮັກແພງ ໄດ້ສົ່ງເຂົ້າປາອາຫານມາໃຫ້ພວກເຮົາ ; ບາງຄົນກໍ່ພາພະນັກງານຮາກຖານຈາກຊົນນະບົດ ມາຢ້ຽມຢາມຖາມຂ່າວພວກເຮົາ. ພວກຊາວໜຸ່ມນັກສຶກສາ, ກຳມະກອນ ແລະ ພະສົງ ໄດ້ມາຢາມພວກເຮົານັບບໍ່ຖ້ວນຫຼາຍຍິ່ງ, ພວກເຮົາໄດ້ເວົ້າໃຫ້ທຸກຄົນເຫັນເຈຕະນາດີຂອງພວກເຮົາທີ່ຢາກໃຫ້ຄົນລາວທັງສອງຝ່າຍເຂົ້າລວມເປັນອັນດຽວກັນ ເພື່ອພ້ອມກັນສ້າງສາບ້ານເມືອງທີ່ເປັນເອກະລາດແລ້ວ ແລະ ພ້ອມກັນປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ ຂອງໂລກ. ໝົດທຸກຄົນເຫັນພ້ອມນຳຫຼັກໝັ້ນຂອງພວກເຮົາ ແລະ ໃຫ້ຄຳໝັ້ນສັນຍາວ່າ ຈະສະໜັບສະໜູນໃຫ້ມີການເຈລະຈາຢ່າງຕັ້ງໜ້າ ເພື່ອແກ້ໄຂບັນຫາລາວດ້ວຍສັນຕິວິທີ.

ຕົ້ນປີ 1956 ຝ່າຍວຽງຈັນເຮັດການເລືອກຕັ້ງຕ່າງຫາກ ເພື່ອເລືອກເອົາຜູ້ແທນ ລາດສະດອນເຂົ້າລັດຖະສະພາ. ພວກເຮົາອອກສຽງຄັດຄ້ານ ເພາະມັນຜິດຈາກສັນຍາເຈນີວ ປີ 1954 ທີ່ເວົ້າວ່າ ໃຫ້ທັງສອງຝ່າຍພ້ອມກັນເຮັດການເລືອກຕັ້ງ ເພື່ອເຮັດການລວມລາວໄປພ້ອມກັນ. ຫາງສຽງປະຊາຊົນໃນຊົນນະບົດວິຈານກັນວ່າ ຝ່າຍວຽງຈັນລະເມີດສັນຍາເຈນີ - ແວ. ພວກຊາວໜຸ່ມນັກສຶກສາກ່າວປະນາມວ່າ ແມ່ນກະຕ່າຍ ໂດນສະໂລລົດ ເປັນຕົວການກີດຂວາງການລວມລາວ. ພວກເຂົາຫວ່ານໃບປິວທົ່ວເມືອງວຽງຈັນ ແລະ ບັນດາຫົວເມືອງອື່ນ. ຄຳຂວັນໂຄ່ນລົ້ມກະຕ່າຍຖືກຂຽນໃສ່ກຳແພງ ແລະ ທຸກເສັ້ນທາງໃນເມືອງວຽງຈັນ . ຜົນຂອງການເລືອກຕັ້ງກໍ່ຄືກະຕ່າຍ ແລະພັກພວກປະຕິການຂອງເຂົາໄດ້ຕົກໄປ, ພວກສະມາ

ຊຶ່ງຄະນະກຳມະການສັນຕິພາບເປັນກາງ ທີ່ສະໜັບສະໜູນການລວມລາວດ້ວຍສັນຕິວິທີ ໄດ້ຖືກເລືອກຕັ້ງເປັນຈຳນວນຫຼາຍ. ພວກນີ້ໄດ້ແຕ່ງຕັ້ງເຈົ້າສຸວັນນະພູມາເປັນນາຍົກ ລັດຖະມົນຕີຂອງລັດຖະບານຊຸດໃໝ່. ເຈົ້າສຸວັນນະພູມາເຫັນດີໃຫ້ສືບຕໍ່ເຈລະຈາກັບພວກເຮົາ ເພື່ອບັນລຸເຖິງການລວມລາວດ້ວຍສັນຕິວິທີ. ທ້າວຕານ ຈຸລະມົນຕີ ໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າຄະນະຜູ້ແທນຝ່າຍວຽງຈັນແທນທ້າວຫຍຸຍ ອະໄພ ທີ່ຖືກປົດອອກ. ສ່ວນຄະນະຜູ້ແທນອື່ນໆ ຍັງເອົາພວກເກົ່າ, ແຕ່ຍັງເອົາຜູ້ແທນລາດສະດອນ 4 ຄົນເຂົ້າມາຟັງນຳຄື ທ້າວບົງ ສຸວັນນະວົງ, ມະຫາກຸ ສຸວັນນະເມທີ, ເຈົ້າພິດ ທໍ່ຄຳ ແລະ ທ້າວອັນຕາມວນ.

ການເຈລະຈາໄດ້ເປີດຄືນກາງປີ 1956. ທ້າວຕານ ຈຸລະມົນຕີ ຍັງເອົາຄວາມເວົ້າຂອງທ້າວຫຍຸຍ ອະໄພ ມາເລົ່າຄືນອີກ ຄືໃຫ້ພວກເຮົາປະຖິ້ມຊື່ທີ່ວ່າຜູ້ແທນລັດຖະບານລາວຕໍ່ຕ້ານ ມາເອີ້ນຊື່ວ່າຜູ້ແທນແນວລາວຮັກຊາດ, ໃຫ້ພວກເຮົາຍອມຮັບຄວາມຜິດໃນການທີ່ພວກເຮົາໄດ້ຕີກັບຝ່າຍລັດຖະບານວຽງຈັນ, ຍອມວາງອາວຸດດ້ວຍດີ ແລ້ວຝ່າຍລັດຖະບານ ວຽງຈັນຈະອອກກົດໝາຍນິລະໂທດກຳໃຫ້ ແລ້ວກໍ່ພາກັນເຂົ້າມາເປັນພົນລະເມືອງລາວ ຄືກັນກັບຜູ້ອື່ນ.

ພວກເຮົາໄດ້ສະແດງຄວາມຈິງໃຈອອກໃຫ້ເຫັນ ໂດຍປ່ຽນຊື່ຄະນະຜູ້ແທນລັດຖະບານລາວຕໍ່ຕ້ານມາເອີ້ນຜູ້ແທນປະເທດລາວ ຫຼື ແນວລາວຮັກຊາດ ເພື່ອຍາດແຍ່ງເອົາທາງສຽງສະໜັບສະໜູນຂອງປະຊາຊົນ. ແຕ່, ຍ້ອນວ່າຝ່າຍວຽງຈັນໄດ້ເຮັດການເລືອກຕັ້ງ ຕ່າງຫາກແລ້ວ, ພວກເຮົາກໍ່ມີແຕ່ໂຈມຕີການທີ່ພວກເຂົາລະເມີດສັນຍາເຈນີວ ປີ 1954 ແລະ ບໍ່ທວງໃຫ້ພ້ອມກັນເຮັດການເລືອກຕັ້ງອີກ. ພວກເຮົາທວງໃຫ້ຍຸບສະພາຜູ້ແທນລາດສະດອນຂອງຝ່າຍວຽງຈັນ, ໃຫ້ຝ່າຍວຽງຈັນພ້ອມກັບພວກເຮົາເຊັນສັນຍາວ່າຈະປະຕິບັດນະໂຍບາຍສັນຕິພາບ, ເປັນກາງ, ສັນຍາວ່າທັງສອງຝ່າຍຈະບໍ່ແກ້ແຄ້ນເຊິ່ງກັນແລະກັນ, ສັນຍາຮັບປະກັນສິດເສລີພາບປະຊາທິປະໄຕ ຂອງປະຊາຊົນໃນທົ່ວປະເທດ ແລະສັນຍາຮັບຮອງຈະຈັດຕັ້ງລັດຖະບານປະສົມນຳກັນ ເພື່ອພ້ອມກັນເຮັດການເລືອກຕັ້ງຄືນເຂົ້າລັດຖະສະພາຄືນໃໝ່ . ຝ່າຍວຽງຈັນຍັງຄັດຄ້ານບໍ່ຍອມຍຸບສະພາ, ທວງໃຫ້ພວກເຮົາວາງອາວຸດ ແລ້ວມອບອາວຸດທັງໝົດ ແລະ ມອບສອງແຂວງເຕົ້າໂຮມໃຫ້ຝ່າຍວຽງຈັນ ແລ້ວພວກເຂົາຈະອອກກົດໝາຍ ນິລະໂທດກຳໃຫ້.

ສອງເດືອນຜ່ານໄປ, ການເຈລະຈາຍັງຢູ່ໃນສະພາບທີ່ຕ່າງຝ່າຍຕ່າງຢືນຢັນຫຼັກໝັ້ນຂອງໃຜລາວ, ບໍ່ມີຊ່ອງທາງວ່າຈະເຕົ້າລວມເຂົ້າກັນໄດ້. ໃນເວລານັ້ນ ຈັກກະພັດອາເມລິກາໄດ້ສຸມເຫື່ອແຮງໃສ່ສ້າງກຳລັງປະກອບອາວຸດຂອງພວກເຂົາ ແລ້ວສົ່ງຂຶ້ນໄປຕີສອງແຂວງເຕົ້າໂຮມຂອງພວກເຮົາ ໂດຍຫວັງວ່າຈະຍຶດເອົາສອງແຂວງ ດ້ວຍກຳລັງອາວຸດ ແລ້ວຈະເຊົາການເຈລະຈາ. ເຈົ້າສຸວັນນະພູມາ ຢາກໃຫ້ແກ້ໄຂບັນຫາລາວດ້ວຍການເຈລະຈາ, ແຕ່

ຜູຍ ຊະນະນິກອນ ແລະ ກະຕ່າຍ ໂດນສະໂສລິດ ທີ່ມີຈັກກະພັດອາເມລິກາໜູນຫຼັງ ຊ້ຳພັດຢາກໃຊ້ການທະຫານຢຶດເອົາສອງແຂວງເຕົ້າໂຮມຂອງພວກເຮົາ ແລ້ວໃຊ້ອຳນາດປາບປາມດັບສູນກຳລັງແນວລາວຮັກຊາດຢ່າງສິ້ນເຊີງ.

ເມື່ອພວກເຮົາຮູ້ເລ້ກົນຂອງສັດຕູແນວນັ້ນ, ພວກເຮົາກໍ່ເຕົ້າໂຮມເອົາກອງທະຫານ, ພະນັກງານ ແລະ ປະຊາຊົນອັນເປັນຈຳນວນຫຼາຍພັນຄົນ ທີ່ໄປລວມກັນຢູ່ສອງແຂວງຫົວພັນແລະຜົ້ງສາລີນັ້ນ ມາຈັດຕັ້ງເປັນກອງກຳລັງຫຼວງຫຼາຍສິບກອງພັນ ສົມທົບກັບຫຼາຍກອງພັນທະຫານອາສາສະໝັກຫວຽດນາມທີ່ມາຊ່ວຍພວກເຮົານັ້ນ ເປັນແກ່ນສານແຫ່ງການປ້ອງກັນດິນແດນ , ຈັດຕັ້ງກອງທະຫານທ້ອງຖິ່ນ ແລະ ທະຫານລາດກອງຫຼອນເພື່ອຕໍ່ຕ້ານສັດຕູ ຢ່າງທໍລະຫົດອົດທົນທີ່ສຸດ. ຫຼັງຈາກໄດ້ຮັບການອົບຮົມໃຫ້ຮູ້ແຫດພົນ ແຫ່ງການຕໍ່ຕ້ານເພື່ອກູ້ຊາດ ຂອງພວກເຮົາ ແລະ ຮູ້ແຈ້ງວ່າໃຜເປັນມິດ ແລະ ໃຜເປັນສັດຕູແລ້ວ, ປະຊາຊົນທຸກຊົນຊາດຊົນເຜົ່າທີ່ເຕົ້າໂຮມກັນຢູ່ສອງແຂວງດັ່ງກ່າວນັ້ນ ລ້ວນແຕ່ມີຄວາມຕັດສິນໃຈສູງ ໃນການປ້ອງກັນບ້ານຊ່ອງຂອງຕົນ ພາຍໃຕ້ຄຳຂວັນທີ່ວ່າ : "ປວງຊົນຕີເສິກ", "ທຸກສິ່ງທຸກຢ່າງເພື່ອການປ້ອງກັນຊາດ", "ທຸກສິ່ງທຸກຢ່າງເພື່ອຮັບໃຊ້ແນວໜ້າ","ທັງຕີເສິກ, ທັງເພີ່ມພູນພະລິດພົນ,ທັງຮ່ຳຮຽນສ້າງຕົວ", "ທຸກຄົນກຳດາມໄຖແລະພາຍປືນ", "ສັດຕູມາເຮົາຕີ ສັດຕູໜີເຮົາເພີ່ມພູນ ແລະ ຮ່ຳຮຽນ".

ມາຮອດກາງປີ 1957, ສັດຕູປະລາໄຊໜັກໃນການໃຊ້ກຳລັງອາວຸດຢຶດເອົາສອງແຂວງເຕົ້າໂຮມ. ພວກເຂົາສົ່ງກອງທະຫານໄປຕີສອງແຂວງເທື່ອໃດ ກໍ່ຖືກຝ່າຍແນວລາວຮັກຊາດຕີຕ້ານໃຫ້ແຕກທະລາຍດ້ວຍຄວາມເສຍຫາຍໜັກ. ພວກເຂົາເຫັນວ່າຈະໃຊ້ກຳລັງອາວຸດຕີຢຶດເອົາສອງແຂວງແມ່ນບໍ່ໄດ້ແລ້ວ, ຈຶ່ງຫັນມາປ່ຽນຍຸດທະວິທີໃໝ່. ພວກເຂົາຍິນຍອມມາເຈລະຈາກັບພວກເຮົາຄືນໃໝ່ໂດຍປົດທ້າວຕານ ຈຸລະມົນຕີ ອອກຈາກຫົວໜ້າຄະນະຜູ້ແທນຝ່າຍວຽງຈັນ ແລ້ວເອົາທ້າວໂງ່ນ ຊະນະນິກອນເຂົ້າປ່ຽນແທນ ; ສ່ວນຄະນະຜູ້ແທນອື່ນໆຍັງເອົາໄວ້ຄືເກົ່າ. ກົນອຸບາຍຂອງພວກເຂົາແມ່ນຈະ "ຍົວະເອົາເສືອອອກຈາກຖ້ຳ ແລ້ວຈຶ່ງຄ່ອຍຂ້າເສືອຖິ້ມ", ພາຍຄວາມວ່າຈະຕັ້ງລັດຖະບານປະສົມ ເພື່ອຍົວະເອົາບັນດາຜູ້ນຳທັງໝົດ ຂອງພວກເຮົາມາຮ່ວມລັດຖະບານປະສົມແລ້ວຈຶ່ງຈັບເອົາຂ້າຖິ້ມເພື່ອສ້າງເງື່ອນໄຂໃຫ້ປາບປາມດັບສູນພະນັກງານ ແລະ ກອງທະຫານປະຕິວັດທັງໝົດຢູ່ໃນທົ່ວປະເທດ, ເຮັດໄດ້ແນວນັ້ນພວກເຂົາຈຶ່ງຈະຮັກສາຈັກກະພັດອາເມລິກາໄວ້ເປັນນາຍ ເພື່ອຊ່ວຍໃຫ້ພວກເຂົາ ເປັນເຈົ້າປະເທດລາວແຕ່ຜູ້ດຽວ ແລະ ຍູ້ທາງກົດຂີ່ຂູດຮີດປະຊາຊົນລາວມາສ້າງຮັ່ງຊູນມີໃຫ້ແກ່ພວກເຂົາ.

ການທີ່ຝ່າຍວຽງຈັນຢາກຕັ້ງລັດຖະບານປະສົມນັ້ນ ກໍ່ຖືກກັບຄວາມຕ້ອງການຂອງພວກເຮົາ; ແຕ່ວ່າພວກເຮົາຕ້ອງເຮັດໃຫ້ການຕັ້ງລັດຖະບານປະສົມນັ້ນ ບໍ່ໄປຮັບໃຊ້ແຜນການ ອັນໂຫດຫ້ຽມ ແລະ ມືດມົນຂອງຈັກກະພັດອາເມລິກາ. ພວກເຮົາຫວງໃຫ້ເຊັນສົນຍາກັນ ຍຸບລັດຖະ

ສະພາຂອງຝ່າຍວຽງຈັນ, ທວງໃຫ້ເຊັນສັນຍາຮັບຮອງໃຫ້ປະເທດລາວ ເດີນຕາມແນວທາງສັນຕິພາບ ເປັນກາງ, ທວງໃຫ້ເຊັນສັນຍາຮັບປະກັນສິດເສລີພາບປະຊາທິປະໄຕ ໃຫ້ແກ່ປະຊາຊົນໝົດທັງຊາດ, ບໍ່ໃຫ້ມີການແກ້ແຄ້ນໃສ່ພວກທີ່ໄດ້ຕໍ່ສູ້ພວກລ່າເມືອງຂຶ້ນເມື່ອກ່ອນນັ້ນ, ທວງໃຫ້ເຊັນສັນຍາຈັດຕັ້ງລັດຖະບານປະສົມຊົ່ວຄາວຂຶ້ນ ເພື່ອເຮັດການເລືອກຕັ້ງທົ່ວໄປ ນຳກັນແລ້ວກໍ່ຕັ້ງລັດຖະບານໃໝ່ ອັນຈະເປັນການສຳເລັດຂອງການລວມຄືນລາວທັງສອງຝ່າຍ ເຂົ້າກັນ. ຄຳສະເໜີຂອງຝ່າຍແນວລາວຮັກຊາດດັ່ງກ່າວມາເທິງນີ້ ໄດ້ເອົາອອກປະກາດໃນວິທະຍຸກະຈາຍສຽງຂອງຊຳເໜືອ, ໃນໜັງສືພິມລາວຮັກຊາດ ແລະ ໄດ້ພິມເປັນຫຼາຍສະບັບ ແຈກຢາຍໃຫ້ພວກຜູ້ແທນລາດສະດອນ, ຜູ້ຊົງຄຸນວຸດທິ, ປັນຍາຊົນ, ຂ້າລາຊະການ, ພະສົງອົງຄະເຈົ້າ, ນັກຮຽນ ນັກສຶກສາ ແລະ ຊາວໜຸ່ມທົ່ວເມືອງວຽງຈັນ. ໝົດທຸກຄົນ ໄດ້ເຫັນພ້ອມແລະ ສະໜັບສະໜູນຄຳສະເໜີຂອງພວກເຮົາ, ແລະ ຜັດປ່ຽນກັນໄປຊຸກຍູ້ຝ່າຍວຽງຈັນ ໃຫ້ເຊັນສັນຍາຕາມຂໍ້ສະເໜີຂອງພວກເຮົາ. ມີແຕ່ຜູ້ແທນລາດສະດອນເປັນຫ່ວງຢ້ານວ່າ ເລືອກຕັ້ງເທື່ອໃໝ່ພວກເຂົາຈະບໍ່ໄດ້. ພວກເຮົາໄດ້ໄປອົບຮົມວ່າຜູ້ທີ່ຈິງໃຈຮັບໃຊ້ປະຊາຊົນນັ້ນພວກເຮົາຈະຮຽກຮ້ອງໃຫ້ປະຊາຊົນປ່ອນບັດເອົາ.

ຝ່າຍວຽງຈັນໄດ້ສະເໜີໃຫ້ຝ່າຍແນວລາວຮັກຊາດ ຍຸບກອງທະຫານຂອງຕົນທັງໝົດ ແລ້ວເອົາອາວຸດຍຸດທະພັນທຸກຊະນິດມາມອບໃຫ້ລັດຖະບານວຽງຈັນ ເພື່ອຈະອອກກົດໝາຍນິລະໂທດກຳໃຫ້ສຳລັບເຂົ້າມາເປັນພົນລະເມືອງລາວນຳກັນ, ໃຫ້ກຳມະການສູນກາງ ແນວລາວຮັກຊາດມາເຂົ້າຮ່ວມລັດຖະບານປະສົມ, ໃຫ້ຝ່າຍແນວລາວຮັກຊາດມອບສອງແຂວງ ເຕົ້າໂຮມຂອງຕົນຄືນໃຫ້ຝ່າຍວຽງຈັນ, ໃຫ້ຝ່າຍແນວລາວຮັກຊາດບອກໃຫ້ພະນັກງານ ແລະກອງທະຫານອາສາສະໝັກຫວຽດນາມກັບຄືນປະເທດ, ໃຫ້ຄົນລາວທຸກຄົນນັບຖືລະບອບປະຊາທິປະໄຕ ທີ່ມີເຈົ້າຊີວິດເປັນປະມຸກລັດ ແລະ ນັບຖືກົດໝາຍລັດຖະທຳມະນູນ ແລະ ກົດໝາຍອື່ນໆທີ່ຝ່າຍວຽງຈັນໄດ້ປະກາດໃຊ້ມາແລ້ວ.

ຝ່າຍວຽງຈັນວາງຂໍ້ສະເໜີ ອັນຝ່າຍແນວລາວຮັບບໍ່ໄດ້ອອກມາແນວນີ້ ແມ່ນປະຕິບັດຕາມຄຳສັ່ງຂອງຈັກກະພັດອາເມລິກາ ທີ່ຢາກໃຫ້ການຖົກຖຽງບໍ່ລົງຮອຍກັນໄດ້, ໃຫ້ຖ່ວງດຶງເວລາຍືດຍາວອອກໄປ ເພື່ອໃຫ້ພວກເຂົາໃຊ້ກຳລັງອາວຸດ ຕີຍຶດເອົາສອງແຂວງເຕົ້າໂຮມແລະທຳລາຍລົບລ້າງກຳລັງຝ່າຍແນວລາວຮັກຊາດຢ່າງງ່າຍດາຍ. ແຕ່ວ່າສະພາບການ ຊໍ້າພັດບໍ່ເປັນໄປຕາມຄວາມຫວັງຂອງພວກເຂົາ. ຝ່າຍແນວລາວຮັກຊາດຄັດຄ້ານຕ້ານຢັນ ຂໍ້ສະເໜີຂອງພວກເຂົາຢ່າງມີເຫດຜົນໜັກແໜ້ນ. ກຳລັງປະກອບອາວຸດທີ່ພວກເຂົາສົ່ງຂຶ້ນໄປຕີບຽດຍຶດເຂົ້າສອງແຂວງເຕົ້າໂຮມ ຂອງແນວລາວຮັກຊາດຖືກປະຊາຊົນ ແລະ ກຳລັງປົດປ່ອຍຊາດຕີໃຫ້ເສຍຫາຍນັບມື້ນັບໜັກ. ທາງສຽງຂອງປະຊາຊົນໄດ້ສະໜັບສະໜູນຂໍ້ສະເໜີ ຂອງຝ່າຍແນວລາວຮັກຊາດ ນັບມື້ນັບກວ້າງຂວາງ ແລະ ເຂັ້ມແຂງ, ຄັດຄ້ານຂໍ້ສະເໜີຂອງຝ່າຍວຽງຈັນ,

ຄັດຄ້ານການໃຊ້ກຳລັງອາວຸດເພື່ອທຳລາຍບັນດາກຳລັງທີ່ຮັກຊາດ ແລະ ຫວັງໃຫ້ເຊັນ ສົນຍາສັນຕິພາບກັບຝ່າຍແນວລາວຮັກຊາດ ເພື່ອໃຫ້ປະຊາຊົນທຸກຊົນເຜົ່າ ໄດ້ທຳມາຫາກິນ ດ້ວຍຄວາມສະຫງົບສຸກ.

ການເຈລະຈາລະຫວ່າງສອງຝ່າຍ ໄດ້ເປັນໄປຢ່າງຫຍຸ້ງຍາກສັບສົນຫຼາຍ ຍ້ອນຄວາມບໍ່ຈິງໃຈຂອງຝ່າຍວຽງຈັນທີ່ບໍ່ຢາກໃຫ້ມີການລວມລາວຢ່າງສະເໝີພາບ ; ພວກເຂົາຢາກໃຊ້ທຸກວິທີອັນບໍ່ຍຸດຕິທຳ ແລະ ບໍ່ມະນຸດສະທຳເພື່ອບັງຄັບໃຫ້ຝ່າຍແນວລາວຮັກຊາດ ຍອມຮັບວ່າການຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງແມ່ນຜິດພາດ, ໃຫ້ຍຸບກຳລັງຕົນເອງ ແລ້ວໄປຂໍອະໄພໂທດນຳຝ່າຍວຽງຈັນ, ຈຶ່ງຈະພິຈາລະນາອອກກົດໝາຍນິລະໂທດກຳໃຫ້. ຝ່າຍແນວລາວຮັກຊາດບໍ່ຍອມຮັບຂໍ້ສະເໜີອັນໄຮ້ເຫດຜົນຂອງຝ່າຍວຽງຈັນ ແລະ ໄດ້ຊີ້ແຈງອະທິບາຍ ໃຫ້ພວກເຂົາເຫັນວ່າ ການທີ່ພວກເຮົາກຳອາວຸດຕໍ່ຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ແມ່ນບໍ່ມີຄວາມຜິດຫຍັງ, ແມ່ນຮັກຊາດເພາະຢາກໃຫ້ປະເທດຊາດທີ່ເປັນຂ້ອຍຂ້າເຂົາມາ ເກືອບສະຕະວັດໜຶ່ງແລ້ວນັ້ນ ກັບມາເປັນເອກະລາດເປັນເຈົ້າຕົນເອງ, ຢາກໃຫ້ປະຊາຊົນລາວຕະຫຼອດຮອດຄະນະລັດຖະບານ ແລະ ເຈົ້າຊີວິດມີຖານະ ແລະ ກຽດສູງເທົ່າທຽມກັບພົນລະເມືອງ ຂອງປະເທດເອກະລາດທັງຫຼາຍໃນໂລກ ; ຜູ້ຢາກເຮັດໃຫ້ປະເທດຊາດເປັນເອກະລາດ,ເປັນເຈົ້າຕົນເອງບໍ່ມີຄວາມຜິດແນວໃດ ພໍຈະຂໍອະໄພໂທດນຳຜູ້ອື່ນ ; ມີແຕ່ຜູ້ເອົາປະເທດຂອງໂຕໄປເປັນເມືອງຂຶ້ນຂອງຊາດອື່ນ ແລະ ເອົາປະຊາຊົນລາວຜູ້ຮັກຊາດ ແລະ ຮັກຄວາມເປັນທຳໄປເປັນຂ້ອຍຕ່າງຊາດ ປ່ອຍໃຫ້ເຂົາກົດຂີ່ຂົ່ມເຫັງທໍລະມານໃຫ້ທຸກຍາກລຳບາກ ແລະຖືກຂ້າຕາຍຢ່າງພາເວທະນາເທົ່ານັ້ນຈຶ່ງມີໂທດຕໍ່ຊາດ ແລະ ຕໍ່ປະຊາຊົນ ; ພວກເຮົາມາພ້ອມກັນຄິດເບິ່ງດູວ່າ ແມ່ນໃຜຈະຕ້ອງຂໍອະໄພໂທດນຳໃຜ.

ຝ່າຍວຽງຈັນໄດ້ກ່າວຫາວ່າແນວລາວຮັກຊາດ ເອົາກອງທະຫານຫວຽດນາມ ມາຂ້າຄົນລາວ . ຝ່າຍແນວລາວຮັກຊາດພວກເຮົາໄດ້ຊີ້ແຈງອະທິບາຍວ່າແມ່ນພວກລ່າເມືອງຂຶ້ນ ຝະລັ່ງເປັນຜູ້ໃຊ້ກຳລັງບັງຄັບລວບລວມເອົາສາມປະເທດ ລາວ , ຫວຽດນາມ ແລະກຳປູເຈຍໄປເປັນເມືອງຂຶ້ນ ແປວ່າເປັນຂ້ອຍຂອງພວກເຂົາຢູ່ໃນຕອນດິນອັນດຽວກັນທີ່ເອີ້ນວ່າ " ອິນດູຈີນຝະລັ່ງເສດ " ; ເມື່ອໂອກາດອຳນວຍ , ສາມຊາດພວກເຮົາທີ່ມີນ້ຳໃຈຮັກຊາດສູງພ້ອມກັນກຳປືນລຸກຂຶ້ນຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງໜີໄປ ໃຫ້ປະເທດຊາດບ້ານເມືອງ ເປັນເອກະລາດແມ່ນຖືກຕ້ອງ ; ພວກເຮົາຈຳເປັນຕ້ອງເອົາກອງທະຫານອາສາສະໝັກ ຫວຽດນາມ ເຂົ້າມາຕີຝະລັ່ງຊ່ວຍພວກເຮົາກໍ່ຍ້ອນວ່າ ພວກເຮົາມີພົນລະເມືອງພຽງແຕ່ເຄິ່ງປະເທດເທົ່ານັ້ນທີ່ຮັກຊາດ ແລະ ກ້າເສຍສະຫຼະລຸກຂຶ້ນປົດປ່ອຍປະເທດຊາດ ,ເຮັດໃຫ້ກຳລັງປົດປ່ອຍຊາດມີຈຳນວນບໍ່ພຽງພໍ ເພາະວ່າຄົນລາວຈຳນວນໜຶ່ງທີ່ຍອມເປັນຂ້ອຍຂ້າຂອງຝະລັ່ງໄດ້ໃຊ້ອຳນາດບັງຄັບປະຊາຊົນລາວ ໃຫ້ໄປຊ່ວຍສັດຕູມາຕ້ານກັບພວກເຮົາ ; ຖ້າວ່າຄົນລາວຫາກ ສາ

ນັກຄືຣັກແພງກັນ ແລະ ພ້ອມກັນຕໍ່ຕ້ານພວກລ່າເມືອງຂຶ້ນ ເພື່ອກອບກູ້ເອກະລາດແຫ່ງຊາດຄືດັ່ງປີ 1945 ນັ້ນ ພວກເຮົາກໍ່ບໍ່ຈຳເປັນຈະຕ້ອງເອົາກອງທະຫານຫວຽດນາມມາຊ່ວຍ ຄືດັ່ງທີ່ໄດ້ເຮັດມາແລ້ວ , ກອງທະຫານຫວຽດນາມນັ້ນ ແມ່ນພວກເຮົາເອີ້ນມາຊ່ວຍຕີພວກລ່າເມືອງຂຶ້ນຝະລັ່ງ ,ເມື່ອພວກເຮົາຊະນະແລ້ວ ແລະ ໄດ້ລວມຄືນລາວເຂົ້າເປັນອັນໜຶ່ງອັນດຽວ ກັນແລ້ວ ພວກເຮົາບອກໃຫ້ເຂົາກັບຄືນເມືອປະເທດຂອງເຂົາໆກໍ່ຈະກັບຄືນເມືອຮັບໃຊ້ ປະເທດຊາດຂອງເຂົາ , ບໍ່ມີສິ່ງໃດຈະເປັນຄວາມຫຍຸ້ງຍາກ ແລະ ເປັນຕາຢ້ານໃນເລື່ອງນັ້ນ .

ການເຈລະຈາໄດ້ແກ່ຍາວມາຫຼາຍເດືອນ, ຕ່າງຝ່າຍຕ່າງອ້າງເຫດຜົນມາໂຈມຕີກັນ , ແກ້ໄຂຫຍັງກໍ່ບໍ່ໄດ້, ຖ້າແກ່ຍາວຕໍ່ໄປອີກກໍ່ຈະເຮັດໃຫ້ສະພາບການບໍ່ດີຂຶ້ນຈັກໃຊ້. ສູນກາງແນວລາວຮັກຊາດຈຶ່ງເຫັນດີໃຫ້ຄະນະຜູ້ແທນພວກເຮົາ ພິຈາລະນາຜ່ອນຜັນໃຫ້ຝ່າຍວຽງຈັນກ່ຽວກັບບາງບັນຫາທີ່ເປັນຍຸດໂທບາຍ. ເພື່ອໃຫ້ຝ່າຍວຽງຈັນເຊັນສັນຍາກ່ຽວກັບນະໂຍບາຍສັນຕິພາບເປັນກາງ ແລະ ຂໍ້ກຳນົດຮັບປະກັນສິດເສລີພາບປະຊາທິປະໄຕ ຂອງປະຊາຊົນນັ້ນ ພວກເຮົາໄດ້ປ່ຽນຄຳສະເໜີຂອງພວກເຮົາ ທີ່ຫວັງໃຫ້ຍຸບລັດຖະສະພາຂອງຝ່າຍວຽງຈັນ ມາຮັບຮອງບໍ່ໃຫ້ຍຸບລັດຖະສະພານັ້ນ ແຕ່ໃຫ້ເຮັດການເລືອກຕັ້ງເພີ່ມເຕີມ. ເພື່ອໃຫ້ຝ່າຍວຽງຈັນຈັດຕັ້ງລັດຖະບານປະສົມນຳພວກເຮົານັ້ນ ພວກເຮົາໄດ້ຮັບວ່າ ຫຼັງຈາກຈັດຕັ້ງລັດຖະບານປະສົມນັ້ນແລ້ວ ພວກເຮົາຈະມອບສອງແຂວງເຕົ້າໂຮມໃຫ້ແກ່ລັດຖະບານປະສົມ ແລະ ຍອມເອົາທະຫານພວກເຮົາອອກຈາກປະຈຳການທັງໝົດ, ປະໄວ້ແຕ່ສອງກອງພັນ ເພື່ອຄອຍຖ້າເອົາເຂົ້າລວມກັບກອງທັບແຫ່ງຊາດຂອງຝ່າຍວຽງຈັນ ; ອາວຸດຍຸດທະພັນຂອງກອງທະຫານທີ່ເອົາອອກຈາກໜ້າທີ່ການນັ້ນ ພວກເຮົາກໍ່ຈະມອບໃຫ້ລັດຖະບານປະສົມເຊັ່ນດຽວກັນ ;ພວກເຮົາຈະໃຫ້ຕົວແທນຂອງແນວລາວຮັກຊາດມາເຂົ້າຮ່ວມລັດຖະບານປະສົມນຳແຕ່ສອງຄົນ ຄືສະຫາຍສຸພານຸວົງ ແລະ ເຮົາເອງ, ແຕ່ພວກເຮົາຫວັງໃຫ້ຝ່າຍວຽງຈັນເຊັນສັນຍາວ່າ ຈະປ່ອຍໃຫ້ພະນັກງານ ແລະ ທະຫານຂອງພວກເຮົາທີ່ໃຫ້ອອກຈາກໜ້າທີ່ການນັ້ນ ໄດ້ກັບຄືນເມືອບ້ານເດີມຂອງເຂົາໃນທົ່ວປະເທດ ໂດຍບໍ່ໃຫ້ມີການຈຳແນກແກ້ແຄ້ນ ແລະ ໃຫ້ເຂົາໄດ້ໃຊ້ສິດເສລີພາບປະຊາທິປະໄຕຂອງເຂົາຄືພົນລະເມືອງລາວຜູ້ອື່ນ, ບໍ່ໃຫ້ມີການຈັບກຸມປາບປາມ. ສ່ວນພະນັກງານ ແລະ ກອງທະຫານຫວຽດນາມນັ້ນ, ຫຼັງຈາກຈັດຕັ້ງລັດຖະບານປະສົມແລ້ວ ພວກເຮົາຈະໃຫ້ກັບຄືນເມືອປະເທດຂອງເຂົາ.

ການຜ່ອນຜັນຂອງພວກເຮົາເຮັດໃຫ້ຝ່າຍວຽງຈັນພໍໃຈ, ຈຶ່ງໄດ້ພ້ອມກັນເຊັນສັນຍາວຽງຈັນຕາມຄຳສະເໜີຂອງພວກເຮົາ ແລະ ຈັດຕັ້ງລັດຖະບານປະສົມຂຶ້ນໄດ້ເປັນເທື່ອທຳອິດ ໃນທ້າຍເດືອນ 11 ປີ 1957. ຕັ້ງແຕ່ນັ້ນມາ ການບຸກຕີທາງບົກ ແລະ ທາງອາກາດຂອງຝ່າຍວຽງຈັນ ເຂົ້າໃສ່ສອງແຂວງເຕົ້າໂຮມຄື ແຂວງຫົວພັນ ແລະ ແຂວງຜົ້ງສາລີ ກໍ່ໄດ້ຢຸດ

ຕິລົງ ; ການກ່າວປະນາມກັນທາງດ້ານວິທະຍຸກະຈາຍສຽງ ແລະ ທາງໜັງສືພິມ ກໍ່ຄ່ອຍໆເບົາລົງ. ສະຫາຍສຸພານຸວົງ ແລະ ເຮົາເອງໄດ້ເຂົ້າຮ່ວມລັດຖະບານປະສົມຊົ່ວຄາວ ແຫ່ງຊາດ ; ສະຫາຍສຸພານຸວົງໄດ້ເປັນລັດຖະມົນຕີກະຊວງແຜນພັງແຫ່ງຊາດ, ເຮົາເອງ ໄດ້ເປັນລັດຖະມົນຕີກະຊວງທຳມະການ ແລະ ສິລະປະກຳ, ສະຫາຍສຸພານຸວົງສືບຕໍ່ຢູ່ເຮືອນຊັ້ນດຽວທີ່ປາກປ່າສັກ, ສ່ວນເຮົານັ້ນທຳອິດ ຝ່າຍວຽງຈັນໃຫ້ຍ້າຍໄປຢູ່ເຮືອນໃຫຍ່ສອງຊັ້ນ ຫຼັງທີ່ຕັ້ງຢູ່ສີ່ແຍກພາກເໜືອຖະໜົນສາມແສນໄທກັບຖະໜົນລ້ານຊ້າງ, ແຕ່ວ່າພາຍຫຼັງມາ ເຂົາຊ້ຳພັດໃຫ້ຍ້າຍໄປຢູ່ເຮືອນສອງຊັ້ນ ຢູ່ຂ້າງຕະຫຼາດເຊົ້າ ເບື້ອງມະຫາວິທະຍາໄລການແພດ ເຊິ່ງເປັນຫ້ອງການແນວລາວຮັກຊາດ ທີ່ປ່ຽນຊື່ມາເປັນແນວລາວສ້າງຊາດໃນເວລານີ້.

ເຮົາຖືກແຕ່ງຕັ້ງເປັນລັດຖະມົນຕີແຕ່ບໍ່ມີໂຮງການເພື່ອເຮັດວຽກ. ຫຼັງຈາກຖືກຖຽງກັນຫຼາຍເທື່ອແລ້ວ ຝ່າຍວຽງຈັນໄດ້ຕົກລົງໃຫ້ກະຊວງຂອງເຮົາໄປຕັ້ງຢູ່ສົ້ນເບື້ອງໃຕ້ ຂອງກະດີວັດທາດຫຼວງ. ພວກເຂົາວ່າເຮົາເປັນກອມມູນິດ, ຕ້ອງເອົາເຮົາໄປໄວ້ນຳພະສົງ ເພື່ອໃຫ້ພວກນີ້ລາງສະພອງໃຫ້. ສົ້ນເບື້ອງເໜືອຂອງກະດີສອງຊັ້ນນັ້ນ ແມ່ນຫ້ອງການເຮັດວຽກແລະບ່ອນຢູ່ຂອງສົມເດັດສັງຄະນາຍົກ, ອາດຍາຄູ ຄູນ ມະນີວົງ ທີ່ເປັນປະທານສັງຄະມົນຕີແຫ່ງປະເທດລາວ. ຝ່າຍວຽງຈັນເອົາລົດຟອດ 8 ສູບ ສີຂາວມາໃຫ້ເຮົາຂີ່ໄປເຮັດວຽກ ; ລົດຄັນນີ້ທັງໃຫຍ່ທັງຍາວ, ເຮົາຂີ່ໄປບ່ອນໃດຄົນກໍ່ຫວງ ແລະຖາມວ່າ ເຮົາຕິອາເມລິກາເປັນຫຍັງຈຶ່ງຂີ່ລົດອາເມລິກາ, ບາງຄັ້ງບາງຄາວເຮົາກໍ່ຈຳເປັນຕ້ອງຕອບວ່າ ພວກເຮົາຕິຈັກກະພັດອາເມລິກາແທ້ ເພາະວ່າເຂົາມາເຮັດເສິກຮຸກຮານບ້ານເມືອງລາວ, ສ່ວນລົດທີ່ເຮົາຂີ່ນີ້ແມ່ນຜະລິດຂຶ້ນໂດຍພວກກຳມະກອນ ທີ່ເປັນພາກສ່ວນໜຶ່ງຂອງປະຊາຊົນອາເມລິກາເຊິ່ງພວກເຮົາຖືວ່າເປັນເພື່ອນມິດຂອງປະຊາຊົນລາວ ເພາະວ່າປະຊາຊົນອາເມລິກາເຄີຍໄດ້ຕໍ່ສູ້ດ້ວຍຫຼາຍຮູບຫຼາຍສີຕ້ານການກົດຂີ່ຂູດຮີດຂອງພວກນາຍທຶນຈັກກະພັດອາເມລິກາ ເພື່ອສິດເສລີພາບປະຊາທິປະໄຕ ແລະ ຄວາມຢູ່ດີກິນດີຂອງຕົນ, ຕ້ານການຊ່ວງເສັງປະກອບອາວຸດ , ຕ້ານສົງຄາມອິນດູຈີນ, ເພື່ອປົກປັກຮັກສາສັນຕິພາບ.

ເຮົາໄດ້ເຮັດວຽກຢູ່ໃກ້ສົມເດັດສັງຄະນາຍົກ ກໍ່ເປັນການດີແນວໜຶ່ງ. ບາງທີເພິ່ນຫວ່າງວຽກເພິ່ນກໍ່ຍ່າງມາລົມນຳເຮົາ. ບາງທີເຮົາຫວ່າງວຽກເຮົາກໍ່ຍ່າງໄປຫາເພິ່ນ, ເຮັດໃຫ້ເພິ່ນກັບເຮົາສະໜິດສະໜົມກັນດີຂຶ້ນຊຸກໄຊ້. ກ່ອນຈະເຮັດຄຳສັ່ງອັນໃດອອກ, ເຮົາກໍ່ໄປຖາມຄຳຄິດຄຳເຫັນຂອງເພິ່ນ ແລະ ໄດ້ດັດແກ້ໄປຕາມຄຳສະເໜີຂອງເພິ່ນ. ການພົບພໍ້ເວົ້າລົມນຳເພິ່ນເລື້ອຍໆແນວນັ້ນ ມັນເຮັດໃຫ້ເຮົາມີໂອກາດຊີ້ແຈງໃຫ້ເຂົ້າໃຈ ທາດແທ້ຂອງພວກສັກດີນາທີ່ຍອມຈຳນົນຕໍ່ນາຍທຶນ ແລະ ທາດແທ້ຂອງນາຍທຶນຈັກກະພັດ ແມ່ນຊອກຍຶດເອົາດິນແດນປະເທດອື່ນໄປເປັນເມືອງຂຶ້ນ ແລ້ວກົດຂີ່ຂູດຮີດປະຊາຊົນ, ເມື່ອພວກນີ້ອົດທົນບໍ່ໄດ້ ພາກັນຕໍ່ສູ້ຕ້ານຄືນ ພວກເຂົາກໍ່ໃຊ້ກຳລັງອາວຸດເຮັດສົງຄາມປາບປາມ. ສ່ວນນະໂຍບາຍຂອງ

ແນວລາວຮັກຊາດ ແມ່ນສາມັກຄີທຸກຊົນເຜົ່າ ທຸກສາສະໜາ ເພື່ອຕໍ່ສູ້ປົດປ່ອຍ ເອົາປະເທດຊາດມາເປັນເອກະລາດ, ບໍ່ຍອມໃຫ້ຊາດອື່ນມາກົດຂີ່ຂົ່ມເຫັງປະຊາຊົນ ໂດຍຖືວ່າສັດຕູຂອງຊາດກໍ່ແມ່ນສັດຕູຂອງພຸດທະສາສະໜາດັ່ງດຽວກັນ, ເພາະວ່າພວກເຮົາຕໍ່ສູ້ເພື່ອຄວາມຍຸດຕິທຳ, ເພື່ອມະນຸດສະທຳ, ເພື່ອຄວາມສາມັກຄີຂອງພົດທຸກຄົນ ບົນພື້ນຖານແຫ່ງຄວາມສະເພີພາບ ເພື່ອພ້ອມກັນຕ້ານສົງຄາມ ແລະ ປົກປັກຮັກສາສັນຕິພາບ.

ສົມເດັດສັງຄານາຍົກສົ້ງຊອມເບິ່ງເຮົາຢ່າງໃກ້ຊິດທີ່ສຸດ, ມີຫຍັງບໍ່ເຂົ້າໃຈໜ້ອຍໜຶ່ງເພິ່ນກໍ່ສໍ້ຖາມເຮົາຢ່າງລະອຽດລະອໍອິຫຼີ. ເມື່ອເຫັນວ່າຄຳຕອບ ແລະ ການກະທຳຕົວຈິງ ຂອງເຮົາເປັນທີ່ໄວ້ວາງໃຈໄດ້ແລ້ວ ເພິ່ນຈຶ່ງເລົ່າຄວາມບໍ່ພໍໃຈຂອງເພິ່ນ ແລະ ຂອງພະສົງທັງມວນຕໍ່ລະບອບວຽງຈັນໃຫ້ເຮົາຟັງ. ເຮົາໄປນຳເພິ່ນໃນເວລາສະຫຼອງມື້ຄົບຮອບ 2.500 ປີ ຂອງພຸດທະສາສະໜາທີ່ແຂວງໄຊຍະບູລີ, ຫຼວງນ້ຳທາ ແລະ ບ້ານຫາດຊາຍຄູນແຂວງຈຳປາສັກ ກໍ່ເປັນໂອກາດໃຫ້ເພິ່ນສັງເກດຕີລາຄາເຮົາ ໂດຍເອົາເຮົາໄປປຽບທຽບໃສ່ອາດຍາເຈົ້ານາຍຜູ້ອື່ນ ຂອງຝ່າຍວຽງຈັນໃນການເຄົາລົບນັບຖືພຸດທະສາສະໜາ, ເປັນຕົ້ນແມ່ນການປະຕິບັດສິນ 5 ແລະ ເຄົາລົບນັບຖືພະສົງອົງຄະເຈົ້າດ້ວຍຄວາມສັດຊື່ຈິງໃຈ. ມື້ໜຶ່ງ, ຫຼັງຈາກມື້ບຸນທາດຫຼວງ, ເພິ່ນໄດ້ນິມົນເອົາພະສົງຈາກທຸກແຂວງ 500 ກວ່າອົງມາລວມກັນຢູ່ທີ່ສາລາພັນຫ້ອງ ແລ້ວແຕ່ງອາຍຈົວມາເອີ້ນເອົາເຮົາໄປຊີ້ແຈງນະໂຍບາຍ ຂອງແນວລາວຮັກຊາດຕໍ່ທີ່ຊຸມນຸມນັ້ນ. ຫຼັງຈາກເຮົາເວົ້າພົດແລ້ວ ເພິ່ນກໍ່ບອກໃຫ້ພະສົງອົງທີ່ຍັງມີຂໍ້ຂ້ອງໃຈຊັກຖາມຫຼາຍສິ່ງຫຼາຍແນວໃຫ້ເຮົາຕອບ, ສ່ວນຫຼາຍແມ່ນຖາມກ່ຽວກັບນະໂຍບາຍຂອງພວກເຮົາຕໍ່ພຸດທະສາສະໜາ ແລະ ສາສະໜາອື່ນໆ. ກອງປະຊຸມເທື່ອນັ້ນ ກິນເວລາພົດຕອນບ່າຍໜຶ່ງ ແລະ ດຳເນີນໄປຊ່ອງໜ້າທ້າວ ມູເລີ ຫົວໜ້າພະແນກໂຄສະນາຂອງສະຖານທູດອາເມລິກາທີ່ມາພົບພວກເຮົາ"ໂດຍບັງເອີນ". ທ້າຍສຸດມາສົມເດັດສັງຄານາຍົກກໍ່ໄດ້ຖາມຄຳເຫັນຂອງພະສົງກ່ຽວກັບນະໂຍບາຍຂອງແນວລາວຮັກຊາດ ແລະ ກະຊວງທຳມະການ. ພະສົງທັງໝົດທີ່ນັ່ງລົງເທິງສາດທີ່ປູພື້ນສາລາພັນຫ້ອງ ກໍ່ພ້ອມກັນລຸກຂຶ້ນຍົກມື ແລ້ວຂານເປັນສຽງດຽວກັນວ່າສະໜັບສະໜູນນະໂຍບາຍຂອງແນວລາວຮັກຊາດ, ຂອງກະຊວງທຳມະການ ແລະ ໄວ້ວາງໃຈຢ່າງສົມບູນໃນຕົວຂອງເຮົາ ແລະ ຂໍໃຫ້ເຮົາເຊື່ອໝັ້ນວ່າພະສົງລາວທັງໝົດ ຈະຢູ່ຄຽງຂ້າງເຮົາທຸກເວລາ. ຄຳເວົ້າຂອງພະສົງ ແລະ ສົມເດັດສັງຄານາຍົກໃນມື້ນັ້ນ ເຮັດໃຫ້ເຮົາຕື່ນເຕັ້ນດີໃຈຈົນວ່າມາຮອດດຽວນີ້ກໍຍັງຈື່ຢູ່ບໍ່ລືມ.

ການເຮັດວຽກຮ່ວມກັນຢູ່ໃນລັດຖະບານປະສົມ ມັນບໍ່ແມ່ນເປີກສາວາງແຜນການ ແລະ ຕົກລົງແກ້ໄຂວຽກງານສ້າງສາປະເທດຊາດຕາມທຳມະດາ. ໃນທຸກກອງປະຊຸມລັດຖະບານທີ່ຈັດຂຶ້ນອາທິດລະເທື່ອ ມັນແມ່ນເວທີກ່າວຫາກັນວ່າ ໃຜຖືກ ແລະ ໃຜຜິດ.ຝ່າຍວຽງຈັນເປັນຜູ້ຕັ້ງບັນຫາຂຶ້ນກ່ອນ ກ່າວຫາວ່າຝ່າຍແນວລາວຮັກຊາດເປັນຝ່າຍຕິຕ້ານລັດຖະບານ ຕະຫຼອດ

ມາ ເຊິ່ງເປັນການກະທຳທີ່ຂະບົດຕໍ່ລັດຖະບານ ແລະ ຕໍ່ເຈົ້າຊີວິດ, ຕ້ອງປະຕິຍານວ່າຕໍ່ໄປຈະບໍ່ປະພຶດແບບນັ້ນອີກ. ຝ່າຍແນວລາວຮັກຊາດກໍ່ຈຳເປັນຕ້ອງໄດ້ຕອບຄືນວ່າ ການໂຈມຕີຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ເພື່ອເຮັດໃຫ້ປະຊາຊົນລາວ, ລັດຖະບານລາວ ແລະ ເຈົ້າຊີວິດໄດ້ເປັນພົນລະເມືອງ ແລະ ຜູ້ນຳຂອງປະເທດລາວມີກຽດສູງເທົ່າທຽມກັບປະເທດເອກະລາດທັງຫຼາຍໃນໂລກ ບໍ່ແມ່ນການຂະບົດ ແລະ ບໍ່ແມ່ນການກະທຳຜິດ ; ຫຼາຍປະເທດເມືອງຂຶ້ນໃນໂລກກໍ່ໄດ້ເຮັດແນວນັ້ນ ; ຄົນອາເມລິກາເອງ ໄດ້ລຸກຂຶ້ນຕ້ານການຄອບຄອງຂອງຈັກກະພັດອັງກິດ ແລະ ລູກຫຼານຂອງເຂົາຈົນກອບກູ້ເອົາເອກະລາດຄືນມາໄດ້ກໍ່ຍັງວ່າເປັນໄຊຊະນະໃຫຍ່ ແລະ ເປັນກຽດອັນສູງທີ່ສຸດສຳລັບປະເທດຊາດ ແລະ ປະຊາຊົນອາເມລິກາທັງມວນ, ຜູ້ທີ່ຍອມຈຳນົນຕໍ່ສັດຕູແລ້ວຮ່ວມມືກັບສັດຕູ ມາຈັບກຸມຂ້າຟັນປະຊາຊົນຂອງປະເທດຕົນຈຶ່ງແມ່ນເປັນຜູ້ຜິດ ເພາະວ່າເປັນການຂາຍຊາດ, ຂາຍປະຊາຊົນ ເຮັດໃຫ້ພົດທັງຊາດເປັນຂ້ອຍຂ້າຊາດອື່ນ. ຝ່າຍແນວລາວຮັກຊາດສະເໜີໃຫ້ຝ່າຍວຽງຈັນ ປ່ຽນບັນຍາກາດຂອງກອງປະຊຸມມາເປັນການເປີກສາຫາລືກັນດ້ວຍຄວາມຮັກແພງກັນຢ່າງຈິງໃຈ ເພື່ອພ້ອມກັນອອກຄຳສັ່ງໃຫ້ທຸກທ້ອງຖິ່ນງົດເຊົາການຈຳແນກແກ້ແຄ້ນຈັບກຸມ ຍິງຂ້າຄົນຂອງແນວລາວຮັກຊາດ ທີ່ຈະຖືກປົດອອກປະຈຳການກັບຄືນຢູ່ບ້ານເດີມຂອງເຂົາ ແລ້ວພ້ອມກັນກຽມເຮັດ ການເລືອກຕັ້ງເພີ່ມເຕີມ. ຝ່າຍວຽງຈັນທວງໃຫ້ພວກເຮົາມອບສອງແຂວງເຕົ້າໂຮມໃຫ້ແກ່ລັດຖະບານ, ໃຫ້ເອົາກອງທະຫານຂອງພວກເຮົາອອກຈາກໜ້າທີ່ການ ແລ້ວໃຫ້ກອງພັນທີໜຶ່ງໄປຕັ້ງຢູ່ເມືອງຊຽງເງິນແຂວງຫຼວງພະບາງ ແລະ ກອງພັນທີສອງໄປຕັ້ງຢູ່ທົ່ງໄຫຫີນ ແຂວງຊຽງຂວາງ ; ສ່ວນອາວຸດທີ່ປົດອອກຈາກກອງທະຫານຂອງພວກເຮົານັ້ນ ພວກເຂົາກໍ່ທວງໃຫ້ເອົາມອບໃຫ້ລັດຖະບານຄືກັນ. ພວກເຮົາຮັບຮອງຈະປະຕິບັດສັນຍາວຽງຈັນຢ່າງຖືກຕ້ອງທຸກປະການ, ຂໍໃຫ້ແຕ່ຝ່າຍວຽງຈັນປະຕິບັດຢ່າງເຄັ່ງຄັດຄືກັນ ; ແລະຕໍ່ຈາກນັ້ນມາສອງເດືອນ ພວກເຮົາກໍ່ໄດ້ເຮັດພິທີມອບສອງແຂວງເຕົ້າໂຮມ ແລະ ອາວຸດ ຫຼາຍສິບພັນກະບອກໃຫ້ລັດຖະບານປະສົມແທ້.

ກາງເດືອນ 5 ປີ 1958 ທັງສອງຝ່າຍໄດ້ຕົກລົງເຮັດການເລືອກຕັ້ງເພີ່ມເຕີມ ເພື່ອເລືອກເອົາຜູ້ແທນລາດສະດອນ 21 ຄົນໄປຕື່ມໃສ່ລັດຖະສະພາຂອງຝ່າຍວຽງຈັນ ທີ່ມີຢູ່ແລ້ວ 39 ຄົນ. ແນວລາວຮັກຊາດອອກສະໝັກ 13 ຄົນ ໄດ້ 8 ຄົນ, ຄະນະສັນຕິພາບເປັນກາງທີ່ເປັນເພື່ອນຜູ້ພວກເຮົາສະໜັບສະໜູນອອກສະໝັກ 4 ຄົນ ໄດ້ພົດທຸກຄົນ, ຝ່າຍວຽງຈັນອອກສະໝັກ 32 ຄົນ ໄດ້ 8 ຄົນ. ຕົວເຮົາເອງໄດ້ເປັນຜູ້ແທນລາດສະດອນແຂວງຫຼວງພະບາງພ້ອມກັບເຈົ້າສຸກ ວົງສັກ, ສະຫາຍ ຄຳພາຍ ບຸບຜາ ແລະ ນາງຄຳແພງ ບຸບຜາ. ທ່ານສີທົນ ກົມມະດຳ ເປັນຜູ້ແທນແຂວງສາລະວັນ, ສະຫາຍ ໜູຮັກ ພູມສະຫວັນ ແລະ ທ່ານ ສີຊະນະ ສີສານ ເປັນຜູ້ແທນແຂວງສະຫວັນນະເຂດ, ສະຫາຍ ພູນ ສີປະເສີດ ເປັນຜູ້ແທນ

ແຂວງຄຳມ່ວນ ແລະ ສະຫາຍ ສຸພານຸວົງ ເປັນຜູ້ແທນແຂວງວຽງຈັນ.

ຫຼັງຈາກສູ້ຊົງກັນຢູ່ໃນລັດຖະບານໄດ 5 ເດືອນກວ່າ ແລະ ໃນລັດຖະສະພາໄດ້ເດືອນກວ່າແລວ ຜູຍ ຊະນະນິກອນ ໄດ້ທວງໃຫ້ລັດຖະບານປະສົມລາອອກ ໂດຍອ້າງເອົາຕາມລັດຖະທຳມະນູນລາຊະອານາຈັກທີ່ວ່າ ຫຼັງຈາກການເລືອກຕັ້ງສຳເລັດແລ້ວ ລັດຖະບານຊຸດເກົ່າຕ້ອງລາອອກ ເພື່ອໃຫ້ລັດຖະສະພາເລືອກເອົາລັດຖະບານຊຸດໃໝ່. ຕາມການພົບຕົງຂອງອາເມລິກາ ແລະ ເຈົ້າຊີວິດ, ເຈົ້າສຸວັນນະພູມາໄດ້ລາອອກ. ເຈົ້າຊີວິດໄດ້ບົ່ງຕົວໃຫ້ເຈົ້າສຸວັນນະພູມາຈັດຕັ້ງລັດຖະບານຊຸດໃໝ່ ແຕ່ວ່າບໍ່ໄດ້ຮັບສຽງສ່ວນຫຼາຍສະໜັບສະໜູນຂອງລັດຖະສະພາກໍ່ຕົກໄປ. ທ້າວຜູຍ ຊະນະນິກອນ ທີ່ເປັນລູກມືເກົ່າຂອງພວກລ່າເມືອງຂຶ້ນຝະລັ່ງ ແຕ່ຫາກກັບປິ້ນໄປເປັນລູກມືຂອງຈັກກະພັດອາເມລິກາໄດ້ຖືກບົ່ງຕົວ ໃຫ້ຈັດຕັ້ງລັດຖະບານ, ໄດ້ຮັບສຽງສ່ວນຫຼາຍຂອງສະພາ ແລະ ໄດ້ເປັນນາຍົກລັດຖະມົນຕີຂອງລັດຖະບານຊຸດໃໝ່ ທີ່ບໍ່ມີຕົວແທນຂອງຝ່າຍແນວລາວຮັກຊາດຮ່ວມນຳຈັກຄົນ, ພາຍຄວາມວ່າລັດຖະບານປະສົມຊຸດທຳອິດ ດຳເນີນວຽກການມາໄດ້ພຽງແຕ່ 6 ເດືອນ ກໍ່ຖືກຈັກກະພັດອາເມລິກາ ແລະລູກມືໂຄ່ນລົ້ມລົງ. ພວກຕົວແທນຝ່າຍແນວລາວຮັກຊາດຍັງຄົງເປັນແຕ່ຜູ້ແທນລາດສະດອນ ຢູ່ໃນລັດຖະສະພາເທົ່ານັ້ນ.

ໃນວລານັ້ນເອງ, ສະຫາຍເລຂາທິການໃຫຍ່ໄກສອນ ພົມວິຫານ ໄດ້ມາວຽງຈັນແລະໄດ້ເຊີນຄະນະປະຈຳສູນກາງພັກປະຊາຊົນລາວມາລວມກັນເພື່ອຕີລາຄາສະພາບການ ແລະວາງແຜນການປະຕິບັດໃນໄລຍະໃໝ່. ພວກເຮົາເຫັນເປັນເອກະສັນກັນວ່າ ເວລານັ້ນຈັກກະພັດອາເມລິກາກຳເອົາ ຜູຍ ຊະນະນິກອນ ເປັນເຄື່ອງມືຂອງເຂົາໄດ້ແລ້ວ ແລະ ພວມຈະກໍ່ສົງຄາມຮຸກຮານຂຶ້ນໃນລາວ. ພວກເຂົາເອົາ ຜູຍ ຊະນະນິກອນ ຂຶ້ນເປັນນາຍົກລັດຖະມົນຕີເພື່ອໂຄ່ນລົ້ມລັດຖະບານປະສົມລົງ ແລະ ສ້າງເງື່ອນໄຂປາບປາມແນວລາວຮັກຊາດ ແລະບັນດາບຸກຄົນທີ່ຮັກຫອມສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ, ຄວາມຍຸດຕິທຳແລະຄວາມກ້າວໜ້າທາງສັງຄົມ. ໃນກອງປະຊຸມເທື່ອນັ້ນ ເຮົາໄດ້ເຫັນສະພາບການໃນຂັ້ນຕໍ່ໄປຈະບໍ່ດີ, ຈະເປັນອັນຕະລາຍໃຫ້ແກ່ພວກເຮົາ, ແກ່ປະເທດຊາດ ແລະ ປະຊາຊົນລາວ. ຕໍ່ໜ້າເຈຕະນາຮ້າຍຂອງສັດຕູແນວນັ້ນ ພວກເຮົາເຫັນເປັນເອກະພາບກັນວ່າ ສູນກາງພັກແລະ ພະນັກງານພວກເຮົາຕ້ອງແບ່ງອອກເປັນສອງພາກສ່ວນ. ພວກທີ່ບໍ່ໄດ້ເປັນສະມາຊິກລັດຖະສະພາ ຕ້ອງຄ່ອຍທະຍອຍກັນໜີໄປຫາເຂດປົດປ່ອຍເກົ່າ, ສ້າງກຳລັງປະກອບອາວຸດເພື່ອກຽມຕ້ານສົງຄາມຮຸກຮານຂອງຈັກກະພັດອາເມລິກາ. ພວກທີ່ເປັນສະມາຊິກ ລັດຖະສະພາໃຫ້ສືບຕໍ່ຕໍ່ສູ້ເພື່ອທວງໃຫ້ຝ່າຍກົງກັນຂ້າມ ຕ້ອງປະຕິບັດສັນຍາວຽງຈັນ ທີ່ໄດ້ເຊັນກັນແລ້ວນັ້ນຢ່າງຖືກຕ້ອງ. ເມື່ອໃດເຫັນວ່າມີອັນຕະລາຍຈະຖືກຝ່າຍກົງກັນຂ້າມຈັບ,ຖ້າຫາກມີຄວາມສາມາດໂຕນໜີພ້ອມກັນໄດ້ຈຶ່ງໃຫ້ໂຕນ, ບໍ່ດັ່ງນັ້ນຕ້ອງຍອມປ່ອຍໃຫ້ເຂົາຈັບ ເພື່ອສະແດງ

ຄວາມເຄົາລົບນັບຖືລາຍເຊັນຂອງພວກເຂົາແລ້ວ ຈຶ່ງຊອກຫາວິທີໂຕນໜີຈາກຄຸກໃຫ້ໄດ້, ຖ້າຫາກໂຕນໜີບໍ່ພົ້ນຖືກສັດຕູຈັບກຸມ ຫຼື ຍິງຂ້າກໍ່ຕ້ອງຍອມເສຍສະຫຼະຊີວິດເພື່ອປະຊາຊົນ ແລະເພື່ອຄວາມເປັນທຳ. ສ່ວນພວກທີ່ຖອນຕົວອອກໄປສ້າງກຳລັງນັ້ນຕ້ອງພະຍາຍາມສ້າງໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ຖ້າວ່າພວກທີ່ຍັງຕໍ່ສູ້ທາງການເມືອງຢູ່ວຽງຈັນພໍ້ ຫາກຖືກຈັບ ກໍ່ໃຫ້ພວກທີ່ຫນີອອກໄປນັ້ນ ສົ່ງກຳລັງມາຕີສັດຕູເພື່ອຊ່ວຍປົດປ່ອຍເອົາພວກທີ່ຖືກຈັບນັ້ນໃຫ້ຈົນໄດ້.

ເມື່ອພູຍ ຊະນະນິກອນ ໄດ້ກຳອຳນາດແລ້ວ ທູດອາເມລິກາທີ່ຊື່ວ່າ ທ້າວສະມິດ ກໍ່ກົ້ມລົງໃຫຍ່ ແລະ ປະກາດໃນບ່ອນກົ້ມລົງນັ້ນວ່າ ບັດນີ້ປະເທດລາວຈຶ່ງມີລັດຖະບານ ຜູ້ຈະຮ່ວມມືກັບອາເມລິກາເພື່ອສ້າງປະໂຫຍດໃຫ້ແກ່ປະເທດລາວແທ້. ຕັ້ງແຕ່ນັ້ນມາ ພູຍ ຊະນະນິກອນ ກໍ່ລົງມືປະຕິບັດນະໂຍບາຍອັນບໍ່ສັນຕິພາບ ແລະ ບໍ່ເປັນກາງຂອງເຂົາໂລດ. ເຂົາສົ່ງເຈົ້າສຸວັນນະພູມາໄປເປັນເອກອັກຄະລັດຖະທູດລາວຢູ່ປະເທດຝະລັ່ງ, ອອກຄຳສັ່ງໃຫ້ທຸກແຂວງລົງມືປາບປາມສະມາຊິກຄົນແນວລາວຮັກຊາດ ທີ່ກັບຄືນເມືອຢູ່ບ້ານເດີມຂອງເຂົານັ້ນຢ່າງຮ້າຍແຮງຂົ້ນຈັກໃຈ. ກອງປະຊຸມລັດຖະສະພາແຕ່ລະມື້ ກາຍເປັນບ່ອນສູ້ຖຽງກັນ ລະຫວ່າງຜູ້ແທນລາດສະດອນຂອງສອງຝ່າຍຢ່າງດຸເດືອດທີ່ສຸດ. ຝ່າຍວຽງຈັນກ່າວໂຈມຕີ ຝ່າຍແນວລາວຮັກຊາດວ່າບໍ່ຈິງໃຈເຂົ້າຮ່ວມກັນ, ວ່າລັກເອົາອາວຸດໄປຝັງໄວ້ ເພື່ອກຽມການວຸ່ນວາຍຂົ້ນຕາມຫຼັງ. ຝ່າຍແນວລາວຮັກຊາດປະຕິເສດຄວາມກ່າວຫາ ອັນບໍ່ມີມູນຄວາມຈິງນັ້ນຢ່າງສົມເຊີງ ວ່າຝ່າຍແນວລາວຮັກຊາດເຂົ້າຮ່ວມລັດຖະບານ ແລະລັດຖະສະພາດ້ວຍຄວາມຈິງໃຈຢາກໃຫ້ປະເທດຊາດມີສັນຕິພາບ, ເອກະລາດ, ຄວາມຍຸດຕິທຳ ແລະ ຈະເລີນຮຸ່ງເຮືອງ ແລະ ກ່າວຫາວ່າຝ່າຍວຽງຈັນເອົາສັນຍາວຽງຈັນເປັນເຄື່ອງມື ເພື່ອຍົວະເອົາຄົນຝ່າຍແນວລາວຮັກຊາດເຂົ້າມາຮ່ວມລັດຖະບານ ແລະ ລັດຖະສະພາເພື່ອຢຶດເອົາສອງແຂວງເຕົ້າໂຮມ ແລະ ປົດອາວຸດບັນດາກຳລັງຮັກຊາດ,ວ່າແມ່ນຝ່າຍວຽງຈັນ ເປັນຜູ້ເອົາອາວຸດທີ່ຝ່າຍແນວລາວຮັກຊາດເອົາມາມອບໃຫ້ນັ້ນ ໄປຝັງດິນແລ້ວຂຸດອອກມາກ່າວຫາຄວາມ ບໍ່ຈິງໃສ່ຝ່າຍແນວລາວຮັກຊາດ ເພາະວ່ານໍ້າເບີປືນທີ່ຂຸດອອກມານັ້ນ ມັນຖືກກັບນໍ້າເບີທີ່ມີຢູ່ໃນບັນຊີອາວຸດຂອງແນວລາວຮັກຊາດທີ່ໄດ້ມອບໃຫ້ລັດຖະບານປະສົມນັ້ນ. ການສູ້ຖຽງກັນໃນລັດຖະສະພາດຳເນີນໄປຫຼາຍອາທິດຕິດໆກັນຢ່າງຟົດເດືອດທີ່ສຸດ ຈົນວ່າປະຊາຊົນໃນຕົວເມືອງແລະໃນຊົນນະບົດໄດ້ມາເຕົ້າໂຮມກັນຫ້ອມລ້ອມລັດຖະສະພາ ເພື່ອຟັງຄວາມເວົ້າຂອງຜູ້ແທນລາດສະດອນຂອງແຕ່ລະຝ່າຍ ແລະ ຮ້ອງໂຮຕົບມືສະໜັບສະໜູນຜູ້ແທນຂອງຝ່າຍແນວລາວຮັກຊາດທີ່ກ່າວໂຈມຕີການກະທຳອັນບໍ່ຍຸດຕິທຳ, ບໍ່ມະນຸດສະທຳ ແລະ ບໍ່ຖືກກົດໝາຍຂອງຝ່າຍວຽງຈັນ ທີ່ເປັນການກົດຂີ່ຂົ່ມເຫັງປະຊາຊົນລາວ ເພື່ອຮັບໃຊ້ຜົນປະໂຫຍດຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ຂອງຈັກກະພັດອາເມລິກາ ແລະ ລູກມື.

ຕາມກົດໝາຍລັດຖະທຳມະນູນຂອງລາຊະອານາຈັກ ທີ່ພວມໃຊ້ຢູ່ນັ້ນ, ຜູ້ແທນລາດສະດອນທຸກຄົນມີສິດເວົ້າໝົດທຸກອັນ ຕາມຄຳເຫັນຂອງຕົນຢູ່ໃນລັດຖະສະພາ, ຜູ້ແທນອື່ນທີ່ຖືກໂຈມຕີບໍ່ມີສິດຄຽດແຄ້ນ ແລະ ຫາວິທີແກ້ແຄ້ນຢູ່ທາງນອກລັດຖະສະພາ. ແຕ່ວ່າ ພູຍ ຊະນະນິກອນ ທີ່ເປັນນາຍົກລັດຖະມົນຕີບໍ່ໄດ້ປະຕິບັດຕາມແນວນັ້ນ ; ເຂົາສະແດງຄວາມຄຽດແຄ້ນຂອງເຂົາອອກດ້ວຍຄວາມເວົ້າ ແລະ ທ່າທີອັນເຫັນປະຈັກຕາ. ສອງສາມມື້ຕໍ່ມາເຂົາໄດ້ມາກ່າວຄຳປາໄສຕໍ່ລັດຖະສະພາເພື່ອຂໍໃຫ້ລັດຖະສະພາມອບສິດພິເສດໃຫ້ເຂົາ ເອົາໄປໃຊ້ໃນການເຮັດໃຫ້ສະຫງົບໃນບ້ານເມືອງ. ພວກຜູ້ແທນຝ່າຍແນວລາວຮັກຊາດ ແລະ ຄະນະກຳມະການສັນຕິພາບ-ເປັນກາງ ເຂົ້າໃຈດີວ່າ ການທີ່ພູຍ ຊະນະນິກອນ ຂໍສິດພິເສດເທື່ອນີ້ແມ່ນຈະເອົາໄປໃຊ້ເພື່ອປາບປາມບັນດາບຸກຄົນຜູ້ຮັກຊາດ, ຮັກຄວາມເປັນທຳ ແລະຮັກຫອມສັນຕິພາບ ; ມັນສະແດງໃຫ້ເຫັນແຈ້ງເຈຕະນາຂອງ ພູຍ ຊະນະນິກອນ ທີ່ຈະຮ່ວມມືກັບຈັກກະພັດອາເມລິກາ ເພື່ອຂະຫຍາຍສົງຄາມຮຸກຮານຂອງພວກເຂົາຢູ່ໃນລາວ. ບັນດາຜູ້ແທນແນວລາວຮັກຊາດ ແລະ ຜູ້ແທນອື່ນທີ່ຮັກສັນຕິພາບ ແລະ ຄວາມຍຸດຕິທຳໄດ້ພ້ອມກັນຂຶ້ນສຽງຄັດຄ້ານ ແລະ ກ່າວໂຈມຕີເຈຕະນາກະຫາຍສົງຄາມຂອງພູຍ ຊະນະນິກອນ. ການຖົກຖຽງກັນໄດ້ດຳເນີນໄປ 5 ວັນຢ່າງດຸເດືອດ, ເຄັ່ງຮ້ອນ ແລະ ພິດພື້ນທີ່ສຸດ. ໃນເວລານັ້ນຈັກກະພັດອາເມລິກາ ແລະ ພູຍ ຊະນະນິກອນ ໄດ້ຊຸ້ມຂຽວຊອກຊື້ເອົາສຽງສະໜັບສະໜູນ ຢ່າງຂະຫຍັນມັງມີ່ທີ່ສຸດ. ມື້ໜຶ່ງໃນໄລຍະນັ້ນ ທ້າວ ອຸ່ນ ຊະນະນິກອນ, ນ້ອງຊາຍຂອງພູຍ ຊະນະນິກອນ ເຊິ່ງເຄີຍເປັນເພື່ອນຮຽນໜັງສືຮ່ວມຫ້ອງດຽວກັນ ແລະ ເຄີຍເປັນເພື່ອນ ສະໜິດສະໜົມກັບເຣົາ ໄດ້ມາຫາເຣົາທີ່ເຮືອນຂອງເຣົາເອງ ໂດຍຖືເອົາຫີບວາລິດນ້ອຍໜ່ວຍໜຶ່ງມານຳ. ຫຼັງຈາກເຣົາຕ້ອນຮັບຢ່າງຮັກແພງໂດຍເອົານ້ຳຊາ ແລະ ເຫຼົ້າເບຍໃຫ້ກິນແລ້ວ ເຂົາໄດ້ເວົ້າຄືນເຖິງຄວາມຮັກແພງສະໜິດສະໜົມແຕ່ເກົ່າກ່ອນ, ເວົ້າວ່າເວລານີ້ ເຂົາກໍ່ຍັງຮັກແພງເຣົາຄືເກົ່າ, ຢາກໃຫ້ທາງຝ່າຍເຣົາກໍ່ເປັນດັ່ງດຽວກັນ, ຢາກໃຫ້ເຣົາຊ່ວຍ ພູຍ ຊະນະນິກອນ ໂດຍໃຫ້ຊຸ້ມມືໃນລັດຖະສະພາສະໜັບສະໜູນຄຳສະເໜີຂອງພູຍ ຊະນະນິກອນ ທີ່ຂໍສິດພິເສດຈາກລັດຖະສະພາເທື່ອນີ້ ແລະ ວ່າເຂົາຈະຖືມະນາບຸນຄຸນໃຫ້ແກ່ເຣົາຢ່າງຈິງໃຈ ; ເວົ້າແລ້ວເຂົາກໍ່ໄຂຫີບວາລິດຂຶ້ນເອົາເງິນກີບຝ່າຍວຽງຈັນອອກມານັບໃຫ້ເຣົາ 4 ແສນ 5 ພັນກີບ ; ເຂົາວ່າອັນນີ້ແມ່ນເງິນຂອງພູຍ ຊະນະນິກອນ ທີ່ຝາກມາໃຫ້ເຣົາຢ່າງປິດລັບ , ນອກຈາກເຣົາແລ້ວເຂົາກໍ່ບໍ່ເອົາໃຫ້ໃຜ ແລະ ເມື່ອເຣົາເອົາແລ້ວກໍ່ໃຫ້ຮັກສາຄວາມລັບຢ່າງເຄັ່ງຄັດ.

ເຣົາໄດ້ເວົ້າຕອບ ທ້າວອຸ່ນ ຊະນະນິກອນ ວ່າເຣົາໄດ້ໄປເຮັດການຕໍ່ສູ້ກູ້ຊາດ ເປັນເວລາເກືອບ 10 ປີ, ສ່ວນຕົວເຂົາໄດ້ໜີຈາກຝະລັ່ງໄປຢູ່ປະເທດໄທ ແລ້ວຊ້ຳພັດກັບຄືນມາຮ່ວມມືກັບຝະລັ່ງ ເຣົາກໍ່ຍັງຮັກແພງເຂົາຄືເກົ່າຢູ່, ແຕ່ວ່າເວລານີ້ ພວກເຣົາຕີຂັບໄລ່ຝະລັ່ງ

ອອກໄປແລ້ວເຮົາຢາກໃຫ້ຄົນລາວທັງສອງຝ່າຍ ເຂົ້າລວມເປັນຄົນລາວອັນດຽວກັນເພື່ອພ້ອມກັນສ້າງປະເທດລາວໃຫ້ຈະເລີນຮຸ່ງເຮືອງພາຍໃນສັນຕິພາບ. ເຮົາຈະຊ່ວຍສະໜັບສະໜູນ ຜູຍ ຊະນະນິກອນ ກໍ່ຕໍ່ເມື່ອເຂົາປະຕິບັດນະໂຍບາຍສັນຕິພາບ ແລະ ຮ່ວມມືກັນ ແລະ ການຊ່ວຍຂອງເຮົາແມ່ນຈະຊ່ວຍໃຫ້ລາວ, ບໍ່ເລັ່ງຫວງເອົາເງິນຄ່າຢ່າງໃດ. ແຕ່ວ່າແຜນການ ຂໍສິດພິເສດຂອງຜູຍ ຊະນະນິກອນແມ່ນແນໃສ່ຈຸດປະສົງຈະປາບພວກຄົນທີ່ຮັກຊາດ, ຮັກຄວາມຍຸດຕິທຳ ແລະ ຮັກສັນຕິພາບ ; ຜູ້ທີ່ ຜູຍ ຊະນະນິກອນ ຈະປາບປາມແມ່ນສະມາຊິກ ແນວລາວຮັກຊາດ ; ດັ່ງນັ້ນ ເຮົາຈຶ່ງໄດ້ຂຶ້ນສຽງຄັດຄ້ານແລ້ວ, ເຮົາບໍ່ສາມາດຮັບເອົາເງິນຂອງຜູຍ ຊະນະນິກອນ ແລ້ວໄປຊ່ວຍໃຫ້ເຂົາມາປາບປາມໂຕເອງ ແລະ ໝູ່ຄູ່ຂອງຕົນໄດ້. ອຸ່ນ ຊະນະນິກອນ ໄດ້ອ້າງເຫດຜົນຂອງການເປັນໝູ່ຄູ່ຮັກແພງກັນແຕ່ເກົ່າກ່ອນເພື່ອຊວນເຊື່ອເຮົາ ທັງຊຸກຫີບເງິນມາໃຫ້ເຮົາ, ທັງເວົ້າຂູ່ເຮົາວ່າ ຄັນເຮົາບໍ່ເອົາເງິນກໍ່ແມ່ນເຮົາເປັນກອມມູນິດ. ການຖົກຖຽງກັນກິນເວລາ 3 ຊົ່ວໂມງ. ອຸ່ນ ຊະນະນິກອນເວົ້າແນວໃດ ເຮົາກໍ່ບໍ່ຮັບເອົາເງິນ ແລະ ໄດ້ບອກຢ່າງກົງໄປກົງມາວ່າ ເຮົາຄັດຄ້ານເລ້ກົນຜູຍ ຊະນະນິກອນ ທີ່ຢາກຂໍສິດພິເສດເພື່ອປາບປາມພວກເຮົາ ແລະ ບັນດາບຸກຄົນທີ່ຮັກສັນຕິພາບເປັນກາງ, ຄວາມຍຸດຕິທຳ ແລະເອກະລາດແຫ່ງຊາດ. ທ້າຍສຸດ ອຸ່ນ ຊະນະນິກອນ ກໍ່ຈັບເອົາຫີບເງິນ ຍ່າງກະຟົດກະຟາດແລ້ວຈົ່ມພຶມພຳສະແດງຄວາມບໍ່ດີໃຈ ລົງໜີຈາກເຮືອນເຮົາໄປ. ນີ້ເປັນເທື່ອທຳອິດທີ່ເຮົາເຫັນແຈ້ງການຊື້ຈ້າງຂອງຈັກກະພັດອາເມລິກາ ແລະ ລູກມື ເຊິ່ງເຮົາເຄີຍໄດ້ຍິນແຕ່ເພິ່ນເວົ້າເມື່ອກ່ອນນີ້.

ມື້ລຸນມາການຖົກຖຽງກັນໃນລັດຖະສະພາ ຍັງສືບຕໍ່ດ້ວຍຄວາມຟົດເດືອດດັ່ງເກົ່າ. ປະຊາຊົນບ້ານນອກຫ່າງໄກຈາກຕົວເມືອງວຽງຈັນ ມານັ່ງອ້ອມລັດຖະສະພາມີຈຳນວນຫຼາຍຂຶ້ນກວ່າເກົ່າ. ພວກຂະເຈົ້າມາຈາກບ້ານພ້າວ, ເວີນແຄນ, ນາໂງມ, ນາຕານ, ຫາດສຽວ, ຕານປ່ຽວ, ໜອງທາ, ຫົວຂົວ, ນາຊອນ, ນາຢາງ, ພາກັນຫາບຫັບພາກຖົ່ວດິນ, ມັນຕົ້ນ, ມັນເຜົາ, ໜໍ່ໄມ້, ເປັດໄກ່ ວ່າຈະເອົາມາຂາຍທີ່ຕະຫຼາດ, ແຕ່ພວກຂະເຈົ້າມາໂຮມກັນນັ່ງອ້ອມລັດຖະສະພາ ເພື່ອຟັງຜູ້ແທນລາດສະດອນສອງຝ່າຍຖົກຖຽງກັນໃນເລື່ອງ ຜູຍ ຊະນະນິກອນ ຂໍສິດພິເສດເພື່ອປາບປາມປະຊາຊົນ. ອຸ່ນ ຊະນະນິກອນ, ໂງ່ນ ຊະນະນິກອນ, ເຈົ້າສົມສະໜິດ ແລະ ພັກພວກຂອງເຂົາພາກັນຂຶ້ນສຽງ, ຂຶ້ນຕົ້ນຂຶ້ນມືຊອກເລື່ອງມາກ່າວຫາຝ່າຍແນວລາວຮັກຊາດ ແລະ ຜູ້ທີ່ສະໜັບສະໜູນພວກນີ້ວ່າ ເປັນຝ່າຍທີ່ບໍ່ມັກຄວາມສະຫງົບ, ວ່າເອົາທະຫານຫວຽດນາມມາຢຶດຄອງເມືອງລາວ. ຜູຍ ຊະນະນິກອນເອງ ຂຶ້ນໄປເວົ້າບາງຄັ້ງບາງຄາວເພື່ອຕື່ມນ້ຳໜັກໃຫ້ຄວາມເວົ້າຂອງພວກລູກນ້ອງຂອງເຂົາ. ພວກເຮົາຄັດຄ້ານທຸກຄວາມກ່າວຫາຂອງພວກເຂົາ ໂດຍເປີດໜ້າກາກເລ້ກົນກະຫາຍສົງຄາມ ແລະເຈຕະນາອັນຊົ່ວຊ້າຂອງພວກເຂົາທີ່ຢາກໃຊ້ສິດພິເສດນີ້ ເພື່ອຈັບກຸມປາບປາມປະຊາຊົນ ຜູ້ທີ່

ເຫັນດີນຳນະໂຍບາຍອັນຮ້າຍກາດຂອງພວກເຂົາ.

ພວກເຮົາບໍ່ປະຕິເສດວ່າມີກອງທະຫານຫວຽດນາມສູ້ຮົບຝະລັ່ງຢູ່ຄຽງຂ້າງພວກເຮົາ ; ພວກເຮົາເອົາທະຫານຫວຽດນາມມາກໍ່ຍ້ອນວ່າ ມີຄົນລາວກຸ່ມໜຶ່ງໄປຮ່ວມກັບຝະລັ່ງແລະພວມຮ່ວມກັບຈັກກະພັດອາເມລິກາ ທີ່ກະໂດດເຂົ້າມາແທນຝະລັ່ງ ເພື່ອເປັນນາຍກົດຂີ່ຂົ່ມເຫັງປະຊາຊົນລາວ. ກອງທະຫານຫວຽດນາມນັ້ນ ພວກເຮົາບອກເຂົາກັບເມື່ອໃດ ພວກເຂົາກໍ່ຈະກັບເມືອປະເທດຂອງເຂົາ. ມັນບໍ່ຄືພວກຝະລັ່ງ ແລະ ອາເມລິກາ ທີ່ຈະມາຢູ່ເປັນນາຍ ຄົນລາວ ແລະ ເຄີຍໄດ້ຈັບເອົາປະຊາຊົນລາວໄປຂ້າຖິ້ມຈົນນັບບໍ່ຖ້ວນແລ້ວ. ສຽງຕົບມືຮອງໂຮສະໜັບສະໜູນຂອງປະຊາຊົນຢູ່ຂ້າງນອກດັງກ້ອງເມືອງນັ້ນຂຶ້ນທຸກເທື່ອ ທີ່ຜູ້ແທນຝ່າຍແນວລາວຮັກຊາດ ແລະ ຝ່າຍສັນຕິພາບເປັນກາງຂຶ້ນໄປເວົ້າ, ຈົນວ່າ ເພັງ ພົງສະຫວັນ ທີ່ເປັນປະທານສະພາໄດ້ຮ້ອງໄປຫ້າມ ໂດຍຂູ່ວ່າຖ້າຍັງຕົບມືຮ້ອງໂຮຕື່ມອີກຈະຖອດສາຍໂທລະໂຄ່ງ ຫຼືຈະງົດປະຊຸມສະພາ, ແຕ່ວ່າສຽງຮ້ອງໂຮ ແລະ ຕົບມືຍັງຄຶງດັງກ້ອງກັງວານອ້ອມລັດຖະສະພາຢູ່ຄືເກົ່າ. ເມື່ອກອງປະຊຸມສະພາຢຸດພັກ, ພວກເຮົາຍ່າງອອກປະຕູສະພາໄປຂຶ້ນລົດ, ປະຊາຊົນເປັນຈຳນວນຫຼວງຫຼາຍແລ່ນເຂົ້າມາຫ້ອມລ້ອມພວກເຮົາ, ທັງຈັບມືຊົມເຊີຍ, ທັງຍົກເອົາຫັບໄກ່ຫັບມັນຕົ້ນມັນເພົ້າ ພາກຖົ່ວດິນໃຫ້ພວກເຮົາ. ພວກເຮົາຍົກມືຂອບໃຈ ແລະ ບໍ່ເອົາປານໃດ ຂະເຈົ້າກໍ່ເອົາຫັບເຫຼົ່ານັ້ນຖິ້ມເຂົ້າໃສ່ລົດຈີບອິນລົດຂອງພວກເຮົາຈົນເຕັມ. ນີ້ມັນສະແດງໃຫ້ພວກເຮົາເຫັນແຈ້ງຕື່ມອີກເທື່ອໜຶ່ງວ່າປະຊາຊົນລາວ ເຫັນພ້ອມກັບຄວາມເວົ້າຂອງພວກເຮົາ ແລະ ຮັກແພງພວກເຮົາຢ່າງຈິງໃຈແທ້. ເຫດການອັນນີ້ມັນຕຳເຂົ້າໃສ່ພາກຫົວໃຈເຮົາຈົນປາກບໍ່ອອກ ແລະ ຮອດດຽວນີ້ກໍ່ຍັງຈື່ບໍ່ລືມຮູບພາບທີ່ເກີດຂຶ້ນໃນມື້ນັ້ນ.

ເມື່ອໝົດກຳນົດອະພິປາຍກັນແລ້ວ ກໍ່ໄປເຖິງເວລາລົງຄະແນນສຽງ. ຈຳນວນຜູ້ແທນລາດສະດອນທັງໝົດມີ 60 ຄົນ, ເຂົ້າລັດຖະບານແລ້ວບໍ່ມີສິດລົງຄະແນນ 9 ຄົນ, ລວມພວກລົງຄະແນນ 51 ຄົນ, ລົງຄະແນນຄັດຄ້ານ 25 ຄົນ, ລົງຄະແນນສະໜັບສະໜູນ 26 ຄົນ; ແມ່ນວ່າໄດ້ຄະແນນລື່ນແຕ່ພຽງສຽງດຽວ ຜູຍ ຊະນະນິກອນ ກໍ່ໄດ້ຮັບສິດພິເສດ, ອັນເຮັດໃຫ້ປະຊາຊົນລາວທົ່ວປະເທດແກວ່ງຫົວພິດຫວັງ ແລະ ເປັນຫ່ວງວິຕົກນຳສະພາບການ ບ້ານເມືອງຫຼາຍທີ່ສຸດ.

ເມື່ອໄດ້ຮັບສິດພິເສດແລ້ວ ຜູຍ ຊະນະນິກອນ ກໍ່ອອກຄຳສັ່ງໃຫ້ພວກເຈົ້າໜ້າທີ່ ປົກຄອງໃນທົ່ວປະເທດ ອອກແຮງປາບປາມ, ຈັບກຸມ ແລະ ຍິງຂ້າຫົວໜ້າ ແລະ ຄະນະຮັບຜິດຊອບສຳນັກແນວລາວຮັກຊາດໃນແຂວງ ແລະ ເມືອງຕ່າງໆ, ບັງຄັບສະມາຊິກແນວລາວຮັກຊາດທີ່ກັບຄືນໄປບ້ານເດີມຂອງຂະເຈົ້າໃຫ້ລາອອກຈາກແນວລາວຮັກຊາດ, ຂູ່ເຂັນ ແລະ ຈັບກຸມພວກທີ່ບໍ່ຍອມລາອອກ, ເອົາເງິນ, ເອົາເຮືອນ ຫຼື ເອົາພົວເອົາເມຍໃຫ້ພວກທີ່ຍອມລາ - ອອກ. ພ້ອມກັນນັ້ນ ພວກເຂົາກໍ່ປ່າວຂ່າວໂຄສະນາຍຸຍົງນາຍ ແລະ ພົນທະຫານໃນກອງພົນ

ທີໜຶ່ງ ແລະທີສອງໃຫ້ແຕກແຍກກັນ, ອອກຄຳສັ່ງໃຫ້ພວກນາຍທະຫານໃນສອງກອງພັນ ຂອງແນວລາວຮັກຊາດຮັບເອົາຊັ້ນຕຳແໜ່ງຂອງກອງທັບຝ່າຍວຽງຈັນ ໂດຍວາງແຜນການວ່າຜູ້ໃດຮັບເອົາຊັ້ນຕຳແໜ່ງແລ້ວ ຈະຍົກຍ້າຍໄປປະຈຳຢູ່ໃນກອງອື່ນຂອງຝ່າຍວຽງຈັນ, ເຮັດໃຫ້ພົນທະຫານແນວລາວຮັກຊາດບໍ່ມີນາຍແລ້ວ ຈະແຍກເອົາພວກເຂົາໄປລວມເຂົ້າກອງອື່ນ ຂອງຝ່າຍວຽງຈັນ ເພື່ອຍຸບກອງທະຫານຂອງຝ່າຍແນວລາວຮັກຊາດໄປໃນຕົວ.

ມາຮອດຕົ້ນປີ 1959, ໃນກອງພັນທີໜຶ່ງມີນາຍທະຫານຈຳນວນໜຶ່ງຫຼັກໝັ້ນບໍ່ແໜ້ນ ແລະ ຄວາມຕັ້ງຕໍ່ບໍລິສຸດຕໍ່ພັກ ແລະ ຕໍ່ປະຊາຊົນບໍ່ເດັດຂາດ ໄດ້ໄປຮັບເອົາຍົດສັກ ຈາກຝ່າຍວຽງຈັນ ແລ້ວກໍ່ຖືກແຕ່ງຕັ້ງໃຫ້ໄປເປັນຮອງຜູ້ບັນຊາກອງພັນ ຫຼື ກອງຮ້ອຍຂອງກອງທະຫານຝ່າຍວຽງຈັນ. ພວກທີ່ເຫຼືອບໍ່ມີນາຍບັນຊາແລ້ວ ຝ່າຍວຽງຈັນກໍ່ເອົາເງິນ, ເອົາໂມງ, ເອົາວິທະຍຸຮັບຟັງຊື້ເອົາໃຫ້ຂຶ້ນສຽງຕ້ານສູນກາງແນວລາວຮັກຊາດ ແລະ ກິນນ້ຳສະບານສັດຊື່ ຕໍ່ຝ່າຍວຽງຈັນ ; ບາງຄົນເອົາກໍ່ໃຫ້ເລື່ອນຊັ້ນ, ບາງຄົນກໍ່ໃຫ້ຍ້າຍໄປປະຈຳການຢູ່ບ້ານເດີມ, ເພື່ອປາບປາມໝູ່ເກົ່າຂອງຕົນເອງ. ຈຳນວນຫຼາຍກວ່າເຄິ່ງໜຶ່ງບໍ່ຍອມຮັບເອົາຊັ້ນຕຳແໜ່ງ, ບໍ່ຍອມຮັບເອົາເຄື່ອງຂອງເງິນຄຳ, ຖືກນາຍທະຫານຝ່າຍວຽງຈັນນາບຂູ່ ກໍ່ພາກັນໂຕນໜີໄປຊອກຫາເຂດຕໍ່ຕ້ານ ທີ່ຍັງມີຢາຍຢູ່ທົ່ວປະເທດ.

ຫຼັງຈາກນັ້ນບໍ່ນານ ກອງພັນທີສອງບໍ່ຍອມຮັບເອົາຊັ້ນຕຳແໜ່ງ, ເງິນຄຳເຄື່ອງຂອງແລະບໍ່ຍອມແຍກອອກຈາກກັນໄປເຂົ້າລວມກັບກອງອື່ນ. ຝ່າຍວຽງຈັນເອົາທະຫານຫຼາຍກອງພັນໄປປິດລ້ອມ ແລະນາບຂູ່ວ່າຈະຍິງຖະຫຼົ່ມດັບສູນ, ພ້ອມທັງເອົາຍົດ ເອົາເງິນ ແລະ ເອົາເຄື່ອງຂອງມາຈອບອອຍຊື້ເອົາແຕ່ລະບຸກຄົນ, ເຮັດໃຫ້ບັນຍາກາດທົ່ງໄຫຫີນ ໃນເວລານັ້ນເຄັ່ງຕຶງທີ່ສຸດ. ຄະນະບັນຊາກອງພັນທີສອງໄດ້ເພີຍແຜ່ສະພາບການໃຫ້ນາຍ ແລະ ພົນທະຫານພ້ອມດວຍຄອບຄົວເຫັນແຈ້ງເລ້ກົນທຳລາຍຂອງສັດຕູ, ຜູກຮັດຄວາມສາມັກຄີພາຍໃນໃຫ້ແໜ້ນ, ເຊີດຊູສະຕິລະວັງຕົວໃຫ້ສູງ. ເມື່ອຮອດເວລາທີ່ມີຄວາມຮັບປະກັນແລ້ວ ກໍ່ຕັດສິນໃຈຜ່າວົງລ້ອມຂອງສັດຕູໜີອອກໄປຫາເຂດທີ່ໝັ້ນ ທີ່ນັບມື້ນັບຂະຫຍາຍກວ້າງຢູ່ລຽບຊາຍແດນລາວຫວຽດນາມ. ການໂຕນໜີຢ່າງອາດຫານຂອງກອງພັນທີສອງ ເປັນການສູ້ທົນສ່ຽງໄພ ອັນລຳບາກຍາກແຄ້ນທີ່ສຸດຂອງນາຍ ແລະ ພົນທະຫານຂອງກອງພັນນີ້ ເຊິ່ງມີທັງເດັກນ້ອຍ, ແມ່ລູກອ່ອນ, ແມ່ມານ ແລະ ຄົນເຈັບປ່ວຍ, ພ້ອມກັນນັ້ນກໍ່ເປັນເຫດໃຫ້ເກີດມີຄວາມກະວົນກະວາຍອັນໃຫຍ່ຫຼວງທີ່ສຸດໃຫ້ແກ່ຝ່າຍວຽງຈັນ. ພວກເຂົາບໍ່ຮູ້ວ່າຈະແກ້ໄຂແນວໃດ ກໍ່ມີແຕ່ອອກຄຳສັ່ງໃຫ້ອົງການປົກຄອງ ແລະ ກອງທະຫານໃນທົ່ວປະເທດໃຊ້ທຸກວິທີດັກສະກັດ ລັດຕີກອງທະຫານຝ່າຍແນວລາວຮັກຊາດທີ່ໂຕນໜີ ແລະ ເພີ່ມທະວີການປາບປາມຈັບກຸມຍິງຂ້າພວກຄົນຕໍ່ຕ້ານເກົ່າ ທີ່ກັບຄືນໄປຢູ່ບ້ານເດີມຂອງຂະເຈົ້າ. ທົ່ວໂລກລືງຂ່າວຄາວຢ່າງໜ້າວິຕົກ. ບັນຍາກາດພາຍໃນປະເທດ ໂສກເສົ້າງຽບເຫງົາ, ທຸກຄົນໃຊ້ທຸກວິທີເພື່ອຊອກຮູ້ສະພາບການ,

ຜູ້ທີ່ເຫັນອັນຕະລາຍຈະມາເຖິງຕົນ ກໍ່ຄ່ອຍທະຍອຍກັນໜີເຂົ້າປ່າໄປຫາເຂດທີ່ພົ້ນກອງໝອນ ທີ່ ຕິດຕໍ່ຫາໄດ້. ພວກທີ່ຍັງເຫຼືອຢູ່ບ້ານກໍ່ບໍ່ໝຸ່ນໜ່ຽງສະຫງົບໃຈທຳມາຫາກິນ, ບໍ່ຮູ້ວ່າມື້ໃດຕົນຈະ ຖືກຈັບກຸມ ຫຼື ຂ້າຕາຍ. ພຶດທຸກຄົນພາກັນຄຽດແຄ້ນຈົ່ມວ່າໃຫ້ ພູຍ ຊະນະນິກອນ ທີ່ຫັກຫຼັງ ພວກຄົນແນວລາວຮັກຊາດ, ລະເມີດສົນຍາວຽງຈັນ, ມ້າງສັນຕິພາບທີ່ເກີດຄືນມາ ໃນລາວ ແລະ ກໍ່ໃຫ້ເກີດມີບັນຍາກາດສົງຄາມຄືນໃໝ່, ໝາຍຈະເຮັດໃຫ້ທົ່ວປະເທດ ຈົມເລິກເຂົ້າໃນ ສະພາບຂ້າຟັນລົ້ມແທງກັນ ເພື່ອຮັບໃຊ້ເລ້ກົນກໍ່ສົງຄາມຂອງຈັກກະພັດອາເມລິກາ. ໃຜໆກໍ່ ພາກັນເວົ້າຊຸ້ງໆວ່າ ເທື່ອນີ້ແມ່ນກະຈ່າງແຈ້ງແລ້ວວ່າ ພູຍ ຊະນະນິກອນ ເຊິ່ງແຕ່ກ່ອນເປັນ ລູກມືຜູ້ບໍລິສຸດຂອງຝະລັ່ງ ບັດນີ້ຊໍ້າພັດປິ້ນກັບຄືນໄປເປັນລູກມືຜູ້ບອກໄດ້ໃຊ້ຟັງ ຂອງຈັກກະພັດ ອາເມລິກາ ເພື່ອນຳເອົາຄວາມທຸກທໍລະມານມາສູ່ປະຊາຊົນລາວຫຼາຍກວ່າເກົ່າອີກ.

ເດືອນພຶດສະພາ ປີ 1959 ມາເຖິງ, ອາກາດຮ້ອນອົບເອົ້າເງົ້າຝົນ, ບັນຍາກາດ ການເມືອງກໍ່ນັບມື້ນັບຮ້ອນເດືອດ. ພູຍ ຊະນະນິກອນ ອອກຄຳສັ່ງໃຫ້ພວກທະຫານ, ຕຳຫຼວດ ແລະ ກອງສອດແນມທີ່ຂັບລົດຕັກຊີ ຫຼື ຖີບລົດສາມລໍ້ຕິດຕາມການເຄື່ອນໄຫວຂອງຄົນ ແນວ ລາວຮັກຊາດ ຫຼື ຕິດຕາມສືບຖາມປະຊາຊົນທີ່ເຂົ້າມາຢາມເຮືອນພວກນີ້ຢ່າງເຄັ່ງຄັດ, ທຸກ ຈອກແຈຂອງນະຄອນຫຼວງວຽງຈັນຕົກຢູ່ໃນບັນຍາກາດຢ້ານກົວ, ຫງ່ວມເຫງົາ ແລະມືດງຽບ. ໃນລະຫວ່າງນັ້ນ ຄວາມເດືອດຮ້ອນທາງທຳມະຊາດແລະທາງການເມືອງນັບມື້ນັບຂຶ້ນສູ່ລະດັບ ສູງ ຈົນວ່າຜ່ານເນື້ອໜັງເຂົ້າໄປໄໝ້ທົ່ວສະໝອງ ແລະ ພາກຫົວໃຈຂອງຄົນຢ່າງບໍ່ມີເວລາຈະ ບັນເທົາ. ບົນທ້ອງຟ້າເມກເຜື່ອຫຸ້ມບົດມືດແຕ່ຝົນຊໍ້າພັດບໍ່ຕົກ, ທຸກແຫ່ງຫົນມີແຕ່ແດດດຳ ອົບ ເອົ້າແບບບີບແກບ ປະກົດວ່າລົມກໍ່ບໍ່ພັດ, ກົກພ້າວກົກໝາກມ່ວງງຽບຢູ່ບໍ່ເໜັງຕີງ, ນານໆຈຶ່ງ ໄດ້ຍິນສຽງຂັນອົນປະກົດວ່າຫງ່ວມເຫງົາຂອງໄກ່ສອງສາມໂຕ ອອກມາຈາກຄຸ້ມນັ້ນຄຸ້ມນີ້ຫ່າງ ໄກກັນ. ຕາມທາງຫຼວງມີແຕ່ສຽງເນື່ອງນັນຂອງລົດຍົນທະຫານ, ຕຳຫຼວດ ແລະລູກມື ພູຍ ຊະນະນິກອນ ແລ່ນຂຶ້ນລົງຢ່າງບໍ່ຂາດສາຍທັງກາງວັນ ແລະ ກາງຄືນ ; ມັນສະແດງໃຫ້ ເຫັນວ່າ ມີຄົນກຸ່ມໜຶ່ງກຽມເຮັດເສິກຢ່າງຂະຫຍັນນັ່ງນໍ່ ໃສ່ປະຊາຊົນສ່ວນຫຼວງຫຼາຍ ທີ່ຄອຍ ຖ້າຫ່າຝົນ ແລະ ຄວາມຮົ່ມເຢັນເປັນສຸກຈາກສິນທຳ ຂອງພຸດທະສາສະໜາ ໃນເວລາກຽມ ເຮັດບຸນບັ້ງໄຟຕາມປະເພນີບ້ານເມືອງ.

ວັນທີ 19 ພຶດສະພາ 1959, ຫຼັງຈາກປັ້ນເຂົ້າເຊົ້າແລ້ວ ເຮົາໄດ້ຂັບລົດຈິບວິນລິດອັນ ເປັນຄູ່ທຸກຂອງເຮົາໄປຢາມສະຫາຍ ໜູຮັກ ພູມສະຫວັນ ທີ່ຄຸ້ມນາໄຮດຽວ ເພື່ອຈະແລກປ່ຽນ ຄຳຄິດຄຳເຫັນກັນກ່ຽວກັບສະພາບການເຄັ່ງຕຶງຂອງບ້ານເມືອງໃນເວລານັ້ນ. ພໍດີໄປຮອດ ເຮົາກໍ່ເຫັນຕຳຫຼວດຫຼາຍສິບຄົນຢືນອ້ອມຂ້າງ ແລະ ເຂົ້າຢູ່ຊຸ້ມລຸ່ມເຮືອນຂອງສະຫາຍ ໜູຮັກ ຜູ້ທີ່ອອກມາຢືນຢູ່ກາງບ້ານ. ເຮົາໄດ້ຈອດລົດແລ້ວລົງໄປລົມກັນ. ສະຫາຍ ໜູຮັກ ໄດ້ບອກ ໃຫ້ເຮົາຮູ້ວ່າ ລັດຖະບານ ພູຍ ຊະນະນິກອນ ສັ່ງໃຫ້ຕຳຫຼວດມາຄຸມພວກເຮົາຢູ່ໃນເຮືອນ -

ເລີ່ມຕັ້ງແຕ່ຕອນເຊົ້ານັ້ນມາ ຍ້ອນວ່າກອງພັນທີສອງຂອງທະຫານແນວລາວຮັກຊາດ ໄດ້ຜ່າວົງລ້ອມໂຕນໜີຈາກທົ່ງໄຫຫີນໄປຫາເຂດທີ່ໝັ້ນຂອງເຂົາແລ້ວ. ພວກເຮົາໄດ້ເຫັນເປັນເອກະສັນກັນວ່າ ຊີວິດອັນຈະເຕັມໄປແຕ່ຄວາມທາລຸນ, ລໍາບາກ ແລະ ອັນຕະລາຍ ໄດ້ເລີ່ມຕົ້ນຂຶ້ນແລ້ວ, ພວກເຮົາຕ້ອງສາມັກຄີກັນແໜ້ນໜຶ້ນຕື່ມອີກ ແລະ ກຽມພ້ອມຢ່າງທຸ່ນທ່ຽງ ເພື່ອຕໍ່ສູ້ກັບທຸກເຫດການທີ່ອາດຈະເກີດຂຶ້ນ. ສະພາບການໃໝ່ນີ້ມັນເຮັດໃຫ້ຈິດໃຈຂອງພວກເຮົາ ຍິ່ງຮັກແພງກັນແໜ້ນກວ່າເກົ່າ, ຕ່າງຄົນກໍ່ຕ່າງປະຕິຍານຕໍ່ກັນວ່າ ພວກເຮົາຈະເປັນຕາຍ ຮ່ວມກັນແມ່ນວ່າສະພາບການມັນຈະພັນປ່ຽນໄປທາງດີ ຫຼື ທາງຮ້າຍແນວໃດກໍ່ຕາມ.

ຈາກເຮືອນສະຫາຍ ຫູຮັກ ເຮົາໄດ້ໄປຢ້ຽມເບິ່ງເຮືອນສະຫາຍ ພູມ ສີປະເສີດ ແລະ ທ່ານສີທົນ ກົມມະດໍາ. ບ່ອນນີ້ຍັງບໍ່ມີຕໍາຫຼວດມາຄຸມເທື່ອ. ເຮົາໄດ້ບອກໃຫ້ພວກເພິ່ນຮູ້ ສະພາບການໃໝ່ ແລະ ກຽມກໍາລັງໃຈໄວ້ຕໍ່ສູ້ກັບທຸກເຫດການທີ່ອາດຈະເກີດຂຶ້ນນັ້ນຢ່າງທຸ່ນທ່ຽງ. ອອກຈາກບ່ອນນີ້ເຮົາໄດ້ຜ່ານໄປເບິ່ງເຮືອນສະຫາຍສຸພານຸວົງ, ເຫັນຕໍາຫຼວດເຕັມຂ້ວງບ້ານຈີກພິກ ແລະ ຫ້າມບໍ່ໃຫ້ເຮົາເຂົ້າໄປຂ້ວງບ້ານປາກປາສັກນັ້ນ ; ເຮົາພຽງແຕ່ຍົກມື ແກວ່ງຂໍານັບສະຫາຍສຸພານຸວົງ ທີ່ຢືນຢູ່ລະບຽງເຮືອນ ແລ້ວກໍ່ຂັບລົດໜີອອກມາ, ມຸ່ງໜ້າໄປຫາສໍານັກລັດຖະບານ. ເຮົາເຂົ້າໄປກະຊວງມະຫາດໄທ, ມີອາດຍາໜຸ່ມນ້ອຍແຕ່ຍົດສູງຜູ້ໜຶ່ງ ມາຕ້ອນຮັບເຮົາ, ເຊີນເຮົານັ່ງລົງຕັ່ງຊາລົງທີ່ຢູ່ຂ້າງໂຕະເຮັດການຂອງເພິ່ນ. ເຮົາໃຊ້ສໍານວນອັນສຸພາບເວົ້າດ້ວຍຄວາມເຄົາລົບວ່າ ເຮົາໄດ້ໄປເຮືອນທ່ານ ຫູຮັກ ແລະ ສະເດັດເຈົ້າ ສຸພານຸວົງ ເຫັນວ່າຕໍາຫຼວດໃນເຄື່ອງແບບມາຫ້ອມລ້ອມຢ່າງຫາແໜ້ນ ແລະບໍ່ຍອມໃຫ້ເຮົາເຂົ້າໄປໃນເຮືອນ. ອັນນີ້ແມ່ນສະພາບການອັນໃໝ່ທີ່ເຮົາເຫັນວ່າບໍ່ດີ ; ເປັນຫຍັງຈຶ່ງມີເຫດການແບບນີ້ເກີດຂຶ້ນ, ມັນຈະບໍ່ເປັນການມ້າງເພການລວມລາວ ທີ່ຫາກໍ່ເລີ່ມຕົ້ນຂຶ້ນຢ່າງບໍ່ທັນໜັກແໜ້ນນັ້ນບໍ່ ? ຂໍໃຫ້ກະຊວງມະຫາດໄທແຕ່ງຄົນໄປກວດເບິ່ງ ແລະລະງັບເຫດການ ອັນບໍ່ຈົບງາມນີ້ຈະໄດ້ບໍ່ ? ອາດຍາໜຸ່ມນ້ອຍຜູ້ນັ້ນນັ່ງຢູ່ເທິງຕັ່ງອີ້ຂ້າງໂຕະເຮັດວຽກຂອງເພິ່ນ, ເອົາຂາຂຶ້ນທາງຕ່າວຕີນມາທາງເຮົາ, ທັງເວົ້າທັງແກວ່ງຕີນຂອງເພິ່ນວ່າ : " ມັນບໍ່ມີເລື່ອງຫຍັງດອກ, ມີພະນະທ່ານ ຜຸຍ ຊະນະນິກອນ ເປັນນາຍົກແລ້ວ ບ້ານເມືອງຈະເຂົ້າລະບຽບດີຂຶ້ນກວ່າແຕ່ກ່ອນ, ທຸກສິ່ງທຸກຢ່າງທີ່ເກີດຂຶ້ນແມ່ນເປັນໄປຕາມຄໍາສັ່ງຂອງພະນະທ່ານ ຜຸຍ ຊະນະນິກອນເພິ່ນ, ບໍ່ມີໃຜຈະກ້າເຮັດໄປຕາມລໍາພັງໃຈດອກ, ພະນະທ່ານຜຸຍ ຊະນະນິກອນ ເພິ່ນສັ່ງເຮັດຫຍັງກໍ່ແມ່ນສ້າງຄວາມດີໃຫ້ແກ່ບ້ານເມືອງເພິ່ນ, ໃຫ້ເຊື່ອໝັ້ນໃນພະນະທ່ານຜຸຍ ຊະນະນິກອນເດີ ບໍ່ເປັນຫຍັງດອກ. "ເຮົາໄດ້ເວົ້າຕອບຄືນວ່າ : ການສັ່ງໃຫ້ເອົາຕໍາຫຼວດໄປຄຸມຝ່າຍທີ່ເຂົ້າມາຮ່ວມມືກັນແບບນີ້ ມັນບໍ່ແມ່ນຈະປັບປຸງການລວມລາວບໍ່, ມັນແມ່ນການປາບປາມກັນໃຫ້ເປັນການແບ່ງແຍກແຕກສາມັກຄີ, ມັນຈະບໍ່ເປັນການດີ ໃຫ້ບ້ານເມືອງບໍ່, ຂໍໃຫ້ອາດຍາໄປເບິ່ງແລ້ວບອກໃຫ້ຖອນຕໍາຫຼວດຄືນ ເພື່ອສ້າງບັນຍາກາດສາມັກຄີ

ຮັກແພງກັນ ຈຶ່ງຈະເປັນການດີ ". ອາດຍາໜຸ່ມນ້ອຍຜູ້ນັ້ນວາງທ່າທາງຂຶງຂັງ ແລ້ວເວົ້າຕອບເຮົາດ້ວຍສີໜ້າອັນເຄັ່ງຂຶມວ່າ : "ຂ້ອຍຕອບເຈົ້າໄດ້ແຕ່ພຽງນີ້ແຫຼະ, ນອກຈາກນີ້ຂ້ອຍບໍ່ມີສິດເຮັດຫຍັງຕື່ມ, ໃຫ້ເຈົ້າຄືນເມືອເຮືອນສາ, ມີຫຍັງເທື່ອໜ້າຈຶ່ງມາພົບກັນອີກເດີ້ ".

ເຮົາອອກຈາກກະຊວງມະຫາດໄທໄປດ້ວຍຄວາມຄຽດແຄ້ນແໜ້ນໃຈແຮງຫຼາຍ. ຮ້ອຍພັນຄວາມຄິດໂຕ້ມາລຸມຫົວສະໝອງຂອງເຮົາ. ຕະຫຼອດຊົ່ວໄລຍະເວລາທີ່ເຮົາຍ່າງລົງຂັ້ນໄດກະຊວງມະຫາດໄທມາຫາລົດ ເຮົາບໍ່ຮູ້ວ່າ ຂັ້ນໄດມີຈັກຂັ້ນຕ່ຳສູງພຽງໃດ. ມາຮອດລົດແລ້ວເຮົາກໍ່ຍັງຄິດຢູ່ຢ່າງຫາຄຳຕອບບໍ່ໄດ້ ເພາະວ່າສະພາບການທີ່ຜ່ານມານັ້ນແປກປະຫຼາດຫຼາຍ. ເຮົາຕັ້ງຄຳຖາມຂຶ້ນວ່າ ເປັນຫຍັງອາດຍາໜຸ່ມຜູ້ນັ້ນ ຈຶ່ງມາປ່ຽນທ່າທີຕໍ່ເຮົາແນວນີ້ ; ເພິ່ນກໍ່ເປັນຄົນລ້ຽງເຄີຍກິນກັບເຮົາແຕ່ເທິງມາແລ້ວ, ເມື່ອກ່ອນນີ້ພົບເຮົາຢູ່ບ່ອນໃດ ກໍ່ມີທ່າທີອ່ອນຫວານສະໜິດສະໜົມກະເຈົ້າກະຈ້າຕໍ່ເຮົາດີແທ້, ບາດນີ້ເປັນຫຍັງເພິ່ນຈຶ່ງມາວາງຕົວ ເປັນຜູ້ໃຫຍ່ ແລະ ເບິ່ງເຮົາຕ່ຳແນວນີ້ ? ເປັນຫຍັງຈຶ່ງວ່າທຸກສິ່ງທຸກຢ່າງ ທີ່ພູຍ ຊະນະນິກອນເຮັດແມ່ນເພື່ອຄວາມດີຂອງບ້ານເມືອງ ? ເອົາຕຳຫຼວດມາລຸມກັນເຮັດໃຫ້ການລວມລາວແຕກກັນແນວນີ້ ມັນມີແຕ່ຈະເກີດເສິກຕີກັນຄືນຫັ້ນລະບໍ່, ມັນຈະດີໃຫ້ບ້ານເມືອງແນວໃດ ? ພວກເພິ່ນຮູ້ຄັກແລ້ວບໍ່ວ່າພວກເພິ່ນເຮັດແນວນີ້ ພວກເພິ່ນຈະຊະນະ ຫຼື ປະລາໄຊ ເຮັດໃຫ້ຜິດກັນແຮງແນວນີ້ ບາດພວກເພິ່ນປະລາໄຊຈະໄປຢູ່ຊິໃດ ? ພວກປະຕິການຂາຍຊາດຈະໃຊ້ເລ່ລ່ຽມຢ່າງໃດມາ ກໍ່ໃຫ້ພວກເຂົາເຮັດເບິ່ງ, ທ້າຍສຸດພວກເຮົາກໍ່ຈະຕ້ອງເປັນຝ່າຍຊະນະ, ພວກປະຕິການຂາຍຊາດຈະຕ້ອງຍອມຈຳນົນຕໍ່ພວກເຮົາ ຫຼື ໂຕນໜີຈາກບ້ານເມືອງ ໄປດ້ວຍຄວາມຢ້ານກົວ. ເຂົາຈະເຮັດແນວໃດ ເຮົາກໍ່ໃຫ້ເຮັດໄປຕາມໃຈດຳອຳມະຫິດຂອງເຂົາ , ແນວທາງອັນຖືກຕ້ອງ ແລະ ເປັນທຳຂອງພັກເຮົາຈະພາພວກເຮົາໄປເຖິງໄຊຊະນະ ຢ່າງເດັດຂາດ." ທ່າທີອາດຍາໜຸ່ມນ້ອຍຜູ້ນັ້ນ ເຮັດໃຫ້ເຮົາເຫັນແຈ້ງຂຶ້ນຕື່ມວ່າ ແມ່ນພວກເພິ່ນທຸກຄົນຮູ້ນຳກັນໝົດແລ້ວວ່າ ພວກເພິ່ນຈະເລີ່ມລົງມືປາບປາມພວກເຮົາ ກັບປະຊາຊົນຜູ້ມັກການລວມລາວໂດຍສັນຕິມັກສັນຕິພາບ ແລະ ຄວາມເປັນທຳ. ພວກເຮົາມັກຫຼືບໍ່ມັກກໍ່ຕ້ອງກຽມຈິດໃຈໄວ້ສູ້ທົນຄວາມທໍລະມານທີ່ພວກເຮົາໄດ້ມອງເຫັນໄວ້ກ່ອນແລ້ວ ແລະ ກຽມວິທີການອັນເໝາະສົມເພື່ອເອົາຕົວລອດອອກຈາກຄວາມອະທຳນີ້ໃຫ້ໄດ້ຢ່າງມີໄຊ.

ເຮົາຂັບລົດໄປຮອດເຮືອນເຮົາທີ່ບ້ານຕາກແດດ ກໍ່ເຫັນຕຳຫຼວດຢືນເຕັມຈິກພິກຢູ່ກ້ອງຕະລ່າງເຮືອນບ່ອນເຮົາມ້ຽນລົດນັ້ນ. ເຮົາເຂົ້າໃຈແລ້ວວ່າ ແມ່ນພວກເຂົາມາລຸມເຮືອນເຮົາແຕ່ເຮົາກໍ່ບໍ່ເວົ້າຫຍັງ, ພຽງແຕ່ຂໍທາງເພື່ອເອົາລົດເຂົ້າໄປມ້ຽນໄວ້, ລົງຈາກລົດເຮົາຕອດຫົວຍ່ຳນັບພວກເຂົາແລ້ວກໍ່ຂຶ້ນເມືອເທິງເຮືອນ. ພໍດີເຮົາຂຶ້ນເມືອນັ່ງຕັ່ງຊາລົງລົມກັນກັບເມຍເຮົາ ແລະ ອ້າຍເອື້ອຍນ້ອງທີ່ຢູ່ນຳກັນ, ບໍດຶ່ງກໍ່ເຫັນນາຍຕຳຫຼວດ ແລະ ຜູ້ຮອງຂຶ້ນມາຫາພວກເຮົາແລ້ວເວົ້າວ່າລັດຖະບານມີຄຳສັ່ງໃຫ້ເຂົາມາປະຈຳຢູ່ນຳເຮືອນເຮົາ ເພື່ອປ້ອງກັນ

ຄວາມປອດໄພໃຫ້ແກ່ເຮົາ, ຖ້າເຮົາຈະໄປທາງໃດໃຫ້ເຮົາບອກໃຫ້ເຂົາຮູ້, ເຂົາຈະລາຍງານຂຶ້ນໄປຫາລັດຖະບານ ເພິ່ນເຫັນດີແລ້ວຈຶ່ງໄປ ແລະເຂົາກໍ່ຈະແຕ່ງຄົນໄປນຳ ; ຄົນນອກຢາກເຂົ້າມາຢາມເຮົາກໍ່ໃຫ້ບອກໃຫ້ເຂົາຮູ້, ເຂົາຈະລາຍງານໄປໃຫ້ລັດຖະບານ, ເພິ່ນເຫັນດີນຳແລ້ວຈຶ່ງໃຫ້ເຂົ້າມາຢາມໄດ້.

ເຮົາໄດ້ເວົ້າຕອບເຂົາວ່າ : "ພວກພີ່ນ້ອງມາຢູ່ເຮືອນຂ້ອຍເພື່ອປ້ອງກັນຄວາມປອດໄພໃຫ້ພວກຂ້ອຍນັ້ນ ຂ້ອຍບໍ່ມີຄວາມຫຍັງດອກ ເພາະວ່າພວກເຈົ້າກໍ່ປະຕິບັດຕາມຄຳສັ່ງຂອງຂັ້ນສູງ. ຂ້ອຍຢາກຖາມແຕ່ວ່າພວກຂ້ອຍມາຢູ່ວຽງຈັນນີ້, ນັບທັງເວລາມາເຈລະຈາ, ເວລາເຂົ້າຮ່ວມລັດຖະບານປະສົມ ແລະ ເວລາເປັນຜູ້ແທນຢູ່ໃນລັດຖະສະພາໄດ້ສາມປີກວ່າແລ້ວ, ບໍ່ເຫັນມີໄພອັນຕະລາຍແນວໃດຈະມາເຖິງພວກຂ້ອຍ, ພີ່ນ້ອງບ້ານຊ່ອງທົ່ວເມືອງວຽງຈັນ - ລ້ວນແຕ່ຮັກແພງ ໄປມາຫາສູ່ກັນເປັນປົກກະຕິດີຂຶ້ນທຸກມື້ ; ມາມື້ນີ້ຈຶ່ງວ່າມີຄຳສັ່ງ ໃຫ້ພວກເຈົ້າມາປ້ອງກັນຄວາມປອດໄພໃຫ້ພວກຂ້ອຍ, ພວກເຈົ້າຮູ້ບໍ່ວ່າໄພອັນຈະມາເຖິງພວກຂ້ອຍນີ້ມັນຈະມາຈາກໃສ, ຈະມາແນວໃດຈຶ່ງຈະເຮັດໃຫ້ພວກຂ້ອຍບໍ່ປອດໄພ ຈຶ່ງວ່າພວກເຈົ້າຈຳເປັນຕ້ອງມາປ້ອງກັນຄວາມປອດໄພໃຫ້, ພວກຂ້ອຍຈະຕ້ອງເຮັດຫຍັງ ເພື່ອຮ່ວມມືກັບພວກເຈົ້າໃນການປ້ອງກັນຄວາມປອດໄພນີ້ ? ພວກເຂົາເວົ້າຕອບວ່າ: "ພວກຂ້ານ້ອຍກໍ່ບໍ່ຮູ້, ຂັ້ນ. ເທິງສັ່ງມາກໍ່ຈຳເປັນຕ້ອງມາ, ເພິ່ນບອກເມື່ອນີ້ໃດພວກຂ້ານ້ອຍກໍ່ຈະເມືອ". ເຮົາເວົ້າຕໍ່ໄປວ່າ : "ຄັນພວກເຮົາເວົ້າຊື່ນຳກັນແລ້ວ ຂ້ອຍເຂົ້າໃຈວ່າການໃຊ້ຄວາມເວົ້າວ່າ ມາຮັກສາຄວາມປອດໄພນັ້ນ ແມ່ນເພິ່ນສັ່ງໃຫ້ພວກເຈົ້າມາເວົ້າຫຼອກລວງຊື່ໆດອກ ; ຄວາມຈິງແມ່ນເພິ່ນສັ່ງໃຫ້ພວກເຈົ້າມາຄຸມພວກຂ້ອຍ, ຄົນໃນບໍ່ໃຫ້ອອກ ຄົນນອກບໍ່ໃຫ້ເຂົ້າເຮືອນພວກຂ້ອຍ, ແມ່ນບໍ່ ? ". ພວກເຂົາຕອບວ່າ : "ເພິ່ນສັ່ງແນວນັ້ນແທ້, ເພິ່ນບໍ່ສັ່ງພວກຂ້ານ້ອຍກໍ່ບໍ່ມາດອກ, ພວກຂ້ານ້ອຍບໍ່ມີຄວາມຄຽດຊັງຫຍັງ, ເຄົາລົບນັບຖືຍາພໍ່ຢູ່". ເຮົາເວົ້າ: "ຂ້ອຍເຂົ້າໃຈແລ້ວ, ຂ້ອຍບໍ່ຄຽດຊັງພວກເຈົ້າດອກ. ຂ້ອຍເສຍໃຈແຕ່ກ້ອງຕະລ່າງເຮືອນຂ້ອຍມັນຕ່ຳ, ສ່ວນໜຶ່ງຊ້ຳພັດເອົາລົດໄວ້ແລ້ວ, ພວກເຈົ້າຊອກເບິ່ງເນີ, ບ່ອນໃດພໍນອນໄດ້ກໍ່ນອນ, ຄັນບໍ່ພໍກັນກໍ່ໄປຂໍເອົາຜ້າເຕັນນຳກອງບັນຊາການພວກເຈົ້າມາກັ້ງທາງນອກເພື່ອນອນຕື່ມ. " ພວກເຂົາຮັບຄວາມເຮົາແລ້ວ ກໍ່ລົງເຮືອນໜີໄປນອນຢູ່ກ້ອງຕະລ່າງເຮືອນເຮົາ.

ຕັ້ງແຕ່ນັ້ນມາ ແມ່ນພວກເຮົາຖືກຂັງຢູ່ໃນເຮືອນ. ມື້ໜຶ່ງ ເຮົາລອງເອີ້ນເອົາ ນາຍຕຳຫຼວດມາເວົ້າວ່າ ເຮົາຢາກໄປຢາມຜູ້ນຳແນວລາວຮັກຊາດອື່ນໆ ເຂົາກໍ່ເອີ້ນໂຟນີໄປຫາກອງບັນຊາການຂອງພວກເຂົາ ແລ້ວມາຕອບໃຫ້ເຮົາວ່າ ເພິ່ນບໍ່ເຫັນດີໃຫ້ໄປ. ອ້າຍນ້ອງທີ່ຢູ່ນຳເຮົາຢາກໄປຕະຫຼາດຊື້ເຂົ້າປາອາຫານມາກິນເອົາກໍ່ບໍ່ໃຫ້ໄປ. ພີ່ນ້ອງຢາກມາຢາມເຮົາເຂົາກໍ່ບໍ່ໃຫ້ເຂົ້າ. ດີແຕ່ເຮົາຢູ່ເຮືອນຫຼັງດຽວກັບຄອບຄົວເຈົ້າບຸນຍະວັດ, ລະບຽງທາງໜ້າ ແລະທາງຫຼັງບ້ານເປັນອັນດຽວກັນ ມີແຕ່ຮົ້ວຕ່າງຂັ້ນທາງກາງ. ທຸກມື້ແມ່ນໜ້ອມປາຫຼາ ເນຍເຈົ້າ

ບຸນຍະວັດ ໄປຕະຫຼາດຊ່ວຍຊື້ເຂົ້າ, ຊີ້ນ, ປາ ແລະຜັກມາເພື່ອພວກເຮົາ, ເປັນເງິນເທົ່າໃດພວກເຮົາຈຶ່ງໄລ່ໃຊ້ເພິ່ນ, ບາງມື້ເພິ່ນກໍຖືເອງແລ້ວຈຶ່ງຫາເປັນພາຍຶກມາໃຫ້ພວກເຮົາ. ນີ້ຈຶ່ງແມ່ນຍາມທຸກຍາກລຳບາກຈຶ່ງຮູ້ມິດສະຫາຍ !

ທຸກມື້ເຮົາໄຂວິທະຍຸຟັງລາຍການພາສາລາວ, ພາສາໄທ ແລະ ພາສາຝະລັ່ງຂອງຫ່າໂນ່ຍ, ປັກກິ່ງ, ໂມສະກູ ແລະ ບາງກອກ. ເມື່ອເຫັນວ່າພວກຕຳຫຼວດມາລີ້ຟັງ ຢູ່ກ້ອງຕະລ່າງ ເຮົາກໍໄຂແຮງຂຶ້ນກວ່າເກົ່າ, ຫຼາຍມື້ຕໍ່ຫຼາຍມື້ມາ ພວກເຂົາກັບພວກເຮົາກໍລຶ້ງກັນ, ຮູ້ຈັກຊື່ຈັກສຽງຂອງກັນ. ເຮົາເອີ້ນເຂົາຂຶ້ນມານັ່ງຢູ່ເທິງລະບຽງເພື່ອຟັງວິທະຍຸນຳກັນ ແລະ ລົມກັນ. ເຮົາໄດ້ເວົ້າເລື່ອງສະພາບການບ້ານເມືອງເຮົາ ແລະ ຂອງໂລກໃຫ້ພວກເຂົາຟັງ. ພວກເຂົາສົນໃຈນຳບັນຫາໃດເຮົາກໍຊີ້ແຈງໃຫ້ຟັງ. ສ່ວນຫຼາຍພວກເຂົາມັກມາຫາເຮົາ ແຕ່ກາງຄືນ ; ກາງເວັນພວກເຂົາກໍລະວັງ ເພາະວ່າພວກສອດແນມຖີບລົດສາມລໍ້ ວຽນອ້ອມເຮືອນເຮົາຢູ່ບໍ່ຂາດ.

ເມື່ອລຶ້ງກັນແລ້ວ ພວກເຂົາກໍ້ກາຖາມວ່າ ບ້ານເມືອງເຮົາຈະເປັນໄປແນວໃດ, ໂລກນີ້ຈະບໍ່ເກີດເສິກກັນອີກບໍ ? ເຮົາໄດ້ຈັບເອົາໂອກາດນັ້ນເພື່ອຊີ້ແຈງນະໂຍບາຍສັນຕິພາບຂອງແນວລາວຮັກຊາດ ທີ່ຍາມໃດກໍຈິງໃຈສ້າງຄວາມຖືກຕ້ອງປອງດອງຊາດ ; ແຕ່ພວກຈັກກະພັດອາເມລິກາທີ່ເຂົ້າມາແທນບ່ອນພວກລ່າເມືອງຂຶ້ນຝະລັ່ງ ທີ່ຖືກປະຊາຊົນລາວ ແລະຫວຽດນາມຕີໃຫ້ປະລາໄຊແລ້ວນັ້ນ ພວມກຳເອົາພວກຄົນລາວປະຕິການ ເພື່ອສືບຕໍ່ເຮັດເສິກ ປາບປາມປະຊາຊົນລາວ ; ນະໂຍບາຍຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ຈັກກະພັດອາເມລິກາແມ່ນຊື້ຈ້າງເອົາຄົນປະເທດໜຶ່ງ, ແບ່ງແຍກປະຊາຊົນປະເທດນັ້ນ ໃຫ້ເຂົ້າສູ້ຮົບກັນເອງ ເພື່ອໃຫ້ຄົນຕ່າງດ້າວເຫຼົ່ານັ້ນ ໄດ້ປົກຄອງເປັນນາຍຕັດສິນຄວາມບໍ່ຖືກຕ້ອງຄອງກັນນັ້ນ. ຢູ່ໃນທົ່ວໂລກພວກເຂົາກໍເຮັດແນວນັ້ນ ; ຢູ່ໃນປະເທດລາວເຮົາ ພວກເຂົາກໍເຮັດແນວນັ້ນ , ແຕ່ວ່າຢູ່ລາວເຮົາ ພວກເຂົາຈະຍົວະໃຫ້ຄົນລາວຜິດກັນເຖິງຕີກັນ. ການທີ່ພວກເຂົາ ເອົາພວກເຈົ້າມາຄຸມພວກຂ້ອຍເວລານີ້ ແມ່ນການເລີ່ມຕົ້ນແບ່ງແຍກຄົນລາວທັງສອງຝ່າຍ ໃຫ້ຜິດກັນຈົນລວມເຂົ້າກັນບໍ່ໄດ້. ຕໍ່ໄປນີ້ພວກເຂົາອາດຈະສັ່ງໃຫ້ ຜູຍ ຊະນະນິກອນ ແລະກຸ່ມລູກມືຂອງພວກເຂົາຈັບພວກຂ້ອຍໄປຂັງຄຸກ, ຍິງຂ້າຄົນແນວລາວຮັກຊາດ ແລະ ປະຊາຊົນລາວຜູ້ບໍ່ເຫັນພ້ອມກັບພວກເຂົາ ເພື່ອເຮັດໃຫ້ສົງຄາມກັບເກີດຂຶ້ນຢູ່ໃນລາວອີກ, ໃຫ້ພວກເຂົາໄດ້ຂາຍອາວຸດຍຸດທະພັນເພື່ອຫາລ້ຳຫາລວຍ. ຖ້າວ່າຄົນລາວເຮົາຫາກບໍ່ເຫັນເລ້ກົນ ອັນໂຫດຮ້າຍຂອງພວກຈັກກະພັດອາເມລິການີ້, ຫາກໄປຮັບໃຊ້ເລ້ກົນຂອງພວກເຂົາ ເພື່ອຂາຍຊາດເອົາເງິນຄຳ ແລະ ຍົດສັກແລ້ວ ເສິກກໍຈະເກີດຄືນມາໃນປະເທດລາວອີກ, ເພາະວ່າປະຊາຊົນລາວຈະບໍ່ຍອມໃຫ້ພວກເຂົາປາບປາມຈັບກຸມ ແລະ ຍິງຂ້າຕາມໃຈຊອບຂອງພວກເຂົາອີກ. ບົດຮຽນໃນທົ່ວໂລກໄດ້ຢັ້ງຢືນໃຫ້ພວກເຮົາເຫັນແຈ້ງແລ້ວ. ໃນເມື່ອປະຊາຊົນປະເທດໃດສາ

ມັກດີກັນລຸກຂຶ້ນຕໍ່ສູ້ ແລ້ວພວກຈັກກະພັດ ແລະ ລູກມືກໍ່ຕ້ອງປະລາໄຊ. ມາຮອດຍຸກສະໄໝນີ້ ມັນແມ່ນຍຸກສະໄໝທີ່ນາຍທຶນຈັກກະພັດມີການຂັດແຍ້ງພາຍໃນປະເທດ ແລະ ມີການຂັດແຍ້ງ ລະຫວ່າງປະເທດນາຍທຶນຈັກກະພັດດ້ວຍກັນ ນັບມື້ນັບແຮງ, ປະເທດສັງຄົມນິຍົມອັນມີສະຫະພາບໂຊວຽດເປັນເສົາຄ້ຳນັບມື້ນັບຮັ່ງມີເຂັ້ມແຂງ ແລະ ຂະຫຍາຍກວ້າງອອກ, ຂະບວນການປະຕິວັດປົດປ່ອຍຊາດນັບມື້ນັບກວ້າງຂວາງ ແລະ ເຂັ້ມແຂງເຮັດໃຫ້ຫຼາຍປະເທດສາມາດປົດປ່ອຍຕົນເອງ ອອກຈາກລະບອບເມືອງຂຶ້ນມາເປັນເອກະລາດ ແລະ ຂະບວນການຕໍ່ສູ້ ຂອງຊົນຊັ້ນກຳມະກອນ ແລະ ຜູ້ອອກແຮງງານຢູ່ໃນປະເທດນາຍທຶນຈັກກະພັດ ເພື່ອສັນຕິພາບ , ປະຊາທິປະໄຕ, ຄວາມຍຸດຕິທຳ ແລະ ຄວາມຢູ່ດີກິນດີນັບມື້ນັບແຂງແຮງ ແລະ ຂະຫຍາຍກວ້າງອອກໄປໃນທົ່ວໂລກແລ້ວ. ຜູ້ໃດໄປນຳພວກນາຍທຶນຈັກກະພັດ ແລະ ລູກມືຈະຕ້ອງປະລາໄຊໄປນຳພວກເຂົາຢ່າງຫຼີກບໍ່ພົ້ນ.

ພວກຕຳຫຼວດນີ້ມັກຟັງການເລົ່າເລື່ອງແບບນີ້ຫຼາຍທີ່ສຸດ. ຄ່ຳມື້ໃດພວກເຂົາກໍ່ເອົາກັນມາຟັງເປັນໝູ່ 4 ຫາ 5 ຄົນ. ມີຫຍັງຂ້ອງໃຈພວກເຂົາກໍ່ສິຖາມດ້ວຍຄວາມສົນໃຈ. ສອງອາທິດຜ່ານໄປ, ບັນຍາກາດລະຫວ່າງພວກຕຳຫຼວດກັບພວກເຮົາ ກໍ່ຄ່ອຍໆໂຍະຍານລົງ. ພວກເຂົາໄດ້ປ່ອຍໃຫ້ອ້າຍນ້ອງເຮົາຂຶ້ນຂີ່ລົດຈີບຂອງພວກເຂົາໄປຕະຫຼາດ ເພື່ອຊື້ອາຫານການກິນ. ພວກເຮົາກໍ່ມີການປະພຶດຕໍ່ພວກເຂົາດີຂຶ້ນອີກ. ມີອາຫານອັນໃດແຊບ ພວກເຮົາກໍ່ແບ່ງໄປໃຫ້ເຂົາກິນ. ບາງມື້ພວກເຮົາກໍ່ເຊີນເອົາພວກນາຍຂອງເຂົາມາກິນກາເຟ, ກິນເຝີ , ກິນເຂົ້າປຸ້ນ ຫຼືເຂົ້າໜົມໃນເຮືອນພວກເຮົາ. ຕໍ່ໜ້າການກະທຳອັນດີຂອງພວກເຮົາແນວນັ້ນ ພວກເຂົາກໍ່ສະແດງຄວາມຮັກແພງ, ນັບຖື ແລະ ເຊື່ອໝັ້ນພວກເຮົາ ; ມີບາງເລື່ອງ ທີ່ພວກເຂົາບໍ່ດີໃຈກັບນາຍ ຫຼື ຂັ້ນສູງກວ່ານັ້ນ ພວກເຂົາກໍ່ມາເລົ່າສູ່ພວກເຮົາຟັງ. ມີພວກສອດແນມ ຂີ່ລົດສາມລໍ້ນັ່ງຢູ່ແຄມທາງເພື່ອຕິດຕາມຄວບຄຸມເຮົາ ພວກເຂົາກໍ່ຊີ້ໃຫ້ພວກເຮົາຮູ້. ແຕ່ວ່າໃນພວກຕຳຫຼວດທີ່ມາຄຸມເຮືອນເຮົານັ້ນ ກໍ່ມີຜູ້ປະຕິການ ; ເຫັນຜູ້ໃດເຮັດດີນຳພວກເຮົາຫຼາຍ ເຂົາກໍ່ໄປຟ້ອງຕໍ່ນາຍໃຫ້ຍ້າຍໜີ ແລ້ວເອົາຜູ້ອື່ນມາປ່ຽນ, ເຮັດໃຫ້ພວກເຮົາຕ້ອງໄດ້ເຮັດ ວຽກງານຂົນຂວາຍອົບຮົມການເມືອງນຳພວກຕຳຫຼວດລຽນຕິດ ບໍ່ມີມື້ເຊົາເປັນ.

ມາຮອດຕົ້ນເດືອນ 6 ສາກົນ ປີ 1959, ນາຍຕຳຫຼວດໄດ້ຂຶ້ນມາບອກໃຫ້ເຮົາຮູ້ວ່າ ກອງບັນຊາການຕຳຫຼວດໄດ້ສັ່ງມາວ່າ ເຮົາຢາກອອກໄປໃສກໍ່ໄດ້, ມີແຕ່ໃຫ້ຕຳຫຼວດຜູ້ໜຶ່ງນັ່ງລົດໄປນຳເພື່ອປ້ອງກັນເທົ່ານັ້ນ, ເຮົາສະແດງຄວາມຂອບໃຈ ແຕ່ເຮົາກໍ່ບໍ່ອອກເຮືອນໄປໃສ ເພາະຢ້ານຕົກຖືກແຮ້ວຂອງສັດຕູ. ມື້ໜຶ່ງ ສະຫາຍ ຫູຣັກ ໄດ້ມາຢາມເຮືອນເຮົາ, ມີຕຳຫຼວດຕິດຕາມມາຜູ້ໜຶ່ງ. ສະຫາຍຫູຣັກ ເຂົ້າມານັ່ງຕັ່ງຊາລົງນຳເຮົາ, ຕຳຫຼວດຜູ້ນັ້ນ ຂຶ້ນມານັ່ງເທິງລະບຽງບ່ອນຫົວຂັ້ນໄດເພື່ອຟັງຄວາມລົມຂອງພວກເຮົາ. ເຮົາໄດ້ເຊີນອອກໄປ ຫາເຂົາວ່າ: "ເຊີນເຂົ້າມານັ່ງໃນເຮືອນນຳກັນພໍ້ແມຫຼານ". ເຂົາຕອບວ່າ: "ຂອບໃຈ ແລ້ວ

ຂ້ານ້ອຍ, ນັ່ງຢູ່ທີ່ນີ້ກໍໄດ້ແລ້ວ". ເຮົາບໍ່ຍອມ ແລະ ເວົ້າຂຶ້ນອີກວ່າ : "ບໍ່ນາ, ເຊີນເຂົ້າມາ ໃນເຮືອນນຳກັນພີ່ນາ ! ຄືນມາຍາມກັນກໍ່ມານັ່ງໃນເຮືອນນຳກັນລະບໍ, ເປັນຫຍັງຊິມານັ່ງ ຫົວຂັ້ນໄດຄືໝານີ້, ບ່ອນຫັ້ນແມ່ນບ່ອນຂອງໝາ, ຈັກໜ້ອຍໝາມັນຈະມານອນຫັ້ນໄດ". ເຂົາ ເວົ້າຕອບວ່າ : "ໄດ້ແລ້ວ, ຂອບໃຈແລ້ວຂ້ານ້ອຍ, ຂ້ານ້ອຍຊິລົງໄປຫຼິ້ນນຳໝູ່ຢູ່ລຸ່ມພຸ້ນ ". ວ່າແລ້ວເຂົາລົງໄປຢູ່ກອງຕະລ່າງນຳໝູ່ຂອງເຂົາ. ສະຫາຍ ໜູຮັກ ເວົ້າໃຫ້ເຮົາຟັງວ່າພວກ ເຮົາທີ່ເປັນຜູ້ແທນໃນລັດຖະສະພາ ແມ່ນເຂົາເອົາຕຳຫຼວດໄປຄຸມເຮືອນພິດ, ນອກຈາກນັ້ນ ຍັງໄປຄຸມເຮືອນພວກຜູ້ແທນທີ່ກ້າວໜ້າ ຢູ່ໃນຄະນະກຳມະການສັນຕິພາບເປັນກາງອີກ. ບັນ ຍາກາດໃນຕົວເມືອງ ແລະ ໃນທົ່ວປະເທດແມ່ນເຄັ່ງຕຶງທີ່ສຸດ. ພວກເຮົາຕ້ອງມີສະຕິລະວັງ ຕົວສູງແທ້ງ.

ຫຼັງຈາກນັ້ນ ເຮົາໄດ້ຂັບລົດເອົາຕຳຫຼວດ ແລະ ອ້າຍນ້ອງເຮົາຜູ້ໜຶ່ງນັ່ງໄປນຳ ເພື່ອໄປ ທ່ຽວລຽບເບິ່ງເຮືອນຜູ້ແທນຕ່າງໆທີ່ກ້າວໜ້າ. ເຮືອນຜູ້ແທນຝ່າຍແນວລາວຮັກຊາດລ້ວນແຕ່ມີ ຕຳຫຼວດຄຸມພິດ. ນອກຈາກນັ້ນ, ເຮືອນທ່ານກິບົມ ພົມເສນາ, ມະຫາກູ ສຸວັນນະເມທີ , ຈານປາວ ວັນທານຸວົງ, ມະຫາບຸດດີ ສຸລິຍະສັກ, ກຸຍຫຼີ ບັນຈົງພານິດ ແລະທ່ານລູ ບົວລາ ວົງ ກໍ່ຖືກຄຸມຄືດຽວກັນ. ທຸກມື້ເຮົາຂັບລົດໄປສະພາ ແລະ ໄປຢ້ຽມຢາມເຮືອນເພື່ອນ ສະ ຫາຍ ແລະ ໝູ່ຄູ່ທີ່ບັງເອີນໄດ້ຮ່ວມສຸກຮ່ວມທຸກນຳກັນ. ພວກເຮົາເວົ້ານຳກັນວ່າ ດຽວນີ້ພວກ ເຮົາຕົກຢູ່ໃນຊາຕາກຳອັນດຽວກັນແລ້ວ, ມັນແມ່ນພວກສັດຕູສວຍໃຊ້ຄວາມຈິງໃຈ ແລະ ນ້ຳ ໃຈມະນຸດສະທຳຂອງພວກເຮົາເພື່ອຫຸບເອົາພວກເຮົາຖິ້ມລົງໃສ່ສະພາບ ທີ່ບໍ່ເພິ່ງປາຖະໜາ ແນວນີ້. ພວກເຮົາຕ້ອງມີມານະຈິດເຂັ້ມແຂງ, ເພີ່ມທະວີຄວາມສາມັກຄີຮັກແພງກັນ ແໜ້ນ ກວ່າເກົ່າອີກ, ຈະເປັນຕາຍແນວໃດ ພວກເຮົາກໍ່ຈະຢູ່ຄຽງຂ້າງກັນສະເໝີ.

ພຶດເດືອນ ມິຖຸນາ ປີ 1959, ການໄປມາຂອງພວກເຮົາສະດວກກວ່າເກົ່າຂຶ້ນຈັກໄຊ້, ບາງມື້ເຮົາເອີ້ນເອົາຕຳຫຼວດໄປນຳກໍ່ບໍ່ໄປ. ທາງສຽງໃນເມືອງຈ່າລືກັນວ່າລັດຖະບານ ຜຸຍ ຊະນະນິກອນ ກັບຝ່າຍແນວລາວຮັກຊາດຖືກກັນດີແລ້ວ, ເຮັດໃຫ້ບັນຍາກາດໂຍະຍານແລະ ມ່ວນຊື່ນຂຶ້ນກວ່າເກົ່າ. ແຕ່ຄວາມຈິງມັນບໍ່ເປັນແນວນັ້ນ. ມັນແມ່ນພວກ ຜຸຍ ຊະນະນິກອນ ແລະ ອາເມລິກາຢາກລອງເບິ່ງວ່າ ຫຼັງຈາກຖືກຄວບຄຸມມາເດືອນກວ່າແລ້ວ ພວກເຮົາຈະ ສວຍໂອກາດໂຍະຍານນັ້ນເພື່ອໂຕນໜີ ຫຼື ບໍ່, ຖ້າຜູ້ໃດຫາກໂຕນໜີເຂົາຈຶ່ງຈະຈັບຂ້າຜູ້ນັ້ນ . ແຕ່ວ່າບໍ່ມີຜູ້ໃດໂຕນ, ມີແຕ່ໄປຢ້ຽມຢາມໂອລົມພະສົງອົງຄະເຈົ້າ ແລະປະຊາຊົນບ້ານເມືອງ ວ່າ ພວກເຮົາມັກຄວາມຖືກຕ້ອງປອງດອງກັນ, ມັກສັນຕິພາບ ; ເມື່ອເຫັນຮ່ອງຮອຍ ສັນຕິ ພາບໜ້ອຍໜຶ່ງມາສູ່ພວກເຮົາແລ້ວ ພວກເຮົາຈະຮ່ວມຢູ່ເພື່ອສ້າງບ້ານແປງເມືອງ ນຳພີ່ນ້ອງ ຮ່ວມຊາດຂອງເຮົາ ເພື່ອສະແດງຄວາມສັດຊື່ຕໍ່ລາຍເຊັນຂອງຕົນ ແມ່ນວ່າຈະມີອັນຕະລາຍ ແນວໃດກໍ່ຕາມ.

ພວກເຮົາໄດ້ຮັບຊີວິດອັນເປັນອິດສະຫຼະ ພຽງແຕ່ເດືອນປາຍ. ວັນທີ 28 ເດືອນກໍລະກົດ 1959 ເວລາ 17 ໂມງເຄິ່ງ, ພວມເຮົາກິນເຂົ້າແລງຢູ່ ຕຳຫຼວດ 6 ຄົນ ພາກັນຂຶ້ນເຮືອນມາຫາເຮົາ, ເຮົາໄດ້ຂໍ່ານັບແລ້ວເຊີນນັ່ງທີ່ຕັ່ງຊາລົງ ຕາມທີ່ເຮົາເຄີຍເຮັດໃຫ້ແຂກທີ່ມາຢາມ ແລະ ຂໍໂທດທີ່ເຮົາພວມກິນເຂົ້າ, ກິນແລ້ວໆເຮົາຈຶ່ງຈະໄປລົມນຳ. ແຕ່ວ່າຜູ້ເປັນນາຍຕຳຫຼວດນັ້ນໄດ້ຍ່າງມາຫາໂຕະກິນເຂົ້າຂອງເຮົາແລ້ວເວົ້າວ່າ ທ່ານຫົວໜ້າສານຊັ້ນຕົ້ນວຽງຈັນ ໄດ້ບອກໃຫ້ເຂົາມາເຊີນເອົາເຮົາໄປຫາເພິ່ນ, ວ່າແລ້ວກໍ່ຍື່ນໜັງສືສະບັບໜຶ່ງມາໃຫ້ເຮົາ ; ເຮົາຈັບເອົາໜັງສືສະບັບນັ້ນມາອ່ານເບິ່ງ ກໍ່ເຫັນວ່າມັນແມ່ນຄຳສັ່ງໃຫ້ຈັບຕົວ. ເຮົາຖາມຂຶ້ນວ່າ : "ພວກຫຼານມາຈັບລຸງໄປຂັງຄຸກ, ແມ່ນບໍ່ ? ຕຳຫຼວດຕອບວ່າ : "ໂດຍ, ຂຶ້ນເທິງສັ່ງໃຫ້ພວກຂ້ານ້ອຍມາເຊີນຍາລຸງໄປຫາເພິ່ນ". ເຮົາເວົ້າຕໍ່ວ່າ : " ໃຫ້ລຸງກິນເຂົ້າແລງແລ້ວກ່ອນເນີ ". ໃນທັນໃດນັ້ນ ເຮົາໄດ້ເອີ້ນເອົາເມຍເຮົາ ແລະພວກອ້າຍນ້ອງທີ່ຢູ່ນຳເຮືອນເຮົານັ້ນມາສັ່ງວ່າ : "ດຽວນີ້ພວກຕຳຫຼວດພວກນີ້ໄດ້ເອົາຄຳສັ່ງ ຂອງສານຊັ້ນຕົ້ນມາຈັບຂ້ອຍໄປໃສ່ຄຸກແລ້ວ, ຂ້ອຍຈຳເປັນຕ້ອງໄດ້ໄປນຳເຂົາ, ພວກເຈົ້າຢູ່ເຮືອນໃຫ້ສາມັກຄີຮັກແພງກັນດີເນີ, ໃຫ້ໝົດທຸກຄົນຟັງຄວາມປ້າ, ເພິ່ນວ່າສົມຄວນເຮັດອັນໃດຈຶ່ງເຮັດ". ເວົ້າແລ້ວເຮົາບອກເມຍເຂົ້າໄປສ້ວມເພື່ອຫາງເອົາເຄື່ອງຖ່າຍ ແລະ ເຄື່ອງລ້າງໜ້າ ໃຫ້ເຮົາ, ທັງໄດ້ເຕືອນວ່າໃຫ້ໄຂຫູ້, ລິ້ນຊັກໂຕະ ແລະ ກາກຕາບຂອງເຮົາເບິ່ງ ມີໜັງສືອັນໃດທີ່ບໍ່ສົມຄວນເອົາໄວ້ ໃຫ້ເອົາໄປຈູດຖິ້ມໝົດ ເພາະຢ້ານເຂົາຈະມາກວດເຮືອນ. ຫຼັງຈາກຫອບເອົາເຄື່ອງຂອງທີ່ຈຳເປັນແລ້ວ ເຮົາກໍ່ອອກຈາກສ້ວມມາຫາອ້າຍເອື້ອຍນ້ອງ ທີ່ພາກັນປິ້ນຈອງເບິ່ງເຮົາແລ້ວສັ່ງເປັນເທື່ອສຸດທ້າຍວ່າ "ໃຫ້ພາກັນຕັ້ງໃຈໃຫ້ດີ, ຂ້ອຍໄປເຂົ້າຄຸກເທື່ອນີ້ ແມ່ນເພື່ອສະແດງຄວາມສັດຊື່ສົນຍາວຽງຈັນທີ່ໄດ້ເຊັນກັນ, ແມ່ນເພື່ອ ຄວາມເປັນເອກະລາດຂອງຊາດ ແລະ ຄວາມຢູ່ເຢັນເປັນສຸກຂອງປະຊາຊົນ, ອ້າຍເອື້ອຍນ້ອງຢ່າເປັນຫ່ວງນຳຂ້ອຍຫຼາຍ, ຢ່າໂສກເຫງົາ, ຂ້ອຍບໍ່ໄດ້ກະທຳຜິດຫຍັງຕໍ່ປະເທດຊາດບ້ານເມືອງ, ຄວາມເປັນທຳຈະຕ້ອງຊະນະອະທຳ." ເວົ້າສຸດຄວາມແລ້ວເຮົາຍ່າງລົງເຮືອນໄປຂຶ້ນລົດຕຳຫຼວດຫຼຽວຄືນໄປເບິ່ງເຮືອນເຫັນແຕ່ເມຍ ແລະ ອ້າຍນ້ອງປິ້ນເບິ່ງດ້ວຍສີໜ້າອັນຫງວມເຫງົາຢູ່ເທິງຫົວຂັ້ນໄດທ່າມກາງພວກຕຳຫຼວດທີ່ຫ້ອມລ້ອມຢູ່ຍາມຕາມເຄີຍ.

ໃນຄືນນັ້ນແມ່ນກາງຄືນຂອງເດືອນ 9 ແຮມຂອງລາວ. ທ້ອງຟ້າມືດຈົນບໍ່ເຫັນດາວຈັກໜ່ວຍ. ໂຄມໄຟຟ້າທີ່ໄຕ້ຢູ່ແຄມທາງກໍ່ປະກົດວ່າບໍ່ມີແສງແຈງ. ໃນສະໝອງຂອງເຮົາກໍ່ມືດປົກບໍ່ຮູ້ວ່າຈະໄປໃສ ແລະ ຈະໄປພົບຊາຕາກຳອັນໃດ. ມື່ນຕາ ຫຼື ໜັບຕາກໍ່ເຫັນແຕ່ເມຍ ແລະ ອ້າຍນ້ອງປິ້ນໂສກເສົ້າຢູ່ຂັ້ນໄດເຮືອນ. "ພວກເຈົ້າຈະພາຂ້ອຍໄປໃສ ? " ເຮົາຖາມຂຶ້ນ. ນາຍຕຳຫຼວດຜູ້ນັ່ງຮຽງເຮົາໄປນັ້ນຕອບວ່າ : "ໄປໂພນເຄັງຂ້ານ້ອຍ". ບຶດໜຶ່ງ ລົດກໍ່ແລ່ນໄປຮອດເທິງສົມພູໂພນເຄັງບ່ອນມີຄ້າຍຕຳຫຼວດ ; ລົດລຽວຊ້າຍເຂົ້າໄປຄ້າຍຕຳຫຼວດ, ກາຍ

ເຮືອນນາຍຕຳຫຼວດ ແລະ ເຮືອນທີ່ເປີກສາອາເມລິກາ, ລົງຄ່ອຍໄປເກືອບຮອດແຄມບ້ານທີ່ເປັນຄຸ້ມຄອບຄົວທະຫານ. ລົດໄປຢຸດຕໍ່ໜ້າເຮືອນຊຸດີນຫຼັງໜຶ່ງຍາວສົມຄວນ. ນາຍຕຳຫຼວດໄຂຕູ້ຫ້ອງແລ້ວບອກເຮົາເຂົ້າໄປ ໂດຍເວົ້າວ່າໃຫ້ເຮົານອນຢູ່ໃນຫ້ອງນີ້ ທີ່ມີນ້ຳເບີ 12 ຕິດຢູ່ຝາປະຕູ. ຫ້ອງເຮົານອນນັ້ນກວ້າງ 2 ແມັດ ຍາວ 3 ແມັດ, ມີຕຽງນອນໜ່ວຍໜຶ່ງ ສຳລັບນອນ, ປູດ້ວຍສາດ, ມີໝອນໜຶ່ງໜ່ວຍ, ຜ້າຫົ່ມຝ້າຍເປັນອັນສີເທົ່າໜຶ່ງຜືນ, ມີມຸ້ງນີລົງສີຂຽວໃບໄມ້ຫຸ້ມກັນຍຸງ, ຂ້າງຕຽງມີໂຕະໜຶ່ງໜ່ວຍ ແລະ ຕັ່ງອີ່ໜຶ່ງອັນເພື່ອນັ່ງກິນເຂົ້າ, ເທິງໂຕະມີບີດົງນ້ຳຂອງທະຫານໜຶ່ງອັນ ແລະ ຈອກກິນນ້ຳເຮັດດ້ວຍຢາງປາລະສະຕິກສອງໜ່ວຍ; ຂ້າງປະຕູໃຕ້ຕີນມີປ່ອງຢ້ຽມປ່ອງໜຶ່ງບໍ່ມີຝາອັດ ແຕ່ມີດ້ວຍເຫຼັກລວດໃຫຍ່ທີ່ຕໍ່ມີລຽນກັນຖີ່ ພໍຫຼົມສອງດ້ວມີ. ຖັດນັ້ນໄປແມ່ນປະຕູເຂົ້າອອກ ກວ້າງ 1 ແມັດ, ສູງ 2 ແມັດ, ອັດດ້ວຍຝາແປ້ນໜາ 3 ຊັງຕີແມັດ, ໃສ່ກະແຈທາງນອກ ໂດຍແມ່ນຕຳຫຼວດຍາມເປັນຜູ້ຮັກສາຂໍກະແຈ. ນີ້ແມ່ນຫ້ອງນອນເຮົາທີ່ ພູຍ ຊະນະນິກອນເອົາໃຈຕ້ອນຮັບເຮົາ ເພື່ອຕອບແທນສອງແຂວງ-ເຕົ້າໂຮມ ແລະ ອາວຸດຍຸດທະພັນນັບເປັນພັນໆກະບອກ ທີ່ພວກເຮົາເອົາມອບໃຫ້ເຂົາ ດ້ວຍຄວາມຈິງໃຈ.

ພໍດຶກມື້ນັ້ນເຮົານອນບໍ່ຫຼັບຈັກເມັດ,ພິກປິ້ນໄປທາງໃດກໍ່ຍັງເຫັນໜ້າເມຍເຮົາ ແລະ ອ້າຍນ້ອງທີ່ຢືນເບິ່ງເຮົາດ້ວຍຄວາມໂສກເສົ້າຢູ່ຫົວຂັ້ນໄດເຮືອນ ໃນຄາວເຮົາໜີຈາກເຮືອນມາ . ເຮົາຄຶດຖາມຕົວເອງວ່າ ເປັນຫຍັງເຮົາຈຶ່ງໄດ້ມານອນຢູ່ບ່ອນນີ້ ທີ່ເພີ່ນຂັ້ນມາຈິນຕາໃຈບໍ່ຢາກໄດ້ ? ແມ່ນຍ້ອນເຮົາເສຍສະຫຼະທຸກສິ່ງທຸກຢ່າງຕະຫຼອດຮອດຄອບຄົວພີ່ນ້ອງ, ຄວາມສຸກສ່ວນຕົວ ແລະ ຊີວິດເພື່ອຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ, ເຮັດໃຫ້ປະເທດລາວເປັນເອກະລາດ, ເຮັດໃຫ້ຄົນລາວເປັນເຈົ້າຕົນເອງ ແລະ ໄດ້ສ້າງສາບ້ານເມືອງອຸດົມຮັ່ງມີຊົມບໍ ? ເຮົາຄວນໄດ້ຮັບຄວາມຍ້ອງຍໍຊົມເຊີຍ ແລະ ຂອບອົກຂອບໃຈຈາກຄົນລາວທຸກຄົນລະບໍ, ເປັນຫຍັງເຮົາຈຶ່ງຖືກຈັບມາຂັງຄຸກແນວນີ້ ? ແມ່ນໃຜສັ່ງຈັບເຮົາມາຂັງຄຸກແນວນີ້ ? ແມ່ນພູຍຊະນະນິກອນ. ຄົນຊັ້ນ ພູຍ ຊະນະນິກອນ ແມ່ນໃຜ ? ແມ່ນຄົນລາວຜູ້ໜຶ່ງ. ເປັນຫຍັງເຂົາຈຶ່ງບໍ່ດີໃຈຄືປວງປະຊາຊົນລາວທັງຊາດທີ່ໄດ້ເຫັນ ປະເທດຊາດເປັນເອກະລາດ, ມີອິດສະຫຼະພາບ, ອຳນາດອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນ ? ພູຍ ຊະນະນິກອນ ເກີດມາເປັນຄົນລາວແທ້, ແຕ່ເຂົາແລ່ນນຳຍົດ ແລະ ແລ່ນນຳເງິນ, ຖືກພວກລ່າເມືອງຂຶ້ນຝະລັ່ງຊື້ເອົາເປັນລູກມື , ບາດພວກລ່າເມືອງຂຶ້ນຝະລັ່ງປະລາໄຊຖອຍໜີໄປແລ້ວ ເຂົາພັດຖືກຈັກກະພັດອາເມລິກາ ຊື້ເອົາເປັນຄົນໃຊ້ເພື່ອປາບປາມປະຊາຊົນລາວ, ດັ່ງນັ້ນ ເຂົາຈຶ່ງເປັນຄົນທີ່ບໍ່ມີຊາດ, ຈຶ່ງຈັບຄົນຜູ້ຮັກຊາດມາກັກຂັງ. ຄົນລາວຊົ່ວເຖິງຂະໜາດນີ້ກໍ່ມີ ! ມື້ໜຶ່ງທາງໜ້ານັ້ນ ປະຊາຊົນລາວຈະລາກຄໍມັນຂຶ້ນສານຕັດສິນ ! ມື້ນັ້ນຍັງໄກປານໃດນໍ ! ເຮົາຈະທັນເຫັນໃນເວລາເຮົາຍັງມີຊີວິດນີ້ບໍ, ຫຼືວ່າ ເຮົາຕາຍໄປແລ້ວມື້ນັ້ນຈຶ່ງຈະມາຮອດເດ ! ແນ່ນອນ ເຮົາຈະຕ້ອງເຫັນ

ຜູຍ ຊະມະນິກອນ ຖືກລົງໂທດ ເພາະເຮົາເຊື່ອວ່າທຳມະຕ້ອງຊະນະອະທຳຢ່າງແນ່ນອນ .

ຄິດໄປຫາເຮືອນ, ເຮົາຮູ້ສຶກເປັນຫ່ວງເຖິງຫຼາຍສິ່ງຫຼາຍແນວ, ຢ້ານເມຍເຮົາ ແລະ ອ້າຍນ້ອງເອົານຳແຕ່ໂສກເສົ້າເຫງົາຫງອຍ ແລ້ວຈະຂາດສະຕິລະວັງຕົວ, ຢ້ານອ້າຍນ້ອງຈະປະເຮືອນໄປຫຼົບເຮັດໃຫ້ພວກຕຳຫຼວດສວຍໂອກາດຂຶ້ນໄປປຸ້ນເຮືອນ, ຢ້ານສັດຕູຈະໂຄສະນາ ນາບຂູ່ຈ້າງແກດຶງເອົາໄປເປັນຄົນຮັບໃຊ້ເລກັນອັນມືດມົນຂອງພວກເຂົາ. ຖ້າວ່າເມຍເຮົາ ແລະ ອ້າຍນ້ອງບໍ່ຍອມໄປເຮັດນຳພວກເຂົາ, ບາດພວກເຂົາໄລ່ໜີຈາກເຮືອນຈະໄປຢູ່ນຳໃຜ? ພີ່ນ້ອງຜູ້ຮັກແພງປານໃດກໍຢ້ານຈະບໍ່ກ້າຮັບເອົາຄອບຄົວເຮົາຢູ່ນຳໄດ້ ເພາະວ່າຢ້ານສັດຕູຈະປາບປາມ. ຍິ່ງຄິດເຮົາກໍຍິ່ງຄຽດແຄ້ນພໍຢາກພັງເພຄຸກອອກໄປສູ້ຕົວຕໍ່ຕົວກັບ ຜູຍ ຊະມະນິກອນ ເບິ່ງດູ, ມັນຈະເກັ່ງກ້າສາມາດພຽງໃດ ? ພ້ອມກັນນັ້ນເຮົາກໍຮູ້ສຶກ ແລະ ລຸລິ້ງຕົນເອງວ່າ ຄິດແນວນັ້ນມັນກໍບໍ່ຖືກ ມັນບໍ່ແມ່ນສິ່ງທີ່ຈະເປັນໄປໄດ້ ເພາະວ່າ ຈະອອກຈາກຄຸກນີ້ໄປຮອດ ຜູຍ ຊະມະນິກອນ ກໍບໍ່ແມ່ນເລື່ອງງ່າຍ ແລະ ແມ່ນວ່າເຮົາໄປຕີຊະນະຜູຍ ຊະມະນິກອນ ກໍຍັງຄົງຈະມີຜູຍ ຊະມະນິກອນ ໂຕໃໝ່ເກີດຂຶ້ນເພາະວ່າເບື້ອງຫຼັງຂອງມັນ ມີຈັກກະພັດອາເມລິກາທີ່ບໍ່ທັນໄດ້ຊົມລົດແຫ່ງຄວາມປະລາໄຊ ຍ້ອນນ້ຳມືຂອງປະຊາຊົນລາວເທື່ອ . ເຮົາຈະຕ້ອງອົດທົນຢູ່ຄຸກນີ້ຕໍ່ໄປຈົນຮອດມື້ເຮົາໂຕນຈາກຄຸກໄດ້ ຫຼື ຮອດມື້ປະຊາຊົນລາວ ທົ່ວປະເທດ ພາຍໃຕ້ການນຳພາຂອງພັກເຮົາຕີສັດຕູມີໄຊຊະນະຢ່າງຮາບຄາບ. ເຮົາເຄີຍອົດທົນຢ່າງນີ້ພົນດົນມາແລ້ວ, ເຮົາຕ້ອງສືບຕໍ່ອົດທົນຕໍ່ໄປຈົນຮອດມື້ພວກເຮົາຈະມີໄຊຊະນະໃໝ່.

ກັບມາຄິດເຖິງຄຸກຫຼັງນີ້ ເຮົາເຫັນວ່າມັນໃຫຍ່ຍາວເອົາແທ້, ຈະແມ່ນໃຜເດທີ່ຖືກຈັບມາຢູ່ນຳກັນ ? ພວກເຂົາຈະໃຫ້ພວກເຮົາມາຢູ່ລວມກັນບໍ, ຫຼືວ່າພວກເຂົາຈະເອົາແຕ່ລະຄົນໄປຂັງໄວ້ແຕ່ລະບ່ອນຕ່າງໄກກັນ ? ຖ້າວ່າພວກເຂົາຫາກຫຼັກ ພວກເຂົາຈະແຍກພວກເຮົາອອກຈາກກັນແນວນັ້ນແທ້, ພວກເຮົາຈະບໍ່ມີຄວາມສາມາດພົບພໍ້ແລກປ່ຽນຄຳຄິດຄຳເຫັນນຳກັນ , ພວກເຂົາເກັບເອົາໄປຂ້າຖິ້ມເທື່ອລະຄົນ ສອງຄົນກໍຈະບໍ່ມີໃຜຮູ້ຈັກໄດ້.

ຄວາມຄິດເຮົາຄືນນັ້ນ ຈຶ່ງແມ່ນມັນມີຫຼາຍສິ່ງຫຼາຍແນວສັບສົນທີ່ສຸດ. ຄິດເປັນຫ່ວງນຳກອງພັນທີສອງ ແລະ ທີໜຶ່ງ, ຢ້ານພວກທີ່ໂຕນໜີຈະບໍ່ປອດໄພ ຈະຖືກພວກສັດຕູຈັບໄດ້ ແລະເອົາໄປກັກຂັງທໍລະມານ ຫຼື ຂ້າຕາຍ, ຄິດເປັນຫ່ວງນຳອ້າຍເອື້ອຍນ້ອງພະນັກງານ ແລະ ທະຫານທີ່ກັບຄືນເມືອຢູ່ບ້ານເດີມ ; ແຕ່ພວກເຮົາເປັນກຳມະການສູນກາງປານນີ້ ພວກເຂົາກໍຍັງຈັບມາກັກຂັງ, ອ້າຍເອື້ອຍນ້ອງເຫຼົ່ານັ້ນຄົງຈະບໍ່ພົ້ນສັດຕູຈັບກຸມຂ້າຕີທໍລະມານ. ຄວາມຫວັງຂອງເຮົາແມ່ນຢາກໃຫ້ໝົດທຸກຄົນເອົາຕົວລອດໄປຫາເຂດທີ່ໝັ້ນ ສືບຕໍ່ເຮັດການປະຕິວັດດ້ວຍອາວຸດຄືນໃໝ່ຈົນໃຫ້ບັນລຸເຖິງໄຊຊະນະ.

ກາງຄືນນັ້ນຈຶ່ງແມ່ນຍາວເອົາແທ້, ຄອງຖ້າໃຫ້ຕາເວັນຂຶ້ນມາເປັນມື້ໃໝ່ຈຶ່ງແມ່ນມັນເຫິງ. ສຽງໄກ່ຂັນແຊວງຂຶ້ນຢູ່ເຮືອນນາຍທະຫານອ້ອມຄຸກນັ້ນ ບອກວ່າຂ້ອນຄືນໄປແລ້ວ ແຕ່ເຮົາບໍ່

ໂດຍໄຟສາຍເບິ່ງໂມງຍັງແມ່ນ 2 ໂມງເຊົ້າ ; ເຂັມວິນາທີແລ່ນໄວຕິກຕິກຢູ່, ແຕ່ວ່າເຂັມໂມງຈິ່ງແມ່ນມັນແລ່ນຊ້າ. ຄວາມຄຽດແຄ້ນຂອງເຮົາຕໍ່ພວກຈັກກະພັດອາເມລິກາ ແລະ ພູຍຊະນະນິກອນ ເພີ່ມທະວີຂຶ້ນຈຸກໄຈ້. ນີ້ລະນໍ ອັນທີ່ເພິ່ນວ່າຄົນບຸນໄດ້ຖືກຕາຍ ຄົນບາບໄດ້ຂີ່ມາລຽບເມືອງ ! ເປັນແນວນີ້ແມ່ນຄວາມຍຸດຕິທຳບໍ ? ມັນຈະເປັນແນວນີ້ຕະຫຼອດໄປບໍ ?- ບໍ່ແມ່ນຄວາມຍຸດຕິທຳຈັກເມັດ, ເດັດຂາດຈະບໍ່ເປັນແນວນີ້ຕະຫຼອດໄປໄດ້. ທຳມະຕ້ອງຊະນະອະທຳ, ຄວາມຍຸດຕິທຳຕ້ອງກັບມາສູ່ໂລກມະນຸດ. ໜຶ່ງທາງໜ້ານີ້ ຄົນບຸນຈະຕ້ອງໄດ້ຂີ່ມາ ຄົນບາບຈະຕ້ອງໄດ້ຖືກຕາບໜັກ ! ແມ່ນໃຜຈະມາເຮັດໃຫ້ມີການປ່ຽນປີ້ນໄປທາງດີແນວນັ້ນ ? -ແມ່ນປະຊາຊົນລາວພາຍໃຕ້ການນຳພາຂອງພັກປະຊາຊົນລາວ, ແມ່ນພວກເຮົານີ້ເອງ . ຈາກຄຸກມືດແຫ່ງນີ້ ເຮົາຂໍສົ່ງສຽງຮ້ອງອັນຮັກແພງ ແລະ ເປັນທຳໄປໃຫ້ພີ່ນ້ອງ ທຸກຊົນເຜົ່າວ່າ ໃຫ້ສາມັກຄີກັນຕໍ່ສູ້ຢ່າງອາດຫານ ພາຍໃຕ້ການນຳພາຂອງພັກປະຊາຊົນ ເພື່ອປົດປ່ອຍຊາດ, ນຳຄວາມຍຸດຕິທຳ ແລະ ຄວາມສົມບູນພູນສຸກມາໃຫ້ແກ່ບ້ານເມືອງລາວ ; ວ່າຕົວເຮົາພວມນອນຢູ່ໃນຄຸກ ແຕ່ຈິດໃຈເຮົາຢູ່ນຳສູນກາງພັກ, ຢູ່ນຳທຸກສະຫາຍທີ່ໂຕນອອກມາພົ້ນ, ຢູ່ນຳພີ່ນ້ອງປະຊາຊົນລາວຜູ້ເຮັດການຕໍ່ສູ້ກູ້ຊາດ ແລະ ປົດປ່ອຍຕົນເອງ. ແນ່ນອນແລ້ວ, ພີ່ນ້ອງປະຊາຊົນຈະບໍ່ໄດ້ຍິນຄວາມຮຽກຮ້ອງຂອງເຮົານີ້, ແຕ່ຂະເຈົ້າກໍ່ຄົງຈະຄິດຮອດເຮົາ ແລະ ຕວງເຫັນຄວາມເວົ້າອັນຄຽດແຄ້ນຂອງເຮົາ. ເຮົາພວມຢູ່ໃນຄຸກມືດ ແຕ່ຈິດໃຈເຮົາແຈ້ງສະຫວ່າງເໝືອນດວງຕາເວັນ ເພາະວ່າເຮົາເປັນຄົນປອດໃສ ບໍ່ມີຄວາມຜິດຫຍັງ ; ຕໍ່ສູ້ຂັບໄລ່ພວກລ່າເມືອງຂຶ້ນຝະລັ່ງ ແລະ ຈັກກະພັດອາເມລິກາ ເພື່ອກອບກູ້ເອົາເອກະລາດຂອງຊາດ ແລະ ນຳເອົາອິດສະຫຼະພາບ ແລະ ຄວາມສຸກມາໃຫ້ແກ່ປະຊາຊົນ ບໍ່ແມ່ນຄວາມຜິດ. ຄົນທັງຫຼາຍແນວໃດກໍ່ຈະຮູ້ວ່າເຮົານອນຢູ່ຄຸກນີ້ແມ່ນເພື່ອຊາດ ແລະ ເພື່ອຄວາມສຸກຂອງປະຊາຊົນ. ຫ້ອງຄຸກຈະຄັບແຄບ, ຝາຄຸກຈະໜາ, ປ່ອງຢ້ຽມຄຸກຈະປະກອບດ້ວຍ ແທ່ງເຫຼັກອັນແໜ້ນໜາ, ປະຕູຄຸກຈະອັດໃສ່ກະແຈແຈບປານໃດກໍ່ຕາມ ເຮົາກໍ່ເຊື່ອໝັ້ນວ່າໜຶ່ງທາງໜ້ານີ້ ເຮົາຈະອອກພົ້ນໜີໄປຢ່າງສະຫງ່າຜ່າເຜີຍ ເພາະວ່າເຮົາບໍ່ໄດ້ເຮັດຫຍັງຜິດຕໍ່ຊາດ , ຕໍ່ປະຊາຊົນລາວ.

ສຽງໄກ່ຂັນປະສານສຽງກັນດັງຂຶ້ນຈາກເຮືອນທີ່ຢູ່ອ້ອມຂ້າງຄຸກເທື່ອໜຶ່ງ 5 ນາທີ ກໍ່ມິດງຽບລົງບອກວ່າເປັນເວລາຂອນຄືນແລ້ວ. ສຽງໄກ່ຂັນເທື່ອທີສອງ ບອກວ່າໃກ້ຈະຮຸ່ງແລ້ວ, 5 ນາທີກໍ່ມິດງຽບລົງຄືກັນ. ເຮົາເຍື່ອງໄຟສາຍເບິ່ງໂມງເຫັນວ່າຫາກໍ່ໄດ້ 4 ໂມງເຄິ່ງ . ເຮົາປອບໂຕເອງວ່າຕ້ອງອົດທົນຕໍ່ໄປຕື່ມໜ້ອຍໜຶ່ງ, ບໍ່ນານເທົ່າໃດຕາເວັນຈະຕ້ອງ ສ່ອງມາຕາມກົດເກນຂອງມັນ. ເຂັມໂມງຊີ້ບອກ 5 ໂມງເຄິ່ງ, ແສງຕາເວັນສ່ອງແສງພົ້ນພູເຂົາຄວາຍທາງທິດບູລະພາ. ເຮົາມອງອອກໄປຜ່ານປ່ອງຢ້ຽມເຫັນແຕ່ຕຳຫຼວດສອງຄົນ ຢືນລົມກັນຢູ່ຂ້າງປະຕູຮົ້ວໜາມໜາກຈັບທີ່ປິດລ້ອມຄຸກ. ຟັງເບິ່ງຫ້ອງອື່ນກໍ່ມິດງຽບຄືດຽວກັນ.ທີກໂມງ,

ແສງຕາເວັນສ່ອງແຈ້ງລົງມາທົ່ວບໍລິເວນ. ຕຳຫຼວດ 3 ຄົນ ເອົາຂໍກະແຈມາໄຂປະຕູຄຸກໃຫ້ເຮົາອອກໄປຖ່າຍເບົາ, ຖ່າຍໜັກ ແລະ ລ້າງໜ້າ. ພວກເຮົາຕ່າງຄົນ ຕ່າງອອກຈາກຫ້ອງຂອງໃຜລາວ ມາພົບໜ້າພໍ້ຕາກັນດ້ວຍຄວາມມ່ວນຊື່ນ ອັນເຕັມໄປດ້ວຍຄວາມຄຽດແຄ້ນ ຫາທີ່ປຽບບໍ່ໄດ້. ບາງຄົນເວົ້າຂຶ້ນວ່າ : "ເຫັນແລ້ວບໍ່, ເລື່ອງມັນ ? " ບາງຄົນທັກທ້ວງກັນດ້ວຍຄວາມຮັກແພງ ແລະ ດີໃຈວ່າ : "ໂອຍ, ດີແລ້ວທີ່ພວກເຮົາໄດ້ມາຢູ່ນຳກັນ".

ນອນຄຸກນຳກັນໃນຄືນນັ້ນມີ : ສະຫາຍ ສຸພານຸວົງ, ສະຫາຍ ສີງຄະໂປ ສີໂຄດຈຸນນະມາລີ, ສະຫາຍ ມາ ໄຂຄຳພິທູນ, ສະຫາຍ ພູມີ ວົງວິຈິດ, ສະຫາຍ ມະຫາສົມບຸນ ວົງພົ່ບຸນທຳ, ສະຫາຍ ຄຳເພັດ ພົມມະວັນ, ສະຫາຍ ສີຊະນະ ສີສານ, ສະຫາຍ ໜູຮັກ ພູມສະຫວັນ, ສະຫາຍ ຄຳພາຍ ບຸບຜາ, ເຮົາເອງ, ສະຫາຍ ພູນ ສີປະເສີດ, ທ່ານ ສີທົນ ກົມມະດຳ, ສະຫາຍ ເພົ້າ ພົມພະຈັນ, ພູເອົາ, ບົວສີ ແລະ ມາເນະ.

ຫຼັງຈາກຕຳຫຼວດ 3 ຄົນ ໄດ້ມາໄຂປະຕູຄຸກໃຫ້ພວກເຮົາອອກໄປຖ່າຍໜັກ, ຖ່າຍເບົາ, ລ້າງໜ້າ ແລະ ກຽມກິນເຂົ້າເຊົ້າ, ພວກເຮົາກໍ່ໄດ້ອອກຈາກຫ້ອງຂັງມາຫາໃຈເອົາອາກາດຍາມເຊົ້າທາງເບື້ອງນອກ ແລະ ໄດ້ເຫັນໜ້າເພື່ອນສະຫາຍທີ່ຮ່ວມທຸກນຳກັນ ຕ່າງກໍ່ມີທັງຄວາມມ່ວນຊື່ນ ແລະ ຄວາມຄຽດແຄ້ນແນວຄຽວກັນ ; ບາງສະຫາຍກໍ່ຮ້ອງຂຶ້ນດ້ວຍສຽງອັນແໜ້ນແຄ້ນໃນຄໍວ່າ : "ເຫັນແລ້ວບໍ່ນ້ຳໃຈສັນຕິພາບ, ມະນຸດສະທຳ ແລະນ້ຳໃຈສ້າງຄວາມດີໃສ່ບ້ານເມືອງຂອງ ຜູຍ ຊະນະນິກອນ " ? ບາງຄົນກໍ່ເວົ້າວ່າ : "ນີ້ແຫຼະການປະຕິບັດນະໂຍບາຍສັນຕິພາບ ແລະ ຍຸດຕິທຳຂອງຈັກກະພັດອາເມລິກາ " ! ບາງຄົນເວົ້າວ່າ : " ຜູຍ ຊະນະນິກອນ ນີ້ເວລາເປັນຂ້ອຍຝະລັ່ງກໍ່ສັດຊື່ບໍລິສຸດຈົນຫຼົງເຫົວຈົນທ້າຍກັບຝະລັ່ງ , ບາດພວກລ່າເມືອງຂຶ້ນຝະລັ່ງຖືກຂັບໄລ່ໄສຫົວ ໜີອອກຈາກລາວແລ້ວມັນຊ້ຳພັດໄປແກວ່ງຫາງເລຍຕີນຈັກກະພັດອາເມລິກາ ເພື່ອກິນເງິນໂດລາ ; ລອງເບິ່ງດູມັນຈະຂາຍຊາດ ຂາຍປະຊາຊົນກັດກິນບ້ານເມືອງລາວໄປຮອດໃສ ? " ບາງຄົນເວົ້າຂຶ້ນວ່າ : "ມັນບໍ່ແມ່ນແຕ່ ຜູຍ ຊະນະນິກອນ ຜູ້ດຽວໄດ໋, ພັກພວກລູກຫຼານຂອງມັນທີ່ເປັນຂ້ອຍອາເມລິກາກໍ່ຈະຕ້ອງຕົກຢູ່ໃນຊາຕາກຳອັນດຽວກັນທັງໝົດນັ້ນບໍ່ໄດ້ ! "ບາງຄົນເວົ້າວ່າ : "ຮູ້ຈັກເປັນແນວນີ້ ບໍ່ເຂົ້າມາຮ່ວມແມ່ນສາດອກ, ຕີມັນຈົນຮາບຄາບແລ້ວປົດປ່ອຍທົ່ວປະເທດດີກວ່າ ! " ບາງຄົນເວົ້າວ່າ : "ເທື່ອນີ້ຈຶ່ງເຫັນແຈ້ງວ່າ ຈັກກະພັດອາເມລິກາ ໃຊ້ ຜູຍ ຊະນະນິກອນ ເປັນລູກມືຍົວະເອົາພວກເຮົາເຂົ້າມາຮ່ວມ ເພື່ອດັບມອດກຳລັງແນວລາວຮັກຊາດ" ! ບາງຄົນພັດເວົ້າວ່າ : ມັນຢາກເຮັດຫຍັງໃຫ້ມັນເຮັດໄປ, ມັນບໍ່ໜີຈາກຄວາມປະລາໄຊໄປໄດ້ດອກ. " ສະຫາຍ ໜູຮັກ, ສະຫາຍ ພູນ ສີປະເສີດ ແລະ ເຮົາເອງ ໄດ້ເປັນເອກະສັນກັນເວົ້າວ່າ : "ພວກເຮົາໄປຖ່າຍໜັກ, ຖ່າຍເບົາ ແລະ ລ້າງໜ້າເສຍກ່ອນ, ກິນເຂົ້າເຊົ້າແລ້ວພວກເຮົາຈຶ່ງມາປະຊຸມກັນ, ໃຜມີຄຳເຫັນແນວໃດຈຶ່ງຄ່ອຍເວົ້າກັນ". ທຸກຄົນກໍ່ແຍກຈາກກັນ ໄປດ້ວຍ

ທ່າທາງ ແລະ ສີໜ້າອັນເຄັ່ງຂຶມ. ເຮົາຄິດຮອດເຮືອນເຮົາຫຼາຍທີ່ສຸດ ; ນັ້ມຕື້ມເຊົ້າມາ ບໍ່ເຫັນໜ້າເຮົາ ທຸກຄົນຄົງຈະຫງ່ວມເຫງົາ ແລະ ຄຽດແຄ້ນຄືກັນກັບເຮົາເອງ.

ຫຼັງຈາກພວກເຮົາລາງໜ້ານາແລ້ວ, ນາງຈັນເພັງ ເອື້ອຍເມຍຂອງອ້ວນ ລາທິກຸນ ຂັບລົດເບັນເຂົ້າມາໃນຂ່ວງຄຸກ, ເອົາເຂົ້າເຊົ້າມາໃຫ້ພວກເຮົາກິນ, ມີເຂົ້າຈີ່, ກາເຟ, ນ້ຳຕານ ແລະ ນ້ຳຊາ. ພວກເຮົາປັ້ນເຂົ້າເຊົ້າແລ້ວ ພວກຕຳຫຼວດກໍ່ບໍ່ອັດປະຕູຄຸກ. ພວກເຮົາຈັບໂອກາດເພື່ອໄປລວມປະຊຸມກັນຢູ່ຫ້ອງ ທ້າວພູເຂົາ ທາງເບື້ອງຫຼັງຄຸກ. ເມື່ອທຸກຄົນອອກຄຳເຫັນຕາມຄວາມຄິດຂອງໃຜລາວແລ້ວ ສະຫາຍ ໜູຮັກ ພູມສະຫວັນ ໄດ້ສະຫຼຸບວ່າຄຳເຫັນຂອງທຸກຄົນແມ່ນຖືກຕ້ອງ ; ພູຍ ຊະນະນິກອນ ປະຕິບັດຕາມຄຳສັ່ງຂອງຈັກກະພັດ ອາເມລິກາ ໄດ້ລົງມືຈັບພວກເຮົາມາຂັງຄຸກແລ້ວ ; ແນວໃດພວກເຂົາກໍ່ຈະປາບຄົນແນວລາວ ຮັກຊາດແຮງຂຶ້ນກວ່າເກົ່າ ຄືດັ່ງຄະນະປະຈຳສູນກາງພັກເຮົາໄດ້ຕີລາຄາລ່ວງໜ້າໄວ້ແລ້ວ. ພວກເຮົາຕ້ອງຫຸ້ນຫ່ຽງ ແລະ ເຊື່ອໝັ້ນໃນແນວທາງອັນຖືກຕ້ອງຂອງພັກເຮົາ. ດຽວນີ້ ພວກເຮົາຈະຕ້ອງຈັດຕັ້ງໜ່ວຍພັກ ແລະ ວາງແຜນການດຳເນີນວຽກງານຕັ້ງແຕ່ນີ້ໄປ. ພົດທຸກຄົນເຫັນດີໃຫ້ ສະຫາຍ ໜູຮັກ ພູມສະຫວັນ ເປັນເລຂາໜ່ວຍພັກ ແລະ ຫົວໜ້າຄະນະຮັບຜິດຊອບ ຄຸ້ມຄອງເພື່ອນສະຫາຍທີ່ຖືກຄຸມຂັງຢູ່ຄຸກແຫ່ງນີ້; ສະຫາຍ ສຸພານຸວົງ, ພູມ ສີປະເສີດ ແລະ ເຮົາເອງເປັນກຳມະການ.

ແຜນການເຄື່ອນໄຫວທີ່ໜ່ວຍພັກພວກເຮົາວາງອອກ ແລະ ພວກສະຫາຍທຸກຄົນເຫັນພ້ອມນຳໄດ້ບົ່ງໄວ້ວ່າ ໃຫ້ພວກເຮົາທຸກຄົນພ້ອມກັນເຮັດ 3 ວຽກຕົ້ນຕໍຄື : ອອກແຮງໂຄສະນາອົບຮົມພວກຕຳຫຼວດທີ່ມາຢູ່ຍາມເຝົ້າຄຸກ ຈົນໃຫ້ຈັດຕັ້ງເປັນຄົນຂອງເຮົາໄດ້ ; ຕັ້ງໜ້າຫັດກາຍະບໍລິຫານທຸກເຊົ້າ ດ້ວຍການແລ່ນອ້ອມຄຸກມື້ທຳອິດ 5 ຮອບ ແລ້ວແຕ່ລະມື້ໃຫ້ເພີ່ມ ມື້ລະຮອບ ; ຂໍຢືມຈົກ ແລະ ຊວ້ານນຳພວກຕຳຫຼວດມາຂຸດດິນລຽບຕາມຕີນຮົ້ວໜາມໜາກຈັບອ້ອມເດີ່ນໜ້າຄຸກເພື່ອປູກກິກໜາກຫຸ່ງ, ຜັກບົ່ວຜັກຫອມ, ຫອມທ້ຜັກແພວ, ດອກຕາເວັນແລະດອກສາມປີ. ຫຼັງຈາກສະຫາຍໜູຮັກ ພູມສະຫວັນ ເຜີຍແຜ່ແຜນການລະອຽດແລ້ວ ພົດທຸກຄົນກໍ່ລົງມືປະຕິບັດ. ເຮົາອາໄສເວລາຕຳຫຼວດເອົາເຂົ້າມາໃຫ້ກິນມື້ລະ 3 ຄາບ ເພື່ອຖາມຫາບ້ານເກີດ ແລະ ພໍ່ແມ່ຂອງເຂົາ, ຂໍໃຫ້ເຂົາເອົາຈົກກັບຊວ້ານມາໃຫ້ຢືມເຮັດສວນ. ເຮົາລົ້ງກັບພວກຕຳຫຼວດນີ້ໄດ້ງ່າຍ ເພາະວ່າມີບາງຄົນໄດ້ເຄີຍຮູ້ຈັກກັນມາແຕ່ກ່ອນ ແລະ ບາງຄົນກໍ່ແມ່ນຄົນຊຽງຂວາງທີ່ຮູ້ວ່າເຮົາເປັນພໍ່ລຳແຕ່ປາງກ່ອນ ແລະ ຢາກໄດ້ກອນລຳຈາກເຮົາ . ການເວົ້າລົມກັນເປັນໄປຢ່າງສະໜິດສະໜົມກັນດີ. ພວກເຮົາຂໍຢືມຈົກ ແລະ ຊວ້ານ ເຂົາກໍ່ເອົາມາໃຫ້, ທັງແກ່ນດອກໄມ້ ແລະ ແນວຜັກບົ່ວຜັກຫອມ ແລະ ຫອມທ້ຜັກແພວ. ແກ່ນໝາກຫຸ່ງແມ່ນພວກເຮົາເອົາຈາກໜ່ວຍໝາກຫຸ່ງ ທີ່ຄອບຄົວສົ່ງມາໃຫ້ນັ້ນມາກ້າເອົາ. ນ້ຳຫົດສວນແມ່ນນ້ຳທີ່ພວກເຮົາຂຸດຂຸມໂຕ່ງເອົາຈາກຫ້ອງອາບນ້ຳຂອງພວກເຮົາ. ເດືອນໜຶ່ງຕໍ່ມາ ທຸກ

ສິ່ງທຸກຢ່າງທີ່ພວກເຮົາປຸກກໍ່ຂຶ້ນງາມດີ ເຮັດໃຫ້ພວກເຮົາມີວຽກເຮັດງານທຳ ແລະ ມ່ວນຊື່ນ ເບີກບານຕໍ່ຜົນງານຂອງຕົນ.

ການແລ່ນອ້ອມຄຸກນັ້ນນີ້ທຳອິດຮູ້ສຶກອິດເມື່ອຍ, ເພາະວ່າຄຸກຫຼັງນີ້ຍາວປະມານ 30ກວ່າ ແມັດ, ກວ້າງປະມານ 7 ແມັດ, ພື້ນລວາດຊີມັງ, ມຸງດ້ວຍກະເບື້ອງ, ມີເພດານປູດ້ວຍ ແຜ່ນໄມ້ອັດ ; ມີຝາກໍ່ດິນຈີ່ລວາດປະທາຍຂຶ້ນທາງຍາວເຄິ່ງກາງແປ ແບ່ງເຮືອນຫຼັງນີ້ອອກ ເປັນສອງຟາກຄື ເບື້ອງໜ້າ ແລະ ເບື້ອງຫຼັງ, ແຕ່ລະເບື້ອງມີຝາດິນຈີ່ລວາດປະທາຍ ຂັ້ນ ເປັນ 22 ຫ້ອງ. ຫ້ອງຫົວສົ້ນເບື້ອງຕາເວັນຕົກເຂົາເອົາເປັນຫ້ອງອາບນ້ຳ, ເອົາຟຸຍນ້ຳມັນ ເປົ່ານາຕັ້ງໄວ້ 10 ໜ່ວຍ, ແຕ່ລະມື້ມີລົດຊີແຕກຂົນນ້ຳມາຖອກໃສ່ເທື່ອໜຶ່ງ. ພວກເຮົາຂຸດ ຂຸມ 2 ຂຸມໃສ່ຮ່ອງຫຼູ່ໜ້າຫ້ອງນີ້ ເພື່ອໂຕ່ງເອົານ້ຳທີ່ພວກເຮົາອາບແລ້ວນັ້ນ ໄວ້ຫົດສວນ. ຫ້ອງທີ 2 ເປັນຫ້ອງທີ່ເຂົາປະໄວ້ເປັນບ່ອນນາງຈັນເພັງຫາພາເຂົ້າເຊົ້າ, ງາຍແລະແລງ. ຕໍ່ຈາກນັ້ນເປັນຫ້ອງນອນທັງໝົດ, ທຸກຫ້ອງກວ້າງຍາວທໍ່ດຽວກັນ ແລະ ປະກອບເຄື່ອງຂອງຄື ດຽວກັນ. ອ້ອມຈອດຄຸກມີຮົ້ວເຫຼັກລວດໜາມໜາກຈັບ ສານໃສ່ກັນເປັນຕາຫ່າງຫຼືມຕົນມື, ເອົາ ສາຍເຫຼັກມັດໃສ່ເສົາເຫຼັກຢ່າງແໜ້ນໜາ. ທາງໜ້າເຮືອນ ແລະ ສົ້ນເບື້ອງຕາເວັນອອກມີເດີ່ນ ກວ້າງປະມານ 10 ແມັດ, ທາງຫຼັງເຮືອນ ແລະ ສົ້ນເບື້ອງຕາເວັນຕົກມີເດີ່ນກວ້າງປະມານ 5 ແມັດ. ແຈຮົ້ວເບື້ອງຫຼັງທາງຕາເວັນອອກມີອີດຂຸດເລິກ ຂັ້ນເປັນ 3 ຫ້ອງ ແອ້ມດ້ວຍຝາ ແປ້ນ ມີຝາປະຕູແປ້ນອັດໃສ່ກະແຈທາງນອກ ແລະ ທາງໃນໄດ້, ພື້ນປູດ້ວຍແປ້ນ ມີຮູທາງ ກາງເພື່ອໃຫ້ຖ່າຍໜັກ ແລະ ຖ່າຍເບົາ. ປະຕູເຂົ້າຫາຂວງຄຸກມີແຕ່ບ່ອນດຽວ ຢູ່ໃກ້ແຈຮົ້ວ

ເຮືອນຫຼັງນີ້ແຕ່ກ່ອນເປັນຄອກມ້າຂອງທະຫານຫຸ່ນ ແລະ ໃນປີ 1959 ໄດ້ຖືກພວກ ຜູຍ ຊະນະນິກອນ ນຳໃຊ້ເປັນຄຸກຄຸມຂັງບັນດາທ່ານຜູ້ນຳຝ່າຍແນວລາວຮັກຊາດ .

ເບື້ອງຕາວັນຕົກໃກ້ກັບຕີນຂັ້ນໄດຂຶ້ນສູ່ລະບຽງເຮືອນຕຳຫຼວດທີ່ມາຢູ່ຍາມເຝົ້າຄຸກ. ເສົາປະຕູ
ແມ່ນທ່ອນໄມ້ 4 ລ່ຽມ ກວ້າງ ແລະ ໜາປະມານ 30 ຊັງຕີແມັດ. ຝາປະຕູ ແມ່ນຂອບໄມ້
ກວ້າງ 15 ຊັງຕີແມັດ, ໜາ 10 ຊັງຕີແມັດ, ໂຕປະຕູກວ້າງ 3 ແມັດ, ສອງຝາປະຕູມີ
ຕານ່າງໜານໜາກຈັບຕາກວ້າງທໍ່ກັບຕາຮ້ວ, ອັດດ້ວຍສາຍໂສ້ເຫຼັກ ເຊິ່ງມີກະແຈໜາກບາ -
ໃຫຍ່ສອດໃສ່ກັນ. ພວກຕຳຫຼວດບອກໃຫ້ພວກເຮົາຮູ້ວ່າ ຄຸກຫຼັງນີ້ແມ່ນຄອກມ້າຂອງທະຫານ,
ພວກເຂົາໄດ້ເອົາດິນຈີ່ມາກໍ່ຝາ ແລະ ເອົາໄມ້ແປ້ນມາປູປິດການຫາກໍ່ແລ້ວ ເພື່ອຕ້ອນຮັບພວກ
ເຮົາ. ເຫດການມັນເປັນແນວນັ້ນ, ການທີ່ພວກເຮົາເພັ່ນຂັ້ນມາຢູ່ໃນຫ້ອງຈຶ່ງບໍ່ເປັນຂອງແປກ
ປະຫຼາດຫຍັງ. ນັ້ນມັນແມ່ນກົນຕົວຂອງພູຍ ຊະນະນິກອນເອງທີ່ຂາຍຊາດ ຂາປະຊາຊົນລາວ
ຜູ້ຮັກຊາດເພື່ອສ້າງຄວາມຮັ່ງມີໃຫ້ແກ່ຕົວມັນເອງ ແລະ ພີ່ນ້ອງພັກພວກຂອງມັນ. ນັ້ນແມ່ນ
ອັນທີ່ເພິ່ນເອີ້ນວ່າຄົນຂາຍໄດ້ຂຶ້ນມາລຽບເມືອງ ; ມັນຈະໄດ້ຂຶ້ນມາລຽບເມືອງແຕ່ພຽງຊົ່ວຄາວ
ເທົ່ານັ້ນດອກ ; ເດັດຂາດມັນຈະບໍ່ໄດ້ເປັນແນວນັ້ນຢູ່ເຕີງ ; ຄົນຜູ້ທີ່ຂາປະຊາຊົນແລະຂາຍ
ບ້ານຂາຍເມືອງແບບນີ້ ຈະຕ້ອງຖືກພັກ ແລະ ປະຊາຊົນພວກເຮົາລົງໂທດຢ່າງສາສົມ ໃນມື້
ໜຶ່ງຂ້າງໜ້ານີ້ຢ່າງແນ່ນອນ. ຄວາມຄິດຄຽດແຄ້ນນີ້ແຫຼະເປັນກຳລັງໃຈໃຫ້ພວກເຮົາແລ່ນອ້ອມ
ຄຸກເພີ່ມຂຶ້ນ ມີລະບອບຕາມແຜນການ.

ສາມເດືອນຜ່ານພົ້ນໄປ. ຊີວິດນັກໂທດ ນັກກະສິກອນ ແລະ ນັກການເມືອງ ຂອງພວກ
ເຮົາດຳເນີນໄປຕາມແຜນການ. ໃນລະຫວ່າງນັ້ນ ພວກເຮົາທຸກຄົນໄດ້ພ້ອມກັນຂຽນຈົດໝາຍ
ສະບັບໜຶ່ງ, ເຊັນຊື່ນຳກັນແລ້ວໃຫ້ຕຳຫຼວດເອົາໄປສົ່ງໃຫ້ລັດຖະບານ ພູຍ ຊະນະນິກອນເພື່ອ
ຄັດຄ້ານການທີ່ພວກເຂົາຈັບພວກເຮົາຜູ້ບໍ່ມີຄວາມຜິດ ແລະ ທວງໃຫ້ປ່ອຍຕົວພວກເຮົາ ອອກ
ໄປພ້ອມກັນປັບປຸງການລວມລາວໃຫ້ສຳເລັດ ແລະ ພາປະເທດຊາດໄປຕາມເສັ້ນທາງ ສັນຕິ
ພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະວັດທະນາຖາວອນ .
ນອກຈາກນັ້ນ ພວກເຮົາທີ່ເປັນຜູ້ແທນລາດສະດອນກໍພ້ອມກັນຂຽນ ແລະ ເຊັນຊື່ໃສ່ ຈົດໝາຍ
ອີກສະບັບໜຶ່ງໃຫ້ຕຳຫຼວດ ສົ່ງໄປໃຫ້ປະທານລັດຖະສະພາ ເພື່ອຮຽກຮ້ອງໃຫ້ເຂົາທວງໃຫ້ລັດ
ຖະບານປ່ອຍຕົວພວກເຮົາ ອອກໄປຮ່ວມກອງປະຊຸມລັດຖະສະພາທີ່ໄດ້ໄຂຂຶ້ນແລ້ວ ຕາມຂໍ້ບັນ
ຍັດຂອງກົດໝາຍລັດຖະທຳມະນູນ ທີ່ບົ່ງໄວ້ວ່າ ຫ້າມບໍ່ໃຫ້ຈັບຜູ້ແທນລາດສະດອນ ແລະຜູ້ແທນ
ທີ່ຖືກຈັບບໍ່ທັນຕັດສິນເທື່ອ ກໍ່ຕ້ອງປ່ອຍອອກໄປປະຊຸມລັດຖະສະພາ, ພ້ອມກັນນັ້ນກໍ່ທວງໃຫ້ລັດ
ຖະບານຈ່າຍເງິນເດືອນໃຫ້ພວກເຮົາ ເພາະວ່າອາຍຸການຜູ້ແທນລາດສະດອນຂອງພວກເຮົາ
ຍັງບໍ່ທັນໝົດເທື່ອ. ພູຍ ຊະນະນິກອນໄດ້ຮັບຈົດໝາຍຂອງພວກເຮົາກໍ່ຮ້າຍຂຶ້ນຢ່າງໃຫຍ່, ວ່າ
ປ່ອຍໃຫ້ພວກເຮົາປະຊຸມ ແລະ ຂຽນຈົດໝາຍນຳກັນແນວນີ້ເປັນອັນຕະລາຍ ແລະ ປ່ອຍໃຫ້
ພວກເຮົາກຳເອົາຕຳຫຼວດມາໃຊ້ວຽກຂອງພວກເຮົາ ເປັນການເສຍຫາຍໃຫ້ແກ່ພວກມັນ.
ຄວາມຈິງແທ້ພວກເຮົາກຳເອົາຕຳຫຼວດໄດ້ພຽງ 10 ກວ່າຄົນ, ບໍ່ກຳໄດ້ໝົດທັງກອງຮ້ອຍ

ດອກ. ແຕ່ພວກມັນກໍຣິບຍົກຍ້າຍກອງຮ້ອຍຕໍາຫຼວດນັ້ນໜີ ແລ້ວກໍເອົາສາລະວັດທະຫານ ກອງຮ້ອຍໜຶ່ງມາແທນ.

ເມື່ອກອງຮ້ອຍສາລະວັດທະຫານມາຮອດແລ້ວ ກໍ່ມີການປ່ຽນແປງຫຼາຍຢ່າງຢູ່ໃນບໍລິເວນຄຸກຂອງພວກເຮົາ. ໃນກອງຮ້ອຍສາລະວັດທະຫານນີ້ ຜູ້ຍົດຕໍ່າກວ່າໝູ່ແມ່ນນາຍສິບເອກ , ນອກນັ້ນກໍ່ແມ່ນນາຍຈ່າຕີ, ຈ່າໂທ, ຈ່າເອກ, ຮ້ອຍຕີ, ຮ້ອຍໂທ ແລະ ຮ້ອຍເອກ ທີ່ລ້ວນແຕ່ໄດ້ໄປຮຽນວິຊາປາບປະຊາຊົນເຊິ່ງເພິ່ນເອີ້ນວ່າປາບກອມມູນິດ ຈາກປະເທດໄທ, ມາເລເຊຍ, ສິງກະໂປ, ຟີລິບປິນ ແລະ ສະຫະລັດອາເມລິກາມາໃໝ່ໆ. ທາງເບື້ອງໃນຂອງຄຸກພວກເຂົາເອົາເຫຼັກລວດໜາມໜາກຈັບມາຄາດຮົ້ວກວ້າງແມັດໜຶ່ງ ຍາວໄປຕາມທາງຍາວຂອງເດີ່ນໜ້າຄຸກ, ໃຫ້ພວກສາລະວັດທະຫານຫຼຽວທາງນອກຮົ້ວໜາມໜາກຈັບ ເພື່ອບໍ່ໃຫ້ເຂົ້າໃກ້ນັກໂທດ, ມີຄໍາສັ່ງເປັນລະບຽບ ຫ້າມບໍ່ໃຫ້ພວກສາລະວັດທະຫານປາກລົມນໍານັກໂທດ. ຕາມແຄມຮົ້ວເບື້ອງນອກ ພວກເຂົາເອົາແຜ່ນສັງກະສີມາຕອກຫຼັກແນບທາງຢືນ ກັ້ງຕົ້ນໄປສຸດຮົ້ວເບື້ອງຕາເວັນອອກ ແລະ ຕາເວັນອອກສ່ຽງເໜືອ ເພື່ອບໍ່ໃຫ້ພວກຢູ່ໃນເບິ່ງເຫັນທາງນອກແລະບໍ່ໃຫ້ຜູ້ຢູ່ທາງນອກເບິ່ງເຫັນທາງໃນ. ທັງ 4 ແຈຮົ້ວພວກເຂົາຝັງຫຼັກໄມ້ສູງກວ່າແຜ່ນສັງກະສີ ແລ້ວເອົາໂຄມໄຟຟ້າໃຫຍ່ມາມັດໃສ່ປາຍຫຼັກ ຕ່າວປາກສ່ອງເຂົ້າໃສ່ທາງໃນຄຸກ ເພື່ອໃຫ້ທະຫານຍາມ ແລະ ທີ່ປຶກສາອາເມລິກາຢູ່ຊັ້ນເທິງຂອງເຮືອນເຂົາ ເບິ່ງເຂົ້າມາຄຸກໄດ້ທັງກາງວັນ ແລະກາງຄືນ. ນອກຈາກນັ້ນ ພວກເຂົາຍັງເອົາລົດຫຸ້ມເກາະ 2 ຄັນ ມາລຽນໄວ້ຂ້າງປະຕູເຂົ້າອອກເບື້ອງຂວາ ແລະອີກ 1 ຄັນມາຈອດແປະໄວ້ນອກຮົ້ວສັງກະສີ ຂ້າງແຈເບື້ອງຕາເວັນອອກ ແນປາກປືນມາໃສ່ເສັ້ນທາງເຂົ້າອອກຄຸກ. ນາຍພັນເອກລໍາເງິນຜູ້ບັນຊາການປ້ອງກັນຄຸກນີ້ ໄດ້ໄປລາຍງານຕໍ່ພູຍ ຊະນະນິກອນ ວ່າຮັບປະກັນຮ້ອຍສ່ວນຮ້ອຍບໍ່ໃຫ້ນັກໂທດໃນຄຸກຫຼັງນີ້ໂຕນໜີໄດ້. ເຂົາຢັ້ງຢືນວ່າ " ຖ້າບໍ່ແມ່ນເທວະດາຈາກຟ້າລົງມາຊຸມເອົາໄປແລ້ວ ພວກຄົນທີ່ຂັງໄວ້ໃນຄຸກຫຼັງນີ້ຈະໜີອອກໄປບໍ່ໄດ້ຢ່າງເດັດຂາດ. " ພູຍ ຊະນະນິກອນ ເວົ້າຕອບວ່າ : " ດີຫຼາຍ, ແນວນີ້ຈຶ່ງແມ່ນນາຍທະຫານ, ຂອຍຈະສະເໜີໃຫ້ເຈົ້າ ໄດ້ຂຶ້ນເປັນນາຍພົນຕີໃນບໍ່ຊ້ານີ້."

ການກະກຽມອັນປ່ວງບ້າຂອງ ພູຍ ຊະນະນິກອນ ໄດ້ຜົນແຕ່ພຽງຊົ່ວຄາວເທົ່ານັ້ນ. ພໍແຕ່ພວກເຮົາຖືກຈັບໄປຂັງຄຸກ ແລະ ຕໍາຫຼວດໄດ້ເຂົ້າຄວບຄຸມເຮືອນພວກເຮົາ, ເມຍພວກເຮົາ ແລະ ເອື້ອຍນ້ອງພະນັກງານເກົ່າທີ່ຢູ່ວຽງຈັນ ກໍ່ໄດ້ຈັດຕັ້ງເປັນຄະນະໄປສູ້ຖຽງ ກັບພວກກໍາອໍານາດປະຕິການລູກມືຈັກກະພັດອາເມລິກາ, ໄດ້ຜົນແນວໃດກໍ່ຂຽນຈົດໝາຍຍັດໃສ່ ອາຫານການກິນ ທີ່ຂະເຈົ້າສົ່ງມາໃຫ້ພວກເຮົາແຕ່ລະວັນເພື່ອລາຍງານໃຫ້ພວກເຮົາຮູ້. ພວກເຮົາກໍ່ໃຊ້ວິທີດຽວກັນເພື່ອສົ່ງຈົດໝາຍໄປຊີ້ນໍາການເຄື່ອນໄຫວຂອງຂະເຈົ້າໃຫ້ໄດ້ຜົນດີຂຶ້ນກວ່າເກົ່າ.

ທະນາຍຄວາມສອງຄົນໄດ້ຖືກແຕ່ງຕັ້ງຂຶ້ນເພື່ອປ້ອງກັນເອົາພວກເຮົາ ຄື ທ່ານກິນິມ ພິນເສນາ ແລະ ຕູເລຍ ລິຟຸງ. ທ່ານກິນິມ ພິນເສນາ ໄດ້ມາຢ້ຽມຢາມພວກເຮົາ ແລະ ມາຟັງຄຳໃຫ້ການຂອງພວກເຮົາຫຼາຍເທື່ອ ໃນເມື່ອຂ້າລາຊະການສານມາສືບຖາມພວກເຮົາ. ສ່ວນຕູເລຍ ລິຟຸງ ນັ້ນ ເປັນພັກພວກຂອງພວກປະຕິການ ຈຶ່ງບໍ່ກ້າປ້ອງກັນເອົາພວກເຮົາ ແລະບໍ່ກ້າມາຢາມພວກເຮົາຈັກເທື່ອ. ພູຍ ຊະນະນິກອນ ກ່າວຫາວ່າພວກເຮົາອອກຄຳສັ່ງໃຫ້ກອງທະຫານພວກເຮົາສອງກອງພັນ ບໍ່ຟັງບັງຄັບບັນຊາຂອງນາຍ, ວ່າພວກເຮົາຈະກໍ່ການ ວຸ້ນວາຍຂຶ້ນພາຍໃນປະເທດ, ວ່າພວກເຮົາຕິດຕໍ່ກັບຫວຽດນາມ ເພື່ອສືບຕໍ່ພິມໜັງສືພິມ " ລາວຮັກຊາດ " ເຊິ່ງພວກມັນສັ່ງອັດສຳນັກງານແລ້ວ, ແລະ ອື່ນໆອີກຫຼາຍຢ່າງ ;ແຕ່ພວກເຮົາໄດ້ປະຕິເສດຕົກໄປພົດ ເພາະມັນບໍ່ມີມູນຄຳຈິງ.

ປະຊາຊົນທົ່ວຕົວເມືອງວຽງຈັນ ແລະ ທົ່ວປະເທດລາວທີ່ຮູ້ຂ່າວການຈັບກຸມພວກເຮົາ ກໍ່ພາກັນຂຶ້ນສຽງຈົ່ມວ່າຄັດຄ້ານຢ່າງແຂງແຮງ ແລະ ກວ້າງຂວາງຂຶ້ນທຸກໄຊ, ເພາະວ່າໃນໄລຍະດຽວກັນນັ້ນ ສະມາຊິກແນວລາວຮັກຊາດຢູ່ແຂວງຕ່າງໆ ກໍ່ຖືກຈັບກຸມ ແລະ ຂ້າຕາຍຢ່າງໂຫດຮ້າຍປ່າເຖື່ອນດ້ວຍຄວາມກ່າວຫາອັນດຽວກັນນັ້ນ, ປະຊາຊົນສ່ວນຫຼວງຫຼາຍໄດ້ພາກັນຮ້ອງໃຫ້ອີ່ດູຕົນພວກຜູ້ນຳ ແລະ ສະມາຊິກແນວລາວຮັກຊາດທີ່ສັດຊື່ຕໍ່ສັນຍາວຽງຈັນ, ເຄົາລົບລາຍເຊັນຂອງຕົນ, ຍອມມອບສອງແຂວງເຕົ້າໂຮມ ແລະ ອາວຸດຍຸດທະພັນໃຫ້ຝ່າຍວຽງຈັນແລ້ວ ເຂົ້າມາຮ່ວມກັນເຮັດການລວມລາວດ້ວຍສັນຕິວິທີ ເພື່ອສັນຕິພາບຂອງບ້ານເມືອງ ແລະ ຄວາມສຸກສະບາຍຂອງປະຊາຊົນ ; ພວກຂະເຈົ້າພາກັນປ່ອຍດ່າພູຍ ຊະນະນິກອນ ແລະ ພັກພວກຂອງມັນທີ່ປະຕິບັດຕາມຄຳສັ່ງຂອງຈັກກະພັດອາເມລິກາ ລະເມີດທຳລາຍ ສັນຍາວຽງຈັນ, ທຳລະຍົດຕໍ່ຝ່າຍແນວລາວຮັກຊາດ, ຢຽບຢ່ຳຄວາມຫວັງດີຂອງປະຊາຊົນ, ມ້າງນະໂຍບາຍສັນຕິພາບ-ເປັນກາງ ແລະ ກຽມຈະເຮັດເສິກຂຶ້ນເຂັ່ນຂ້າປະຊາຊົນລາວ. ໜັງສືປະທ້ວງ, ຄັດຄ້ານກ່າວປະນາມໄດ້ຫຼັ່ງໄຫຼເຂົ້າໄປໂຮງການພູຍ ຊະນະນິກອນ ແລະພັກພວກຂອງມັນບໍ່ເວັ້ນແຕ່ລະວັນ. ບັນຍາກາດຄຽດແຄນ ໄດ້ຟົດເດືອດເນື່ອງນັນໄປທົ່ວ ພືນແຜ່ນດິນລາວ. ທຸກທ້ອງຖິ່ນໄດ້ຕ້ອນຮັບກອງພັນທີສອງ ແລະ ທີ່ໜ້າງດ້ວຍຄວາມເຫັນໃຈ ແລະຮັກແພງ. ທຸກບ່ອນທີ່ຜູ້ນຳແນວລາວຮັກຊາດຜູ້ຖືກຈັບກຸມນັ້ນໄປຮອດ ກໍ່ລ້ວນແຕ່ມີປະຊາຊົນເຫັນອົກເຫັນໃຈ ແລະ ພາກັນມາຕ້ອນລ້ອມຮ່ວມມືນຳ. ທະຫານລາດ, ກອງໜອນ ແລະ ທະຫານທ້ອງຖິ່ນໄດ້ຖືກຈັດຕັ້ງຂຶ້ນ ນັບມື້ນັບຫຼາຍ. ຜູ້ໃດກໍ່ກຽມພ້ອມເພື່ອຕໍ່ສູ້ຕ້ານສົງຄາມຮຸກຮານ ທີ່ຈັກກະພັດອາເມລິກາ ແລະ ພູຍ ຊະນະນິກອນຈະກໍ່ຂຶ້ນ ແລະ ພ້ອມກັນນັ້ນ ກໍ່ເພື່ອໄປປົດປ່ອຍເອົາພວກຜູ້ນຳແນວລາວຮັກຊາດ ທີ່ຖືກຈັບກຸມຄຸມຂັງໃຫ້ອອກມາໄດ້ຢ່າງປອດໄພ.

ຂ່າວການຈັບພວກເຮົາໄປຂັງຄຸກ ໄດ້ດັງເນື່ອງນັນໄປທົ່ວໂລກ. ບັນດາປະເທດສັງຄົມນິຍົມ ແລະ ປະເທດທີ່ຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ

ຄວາມເປັນທຳໄດ້ຂຶ້ນສຽງຄັດຄ້ານກ່າວປະນາມ ຜູຍ ຊະນະນິກອນ ນັບມື້ນັບເຂັ້ມແຂງ ແລະ ກວ້າງຂວາງ. ກອງປະຊຸມໃຫຍ່ຂອງອົງການສະຫະປະຊາຊາດ ແລະອົງການອື່ນໆກໍ່ຖືກຖຽງກັນແຮງກ່ຽວກັບເລື່ອງນີ້. ບັນດາໜັງສືພິມທີ່ກ້າວໜ້າໃນໂລກ ພາກັນຄັດຄ້ານຈັກກະພັດອາເມລິກາ ແລະ ຜູຍ ຊະນະນິກອນ ທີ່ເປັນລູກມືຂອງເຂົານັ້ນແຮງຂຶ້ນຊຸກໄຊ້, ເປັນຕົ້ນ ແມ່ນໃນເມື່ອຂະເຈົ້າຮູ້ຂ່າວວ່າ ພວກມັນຈະເອົາພວກເຮົາອອກຕັດສິນປະຫານຊີວິດ. ກະຕ່າຍ ໂດນສະໂສລິດ, ເຈົ້າຊີວິດສີສະຫວ່າງວົງ ແລະ ເຈົ້າເພັດຊະລາດ ໄດ້ຕາຍໄປໃນປີ 1959, ແຕ່ຂ່າວການຕາຍນີ້ກໍ່ບໍ່ດັງເນື່ອງມັນທີ່ຂ່າວການຈັບກຸມພວກເຮົາ. ອົງການໜັງສືພິມປະຊາທິປະໄຕຂອງໂລກໄດ້ຕຳໜິຕິຈານຢ່າງຟົດຟື້ນ ແລະ ໄດ້ແຕ່ງຄະນະຜູ້ແທນຂອງຕົນ ເຂົ້າມາລາວເພື່ອຊັກຖາມຫາຄວາມຈິງ ແລະ ສະເໜີໃຫ້ປ່ອຍພວກເຮົາ. ທ່ານ ຣາມາກໂຊນ ເລຂາທິການໃຫຍ່ສະຫະປະຊາຊາດໄດ້ບິນມາວຽງຈັນ ເພື່ອກ່າວເຕືອນຜູຍ ຊະນະນິກອນວ່າຖ້າພວກມັນຫາກດື້ດ້ານນຳເອົາບັນດາຜູ້ນຳແນວລາວຮັກຊາດ ອອກຕັດສິນລົງໂທດ ແລະ ຖ້າວ່າພວກມັນຫາກບໍ່ປະຕິບັດແນວທາງສັນຕິພາບເປັນກາງນັ້ນ ບ້ານເມືອງລາວຈະເກີດການວຸ່ນ - ວາຍ ເຊິ່ງພວກມັນເອງຕ້ອງເປັນຜູ້ຈະໄດ້ພົບຮ້າຍ. ຄວາມກ່າວເຕືອນອັນນັ້ນ ເປັນອັນໜັກແໜ້ນຈົນວ່າຜູຍ ຊະນະນິກອນເອງຕ້ອງອອກຄຳສັ່ງງົດການຕັດສິນພວກເຮົາໄປຢ່າງບໍ່ມີກຳນົດ ແລະ ຕ້ອງປະກາດວ່າຈະເດີນຕາມເສັ້ນທາງສັນຕິພາບ-ເປັນກາງ ຢູ່ໃນຄຳປາໄສເວລາກິນລ້ຽງສົ່ງທ່ານເລຂາທິການໃຫຍ່ ຣາມາກໂຊນ ນັ້ນໂລດ.

IX . ການໂຕນອອກຈາກຄຸກ

ສະພາບການທາງນອກຈະເປັນໄປແນວໃດກໍ່ຕາມ, ພວກເຮົາທີ່ຢູ່ໃນຄຸກກໍ່ຕັ້ງໜ້າປະຕິບັດໜ້າທີ່ 3 ປະການຂອງພວກເຮົາຢ່າງໄດ້ຜົນດີ. ສວນພັກຂອງພວກເຮົາຂຽວຂຶ້ນຢ່າງງາມຕາ ເຮັດໃຫ້ພວກເຮົາມີພັກກິນເພີ່ມໃສ່ຄາບເຂົ້າງາຍ ແລະ ແລງ. ດອກສາມປີສີຂາວ ແລະ ແດງບານເປັນຂອບເຂດໜານພັກອັນຍາວລຽບຕາມແຄມຮົ້ວ. ດອກຕາເວັນບານເປັນສີເຫຼືອງ-ເຣືອງເຣືອງເປັນແຖວສູງທັງມີດອກໃຫຍ່ສັບຊ້ອນດ້ວຍດອກນ້ອຍ ປິ່ນໄປຕາມແສງຕາເວັນ ; ຕົ້ນໃດມີຫຼາຍດອກງາມນັ້ນ ເຮົາໄດ້ຕັດສົ່ງນຳພວກຕຳຫຼວດ ແລະ ສາລະວັດທະຫານ ໄປໃຫ້ສົມເດັດສັງຄະນາຍົກ ເພື່ອໃຫ້ເພິ່ນເອົາບູຊາພະເຈົ້າ, ເຮັດໃຫ້ເພິ່ນເຫັນຈິດໃຈ ເປັນທຳຂອງເຮົາ ແລະ ຍັງເພີ່ມຄວາມຮັກແພງ, ສົມເພດເວທະນານຳເຮົາ ທີ່ພວມຖືກອະທຳຄອບງຳນຂົ້ມອີກ. ກົກໝາກຫຸ່ງ 3 ກົກຂອງເຮົາທີ່ປູງລຽນແຖວໄປນຳຂອງຜູ້ອື່ນ ສືບຕໍ່ງົດງາມທັງສູງຂຶ້ນທຸກມື້, ເປັນດອກບານອອນກົກຢ່າງຫຼວງຫຼາຍ ແລະເປັນໝາກດົກໝາໃຫຍ່ຂຶ້ນຢ່າງເຫັນກັບຕາ. ເຮົາທິດນ້ຳໜານພັກທຸກແລງ ໂດຍຄ່ອຍໆລົມກັບຕົ້ນໝາກຫຸ່ງວ່າ : " ພວກເຈົ້າສູງຂຶ້ນຕາມກົດເກນຢ່າງເປັນອິດສະຫຼະ ແຕ່ທ່າກປີ້ງຂຶ້ນຢູ່ໃນຄຸກເປັນໜ້າອືດູຕົນແທ້ໆ ;ຂໍໃຫ້ຂ້ອຍ

ໄດ້ກິນໝາກຂອງພວກເຈົ້າຢ່າງນ້ອຍກໍ່ໜ່ວຍໜຶ່ງ ກ່ອນຈະໄດ້ພັດພາກຈາກພວກເຈົ້າໄປ ແລະ ພວກປະຕິການຈະມາມ້າງເພທຳລາຍ ". ຕົ້ນຜັກ, ຕົ້ນດອກໄມ້ ແລະ ຕົ້ນໝາກຫຸ່ງທີ່ໄດ້ກິນນ້ຳອາບອັນມີເຫື່ອໄຄຂອງຄົນ ແຂ່ງກັນປົ່ງຈ້ອນຢ່າງງົດງາມ, ແຕ່ເມື່ອເບິ່ງຖືຖອນ ລົງແລວອັນໃດກໍ່ປະກົດວ່າມີຄວາມຫງ່ວມເຫງົາ ຄືຈັ່ງວ່າເຂົາຮູ້ວ່າວັນໜຶ່ງຂ້າງໜ້ານີ້ ພວກເຮົາຈະຈາກໄປ, ຈະບໍ່ມີຜູ້ບົວລະບັດ, ຈະມີແຕ່ຜູ້ມາປິດກິນ ແລະທຳລາຍ.

ການຕັດກາຍດ້ວຍການແລ່ນອ້ອມຄຸກນີ້ທຳອິດ ຮູ້ສຶກອິດເມື່ອຍ, ເພີ່ມຂຶ້ນນີ້ຮອບ ກໍ່ຍິ່ງເມື່ອຍ. ແຕ່ເມື່ອຄິດວ່າມັນບໍ່ແມ່ນແລ່ນເພື່ອຕັດກາຍລ້າງ, ມັນແມ່ນແລ່ນເພື່ອກຽມຕົວໂຕນໜີຈາກຄຸກແລ້ວຄວາມອິດເມື່ອຍກໍ່ລຶດຜ່ອນລົງ, ແມ່ນວ່າຫຼາຍມື້ຜ່ານໄປ ເຮົາໄດ້ແລ່ນເພີ່ມຂຶ້ນຫຼາຍຮອບປານໃດກໍ່ຕາມ, ປະກົດວ່າທຸກຄົນກໍ່ເປັນຄືເຮົາ, ທັງແລ່ນທັງຄິດ ດ້ວຍຄວາມເຊື່ອໝັ້ນໃນອະນາຄົດ ; ເມື່ອແລ່ນໄປພົບກັນກໍ່ຫົວແຍ້ມຊື່ນບານດ້ວຍຄວາມຮັກແພງອັນແຮງກ້າ . ສຸຂະພາບຂອງພວກເຮົາເຂັ້ມແຂງຂຶ້ນທຸກມື້ພ້ອມກຳລັງໃຈທີ່ຕັດສິນວ່າ ພວກເຮົາກຽມພ້ອມແລ້ວທີ່ຈະແລ່ນອອກຈາກຄອກໝາແຫ່ງນີ້ ເພື່ອໄປຫາໃຈລຶ່ງຢູ່ນຳພໍ່ແມ່ປະຊາຊົນທີ່ພວມເອົາໃຈໃສ່ຕິດຕາມຂ່າວຄາວຂອງພວກເຮົາ. ໃນເວລາທີ່ພວກເຮົາກຽມຕົວຢູ່ໃນຄຸກຄັບນີ້ ມີຫຼາຍເຫດການເກີດຂຶ້ນຢູ່ທາງນອກ ເຊັ່ນເລື່ອງ ພູມີ ໜໍ່ສະຫວັນ ເຮັດລັດຖະປະຫານ ໂຄ່ນລົ້ມພູຍຊະນະນີກອນລົງ, ເອົາ ກຸ ອະໄພ ຂຶ້ນເປັນນາຍົກ, ຫຍຸຍ ອະໄພ ເປັນຮອງນາຍົກ, ພູມີໜໍ່ສະຫວັນ ເປັນລັດຖະມົນຕີກະຊວງປ້ອງກັນຊາດ ແຕ່ຫາກຄຸມພິດທັງລັດຖະບານ, ພາກັນເຮັດການເລືອກຕັ້ງຜູ້ແທນລາດສະດອນ, ປຸດຈ່າຍເງິນເດືອນຜູ້ແທນລາດສະດອນ ທີ່ພວກເຮົາເຄີຍໄດ້ຮັບຫຼາຍເດືອນຢູ່ໃນຄຸກ, ກີດຂວາງບໍ່ໃຫ້ພວກເຮົາອອກໄປສະໝັກຮັບເລືອກຕັ້ງ ແລະໃຊ້ລູກມືຂອງພວກເຂົາງັດງ້າງບໍ່ໃຫ້ອາຍນ້ອງພວກເຮົາຢູ່ທາງນອກທີ່ໄປສະໝັກນັ້ນ ໄດ້ຖືກເລືອກຕັ້ງຈັກຄົນ ; ເລື່ອງກະຕ່າຍ ໂດນສະໂສລິດຕາຍ, ເອົາສົບໄປວັງນອາທິດໜຶ່ງ ຢູ່ຫາດຫຼວງ ເພື່ອເກັບເອົາເງິນນຳປະຊາຊົນໄປຊື້ເຫຼົ້າປັ້ນກັນກິນ ; ເລື່ອງເຈົ້າຊີວິດ ສີສະຫວ່າງວົງ ແລະ ເຈົ້າເພັດຊະລາດຕາຍຢູ່ຫຼວງພະບາງ ; ເລື່ອງພວກປະຕິການ ສົ່ງເຈົ້າສຸວັນນະພູມາໜີຈາກວຽງຈັນໄປເປັນທູດລາວຢູ່ປະເທດຝະລັ່ງ, ເລື່ອງພວກປະຕິການແຂ່ງກັນຈົກເງິນຈາກຄັງຫຼວງມາປຸກເຮືອນຢູ່ ງາມປານຫໍປາສາດ ແລະ ຊື້ລົດໂອໂຕທັນສະໄໝ ມາແຂ່ງກັນຂີ່ແລະອື່ນໆ ; ທຸກສິ່ງທຸກຢ່າງເຫຼົ່ານັ້ນ ມາຮອດຫູພວກເຮົາໂດຍລາຍງານຂອງພວກຕຳຫຼວດ-ແລະ ສາລະວັດທະຫານຜູ້ກ້າວໜ້າ ແລະ ໂດຍລາຍງານທີ່ຄອບຄົວພວກເຮົາສົ່ງມາ ພ້ອມອາຫານການກິນ ທີ່ພວກເຮົາໄດ້ຮັບແຕ່ລະມື້ ; ແຕ່ນັ້ນບໍ່ເປັນສິ່ງສົນໃຈໃຫ້ແກ່ພວກເຮົາ ເພາະວ່າຈິດໃຈຂອງພວກເຮົາມັນຈົດຈໍ່ຢູ່ນຳເລື່ອງຈະສ້າງແກ່ນສານຢູ່ໃນກອງຮ້ອຍຕຳຫຼວດ ແລະສາລະວັດທະຫານແນວໃດ ແລະ ມື້ໃດພວກເຮົາຈຶ່ງຈະພ້ອມກັນໜີອອກຈາກຄອກໝາ ອັນອ່ວຍເໝັນນີ້ໄປໄດ້.

ແມ່ນວ່າພວກເຮົາຍັງຂາດບົດຮຽນກໍ່ຕາມ, ການໂຄສະນາອົບຮົມເອົາພວກຕຳຫຼວດແລະສາລະວັດທະຫານທີ່ມາຄຸມຄຸກໃຫ້ມາເປັນແກ່ນສານຂອງພວກເຮົານັ້ນ ກໍ່ໄດ້ຮັບຜົນດີສົມຄວນ. ລະຫວ່າງ 3 ເດືອນທຳອິດພວກເຮົາສາມາດສ້າງຕຳຫຼວດໃຫ້ເປັນແກ່ນສານທີ່ໄວ້ວາງໃຈໄດ້ 10 ກວ່າຄົນ, ແຕ່ວ່າຂໍ້ບົກພ່ອງຂອງພວກເຮົາທີ່ຕິດຕໍ່ພົວພັນກັນຢ່າງເປີດເຜີຍໂພດ ເຮັດໃຫ້ຜຸຍ ຊະນະນິກອນ ຍົກຍ້າຍພວກຕຳຫຼວດພີ່ນີ້ດທັງກອງຮ້ອຍ. ພວກເຮົາໄດ້ຍົກເອົາ ບົດຮຽນອັນນີ້ມາຖົກຖຽງກັນຢ່າງເລິກເຊິ່ງໃນກອງປະຊຸມໜ່ວຍພັກຂອງພວກເຮົາ ແລະ ວາງວິທີແກ້ໄຂ. ພວກສາລະວັດທະຫານກອງຮ້ອຍໜຶ່ງເຂົ້າມາແທນ ເຮັດໃຫ້ວຽກງານຂອງພວກເຮົາພົບຄວາມຫຍຸ້ງຍາກອັນໃໝ່. ກ່ອນອື່ນໝົດແມ່ນພວກເຮົາບໍ່ມີຄວາມລຶ້ງເຄີຍກັບສາລະວັດທະຫານ-ພວກນີ້ຈັກຄົນ. ຖັດມາແມ່ນພວກປະຕິການມີນວາງລະບຽບເຄັ່ງຄັດ, ບໍ່ໃຫ້ຜູ້ໃດ ມາໃກ້ຊິດ ແລະ ເວົ້າລົມກັບພວກເຮົາ ; ແລະ ພວກມັນຍັງໄດ້ເຮັດຮົ້ວຕະນ່າງໜາມພາກຈັບ ອ້ອມເດີ່ນໜ້າຄຸກໄວ້, ໃຫ້ພວກສາລະວັດທະຫານທີ່ພວກມັນເອົາໄປອົບຮົມກໍ່ສ້າງ ໃຫ້ສັດຊື່ບໍລິສຸດຕໍ່ພວກມັນມາແລ້ວນັ້ນ ເດີນໄປມາຕາມເສັ້ນນອກຮົ້ວໜາມພາກຈັບ, ບໍ່ໃຫ້ເຂົາເຂົ້າມາໃກ້ພວກເຮົາ. ພວກນາຍບັນຊາກໍ່ລ້ວນແຕ່ແມ່ນພວກລູກມືຊັ້ນຈຳຂອງຈັກກະພັດອາເມລິກາ ແລະພັນໝ້ອນເຂົ້າມາໃນຄຸກບ່ອນພວກເຮົາຢູ່ນເລື້ອຍໆ ເພື່ອສືບເບິ່ງການປະພຶດຂອງພວກເຮົາ ແລະ ກວດກາເບິ່ງລູກນ້ອງຂອງເຂົາວ່າຈະປະຕິບັດຄຳສັ່ງຂອງເຂົາດີພຽງໃດ.

ແຕ່ວ່າພວກເຮົາກໍ່ມີຂໍ້ສະດວກຫຼາຍອັນ ທີ່ຊ່ວຍໃຫ້ພວກເຮົາເຮັດໜ້າທີ່ອັນໜັກໜ່ວງໃນການຂົນຂວາຍປະຊາຊົນ ເຊິ່ງພວກເຮົາຖືວ່າຫຍຸ້ງຍາກກວ່າເພື່ອນໝົດນີ້ ໄດ້ຮັບຜົນດີອັນຈົກໃຈ . ພວກເຮົາເຊື່ອໝັ້ນໃນແນວທາງອັນຖືກຕ້ອງຂອງພັກປະຊາຊົນລາວ ທີ່ຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ ແລະ ຄວາມເປັນທຳທີ່ຖືກກັບຄວາມມຸ່ງມາດປາຖະໜາຂອງປວງປະຊາຊົນລາວ. ພວກເຮົາເຊື່ອໝັ້ນວ່າ ບັນດາສະຫາຍໃນສູນກາງພັກ ແລະ ໃນກອງພັນທີສອງ ແລະທີ່ພວງທີ່ໂຕນໜີອອກໄປພົ້ນໄພແລ້ວ ແນວໃດກໍ່ຈະບໍ່ລືມພວກເຮົາ ແລະຈະເຮັດຈົນສຸດຄວາມສາມາດຂອງຂະເຈົ້າ ເພື່ອອຳນວຍຄວາມສະດວກໃຫ້ພວກເຮົາໃນການໂຕນອອກຈາກຄຸກເທື່ອນີ້. ພວກເຮົາເຊື່ອໝັ້ນວ່າປະຊາຊົນໃນ 12 ແຂວງຈະຮ່ວມມືກັບພວກຄົນແນວລາວຮັກຊາດ ທີ່ກັບຄືນເມືອບ້ານເພື່ອເປັນກຳລັງແຮງອັນເຂັ້ມແຂງໃຫ້ແກ່ສູນກາງພັກ, ໃຫ້ແກ່ພະນັກງານ ແລະພົນທະຫານໃນສອງກອງພັນທີ່ອາດຫານນັ້ນ ເພື່ອຊຸກດັນການປະຕິວັດໃຫ້ກ້າວໜ້າໄປຢ່າງບໍ່ຢຸດຢັ້ງ ແມ່ນວ່າພວກເຮົາຈະໂຕນອອກພົ້ນຄຸກ ຫຼືບໍ່ພົ້ນກໍ່ຕາມ. ພວກເຮົາເຊື່ອໝັ້ນ ໃນຄວາມສາມາດຂອງພວກເຮົາໃນການກຳນະໂຍບາຍຂອງພັກ, ໃນການກຳຈິດຕະສາດຂອງພວກສາລະວັດທະຫານທີ່ມາຄວບຄຸມພວກເຮົາໃນຄຸກນີ້ ແລະ ໃນການຈະພັນປ່ຽນແນວຄິດປະຕິການ ທີ່ພວກເຂົາໄດ້ຮຽນມານັ້ນໃຫ້ກາຍມາເຫັນດີເຫັນພ້ອມ ນຳນະໂຍບາຍອັນເປັນທຳຂອງພັກເຮົາ. ຄວາມເຊື່ອໝັ້ນອັນແຮງກ້າດັ່ງກ່າວມານັ້ນເປັນກຳລັງໃຈໃຫ້ພວກເຮົາ ອົດທົນຜ່ານຜ່າ ຄວາມ

ຫຍຸ້ງຍາກທຸກປະການ ເພື່ອເຮັດລອນໜ້າທີ່ອັນໜັກໜ່ວງຂອງຕົນ.

ນັ້ນມາຮອດທຳອິດພວກສາລະວັດທະຫານທຸກຄົນ ຕັ້ງໜ້າປະຕິບັດຕາມຄຳສັ່ງຂອງນາຍເຂົາແທ້ ; ພວກເຂົາເຂົ້າມາຂ່ວງຄຸກກໍ່ຍ່າງເບິດໄປຕາມເສັ້ນທາງນອກຮົ້ວໜາມພາກຈົບ ບໍ່ຫຼຽວເບິ່ງ ແລະ ບໍ່ປາກນຳພວກເຮົາ. ແຕ່ພວກເຂົາກໍ່ຈຳເປັນຕ້ອງມາໃກ້ພວກເຮົາຢ່າງນ້ອຍກໍ່ມື້ລະ 3 ເທື່ອ, ຄືມາໄຂປະຕູຄຸກໃຫ້ພວກເຮົາອອກໄປຖ່າຍໜັກຖ່າຍເບົາ ແລະ ລ້າງໜ້າ ຫຼື ອາບນ້ຳ, ຍົກພາເຂົ້າເຊົ້າ, ງາຍ ແລະ ແລງມາໃຫ້ພວກເຮົາກິນ, ມາຍົກເອົາພາເຂົ້າຄືນໄປ ແລະ ມາອັດປະຕູຄຸກຂັງພວກເຮົາ. ນັ້ນແມ່ນໂອກາດອຳນວຍໃຫ້ພວກເຮົາຊອກວິທີປາກລົມນຳພວກເຂົາ. ນັ້ນທຳອິດພວກເຮົາສະແດງຄວາມຖາມຂ່າວຄວາມສະບາຍ ແລະ ຄວາມຂອບໃຈຕໍ່ພວກເຂົາກໍ່ບໍ່ໄດ້ຮັບຄຳຕອບແຕ່ຢ່າງໃດ, ພວກເຂົາເຮັດວຽກຕາມໜ້າທີ່ ແລ້ວຍ່າງເບິດທີ່ໄປ ຄືດັ່ງບໍ່ໄດ້ຍິນຄວາມເວົ້າຂອງພວກເຮົາ. ເມື່ອພວກເຮົາຖາມຫຼາຍ ພວກເຂົາກໍ່ຕອບເປັນຄວາມດຽວກັນວ່າ : "ເພິ່ນບໍ່ໃຫ້ປາກລົມກັນ". ພວກເຮົາອົດທົນຖາມຕໍ່ໄປຊັກໄຊ, ບາງຄົນກໍ່ພຽງແຕ່ບອກໃຫ້ພວກເຮົາຮູ້ວ່າ ເຂົາຢູ່ແຂວງສະຫວັນນະເຂດ ຫຼື ແຂວງຈຳປາສັກ. ພວກເຮົາຖາມວ່າ : "ພໍ່ແມ່ຂອງຫຼານເພິ່ນກໍ່ຍັງຢູ່ບໍ່, ເພິ່ນກໍ່ສະບາຍດີບໍ່, ກ່ອນເພິ່ນເຮັດວຽກການຫຍັງ ? "ບາງຄົນກໍ່ວ່າ : "ເພິ່ນຕາຍໝົດແລ້ວ", ບາງຄົນກໍ່ວ່າ : "ເພິ່ນເຮັດນາ", ບາງຄົນກໍ່ວ່າ : "ເພິ່ນເຮັດການປົກຄອງ ຂະກິນເບ້ຍບຳນານແລ້ວ". ຫຼາຍມື້ຕໍ່ຫຼາຍວັນມາພວກເຮົາກໍ່ພໍຊອກຮູ້ໄດ້ຊີວະປະຫວັດຂອງແຕ່ລະຄົນຈາກບ່ອນບໍ່ແຈ້ງ ກໍ່ຄ່ອຍໆແຈ້ງອອກ.

ສະຫາຍເລຂາໜ່ວຍພັກເປັນຜູ້ລົງເຄີຍກັບຫຼາຍຄົນ ແລະ ສາມາດກໍ່ສ້າງແກ່ນສານໄດ້ຫຼາຍຄົນກວ່າໝູ່ ; ພວກເຮົາພຽງແຕ່ປະກອບສ່ວນ ສ້າງໄດ້ບາງຄົນຊ່ວຍສະຫາຍເທົ່ານັ້ນ, ສ້າງໄດ້ຜູ້ໃດ ຫຼື ຮູ້ເລື່ອງໃດເພີ່ມເຕີມກ່ຽວກັບຜູ້ໃດ ກໍ່ລາຍງານໃຫ້ສະຫາຍຊາບ ເພື່ອຕີລາຄາແລ້ວປະຊຸມຕົກລົງແຜນການ ແລະ ວິທີເຮັດວຽກນຳກັນ. ໃນເວລານັ້ນ ພວກເຮົາທຸກຄົນທີ່ໄດ້ຮັບໜ້າທີ່ຈາກຄະນະປະກົດວ່າມົວເມົານຳແຕ່ຊີວະປະຫວັດ ແລະ ຄວາມເວົ້າຂອງສາລະວັດທະຫານແຕ່ລະຄົນ, ບໍ່ສົນໃຈນຳເລື່ອງທີ່ເກີດມີຢູ່ນອກຄຸກ, ເວັ້ນເສຍແຕ່ຈົດໝາຍ ສົ່ງຂ່າວທີ່ມາຈາກຄອບຄົວ.

ຜົນທີ່ພວກເຮົາໄດ້ຮັບກໍ່ຄືເລີ່ມກໍ່ສ້າງໄດ້ຜູ້ໜຶ່ງ, ແລ້ວກໍ່ສອງສາມຄົນ, ແລ້ວກໍ່ສິບກວ່າຄົນ, ແລ້ວກໍ່ໃຊ້ພວກເຂົາເອງໄປຂະຫຍາຍໝູ່ໄດ້ຮອດຊາວກວ່າຄົນໃນ 4 ເດືອນທີ່ຜ່ານມາ. ຫຼັງຈາກທົດລອງຂະເຈົ້າດ້ວຍຫຼາຍວິທີແລ້ວ ພວກເຮົາກໍ່ກ້າໃຊ້ຂະເຈົ້າໄປຕິດຕໍ່ກັບຄອບຄົວ ຂອງພວກເຮົາທີ່ເຮັດວຽກຕາມການຊີ້ນຳຂອງພວກເຮົາຢູ່ໃນຕົວເມືອງວຽງຈັນ. ເມື່ອເຫັນຄວາມຕື່ນຕົວທາງດ້ານການເມືອງ ແລະ ຄວາມສັດຊື່ບໍລິສຸດຂອງຂະເຈົ້າແຈ້ງສົມຄວນແລ້ວ, ພວກເຮົາກໍ່ກ້າໃຊ້ຂະເຈົ້າໄປເຮັດວຽກອື່ນທີ່ສຳຄັນກວ່ານັ້ນ ຈົນໃຫ້ບາງຄົນໄປຕິດຕໍ່ກັບພົນຖານ -

24/VII

ການປະຕິວັດທີ່ສູນກາງພັກໄດ້ສົ່ງຄົນມາສ້າງຢູ່ໃກ້ຕົວເມືອງວຽງຈັນ ເພື່ອອຳນວຍຄວາມສະດວກໃຫ້ພວກເຮົາໂຕນໜີຈາກຄຸກ. ການໄປມາຂອງຂະເຈົ້າເພື່ອຕິດຕໍ່ກັບຄອບຄົວ ຂອງພວກເຮົາ ແລະ ບ່ອນອື່ນເພື່ອເກັບກຳເອົາຂ່າວຄາວທາງນອກ ກໍ່ເປັນປົກກະຕິກວ່າເກົ່າ ຂຶ້ນຈັກໄຊ. ໜ່ວຍພັກຂອງພວກເຮົາຕີລາຄາສະພາບການອັນນີ້ວ່າ ເປັນຜົນງານອັນດີຂອງພວກເຮົາ. ມັນເຮັດໃຫ້ພວກເຮົາເຫັນອະນາຄົດອັນໃສແຈ້ງ ທີ່ພວມສ່ອງມາເຖິງພວກເຮົາ. ສະຫາຍເລຂາໜ່ວຍພັກໄດ້ຮັບຄວາມມອບໝາຍຈາກທຸກຄົນ ໃຫ້ກຽມທຸກເງື່ອນໄຂທີ່ຈຳເປັນ ແລ້ວວາງແຜນການໂຕນໜີຈາກຄຸກໄປຫາເຂດທີ່ໝັ້ນກອງຫຼອນ ທີ່ຢູ່ໃກ້ຄຽງພວກເຮົາ ເພື່ອພ້ອມກັນເດີນທາງຕໍ່ໄປຫາທີ່ຕັ້ງຂອງສູນກາງພັກປະຊາຊົນລາວ.

ການກະກຽມຂອງພວກເຮົານັບມື້ນັບຄົບຖ້ວນສົມບູນ. ພວກແກ່ນສານໃນສາລະວັດ ທະຫານໄດ້ແບ່ງກັນອອກເປັນຫຼາຍໝູ່ ທີ່ມີໜ້າທີ່ຕ່າງກັນ ໂດຍແມ່ນສິບເອກອຸດອນ ເປັນຫົວໜ້າບັນຊາທັງໝົດ ໝູ່ໜຶ່ງໃຫ້ມີ 8 ຄົນ ຄືຕາມຈຳນວນທີ່ພວກນາຍປະຕິການ ແຕ່ງໃຫ້ມານອນຍາມເຝົ້າຄຸກຂອງພວກເຮົາ. ໝູ່ອື່ນມີໜ້າທີ່ກຳກັບຄອບຄົວຂອງພວກທີ່ຈະໂຕນນຳພວກເຮົາ. ໝູ່ອື່ນອີກແບ່ງກັນຫວ່ານຫາງສຽງອອກໃນເມື່ອພວກເຮົາໂຕນຈາກຄຸກໄປແລ້ວ ວ່າເຫັນພວກເຮົາຂີ່ລົດກາມີຍົງຂຶ້ນພູເຂົາຄວາຍ ຫຼື ເຫັນພວກເຮົາຂີ່ເຮືອຂ້າມນ້ຳຂອງໄປປະເທດໄທ ຫຼື ເຫັນພວກເຮົາຂີ່ລົດກາມີຍົງລົງໄປທາງປາກຊັນ ຫຼື ເຫັນພວກເຮົາຂີ່ລົດກາມີຍົງ ຜ່ານເມືອງວຽງຈັນຂຶ້ນໄປທາງວັງວຽງ. ແຕ່ທຸກຄົນຕ້ອງຮັກສາຄວາມລັບເທົ່າກັບຊີວິດຂອງຕົນເອງ.

ການຕິດຕໍ່ກັນລະຫວ່າງພວກເຮົາກັບສະຫາຍສາລີ ວົງຄຳຊາວ ທີ່ມາປະຈຳຢູ່ໃນທີ່ໝັ້ນ - ກອງຫຼອນ ເພື່ອແປງທາງໃຫ້ພວກເຮົາໂຕນອອກຈາກຄຸກນັ້ນ ໄດ້ເຮັດຖີ່ເຂົ້າຈັກໄຊ ໃນເມື່ອພວກເຮົາກຽມເງື່ອນໄຂພຽງພໍແລ້ວ. ບັນຫາທີ່ຫຍຸ້ງຍາກໃຫ້ພວກເຮົາແມ່ນເຮັດແນວໃດພວກແກ່ນສານຂອງພວກເຮົາຈຶ່ງຈະໄດ້ມາຢູ່ຍາມພ້ອມກັນທັງ 8 ຄົນ, ເພາະວ່າ ຕາມທຳມະດາແລ້ວແມ່ນພວກປະຕິການກໍ່ມາຍາມປົນກັນເປັນຈຳນວນຫຼາຍ. ເມື່ອພວກເຮົາ ແລະທີ່ໝັ້ນກອງຫຼອນຕົກລົງເອົາວັນທີ 24/5/60 ເປັນມື້ອອກຄຸກແລ້ວ ພວກແກ່ນສານໃນສາລະວັດທະຫານກໍ່ຮັບໜ້າທີ່ກຽມດ້ານວັດຖຸ ແລະ ຄວາມປອດໄພໃຫ້ແກ່ພວກເຮົາ. ໃນຄືນນັ້ນ ພວກເຂົາຈັດວາງໃຫ້ແກ່ນສານທັງ 8 ຄົນໄດ້ມາຢູ່ຍາມນຳກັນ, ໃຫ້ພວກທີ່ບໍ່ແມ່ນແກ່ນສານ ມີເງິນໄປຊື້ເຫຼົ້າເພື່ອກິນເອົາ ແລະ ນອນນຳຄອບຄົວຂອງເຂົາ ; ພວກແກ່ນສານຈຳນວນໜຶ່ງ ໄປຮັບໂຮມເອົາເຄື່ອງນຸ່ງຄົບຊຸດ ຂອງສາລະວັດທະຫານມາຢາຍໃຫ້ພວກເຮົາຄົນລະຊຸດ, ຈຳນວນໜຶ່ງໄປຂໍໃຫ້ສົມເດັດສັງຄະນາຍົກສຶກໃຫ້ພະສົງ 4 ອົງ ເຊິ່ງອົງໜຶ່ງເປັນນ້ອງຊາຍຂອງ ສິບເອກອຸດອນ ທີ່ພວກປະຕິການຫາວ່າເທສະໜາສະໜັບສະໜູນແນວລາວຮັກຊາດ ແລະ ເອົາມາໂຮມໄວ້ຕິດຕາມຢູ່ກະດີຫາດຫຼວງນັ້ນ ເພື່ອໃຫ້ໂຕນໜີໄປພົບພວກເຮົາຢູ່ໃນບ່ອນນັດໝາຍ ຜູ້ໜຶ່ງໄປຕິດຕໍ່ເອົາສະຫາຍຊຽງສີມຈາກທີ່ໝັ້ນກອງຫຼອນມາພາທາງພວກເຮົາ, ພ້ອມກັນນັ້ນກໍ່ຊຸເອົາ

ເຂົ້າຈີ່ ແລະ ໄກ່ທອດມາຢາຍໃຫ້ພວກເຮົາເອົາໄປກິນທາງ. ເມື່ອທຸກສິ່ງທຸກຢ່າງ ກຽມຄົບຖ້ວນ ແລະ ຊຽງສິນເຂົ້າມາຢູ່ຄຸກນຳພວກເຮົາແລ້ວ ພວກເຮົາກໍ່ຈັດຕັ້ງກັນເປັນ 3 ໝູ່, ເອົາປືນກາລະບິນ 11 ບອກ ແລະ ປືນສັ້ນ 3 ກະບອກແຈກໃຫ້ທຸກໝູ່ສະເໝີກັນ, ເອົາເຄື່ອງແບບຂອງສາລະວັດທະຫານແຈກໃຫ້ຄົນລະຊຸດ. ສິບເອັດໂມງເຄິ່ງ ນັກໂທດທຸກຄົນ ແຕ່ງຕົວເປັນສາລະວັດທະຫານຮຽບຮ້ອຍ ; ເຮົາໄດ້ຂຽນຈົດໝາຍນ້ອຍວາງໄວ້ໜ້າໂຕະຫ້ອງເຮົາວ່າ : "ພວກເຮົາອົດທົນຢູ່ຄອກໝາຫຼັງນີ້ມາໄດ້ 10 ເດືອນແລ້ວ, ປູກໝາກຫຸ່ງຈົນວ່າສຸກຄາຕົ້ນແລະໄດ້ກິນໜ່ອຍໜຶ່ງແລ້ວ, ຄອງຖາພວກທ່ານປ່ອຍກໍ່ບໍ່ປ່ອຍ, ຄອງຖາໃຫ້ຕັດສິນກໍ່ບໍ່ຕັດສິນ, ນັ້ນພວກເຮົາຈຳເປັນຕ້ອງຂໍລາທ່ານໄປ, ເຮົາຂໍອະນຸຍາດເອົາມຸ້ງນີລົງຂຽວດາງໜຶ່ງ ແລະບີດົງນ້ຳອັນໜຶ່ງໄປໃຊ້, ຖ້າທ່ານບໍ່ເຫັນດີເຮົາຈະເອົາມາສົ່ງໃຫ້ໃນເວລາພົບກັນເທື່ອໃໝ່, ເຮົາຂໍລາໄປກ່ອນ, ໃຫ້ທ່ານທຸກຄົນຢູ່ສະບາຍດີ, ຢ່າກະວົນກະວາຍຊອກຫາພວກເຮົາໃຫ້ເສຍເວລາ". ເວລາ 12 ໂມງ 5 ນາທີ ກາງຄືນພວກເຮົາພ້ອມກັນອອກຈາກຄຸກເປັນໝູ່ໃຜໝູ່ມັນ, ໄປພົບໝູ່ມະຫາສິກໃໝ່ຢູ່ບ່ອນນັດໝາຍແລ້ວ ກໍ່ພ້ອມກັນອອກເດີນທາງໄປສູ່ຄວາມເປັນອິດສະຫຼະຕາມແຜນການທີ່ສູນກາງພັກເຮົາໄດ້ວາງໄວ້.

ຄືນນັ້ນແມ່ນເດືອນ 6 ແຮມເກືອບດັບແລ້ວ, ເດືອນມືດຈົນເບິ່ງບໍ່ເຫັນທາງ. ເຮົາຫຼຽວຄືນໄປເບິ່ງຄຸກໂພນເຄັງເຫັນໂຄມໄຟຟ້າທັງນ້ອຍທັງໃຫຍ່ ແຈ້ງໃສເຮື່ອເຮືອງຢູ່ເພື່ອນເດີມ. ເຮົາຄິດວ່າ : "ຈັກກະພັດອາເມລິກາ ແລະ ລູກມືເອີຍ ! ຄຸກຂອງພວກເຈົ້າເປົ່າໝົດແລ້ວ! ເສຍແຮງພວກເຈົ້າອ້ອມຮົ້ວໜາມພາກຈັບ ແລະ ສ້າງກະສີລ້າງ, ໂຄມໄຟຟ້າໃຫຍ່ ແລະ ລົດຫຸ້ມເກາະຂອງພວກເຈົ້າບໍ່ເປັນປະໂຫຍດຫຍັງ ! ມັນບໍ່ແມ່ນເທວະດາຟ້າແຖນຫຍັງ ມາຊຸມເອົາພວກເຮົາຄືດັ່ງທ່ານພົນເອກໃຫຍ່ ລຳເງິນເວົ້ານັ້ນດອກ ! ມັນແມ່ນຕີນພວກເຮົາ ພາພວກເຮົາຍ່າງໄປເອງ ແລະ ແມ່ນກຳລັງແຮງຂອງສິນທຳມາປ້ອງກັນພວກເຮົາ ! " ສະພາບການຈະເປັນແນວໃດ ພວກເຮົາກໍ່ຈະບໍ່ຍອມປ່ອຍໃຫ້ພວກເຈົ້າ ຈັບພວກເຮົາໄປຂັງຄຸກໄດ້ອີກແລ້ວ ! ມື້ອື່ນເຊົ້າພຸ້ນແລ້ວ ພວກເຈົ້າຈະໄດ້ອ່ານຈົດໝາຍນ້ອຍຂອງເຮົາ ແລະຈະວິ່ນສະພອງແລ່ນຊອກຫາພວກເຮົາລະນໍ ! ".

ເຮົາທັງຍ່າງທັງຄິດ, ແບ່ງເປັນໜ່ວຍໃຜໜ່ວຍມັນ ຜ່ານທົ່ງນາໜອງພະຍາ ແລະ ໜອງທາທີ່ປະຊາຊົນໄຖແລ້ວ, ມັນຈຶ່ງແມ່ນຍ່າງຍາກ ເພາະວ່າດິນຫຼົ່ມເຮັດໃຫ້ພວກເຮົາເມື່ອຍຂາ. ກາຍໃກ້ບ້ານໜອງທາເຮົາໄດ້ຍິນສຽງເສບ ແລະ ຮ້ອງເພງລຳວົງຢູ່ໃນບຸນວັດ. ພວກໜຶ່ງພວມມ່ວນຊື່ນຟ້ອນລຳວົງແຕ່ພວກໜຶ່ງພວມທົນທຸກຍ່າງໜີຈາກຄວາມໂຫດຮ້າຍທາລຸນ ມັນຈຶ່ງແມ່ນຕ່າງກັນແທ້ນໍ. ຄອບຄົວພວກເຮົາຍັງບໍ່ຮູ້ວ່າ ພວກເຮົາພວມທົນຄວາມທຸກໃນເວລານີ້. ມື້ອື່ນໄດ້ຍິນຂ່າວວ່າພວກເຮົາໂຕນໜີ ຈະເຊື່ອວ່າພວກເຮົາຈະປອດໄພບໍ່ນໍ, ຫຼືຈະຄິດວ່າສັດຕູເອົາໄປຂ້າແລ້ວຈະຮ້ອງໄຫ້ທຸກໃຈນຳພວກເຮົາ. ບາງທີພວກມັນຈະຈັບເອົາລູກເມຍພວກເຮົາໄປ

ເຂົ້າຄຸກແຫນ ຫຼື ຢ່າງນ້ອຍກໍ່ຈະເອົາຕຳຫຼວດໄປຄຸມ ແລະກວດເຮືອນພວກເຮົາ, ເຮັດໃຫ້ຄອບຄົວຂອງພວກເຮົາທີ່ທຸກໃຈຢູ່ແລ້ວ ຍິ່ງຈະເດືອດຮ້ອນຕື່ມອີກ. ແຕ່ເຮົາກໍເຊື່ອໝັ້ນວ່າຄອບຄົວພວກເຮົາທີ່ມີບົດຮຽນໃນການຜ່ານຜ່າຄວາມທຸກຍາກມາແລ້ວ ຄົງຈະອົດທົນ ຕໍ່ຄວາມທໍລະມານໃຈເທື່ອນີ້ໄດ້.

ພົ້ນຈາກທົ່ງນາແລ້ວ ພວກເຮົາຕ້ອງຍ່າງຜ່ານປ່າດົງໜາ. ຜູ້ພາທາງໄດ້ສັ່ງຕໍ່ກັນ ມາວ່າໃຫ້ພວກເຮົາຍ່າງເປັນແຖວດຽວ, ຜູ້ຍ່າງທາງຫຼັງຕ້ອງຈັບສາຍແອວຜູ້ຢູ່ທາງໜ້າ, ຫ້າມບໍ່ໃຫ້ຜູ້ໃດບີບໄຟສາຍ ຫຼື ຕ່ອຍກັບຂີດ. ຫຼຽວເບິ່ງເທິງທ້ອງຟ້າບໍ່ມີດາວຈັກແສງ. ທາງກວຽນອ້ອມພວກເຮົາຍ່າງໄປຕາມນ້ຳທົ່ງພົງທົ່ງຮົກ. ຝົນຕົກລົງເປັນລິນດຽວປານຖອກບັ້ງນ້ຳ. ເຄື່ອງນຸ່ງປຽກອີ່ມຊ້ຳຕື່ມໜັກ. ທາງພົງຢູ່ແລ້ວຊ້ຳຕື່ມຫຼື່ນ ແລະ ມື່ນ. ບາງທີຜູ້ພາທາງສັ່ງມາວ່າ ໃຫ້ຍ້າຍຂ້າມໄປຍ່າງທາງຂວາ, ບຶດໜຶ່ງຊ້ຳພັດບອກມາວ່າໃຫ້ຍ້າຍໄປຍ່າງທາງຊ້າຍ. ຢູ່ລະຫວ່າງສອງຄອງທາງຫຍ້າຊ້ຳປົ່ງຍາວພຽງແອວ. ບາງຄົນຂ້ອງຫຍ້າ ຫຼື ພະລາດລົ້ມແລ້ວລຸກຍາກ, ແຕ່ທາງໜ້າຊ້ຳພັດສັ່ງມາວ່າໃຫ້ຍ່າງໄວ, ຈຶ່ງແມ່ນມັນລຳບາກ ຈົນບາງຄົນເກີດຢາກຮ້າຍ, ແຕ່ວ່າຈະຮ້າຍໃສ່ໃຜ, ກະດຽວວ່າພວກເຮົາພ້ອມກັນໂຕນອອກຈາກຄຸກ ຈາກຄວາມໂຫດຮ້າຍທາລຸນຂອງສັດຕູ ໄປຫາແສງສະຫວ່າງຂອງຄວາມເປັນອິດສະຫຼະ ແລະ ຄວາມເປັນທຳ ; ອົດທົນຄວາມທຸກຍາກລຳບາກແບບນີ້ ມັນຍັງດີກວ່າສັດຕູນຳມາທັນ, ຄັນເປັນແນວນັ້ນ ພວກເຮົາຈະຕ້ອງຕໍ່ສູ້ຈົນຕາຍ ເພື່ອບໍ່ໃຫ້ພວກມັນຈັບເອົາໄປຂັງຄຸກ ແລະ ຂ້າຖິ້ມອີກ. ຄວາມຄິດອັນນີ້ແຫຼະເປັນສິ່ງຊຸກຍູ້ກຳລັງໃຈເຮົາໃຫ້ອົດທົນ ແລະ ລະດົມໝູ່ໃຫ້ອົດທົນຄືກັນ.

ຍ່າງໄປພົ້ນທົ່ງນາແລ້ວມີສະຫາຍໜຶ່ງລົ້ມລົງ ຍ້ອນບິ່ນອງປັ້ນ. ພວກຢູ່ໃກ້ຕ້ອງບີບຄັ້ນເອົາກັນ ແລະ ເຝືອກັນໄປ. ຂ້າມປ່າດົງມືດມີສະຫາຍໜຶ່ງເປັນລົມຈົນລົ້ມລົງ, ໄດ້ເອົານ້ຳມັນກາພະນາທາ ແລະ ບີບຄັ້ນເອົາກັນອີກ, ໄດ້ເຂາະຂອດເອົານ້ຳທີ່ຍັງເຫຼືອຂອງທຸກສະຫາຍອື່ນມາໃຫ້ສະຫາຍນັ້ນກິນ, ເຄິ່ງຊົ່ວໂມງສະຫາຍນັ້ນຈຶ່ງເດີນທາງຕໍ່ໄປໄດ້. ສິ່ງເຫຼົ່ານັ້ນເຮັດໃຫ້ການເດີນທາງຂອງພວກເຮົາຊັກຊ້າໄປຊົ່ວໂມງປາຍ.

ເກືອບຈະພົ້ນປ່າດົງ ພວກເຮົາໄດ້ຍິນສຽງຮ້ອງຂຶ້ນຂ້າງທາງວ່າ "ຢຸດ". ເຮົາຕົກໃຈວາບບາດໜຶ່ງ ແລະ ຜູ້ອື່ນກໍ່ຄົງຈະເປັນຄືກັນ, ຄິດວ່າສັດຕູມາລັດທາງພວກເຮົາ, ບາດນີ້ລະມື້ທີ່ຈະໄດ້ຍິງກັນ ; ເຮົາຜູ້ບໍ່ມີປືນຈະເຮັດແນວໃດ ? ມີແຕ່ທາງດຽວຄືໃຊ້ໄມ້ມວຍທີ່ເຮົາຍັງມີຄົງຄາງຢູ່ເພື່ອຍາດເອົາປືນຈາກສັດຕູໄປຍິງມັນຄືນ, ຖ້າແມ່ນຍາດບໍ່ໄດ້ກໍຍອມຝັງກະດູກຢູ່ທີ່ນີ້. ຊຽງສົ້ມຮ້ອງເອົາສັນຍານຜ່ານ, ທາງພຸ້ນຕອບມາຢ່າງຖືກຕ້ອງ ; ນັ້ນແມ່ນ ຄຳພິມ ທີ່ນຳພາທະຫານຫຼວງມາຄອຍຕ້ອນຮັບພວກເຮົາ. ໂອຍ ! ຈຶ່ງແມ່ນດີໃຈ ! ເຮົາໂດດອອກໄປຈັບມືຄຳພິມຢ່າງແຂງແກ່ນ ເພາະເຄີຍລົງກັນມາກ່ອນ ແລະຖາມຂ່າວສະບາຍອ້າຍນ້ອງຜູ້

ອື່ນ. ຈາກບ່ອນນັ້ນພວກເຮົາກໍອອກເດີນທາງດ້ວຍຄວາມເຊື່ອໝັ້ນ ແລະ ມ່ວນຊື່ນເບີກບານກວ່າເກົ່າ ຍ້ອນວ່າມີກຳລັງທະຫານເຮົາມາຊ່ວຍປ້ອງກັນທາງໜ້າ ແລະ ທາງຫຼັງ.

ອອກຈາກປ່າດົງຍາວ ແລະ ມືດນີ້, ພວກເຮົາກໍໄປຮອດທົ່ງນາບ້ານນາຖູນນອຍ. ບາງບ່ອນກໍໄຖແລ້ວ, ບາງບ່ອນຍັງບໍ່ທັນໄຖແຕ່ມີນ້ຳເລິກເຖິງຖອງແຄ່ງ ເພາະວ່າຝົນຍັງຕົກລົງຢູ່ບໍ່ເຊົາ. ຍ່າງນຳກາງນາບ່ອນໄຖແລ້ວດິນຫຼົ້ມເຮັດໃຫ້ເມື່ອຍຂາ, ຍ່າງນຳນາທີ່ບໍ່ທັນໄຖ ຊໍ້າພັດເຮັດໃຫ້ມີສຽງດັງນັນເນືອງ, ຂຶ້ນຍ່າງເທິງຄັນນາຊໍ້າພັດຄົດລ້ຽວ ແລະ ມື່ນ ເຮັດໃຫ້ຫຼາຍຄົນພະລາດລົ້ມ. ມັນຈຶ່ງແມ່ນຫຼາຍເລື່ອງທີ່ບໍ່ເຄີຍພົບເຫັນໃນຊີວິດຂອງເຮົາ. ໄປຕີເສິກ ແລະ ຫຼົບຫຼີກເຮືອບິນຝະລັ່ງກໍບໍ່ລຳບາກປານນີ້. ທ້ອງຟ້າມືດປິກບໍ່ມີດາວຈັກໜ່ວຍ. ຫຼຽວໄປທາງໃດກໍບໍ່ເຫັນຫຍັງ. ພື້ນດິນນາຊໍ້າພັດມີບ່ອນຫຼຸບບ່ອນໂນນ, ຕ້ອງຄ່ອຍໆຍ່າງຍ່ອງໄປເພື່ອບໍ່ໃຫ້ລົ້ມ ແລະ ບໍ່ໃຫ້ນ້ຳດັງ.

ພວກເຮົາຍ່າງຜ່ານນາໄປປະມານຊົ່ວໂມງໜຶ່ງ ກໍເຫັນທ້ອງຟ້າສະຫວ່າງແຈ້ງທາງເບື້ອງຕາເວັນອອກ, ບອກວ່າມື້ໃໝ່ຈະມາເຖິງ, ແຕ່ພວກເຮົາຍັງບໍ່ທັນໄດ້ຂ້າມທາງເລກ 13 ເທື່ອ ແລະ ກໍບໍ່ອາດສາມາດຈະໄປຂ້າມໄດ້ໃນກາງວັນ. ດັ່ງນັ້ນ ພວກເຮົາຈຶ່ງພາກັນເຂົ້າພັກລີ້ ຢູ່ໃນປ່າດົງແຫ່ງໜຶ່ງທີ່ຢູ່ໄກຈາກທົ່ງນາໄປທາງເບື້ອງຊ້າຍປະມານກິໂລແມັດໜຶ່ງ. ດົງນັ້ນບໍ່ຕຶບໜາປານໃດ ແຕ່ຫາກມີກົກໄມ້ໃຫຍ່ລ້ອມຕິດກັນເປັນຮົ່ມດີ, ບໍ່ເຫັນມີຮອຍທາງຄົນທຽວ ແລະ ບໍ່ເຫັນມີຮອຍມີດຄົນຕັດໄມ້, ຄືຈະບໍ່ມີຄົນໝັ່ນທຽວມາ, ແຕ່ພວກເຮົາກໍເຕືອນກັນໃຫ້ມີສະຕິ ລະວັງຕົວ, ໃຫ້ນຸ່ງເຄື່ອງປຽກອື່ນນັ້ນຕິດຕົວຢູ່, ພວກທະຫານໃຫ້ຢາຍກັນຢູ່ຕາມແຄມປ່າ ເພື່ອຮັກສາຄວາມປອດໄພ. ພວກເຮົາທຸກຄົນກຽມພ້ອມຮັບມືກັບທຸກເຫດໄພ, ຖ້າວ່າພວກປະຕິການຂາຍຊາດຝ່າຍວຽງຈັນຫາກຕິດຕາມມາພົບພວກເຮົາ ແມ່ນທຸກຄົນພວກເຮົາຈະໃຊ້ວິທີເພື່ອຕໍ່ສູ້ຕ້ານພວກມັນ, ພວກເຮົາຍອມຕາຍໝົດທຸກຄົນນຳກັນຢູ່ໃນປ່າດົງແຫ່ງນີ້, ດີກວ່າມີຊີວິດຢູ່ເປັນຂ້ອຍຂ້າພວກມັນ.

ພວກເຮົາອາໄສເວລາພັກຜ່ອນຢູ່ໃນປ່າດົງແຫ່ງນີ້ ເພື່ອສຳຫຼວດເບິ່ງຈຳນວນພົນ ແລະ ອາຫານການກິນທີ່ພວກເຮົາມີ. ພວກເຮົາທີ່ຖືກສັດຕູຈັບມາຂັງຄຸກມີ 16 ຄົນ, ພວກສາລະວັດທະຫານທີ່ໜີອອກມານຳມີ 8 ຄົນ, ພວກມະຫາທີ່ສຶກອອກຈາກວັດ ມາໂຕນທີ່ພ້ອມພວກເຮົາມີ 4 ຄົນ ແລະ ສະຫາຍຊຽງສົມທີ່ເຂົ້າມາຄຸກໃນຄືນນັ້ນ ເພື່ອພາທາງພວກເຮົາ, ລວມທັງໝົດມີ 29 ຄົນ. ອ້າຍນ້ອງທະຫານໝວດໜຶ່ງ ທີ່ມາຕ້ອນພວກເຮົາໄດ້ເອົາເຂົ້າຕົ້ມມາກິນ ຄົນລະ 2 ໜ່ວຍນ້ອຍ, ກິນເກືອບໝົດແລ້ວຍັງເຫຼືອແຕ່ 10 ໜ່ວຍ ເອົາມາມອບໃຫ້ພວກເຮົາກິນ, ຈະເອົາມາແຈກຢາຍກັນກິນຜູ້ລະໜ່ວຍກໍບໍ່ພໍກັນ, ພວກເຮົາຈຶ່ງເອົາມອບໃຫ້ ຜູ້ທີ່ເຫື່ອແຮງອ່ອນກວ່າໝູ່ນັ້ນກິນ, ຕົວເຮົາໄດ້ລວມເຂົ້າໃນໝູ່ທີ່ບໍ່ກິນ ເພາະຍັງມີແຮງພໍເດີນທາງຕໍ່ໄປໄດ້ຢູ່. ສ່ວນເຂົ້າຈີ່ ແລະ ໄກ່ທອດທີ່ໄດ້ເອົາແຈກຢາຍກັນຢູ່ໃນຄຸກນັ້ນ ສ່ວນໜຶ່ງ ພວກ

ເຮົາໄດ້ຈົກຖົງໃຫ້ໝາອາເມລິກາກິນ ເພື່ອບໍ່ໃຫ້ມັນເຫົ່າໃນເວລາພວກເຮົາຍ່າງອອກຈາກຄຸກ, ສ່ວນໜື້ງກໍ່ປັ້ນກັນກັດກິນມານຳທາງ ຫຼື ລົ້ມຖືກນ້ຳ ຫຼື ຂີ້ຕົມຈຳເປັນຕ້ອງຖິ້ມ.

ເວລາເດີນທາງມາເຮົາບໍ່ຮູ້ສຶກເຈັບຫຍັງ ເພາະວ່າຈິດໃຈຈົດຈໍ່ໃສ່ແຕ່ສະຕິລະວັງຕົວ ແລະ ຍ່າງບໍ່ໃຫ້ລົ້ມ, ບໍ່ໃຫ້ເປັນສຽງດັງ. ບາດມາພັກຜ່ອນຢູ່ທີ່ປ່າດົງນັ້ນ ເຮົາຮູ້ສຶກເຈັບຕີນ ເພາະວ່າສູບເກີບພັງຂອງສາລະວັດທະຫານມັນບໍ່ຖືກຕີນເຮົາປານໃດ, ນອກນັ້ນຊ້ຳພັດໄດ້ຍ່າງຜ່າຂີ້ຕົມ ແລະ ຜ່ານຳກາງນາເຮັດໃຫ້ດິນ ແລະ ຫີນນ້ອຍເລັດລອດເຂົ້າໃນເກີບໄດ້. ເຮົາແກ້ເກີບອອກເບິ່ງເຫັນພອງເປັນນ້ຳ ແລະ ເຫຼັ້ນຢູ່ສອງສົ້ນຕີນ ຈົນສູບເກີບຄືນບໍ່ໄດ້ອີກແລ້ວ, ໃນຂັ້ນຕໍ່ໄປນັ້ນຕ້ອງຕັດສິນໃຈຖືຖົງເທົ້ານີ້ລົງ ແລະ ພາຍເກີບຫິ້ວຍ່າງໄປຈົນຮອດບ່ອນຕ້ອນຮັບຂອງສະຫາຍ ສາລີ ວົງຄຳຊາວ. ແມ່ນວ່າຈະບໍ່ທັນຮອດບ່ອນປອດໄພ ແລະ ມີຫຼາຍຄົນອ່ອນເພຍ, ເຈັບຕີນ ແລະ ບໍ່ໄດ້ກິນເຂົ້າກໍ່ຕາມ ພວກເຮົາພິດທຸກຄົນກໍ່ມ່ວນຊື່ນເບີກບານ ແລະ ເຊື່ອໝັ້ນໃນອະນາຄົດ.

ພວກເຮົາອິດນອນຄືເທົ່າ ແລະ ອິດເມື່ອຍຍ້ອນການເດີນທາງລຳບາກ, ແຕ່ກໍ່ບໍ່ມີຜູ້ໃດນອນຫຼັບ, ພາກັນນັ່ງຢູ່ຈົນເຄື່ອງແຫ້ງຄາຄີງ, ເພາະວ່າອ້າຍນ້ອງທີ່ຢູ່ຍາມໃກ້ທາງເລກ 13 ພື້ນແຕ່ງກັນມາລາຍງານວ່າ ມີລົດກາມີຍົງຂົນທະຫານຂຶ້ນໄປທາງທົ່ວຂົວ 5 ນາທີໃດສອງຄັນ. ທາງອາກາດເນື່ອງມັນໄປດ້ວຍເຮືອບິນ ແລະ ເອລີກົບແຕ້ທີ່ບິນຕ່ຳວົນໄປວົນມາບໍ່ຂາດໄລຍະ ; ເຫັນຈະແມ່ນພວກອາດຍາໃຫຍ່ເຫັນຄຸກເປົ່າ, ໄດ້ອ່ານຈົດໝາຍສັ່ງລາຂອງເຮົາແລ້ວກິນເຂົ້າບໍ່ແຊບ ຈຶ່ງສັ່ງໃຫ້ທະຫານ ແລະ ເຮືອບິນທຸກຊະນິດອອກຕິດຕາມຈັບເອົາພວກເຮົາ. ບາງຄົນເວົ້າເພື່ອຫົວກັນວ່າ : "ພູຍ ຊະນະນິກອນ ແລະ ພູມີ ໜໍ່ສະຫວັນ ເອີຍ, ຢ່າຊູ່ເມົາຊອກຫາພວກເຮົາເທາະ, ຈະເສຍແຮງລ້າງແລ້ວ, ເຮັດແນວໃດກໍ່ບໍ່ໄດ້ພວກເຮົາ ໄປເຂົ້າຄຸກອີກດອກ ; ຫາລະແກ້ໄຂຂັດແຍ້ງພາຍໃນພວກເຈົ້າເທັ້ນໃຫ້ດີ ;ກ່ອນຮັບພວກເຮົານີ້ໃນວັນໜຶ່ງຂ້າງໜ້າຈຶ່ງຄ່ອຍໄລ່ບັນຊີນຳກັນ".

ເວລາ 7 ໂມງແລງ, ອ້າຍນ້ອງທະຫານບອກວ່າ ພວກເຮົາອອກເດີນທາງໄດ້. ພວກເຮົາກໍ່ພາກັນອອກເດີນທາງເປັນໝູ່ໃຫຍ່ນ້ອຍ ອອກຈາກປ່າດົງແຫ່ງນີ້ ໃຕ້ທ້ອງຟ້າອັນເລື່ອມມືດຂອງທ້າຍເດືອນ 6 ລາວ. ຕາມຄຳສັ່ງຂອງຜູ້ພາທາງ ພວກເຮົາແຕ່ລະຄົນຕ້ອງຫັກເອົາຟົດໄມ້ອັນໜຶ່ງ ເພື່ອກວາດລົບຮອຍຕີນເວລາຍ່າງຂ້າມທາງ. ໂຊກແຕ່ຝົນບໍ່ຕົກ, ພວກເຮົາຍ່າງໄປບໍ່ຍາກປານໃດ. ແຕ່ເວລາອອກປ່າດົງນັ້ນຕ້ອງຍ່າງເປັນຫຼາຍແຖວ, ບໍ່ໃຫ້ຍ່າງຕາມຫຼັງກັນ, ແລະ ເວລາຂ້າມທາງເລກທີ່ 13 ກໍ່ຕ້ອງແບ່ງກັນໄປຂ້າມຫຼາຍຍ່ານ ຕາມການພາທາງຂອງອ້າຍນ້ອງທະຫານ, ຜູ້ໃດຍ່າງຜ່ານບ່ອນໃດກໍ່ຕ້ອງເອົາຟົດໄມ້ກວາດໜ້າທາງ ເພື່ອລົບຮອຍຕີນ ແລ້ວແຍກເອົາຟົດໄມ້ໄປນຳຈົນຮອດບ່ອນອ້າຍນ້ອງທະຫານບອກໃຫ້ຖິ້ມ ບ່ອນໃດຈຶ່ງໄດ້ຖິ້ມ. ພວກເຮົາຍ່າງຂ້າມທາງເລກ 13 ຢູ່ທາງໃຕ້ບ້ານທົ່ວຂົວກໍ່ພົບທະຫານອີກ ພວດ

ພື້ງ ບັນຊາໂດຍ ຄຳພັນ ແລະ ທອງເດືອນ ທີ່ມາຢູ່ຍາມຮັກສາທາງຖ້າພວກເຮົາ ແລ້ວກໍ່ລັດໃສ່ພູພະນັງ, ເລາະຂຶ້ນໄປຕາມຫ້ວຍນ້ຳ, ຮອດເທິງເປັນພູບ່ອນປອດໄພແລ້ວ ຈຶ່ງພາກັນພັກເຊົາແຮງ. ອອກຈາກບ່ອນນັ້ນ ພວກເຮົາເດີນໄປຕາມທາງຊາວບ້ານໄປເອົາຟືນ, ບ່າຍ 2 ໂມງເຊົ້າ ພວກເຮົາພັກນອນທີ່ດ່ານສູງ. ມື້ອື່ນເຊົ້າພວກເຮົາອອກເດີນທາງໝົດມື້ ໂດຍບໍ່ມີໃຜໄດ້ກິນເຂົ້າຈັກຄົນ. ຄວາມດີໃຈທີ່ລອດພົ້ນໄພໄປໄດ້ນັ້ນພາໃຫ້ບໍ່ຄິດເຖິງການກິນເຂົ້າ, ທຸກຄົນເຊື່ອໝັ້ນວ່າ ຮອດສຳນັກສະຫາຍສາລີ ວົງຄຳຊາວ ແລ້ວຈະໄດ້ກິນເຂົ້າແຊບໆສະຫຼອງໄຊຊະນະ.

ໝົດມື້ນັ້ນ ພວກເຮົາເດີນທາງຜ່ານປ່າດົງໜາ, ຂຶ້ນພູລົງຫ້ວຍກ້ອງກົກໄມ້ໃຫຍ່ທີ່ຮົ່ມເຢັນ, ແຕ່ວ່າຜູ້ໃດກໍ່ເຫື່ອໄຫຼອາບຄີງ ເພາະວ່າເຄື່ອງແບບສາລະວັດທະຫານທີ່ພວກເຮົານຸ່ງນັ້ນ ໜາ ແລະ ຕັນ, ເປັນຕົ້ນແມ່ນເສື້ອຕະໄລຍີສີຂຽວໃບໄມ້ ທີ່ຈັກກະພັດອາເມລິກາເອົາມາເບີກໃຫ້ນັ້ນ ບໍ່ມີໃຜສູ້ນຸ່ງຢູ່ວຽງຈັນ, ເວັ້ນແຕ່ຍາມອອກສະໜາມຮົບ ຫຼື ໄປຮ່ວມພິທີການທະຫານບາງຄັ້ງຄາວເທົ່ານັ້ນ. ພວກເຮົານຸ່ງເຄື່ອງແບບອັນນີ້, ແມ່ນເພື່ອສະດວກໃນການອອກຄຸກ, ຖ້າວ່າພົບໃຜຕາມທາງໃນເມືອງກໍ່ຍົກມືຊີ້ບອກທາງໃຫ້ເຂົາໄປທາງອື່ນ, ເຂົາກໍ່ຈະໄປຕາມຄຳສັ່ງ. ບາງຄົນຈົ່ມວ່າ ດຽວນີ້ເຂົ້າໃນກາງປ່າດົງໜາແລ້ວ ບໍ່ຈຳເປັນຕ້ອງນຸ່ງເຄື່ອງແບບອັນນີ້, ບາງຄົນກໍ່ຕອບວ່າຈະເຮັດແນວໃດໄດ້, ໃນປ່າດົງແຫ່ງນີ້ຈະຫາເຄື່ອງນຸ່ງແນວອື່ນມາປ່ຽນກໍ່ບໍ່ມີ ; ເຮົາຄິດວ່າພວກເຮົາອົດທົນທຸກຍາກມາຕັ້ງ 10 ປີແລ້ວ, ບັດນີ້ມາອົດທົນນຸ່ງເຄື່ອງໜາເທົ່ານີ້ກໍ່ບໍ່ຄວນຈົ່ມ, ສິ່ງສຳຄັນແມ່ນໄປຮອດບ່ອນຢູ່ຂອງສະຫາຍ ສາລີ ວົງຄຳຊາວ ຢ່າງປອດໄພ, ເວລານັ້ນຄົງຈະມີໂອກາດປ່ຽນເຄື່ອງນຸ່ງໃໝ່.

ຕາເວັນຄ່ອຍໆຕ່ຳລົງລັບປ່າໄມ້, ເກືອບຈະລັບພູພະນັງ, ໝົດທຸກຄົນຍົກມືຄຳນັບ ດ້ວຍຄວາມຊື່ນຊົມໃນເມື່ອເຫັນສະຫາຍ ສາລີ ວົງຄຳຊາວ ນຸ່ງເຄື່ອງດຳພື້ນຂອງຊາວນາ ເອົາຜ້າເຊັດໜ້າມັດຫົວຢືນຢູ່ຂ້າງທາງ ເພື່ອຄອຍຕ້ອນຮັບພວກເຮົາ ບາງຄົນເວົ້າວ່າ : "ບໍ່ຕາຍລະບາດນີ້", ບາງຄົນຖາມ ສະຫາຍ ສາລີ ວົງຄຳຊາວ ວ່າ : "ແຕ່ງເຂົ້າຖ້າແລ້ວບໍ່, ຫິວເຂົ້າຫຼາຍແທ້ໆ", ບາງຄົນວ່າ : "ຮີບຍ່າງໄວພວກເຮົາ, ຮອດບ່ອນປອດໄພແລ້ວ !" , ຫຼາຍຄົນຮ້ອງຕອບວ່າ : ຈະຍ່າງໄວແນວໃດໄດ້, ທັງຫິວເຂົ້າທັງເຈັບຕີນ". ແຕ່ເບິ່ງທົ່ວໄປແລ້ວ ໝົດທັງຂະບວນກໍ່ເຫັນຍ່າງໄວກວ່າເກົ່າຫຼາຍຂຶ້ນຈັກໄຊ. ນັ້ນແມ່ນພົນແຫ່ງຄວາມຢາກກິນ ແລະ ບໍ່ຢາກຕາຍ ! ສະຫາຍ ສາລີ ວົງຄຳຊາວ ຕອບດ້ວຍຄວາມເວົ້າອັນອົບອຸ່ນ ແລ້ວກໍ່ຍ່າງເຂົ້າມາເຂົ້າແຖວນຳພວກເຮົາ ແລະ ພ້ອມກັນມຸ່ງໜ້າໄປສູ່ສຳນັກ ທີ່ພວກເຮົາຖືວ່າເມືອງສະຫວັນນ້ອຍ.

ເມືອງສະຫວັນນ້ອຍບ່ອນນີ້ ປຸກດ້ວຍເສົາໄມ້, ມຸງຫຍ້າ, ຝາໄມ້ຮ້ຽຍ, ຕຽງນອນຕັ້ງໃສ່ຂາງໄມ້ສູງພຽງຫົວເຂົ່າ, ປູດ້ວຍຟາກໄມ້ໄຜ່, ມີຈຳນວນພຽງພໍແບ່ງໃຫ້ພວກເຮົານອນ

ຄົນລະຕຽງຢູ່ໃນເຮືອນຫຼາຍຫຼັງ, ຫຼັງລະສອງຕຽງ. ນີ້ແມ່ນເມືອງສະຫວັນນ້ອຍແທ້ໆ, ບໍ່ເພີ້ນຂັ້ນມາ, ບໍ່ມີເຮືອພານພາກຈັບຂອມ ແລະ ບໍ່ມີລູກປືນສັດຕູຖູມດ້ວຍລົດຫຸ້ມເກາະ ແລະ ໂຄມໄຟຟ້າໃຫຍອີກແລ້ວ. ເຮົາກິນເຂົ້າຕົ້ມກັບຊີ້ນຕົວແລນປີ້ງ ທີ່ອ້າຍນ້ອງສຳນັກນີ້ຫາເອົາມາໃຫ້ຢ່າງຄ່ອນຂ້ອນ ປະກົດວ່າແຊບກວ່າພາເຂົ້າຂອງນາງຈັນເພັງຫຼາຍເທື່ອ, ເພາະວ່າແມ່ນກິນຢູ່ໃນບັນຍາກາດແຫ່ງຄວາມເປັນອິດສະຫຼະ ໃນເວລາໄດ້ຮັບໄຊຊະນະຢ່າງງົດງາມ.

ຫຼັງຈາກກິນເຂົ້າແລ້ວ ພວກເຮົາພ້ອມກັນຟັງສະຫາຍ ສາລີ ວົງຄຳຊາວ ແຈ້ງຂ່າວສະພາບການ ແລະ ແຜນການທີ່ຈະໄດ້ປະຕິບັດໃນຂັ້ນຕໍ່ໄປ, ແລະ ພວກເຮົາກໍ່ເລົ່າ ສະພາບການທີ່ພວກເຮົາໄດ້ປະສົບໃນຊີວິດຢູ່ໃນຄຸກໃຫ້ສະຫາຍຟັງ ທັງຊີ້ແຈງຄຸນງາມຄວາມດີ ຂອງພວກສາລະວັດທະຫານ ແລະ ຂອງພວກມະຫາທີ່ໂຕນໜີພ້ອມພວກເຮົານັ້ນໃຫ້ສະຫາຍ ແລະ ຄະນະຟັງດ້ວຍ. ທຸກຄົນພ້ອມກັນສະແດງຄວາມຊົມຊື່ນຍິນດີຕໍ່ກັນ ແລະ ເຫັນດີນຳແຜນການທີ່ສະຫາຍ ສາລີ ວົງຄຳຊາວໄດ້ວາງໄວ້. ກ່ອນອື່ນແມ່ນພວກເຮົາຕ້ອງພັກຜ່ອນຢູ່ທີ່ນີ້ ຈົນກວ່າຈະດີເຈັບຕີນ ແລະ ມີເຫື່ອແຮງພໍແລ້ວຈຶ່ງຄ່ອຍອອກເດີນທາງຕໍ່ໄປ. ໃນເວລາທີ່ພວກເຮົາພັກຜ່ອນນັ້ນ ພວກເຮົາໄດ້ແຕ່ງປະຊາຊົນບ້ານນາຍາງ ທີ່ເປັນພະນັກງານຫຼັກແຫຼ່ງ ຂອງພວກເຮົານັ້ນເຂົ້າໄປວຽງຈັນ ເພື່ອເບິ່ງສະພາບຄອບຄົວຂອງພວກເຮົາ, ຂອງພວກເພື່ອນໃນຄະນະກຳມະການສັນຕິພາບເປັນກາງ ແລະ ຂອງປະຊາຊົນໃນຕົວເມືອງວຽງຈັນ ຫຼັງຈາກພວກເຮົາໂຕນໜີໄປແລ້ວ, ແຕ່ຍັງຮັກສາຄວາມລັບຢູ່ບໍ່ບອກຄວາມເປັນຈິງໃຫ້ໃຜຮູ້ ເພາະວ່າຄວາມປອດໄພຂອງພວກເຮົາຍັງບໍ່ທັນຮັບປະກັນຮ້ອຍສ່ວນຮ້ອຍເທື່ອ ; ພ້ອມກັນນັ້ນ ກໍ່ໃຫ້ປະຊາຊົນພວກນັ້ນຊື້ໂສ້ງເສື້ອ, ໝວກ, ເກີບ, ຜ້າ, ເຄື່ອງລ້າງໜ້າ, ແພຣ ແລະຜ້າຢາງກັນຝົນມາໃຫ້ພວກເຮົາອີກດ້ວຍ ; ເຄື່ອງຂອງເຫຼົ່ານັ້ນ ຕ້ອງຊື້ມາເທື່ອລະຢ່າງສອງຢ່າງ ເພື່ອບໍ່ໃຫ້ສັດຕູລະແວງສົງໄສ, ແລະ ໃຫ້ຊື້ທັງນ້ຳມັນ,ຢາປົວໄຂ້ຍຸງ, ຖອກທ້ອງ ເຈັບທ້ອງ , ເປັນຫວັດ ແລະ ຊື້ວິທະຍຸນ້ອຍມາຢາຍໃຫ້ຄະນະຮັບຜິດຊອບຜູ້ລະໜ່ວຍ ເພື່ອຟັງຂ່າວຄາວອີກດ້ວຍ.

ຕາມຂ່າວທີ່ພວກພະນັກງານແກ່ນສານມາເລົ່າໃຫ້ຟັງນັ້ນ ຄອບຄົວພວກເຮົາ ແລະບັນດາເພື່ອນສັນຕິພາບເປັນກາງ ຍັງຖືກຕຳຫຼວດສັດຕູຄວບຄຸມເຮືອນຢູ່ຄືເກົ່າ ແຕ່ບໍ່ມີຜູ້ໃດຖືກຈັບກຸມ; ປະຊາຊົນທົ່ວໄປແມ່ນເປັນຫ່ວງນຳພວກເຮົາ, ບໍ່ຮູ້ວ່າໜີໄປທາງໃດ ຫຼືວ່າສັດຕູເອົາໄປຂ້າໝົດແລ້ວ ; ໝົດທຸກຄົນຕັ້ງໃຈຕິດຕາມຂ່າວຂອງພວກເຮົາຢ່າງຈົດຈໍ່ທີ່ສຸດ ; ພະສົງໃນວັດຕ່າງໆ ໄດ້ສູດໄຊຍັນໂຕເພື່ອອວຍພອນໃຫ້ພວກເຮົາໄປຕະຫຼອດປອດໄພ. ພູຍ ຊະນະນິກອນ ແລະ ພວກປະຕິການອື່ນໆລ້ວນແຕ່ຕົກໃຈຜິດຫວັງ ແລະ ໂຍນຄວາມຜິດໃຫ້ແກ່ກັນ ; ສາລະວັດທະຫານຫຼາຍຄົນໄດ້ຖືກຈັບ ເຊິ່ງໃນນັ້ນກໍ່ມີແກ່ນສານຂອງພວກເຮົາບາງຄົນ ; ພັນເອກລຳເວີນ ແທນທີ່ຈະໄດ້ເລື່ອນຂັ້ນເປັນນາຍພົນຄືດັ່ງພູຍ ຊະນະນິກອນເວົ້າ ຊ້ຳພັດຖືກຖອຍຊັ້ນລົງຊັ້ນໜຶ່ງ.

ການສົ່ງກອງທະຫານ ແລະ ນັກສືບສອດແນມເພື່ອຄົ້ນຊອກຫາພວກເຮົາ ຍັງສືບຕໍ່ຢ່າງຕັ້ງໜ້າຄືເກົ່າ ; ເຫັນປະຊາຊົນ ແລະ ແກ່ນສານພວກເຮົາຊື້ວິທະຍຸ, ນ້ຳນົມ ແລະ ຢູກຢາອອກມາກໍ່ຖືກພວກມັນສໍ້ຖາມກະຈູກະຈິທີ່ສຸດ.

ມີຂ່າວຕື່ມວ່າ ໃນເວລາທີ່ພວກເຮົາພວມຖືກຈັບໄປຂັງຄຸກຢູ່ນັ້ນ ພວກພະສົງໂດຍມີອາຈານໃຫຍ່ ມະຫາບົວຄຳ ວໍລະເພັດ ນຳໜ້າ ໄດ້ພາກັນລວມຊຸມນຸມ ທວງໃຫ້ພວກປະຕິການປ່ອຍພວກເຮົາອອກຄຸກຍ້ອນວ່າບໍ່ມີຄວາມຜິດຫຍັງ. ພວກປະຕິການສົ່ງໃຫ້ຕຳຫຼວດໄປຫ້າມ, ພະສົງສາມະເນນບໍ່ຟັງກໍ່ເລີຍເກີດການປະທະກັນໃຫຍ່ຂຶ້ນ ; ພະສົງສາມະເນນວັດຕ່າງໆໄດ້ຕ້ານໄມ້ຄ້ອນຂອງຕຳຫຼວດດ້ວຍຄັນຮົ່ມ ແລະ ກ້ອນດິນຈີ່ ທັງແຫ່ກັນໄປລວມຢູ່ວັດສີຖານເໜືອບ່ອນອາຈານໃຫຍ່ມະຫາບົວຄຳ ວໍລະເພັດ ເປັນເຈົ້າອາວາດ, ເປັນຫົວໜ້າໂຮງຮຽນ ປະລິຍັດຕິທຳ ທັງເປັນປະທານຄະນະສຶກສາພະສົງທົ່ວປະເທດ. ຕຳຫຼວດອ້ອມຢູ່ທາງນອກ ໃຊ້ວິທີຕ່າງໆເພື່ອນາບຂູ່, ພະສົງບໍ່ຍອມເຊົາ ແລະ ສືບຕໍ່ເທສະໜາສັ່ງສອນພວກຕຳຫຼວດວ່າພະສົງເປັນຜູ້ຖືສິນທຳ, ສະໜັບສະໜູນຜູ້ມີສິນທຳ, ເຄີຍສັ່ງສອນຄົນໃຫ້ປະຕິບັດສິນທຳມາແລ້ວ ຕັ້ງຫຼາຍສະຕະວັດ, ເປັນຫຍັງຕຳຫຼວດເຊິ່ງສ່ວນຫຼາຍກໍ່ຖືພຸດທະສາສະໜາ ຫຼື ເຄີຍສຶກອອກໄປຈາກວັດ, ມາດຽວນີ້ຈຶ່ງໄປຟັງຄວາມພວກປະຕິການອະທຳ ມານາບຂູ່ພະສົງສາມະເນນ ? ເຮັດແນວອື່ນຍັງວ່າຢ້ານບາບ, ບາດມາປາບພະສົງເຊິ່ງແມ່ນປາບພຸດທະສາສະໜາເອງ ຊ້ຳພັດບໍ່ຢ້ານບາບບໍ ? ພວກຕຳຫຼວດອ່ອນໂຍບລົງບໍ່ກ້າປາບພະສົງສາມະເນນ, ເອົາຕຳຫຼວດຜູ້ອື່ນມາປ່ຽນກໍ່ເປັນແນວດຽວກັນ. ພວກປະຕິການຈຳຕ້ອງສັ່ງເລີກການປິດລ້ອມວັດ, ແຕ່ຫາກອອກຂໍ້ຄຳລັດປົດອາຈານໃຫຍ່ມະຫາບົວຄຳ ວໍລະເພັດ ອອກຈາກຫົວໜ້າໂຮງຮຽນ ປະລິຍັດຕິທຳ ແລະ ປະທານຄະນະສຶກສາສົງທົ່ວປະເທດ, ມາຮອດນີ້ພວກເຮົາໂຕນອອກຈາກຄຸກ ສະພາບການກໍ່ຍັງເຄັ່ງຕຶງຢູ່.

ໃນເວລາພັກຜ່ອນຢູ່ສຳນັກປະຕິວັດແຫ່ງນີ້ ພວກເຮົາໄດ້ປິ່ນປົວຜູ້ເຈັບປ່ວຍ ແລະ ຫ້າງເອົາເຄື່ອງຂອງທີ່ຈຳເປັນເພື່ອສືບຕໍ່ເດີນທາງ, ອ້າຍນ້ອງຈຳນວນໜຶ່ງໄປຕັດເອົາເຄືອຫວາຍແຍ້ມາເຫຼົາ, ເອົາເປັນຜູ້ສານເປັນເປ້ຍາຍກັນຄົນລະໜ່ວຍ, ເອົາຜ້າຂາວມາມັດເປັນສາຍ, ເອົາຜ້າມີລົງຮອງພື້ນ ແລ້ວກໍ່ເອົາເຄື່ອງຂອງທີ່ຈະໃຊ້ໃນການເດີນທາງນັ້ນຍັດໃສ່ ; ເຄື່ອງຂອງແຕ່ລະຄົນມີໂສ້ງເສື້ອຍາວຫຍິບດ້ວຍຜ້າກາກີໜຶ່ງຊຸດ, ຖົງເທົ້າສຳຮອງໜຶ່ງຄູ່, ຜ້າເຊັດໜ້າໜຶ່ງຜືນ, ຜ້າຊູ້ພອນທັງສາຍຈອງເພື່ອມັດໜຶ່ງຜືນ, ໂສ້ງເສື້ອຊ້ອນໃນໜຶ່ງຊຸດ, ຜ້າມີລົງກັນຝົນໜຶ່ງແຜ່ນ, ເກີບປາອີຣີໜຶ່ງຄູ່, ແປງພັດແຂ້ວສອງອັນ, ຢາພັດແຂ້ວ 2 ຫຼອດ, ສະບູຊັກ ແລະ ສະບູຫອມຜູ້ລະກ້ອນ, ທຽນໄຂນ້ອຍຜູ້ລະຫໍ່, ກັບຂີດຜູ້ລະ 5 ກັບ, ໂຄມບິບໜຶ່ງອັນພ້ອມທັງຖ່ານໄຟສາຍ ໔ ຄູ່, ເຂົ້າສານໃສ່ໄຫຜູ້ລະ 4 ກິໂລ, ນ້ຳນົມຜູ້ລະ 2 ກະປ໋ອງ, ເກືອໃສ່ຖົງນີລົງຜູ້ລະເຄິ່ງກິໂລ, ປາແດກເຄື່ອງຜູ້ລະກິໂລ. ແຕ່ລະຄົນນຸ່ງເອົາໂສ້ງເສື້ອຍາວ ສີ

ກາກີ້ທັງຊຸດ, ຖືໝວກທີ່ເຮັດດ້ວຍຜ້າມີລົງດິນລະໜ່ວຍ, ເກີບຜ້າສີນ້ຳຕານພ້ອມດ້ວຍຖົງເທົ້າມີລົງຜູ້ລະຄູ່, ໄມ້ຄອນເທົ້າຫວາຍ ຫຼື ໄມ້ຜູ້ລະອັນ. ແຕ່ວ່າເກີບຜ້າທີ່ຊື້ມານັ້ນນ້ອຍໂພດ, ເຮົາຖືບໍ່ໄດ້ຈັກຄູ່, ເຮົາຈຶ່ງຈຳເປັນຕ້ອງຖືເກີບປາອິຣເດີນທາງ, ຈະສົ່ງຄືນໄປຊື້ຕື່ມ ກໍ່ຈວນເວລາຈະອອກເດີນທາງແລ້ວ ແລະ ໄປມາຫຼາຍເທື່ອຢ້ານຈະເສຍຄວາມລັບ, ເພາະວ່າທະຫານສັດຕູກອງຮ້ອຍໜຶ່ງມາຕັ້ງຢູ່ບ້ານນາຍາງແລ້ວ.

ເດືອນເຈັດແຮມເປັນລະດູຝົນແລ້ວ. ຝົນຕົກລົ້ນນັບມື້ນັບແຮງ, ມື້ຟ້າແດດນ້ອຍທີ່ສຸດ, ພວກເຮົາຕົກລົງອອກເດີນທາງຕໍ່ໄປ, ຫຼັງຈາກໄດ້ສະແດງຄວາມຂອບອົກຂອບໃຈ ອັນຈິງໃຈຂອງພວກເຮົາຕໍ່ຄະນະຮັບຜິດຊອບ ແລະ ອ້າຍເອື້ອຍນ້ອງທຸກຄົນທີ່ໄດ້ຕ້ອນຮັບ ແລະໃຫ້ການຊ່ວຍເຫຼືອແກ່ພວກເຮົາ. ກ່ອນຈະອອກເດີນທາງ ພວກເຮົາກໍ່ລະດົມກຳລັງໃຈ ອ້າຍນ້ອງທຸກຄົນ ແລະ ເວລາພວມເດີນທາງກໍ່ສືບຕໍ່ລະດົມໃຫ້ກຽມຈິດໃຈໄວ້ສູ້ທົນ ຄວາມທຸກຍາກລຳບາກທຸກເວລາ, ເພາະວ່າພວກເຮົາຈະບໍ່ສູ້ໄດ້ເດີນຕາມເສັ້ນທາງສະດວກ ເພື່ອຮັກສາຄວາມລັບ, ບາງທີຈະໄດ້ປະທະກັບສັດຕູທີ່ພວມແລ່ນຊອກຫາພວກເຮົາຢູ່ທຸກຈອກທຸກແຈ ; ພວກເຮົາຕ້ອງເພີ່ມທະວີສະຕິລະວັງຕົວຂຶ້ນເລື້ອຍໆແລະ ຄວາມປະຕິຍານຂອງພວກເຮົາວ່າ ຈະເປັນຕາຍຮ່ວມກັນຍັງມີຄຸນຄ່າຢູ່ສະເໝີ.

ສິ່ງທີ່ໄຄກວ່າເວລາຫາກໍ່ໂຕນອອກຈາກຄຸກ ແມ່ນພວກເຮົາໄດ້ເດີນທາງມື້ສວາຍ ແລະ ໄດ້ກຽມເຄື່ອງຂອງພຽງພໍແລ້ວ ; ໃກ້ຈະຄ່ຳມືດຈຶ່ງພາກັນພັກເຊົາແຄມຫ້ວຍນ້ຳ ເພື່ອຕົ້ມເຂົ້າ ແລະ ອຸ່ນຂອງກິນທີ່ຖືໄປກ່ອນແລ້ວ, ບາງທີກໍ່ມີຕົ້ມເຄັມຊຸມພູ, ບາງທີກໍ່ແມ່ນ ຊີ້ນງົວແຫ້ງກັບແຈ່ວບອງ, ບາງທີກໍ່ແມ່ນພິກປາແດກກັບປາປິ້ງ ທີ່ອ້າຍນ້ອງທະຫານໄປຂໍເອົາມານຳພະນັກງານແກ່ນສານຢູ່ໃນບ້ານຕ່າງໆ ທີ່ບໍ່ໄກຫົນທາງ.

ພວກເຮົາໄດ້ພົບກັບປະຊາຊົນເທື່ອທຳອິດ ແມ່ນຢູ່ສຳນັກຕາແສງນ້ຳຕອນ ທີ່ຕັ້ງຢູ່ປ່າດົງໃຫຍ່ແຫ່ງໜຶ່ງ, ມີປະຊາຊົນປຸກຕູບຢູ່ກອງຕົ້ນໄມ້ໃຫຍ່ທີ່ຮົ່ມເຢັນ ເພື່ອຫຼົບຫຼີກເຮືອບິນສັດຕູ, ສິ່ງທີ່ເປັນໜ້າພາກພູມໃຈໃຫ້ແກ່ເຮົາແມ່ນ ໄດ້ເຫັນເອື້ອຍນ້ອງກອງຫຼອນເພດຍິງ ຈັບປືນຢືນຍາມຢູ່ບ່ອນທາງເຂົ້າປ່າດົງທີ່ສຳນັກງານຕັ້ງຢູ່ ແລະ ເຫັນເອື້ອຍອ້າຍນ້ອງອີກຫຼາຍຄົນ ແລ່ນເຂົ້າອອກເພື່ອຄົວກິນໃຫ້ພວກເຮົາກິນເຂົ້າງາຍ. ພວກຊາວໜຸ່ມທີ່ຫາວຫັນດັ່ງກ່າວນັ້ນ ໄດ້ເວົ້າອິບອຸ່ນພວກເຮົາວ່າ : "ພວກຫຼານໄດ້ມາຢູ່ທີ່ນີ້ໄດ້ຫຼາຍເດືອນແລ້ວ, ຄົນຫຼາຍບ້ານໄດ້ອອກມາຢູ່ປ່າແນວນີ້, ແຕ່ລະນີ້ໄດ້ແຕ່ງຊາວໜຸ່ມຈຳນວນໜຶ່ງອອກໄປເຮັດນາ ແລະ ຜູ້ທີ່ເປັນກອງຫຼອນເຄື່ອນທີ່ ໄດ້ອອກລາດຕະເວນໃນຂອບເຂດບ້ານຂອງໃຜລາວ ເພື່ອດັກສະກັດລັດຕີສັດຕູ, ພວກລຸງມາຮອດທ້ອງຖິ່ນພວກຫຼານແລ້ວ, ພວກຫຼານຍິນດີຕ້ອນຮັບພວກລຸງ, ຂໍໃຫ້ພວກລຸງຈົ່ງເຊື່ອໝັ້ນ ແລະ ອຸ່ນທ່ຽງ, ພວກຫຼານຮັບປະກັນຄວາມປອດໄພໃຫ້ແກ່ພວກລຸງຮ້ອຍສ່ວນຮ້ອຍ".

ຫາກໍ່ໂຕນພົ້ນອອກຈາກຄຸກມາໃໝ່ໆ ເຮົາມາໄດ້ຍິນຄວາມເວົ້າແນວນີ້ ຈາກປະຊາຊົນລາວຜູ້ໜຸ່ມ

ນ້ອຍ, ເປັນຕົ້ນແມ່ນຈາກເອື້ອຍນ້ອງກອງຫຼອນເພດຍິງ, ຈຶ່ງແມ່ນເປັນການອົບອຸ່ນຈິດໃຈຢ່າງໃຫຍ່ຫຼວງໃຫ້ແກ່ເຮົາແທ້.

ອ້າຍນ້ອງກອງຫຼອນຂອງແຕ່ລະບ້ານ ໄປລາດຕະເວນລ່ວງຫາກັນເປັນປົກກະຕິຕາມສາຍທາງທີ່ພວກເຮົາຈະເດີນໄປຫາສໍານັກງານແຂວງວຽງຈັນ. ພວກຂະເຈົ້າ ໄດ້ເລົ່າສະພາບການຂອງສັດຕູໃຫ້ພວກເຮົາຟັງຢ່າງລະອຽດ. ຫຼັງຈາກກິນເຂົ້າງາຍທີ່ມີລາບປາ, ຕົ້ມໄກ່ ແລະ ພິກປາແດກທີ່ແຊບນົວ ແລະ ເວົ້າລົມກັນຢ່າງມ່ວນຊື່ນເບີກບານກັບປະຊາຊົນທີ່ນັ້ນແລ້ວ, ເວລາ 5 ໂມງແລງ ພວກເຮົາໄດ້ອອກເດີນທາງຕໍ່ໄປ. ອອກຈາກປ່າດົງນີ້ ພວກເຮົາຍ່າງຂ້າມທົ່ງນາແຄມນ້ຳຕອນ ທີ່ຊາວໜຸ່ມພວນໄທແລະຄາດຢູ່. ຫຼຽວເບິ່ງພວກບ້ານທີ່ຢູ່ໃກ້ຄຽງເຮືອນໃດກໍອັດປະຕູໄວ້ແລ້ວເຈົ້າຂອງໜີໄປຢູ່ລຸ້ງພົດ ເພື່ອຫຼົບຫຼີກການກວາດລ້າງ ແລະ ເຮືອບິນຂອງສັດຕູ. ຝົນຕົກລົມເຮັດໃຫ້ນ້ຳຕອນນອງເກືອບເຕັມຝັ່ງ ເຮັດໃຫ້ຟາຍນ້ຳ ທີ່ຕົ້ນເປັນຫຼາຍຍ່ານ ປານເອົານ້ຳເຂົ້າໃສ່ນາຕາມສອງຝັ່ງຢ່າງພຽງພໍ. ຝົນຕົກທາງນີ້ ແລະຕົວທາກອົບຫຼາຍປານໃດ ພວກເຮົາກໍຖືປີ້ສັກຄອນເທົ້າເດີນໄປຢ່າງສະຫງ່າຜ່າເຜີຍ ເພາະວ່າພວກເຮົາເດີນໄປສູ່ອະນາຄົດອັນແຈ້ງໃສ ພາຍໃນຂອບຟ້າອັນກວ້າງຂວາງສຸດຊື່ວຕາ. ເດີນໄປອີກສອງຊົ່ວໂມງ ພວກເຮົາເຂົ້າໄປພັກນອນໃນປ່າດົງແຄມຫ້ວຍນ້ຳ. ຫຼັງຈາກກິນແລງດ້ວຍອາຫານທີ່ຄະນະຕາແສງນ້ຳຕອນໄດ້ຫໍ່ໃຫ້ພວກເຮົານັ້ນແລ້ວ ພວກເຮົາຕ່າງຄົນກໍຕ່າງໄຂເອົາແພຈຸ່ອອກຈາກເປມາ. ເອົາສາຍພາຈອງສອດໃສ່ສອງສົ້ນ ແລ້ວກໍມັດໃສ່ສອງຕົ້ນໄມ້ ທີ່ຫ່າງກັນພໍດີ, ເອົາເຊືອກອີກເສັ້ນໜຶ່ງມັດເບື້ອງແຕ່ຕົ້ນຫົວນອນໄປຫາຕົ້ນປາຍຕີນ, ເອົາໄມ້ນ້ອຍ 4 ຕົ້ນມາປັກໃສ່ສອງຂ້າງ, ມັດມຸ້ງໃສ່, ເອົາຜ້າຢາງກັນຝົນປົກໃສ່, ເອົາເປມາມັດໃສ່ຕົ້ນໄມ້ຫົວນອນແລ້ວກໍນອນຈົນຮອດ 5 ໂມງເຊົ້າມື້ໃໝ່ຈຶ່ງປຸກກັນລຸກ, ລ້າງໜ້າປັ້ນເຂົ້າເປັນຮອງທ້ອງແລ້ວກໍອອກເດີນທາງລັດປ່າດົງໄປ, ຮອດ 5 ໂມງແລງຈຶ່ງເຊົາຕົ້ມເຂົ້າກິນແລ້ວນອນຄືນກ່ອນນັ້ນ.

ຫ້າມຈຳໜ່າຍ

ພວກເຮົານອນທາງສອງຄືນຈຶ່ງໄປຮອດສໍານັກງານແຂວງວຽງຈັນ. ຄວາມດີໃຈຂອງພວກເຮົາຍິ່ງໃຫຍ່ຫຼວງໃນເມື່ອໄດ້ພົບສະຫາຍທິດມ່ວນ ສາວຈັນທະລາ ທີ່ເປັນປະທານແຂວງ ແລະ ໄດ້ເຫັນອ້າຍເອື້ອຍນ້ອງຫຼາຍຄົນທີ່ລຶ້ງເຄີຍກັນ ແຕ່ປາງໄປຮ່ວມກອງປະຊຸມໃຫຍ່ ແນວລາວຕໍ່ຕ້ານໃນເດືອນ ສິງຫາ 1950. ຕ່າງຄົນກໍຕ່າງສະແດງຄວາມຊື່ນມ່ວນຕໍ່ກັນຢູ່ທຸກຈອກທຸກແຈ ຂອງສໍານັກງານແຂວງ. ພວກເຮົາພັກຢູ່ນໍາສະຫາຍທິດມ່ວນ 5 ມື້ ເພື່ອກຽມເຄື່ອງຂອງທີ່ຂາດເຂີນ ແລະ ເຊົາເມື່ອຍເອົາແຮງເພື່ອເດີນທາງຕໍ່ໄປ. ຮອດບ່ອນນີ້ແລ້ວ ພວກເຮົາຍິ່ງຮູ້ສຶກປອດໄພກວ່າບ່ອນເກົ່າ ເພາະວ່າບໍ່ມີຄ້າຍທະຫານສັດຕູຢູ່ໃກ້ຄຽງ, ທະຫານຫຼວງ ແລະ ທະຫານທ້ອງຖິ່ນຂອງແຂວງມີຈໍານວນຫຼາຍ, ອາວຸດຊະນິດດີງຄົບມື ; ປະຊາຊົນທຸກບ້ານອ້ອມແອ້ມນັ້ນ ມີຄວາມຕື່ນຕົວທາງການເມືອງສູງ, ໄດ້ຈັດຕັ້ງທະຫານລາດກອງຫຼອນໄວ້

ທຸກບ້ານ, ກຽມພ້ອມເພື່ອປ້ອງກັນເຂດທີ່ໝັ້ນ ແລະ ເຮັດການເພີ່ມພູນພະລິດຜົນ ເພື່ອກຸ້ມຕົນເອງ ແລະ ລ້ຽງພະນັກງານກັບກອງທະຫານທີ່ຫ່າງເຫີນຈາກການທຳມາຫາກິນ. ນີ້ສະແດງໃຫ້ເຫັນວ່າ ບັນດາສະຫາຍໃນສູນກາງພັກ ທີ່ເອົາຕົວລອດອອກມາຢູ່ທາງນອກ ໄດ້ນຳພາຄະນະພັກແຂວງຕ່າງໆ ຟື້ນຟູເຂດທີ່ໝັ້ນກອງຫຼອນ ພ້ອມທັງກຳລັງການເມືອງ ແລະ ກຳລັງປະກອບອາວຸດທີ່ສັດຕູນາງເພ ພວມພວກເຮົາເຂົ້າຮ່ວມລັດຖະບານປະສົມຄືນມາ ດ້ວຍລະດັບສູງກວ່າເກົ່າ. ຢູ່ແຂວງວຽງຈັນແມ່ນຄະນະພັກແຂວງ ໂດຍແມ່ນສະຫາຍ ທິດມ່ອນ ສາວຈັນທະລາເອງເປັນເລຂາ ສົມທົບກັບສະຫາຍ ສາລີ ວົງຄຳຊາວ ທີ່ສູນກາງສົ່ງມາສ້າງພື້ນຖານປະຕິວັດໃນຕົວເມືອງວຽງຈັນ ແລະ ນອກຕົວເມືອງໃຫ້ເຊື່ອມຕິດກັບເຂດພື້ນຖານຂອງແຂວງ - ເພື່ອກຽມວາງເສັ້ນທາງ ແລະ ຊ່ວຍໃຫ້ພວກເຮົາໂຕນອອກຈາກຄຸກໄດ້.

ຢູ່ນຳສະຫາຍທິດມ່ອນ ພວກເຮົາຮູ້ສຶກວ່າມ່ວນສົມຊື່ແທ້. ທຸກວັນມີແຕ່ເລົ່າບົດຮຽນ ໃນການກໍ່ສ້າງປັບປຸງພື້ນຖານການເມືອງ ແລະ ຕ້ານການກວາດລ້າງປຸ້ນສະດົມຂອງສັດຕູ ສູ້ກັນຟັງ. ແຕ່ລະຄາບເຂົ້າເຕັມໄປດ້ວຍລາບປາ, ລາບຊີ້ນ ສັດປ່ານາໆຊະນິດທີ່ອ້າຍນ້ອງພະນັກງານໄປຫາເອົາມາ. ມື້ພວກເຮົາມາຮອດ ແລະ ມື້ພວກເຮົາຈະຈາກໄປ ໄດ້ມີການກິນລ້ຽງສົ່ງຢ່າງໃຫຍ່, ມີທັງເຫຼົ້າ ແລະ ເຂົ້າໜົມທີ່ຢຶດໄດ້ມາຈາກສັດຕູ, ມີການເສບຮຳ ທຳເພັງ ແລະ ຟ້ອນລຳວົງກັນຈົນເກືອບທ່ຽງຄືນຈຶ່ງເຊົາ. ນີ້ຈັ່ງແມ່ນຊີວິດອິດສະຫຼະແທ້ ທີ່ປະຊາຊົນລາວໄດ້ເສຍສະຫຼະເລືອດເນື້ອ ແລະ ຊີວິດເພື່ອຍາດເອົາມາທັງໃຫ້ພວກຂະເຈົ້າເອງ ແລະ ໃຫ້ແກ່ພວກເຮົາອີກດ້ວຍ.

ສະຫາຍທິດມ່ອນບອກໃຫ້ພວກເຮົາຮູ້ວ່າ ຕັ້ງແຕ່ບ່ອນນີ້ໄປພວກເຮົາເດີນທາງມີສວາຍໄດ້, ໃນດິນແຂວງວຽງຈັນ, ແຂວງຫຼວງພະບາງ ແລະ ຊຽງຂວາງກໍ່ມີເຂດປອດໄພຄືດຽວກັນ , ແຕ່ວ່າໃຫ້ຫຼີກບໍ່ເຂົ້າບ້ານຄົນ ເພື່ອຮັກສາຄວາມປອດໄພ. ພວກເຮົາໄດ້ສະແດງ ຄວາມຂອບອົກຂອບໃຈອັນຈິງໃຈ ແລະ ສັ່ງລາສະຫາຍທິດມ່ອນ, ສະຫາຍສາລີ ວົງຄຳຊາວ ແລະ ຄະນະພັກແຂວງທຸກຄົນ ແລ້ວພວກເຮົາພ້ອມກັນອອກເດີນທາງເວລາ 7 ໂມງເຊົ້າ. ຫົນທາງໄປຕາມທົ່ງພຽງ, ບໍ່ໄດ້ຂຶ້ນພູ, ອອກຈາກທົ່ງນາທີ່ປະຊາຊົນພວມໄຖຢູ່, ພວກເຮົາໄດ້ຜ່ານປ່າໄມ້ໄຜ່, ປ່າໂຄກ ແລະ ປ່າດົງຕິດຕໍ່ກັນ. ທາງພື້ນດິນມີຕົວທາກຫຼາຍຄືເກົ່າ ເພາະວ່າແມ່ນລະດູຝົນແລ້ວ ໃບໄມ້ ແລະ ໃບຫຍ້າຊຸ່ມອິ່ນ, ແຕ່ພວກເຮົາບໍ່ຢ້ານອີກແລ້ວ, ມັນຂຶ້ນຂາຜູ້ໃດພວກເຮົາກໍ່ເອົາຢາຂ້າທາກທີ່ຄະນະແຂວງໄດ້ກຽມໃຫ້ພວກເຮົາແຕ່ລະຄົນນັ້ນ ຕີໃສ່ມັນກໍ່ຕົກກະຫຼ່ອຍລົງ ; ຢາຂ້າທາກນັ້ນແມ່ນຢາດູດຕຳປະສົມນ້ຳ ແລະ ປູນ, ເອົາຜ້າບາງໆຫໍ່ມັດໃສ່ດ້ວໄມ້ຕາມປະຊາຊົນທ້ອງຖິ່ນນີ້ເຄີຍໃຊ້ໃນເມື່ອເດີນທາງ ຫຼື ເຂົ້າປ່າບ່ອນມີທາກຫຼາຍ . ເລຂາໜ່ວຍພັກ ແລະ ຫົວໜ້າຄະນະເດີນທາງຍັງແມ່ນສະຫາຍ ໜູຮັກ ພູມສະຫວັນ, ໝາຍຄວາມວ່າຄະນະທີ່ຈັດຕັ້ງຢູ່ຄຸກບໍ່ມີອັນປ່ຽນແປງ, ມີແຕ່ເອົາພະນັກງານແຂວງຜູ້ພາທາງ ແລະ

ຜູ້ບັນຊາພວກທະຫານປ້ອງກັນມາຕື່ມໃສ່ສອງ ຫຼື ສາມຄືນເທົ່ານັ້ນ. ກອງທະຫານ ໄດ້ແບ່ງອອກເປັນສອງພູ່ຍ່າງໄປກ່ອນ ແລະ ອັດແຖວທາງຫຼັງ. ພະນັກງານເມືອງ ຫຼື ຕາແສງມາຕ້ອນຮັບ ແລະ ສົ່ງພວກເຮົາຕາມເຂດແດນດິນຂອງໃຜລາວ, ຖ້າແມ່ນບ່ອນທີ່ຈະຕ້ອງ ນອນຄ້າງຄືນກໍ່ແມ່ນຂະເຈົ້າເປັນຜູ້ພາທາງພວກເຮົາເຂົ້າໄປຫາບ່ອນ ທີ່ຂະເຈົ້າກຽມເອົາເຂົ້າ - ແລະ ສະບຽງອາຫານມາໄວ້ຖ້ານັ້ນ.

ມີບາງບ້ານອ້າຍນ້ອງພະນັກງານກໍ່ພາພວກເຮົາເຂົ້ານອນບ້ານ ເຊັ່ນ ບ້ານນາເມືອງ , ປຸ່ງລັກ ແລະ ຖ້ຳແກ້ວ ບ່ອນມີຄວາມປອດໄພຮ້ອຍສ່ວນຮ້ອຍ. ມີບາງບ້ານພວກເຮົາຫຼີກອ້ອມໄປທາງປ່າ ຫຼື ເຂົ້າໄປນອນກາງປ່າເຊັ່ນ ບ້ານນ້ຳໄຮ, ບ້ານນາລັງ ແລະ ອື່ນໆ. ມີບາງບ້ານປະຊາຊົນໄດ້ແຕ່ງເຂົ້າແລງໄວ້ຕ້ອນຮັບພວກເຮົາເຊັ່ນ ບ້ານນານອນ, ບ້ານປຸ່ງລັກແລະ ບ້ານຖ້ຳແກ້ວ. ມີບາງບ້ານທີ່ພວກເຮົາໄດ້ຜ່າກາງບ້ານໄປເວລາທ່ຽງຄືນ ຄືບ້ານຫົວນາ ຫຼື ຜ່າຫາງບ້ານໄປເວລາຂອນແຈ້ງ ຄືບ້ານບວມພູກບ່ອນພວກເຮົາຂ້າມທາງເລກ 13 ເພື່ອຂຶ້ນຕາມຫ້ວຍຄ້າງໄປຈົນຮອດບ້ານຖ້ຳແກ້ວ.

x ການລັດຖະປະຫານຂອງທະຫານຮາບອາກາດຝ່າຍວຽງຈັນ ໃນວັນທີ 9/8/60

ວັນທີ 10/8/60, ໃນເວລາພວກເຮົາພັກນອນຢູ່ຕົ້ນຫ້ວຍນ້ຳແຕ່ງຫຶງ ກ່ອນຈະຂຶ້ນພູໄປຫາບ້ານຖ້ຳແກ້ວ, ພວກເຮົາຟັງວິທະຍຸວຽງຈັນໄດ້ຍິນວ່າ ກອງພັນທະຫານຮາບ ອາກາດບັນຊາໂດຍຮ້ອຍເອກກອງແລ, ຮ້ອຍໂທເດືອນ ສຸນນະລາດ ແລະ ຮ້ອຍຕີທຽບ ລິດທິເດດໄດ້ພ້ອມກັນເຮັດລັດຖະປະຫານໂຄ່ນລົ້ມລັດຖະບານປະຕິການ ຂອງເຈົ້າສົມສະນິດວົງ ແລ້ວຈັດຕັ້ງລັດຖະບານໃໝ່ຂຶ້ນ ໂດຍແມ່ນເຈົ້າສຸວັນນະພູມາເປັນນາຍົກ ແລະ ປະກອບດ້ວຍລັດຖະມົນຕີຜູ້ກ້າວໜ້າຫຼາຍຄົນເຊັ່ນ ທ່ານກິນີມ ພົນເສນາ, ທ່ານຄຳສຸກ ແກ້ວລາ ແລະ ອື່ນໆອີກ. ຄະນະລັດຖະປະຫານ ແລະ ລັດຖະບານໃໝ່ໄດ້ອອກຄຳສັ່ງ ໃຫ້ກອງທະຫານຝ່າຍວຽງຈັນຢຸດເຊົາບໍ່ຕີກັບກອງທະຫານຂອງຝ່າຍແນວລາວຮັກຊາດອີກ ແຕ່ຕ້ອງໃຫ້ຮ່ວມມືກັບຝ່າຍແນວລາວຮັກຊາດ ຕີຕາມຈັກກະພັດອາເມລິກາ ເພື່ອປົດປ່ອຍປະເທດລາວໃຫ້ເປັນເອກະລາດຢ່າງແທ້ຈິງ.

ພວກເຮົາບໍ່ທັນເອົາໃຈໃສ່ລັດຖະປະຫານນີ້ເທົ່າໃດ ເພາະວ່າພວກເຮົາ ເຄີຍລັດຖະປະຫານກັນມາຫຼາຍເທື່ອແລ້ວ ແຕ່ພວກເຮົາກໍ່ຕ້ານແນວລາວຮັກຊາດຢູ່ຄືເກົ່າ. ຕື່ນເຊົ້າມາ ຫຼັງຈາກປັ້ນເຂົ້າເຊົ້າແລ້ວ ກໍ່ພາກັນຂຶ້ນພູໄປຫາບ້ານຖ້ຳແກ້ວ. ປະຊາຊົນບ້ານນີ້ຫຼາຍ, ພວກຂະເຈົ້າຕ້ອນຮັບ, ລ້ຽງເກືອ ແລະ ຈັດການປ້ອງກັນພວກເຮົາຢ່າງເຄັ່ງຄັດ.

ເວລາພັກຢູ່ບ້ານຖ້ຳແກ້ວ ພວກເຮົາໄດ້ຍິນວິທະຍຸກະຈາຍສຽງວຽງຈັນ ອ່ານຄຳສັ່ງໃຫ້ທະຫານຂອງເຂົາທຸກໜ່ວຍຢຸດເຊົາການຕີກັນ ກອງທະຫານຝ່າຍແນວລາວຮັກຊາດ ແລະອ່ານຄຳຮຽກຮ້ອງຂອງລັດຖະບານສະເໜີໃຫ້ແນວລາວຮັກຊາດ ຮ່ວມມືກັນຕີຕ້ານພວກຈັກກະພັດອາເມລິກາ. ພວກເຮົາໄດ້ຮຽກປະຊຸມກັນ ເພື່ອຕີລາຄາການລັດຖະປະຫານ ແລະ ລັດຖະບານໃໝ່ນີ້ວ່າຈະເປັນແນວໃດແທ້ ? ກອງພັນທະຫານຮາບອາກາດກອງນີ້ ແມ່ນຈັກກະພັດອາເມລິກາຈັດຕັ້ງຂຶ້ນ ແລະ ລ້ຽງດູແບບພິເສດ ເພື່ອເອົາໄວ້ເປັນກຳລັງພິເສດຂອງເຂົາ, ເປັນຫຍັງຈຶ່ງເຮັດລັດຖະປະຫານ ແລ້ວປະກາດຕ້ານພວກເຂົາແນວນີ້ ? ຮ້ອຍເອກກອງແລ, ຮ້ອຍໂທເດືອນ ແລະຮ້ອຍຕີຫຽບ ແມ່ນຄົນແນວໃດ ແລະ ຄົນຂອງໃຜແທ້ ? ເວລານັ້ນ ພວກເຮົາໄດ້ຮັບໂທລະເລກມາຈາກສູນກາງພັກວ່າ ໃຫ້ພວກເຮົາແບ່ງກັນກັບຄືນໄປວຽງຈັນ ເພື່ອຮ່ວມມືກັບລັດຖະບານສູວັນນະພູມາ ແລະ ຄະນະລັດຖະປະຫານຕ້ານຈັກກະພັດອາເມລິກາ. ພວກເຮົາຈຶ່ງຕົກລົງໃຫ້ສະຫາຍ ໜູຮັກ ພູມສະຫວັນ, ສະຫາຍ ພູນ ສີປະເສີດ, ສະຫາຍສີຊະນະ ສີສານ, ສະຫາຍສິງຄະໂປ ສີໂຄດຈຸນະມາລີ, ເຮົາເອງ ແລະ ອ້າຍນ້ອງຈຳນວນໜຶ່ງ ກັບຄືນໄປເຈລະຈາຮ່ວມມືກັບລັດຖະບານສູວັນນະພູມາ. ພວກທີ່ບໍ່ຄືນໄປວຽງຈັນ ໃຫ້ສືບຕໍ່ເດີນທາງໄປຫາສູນກາງພັກ.

ມື້ລູນມາພວກເຮົາອອກຈາກບ້ານຖ້ຳແກ້ວ ໄປນອນບ້ານນາພາເມືອງກາສີ. ຕື່ນເຊົ້າມື້ໃໝ່ມາພວກເຮົາສືບຕໍ່ເດີນທາງໄປຕາມເສັ້ນທາງເກົ່າ. ເທື່ອນີ້ພວກເຮົາມີຄວາມສະດວກ - ຫຼາຍ ເພາະວ່າໄດ້ໄປມື້ສວາຍຢ່າງເປີດເຜີຍ. ປະຊາຊົນທີ່ຢູ່ບ້ານຕາມທາງໄປນັ້ນ ໄດ້ພາກັນອອກມາຢູ່ບ້ານ ແລະ ຕ້ອນຮັບພວກເຮົາດ້ວຍຄວາມຮັກແພງ ແລະ ມ່ວນຊື່ນ. ກາຍບ້ານປຸ່ງລັກ, ນ້ຳໄຮ, ນາລັງ ໄປ ພວກເຮົາໄດ້ພົບພວກນັກໂທດທີ່ລັດຖະບານສູວັນນະພູມາປ່ອຍໃຫ້ກັບເມືອບ້ານ. ປະຊາຊົນຜູ້ເຂົ້າໄປຮັບເອົາອາວຸດນຳລັດຖະບານໃໝ່ມານັ້ນ ໄດ້ເວົ້າໃຫ້ພວກເຮົາຟັງວ່າ ລັດຖະບານນັ້ນ ແລະ ຄະນະລັດຖະປະຫານປະພຶດຕົວດີຕໍ່ປະຊາຊົນ ແລະບໍ່ເອົາຕຳຫຼວດໄປຄວບຄຸມເຮືອນຄອບຄົວສູນກາງແນວລາວຮັກຊາດອີກແລ້ວ. ຂ່າວນີ້ ເຮັດໃຫ້ພວກເຮົາດີໃຈຫຼາຍ. ບາດນີ້ພວກເຮົາເດີນທາງບໍ່ອິດເມື່ອຍຄືແຕ່ກ່ອນ ເພາະວ່າ ນອງເຫັນອະນາຄົດອັນແຈ້ງສະຫວ່າງກວ່າເວລາໂຕນອອກຄຸກ, ຫວັງວ່າຈະໄດ້ເຫັນໜ້າພຸຍ ຊະນະນິກອນ ຜູ້ເປັນຄູ່ອາຄາດໃນຖານະອັນໃໝ່. ຍາມນັ້ນຈຶ່ງນອງເຫັນຄວາມສວຍງາມ ຂອງຕົ້ນໄມ້ນາໆຊະນິດທີ່ປົ່ງໃບຂຽວອຸ່ມທຸ່ມເໝືອນດັ່ງວ່າຫົວແຍ້ມຕ້ອນຮັບພວກເຮົາ. ຝູງນົກນ້ອຍໃຫຍ່ ແລະແມງໄມ້ທັງນ້ອນຮ້ອງສຽງຕ່າງກັນເນືອງນັນໃນປ່າ ເຊິ່ງພວກເຮົາປະກົດວ່າ ບໍ່ໄດ້ຍິນເມື່ອກ່ອນນີ້ເປັນສຽງມ່ວນອອນຊອນເຮັດໃຫ້ການເດີນທາງບໍ່ອິດເມື່ອຍ.

ພໍພວກເຮົາໄປຮອດບ້ານນາເມືອງ ມີປະຊາຊົນບ້ານນ້ຳໄຮຂີ່ມ້າແລ່ນໄປບອກ ພວກເຮົາວ່າ ທ່ານຮ້ອຍໂທເດືອນ ສູນນະລາດ ພວມເອົາເຮືອບິນເອລີກັບແຕ ໄປຖ່ຽວຊອກຫາພວກ

ເຮົາເພື່ອຈະເຊີນໄປຮ່ວມມືກັນ ; ເຂົາຈະໄປຮອດບ້ານປຸ່ງລັກ ແລະ ເມືອງກາສີແລ້ວຈະກັບມາ, ຖ້າປະຊາຊົນເຫັນພວກເຮົາຢູ່ບ່ອນໃດຂໍໃຫ້ເຊີນພວກເຮົາຢູ່ລໍຖ້າເຂົາ. ພວກເຮົາໄດ້ເວົ້າຕອບປະຊາຊົນເຫຼົ່ານັ້ນວ່າ ພວກເຮົາຍິນດີພົບ ແລະ ຈະຖ້າຢູ່ທີ່ບ້ານນາເມືອງ. ຕອນເຊົ້າມື້ຕໍ່ມາ ມີສຽງເຮືອບິນເອລິກົບແຕມາວຽນອ້ອມບ້ານນາເມືອງ ແລ້ວລົງຈອດທີ່ ກາງທົ່ງນາເໜືອບ້ານ ແລະ ບໍ່ນານກໍໄດ້ເຫັນທ່ານຮ້ອຍໂທເດືອນ ສຸນນະລາດ ມາຊອກຫາພວກເຮົາ. ເມື່ອພົບກັນແລ້ວເຂົາໄດ້ເວົ້າວ່າ ເຂົາໄດ້ນຳພາທະຫານເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານເຈົ້າສົມສະໜິດ ທີ່ເປັນລູກມືຈັກກະພັດອາເມລິກາລົງ ແລ້ວຈັດຕັ້ງລັດຖະບານໃໝ່ທີ່ແມ່ນສຸວັນນະພູມາເປັນນາຍົກລັດຖະມົນຕີ ເພື່ອເຮັດການລວມລາວໂດຍສັນຕິວິທີ ແລະ ປົກປັກຮັກສາສັນຕິພາບ ແລະ ເອກະລາດສົມບູນຢູ່ລາວ ; ລັດຖະບານໃໝ່ ແລະຄະນະລັດຖະປະຫານເຫັນວ່າຕ້ອງຮ່ວມມືກັບແນວລາວຮັກຊາດ ເພື່ອຕ້ານພວກປະຕິການທີ່ຢາກກໍ່ສົງຄາມຂຶ້ນ ໃນລາວ ; ເວົ້າແລ້ວເຂົາກໍຂໍເຊີນພວກເຮົາຂຶ້ນເຮືອບິນໄປພ້ອມເຂົາໂລດ. ພວກເຮົາປຶກສາກັນແລ້ວຈຶ່ງຕອບເຂົາວ່າ ພວກເຮົາ 5 ຄົນຈະໄປນຳເຂົາຄື ສະຫາຍໜູຮັກ ພູມສະຫວັນ, ສະຫາຍ ພູມ ສີປະເສີດ.ສະຫາຍ ສີຊະນະ ສີສານ, ສະຫາຍ ສິງກະໂປ ສີໂຄດຈູນນະມາລີ ແລະ ເຮົາເອງ, ແຕ່ວ່າຂໍໃຫ້ເຮືອບິນພາພວກເຮົາລົງທີ່ບ້ານນາຍາງ ແລະ ເຊີນຮ້ອຍເອກກອງແລ ພ້ອມດ້ວຍຄະນະມາພົບພວກເຮົາຢູ່ທີ່ນັ້ນກ່ອນ ແລ້ວພວກເຮົາຈຶ່ງພ້ອມກັນ ເດີນທາງເຂົ້າໄປເມືອງວຽງຈັນ. ທ່ານເດືອນ ສຸນນະລາດ ເຫັນດີນຳຄຳສະເໜີຂອງພວກເຮົາ.

ຫຼັງຈາກຝາກເຄື່ອງຂອງໄວ້ນຳພວກອ້າຍນ້ອງທີ່ຍັງຢູ່ ແລະ ແນະນຳໃຫ້ເດີນທາງ ໄປທາງບົກຮອດບ້ານຫົວຂົວບ່ອນພວກເຮົາຈະສົ່ງລົດມາຮັບເອົາ ແລ້ວພວກເຮົາກໍຂຶ້ນເຮືອບິນໄປນຳທ່ານເດືອນ ສຸນນະລາດ. ການເດີນທາງຂອງພວກເຮົາຄັ້ງນີ້ ທັງເຮັດໃຫ້ພວກເຮົາດີໃຈ ແລະ ວິຕົກ ; ດີໃຈຍ້ອນວ່າຫຼັງຈາກເດີນທາງໄປຢ່າງຫຍຸ້ງຍາກລຳບາກ 3 ເດືອນແລ້ວ ພວກເຮົາກັບຄືນວຽງຈັນຢ່າງສະບາຍພຽງແຕ່ 10 ນີ້ ແລະ ຈະໄດ້ເຫັນຄອບຄົວທີ່ພວກເຮົາບໍ່ຮູ້ວ່າຕົກຢູ່ໃນສະພາບການແນວໃດ ; ວິຕົກຍ້ອນວ່າ ເຮົາບໍ່ຮູ້ວ່າການເຈລະຈາກັນຈະເປັນໄປໃນຮູບໃດ ? ກອງແລແມ່ນຄົນເປັນແນວໃດ ? ພວກເຂົາເຮັດລັດຖະປະຫານ ແມ່ນເພື່ອນຳເອົາສັນຕິພາບມາສູ່ບ້ານເມືອງແທ້ບໍ ຫຼືວ່າ ແມ່ນເລ່ກົນຈັກກະພັດອາເມລິກາ ທີ່ຢາກຫາງແຮ້ວເພື່ອຈັບເອົາພວກເຮົາໄປສັງຫານຖິ້ມ ? ພວກເຮົາບໍ່ຮູ້ຈັກຄະນະລັດຖະປະຫານຈັກຄົນ, ຮູ້ຈັກແຕ່ສຸວັນນະພູມາທີ່ມີອັນຂັດແຍ້ງກັບຝ່າຍຂວາ ແລະ ຈັກກະພັດອາເມລິກາແທ້. ແຕ່ພວກນີ້ຈະປ່ອຍໃຫ້ສຸວັນນະພູມາປະຕິບັດໄປຕາມແນວຄິດຢາກລວມລາວ ເພື່ອປົກປັກຮັກສາສັນຕິພາບນັ້ນແທ້ບໍ ? ມີແຕ່ອະນາຄົດເທົ່ານັ້ນທີ່ຈະຕອບຂໍ້ວິຕົກ ແລະ ຄຳຖາມຂອງພວກເຮົາ ນັ້ນໄດ້. ພວກເຮົາໄດ້ມາເຖິງແຄມນີ້ແລ້ວ ດີຫຼືຮ້າຍກໍຕ້ອງສູ້ຊົນໄປ, ປະຊາຊົນລາວເປັນບ່ອນອີງ ແລະ ກຳລັງຂອງພວກເຮົາ. ພວກເຮົາຕ້ອງເຊື່ອໝັ້ນປະຊາຊົນ ແລະ ໃຊ້ປະຊາຊົນເປັນກຳ

ລັງປ້ອງກັນພວກເຮົາ. ໃຫ້ຂະເຈົ້າຮ່ວມມືກັບພວກເຮົາ ເພື່ອເຮັດໃຫ້ກຳລັງລັດຖະປະຫານທີ່ເກີດຂຶ້ນຢ່າງບັງເອີນນີ້ ກາຍເປັນກຳລັງອັນຖາວອນເພື່ອຮັບໃຊ້ການປະຕິວັດປົດປ່ອຍ ຊາດລາວ.

ພໍເຮືອບິນລົງຈອດກາງບ້ານນາຍາງ, ພວກເຮົາໄດ້ບອກທ່ານເດືອນ ສູນນະລາດ ເອົາເອລິກົບແຕລຳນັ້ນໄປເຊີນກອງແລ ກັບຄະນະມາພົບພວກເຮົາ. ໃນທັນໃດນັ້ນ ພວກເຮົາກໍ່ໄດ້ເຊີນບັນດາພະນັກງານແກ່ນສານໃນບ້ານນັ້ນມາລວມກັນ ໃນເຮືອນຫຼັງໜຶ່ງ ແລ້ວຊີ້ແຈງເຫດຜົນທີ່ພາໃຫ້ພວກເຮົາກັບຄືນມານັ້ນໃຫ້ທຸກຄົນເຂົ້າໃຈ ແລະ ຮຽກຮ້ອງໃຫ້ໜ່ວຍພັກ ແລະ ຄະນະຮັບຜິດຊອບບ້ານຮີບເຕົ້າໂຮມກຳລັງທັງໝົດມາປ້ອງກັນພວກເຮົາ ແລະ ຊາວບ້ານທັງມວນ, ແລະ ພ້ອມກັນນັ້ນ ກໍ່ໃຫ້ແຕ່ງຄົນໄປບອກໃຫ້ພະນັກງານບ້ານອື່ນ ເຮັດແນວດຽວກັນ ເພື່ອກຽມພ້ອມປະເຊີນໜ້າກັບທຸກເຫດການທີ່ອາດຈະເກີດຂຶ້ນ ໃນເມື່ອກອງແລກັບຄະນະ ຈະມາຫາພວກເຮົາໃນຕອນບ່າຍນັ້ນ. ສະຫາຍ ສີຊະນະ ສີສານ ແລະສິງກະໂປ ສີໂຄດຈຸນະມາລີ ໄດ້ຖືກແຕ່ງຕັ້ງໃຫ້ຮ່ວມມືກັບພະນັກງານບ້ານ ເພື່ອຈັດຕັ້ງການປ້ອງກັນດັ່ງກ່າວນັ້ນ,ທັງຈັດຕັ້ງການຕ້ອນຮັບກອງແລກັບຄະນະອີກດ້ວຍ. ບັນຍາກາດບ້ານນາຍາງໃນເວລານັ້ນ ແມ່ນຟົດຟື້ນ ແລະ ໜັກແໜ້ນເປັນໜ້າໄວ້ວາງໃຈທີ່ສຸດ.

ເວລາບ່າຍ 3 ໂມງນັ້ນ ເອລິກົບແຕໄດ້ເອົາກອງແລພ້ອມດ້ວຍຄະນະສອງຄົນ ມາລົງບ້ານນາຍາງ. ພວກເຮົາໄດ້ຮ່ວມກັບປະຊາຊົນໄປຕ້ອນຮັບ, ປະຊາຊົນໄດ້ມອບພວງດອກໄມ້ໃຫ້ເຂົາຜູ້ລະພວງ ແລະ ໂຫ່ຮ້ອງຕົບມືຊົມເຊີຍຄະນະລັດຖະປະຫານທີ່ໄດ້ຮັບໄຊຊະນະ,ເຮັດໃຫ້ບັນຍາກາດມ່ວນຊື່ນເບີກບານ ແລະ ສະໜິດສະໜົມກັນແຕ່ເມື່ອທີວທີໂລດ. ມາຮອດບ່ອນພັກຂອງພວກເຮົາແລ້ວ ທັງສອງຝ່າຍໄດ້ເປີກສາຫາລືກັນໃນການທີ່ຈະຮ່ວມມືກັນ. ກອງແລໄດ້ເວົ້າຂຶ້ນກ່ອນວ່າ : "ພວກຂ້ານ້ອຍດີໃຈຫຼາຍທີ່ພວກອາດຍາມາຮ່ວມມືນຳ ; ທາງດ້ານການທະຫານພວກຂ້ານ້ອຍໄດ້ເຮັດສຳເລັດແລ້ວ, ພວກຂ້ານ້ອຍໄດ້ເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານເຈົ້າສົມສະໜິດ ປະຕິການທີ່ເປັນລູກມືຈັກກະພັດອາເມລິກາລົງ ແລະ ໄດ້ຈັດຕັ້ງລັດຖະບານໃໝ່ທີ່ແມ່ນເຈົ້າສຸວັນນະພູມາເປັນນາຍົກ ແລະ ປະກອບດ້ວຍລັດຖະມົນຕີ ຜູ້ຮັກຊາດ, ຮັກສັນຕິພາບ ແລະ ຢາກເຮັດການລວມລາວໃຫ້ໝັ້ນຄົງຖາວອນ. ແຕ່ທາງດ້ານການເມືອງພວກຂ້ານ້ອຍບໍ່ຮູ້ຈະເຮັດແນວໃດດີ, ຂໍມອບໃຫ້ພວກອາດຍາເປັນຜູ້ພາເຮັດ ; ພວກຂ້ານ້ອຍຈະປະຕິບັດຕາມທຸກປະການ, ຂໍແຕ່ໃຫ້ພວກເຮົາພ້ອມກັນເຮັດດ້ວຍຄວາມຈິງໃຈເພື່ອໃຫ້ໄດ້ຮັບໄຊຊະນະ. ດຽວນີ້ ພູມີ ໜໍ່ສະຫວັນ ທີ່ຖືກແຕ່ງຕັ້ງໃຫ້ເປັນຮອງນາຍົກນັ້ນ ບໍ່ຍອມຮ່ວມມືນຳພວກເຮົາ ; ເຂົາໄດ້ບິນຈາກຫຼວງພະບາງໄປປະເທດໄທ, ອາດຈະແມ່ນໄປຂໍອາວຸດຍຸດທະພັນ ແລະ ກຳລັງມາຕີພວກເຮົາ. ພວກຂ້ານ້ອຍທັງໝົດຂໍປະຕິຍານວ່າ ຈະຮ່ວມມືດ້ວຍຄວາມບໍລິສຸດໃຈນຳພວກອາດຍາ. ແນວໃດຈະດີຂໍໃຫ້ພວກອາດຍາບອກ, ພວກຂ້ານ້ອຍ

ຈະປະຕິບັດຕາມທຸກປະການ." ທ່ານເດືອນ ສູນນະລາດ ກໍໄດ້ເວົ້າຕື່ມຫລາຍອັນ ທີ່ສະແດງເຖິງຄວາມຈິງໃຈອັນໜັກແໜ້ນຂອງຄະນະລັດຖະປະທານ ທີ່ຕັດສິນໃຈເປັນຕາຍຢູ່ກັບພວກເຮົາ.

ພວກເຮົາໄດ້ສະແດງຄວາມຊົມເຊີຍຄະນະລັດຖະປະທານ ທີ່ໄດ້ເຮັດວຽກ ອັນມີຄວາມໝາຍໃຫຍ່ຫລວງໃຫ້ແກ່ປະເທດຊາດນັ້ນ ໄດ້ພົບສຳເລັດຢ່າງງົດງາມ ແລະ ວ່າສູນກາງແນວລາວຮັກຊາດຂອງພວກເຮົາໄດ້ແຕ່ງຕັ້ງໃຫ້ພວກເຮົາມາຮ່ວມມືນຳດ້ວຍຄວາມຈິງໃຈ ; ພວກເຮົາຈະເຮັດຈົນສຸດຄວາມສາມາດ ເພື່ອຊ່ວຍໃຫ້ລັດຖະບານເຈົ້າສຸວັນນະພູມາ ເດີນຕາມເສັ້ນທາງອັນຖືກຕ້ອງ ເພື່ອຍາດເອົາໄຊຊະນະໃໝ່ທີ່ໃຫຍ່ຫລວງ ແລະ ງົດງາມກວ່າເກົ່າ; ຂໍໃຫ້ພວກທ່ານຈົ່ງເຊື່ອໝັ້ນໃນຄວາມບໍລິສຸດໃຈຂອງພວກເຮົາ ຄືດັ່ງພວກເຮົາໄດ້ເຊື່ອໝັ້ນ ໃນພວກທ່ານ ; ສ່ວນແຜນການລະອຽດ ແລະ ວິທີປະຕິບັດຕົວຈິງນັ້ນເຂົ້າໄປວຽງຈັນພວກເຮົາຈຶ່ງເປີກສາກັນຕື່ມ." ເປັນອັນວ່າທັງສອງຝ່າຍໄດ້ເຂົ້າໃຈກັນດີ, ຕົກລົງກັນໃນທິດທາງໃຫຍ່ ແລະ ເຊື່ອໝັ້ນວ່າການຮ່ວມມືອັນຈິງໃຈ ລະຫວ່າງພວກເຮົາຈະພາພວກເຮົາໄປເຖິງໄຊຊະນະ.

ພວກເຮົາໄດ້ເວົ້າເລື່ອງພົບຂອງການເຈລະຈາຂອງພວກເຮົາ ໃຫ້ພະນັກງານຫລັກແຫລ່ງບ້ານນາຍາງຟັງ ແລະ ບອກໃຫ້ເອົາຄວາມນີ້ໄປບອກໃຫ້ພະນັກງານບ້ານອື່ນຮູ້ນຳ ເພື່ອຜັດປ່ຽນກັນເຂົ້າໄປຢ້ຽມຢາມພວກເຮົາທີ່ວຽງຈັນ ເພາະວ່າພວກເຮົາໄດ້ຕົກລົງໃຈ ເຂົ້າໄປຢູ່ທ່າມກາງພວກຄົນປະຕິການ ເຊິ່ງເມື່ອກ່ອນນີ້ໄດ້ຈັບພວກເຮົາໃສ່ຄຸກແລ້ວ ; ນອກຈາກນັ້ນ ພວກເຮົາຍັງຂໍເພິ່ງສະຫາຍໜຶ່ງສົ່ງຈົດໝາຍຂອງພວກເຮົາໄປໃຫ້ ສະຫາຍ ສາລີ ວົງຄຳຊາວ ທີ່ເຄື່ອນໄຫວຢູ່ບໍ່ໄກຈາກບ້ານນາຍາງນີ້. ຫລັງຈາກກະກຽມທຸກສິ່ງທຸກຢ່າງແລ້ວ ພວກເຮົາ ກໍພ້ອມກັນຂຶ້ນເຮືອບິນເອລີກົບແຕນຳກອງແລ ແລະ ທ່ານເດືອນ ສູນນະລາດ ເຂົ້າໄປວຽງຈັນ. ທີ່ສະໜາມບິນວຽງຈັນ ຂະເຈົ້າໄດ້ຈັດລົດພ້ອມທັງຄົນຂັບໄວ້ໃຫ້ພວກເຮົາຄົນລະຄັນ ເພື່ອໃຫ້ແຕ່ລະຄົນກັບເມືອເຮືອນໃຜເຮືອນລາວ, ນັດກັນມື້ອື່ນເຊົ້າຈຶ່ງພົບກັນຢູ່ທີ່ຄ້າຍທະຫານອາກາດໃກ້ສະໜາມບິນວັດໄຕ.

ທີ່ສະໜາມບິນວັດໄຕ ແລະ ຕາມທາງເຂົ້າໄປຕົວເມືອງນັ້ນ ເຮົາສັງເກດເຫັນວ່າ ມີບັນຍາກາດອ່ອນຍານລົງ. ທຸກຄົນທີ່ເຮົາພົບລ້ວນແຕ່ສະແດງຄວາມເຄົາລົບ ແລະ ຮັກແພງ. ສີໜ້າປະຊາຊົນ ແລະ ທະຫານທຸກຄົນຊື່ນບານ ແລະ ກະເຈົ້າກະຈ້າເບີກເພີຍ. ການຊື້ຂາຍຂອງຕາມຕະຫລາດ ແລະ ຮ້ານຄ້າແຄມທາງເປັນໄປຢ່າງເນືອງນັນ ແລະ ເບີກບານ ຄືບ້ານເມືອງດີແທ້. ຝູງເຍົາວະຊົນຍິງຊາຍແຕ່ງຕົວຮຽບຮ້ອຍເຝິກແອບລຽນແຖວ ແລະ ຮ້ອງເພງຟິດຟື້ນມ່ວນຊື່ນຢູ່ຕາມວັດ ແລະ ໂຮງຮຽນຕ່າງໆ. ພວກຊາວໜຸ່ມພາຍປືນກາລະບິນໃໝ່ໆແບ່ງກັນເປັນໝູ່ຢືນຍາມຮ່ວມກັບຕຳຫລວດຢູ່ປາກທາງເຂົ້າບ້ານ ແລະ ກາງທາງສີ່ແຍກທຸກບ່ອນຢ່າງຫ້າວຫັນ. ລົດພວກເຮົາກາຍໄປບ່ອນໃດ ຄົນກໍ່ຊອງກັນເບິ່ງ ແລະ ໂບກມືຂຳນັບ. ມັນຈຶ່ງແມ່ນຕ່າງເກົ່າເອົາແທ້ເອົາວ່າ. ຫົວໃຈເຮົາເຕັ້ນເປັນຈັງຫວະໄວກວ່າປົກກະຕິ. ເບິ່ງອັນ

ໃດກໍ່ປະກົດວ່າຫົວແຍ້ມຕ້ອນຮັບນັກໂທດ ຜູ້ໂຕນອອກຄຸກໄປພົ້ນແລ້ວ ກັບຄືນມາໃໝ່ເພື່ອນຳເອົາສັນຕິພາບມາໃຫ້ທຸກຄົນ. ກົກພ້າວກົກໝາກ ແລະ ກົກໄມ້ນາງຊະນິດ ພາກັນແກວ່ງກ້ານໃບໄປຕາມສາຍລົມ ຄືຈັ່ງວ່າອວຍພອນດ້ວຍຄວາມຊື່ນບານໃຫ້ພວກເຮົາປອດໄພ ແລະ ໃຫ້ການເຈລະຈາໄດ້ຮັບຜົນດີ.

ມາຮອດປະຕູເຂົ້າຂອງບ້ານເຮືອນເຮົາ, ເຮົາສັ່ງໃຫ້ຄົນຂັບລົດຢຸດຢູ່ໜ້າປະຕູ ເອົາລົດກັບເມືອບ້ານ, ມື້ອື່ນເຊົ້າຈຶ່ງມາອີກ ແລ້ວເຮົາຄ່ອຍຍ່າງຂຶ້ນເມືອເຮືອນ, ບໍ່ເຫັນອ້າຍນ້ອງຈັກຄົນ, ຕຳຫຼວດກໍ່ບໍ່ຄວບຄຸມຄືຫວ່າງກ່ອນນັ້ນແລ້ວ, ເຮົາຮ້ອງຫາເມຍເຮົາ ທີ່ໄຂຕູອອກຈາກສ້ວມນອນມາ. ຄວາມຊື່ນອົກຊື່ນໃຈຂອງພວກເຮົາເວລານັ້ນ ແມ່ນບໍ່ມີອັນຈະປຽບໄດ້, ມັນເປັນຄືວ່າຄົນຕາຍໄປແລ້ວໄດ້ກັບຄືນມາຫາກັນເທື່ອໃໝ່. ຕ່າງຄົນກໍ່ຕ່າງເລົ່າຊີວິດການເປັນຢູ່ຂອງຕົນໃນເວລາພັດພາກຈາກກັນໃຫ້ກັນຟັງ. ນັ່ງລົງບົນຕັ່ງຊາລົງ ເຮົາຄິດຮອດຊີວິດເກົ່າ-ໃນຄາວທີ່ບໍ່ທັນຖືກຈັບ ; ຟາດສາຍຕາໄປເບິ່ງບ່ອນໃດກໍ່ແມ່ນບ່ອນລົ້ງເຄີຍກັບເຮົາ ມາແຕ່ກ່ອນ ແລະ ຍັງຕັ້ງຢູ່ບ່ອນເກົ່າບໍ່ມີການປ່ຽນແປງ. ໂຕະກິນເຂົ້າແມ່ນບ່ອນນາຍຕຳຫຼວດເອົາຄຳສັ່ງຈັບຕົວຂອງສານມາຍື່ນໃຫ້ເຮົາ. ປະຕູສ້ວມແມ່ນບ່ອນເຮົາສັ່ງເມຍ ແລະ ອ້າຍນ້ອງໃຫ້ສາມັກຄີຮັກແພງກັນ, ແມ່ນບ່ອນເຮົາຮັບເອົາເຄື່ອງລ້າງໜ້ານຳເມຍເຮົາ ແລ້ວຄ່ອຍຍ່າງລົງຂັ້ນໄດໄປຂຶ້ນລົດຕຳຫຼວດເພື່ອໄປຄຸກ. ທຸກສິ່ງເຫຼົ່ານັ້ນເຮົາຍັງຈື່ຢູ່ໃນສະໝອງບໍ່ລືມຈັກອັນ, ແຕ່ວ່າມາບັດນີ້ມັນເປັນພຽງແຕ່ຄວາມຝັນຮ້າຍອັນໜຶ່ງ ທີ່ຜ່ານກາຍໄປແລ້ວ ແລະ ຈະບໍ່ກັບຄືນມາອີກ. ຫຼັງຈາກຊົມເຊີຍເມຍເຮົາທີ່ອົດທົນທຸກຍາກລຳບາກ ໄປຕໍ່ສູ້ໃຫ້ພວກປະຕິການ ປ່ອຍຕົວພວກເຮົາ, ຊອກທຸກວິທີທາງສົ່ງຂ່າວຄາວເຂົ້າໄປໃຫ້ພວກເຮົາຢູ່ໃນຄຸກ ແລະ ອົດທົນຕໍ່ຄວາມດູຖູກຢຽດຫຍາມຂອງສັດຕູ ເພື່ອຄອຍຖ້າເຮົາກັບຄືນມາ. ເຮົາໄດ້ບອກໃຫ້ລາວຮູ້ວ່າ ເຮົາກັບຄືນມາຕາມຄຳສັ່ງຂອງສູນກາງພັກ ທີ່ບອກໃຫ້ພວກເຮົາກັບມາເຈລະຈາຮ່ວມມືກັບ ລັດຖະບານສຸວັນນະພູມາ ແລະ ຄະນະລັດຖະປະຫານ ເພື່ອພ້ອມກັນຕ້ານຈັກກະພັດອາເມລິກາ ແລະ ລູກມືຕໍ່ໄປ. ຕອນແລງພວກອ້າຍນ້ອງກັບມາກໍ່ຍິ່ງເຮັດໃຫ້ຄວາມມ່ວນຊື່ນ ຂອງໝົດທັງເຮືອນເຮົາເພີ່ມທະວີຂຶ້ນ. ເຈົ້າບຸນຍະວັດຜົວເມຍທີ່ຍັງຢູ່ເຮືອນຂ້າງເບື້ອງນັ້ນ ເຫັນເຮົາກັບມາເຮືອນກໍ່ດີໃຈ ແລະ ຊົມເຊີຍຄວາມເກັ່ງກ້າສາມາດຂອງພວກເຮົາ ທີ່ໄດ້ໂຕນອອກຈາກຄຸກ ໂດຍເອົາພວກສາລະວັດທະຫານທີ່ຄຸມຄຸກໜີໄປນຳພົດ. ໝູ່ເພື່ອນຮ່ວມສຸກຮ່ວມທຸກ ນຳກັນໃນຄະນະກຳມະການສັນຕິພາບເປັນກາງ ແລະ ແນວລາວຮັກຊາດກໍ່ຂຶ້ນມາຖາມຂ່າວ ແລະ ຊົມເຊີຍເຮົາ; ເຮັດໃຫ້ເຮືອນເຮົາໃນແລງວັນນັ້ນ ເນືອງນັນໄປດ້ວຍສຽງຫົວຈັ້ນຊື່ນຊົມຢ່າງບໍ່ຂາດສາຍ.

ມື້ລຸນມາ, ກ່ອນໄປປະຊຸມກັນ, ເຮົາໄດ້ໄປກະດີທາດຫຼວງ ເພື່ອຢ້ຽມຢາມອາຈານໃຫຍ່ຄູນ ມະນີວົງ, ສົມເດັດສັງຄະນາຍົກ ອົງທີ່ໄດ້ຊ່ວຍເຫຼືອຮ່ວມມືນຳເຮົາ ເວລາເຮົາພວມ

ເປັນລັດຖະມົນຕີກະຊວງທຳມະການ, ທີ່ເຮົາໄດ້ສົ່ງດອກໄມ້ໄປເຄີຍ ພວມເຮົາຍັງຖືກຄຸກຢູ່ ແລະ ທີ່ໄດ້ສົກໃຫ້ພະສົງ 4 ອົງ ເພື່ອໃຫ້ໂຕນໜີໄປພ້ອມເຮົາ. ພໍແຕ່ເຫັນເຮົາໄປກາບໄຫວ້, ສົມເດັດສັງຄະນາຍົກກໍ່ຫົວດີໃຈຊື່ມຊົມ, ຫົວນ້ຳຕາຕົກຈົນປາກບໍ່ເປັນສຽງຍ້ອນຮັກແພງອິດູຕົນ ແລະ ເຫຼືອໃຈຕໍ່ການກະທຳອັນສະແດງເຖິງຈິດໃຈກ້າຫານ ແລະ ກວ້າງຂວາງ ຂອງພວກເຮົາ. ເພິ່ນຫົວໂຈມເອົາມືນົບຂອງເຮົາແລ້ວເວົ້າວ່າ : " ໂອຍ ! ມາຮອດແລ້ວບໍ, ຈັ່ງແມ່ນຈື່ມວ່າ ແລະ ສູດສ້ອຍຫາຍຢູ່, ຢ້ານເຂົານຳໄປຂ້າຖິ້ມກາງທາງ, ຄິດຮອດແຕ່ຍາມເຮັດວຽກນຳກັນເປັນຈິດໃຈອັນດຽວກັນ ຢູ່ສົ້ນນະຄະດີເບື້ອງນັ້ນ, ຄິດຫາແຕ່ຍາມຢູ່ຄຸກໄດ້ສົ່ງດອກດາເອັນມາໃຫ້ທຸກວັນສິນ, ຄິດຫາແຕ່ຍາມແຕ່ງຄົນມາຂໍໃຫ້ສົກໃຫ້ພະສົງ 4 ອົງ ເພື່ອໂຕນໜີໄປນຳໃຫ້ພົ້ນຈາກການຄວບຄຸມຂອງສັດຕູ, ຄັນເຈົ້າຫາກຕາຍໄປ ອາດຕະມາກໍ່ບໍ່ລືມຄຸນງາມຄວາມດີອັນນັ້ນຈັກເທື່ອ. ຕັ້ງແຕ່ອາດຕະມາບວດມາຮອດມື້ນີ້ ອາດຕະມາບໍ່ໄດ້ນ້ຳຕາຕົກ ຈັກເທື່ອ, ມື້ນີ້ອາດຕະມານ້ຳຕາຕົກມັນບໍ່ແມ່ນຕົກຈາກຕາລາງໄດ໋, ມັນຕົກຈາກຫົວໃຈທີ່ຮັກແພງສຸດໃຈ ແລະ ອິດູຕົນຂອງອາດຕະມາໄດ ! ອາດຕະມາເຫຼືອໃຈນາ, ຈະໂຕນໜີແຕ່ໂຕໃຫ້ພົ້ນໄພກ່ອນກໍ່ຍັງບໍ່ເຮັດ, ຍັງມາສົກເອົາພະສົງ 4 ອົງ ທີ່ຖືກສັດຕູຄວບຄຸມໂຕນໜີໄປນຳ, ຄັນແມ່ນຄວາມລັບແຕກມັນຈະບໍ່ຕາຍນຳກັນໄປບໍ ! " ເພິ່ນຫົວເວົ້າຫົວເອົາມືລູບມືເຮົາ, ລູບລົງມາຮອດຫົວເຮົາ, ຫົວສະອື້ນໄຫ້ເປັນຄັ້ງເປັນຄາວ. ບິດໜຶ່ງກໍ່ບອກວ່າ : " ນັ່ງຢູ່ພີ້ກ່ອນເນີ, ຈະລົດນ້ຳໃຫ້ຫາຍເຄາະຫາຍນານ". ເວົ້າແລ້ວເພິ່ນກໍ່ລຸກຍ່າງໄປເອົາພະພຸດທະຮູບທອງອົງໜຶ່ງໜັກສົມຄວນ ແລະ ກອງນ້ຳກອງໜຶ່ງອອກຈາກຫ້ອງນອນເພິ່ນມາ ; ເອົາພະພຸດທະຮູບຕັ້ງໃສ່ຫົວເຮົາ ແລ້ວກໍ່ຫົວສູດຫົວເອົານ້ຳຫົດລົງ. ເຮົາເວົ້າຂຶ້ນວ່າ : "ອາຈານໃຫຍ່ສະແດງຄວາມຮັກແພງອັນຈິງໃຈ ຂ້ານ້ອຍດີໃຈ ແລະ ຮູ້ບຸນຄຸນທີ່ສຸດ, ແຕ່ວ່າຂໍໃຫ້ຫົດນ້ຳພ້ອຍໜຶ່ງກໍ່ເອົາແຫຼະ ເພາະວ່າອອກຈາກພີ້ໄປ ຂ້ານ້ອຍຍັງຊິໄດ້ໄປປະຊຸມ". ເພິ່ນຕອບຄືນວ່າ: "ຊິໄປປະຊຸມຊື່ໃດກໍ່ໄປ, ຕ້ອງຫົດສ່ວຍລ້າງສິ່ງຂຶດຮຽດຈັງໄຮທີ່ໄດ້ພົບເຫັນຢູ່ໃນຄຸກອອກພິດສາກ່ອນ", ເວົ້າແລ້ວເພິ່ນເຍື່ອງຖອກນ້ຳລົງແຮງກວ່າເກົ່າ, ຈົນໝົດທັງກອງແລ້ວຈຶ່ງເຊົາ, ຫົວ ແລະ ເສື້ອເຮົາຈົນຮອດຜ້າພົມປູພື້ນກະດານປຽກອົນໝົດ. ທັງຫົດທັງຈົ່ມໄລ່ເຄາະໄລ່ນານ, ທັງສູດໄຊຍັນໂຕ, ແລ້ວກໍ່ຍັງເວົ້າໄປເວົ້າມາຫຼາຍເທື່ອວ່າ : "ເຫຼືອໃຈນາ, ຊິໂຕນແຕ່ໂຕໃຫ້ພົ້ນໄພແລ້ວຈັ່ງຄ່ອຍແຕ່ງກັນມາເອົາຜູ້ອື່ນກໍ່ບໍ່ເຮັດ ! ມາໃຫ້ສົກເອົາພະທັງ 4 ອົງ ໂຕນນຳ, ຄັນເສຍຄວາມລັບມັນຊິບໍ່ຕາຍໝົດທຸກຄົນບໍ !

ອອກຈາກວັດທາດຫຼວງເຮົາໄດ້ຂຶ້ນລົດໂອໂຕກົງໄປຫາໝູ່ ຕາມຄຳນັດພົບກັນຢູ່ຄ້າຍທະຫານອາກາດ. ມື້ນັ້ນມີຮ້ອຍເອກກອງແລ, ຮ້ອຍໂທເດືອນ ແລະ ນາຍທະຫານ ທີ່ຮ່ວມມືກັນເຮັດລັດຖະປະຫານຫຼາຍຄົນເຂົ້າຮ່ວມນຳ. ກອງແລກັບທ່ານເດືອນພ້ອມກັນເລົ່າເລື່ອງ ຂະບວນການລັດຖະປະຫານ ແລະ ຈັດຕັ້ງລັດຖະບານຢູ່ວຽງຈັນ ແລະ ໄປຈັດຕັ້ງຄືນຢູ່ຫຼວງພະບາງ

ເທື່ອໜຶ່ງຕື່ມອີກ, ບໍ່ດັ່ງນັ້ນເຈົ້າຊີວິດຈະບໍ່ຍອມລົງລາຍເຊັນໃສ່ໃບແຕ່ງຕັ້ງ, ຕະຫຼອດຮອດການຫັກຫຼັງຂອງພູມີ ໜໍ່ສະຫວັນ ທີ່ໂຕນໜີໄປເມືອງໄທ. ກອງແລເວົ້າຄືນອີກວ່າ : " ວຽກການທະຫານພວກຂ້ານ້ອຍເຮັດແລ້ວໆ, ສ່ວນວຽກການທາງການເມືອງ ພວກຂ້ານ້ອຍຂໍມອບໃຫ້ພວກອາດຍາ, ສຸດແລ້ວແຕ່ຈະນຳພາແນວໃດໃຫ້ໄປເຖິງໄຊຊະນະຂັ້ນສຸດທ້າຍ, ລັດຖະບານກໍ່ອີງໃສ່ແຕ່ພວກຂ້ານ້ອຍ, ພວກຂ້ານ້ອຍຊໍ້າພັດບໍ່ເຫັນປ່ອງທາງໄປ, ຂໍມອບການນຳພາ ໃຫ້ແກ່ແນວລາວຮັກຊາດທັງໝົດ". ທ່ານເດືອນເວົ້າຕື່ມວ່າ : "ພວກຂ້ານ້ອຍພ້ອມກັນເຮັດ ລັດຖະປະຫານກໍ່ຍ້ອນເຫັນຄວາມດູຖູກຂອງຈັກກະພັດອາເມລິກາ, ຄຽດແຄ້ນພວກມັນ, ຄຽດແຄ້ນໃສ່ພວກອາດຍາເຈົ້ານາຍຝ່າຍວຽງຈັນ ທີ່ຍອມກົ້ມຫົວຟັງຄຳສັ່ງພວກມັນ, ປ່ອຍໃຫ້ພວກມັນເຂັ້ນຂ້າຄົນລາວ. ດຽວນີ້ເຮັດແລ້ວໆ ແຕ່ບໍ່ຮູ້ວ່າຈະພາປະເທດຊາດໄປແນວໃດ, ໄດ້ປະຊຸມກັນຫຼາຍເທື່ອກໍ່ບໍ່ເຂົ້າບໍ່ອອກ, ໄດ້ໄປປະຊຸມຮ່ວມກັບລັດຖະບານເພິ່ນກໍ່ເຫັນດີນຳ, ຂ້ານ້ອຍຈຶ່ງໄດ້ເອົາຍົນເອລີກົບແຕໄປເອີ້ນຊອກຫາພວກອາດຍາ, ນີ້ພວກອາດຍາມາແລ້ວ, ພວກຂ້ານ້ອຍຂໍມອບທຸກສິ່ງທຸກຢ່າງໃຫ້ພວກອາດຍາ, ແນວໃດຈະຊະນະຂໍເຊີນພາພວກຂ້ານ້ອຍເຮັດ, ພວກຂ້ານ້ອຍຍິນດີເຮັດນຳພົດທຸກຢ່າງ", ເວົ້າແລ້ວທ່ານເດືອນກໍ່ຫຼຽວໄປຖາມໝູ່ວ່າ: "ຄວາມທີ່ເຮົາເວົ້ານີ້ ພວກໝູ່ເຫັນດີນຳບໍ່ ? " ພົດທຸກຄົນຕອບເປັນສຽງດຽວກັນວ່າ: "ເຫັນດີ!".

ເມື່ອຄະນະລັດຖະປະຫານເວົ້າສຸດຄວາມແລ້ວ, ພວກເຮົາໄດ້ຂອບໃຈ ແລະ ຊົມເຊີຍພວກເພິ່ນທຸກຄົນທີ່ໄວ້ວາງໃຈແນວລາວຮັກຊາດ ແລະ ພວກເຮົາເອງ. ພວກເຮົາໄດ້ເວົ້າຢ່າງຈະແຈ້ງວ່າ ອອກຈາກນີ້ພວກເຮົາຈະໄປພົບເຈົ້າສຸວັນນະພູມາ ແລະ ຄະນະລັດຖະບານທຸກຄົນ ເພື່ອວາງແຜນການລະອຽດນຳກັນ. ຫຼັງຈາກນັ້ນພວກເຮົາກໍ່ໄດ້ໄປພົບເຈົ້າສຸວັນນະພູມາ ແລະ ຄະນະລັດຖະບານໂລດ. ຢູ່ໃນສຳນັກນາຍົກລັດຖະມົນຕີເອງ, ມີທ່ານກີນີມ ພົນເສນາ, ທ່ານຄຳສຸກແກ້ວລາ ແລະ ບາງລັດຖະມົນຕີທີ່ເພິ່ນໄວ້ວາງໃຈມານັ່ງນຳ. ຫຼັງຈາກຟັງຄຳສະເໜີຕົວຂອງພວກເຮົາແລ້ວ, ເຈົ້າສຸວັນນະພູມາ ແລະ ຄະນະໄດ້ສະແດງຄວາມຍິນດີທີ່ພວກເຮົາມາຮ່ວມມືນຳ, ສິ່ງໃດທີ່ຈະເດີນແມ່ນແລ່ນສະດວກກໍ່ໃຫ້ພາກັນເຮັດ, ຖ້າຫາກຕົກລົງກັນ ຫຼື ຫາກພົບຄວາມຫຍຸ້ງຍາກແນວໃດ ຈຶ່ງໃຫ້ພາກັນມາຫາ. ເຈົ້າສຸວັນນະພູມາຍັງເຕືອນຕື່ມອີກວ່າ ສະພາບການຍັງຈະຫຍຸ້ງຍາກ ເພາະວ່າພູມີ ໜໍ່ສະຫວັນ ໄປເພິ່ງຈອມພົນສະລິດ ທະນະລັດ ນາຍົກລັດຖະມົນຕີໄທ ເພື່ອຂໍຄວາມຊ່ວຍເຫຼືອຈາກເຂົາມາຕ້ານພວກເຮົາຄືນ, ອາດຈະໄປຮັບຮອງຈະເອົາປະເທດລາວໄປຂຶ້ນກັບໄທກໍ່ເປັນໄດ້ ; ໃຫ້ພວກເຮົາພາກັນມີສະຕິລະວັງຕົວ. ພວກເຮົາໄດ້ສະແດງຄວາມຂອບໃຈໃນການຕ້ອນຮັບອັນອົບອຸ່ນ ທີ່ລັດຖະບານໄດ້ໃຫ້ແກ່ພວກເຮົາ, ໄດ້ແຈ້ງໃຫ້ພວກເພິ່ນຮູ້ວ່າ ພວກເຮົາໄດ້ພ້ອມກັນໂຕນໜີ ອອກຈາກຄຸກຂອງພວກປະຕິການ ລູກມືຈັກກະພັດອາເມລິກາໄປໄດ້ຢ່າງປອດໄພ, ດຽວນີ້ສູນກາງແນວລາວຮັກຊາດໄດ້ຕົກລົງແຕ່ງຕັ້ງໃຫ້ພວກເຮົາກັບຄືນມາຮ່ວມມືຕາມຄຳຮຽກຮ້ອງ ຂອງລັດ

ຖະບານ ; ພວກເຮົາຫວັງວ່າການຮ່ວມມືຈະເປັນໄປຢ່າງໄດ້ຜົນດີໃຫ້ແກ່ປະເທດຊາດ ແລະ ປະຊາຊົນລາວທັງມວນ ເພາະວ່າລັດຖະບານຊຸດນີ້ ແມ່ນເຈົ້າສຸວັນນະພູມາເປັນນາຍົກລັດຖະມົນຕີ. ພວກເຮົາຂໍສະເໜີໃຫ້ການເຈລະຈາຮ່ວມມືກັນແບ່ງເປັນສອງຄະນະຄື ຄະນະໜຶ່ງເຮັດນຳລັດຖະບານ ແລະ ຄະນະໜຶ່ງເຮັດນຳຝ່າຍທະຫານ. ຫຼັງຈາກພວກເພິ່ນເຫັນດີນຳແລ້ວ - ພວກເຮົາໄດ້ແຈ້ງໃຫ້ພວກເພິ່ນຮູ້ວ່າ ສະຫາຍໜູຮັກ ພູມສະຫວັນ ແລະ ເຮົາເອງ ຈະເຮັດວຽກນຳຝ່າຍລັດຖະບານ, ສະຫາຍພູມ ສີປະເສີດ, ສະຫາຍ ສີຊະນະ ສີສານ ແລະ ສະຫາຍ ສິງກະໂປ ສີໂຄດຈູນນະມາລີ ຈະເຮັດນຳຝ່າຍທະຫານ. ພວກເຮົາເຫັນດີວ່າ ສະພາບການໃນຂັ້ນຕໍ່ໄປຍັງຈະສັບສົນ ເພາະວ່າສັດຕູຍັງຈະບໍ່ຍອມປ່ອຍໃຫ້ພວກເຮົາ ເຮັດການລວມລາວດ້ວຍສັນຕິວິທີ. ພູມີ ໜໍ່ສະຫວັນ ໄປບາງກອກບໍ່ແມ່ນໜີໄປລາງ, ມັນຕ້ອງກັບມາກໍ່ຄວາມຫຍຸ້ງຍາກໃຫ້ພວກເຮົາ ແລະ ສ້າງຄວາມວຸ່ນວາຍໃສ່ບ້ານເມືອງລາວຢ່າງແນ່ນອນ. ພວກເຮົາຕ້ອງສາມັກຄີກັນແໜ້ນ ເພື່ອຕໍ່ສູ້ຕ້ານເລ່ກົນຂອງມັນ ກ່ອນອື່ນໝົດ ຂໍໃຫ້ລັດຖະບານຈົ່ງບອກໃຫ້ສານລົບລ້າງຄະດີ ທີ່ພູຍ ຊະນະນິກອນ ແລະ ພູມີໜໍ່ສະຫວັນ ກ່າວຫາໃສ່ພວກເຮົາ ໂດຍເສກສັນປັ້ນເລື່ອງຂຶ້ນຢ່າງບໍ່ມີມູນຄວາມຈິງ. ສຸວັນນະພູມາເຫັນດີຕາມຄຳສະເໜີ ຂອງພວກເຮົາ ແລະ ສັ່ງໃຫ້ທ່ານກິ່ມ ພົນເສນາ ຈັດການໃຫ້ໄວໆ. ສາມວັນຕໍ່ມາກໍ່ເຫັນຄຳສັ່ງຂອງສານບອກໃຫ້ຄັດມ້ຽນຄະດີຍ້ອນຄວາມກ່າວຫາບໍ່ມີມູນຄວາມຈິງ.

ຕໍ່ຈາກນັ້ນ ສອງຄະນະພວກເຮົາເຈລະຈາກັນທຸກເຊົ້າ. ພວກເຮົາພົບທ່ານ ກິ່ມ ພົນເສນາເປັນປົກກະຕິ ເພື່ອແລກປ່ຽນຄຳຄິດຄຳເຫັນກັນ ກ່ຽວກັບສະພາບການຂອງໂລກ, ຂອງພາຍໃນປະເທດເຮົາ, ນະໂຍບາຍພາຍໃນ ແລະ ຕ່າງປະເທດ ທີ່ພວກເຮົາຈະຕ້ອງ ພ້ອມກັນປະຕິບັດ. ທັງສອງຝ່າຍນັບມື້ນັບເຂົ້າໃຈກັນດີເຂົ້າຊຶກໄຈ້ ແລະຫຼັກໝັ້ນຂອງພວກເຮົາກ່ຽວກັບມິດ ແລະ ສັດຕູນັບມື້ນັບເປັນເອກະພາບນຳກັນ. ພວກ ຫຍຸຍ ອະໄພ, ອຸ່ນ ຊະນະນິກອນ, ຄຳພັນ ປັນຍາ ແລະ ອື່ນໆຫຼາຍຄົນໄດ້ມາພົບພວກເຮົາ ໂດຍເວົ້າປະຈົບປະແຈງ ແລະ ຖິ້ມໂທດໃສ່ພູມີ ໜໍ່ສະຫວັນຜູ້ດຽວ ທີ່ຮ່ວມມືກັບຈັກກະພັດອາເມລິກາຈັບພວກເຮົາໃສ່ຄຸກຫວ່າງແລ້ວນີ້. ພວກເຮົາບໍ່ເອົາຫົວຊາ ຕໍ່ຄວາມເວົ້າຖະແຫຼງຕໍ່ໜ້າຂອງພວກເຂົາ, ແລະສຳລັບບາງຄົນພວກເຮົາກໍ່ໄດ້ເວົ້າຕອບສົມກັບການກະທຳອັນອະທຳຂອງພວກເຂົາ.

ສ່ວນຄະນະທະຫານກໍ່ໄດ້ເລີ່ມຕົ້ນພົບພໍ້ເຈລະຈາກັນ, ແຕ່ບໍ່ເປັນປົກກະຕິປານໃດ, ເພາະວ່າຊອກຫາກອງແລບໍ່ສູ້ເຫັນ, ບາງທີກໍ່ໄປເຫັນຢູ່ເຮືອນຜູ້ສາວຜູ້ລາວຢາກຮ້າງເມຍໄປເອົາ, ບາງທີກໍ່ໄປເຫັນຢູ່ໂຮງນາງຫຽມພວມບະເທວະດາທີ່ເຍຍ ແລະ ອ້າຍໂຕ່ງກວ້າງ(ພິເວືອກ) ປາກກະດິງ, ໄດ້ລໍຖ້າລາວແລ້ວວຽກອອກມາແລ້ວຈຶ່ງໄດ້ເວົ້າລົມກັນ, ບາງທີ ກໍ່ໄດ້ເລີກກັນໄປລ້າງ ບໍ່ຕົກລົງຫຍັງກັນໄດ້. ແຕ່ວ່າພວກເຮົາກໍ່ໄດ້ຜັດປ່ຽນກັນໄປພົບ ທ່ານເດືອນ ສູນນະລາດ, ທ່ານທອບ ລິດທິເດດ, ທ່ານເຮືອນ ນິງຄົນວິໄລ, ທ່ານກອງສີ ແລະອື່ນໆອີກ ເພື່ອ

24/VII

ເວົ້າລົມໃຫ້ເຂົ້າໃຈກັນ. ເວົ້າທົ່ວໄປບັນຍາກາດນັບມື້ນັບດີຂຶ້ນ. ທຸກຄົນເປັນເອກະພາບກັນໃນການຈະພ້ອມກັນຕ້ານຈັກກະພັດອາເມລິກາ ແລະ ລູກມື ແລະເຫັນດີໃຫ້ເອົາກອງທະຫານຝ່າຍແນວລາວຮັກຊາດເຂົ້າມາວຽງຈັນ ເພື່ອພ້ອມກັນຕໍ່ສູ້ສັດຕູ, ປ້ອງກັນຮັກສາພົນງານຂອງລັດຖະປະຫານ 9-8-60 ໄວ້, ປ້ອງກັນເອກະລາດຂອງປະເທດຊາດ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບຂອງໂລກ;

ຕໍ່ຈາກນັ້ນມາ ສະພາບການບ້ານເມືອງກໍ່ກັບຄືນເປັນປົກກະຕິ. ລັດຖະບານ ໄດ້ອອກຄຳສັ່ງໃຫ້ອຳນາດການປົກຄອງ ແລະ ກອງທະຫານທຸກແຂວງໃນທົ່ວປະເທດຮ່ວມມືກັບແນວລາວຮັກຊາດຕ້ານພວກປະຕິການລູກມືຈັກກະພັດອາເມລິກາ. ທຸກບ້ານ, ທຸກຕາແສງ ໄດ້ຈັດຕັ້ງທະຫານລາດກອງຫຼອນ, ເຢົາວະຊົນ, ເຢົາວະນາລີ ແລະ ລະດົມຊາວໜຸ່ມ ເຂົ້າເປັນທະຫານຫຼວງເປັນຈຳນວນຫຼວງຫຼາຍ, ນີ້ໃດກໍ່ໄດ້ຍິນແຕ່ສຽງເຝິກແອບທະຫານ ແລະຮ້ອງລຳທຳເພັງຢ່າງຟົດຟື້ນ. ໂສມໜ້າຂອງເມືອງວຽງຈັນໄດ້ປ່ຽນຈາກການງຽບເຫງົາອຸກອັ່ງແຕ່ປາງພວກປະຕິການປົກຄອງມາ ເປັນການສວ່າງອົກລົ່ງໃຈ ແລະ ມ່ວນຊື່ນເບີກບານຢ່າງແທ້ຈິງ. ພວກປະຕິການພະຍາຍາມຊື້ຈ້າງເອົາຄົນບໍ່ດີຈຳນວນໜຶ່ງ ກໍ່ຄວາມວຸ້ນວາຍຂຶ້ນບາງບ່ອນ, ແຕ່ກໍ່ຖືກກຳລັງປະຊາຊົນສົມທົບກັບກອງທະຫານປາບລົງຢ່າງຮາບຄາບ. ຜູ້ເຊິ່ງເມື່ອກ່ອນນີ້ ໄດ້ສະແດງທ່າທີອວດອົ່ງຂຶ້ງຂັ້ງໃສ່ພວກເຮົາ ກໍ່ຈຳຕ້ອງໄດ້ເຂົ້າມາຫາພວກເຮົາເພື່ອຮັບໃຊ້ປະເທດຊາດ. ນີ້ລະນິຍົມເພີ່ນວ່າ : "ໄຟບໍ່ແດງຫາງປາບໍ່ງໍ", "ທຳເປັນມິ້ຈຶ່ງເຫັນເກົ້າປ່າ, ທຳບໍ່ເປັນມິ້ນ້ານ້ອງແມ່ກໍ່ບໍ່ເອີ້ນວ່າຫຼານ".

ສອງເດືອນຕໍ່ຈາກນັ້ນມາ, ສະພາບການເລີ່ມມີການປ່ຽນແປງໃໝ່. ຂ່າວພູມີ ໜໍ່ສະຫວັນຫັກຫຼັງລັດຖະບານສູວັນນະພູມາ ແພ່ສະພັດມາຮອດວຽງຈັນຢ່າງກວ້າງຂວາງຂຶ້ນຊຸກໄຊ້. ພູມີ ໜໍ່ສະຫວັນໄດ້ຕົກລົງຂາຍຊາດໃຫ້ໄທ, ຂົນເອົາອາວຸດ ແລະ ກຳລັງຈາກໄທມາຄອບຄອງເມືອງສະຫວັນນະເຂດ, ເຕົ້າໂຮມເອົາພວກປະຕິການລູກມືເກົ່າຂອງມັນ ມາຂະຫຍາຍກຳລັງຂາຍຊາດໃຫ້ກວ້າງຂວາງອອກຕື່ມ. ພວກປະຕິການຢູ່ແຂວງຕ່າງໆໄດ້ຍິນຂ່າວນີ້ ກໍ່ປ່ຽນທ່າທີເປັນປໍລະປັກຕໍ່ລັດຖະບານສູວັນນະພູມາຕື່ມອີກ. ເຈົ້າຊີວິດສີສະຫວ່າງວັດທະນາກໍ່ໄດ້ສັ່ງໃຫ້ຄຳພັນ ປັນຍາ ເປັນຜູ້ຕາງໜ້າເຂົ້າໄປປະຈຳຢູ່ນຳພູມີ ໜໍ່ສະຫວັນ ທີ່ສະຫວັນນະເຂດແລະສັ່ງໃຫ້ພັນໂທ ບຸນແຕ່ງ ອິນສີຊຽງໃໝ່ ກໍ່ການຂະບົດ ປະກາດບໍ່ຂຶ້ນກັບເຈົ້າສູວັນນະພູມາ ໃນເວລາຜູ້ນີ້ອອກຈາກຫຼວງພະບາງໄປປ່ຽນຢາມເມືອງຫຼວງນ້ຳທາ, ເຮັດໃຫ້ເພິ່ນຈຳເປັນຕ້ອງບິນຈາກນ້ຳທາໄປລົງວຽງຈັນໂດຍກົງ ຈົນວ່ານ້ຳມັນໃນເຮືອບິນເກືອບໝົດກາງທາງ ; ເລື່ອງນີ້ຍິ່ງເຮັດໃຫ້ເຈົ້າສູວັນນະພູມາຄຽດໃສ່ເຈົ້າຊີວິດ ແລະ ພູມີ ໜໍ່ສະຫວັນ ເພີ່ມຂຶ້ນອີກ. ປະຊາຊົນວຽງຈັນ ແລະທົ່ວປະເທດໄດ້ພາກັນປ້ອຍດ່າພູມີ ໜໍ່ສະຫວັນ, ພາກັນເອີ້ນວ່າ ພູມີ ໜໍ່ນະຮົກ ເພາະວ່າມັນນຳເອົາຄວາມດັບວາຍຈິບຫາຍມາສູ່ບ້ານເມືອງ.

ຕົ້ນເດືອນຕຸລາ ປີ 1960, ມີເຫດການດີອັນໜຶ່ງເກີດຂຶ້ນ, ນັ້ນແມ່ນສະຫະພາບໂຊວຽດໄດ້ຮັບຮອງລັດຖະບານສຸວັນນະພູມາ ແລະ ແຕ່ງຕັ້ງສະຫາຍ ອາບະລາມອບ, ເອກອັກຄະລັດຖະທູດປະຈຳກຳປູເຈຍມາວ່າການໜ້າທີ່ເອກອັກຄະລັດຖະທູດປະຈຳລາວ ໂດຍໃຫ້ ສະຫາຍລະຕະນອບ ມາເປັນອຸປະທູດປະຈຳຢູ່ວຽງຈັນ. ຫຼັງຈາກນັ້ນປະຊາຊົນລາວກໍ່ໄດ້ເຫັນເຮືອບິນໂຊວຽດມາລົງສະໜາມບິນວຽງຈັນເປັນເທື່ອທຳອິດ ແລະ ຕໍ່ມາເຮືອບິນຫຼາຍລຳກໍ່ໄດ້ມາວຽງຈັນມື້ລະສອງເທື່ອ, ນຳເອົາເຂົ້າປາອາຫານ ແລະເຄື່ອງຂອງທີ່ຕ້ອງການມາຊ່ວຍເຫຼືອລາວ, ເຮັດໃຫ້ປະຊາຊົນລາວດີໃຈ ແລະ ເຊື່ອໝັ້ນໃນອະນາຄົດຂອງຕົນຫຼາຍຂຶ້ນຕື່ມ. ກອງທະຫານແຂວງວຽງຈັນ ເຊິ່ງແຕ່ກ່ອນລີ້ຢູ່ປ່າໄດ້ເຂົ້າມາຕັ້ງຢູ່ອ້ອມແອ້ມເມືອງວຽງຈັນ ;ນາຍທະຫານແນວລາວຮັກຊາດໄດ້ໄປຊ່ວຍເຝິກແອບກອງທະຫານຝ່າຍວຽງຈັນ ເພື່ອໃຫ້ເປັນເອກະພາບກັນໃນວິທີຕີສັດຕູຕາມແບບໃໝ່. ພວກຊາວໜຸ່ມ ນັກສຶກສາ ໄດ້ພາກັນອອກໂຮງຮຽນ ແລະພະສົງທີ່ໜຸ່ມນ້ອຍເປັນຈຳນວນຫຼາຍ ໄດ້ສິກອອກມາສະໝັກເປັນທະຫານ. ອາວຸດຍຸດທະພັນທຸກຊະນິດທີ່ມີຢູ່ໃນສາງຂອງລັດຖະບານປະຕິການລູກມືຈັກກະພັດອາເມລິກາ ໄດ້ຖືກນຳເອົາແຈກຢາຍໃຫ້ທະຫານໃໝ່ໝົດ, ພ້ອມທັງລົດເກາະລົດຖັງ ແລະ ເຮືອບິນ. ບັນຍາກາດ ແຫ່ງການກະກຽມປ້ອງກັນນະຄອນຫຼວງວຽງຈັນເວລານັ້ນ ເປັນການຄຶກຄັກ ແລະ ກວ້າງຂວາງທີ່ສຸດ. ປະຊາຊົນລາວທັງນ້ອຍໃຫຍ່ຍິງຊາຍໄດ້ພ້ອມກັນເຂົ້າຮ່ວມມື ກັບກອງທະຫານຢ່າງຫ້າວຫັນຟົດຟື້ນ. ພະສົງສາມະເນນທົ່ວທຸກວັດ ພາຍໃຕ້ການນຳພາຂອງອາຈານໃຫຍ່ມະຫາບົວຄຳ ວໍລະເພັດ, ມະຫາຄຳຕັນ ເທບບົວລີ, ມະຫາທອງຄູນ ອະນັນຕະສູນທອນ ແລະ ອື່ນໆກໍ່ໄດ້ເຕົ້າໂຮມກັນຢູ່ໃນແຕ່ລະວັດ ເພື່ອກະກຽມປ້ອງກັນນະຄອນຫຼວງວຽງຈັນ, ປ້ອງກັນຄວາມສະຫງົບສຸກຂອງປະຊາຊົນ, ປ້ອງກັນສິນທຳຂອງພຸດທະສາສະໜາ ແລະ ປົກປັກຮັກສາສັນຕິພາບຂອງບ້ານເມືອງ. ກອງທະຫານຝ່າຍແນວລາວຮັກຊາດທີ່ເຄື່ອນໄຫວຢູ່ຕາມສາຍທາງ ແຕ່ວຽງຈັນລົງໄປທ່າເມືອງປາກຊັນ, ທ່າແຂກ ແລະ ສະຫວັນນະເຂດ ໄດ້ຮັບຄຳສັ່ງໃຫ້ຮ່ວມມືກັບກອງທະຫານລັດຖະບານສຸວັນນະພູມາ ໃນການດັກສະກັດລັດທາງຖ້າວ່າກອງທະຫານ ພູມີ ໜໍ່ສະຫວັນຫາກບຸກຂຶ້ນມາວຽງຈັນ.

ກາງເດືອນພະຈິກ ມີຂ່າວບັບນັ້ນບໍ່ຄັກແນ່ວ່າກອງທະຫານ ພູມີ ໜໍ່ສະຫວັນ ໄດ້ເຄື່ອນຂຶ້ນມາບຸກຕີເອົາເມືອງທ່າແຂກ. ທະຫານທ້ອງຖິ່ນສົມທົບກັບກອງທະຫານທີ່ຈົງຮັກພັກດີ ຕໍ່ລັດຖະບານສຸວັນນະພູມາໄດ້ດັກສະກັດລັດຕີຫຼາຍແຫ່ງ ແຕ່ກໍ່ພໍແຕ່ຍັບຍັ້ງໃຫ້ການຄືບໜ້າຂອງພວກມັນ-ຊັກຊ້າລົງເທົ່ານັ້ນ, ບໍ່ສາມາດດັບສູນກຳລັງຂອງພວກມັນໄດ້ ເພາະວ່າ ພວກມັນໄດ້ໃຊ້ລົດຖັງ ແລະ ປືນໃຫຍ່ເປັນຈຳນວນຫຼາຍສິບກະບອກຍິງຖາງທາງມາກ່ອນ ແລະ ຟາກນ້ຳຂອງເບື້ອງນັ້ນ ກອງທະຫານຈອມພົນສະລິດ ທະນະລັດ ກໍ່ຍິງປືນໃຫຍ່ ແລະເອົາເຮືອຂ້າມມາຊ່ວຍ.

ໃນເວລານັ້ນ ຮ້ອຍເອກ ກອງແລ ທີ່ໄດ້ໄປບະບານເທວະດາທໍເຍຍ ແລະ ອ້າຍໂຕ່ງກວ້າງປາກກະດິງ ໂດຍຜ່ານນາງຫຽນມາແລ້ວ ກໍ່ມາເວົ້າຕໍ່ພວກເຮົາ ແລະ ຄະນະວ່າເຂົາສະໝັກນຳກອງທະຫານລົງໄປປາກຊັນ ເພື່ອສະກັດກັ້ນບໍ່ໃຫ້ກອງທະຫານ ພູມີ ໜໍ່ສະຫວັນ ຂຶ້ນມາຮອດວຽງຈັນໄດ້ ເພາະວ່າເທວະດາ ແລະ ພິເງືອກເຫຼົ່ານັ້ນຮັບຮອງດັກແນ່ແລ້ວ. ຄະນະຮ່ວມມືທາງທະຫານໄດ້ເຫັນດີໃຫ້ກອງແລລົງໄປຕາມຄວາມສະເໜີຂອງເຂົາ ; ແຕ່ພວກເຮົາກໍ່ບໍ່ເຊື່ອວ່າເທວະດາທໍເຍຍ ແລະ ພິເງືອກປາກກະດິງຈະຊ່ວຍກອງແລໃຫ້ຊະນະໄດ້. ເມື່ອປະເຊີນໜ້າກັບກອງປືນໃຫຍ່ທີ່ພວກພູມີ ໜໍ່ສະຫວັນຍິງຖາງທາງມາ ແລະ ທີ່ທາງຝັ່ງໄທຍິງມາສົມທົບກອງທະຫານກອງແລ ກໍ່ແຕກກະຈັດກະຈາຍ ; ສ່ວນຕົວກອງແລເອງ ພ້ອມທ້າວກະຕຶກຜູ້ປ້ອງກັນເຂົາ ທີ່ອ້າງວ່າຍິງບໍ່ອອກຟັນບໍ່ເຂົ້ານັ້ນ ໄດ້ເອົາຕົວລອດເຂົ້າປ່າໄປຫາກອງທະຫານແນວລາວຮັກຊາດທີ່ບານສົມວຽງ ເພື່ອໃຫ້ນຳສົ່ງຂຶ້ນມາວຽງຈັນ.

ພວກເຮົາປຶກສາກັນເຫັນວ່າການຈະຕ້ານທານສັດຕູ ບໍ່ໃຫ້ຂຶ້ນມາວຽງຈັນແມ່ນຍາກ;ບັນຫາມັນຕັ້ງຂຶ້ນວ່າ ພວກເຮົາຈະຕັ້ງປ້ອນຕີສັດຕູຢູ່ໃນຕົວເມືອງວຽງຈັນຈົນສຸດກຳລັງຫຼືບໍ່. ພວກເຮົາເຫັນວ່າ ຕີສັດຕູຢູ່ໃນຕົວເມືອງວຽງຈັນນັ້ນມີຫຼາຍອັນບໍ່ດີ ; ກ່ອນອື່ນໝົດແມ່ນມັນຈະເຮັດໃຫ້ເມືອງວຽງຈັນມຸ່ນທະລາຍ, ປະຊາຊົນຈະລົ້ມຕາຍ ແລະ ບ້ານເຮືອນ, ວັດວາອາຮາມຈະຖືກເຜົາຜານ. ດັ່ງນັ້ນພວກເຮົາຈຶ່ງສະເໜີແຜນການຕໍ່ສູ້ສັດຕູທີ່ຝ່າຍວຽງຈັນກໍ່ເຫັນດີນຳ. ແຜນການນັ້ນແມ່ນແບ່ງກຳລັງອອກເປັນສອງພາກສ່ວນ ; ພາກສ່ວນໜຶ່ງໃຫ້ຕ້ານທານສັດຕູ - ເພື່ອຍັບຍັ້ງການຄືບໜ້າຂອງພວກມັນ ເຂົ້າມາໃນເມືອງວຽງຈັນ ແລະ ອີກພາກສ່ວນໜຶ່ງໃຫ້ຮີບຮ້ອນໄປຕາມທາງເລກ 13 ພ້ອມດ້ວຍອາວຸດທັນສະໄໝ ແລະ ລົດເກາະລົດຖັງ ຈຳນວນໜຶ່ງ ໄປຕີປົດປ່ອຍພູຄູນແລ້ວພຸ່ງເຂົ້າໄປປົດປ່ອຍລົ້ງພາແລນ (ທົ່ງໄຫຫີນ) ແລະ ແຂວງຊຽງຂວາ ເອົາບ່ອນນີ້ເປັນເຂດທີ່ໝັ້ນ ເພື່ອກ້າວໄປປົດປ່ອຍທົ່ວປະເທດໃນຂັ້ນຕໍ່ໄປ.

ພາກສ່ວນທີ່ໜຶ່ງໄດ້ປ້ອງກັນຊານເມືອງ ແລະ ຕົວເມືອງວຽງຈັນໄວ້ໄດ້ສາມອາທິດ. ສີຫອງທີ່ເປັນວິລະຊົນແຫ່ງຊາດ ບັນຊາກອງທະຫານແນວລາວຮັກຊາດ ຕີຕ້ານສັດຕູ ຢູ່ໃນຕົວເມືອງວຽງຈັນ ແລະ ໄດ້ເສຍຊີວິດໃນສະໜາມຮົບຢ່າງອາດຫານ. ເວລານັ້ນ ໃນເຮືອນຄົນອາເມລິກາທຸກຫຼັງກໍ່ເຊັ່ນດຽວກັນກັບເຮືອນພວກປະຕິການທຸກບ່ອນ ໄດ້ມີຄົນຍິງປືນອອກມາໃສ່ກອງທະຫານທີ່ຮັກຊາດ ; ຕາມນ້ຳຂອງມີເຮືອພວກປະຕິການໄທຫຼາຍສິບລຳ ຂົນທະຫານຂອງພວກເຂົາຂ້າມມາຊ່ວຍ ພູມີ ໜໍ່ສະຫວັນ ພາຍໃຕ້ການຍິງຄຸ້ມກັນດ້ວຍປືນໃຫຍ່ ຫຼາຍກະບອກ ທີ່ຍິງມາຈາກຝັ່ງໄທ. ກອງທະຫານຮັກຊາດໄດ້ຖອຍອອກໄປປ້ອງກັນສະໜາມບິນ ເພື່ອຊ່ວຍໃຫ້ເຈົ້າສຸວັນນະພູມາ ຂຶ້ນເຮືອບິນໜີໄປເມືອງພະນົມເປັນ ນະຄອນຫຼວງຂອງປະເທດກຳປູເຈຍ, ເພັງ ພົງສະຫວັນ ແລະ ຄຳເພັງ ບຸບຜາ ໄດ້ໜີໄປປະເທດພະມ້າ, ກູປະສິດອະໄພ, ອວນ ລາທິກຸນ ແລະ ພັກພວກຂອງເຂົາໄດ້ພາກອງທະຫານຂອງພວກເຂົາທີ່ປະຕິຍານ

ວ່າຈະຮ່ວມມືຢ່າງບໍລິສຸດໃຈກັບຄະນະລັດຖະປະຫານນັ້ນ ປີ້ນໄປຮ່ວມມືກັບ ພູມີ ໜໍ່ສະຫວັນ. ການຕໍ່ສູ້ກັນໄດ້ເປັນໄປຢ່າງດຸເດືອດ, ເຮືອທະຫານປະຕິການໄທໄດ້ຖືກຝ່າຍເຮົາ ຍິງຫຼົ້ມໄປຫຼາຍລຳ ເຮັດໃຫ້ທະຫານຂອງພວກມັນຕາຍໄປຫຼາຍສິບຄົນ. ສະໜາມບິນວັດໄຕໄດ້ຖືກປ່ຽນມືກັນຄອບຄອງໄປມາຫຼາຍເທື່ອ. ປະຊາຊົນລາວໄດ້ຖືກບາດເຈັບລົ້ມຕາຍຍ້ອນທະຫານສັດຕູຍິງຫຼາຍສິບຄົນ. ທ້າຍສຸດ ເພື່ອບໍ່ໃຫ້ເປັນການເສຍຫາຍເຖິງຊີວິດ, ບ້ານເຮືອນ, ວັດວາອາຮາມ ແລະ ຊັບສິນຂອງປະຊາຊົນ, ພວກເຮົາ ແລະ ຄະນະລັດຖະປະຫານ ໄດ້ສັ່ງໃຫ້ທະຫານພາກສ່ວນນີ້ ຖອຍອອກຈາກເມືອງວຽງຈັນ ພ້ອມທັງຊາວໜຸ່ມ ແລະ ພະສົງສາມະເນນເປັນຈຳນວນມາກຫຼາຍ. ນະຄອນຫຼວງວຽງຈັນໄດ້ຖືກສັດຕູຍຶດຄອງອີກເທື່ອໜຶ່ງ. ປະຊາຊົນຖືກກວດຄົ້ນຈັບກຸມຫຼາຍຮ້ອຍຄົນ. ບັນຍາກາດໃນຕົວເມືອງ ແລະ ຊານເມືອງ ຖືກປົກຄຸມໄປດ້ວຍຄວາມໂສກເສົ້າຫງ່ອມເຫງົາຫາທີ່ປຽບບໍ່ໄດ້. ໃນທັນໃດທີ່ພວກມັນຍຶດໄດ້ຕົວເມືອງວຽງຈັນ ພູມີ ໜໍ່ສະຫວັນ ກໍ່ຈັດຕັ້ງລັດຖະບານຫຸ່ນຂຶ້ນ, ເອົາເຈົ້າບຸນອູ້ມ ນະຈຳປາສັກ ເປັນນາຍົກ, ໂຕມັນເອງເປັນຮອງນາຍົກ ແຕ່ຄວບຄຸມວຽກງານພົດທຸກດ້ານ. ເຈົ້າຊີວິດສີສະຫວ່າງວັດທະນາໄດ້ເຊັນໃບແຕ່ງຕັ້ງລັດຖະບານຫຸ່ນນີ້ ທັງໆທີ່ລັດຖະບານອັນຖືກກົດໝາຍ ຂອງເຈົ້າສຸວັນນະພູມາ ຍັງຄົງຕົວຢູ່; ນັ້ນສະແດງໃຫ້ເຫັນວ່າສັກດີນາລາວ ໄດ້ກົ້ມຫົວອ່ອນຍອມ ຕໍ່ນາຍທຶນຈຳໜ່າຍຜູ້ໂຫດຮ້າຍປ່າເຖື່ອນ ຈັກກະພັດອາເມລິກາ ແລະ ຍອມຮ່ວມກັບພວກມັນທຳລາຍບ້ານເມືອງ, ຈັບກຸມຂຸ່ມຂູ່ສະດົມ, ປາບປາມປະຊາຊົນລາວ.

ພາກສ່ວນທີ່ສອງອັນປະກອບດ້ວຍກອງທະຫານ ແລະ ພະນັກງານຂອງຄະນະ ລັດຖະປະຫານທີ່ຮ່ວມກັບຝ່າຍແນວລາວຮັກຊາດພວກເຮົາ ທີ່ເຄື່ອນໄຫວໄປຕາມທາງເລກທີ 13 ນັ້ນ, ຫຼັງຈາກປາບສັດຕູຢູ່ພູຄູນແລ້ວກໍ່ພຸ່ງເຂົ້າໃສ່ທົ່ງໄຫຫີນ ແລະ ຕົວເມືອງຊຽງຂວາງທີ່ພວກເຮົາປົດປ່ອຍຢ່າງຮາບຄາບ ໃນວັນທີໜຶ່ງ ມັງກອນ 1961. ກອງທະຫານສັດຕູທີ່ໜີໄປບໍ່ພົ້ນໄດ້ກັບຄືນມາຍອມມອບຕົວ ພ້ອມດ້ວຍອາວຸດຍຸດທະພັນເປັນຈຳນວນມາກຫຼາຍ. ປະຊາຊົນ ທຸກຊົນເຜົ່າລ້ວນແຕ່ຊົມຊື່ນເບີກບານຮ່ວມມືກັບພວກເຮົາຢ່າງຫ້າວຫັນທີ່ສຸດ. ອຳນາດການປົກຄອງໃໝ່ໄດ້ຖືກແຕ່ງຕັ້ງຂຶ້ນແທນພວກເກົ່າທີ່ປົບໜີ ແລະ ກອງທະຫານປະສົມໄດ້ພ້ອມກັນກວາດລ້າງພວກທະຫານຫຸ່ນ ທີ່ແຕກໜີໄປລີ້ຊ່ອນຕົວຢູ່ນຳປະຊາຊົນນັ້ນໄດ້ຢ່າງພິດກຽງ. ເມື່ອເຫັນວ່າແຂວງຊຽງຂວາງມີຄວາມສະຫງົບແລ້ວ ສູນກາງແນວລາວຮັກຊາດໄດ້ແຕ່ງໃຫ້ເຮົາໄປເມືອງພະນົມເປັນ ເພື່ອເຊີນເອົາເຈົ້າສຸວັນນະພູມາ ມາຢູ່ບ້ານໂພນສະຫວັນ (ທົ່ງໄຫຫີນ) ເພື່ອຮ່ວມກັບຄະນະລັດຖະບານຜູ້ກາວໜ້າຂອງເພິ່ນ ດຳເນີນວຽກງານຕໍ່ໄປຮ່ວມກັບແນວລາວ ຮັກຊາດ. ຕັ້ງແຕ່ນັ້ນມາ ກຳລັງຂອງລັດຖະບານສຸວັນນະພູມາຈຶ່ງເອີ້ນຊື່ວ່າ ກຳລັງເປັນກາງ ທີ່ຮ່ວມກັບກຳລັງຂອງແນວລາວຮັກຊາດ ຕໍ່ສູ້ຕ້ານກຳລັງປະຕິການຂອງ ພູມີ-ບຸນອູ້ມ ເພື່ອຈຸດປະສົງອັນດຽວກັນຄື : ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເປັນກາງ, ເອກະພາບ

ແລະ ວັດທະນາຖາວອນ. ສ່ວນກຳລັງພູມີ-ບຸນອຸ້ມ ນັ້ນເປັນກຳລັງປະຕິການລູກມືອາເມລິກາ ແລະ ຄວບຄຸມບັນດາແຂວງອື່ນ. ຈາກແຂວງຊຽງຂວາງສົງຄາມປົດປ່ອຍຊາດ ໄດ້ແຜ່ລາມອອກໄປແຂວງອື່ນໃນທົ່ວປະເທດ, ເປັນຕົ້ນແມ່ນບ່ອນທີ່ມີພະນັກງານ ແລະທະຫານເກົ່າຂອງແນວລາວຮັກຊາດ ໄດ້ຄືນເມືອຢູ່ບ້ານເດີມຂອງຂະເຈົ້າ. ເມື່ອພວກເຮົາສືບຕໍ່ຄືບໜ້າ ໄປປົດປ່ອຍໄດ້ 2/3 ຂອງປະເທດ, ຈັກກະພັດອາເມລິກາເຫັນວ່າ ພວກເຂົາພວມປະເຊີນໜ້າກັບຄວາມປະລາໄຊ ອັນນັບມື້ນັບໜັກຢ່າງຕ້ານທານໄວ້ບໍ່ໄດ້ ກໍ່ສະເໜີໃຫ້ຢຸດຍິງ ແລະ ເປີດກອງປະຊຸມເຊີແນວເປັນເທື່ອທີ່ສອງ ເພື່ອເວົ້າສະເພາະແຕ່ບັນຫາລາວ. ຍອມວ່າ ນະໂຍບາຍຂອງພັກເຮົາແມ່ນສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ, ໃນເມື່ອມີໂອກາດຢຸດຍິງເພື່ອເຈລະຈາກັນສຳລັບສ້າງຄວາມຖືກຕ້ອງປອງດອງຊາດພາຍໃຕ້ສັນຕິພາບ ພວກເຮົາກໍ່ເຫັນດີຕາມຄຳສະເໜີຂອງຝ່າຍອາເມລິກາ. ແຕ່ພວກເຮົາກໍ່ຕີລາຄາໄວ້ກ່ອນແລ້ວວ່າ ຄຳສະເໜີຂອງຈັກກະພັດອາເມລິກາເທື່ອນີ້ ຍັງແມ່ນເລ້ກຫຼອກລວງໃຫ້ມີການຢຸດຍິງ ເພື່ອໃຫ້ພວກມັນປັບປຸງກຳລັງສຳລັບບຸກໂຈມຕີພວກເຮົາເທື່ອໃໝ່. ດັ່ງນັ້ນ ພວກເຮົາກໍ່ຈຶ່ງອາໄສການຢຸດຍິງເພື່ອຂະຫຍາຍ ແລະ ປັບປຸງກຳລັງພວກເຮົາຄືກັນ ເພື່ອຮັບມືຢ່າງມີໄຊ ກັບທຸກເຫດການອັນບໍ່ດີທີ່ຈະເກີດຂຶ້ນ.

ກອງປະຊຸມເຊີແນວເທື່ອນີ້ເປີດຂຶ້ນໃນເດືອນ 6 ປີ 1961 ໂດຍມີສະຫະພາບໂຊວຽດ- ແລະ ອັງກິດເປັນປະທານຄູ່. ນອກຈາກນັ້ນຍັງມີອາເມລິກາ, ຝະລັ່ງ, ການາດາ, ອິນເດຍ, ໂປໂລຍ, ຈີນ, ພະມ້າ, ກຳປູເຈຍ, ໄທ, ສາທາລະນະລັດປະຊາທິປະໄຕຫວຽດນາມ , ຫວຽດນາມຫຸ່ນພາກໃຕ້ ແລະ ລາວເຂົ້າຮ່ວມນຳ. ສະເພາະລາວມີຜູ້ແທນ 3 ຄະນະ ໄປຮ່ວມກອງປະຊຸມຄື ຄະນະຜູ້ແທນລັດຖະບານເປັນກາງຂອງເຈົ້າສຸວັນນະພູມາ ໂດຍແມ່ນທ່ານກີນີມ ພົນເສນາ ເປັນຫົວໜ້າ, ຄະນະຜູ້ແທນຝ່າຍ ພູມີ-ບຸນອຸ້ມ ໂດຍແມ່ນ ພູຍ ຊະນະນິກອນ ເປັນຫົວໜ້າ ແລະ ຄະນະຜູ້ແທນຝ່າຍແນວລາວຮັກຊາດ ໂດຍແມ່ນເຮົາເອງເປັນຫົວໜ້າ.

ກ່ອນຈະເປີດກອງປະຊຸມນີ້ຂຶ້ນໄດ້ ກໍ່ມີຄວາມຫຍຸ້ງຍາກຫຼາຍປະການ. ຄະນະຜູ້ແທນໄປຮອດເມືອງເຊີແນວຄົບໝົດແລ້ວ, ພວກອາເມລິກາກໍ່ຍັງບໍ່ຍອມໃຫ້ເປີດກອງປະຊຸມໂດຍອ້າງວ່າປະເທດລາວຍັງບໍ່ມີການຢຸດຍິງ. ຄວາມຈິງແທ້ແມ່ນຝ່າຍອາເມລິກາເປັນຜູ້ຍິນກອງ ທະຫານຫຸ່ນຂຶ້ນໄປແຂວງນ້ຳທາ ເພື່ອກຽມຈະບຸກຕີພາກເໜືອຂອງລາວ, ແຕ່ຝ່າຍເຮົາໄດ້ປ່ອຍໃຫ້ພວກເຂົາເຮັດໄປຕາມແຜນການຂອງພວກເຂົາ, ບໍ່ໄດ້ກັກສະກັດລັດຕີແຕ່ຢ່າງໃດ, ພຽງແຕ່ຂຶ້ນສຽງຄັດຄ້ານຄວາມບໍ່ຈິງໃຈຂອງພວກເຂົາເທົ່ານັ້ນ. ເພື່ອໃຫ້ຮູ້ສະພາບຄວາມເປັນຈິງຢູ່ໃນລາວນັ້ນ, ຄະນະຜູ້ແທນຕ່າງໆໄດ້ເຫັນດີແຕ່ງຕັ້ງຄະນະສັງເກດການຂຶ້ນຄະນະໜຶ່ງ ໂດຍແມ່ນຜູ້ແທນອິນເດຍເປັນຫົວໜ້າ, ຜູ້ແທນໂປໂລຍ ແລະ ຜູ້ແທນການາດາເປັນກຳມະການ -

ເພື່ອໄປກວດກາເບິ່ງວ່າຢູ່ລາວມີການຢຸດຍິງແທ້ຫຼືບໍ່. ອັນນີ້ກໍແມ່ນເລກົ້ນແກ່ເວລາໃຫ້ຍືດຍາວອອກໄປ, ພວກເຂົາກໍ່ຮູ້ແຕ່ກີ່ຮັບເຫັນດີນຳເພື່ອສະແດງຄວາມຈິງໃຈຂອງພວກເຂົາ ເພື່ອໃຫ້ກອງປະຊຸມເປີດຂຶ້ນໄດ້. ຈົນວ່າເກືອບເດືອນຫຼັງຕໍ່ມາ, ຄະນະສັງເກດການຕີສາຍມາໃຫ້ປະທານຄູ່ວ່າຢູ່ລາວມີການຢຸດຍິງແທ້ແລ້ວ ກອງປະຊຸມຈຶ່ງເຮັດພິທີໄຂເປັນທາງການ.

ຜູ້ແທນອາເມລິກາກ່າວຫາວ່າສົງຄາມເກີດຂຶ້ນໃນອິນດູຈີນ ແມ່ນເປັນຍ້ອນສາທາລະນະ-ລັດປະຊາທິປະໄຕຫວຽດນາມຮຸກຮານລາວ ແລະ ພາກໃຕ້ຫວຽດນາມ. ບາດພວກເຂົາເອົາການທີ່ກອງທະຫານອາເມລິກາມາຢຶດເອົາພາກໃຕ້ຫວຽດນາມ ແລະ ລາວ ເປັນຫຼັກຖານເພື່ອຢັ້ງຢືນວ່າແມ່ນພວກເຂົາເປັນຜູ້ກໍ່ສົງຄາມຮຸກຮານອິດດູຈີນ ພວກເຂົາກໍ່ເກີດໃຈຮ້າຍ ສູນຂຶ້ນຕີໂຕະຕີຕັ່ງຕາມລັກສະນະນາຍທຶນການຄ້າຂອງພວກເຂົາ, ແລ້ວພວກລູກສະໝຸນ ແລະ-ລູກແຫຼ້ງຕີນມືຂອງພວກເຂົາກໍ່ພາກັນຂຶ້ນສຽງໂຮແຊວສະໜັບສະໜູນປານແມງຈັກຈັ່ນ. ສ່ວນຜູ້ແທນອັງກິດນັ້ນສະແດງຕົວເປັນເສືອເຖົ້າ, ແກ່ອາຍຸທາງການເມືອງ, ທຸ່ນທ່ຽງອອກຄຳເຫັນດ້ວຍຄວາມຍິ້ມຫົວເອົາຕາດພົນອັນຄ່ຽມຄົມແນບນຽນຂອງຕົນມາເວົ້າຢ່າງສະຫຼາດສະຫຼຽວ , ແຕ່ສຽງເວົ້າ ແລະ ເນື້ອໃນໃຈຄວາມກໍ່ລ້ວນແຕ່ແມ່ນລຳຕາມສຽງແຄນຂອງອາເມລິກາຢ່າງບໍ່ຜິດຈັງຫວະ.

ໃນ 5 ເດືອນທຳອິດ, ກອງປະຊຸມນັ້ນພຽງແຕ່ເປັນເວທີໃຫ້ຕ່າງຝ່າຍຕ່າງກ່າວໂຈມຕີ-ແລະໂຕ້ຕອບກັນເທົ່ານັ້ນ. ເມື່ອບໍ່ມອງເຫັນຫົນທາງຈະຄົບຫາໄປຫາບ່ອນຕົກລົງກັນໄດ້, ພວກເຂົາຈຶ່ງໄດ້ເປັນເຈົ້າການສະເໜີໃຫ້ປະທານຄູ່ເຊີນ 3 ສະເດັດມາພົບກັນທີ່ເຊີແນວເພື່ອຊອກຫາຊ່ອງທາງສ້າງຄວາມຖືກຕ້ອງປອງດອງຊາດ. ສະເດັດສຸວັນນະພູມາ ແລະ ສະເດັດສຸພານຸວົງ ຍິນດີຮັບຄຳເຊີນ ແລະໄດ້ເດີນທາງມາເຊີແນວ. ສະເດັດບຸນອຸ້ມບໍ່ຍອມມາເຊີແນວແລະສະເໜີໃຫ້ສອງສະເດັດໄປພົບເຂົາຢູ່ເມືອງຟະລັ່ງ ແຕ່ສອງສະເດັດນັ້ນກໍ່ບໍ່ຍອມໄປ. ທ້າຍສຸດສາມສະເດັດໄດ້ຕົກລົງໄປພົບກັນທີ່ເມືອງຊູລິກ (ປະເທດຊູວິດຄືດຽວກັນ) ຕາມຄຳສະເໜີຂອງປະທານຄູ່. ຫຼັງຈາກຖົກຖຽງຢ່າງຍືດຍາວຫຼາຍມື້ແລ້ວ 3 ສະເດັດກໍ່ຕົກລົງກັນອອກຖະແຫຼງ-ການຮ່ວມສະບັບໜຶ່ງເຊິ່ງມີເນື້ອໃນວ່າທັງ 3 ຝ່າຍເຫັນດີໃຫ້ມີການຢຸດຍິງຢ່າງຖາວອນຢູ່ລາວ, ໃຫ້ປະເທດລາວເດີນຕາມແນວທາງສັນຕິພາບ ແລະ ເປັນກາງ, ໃຫ້ທະຫານຕ່າງດ້າວຖອນອອກຈາກລາວຢ່າງສິ້ນເຊີງ, ບໍ່ໃຫ້ຕ່າງປະເທດໃດໆແຊກແຊງຮຸກຮານລາວເພື່ອປ່ອຍໃຫ້ຄົນລາວແກ້ໄຂທຸກບັນຫາທີ່ພົວພັນກັນດ້ວຍສັນຕິວິທີ ແລະ ໃຫ້ 3 ຝ່າຍໃນລາວພ້ອມກັນຈັດຕັ້ງລັດຖະບານປະສົມຂຶ້ນເພື່ອປະຕິບັດສັນຍາສະບັບນີ້.

ການເຊັນຖະແຫຼງການຮ່ວມສາມຝ່າຍຢູ່ທີ່ເມືອງ ຊູລິກ
ໃນວັນທີ 22 ມິຖຸນາ 1961

ສັນຍາຊູລິກຂອງສາມສະເດັດນັ້ນເປັນພື້ນຖານໃຫ້ກອງປະຊຸມເຊີແນວກຽມຮ່າງສັນຍາ ທີ່ທຸກປະເທດພາຄີກອງປະຊຸມຈະຕ້ອງເຊັນກັນ. ປານນັ້ນກອງປະຊຸມກໍຍັງຢ່ຳເທົ້າຢູ່ບ່ອນເກົ່າ, ບໍ່ໄປບໍ່ມາໄດ້ອີກ, ອັນນີ້ກໍແມ່ນອາເມລິກາຊອກຫາເລື່ອງມາຖ່ວງດຶງເວລາໃຫ້ຍາວອອກໄປ-ສຳລັບໃຫ້ພວກເຂົາກະກຽມບຸກໂຈມຕີພວກເຮົາຢູ່ທາງພາກເໜືອລາວ. ບັນຫາທີ່ເວົ້າກັນຍາກເຫືອນແມ່ນການແຕ່ງຕັ້ງຄະນະກຳມະການສາກົນ ແລະ ວິທີເຮັດວຽກຂອງມັນ. ຈັກກະພັດອາເມລິກາ ແລະ ພັກພວກຂອງເຂົາຢາກໃຫ້ຄະນະກຳມະການມີສິດສູງກວ່າລັດຖະບານລາວ, ຢາກໄປກວດບ່ອນໃດຍາມໃດກໍໄດ້, ຈົນກະທັ້ງວ່າຢາກໄປກວດເຮືອນນາຍົກ ຫຼື ລັດຖະມົນຕີທັງກາງວັນ ແລະ ກາງຄືນກໍໄດ້. ພຸຍ ຊະນະນິກອນກໍເຫັນດີໃຫ້ຄະນະກຳມະການສາກົນໄປກວດໄດ້ຕາມຄຳເຫັນຂອງພວກຜູ້ແທນຝ່າຍຕາເວັນຕົກ ໂດຍໃຫ້ເຫດຜົນວ່າແມ່ນເພື່ອສະແດງ-ນ້ຳໃສໃຈຈິງຂອງທຸກຝ່າຍໃນລາວ. ຄະນະຜູ້ແທນແນວລາວຮັກຊາດຄັດຄ້ານຂໍ້ສະເໜີອັນ ນີ້ເພາະມັນແຕະຕ້ອງເຖິງເອກະລາດ ແລະ ອຳນາດອະທິປະໄຕຂອງປະເທດລາວ ໂດຍເວົ້າວ່າບໍ່ມີຄະນະກຳມະການສາກົນອັນໃດຈະມີສິດອຳນາດສູງກວ່າລັດຖະບານປະເທດໜຶ່ງໄດ້ແລະຄະນະກຳມະການອັນນັ້ນຕ້ອງເປັນຜູ້ຊ່ວຍລັດຖະບານລາວ ແລະ ເຮັດວຽກກວດກາຕາມຄຳ-ຮຽກຮ້ອງຂອງລັດຖະບານລາວ. ການຖົກຖຽງກັນກ່ຽວກັບບັນຫານີ້ກິນເວລາຫຼາຍເດືອນ ຈຶ່ງຕົກລົງກັນໄດ້ ແລະ ໄດ້ແຕ່ງຕັ້ງໃຫ້ສະຫະພາບໂຊວຽດ ແລະ ອັງກິດເປັນປະທານຄູ່ຂອງ -

ກອງປະຊຸມ, ໃຫ້ຄະນະຜູ້ແທນອິນເດຍເປັນປະທານຄະນະກຳມະການສາກົນກວດກາ ແລະ ຄວບຄຸມການປະຕິບັດສັນຍາເຊີແນວ, ໃຫ້ຄະນະຜູ້ແທນປະເທດໂປໂລຍ ແລະ ການາດາ ເປັນກຳມະການ. ເມື່ອຮ່າງສັນຍາເຊີແນວໄດ້ຮັດ ແລະ ແປເປັນພາສາຕ່າງໆແລ້ວອາເມລິກາ ແລະ ພັກພວກຂອງເຂົາກໍ່ບໍ່ຍອມເຊັນຊື່ໂດຍອ້າງເຫດຜົນວ່າ ພວກເຂົາເປັນຜູ້ແທນລັດຖະບານບໍ່ຍອມເຊັນສັນຍາກັບ 3 ຄະນະພັກການເມືອງຂອງລາວ, ຕ້ອງຄອຍຖ້າຮອດມື້ລາວມີຄະນະຜູ້ແທນລັດຖະບານອັນດຽວກັນແລ້ວຈຶ່ງຈະຍອມເຊັນຊື່ໃສ່ສັນຍາ.

ຄວາມຫຍຸ້ງຍາກດັ່ງກ່າວນັ້ນແມ່ນເປັນຍ້ອນຈັກກະພັດອາເມລິກາ ພວມສົ່ງກອງທະຫານ ແລະ ອາວຸດຍຸດທະພັນຂຶ້ນໄປແຂວງນ້ຳທາບໍ່ທັນແລ້ວ ເພື່ອກຽມຕີຍຶດເອົາພາກເໜືອຂອງລາວ. ຢູ່ທາງເມືອງລາວສູນກາງແນວລາວຮັກຊາດ ແລະ ລັດຖະບານສຸວັນນະພູມາໄດ້ເຊີນພວກພູມີ ບຸນອຸ້ມ ໄປປະຊຸມກັນທີ່ຫີນເຫີບ ແລະ ນາມອນເພື່ອຈັດຕັ້ງລັດຖະບານປະສົມ, ແຕ່ກໍ່ບໍ່ໄດ້ຜົນຫຍັງ. ສູນກາງພັກໄດ້ເອີ້ນເຂົາກັບຄືນມາລາຍງານກ່ຽວກັບກອງປະຊຸມ ແລະ ກຳເອົາສະພາບການບ້ານເມືອງລາວ. ເຂົາໄດ້ຖືກແຕ່ງຕັ້ງໃຫ້ນຳກອງທະຫານຂຶ້ນໄປຕີສັດຕູປົດປ່ອຍນ້ຳທາເພື່ອບັງຄັບໃຫ້ພວກຫຸ່ນວຽງຈັນຈັດຕັ້ງລັດຖະບານປະສົມກັບພວກເຂົາ. ຕັ້ງແຕ່ມື້ເປີດສາກບຸກໂຈມຕີສັດຕູຮອດມື້ໄດ້ຮັບໄຊຊະນະຮາບຄາບກິນເວລາອາທິດໜຶ່ງເຕັມໆ. ພົດທຸກປ້ອມໝັ້ນ, ທຸກຄ້າຍຕັ້ງທັບ ແລະ ທຸກກອງພັນທະຫານສັດຕູຖືກທຳລາຍຢ່າງສິ້ນເຊີງ. ພວກເຂົາຈັບສະເລີຍເສິກໄດ້ຫຼາຍພັນຄົນ ແລະ ຍຶດໄດ້ອາວຸດຍຸດທະພັນເປັນຈຳນວນມາກຫຼາຍ. ຜູ້ບັນຊາການ ແລະ ນາຍທະຫານສັດຕູສິບກວ່າຄົນໄດ້ໂຕນໜີໄປພົ້ນ. ປະຊາຊົນພົດທັງແຂວງນ້ຳທາ-ໄດ້ຖືກປົດປ່ອຍມາເປັນອິດສະຫຼະ, ຊົມຊື່ນເບີກບານ ແລະ ພາກັນກິນລ້ຽງສະຫຼອງໄຊຊະນະໃນທຸກບ້ານຢ່າງພົດສະນັ່ນຫຼາຍວັນ ແລະ ຄືນລຽນຕິດກັນໃນທົ່ວແຂວງ. ສຽງປືນນົກວຽບລົງໄດ້ເຮັດໃຫ້ແມ່ນ້ຳລຳທານ, ຕົ້ນໄມ້ ແລະ ສັດສາວາສິ່ງໃນພູພາປ່າດົງລ້ວນແຕ່ດີອົກດີໃຈທີ່ບໍ່ມີສັດຕູຈະມາທຳລາຍລ້າງຜານພວກເຂົາອີກ. ຝູງປາໃຫຍ່ນ້ອຍຢູ່ທ່າງຟູ່ຂຶ້ນມາໜ້ານ້ຳອາບ - ແສງແດດຢ່າງເບີກບານ. ສຽງໄກ່ປ່າຂັນປົນເປກັບສຽງຮ້ອງຝູງນົກນາງໆຊະນິດ ປະສານກັບສຽງກວາງຟານ, ນົ່ງເນີຍດັ່ງສະນັ່ນເຕັມປ່າໄມ້ດົງດອນອັນຂຽວສະອຸ່ມສະຫຼັບສີກັບດອກຝາງ, ດອກບານແດງ ແລະ ດອກບານຂາວເພີ່ມດັ່ງແຂ່ງກັນໂອນອ່ອນຟ້ອນຕາມສາຍລົມອັນເຢືອກເຢັນເພື່ອກຽມຕ້ອນຮັບສາຍຝົນທີ່ຫຼັ່ງລົງມາເຕືອນປະຊາຊົນໃຫ້ລົງມືໄຖນາປູກຝັງ ສ້າງຄວາມອີ່ມໜຳສຳລານໃຫ້ແກ່ຊີວິດອັນສະຫງົບຂອງຕົນ.

ບາດນີ້ພວກຈັກກະພັດອາເມລິກາ ແລະ ພູມີ-ບຸນອຸ້ມ ເຊິ່ງເມື່ອກ່ອນນອດອີ່ງເບິດໜ້າ-ເບື່ອງແຕ່ກາງຫາວໄດ້ກັບກາຍມາເປັນຄົນ"ຮູ້ຄວາມ" ແລະຮັບມາເຈລະຈາກັບພວກເຂົາທີ່ ລັງໜາແລນ (ທົ່ງໄຫຫີນ) ດ້ວຍໜ້າຕາຍິ້ມແຍ້ມແຈ່ມໃສໃນເດືອນມິຖຸນາປີ 1962. ເປັນໜ້າສະອອນໃຈທີ່ບົດຮຽນນ້ຳທາໄດ້ສາມາດປ່ຽນຈິດໃຈຜູ້ອວດອີ່ງທະນົງຕົວ ໃຫ້ກັບມາເປັນຄົນກະເຈົ້

ກະຈ້າກອ່ອນຫວານ ! ການເຈລະຈາໄດ້ດຳເນີນໄປດ້ວຍຄວາມເຂົ້າໃຈກັນດີ ແລະ ໄປເຖິງບ່ອນຕົກລົງກັນໄດ້ຕາມແນວທາງສັນຕິພາບ ເປັນກາງ ແລະ ຖືກຕ້ອງປອງດອງຊາດອັນເປັນເນື້ອໃນຮ່າງສັນຍາທີ່ກອງປະຊຸມໄດ້ກຽມກັນໄວ້ຢູ່ເມືອງເຊີແນວ. ສິ່ງສຳຄັນຕົ້ນອັນໜຶ່ງ ແມ່ນທີ່ປະຊຸມໄດ້ຕົກລົງສ້າງຕັ້ງລັດຖະບານປະສົມ 3 ຝ່າຍອັນໂດຍແມ່ນຝ່າຍລັດຖະບານ ສຸວັນນະພູມາ ແລະ ແນວລາວຮັກຊາດ ໄດ້ທີ່ນັ່ງສອງສ່ວນສາມໃນລັດຖະບານ ແລະ ໜຶ່ງສ່ວນສາມແມ່ນປະໃຫ້ຝ່າຍ ພູມີ-ບຸນອຸ້ມ. ເຈົ້າສຸວັນນະພູມາໄດ້ເປັນນາຍົກລັດຖະມົນຕີ, ຮອງນາຍົກຜູ້ທີ່ໜຶ່ງແມ່ນສະຫາຍສຸພານຸວົງ, ຮອງນາຍົກຜູ້ທີ່ສອງແມ່ນ ພູມີ ໜໍ່ສະຫວັນ, ເຈົ້າບຸນອຸ້ມໄດ້ເຊັນສັນຍາທິ້ງໄຫຫີນປິດໂຕເອງອອກຈາກທຸກຕຳແໜ່ງ ໃນລັດຖະບານຢ່າງໜ້າສົງເວດທີ່ສຸດ! ກະຊວງຕ່າງໆໄດ້ຖືກແບ່ງປັນຕາມຄວາມຕົກລົງຂອງທັງສາມຝ່າຍ. ເທື່ອນີ້ແມ່ນເທື່ອທີ່ 2 ທີ່ເຮົາໄດ້ເຂົ້າຮ່ວມລັດຖະບານເປັນລັດຖະມົນຕີກະຊວງຖະແຫຼງຂ່າວ ໂຄສະນາການ, ວັດທະນະທຳ ແລະທ່ອງທ່ຽວ. ທີ່ປະຊຸມໄດ້ເປັນເອກະສັນກັນຕົກລົງ ໃຫ້ຝ່າຍເປັນກາງຂອງເຈົ້າສຸວັນນະພູມາ ແລະ ຝ່າຍແນວລາວຮັກຊາດເອົາກອງທະຫານຝ່າຍລະໜຶ່ງກອງຮ້ອຍ ເຂົ້າມາຕັ້ງຢູ່ວຽງຈັນ ເພື່ອປ້ອງກັນຄວາມປອດໄພຂອງຕົນ, ໃຫ້ເອີ້ນຊື່ກອງທະຫານຝ່າຍ ສຸວັນນະພູມາ ວ່າແມ່ນ ກຳລັງເປັນກາງ, ຝ່າຍແນວລາວຮັກຊາດວ່າກຳລັງແນວລາວຮັກຊາດ ແລະ ຝ່າຍພູມີ-ບຸນອຸ້ມວ່າ ກຳລັງຝ່າຍຂວາວຽງຈັນ. ຫຼັງຈາກນັ້ນ ລັດຖະບານກໍ່ໄດ້ປະຊຸມກັນແຕ່ງຕັ້ງຄະນະຜູ້ແທນລັດຖະບານລາວ ໂດຍແມ່ນທ່ານ ກີນີມ ພົນເສນາ ເປັນຫົວໜ້າ ເຮົາເອງ ແລະ ໂງ່ນ ຊະນະນິກອນ ເປັນກຳມະການ ໄປເຊັນສັນຍາເຊີແນວໃນເດືອນ 7 ປີ 1962.

ຄະນະຜູ້ແທນລາວ ແລະ ຫວຽດນາມ ໄປເຊັນສັນຍາເຊີແນວກ່ຽວກັບລາວ

(27 ມິຖຸນາ 1962) .

ຂ່າວການເຊັນສັນຍາອັນນີ້ ໄດ້ເຮັດໃຫ້ປະຊາຊົນລາວທັງມວນ ແລະ ປະຊາຊົນຜູ້ຮັກຫອມສັນຕິພາບໃນທົ່ວໂລກລ້ວນແຕ່ດີໃຈ ແລະ ຊົມເຊີຍຄົນລາວທີ່ສາມາດນຳເອົາຄວາມສະຫງົບມາສູ່ປະເທດຂອງຕົນໄດ້. ພັກຂອງພວກເຮົາຖືວ່າສິ່ງທີ່ໄດ້ຮັບມານັ້ນ ແມ່ນຜົນງານ ແຫ່ງການຕໍ່ສູ້ອັນລ້ຳບາກຍາວນານຂອງປະຊາຊົນລາວທຸກຊົນເຜົ່າ, ແມ່ນໄຊຊະນະອັນໃຫຍ່ຫຼວງ ແລະງົດງາມຂອງປະຊາຊົນລາວເຮົາ ທີ່ສາມັກຄີພາຍໃນຢ່າງແໜ້ນແຟ້ນອ້ອມຂ້າງພັກປະຊາຊົນລາວ, ສາມັກຄີແບບສູ້ຮົບກັບປະຊາຊົນຫວຽດນາມ ແລະ ກຳປູເຈຍ, ສາມັກຄີພັກແໜ້ນ ແລະ ຮ່ວມມືຢ່າງຮອບດ້ານກັບປະຊາຊົນໂຊວຽດ ແລະ ປະເທດສັງຄົມນິຍົມອ້າຍນ້ອງ.

ຫຼັງຈາກຈັດຕັ້ງລັດຖະບານປະສົມສາມຝ່າຍຂຶ້ນໄດ້ແລ້ວ ສູນກາງພັກປະຊາຊົນລາວ ໄດ້ລວມປະຊຸມກັນເພື່ອຕີລາຄາໄຊຊະນະຂອງພວກເຮົາ. ສູນກາງພັກໄດ້ເຫັນພ້ອມ ເປັນເອກະສັນກັນວ່າ ການທີ່ສັດຕູຍອມເຊັນສັນຍາທົ່ງໄຫຫີນ ແລະ ສັນຍາເຈນີວນຳພວກເຮົານັ້ນດ້ານໜຶ່ງກໍ່ແມ່ນເປັນຍ້ອນພວກມັນປະລາໄຊໜັກ ຕໍ່ການບຸກໂຈມຕີຢ່າງກວ້າງຂວາງ ແລະເຂັ້ມແຂງຂອງພວກເຮົາ ແລະ ອີກດ້ານໜຶ່ງນັ້ນກໍ່ພຽງແຕ່ແມ່ນກົນອຸບາຍຂອງພວກມັນ ທີ່ຢາກໃຫ້ມີການພັກຮົບເພື່ອປັບປຸງກຳລັງຝ່າຍຂວາຂອງພວກມັນ ທີ່ອ່ອນແອຍ້ອນບໍ່ເປັນເອກະພາບກັນ; ພວກມັນຍັງບໍ່ທັນປະລະເລີກັນທີ່ຈະໃຊ້ກຳລັງໂຄ່ນລົ້ມລັດຖະບານປະສົມຊຸດໃໝ່ ເພື່ອສືບຕໍ່ແຊກແຊງຮຸກຮານລາວ. ດ້ວຍເຫດນັ້ນ ພວກເຮົາຈຶ່ງບໍ່ເພິ່ງພໍໃຈຢ່າງສົມບູນຕໍ່ຜົນງານທີ່ຍາດເອົາມາໄດ້ໃນເທື່ອນີ້. ພວກເຮົາບໍ່ຍອມເວົ້າເຖິງການມອບເຂດປົດປ່ອຍ, ການລຶດພ້ອນກຳລັງ

ກັບຈາກເຈນີວມາຮອດເຮືອນທີ່ ຄັງໄຂ 27 - 4 - 1962

ທະຫານ ແລະການມອບອາວຸດຂອງພວກເຮົາໃຫ້ແກ່ລັດຖະບານປະສົມຄືທີ່ໄດ້ເຮັດໃນປີ 1957 ອີກ. ພວກເຮົາຍິ່ງເພີ່ມທະວີສະຕິລະວັງຕົວ ແລະ ໃຊ້ເວລາພັກຮົບເພື່ອຂະຫຍາຍ ແລະປັບປຸງກໍາລັງທະຫານ ແລະ ພື້ນຖານການເມືອງຂອງພວກເຮົາໃຫ້ກວ້າງຂວາງ ແລະເຂັ້ມແຂງຂຶ້ນຊັກໄຊ້ເພື່ອຮັບມືກັບທຸກເຫດຮ້າຍທີ່ອາດຈະເກີດຂຶ້ນ.

ການກະຕວງຂອງສູນກາງພັກພວກເຮົາ ໄດ້ປະກົດແຈ້ງຂຶ້ນຊັກໄຊ້. ພໍແຕ່ລັດຖະບານປະສົມເຂົ້າມາຕັ້ງຢູ່ວຽງຈັນ, ພວກສັດຕູກໍອອກແຮງຊື້ຈ້າງ ແລະ ຍາດແຍ່ງເອົາເຈົ້າສຸວັນນະພູມາ, ກອງແລ ແລະ ພວກລູກນ້ອງຂອງເຂົາທີ່ມີທັດສະນະມິດ-ສັດຕູ ບໍ່ຈະແຈ້ງ. ເຈົ້າສຸວັນນະພູມາ ແລະ ກອງແລຖືວ່າ ການຈັດຕັ້ງລັດຖະບານປະສົມຂຶ້ນໄດ້ເທື່ອນີ້ ແມ່ນຜົນສຸດທ້າຍແຫ່ງການຕໍ່ສູ້ຂອງພວກເຂົາແລ້ວ. ພວກເຂົາຕິດຕໍ່ພົວພັນກັບອາເມລິກາ ແລະລູກສະໝຸນຂອງມັນຕາມແບບປົກກະຕິ ແລະ ຢາກຫວງໃຫ້ກໍາລັງແນວລາວຮັກຊາດ, ກໍາລັງເປັນກາງ ແລະ ກໍາລັງປະຕິການຝ່າຍຂວາລວມເຂົ້າກັນເປັນກອງທັບແຫ່ງຊາດ ແລະ ຫວງໃຫ້ພວກເຮົາມອບເຂດປົດປ່ອຍທັງໝົດໃຫ້ຢູ່ພາຍໃຕ້ການປົກຄອງ ແລະ ການບັງຄັບບັນຊາຂອງພວກເຂົາ ແຕ່ຜູ້ດຽວ. ພວກເຮົາໄດ້ພະຍາຍາມໃຊ້ທຸກວິທີການ ເພື່ອຊີ້ແຈງໃຫ້ພວກເຂົາເຫັນເລ້ກລ້ອນໂຫດຫ້ຽມ ແລະ ແນບນຽນຂອງສັດຕູ, ແຕ່ພວກເຂົາບໍ່ເຫັນດີນໍາ. ຕໍ່ຈາກນັ້ນກໍາລັງເປັນກາງຂອງພວກເຂົາເອງກໍ່ຖືກແບ່ງແຍກ, ຂັດແຍ້ງ ແລະ ຕີກັນເອງ ; ພວກໜຶ່ງ ໄປນໍາກອງແລ ແລະ ເຈົ້າສຸວັນນະພູມາເພື່ອຮ່ວມມືກັບຈັກກະພັດອາເມລິກາ, ພວກໜຶ່ງທີ່ມີຫຼັກໝັ້ນ ປະຕິວັດ ແລະ ທັດສະນະມິດສັດຕູໜັກແໜ້ນ ພາຍໃຕ້ການນໍາພາຂອງທ່ານ ກິນິມ ພົນເສນາ, ຄໍາສຸກ ແກ້ວລາ, ເຮືອນ ມົງຄົນວິໄລ, ມະຫາກຸ ສຸວັນນະເມທີ, ເດືອນ, ທຽບ, ກອງສີ, ແຈງ ແລະ ອື່ນໆ ຕັດສິນໃຈຮ່ວມມືກັບແນວລາວຮັກຊາດ ເປັນກໍາລັງເປັນກາງຮັກຊາດ ເພື່ອສືບຕໍ່ຕ້ານຈັກກະພັດອາເມລິກາ. ກອງແລຄຽດ ໄດ້ນໍາເອົາກອງທະຫານປະຕິການຂອງເຂົາ ມາໂຈມຕີກໍາລັງຮັກຊາດ ແຕ່ຫາກຖືກຕີຕ້ານຄືນໃຫ້ປະລາໄຊ ຈຶ່ງໄດ້ພາກັນຖອຍໜີໄປວຽງຈັນເພື່ອເປັນລູກນ້ອງຂອງພູມີ ໜໍ່ສະຫວັນ ແລະ ອາເມລິກາຄືເກົ່າ. ສອງສາມເດືອນຕໍ່ມາ ຈັກກະພັດອາເມລິກາ ກໍ່ປົດຕໍາແໜ່ງກອງແລອອກຈາກການທະຫານ ແລ້ວຂັບໄລ່ມັນອອກຈາກດິນລາວໄປຢູ່ປະເທດອິນໂດເນເຊຍ, ຫຼັງຈາກນັ້ນ ມັນກໍ່ມາພັກຢູ່ຮ່ອງກົງເວລາໜຶ່ງ ແລ້ວກໍ່ໄປຢູ່ປະເທດຝະລັ່ງ ແລະ ກັບມາເປັນເຄື່ອງມືຂອງພວກປະຕິການຈີນ ຢ່າງບໍ່ມີເທວະດາຫໍ່ເຍຍ ແລະ ອ້າຍໃຕ່ງກວ້າງປາກກະດີງມາຊ່ວຍເຫຼືອອີກແລ້ວ. ສ່ວນກໍາລັງເປັນກາງຮັກຊາດທີ່ສືບຕໍ່ຮ່ວມມືກັບແນວລາວຮັກຊາດ ໄດ້ມີຄວາມກ້າວໜ້າຂະຫຍາຍຕົວ ທັງທາງດ້ານປະລິມານແລະຄຸນະພາບ ພ້ອມກັນບຸກຕີຍາດເອົາໄຊຊະນະນັບມື້ນັບໃຫຍ່ຫຼວງຂຶ້ນຊັກໄຊ້. ອັນນີ້ມັນສະແດງໃຫ້ເຫັນແຈ້ງວ່າໃນການເຮັດການປະຕິວັດນີ້ແນວທາງເປັນອັນສໍາຄັນທີ່ສຸດ. ຜູ້ໃດມີແນວທາງອັນຖືກຕ້ອງນັ້ນແມ່ນຈະພົບຄວາມຫຍຸ້ງຍາກແນວໃດກໍ່ສາມາດຜ່ານຜ່າ ໄປຍາດເອົາໄຊຊະນະ

ຂັ້ນສຸດທ້າຍໄດ້. ສ່ວນຜູ້ທີ່ບໍ່ມີແນວທາງອັນຖືກຕ້ອງນັ້ນມີແຕ່ພົບຄວາມຫຍຸ້ງຍາກທຸກດ້ານ ຢ່າງແກ້ບໍ່ໄດ້ ; ທ້າຍສຸດກໍ່ຕ້ອງກົ້ມຫົວໄປຍອມເປັນລູກມືຂອງສັດຕູຢ່າງອັບອາຍຂາຍໜ້າທີ່ສຸດ.

XI. ການເຮັດວຽກໃນລັດຖະບານປະສົມ

ລັດຖະບານປະສົມຊຸດກ່ອນກໍ່ຄືຊຸດນີ້ ມັນເປັນພຽງແຕ່ເວທີຕໍ່ສູ້ທາງການເມືອງ ລະຫວ່າງພວກເຮົາກັບສັດຕູເທົ່ານັ້ນ. ໃນກອງປະຊຸມແຕ່ລະຄັ້ງຕ່າງຝ່າຍກໍ່ຕ່າງສູ້ຖຽງໃຫ້ປະຕິບັດຕາມແຜນການຂອງຕົນ. ແຜນການຂອງຝ່າຍແນວລາວຮັກຊາດ ແມ່ນທວງໃຫ້ປະຕິບັດສັນຍາ ທົ່ງໄຫຫີນ ແລະ ສັນຍາເຊີແນວ, ທວງໃຫ້ຈັກກະພັດອາເມລິກາ ແລະ ລູກສະໝຸນຂອງມັນຖອນທັບອອກຈາກລາວ ເພື່ອປ່ອຍໃຫ້ຄົນລາວແກ້ໄຂບັນຫາທີ່ກ່ຽວກັບປະເທດຕົນເອົາເອງ. ແຜນການຂອງຈັກກະພັດອາເມລິກາ ແມ່ນຢາກໃຫ້ແນວລາວຮັກຊາດຢຸດເຊົາການພົວພັນກັບຫວຽດນາມ, ສະຫະພາບໂຊວຽດ ແລະ ປະເທດສັງຄົມນິຍົມຕ່າງໆ, ໃຫ້ແນວລາວຮັກຊາດ ມອບເຂດປົດປ່ອຍ ແລະ ກອງທະຫານຂອງຕົນໃຫ້ລັດຖະບານປະສົມ ແລ້ວພ້ອມກັນປົກຄອງ ບ້ານເມືອງຕໍ່ໄປ ຕາມລະບອບເກົ່າໂດຍຮັບເອົາການຊ່ວຍເຫຼືອຈາກປະເທດນາຍທຶນແຕ່ຝ່າຍດຽວ. ເຈົ້າສຸວັນນະພູມາກໍ່ເຫັນດີຕາມແຜນການອາເມລິກາອັນນີ້. ຍ້ອນວ່າຫຼັກໝັ້ນຂອງແຕ່ລະຝ່າຍ-ມັນໄກກັນຫຼາຍ, ການຖົກຖຽງກັນເພື່ອແກ້ໄຂບັນຫາຂອງຊາດ ຈຶ່ງພົບຄວາມຫຍຸ້ງຍາກ ທີ່ຫາທາງອອກຢ່າງເປັນເອກະສັນກັນບໍ່ໄດ້.

ບັນຫາດຽວທີ່ທຸກຝ່າຍເຫັນດີນຳກັນ, ນັ້ນຄືການປະຕິບັດຕາມຄວາມປະສົງຂອງເຈົ້າຊີວິດສີສະຫວ່າງວັດທະນາ. ເຈົ້າຊີວິດດີໃຈຫຼາຍທີ່ໄດ້ເຫັນສັນຕິພາບຕ່າວຄືນມາ ໃນລາຊະອານາຈັກລາວ ໂດຍບໍ່ມີການສັ່ນສະເທືອນເຖິງພະລາຊະບັນລັງຂອງເພິ່ນ. ເພິ່ນໄດ້ສະແດງຄວາມປະສົງຢາກໄປຢ້ຽມຢາມບັນດາປະເທດທີ່ໄດ້ຮ່ວມເຊັນສັນຍາເຊີແນວກ່ຽວກັບລາວ. ກາງເດືອນກຸມພາ 1963 ລັດຖະບານໄດ້ຈັດຕັ້ງໃຫ້ເພິ່ນໄປ ໂດຍໃຫ້ເຈົ້າສຸວັນນະພູມານາຍົກລັດຖະມົນຕີ ແລະລັດຖະມົນຕີ 3 ຄົນເປັນຄະນະໄປນຳເພິ່ນຄື ທ່ານກີນິມ ພົນເສນາ ລັດຖະມົນຕີກະຊວງການຕ່າງປະເທດ, ໂງ່ນ ຊະນະນິກອນ ລັດຖະມົນຕີກະຊວງໂຍທາ ແລະ ເຮົາເອງ ທີ່ເປັນລັດຖະມົນຕີກະຊວງຖະແຫຼງຂ່າວ, ໂຄສະນາການ, ວັດທະນະທຳ ແລະ ທ່ອງທ່ຽວ ; ນອກນັ້ນກໍ່ມີເລຂາປະຈຳຂອງເພິ່ນ ແລະ ນາຍທະຫານຝ່າຍວຽງຈັນ ແລະ ຝ່າຍເປັນກາງອີກຫຼາຍຄົນ. ການເດີນທາງແມ່ນເລີ່ມຕົ້ນໄປຢາມສະຫະພາບໂຊວຽດ ແລ້ວໄປປະເທດໂປໂລຍ, ສະຫະລັດອາເມລິກາ ; ຈາກນັ້ນກໍ່ກັບມາຜ່ານປະເທດໂປໂລຍ ແລະສະຫະພາບໂຊວຽດເພື່ອໄປສາທາລະນະລັດ ປະຊາຊົນຈີນ, ສາທາລະນະລັດປະຊາທິປະໄຕຫວຽດນາມ, ອິນເດຍ, ພະມ້າ, ກຳປູເຈຍ ແລະໄທ. ໄປປະເທດໃດເພິ່ນກໍ່ອ່ານຄຳປາໄສ ເວລາກິນລ້ຽງ ແລະ ເຊັນຖະແຫຼງການຮ່ວມເຊິ່ງພວກເຮົາທັງ 3 ຄົນ ໄດ້ຂຽນ ແລະ ກວດ

ກາດັດແປງໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງລັດຖະບານ. ໃນການຂຽນເອກະສານດັ່ງກ່າວນັ້ນຢູ່ໃນແຕ່ລະປະເທດ, ໂງ່ນ ຊະນະນິກອນ ໄດ້ຊອກຫຼາຍເຫດຜົນມາຕັດ ຫຼື ເພີ່ມເຮັດໃຫ້ມັນເປັນໄປຕາມຫຼັກໝັ້ນຂອງຝ່າຍຂວາວຽງຈັນ, ແຕ່ທ່ານກີນີມ ແລະ ເຮົາເປັນເອກະພາບກັນ ອີງໃສ່ສັນຍາທົ່ງໄຫຫີນ ແລະ ສັນຍາເຊີແນວ ເຊິ່ງເຈົ້າສຸວັນນະພູມາ ກໍ່ເຫັນພ້ອມນຳມັນ ຈຶ່ງຈຳເປັນຕ້ອງຮັບເອົາຕາມຄຳເຫັນຂອງພວກເຮົາ.

ເຖິງວ່າຈະບໍ່ທັນໄດ້ໄປຢ້ຽມຢາມໝົດທຸກປະເທດ ຍ້ອນເວລາຈຳກັດກໍ່ຕາມ, ເຈົ້າຊີວິດກໍ່ພໍໃຈນຳການທັດສະນາຈອນຄັ້ງນີ້, ເພາະວ່າປະຊາຊົນໝົດທຸກປະເທດໄດ້ຊົມເຊີຍສັນລະເສີນຄວາມຖືກຕ້ອງປອງດອງຊາດຂອງຄົນລາວ ແລະ ໄດ້ຍົກຍໍຖານະ ແລະ ກຽດຂອງເພິ່ນ ຂັ້ນສູງ. ຫຼັງຈາກກັບຄືນມາຮອດວຽງຈັນໃນວັນທີ 30 ມີນາແລ້ວ, ວັນທີ 1 ເມສາ 1963 ເຈົ້າຊີວິດໄດ້ຈັດການກິນລ້ຽງໃຫຍ່ຢູ່ທີ່ຫໍຄຳ ອັນເປັນບ່ອນຮັບແຂກຂອງເພິ່ນ ກ່ອນຈະອອກເດີນທາງກັບຄືນສູ່ຫຼວງພະບາງໃນມື້ຕໍ່ໄປ. ໃນໂອກາດນັ້ນເຈົ້າຊີວິດໄດ້ກ່າວຂອບໃຈທຸກຄົນທີ່ໄດ້ຊ່ວຍເຫຼືອເວລາເດີນທາງ ພ້ອມທັງທຸກຄົນທີ່ປົກຄອງບ້ານເມືອງຖາ ໂດຍບໍ່ມີເຫດໄພຫຍັງເກີດຂຶ້ນ ແລະຮຽກຮ້ອງໃຫ້ທຸກຄົນຈົ່ງສາມັກຄີຮັກແພງກັນ, ພ້ອມກັນສ້າງແປງບ້ານເມືອງໃຫ້ຈະເລີນຮຸ່ງເຮືອງຕໍ່ໄປ.

ພາຍຫຼັງທີ່ພວກເຮົາອອກເດີນທາງໄປຢ້ຽມຢາມຕ່າງປະເທດນັ້ນ, ຢູ່ທາງບ້ານ ຈັກກະພັດອາເມລິກາ-ພູມີ ໜໍ່ສະຫວັນ-ພຸຍ ຊະນະນິກອນ-ກຸປະສິດ ອະໄພ ໄດ້ພ້ອມກັນວາງແຜນ-ການໂຄ່ນລົ້ມລັດຖະບານປະສົມຊຸດນີ້ດ້ວຍການຄາດຕະກຳ ທ່ານກີນີມ ພົນເສນາ ແລະ ຜູ້ນຳແນວລາວຮັກຊາດທີ່ເຂົ້າຢູ່ໃນລັດຖະບານ, ໂດຍສະເພາະແມ່ນສະຫາຍສຸພານຸວົງ ແລະເຮົາເອງ. ພວກເຂົາໄດ້ແຕ່ງໃຫ້ນາຍທະຫານຊັ້ນພັນຕີຄົນໜຶ່ງ ຫຳທ່າພາເນຍ ແລະ ລູກນ້ອຍໂຕນໜີຈາກກອງທະຫານຝ່າຍຂວາວຽງຈັນ ມາລີ້ຢູ່ເຮືອນຄົວທ່ານກີນີມ ພົນເສນາ ເພື່ອອິບຮິບ ແລະ ຊື້ຈ້າງເອົາທະຫານປ້ອງກັນຂອງເພິ່ນ ແລະ ວາງແຜນເຮັດການຄາດຕະກຳ ດັ່ງກ່າວນັ້ນ. ໃນຄືນວັນທີ 1 ເມສາ 1963, ເວລາ ປະມານ 11 ໂມງກາງຄືນ ທ່ານກີນີມ ພົນເສນາ ແລະ ພັນລະຍາກັບຈາກໄປກິນລ້ຽງທີ່ຫໍຄຳມາຮອດເຮືອນ ລົງລົດແລ້ວຍ່າງເຂົ້າເຮືອນເບື້ອງປະຕູທາງກ້ອຍ ກໍ່ຖືກທະຫານປ້ອງກັນເພິ່ນຊື່ ບັກກອງ ໃຊ້ປືນອາກາ ຍິງໃສ່ຫຼັງແລະຫົວເພິ່ນລົ້ມຕາຍລົງຕໍ່ໜ້າປະຕູ ແລະ ຍິງໃສ່ຂາແລະຕີນພັນລະຍາຂອງເພິ່ນ ລົ້ມລົງຮຽງກັນ, ແລ້ວພວກອື່ນກໍ່ມາຊ່ວຍຫາມພວກເພິ່ນໄປນອນໄວ້ກາງເຮືອນ ແລະ ພາກັນຢູ່ຍາມບໍ່ໃຫ້ຜູ້ໃດເຂົ້າໄປໃນຂອງບ້ານຫຼັງນັ້ນ. ເຮົາຕິໂທລະສັບບອກໃຫ້ເຈົ້າຊີວິດ, ເຈົ້າສຸວັນນະພູມາ ແລະ ເພັງ ພົງສະຫວັນ ກໍ່ບໍ່ມີຜູ້ໃດກ້າມາເບິ່ງຈົນຮອດມື້ອື່ນເຊົ້າ ຈຶ່ງພາກັນມາສືບສວນກວດກາ, ຈັບບັກກອງໄປຂັງຄຸກ ກຽມມ້ຽນຄາບສົ່ງສະການທ່ານກີນີມ ພົນເສນາ ແລະ ປິ່ນປົວຂາພັນລະຍາຂອງເພິ່ນພໍທຸເລົາ ແລ້ວກໍ່ສົ່ງລາວໄປສືບຕໍ່ປິ່ນປົວທີ່ປະເທດຫວຽດນາມ.

ຂ່າວການຄາດຕະກຳທ່ານກີນີມ ພົນເສນາ ແຜ່ພາຍໄປຮອດບ່ອນໃດ ປະຊາຊົນລາວ ແລະ ບຸກຄົນຜູ້ຮັກຫອມສັນຕິພາບ ແລະ ຄວາມເປັນທຳໃນທົ່ວທຸກແຫ່ງຫົນພາກັນຈົ່ມຄຽດແລະ ກ່າວປະນາມພວກກະຫາຍສົງຄາມຢ່າງຟົດຟື້ນ. ແຕ່ວ່າພວກມັນກໍບໍ່ຢຸດເຊົາຄວາມບ້າເລືອດ - ຂອງພວກມັນ ເພາະວ່າຈັກກະພັດອາເມລິກາຈ່າຍເງິນຈ້າງ ແລະ ຊຸກຍູ້ພວກມັນ ໃຫ້ເດີນ ເລິກເຂົ້າໄປກໍ່ການວຸ້ນວາຍແຮງກວ່າເກົ່າ. ພວກມັນຈັດຕັ້ງຄະນະເພັດຊະຄາດຂຶ້ນ ເພື່ອພິ ປ້ອງຂ້າສະຫາຍສຸພານຸວົງ ແລະ ເຮົາເອງ ຫຼັງຈາກບຸນປີໃໝ່ລາວແລ້ວ. ເຈົ້າສຸວັນນະພູມາ ຮູ້ເລື່ອງນີ້ ກໍເອົາເຮືອບິນພາສະຫາຍສຸພານຸວົງ ແລະ ເມຍເຮົາໄປສົ່ງທີ່ຄັງໄຂ (ທົ່ງໄຫຫີນ ແຂວງຊຽງຂວາງ) ແລ້ວກັບມາພາເອົາເຮົາ ແລະ ລັດຖະມົນຕີບາງຄົນຂຶ້ນໄປຮ່ວມພິທີ ສະ ຫຼອງບຸນປີໃໝ່ທີ່ຫຼວງພະບາງ. ຢູ່ທີ່ພະລາຊະວັງເຮົາໄດ້ພົບເຈົ້າຊີວິດ ແລະ ໄດ້ເວົ້າກັບເພິ່ນ ວ່າ ພວກປະຕິການຝ່າຍວຽງຈັນປະຕິບັດຕາມຄຳສັ່ງຂອງອາເມລິກາ ພວມກຽມຈະເຮັດການ ຄາດຕະກຳກວ້າງຂວາງອອກ ເພື່ອຈະເຮັດສົງຄາມຄືນໃໝ່ ຕ້ານແນວລາວຮັກຊາດ, ພວກ ເຂົາຈະເຮັດແນວໃດກໍ່ບໍ່ພົ້ນຄວາມປະລາໄຊ, ແຕ່ວ່າປະເທດລາວຈະຖືກມ້າງເພທຳລາຍ , ປະຊາຊົນລາວຈະເສຍເລືອດເນື້ອ ແລະ ຊີວິດຕໍ່ໄປອີກ ; ຂໍໃຫ້ເຈົ້າຊີວິດໃຊ້ສິດອຳນາດສັ່ງ ໃຫ້ພວກເຂົາເຊົາການກະທຳອັນເປັນການລະເມີດສັນຍາ ແລະ ນຳເອົາຄວາມວຸ້ນວາຍ ອັນ ຍັງພໍຫຼີກເວັ້ນໄດ້ນັ້ນມາໃຫ້ແກ່ບ້ານເມືອງ. ເຈົ້າຊີວິດຕອບເຮົາວ່າຈະພະຍາຍາມເຮັດຕາມຄຳ ສະເໜີຂອງເຮົາ ແຕ່ທ່ານກໍຍັງບໍ່ແນ່ໃຈວ່າຈະໄດ້ຜົນ ເພາະວ່າຄົນຈຳພວກນັ້ນ ຟັງຄວາມຄົນ ຕ່າງດ້າວຫຼາຍກວ່າເຈົ້າຊີວິດຂອງຕົນ.

ການສະຫຼອງບຸນປີໃໝ່ເປັນໄປຢ່າງງຽບເຫງົາ ຍ້ອນຂ່າວເລື່ອງບໍ່ດີທີ່ໄດ້ເກີດຂຶ້ນ. ມີຄົນ ຫຼວງພະບາງຫຼາຍຄົນໄດ້ເຕືອນເຮົາວ່າ ໃຫ້ລະມັດລະວັງແທ້ ເພາະວ່າພວກປະຕິການ ວຽງ ຈັນພວມຈະຂ້າເຮົາໃນເວລາເຮົາກັບຄືນໄປແຕ່ຫຼວງພະບາງ, ບ້ານເມືອງເວລານັ້ນ ເປັນ ເໝືອນວ່າບໍ່ແມ່ນສະຫຼອງບຸນປີໃໝ່. ພິທີການຕ່າງໆໄດ້ດຳເນີນໄປພໍແຕ່ຕາມຮີດ ເພາະວ່າຈິດ ໃຈຂອງທຸກຄົນມົວເມົາຄິດຫາແຕ່ເຫດຮ້າຍທີ່ອາດຈະເກີດຂຶ້ນ. ບາງຄົນຍັງໄດ້ຕັກເຕືອນເຮົາ ວ່າຢູ່ຫຼວງພະບາງນີ້ກໍ່ໃຫ້ລະມັດລະວັງແທ້ ເພາະວ່າພວກປະຕິການອາດຈະໃຊ້ລູກມືຂອງເຂົາ ກະທຳຮ້າຍໃສ່ເຮົາ ຢູ່ທີ່ຫຼວງພະບາງນີ້ເອງ. ພວກຄົນທີ່ຮັກແພງເຮົາໄດ້ພາກັນຕິດຕາມປ້ອງ ກັນເຮົາຢ່າງໃກ້ຊິດທີ່ສຸດ. ເຮົາໄດ້ເວົ້າຕອບວ່າ ໃຫ້ໝົດທຸກຄົນຈົ່ງທຸ່ນທ່ຽງ ແລະ ເຊື່ອໝັ້ນ ວ່າທຳມະຕ້ອງຊະນະອະທຳ. ພວກເຂົາອາດຈະກໍ່ຄວາມວຸ້ນວາຍຂຶ້ນໄດ້ ແລະ ອາດຈະຂ້າ ບາງຄົນໄດ້ ແຕ່ທ້າຍສຸດພວກເຂົາຈະຕ້ອງປະລາໄຊ, ແນວລາວຮັກຊາດຈະຕ້ອງຊະນະ , ຝ່າຍປະຊາຊົນລາວຈະຕ້ອງຊະນະ ; ພວກເຮົາຈະບໍ່ຍອມປ່ອຍໃຫ້ພວກເຂົາ ສ້າງຄວາມມືດ ມົນໃສ່ບ້ານເມືອງລາວໄດ້ຢ່າງເດັດຂາດ.

ເຮົາກັບຈາກຫຼວງພະບາງລົງມາຮອດສະໜາມບິນວຽງຈັນ ເຮົາໄດ້ຂຶ້ນເຮືອບິນ ທີ່ນັກບິນ

ໂຊວຽດກຽມໄວ້ຖ້າແລ້ວນັ້ນ ກັບຄືນໄປເຂດປົດປ່ອຍຂອງພວກເຮົາໂລດ. ພວກຮອງລັດຖະມົນຕີຝ່າຍແນວລາວຮັກຊາດຈຳນວນໜຶ່ງ ຍັງສືບຕໍ່ຢູ່ວຽງຈັນ ເພື່ອຕິດຕາມສະພາບການ ແລະ ຮັບເອົາເງິນເດືອນສົ່ງໄປໃຫ້ພວກເຮົາ. ສະພາບການເວລານັ້ນເຄັ່ງຕຶງທີ່ສຸດ. ກອງທະຫານຝ່າຍວຽງຈັນປ່າວຂ່າວວ່າ ຈະເຮັດລັດຖະປະຫານເພື່ອໂຄ່ນລົ້ມລັດຖະບານປະສົມຢູ່ເລື້ອຍໆ. ພວກສັດຕູໃຊ້ທັງການຊື້ຈ້າງຈອບອອຍ ແລະ ການນາບຂູ່ເພື່ອຍົວະໃຫ້ກອງຮ້ອຍທະຫານຝ່າຍແນວລາວຮັກຊາດ ທີ່ຍັງຕັ້ງຢູ່ວຽງຈັນນັ້ນແຕກທະລາຍໄປ, ແຕ່ບໍ່ໄດ້ຮັບຜົນເພາະວ່າ ທາງສຽງສ່ວນຫຼວງຫຼາຍຍັງເຫັນອົກເຫັນໃຈ, ສະໜັບສະໜູນຝ່າຍແນວລາວຮັກຊາດ ແລະຄັດຄ້ານການປະນາມການກະທຳອັນເປັນການກໍ່ສົງຄາມຂອງສັດຕູ.

ກາງເດືອນ 8 ປີ 1963, ເຮົາໄດ້ກັບຄືນມາວຽງຈັນຕາມມະຕິຂອງສູນກາງແນວລາວຮັກຊາດ ເພື່ອສືບຕໍ່ເຮັດໜ້າທີ່ຂອງເຮົາໃນກະຊວງຖະແຫຼງຂ່າວ, ໂຄສະນາການ ແລະທ່ອງທ່ຽວຂອງລັດຖະບານປະສົມ. ແຕ່ວ່າ ພຸຍ ຊະນະນິກອນ ແລະ ພູມີ ໜໍ່ສະຫວັນ ໄດ້ເອົານາຍທະຫານຂອງພວກເຂົາໄປເຮັດວຽກແທນເຮົາຢູ່ກະຊວງນີ້ແລ້ວ ແລະ ບໍ່ຍອມມອບວຽກງານໃຫ້ເຮົາເຮັດ. ເຮົາໄດ້ສະເໜີໃຫ້ເຈົ້າສຸວັນນະພູມາ, ນາຍົກລັດຖະມົນຕີຮຽກປະຊຸມ ຄະນະລັດຖະບານ. ການເຊີນໄປຮອດໝົດທຸກຄົນແລ້ວ, ແຕ່ວ່າຮອດມື້ປະຊຸມມາ ພວກພຸຍ ຊະນະນິກອນ, ພູມີ ໜໍ່ສະຫວັນ ແລະ ຄະນະຂອງເຂົາພາກັນໜີໄປທ່າແຂກ ແລະສະຫວັນນະເຂດໝົດ, ເຮັດໃຫ້ກອງປະຊຸມລັດຖະບານເປີດຂຶ້ນບໍ່ໄດ້. ຕໍ່ຈາກນັ້ນມາ ເຮົາສະເໜີຕໍ່ເຈົ້າສຸວັນນະພູມາວ່າ ໃນເມື່ອຝ່າຍວຽງຈັນບໍ່ຍອມໃຫ້ເຮົາເຂົ້າເຮັດວຽກໃນລັດຖະບານແນວນີ້ ເຮົາຈະກັບຄືນໄປເຂດປົດປ່ອຍຂອງເຮົາ ໃນວັນທີ 10 ກັນຍາ 1963 ເພື່ອຄອຍຖ້າສະພາບການອຳນວຍມື້ໃດຈຶ່ງຈະກັບມາ. ເຈົ້າສຸວັນນະພູມາເຫັນດີຕາມຄຳສະເໜີຂອງເຮົາ ໂດຍສາລະພາບວ່າ ເພິ່ນເອງກໍ່ຢູ່ຍາກເຕັມທີ່ຍອມວ່າ ເພິ່ນໄດ້ເປັນນາຍົກລັດຖະມົນຕີພຽງແຕ່ຊື່ເທົ່ານັ້ນ, ສ່ວນວຽກຕົວຈິງແມ່ນພູມີ ໜໍ່ສະຫວັນ ແລະ ພວກຊະນະນິກອນເຮັດເອົາເອງໝົດ.

ເຮົາເຫັນວ່າສະພາບການເຄັ່ງຕຶງ ກໍ່ຍົກສະຕິລະວັງຕົວໃຫ້ສູງຢູ່ສະເໝີ. ໃນຄືນວັນທີ 9 ກັນຍານັ້ນ, ຫຼັງຈາກກິນເຂົ້າແລງຢູ່ເຮືອນເຮົາ ແລະ ສັ່ງເສຍອ້າຍນ້ອງທະຫານໝົດແລ້ວ ເຮົາໄດ້ຍ້າຍອອກເຮືອນຢ່າງປິດລັບ ໄປນອນຢູ່ເຮືອນສະຫາຍສຸພານຸວົງ ເພື່ອຕັກເຕືອນອ້າຍນ້ອງທະຫານທີ່ນັ້ນໃຫ້ມີສະຕິລະວັງຕົວ ເພາະວ່າໃນກາງຄືນກ່ອນມື້ເຮົາຈະອອກເດີນທາງກັບເມືອນີ້ ພວກສັດຕູອາດຈະເຮັດເລື່ອງບໍ່ດີຂຶ້ນກໍ່ອາດຈະເປັນໄດ້. ໃນຄືນນັ້ນ ເຮົານອນຢ່າງລະມັດລະວັງທີ່ສຸດ, ຫຼັບນ້ອຍດຽວໜຶ່ງຮອດ 24 ໂມງ ເຮົາລຸກມາປຸກອ້າຍນ້ອງທະຫານກຽມຕົວໄວ້ພ້ອມພຽງເພື່ອຮັບມືກັບທຸກເຫດຮ້າຍອັນອາດຈະເກີດຂຶ້ນ. ຕົວເຮົານັ່ງຢູ່ໃກ້ ໂທລະສັບ ແລະ ຈົດນ້ຳເບີໂທລະສັບຂອງທູດຕ່າງໆທີ່ເຮົາຈະຕ້ອງຕິດຕໍ່ນັ້ນໄວ້ຢ່າງພ້ອມພຽງ, ພ້ອມກັນນັ້ນເຮົາກໍ່ເອີ້ນໂທລະສັບໄປບອກໃຫ້ອ້າຍນ້ອງທະຫານຢູ່ເຮືອນເຮົາ ປຸກກັນລຸກເພື່ອສັງຊອມ

ເບິ່ງສະພາບການ.

ໃນຄືນນັ້ນເອງ, ເວລາ 2 ໂມງເຊົ້າ ພວກເຮົາໄດ້ຍິນສຽງປືນກົນໜັກ ຍິງລົງຈາກເຮືອນທ້າວຫຍຸຍ ອະໄພ ໄປໃສ່ເຮືອນເຮົາ ແລະ ເຮືອນອ້າຍນ້ອງປ້ອງກັນ ແລະ ມີຄົນຄວ່າງລະເບີດມືຈາກເຮືອນຮ້ອຍເອກ ບຸນເລີດ ໄຊໂກສີ ທີ່ຢູ່ໃກ້ເຮືອນພວກເຮົານັ້ນເຂົ້າໄປໃສ່ຂວງບ້ານອ້າຍນ້ອງເຮົາຫຼາຍລູກ. ຮອຍເອກ ປະດິດ ທ່ຽງທຳ ທີ່ບັນຊາການກອງຮອຍ ປ້ອງກັນໄດ້ເອີ້ນທາງໂຟນມາບອກເຮົາວ່າ ມີອ້າຍນ້ອງທະຫານພວກເຮົາເສຍຊີວິດໄປໜຶ່ງຄົນແລວ. ເຮົາໄດ້ບອກຮ້ອຍເອກປະດິດ ທ່ຽງທຳວ່າ ໃຫ້ພາອ້າຍນ້ອງຫຸ່ມຫ່ຽງຫາທີ່ກຳບັງໃຫ້ດີ, ເຮົາຈະເຊີນເອົາຄະນະກຳມະການສາກົນ ແລະ ປະທານຄູ່ກອງປະຊຸມເຊີແນວມາແກ້ໄຂເລື່ອງນີ້ດ້ວຍສັນຕິວິທີ, ຕາບໃດບໍ່ໄດ້ຮັບຄຳສັ່ງຂອງເຮົາຢ່າຊູໃຫ້ຜູ້ໃດຍິງປືນໄປຕອບເຂົາ ຢ່າງເດັດຂາດ. ເຮົາເອີ້ນໂທລະສັບຫາທູດໂຊວຽດ ທູດອັງກິດ ແລະ ຄະນະສາກົນທັງ 3 ຄະນະ ເພື່ອຂໍໃຫ້ມາຊ່ວຍພວກເຮົາລະງັບເຫດການອັນບໍ່ເພິ່ງປາຖະໜານີ້, ທຸກຄົນຕອບເຮົາວ່າ ຮັບຈະມາໃນທັນທີນັ້ນ. ແຕ່ວ່າໃນເວລາດຽວກັນນັ້ນ ຝ່າຍວຽງຈັນໄດ້ເອົາທະຫານ 4 ກອງພັນ ມີທັງລົດຖັງ ແລະ ລົດຫຸ້ມເກາະຊ່ວຍໜູນ, ມາປິດລ້ອມເຮືອນເຮົາ ແລະ ເຮືອນອ້າຍນ້ອງປ້ອງກັນທີ່ຢູ່ໃກ້ຄຽງກັນນັ້ນ, ແນປາຍປືນເຂົ້າມານາບຂູ່ ທັງເອີ້ນບອກໃຫ້ອ້າຍນ້ອງ ທະຫານພວກເຮົາຍອມຈຳນົນ. ຮ້ອຍເອກປະດິດ ທ່ຽງທຳ ເອີ້ນໂຟນມາຂໍຄຳສັ່ງຈາກເຮົາ ເພື່ອຈະຍິງຕອບສຳລັບແກ້ແຄ້ນໃຫ້ອ້າຍນ້ອງຂອງເຮົາທີ່ຕາຍໄປແລ້ວ, ແຕ່ວ່າເຮົາສັ່ງວ່າ ຕາບໃດບໍ່ໄດ້ຮັບຄຳສັ່ງຂອງເຮົາແມ່ນບໍ່ໃຫ້ຍິງຕອບຢ່າງເດັດຂາດ. ໃນເວລານັ້ນໝົດທັງເມືອງວຽງຈັນມິດງຽບ ເໝືອນວ່າບໍ່ມີປະຊາຊົນຈັກຄົນ, ມີແຕ່ນາຍ ແລະ ພົນທະຫານຝ່າຍວຽງຈັນເດີນໄປມາເອີ້ນກຳຮາບນາບຂູ່ອ້າຍນ້ອງທະຫານເຮົາ, ທັງຮັດວົງປິດລ້ອມແຄບເຂົ້າຈັກໄຊ, ຮອດວ່າເອົາປາຍປືນລໍ່ເຂົ້າໄປໃນຮົ້ວບ້ານຂອງພວກເຮົາ, ເຮັດໃຫ້ອ້າຍນ້ອງເຮົາອົດທົນ ເບິ່ງຍາກທີ່ສຸດ, ແລ້ວຍັງຊ້ຳຂະຫຍາຍກຳລັງຂອງພວກມັນມາປິດລ້ອມເຮືອນສະຫາຍ ສຸພານຸວົງ ບ່ອນເຮົາມາຢູ່ອີກດ້ວຍ. ນອກຈາກສຽງໄກ້ອນ ແລະ ສຽງກົບຂຽດຮ້ອງຕາມຄຸ້ມບ້ານຕ່າງໆ ແລ້ວແມ່ນບໍ່ມີສຽງບຸກຄົນໃຈບຸນຜູ້ໃດຈະມາຫ້າມປາມພວກເຜດມານຝູງນີ້ ໃຫ້ປະລະໃຈດຳອຳມະຫິດຂອງພວກມັນໄດ້. ເວລານັ້ນຈິດໃຈເຮົາຍັງທຸ່ນທ່ຽງຢູ່ ເພາະພວກເຮົາ ບໍ່ເປັນຝ່າຍເກາະພິດ, ພວກທູດ ແລະ ຄະນະກຳມະການສາກົນກໍຮັບຈະມາຊ່ວຍເຮົາແລ້ວ. ເຮົາມີແຕ່ຕີໂທລະເລກລາຍງານໃຫ້ສູນກາງແນວລາວຮັກຊາດຮູ້ເລື່ອງນີ້ ແລະ ເອີ້ນໂທລະສັບໃຫ້ພວກທູດ ແລະ ຄະນະກຳມະການສາກົນມາຊ່ວຍພວກເຮົາໄວ. ເຖິງຢ່າງໃດ ເຮົາກໍອົດຄິດໃນໃຈບໍ່ໄດ້ວ່າ : "ນີ້ລະນໍອັນເພິ່ນວ່າຄົນບຸນໄດ້ຖືກປາບ, ຄົນບາບໃຊ້ອຳນາດຂະຫຍາບຂຶ້ນເທິງ. ມັນຈະເປັນແນວນີ້ເລື້ອຍໄປແທ້ບໍ ? ເດັດຂາດບໍ່ເປັນໄປໄດ້ ! ຄົນຊົ່ວກັງຫາກົນທ່ຽງທຳ ຄົງຈະມີຜູ້ໃຈບຸນມາຊ່ວຍຊູໃຫ້ຊະນະພວກໂຫດຮ້າຍສາມານ !"

ເວລາ 3 ໂມງເຄິ່ງ ຄະນະກຳມະການສາກົນມາຮອດ. ພວກທະຫານໃຈມານ ຜູ້ປິດລ້ອມບ້ານເຮົາກີດຂວາງບໍ່ຍອມໃຫ້ເຂົ້າໄປໃນເຮືອນເຮົາ. ຄະນະຜູ້ແທນໂປໂລຍ ທີ່ຄະນະຜູ້ແທນອິນເດຍໜູນຫຼັງບຸກເຂົ້າຢ່າງເຂັ້ມແຂງໂດຍເວົ້າວ່າ : "ພວກເຮົາແມ່ນ ຄະນະກຳມະການສາກົນ, ມີໜ້າທີ່ມາກວດກາ ແລະ ຄວບຄຸມການປະຕິບັດສັນຍາເຈນີວ ແລະ ທຸກສັນຍາທີ່ຄົນລາວໄດ້ເຊັນນຳກັນ ເພື່ອຊ່ວຍໃຫ້ເຮັດການລວມລາວຕາມສັນຍາເຈນີວ ສຳລັບປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ ; ພວກເຮົາຈະເຂົ້າໄປປ້ອງກັນຄົນແນວລາວຮັກຊາດຜູ້ມີເຈຕະນາດີ ; ພວກເຈົ້າບໍ່ຍອມໃຫ້ເຂົ້າຈະຍິງພວກເຮົາກໍ່ລອງຍິງເບິ່ງ, ໃຫ້ເຫັນເປັນຫຼັກຖານວ່າ ຝ່າຍວຽງຈັນຂ້າຄະນະກຳມະການສາກົນ ! " ຜູ້ແທນການາດາວ່າ: "ພວກເຈົ້າຂັດຂວາງຄະນະກຳມະການສາກົນບໍ່ໄດ້, ຕ້ອງໃຫ້ພວກຂ້ອຍເຂົ້າໄປສັງເກດການ ". ພວກທະຫານອັນໂຫດສານານກໍ່ຕ້ອງປ່ອຍໃຫ້ຄະນະກຳມະການສາກົນ ເຂົ້າມາເຮືອນເຮົາ. ສິບນາທີຕໍ່ມາ ທູດໂຊວຽດມາຮອດ ແລະ ຫຼັງຈາກນັ້ນສິບນາທີ ທູດອັງກິດທີ່ເປັນປະທານຄູ່ ຂອງກອງປະຊຸມເຈນີວກໍ່ມາຮອດ. ເຮົາໄດ້ລາຍງານເຫດການທີ່ເປັນມາຕັ້ງແຕ່ 2 ໂມງເຊົ້າມາຮອດເວລານັ້ນ ໂດຍເວົ້າວ່າແມ່ນຝ່າຍວຽງຈັນ ລູກມືຈັກກະພັດອາເມລິກາໄດ້ເລີ່ມລົງມືມ້າງສັນຍາເຈນີວແລ້ວ, ອາດຈະແມ່ນພວກເຂົາຢາກໃຫ້ຜູ້ແທນແນວລາວຮັກຊາດໜີຈາກວຽງຈັນ ເພື່ອຈະກໍ່ສົງຄາມຄືນໃໝ່ ; ດຽວນີ້ປະທານຄູ່ ແລະ ຄະນະກຳມະການສາກົນໄດ້ລວມກັນຢູ່ທີ່ນີ້ ເຫັນກັບຕາພຶດແລ້ວ ; ເຫັນສົມຄວນແນວໃດຂໍໃຫ້ພວກທ່ານມີຄຳເຫັນ. ເພາະວ່າພວກທ່ານຮັບຜິດຊອບຄວາມປອດໄພຂອງຄົນລາວທັງມວນ. ພຶດທຸກຄົນປຶກສາກັນເຫັນດີວ່າ ຕ້ອງເຊີນເອົາທູດອາເມລິກາມາຮ່ວມປະຊຸມນຳ. ທູດອັງກິດຕິໂທລະສັບເຊີນ, ບໍ່ນານ ທູດອາເມລິກາກໍ່ມາຮອດ. ພຶດທຸກຄົນຫຍຸ້ມໃສ່ໂຈມຕີທູດອາເມລິກາວ່າ ປ່ອຍໃຫ້ທະຫານຝ່າຍວຽງຈັນ ທີ່ອາເມລິກາກໍ່ສ້າງ ແລະ ບຳລຸງລ້ຽງເຮັດເລື່ອງທີ່ທຳລາຍການລວມລາວ ແລະ ມ້າງເພສັນຕິພາບແນວນີ້. ເຮົາກໍ່ມີໂອກາດສ່ຽງໄພດ່າທູດອາເມລິກາ ໂດຍກົງຢ່າງສົມໃຈໃນເວລານັ້ນ. ເຮົາເວົ້າວ່າ : "ທະຫານຝ່າຍວຽງຈັນພວມອ້ອມເຮືອນເຮົາ ໃນເວລານີ້, ມັນເປັນການເປີດເຜີຍກາກຂອງອາເມລິກາຢ່າງຈະແຈ້ງ, ການກະທຳອັນໂຫດຮ້າຍປ່າເຖື່ອນໃສ່ ພວກເຮົາເທື່ອນີ້ ມັນຕັ້ງແມ່ນຄົນອາເມລິກາພາຍໃຕ້ການນຳຂອງທູດອາເມລິກາເປັນຜູ້ເຮັດ. ຖ້າອາເມລິກາຍັງຫວັງຈະໃຫ້ລາວມີສັນຕິພາບນັ້ນ ທູດອາເມລິກາຕ້ອງບອກໃຫ້ກອງທະຫານຝ່າຍວຽງຈັນ ເລີກປິດລ້ອມເຮືອນພວກເຮົາ, ບໍ່ດັ່ງນັ້ນ ພວກເຮົາແມ່ນໂສຕາຍຄືກັນ ແລະເວລານັ້ນການແກ້ໄຂບັນຫາລາວໂດຍສັນຕິຈະບໍ່ມີອີກ ".

ທູດອາເມລິກາຖືກໜີບຈາກທຸກດ້ານ ກໍ່ຈຳເປັນຕ້ອງຕິໂທລະສັບໄປໃຫ້ພູມີ ໜໍ່ສະຫວັນເລີກການປິດລ້ອມເຮືອນພວກເຮົາ, ມື້ອື່ນເຊົ້າເປັນວັນທີ 10 ເດືອນກັນຍາ ໃຫ້ພູມີ ໜໍ່ສະຫວັນໄປປະຊຸມກັບພວກເຮົາ ແລະ ຄະນະກຳມະການສາກົນຊ່ອງໜ້າປະທານຄູ່ ແລະ ທູດອາເມລິ

ກາທີ່ເຮືອນເຈົ້າສຸວັນນະພູມາ.

ເມື່ອທຸກຄົນໄປຮອດແລ້ວ, ເຮົາກ່າວຫາວ່າ : "ພູມີ ໜໍ່ສະຫວັນ ເຮັດເລື່ອງນ້ອຍແມ່ນມີຈຸດປະສົງຢາກຂັບໄລ່ຄະນະຜູ້ແທນຝ່າຍບັນດາກຳລັງຮັກຊາດ ອອກຈາກລັດຖະບານ ເພື່ອເອົາລັດຖະບານນີ້ໄປເປັນລູກແຫຼ້ງຕີນມືອາເມລິກາ ສຳລັບເລັ່ງມືປາບປາມປະຊາຊົນລາວ , ການກະທຳຂອງອາເມລິກາ ແລະ ພູມີ ໜໍ່ສະຫວັນແບບນີ້ ແມ່ນແນໃສ່ມ້າງເພການຮ່ວມມືລະຫວ່າງຄົນລາວທັງສອງຝ່າຍ. ພວກເຮົາເຂົ້າມາຢູ່ວຽງຈັນພ້ອມທັງກອງທະຫານ ຂອງພວກເຮົາ ແມ່ນມາຕາມສັນຍາທົ່ງໄຫຫີນ ແລະ ມາດ້ວຍເຈດຕະນາຢາກໃຫ້ມີສັນຕິພາບຢູ່ໃນລາວ. ພູມີ ໜໍ່ສະຫວັນ ເອົາທະຫານໄປປິດລ້ອມນາບຊູ່ ແລະ ຍິງຂ້າຄົນຂອງພວກເຮົາແມ່ນຢາກຂັບໄລ່ພວກເຮົາໜີຈາກວຽງຈັນ, ແມ່ນມ້າງບັນດາສັນຍາທີ່ໄດ້ເຊັນນຳກັນ ແລະ ຈະກໍ່ສົງຄາມຄືນໃນລາວ. ພູມີ ໜໍ່ສະຫວັນ ອວດວ່າມີກຳລັງໃນມື ແລະ ມີອາເມລິກາຊ່ວຍເຫຼືອແລ້ວຢາກເຮັດອັນໃດໃສ່ໃຜກໍ່ໄດ້. ເຫດຮ້າຍທຸກປະການທີ່ຈະເກີດຂຶ້ນຢູ່ໃນວຽງຈັນ ແລະ ໃນທົ່ວປະເທດລາວແມ່ນພູມີ ໜໍ່ສະຫວັນ ຕ້ອງເປັນຜູ້ຮັບຜິດຊອບແຕ່ຜູ້ດຽວ."

ພູມີ ໜໍ່ສະຫວັນ ກ່າວຕອບວ່າ : "ບໍ່ແມ່ນຂ້າພະເຈົ້າຢາກຂັບໄລ່ຝ່າຍແນວລາວຮັກຊາດອອກຈາກວຽງຈັນ. ແມ່ນແນວລາວຮັກຊາດຢາກໜີແລ້ວຫາເລື່ອງຂຶ້ນ ໂດຍຄວ່າງລະເບີດໃສ່ເຮືອນນາຍທະຫານຝ່າຍວຽງຈັນກ່ອນ,, ມັນຈຶ່ງເກີດມີເຫດອັນນ້ອຍ".

ຜູ້ແທນໂປໂລຍໃນຄະນະກຳມະການສາກົນໄດ້ໂຕ້ຖຽງວ່າ : "ມື້ເຊົ້ານີ້ແຕ່ເຊົ້າ ກ່ອນຈະມາປະຊຸມຄະນະກຳມະການສາກົນ ໄດ້ໄປກວດກາກັບທີ່ເຫດເກີດແລ້ວ, ໄດ້ຊອກເຫັນບັ້ງລະເບີດຢູ່ໃນຍ່ອງບ້ານຂອງຝ່າຍແນວລາວຮັກຊາດ, ບໍ່ແມ່ນຢູ່ຍ່ອງບ້ານນາຍທະຫານ ຝ່າຍວຽງຈັນ, ບັ້ງເປືອກລະເບີດທີ່ເກັບໄດ້ມີໂຕໜັງສືບອກວ່າ ແມ່ນເຮັດມາຈາກສະຫະລັດອາເມລິກາ, ນອກຈາກນັ້ນ ຄະນະກຳມະການໄດ້ໄປພົບໂງ່ນ ຊະນະນິກອນ ກ່ອນຈະມາປະຊຸມນີ້ ໂງ່ນ ຊະນະນິກອນ ກໍ່ເວົ້າວ່າຢາກໃຫ້ຄະນະກຳມະການສາກົນຍົນສົ່ງຄົນຂອງແນວລາວ ຮັກຊາດກັບຄືນເມືອຊຳເໜືອ. ສິ່ງເຫຼົ່ານັ້ນສະແດງໃຫ້ເຫັນວ່າ ຝ່າຍພູມີ ໜໍ່ສະຫວັນ ແລະຊະນະນິກອນຢາກໄລ່ຝ່າຍແນວລາວຮັກຊາດອອກຈາກວຽງຈັນແທ້". ປະທານອິນເດຍ ຢູ່ໃນຄະນະກຳມະການສາກົນກໍ່ເວົ້າແນວດຽວກັນນັ້ນ ເພາະວ່າຄະນະກຳມະການສາກົນໄດ້ໄປເຮັດການກວດກາ ແລະ ພົບພໍ້ດັ່ງກ່າວຂ້າງເທິງນີ້ນຳກັນ.

ທູດໂຊວຽດ ແລະ ອັງກິດ ທີ່ເປັນປະທານຄູ່ຂອງກອງປະຊຸມເຈນີວ ພ້ອມກັນເວົ້າວ່າ ເພື່ອຄວາມປອດໄພ ແລະ ຄວາມສຸກຂອງປະຊາຊົນລາວທັງມວນທຸກຝ່າຍຂອງລາວ ຕ້ອງປະຕິບັດສັນຍາທົ່ງໄຫຫີນ ແລະ ສັນຍາເຈນີວຢ່າງຖືກຕ້ອງ, ຝ່າຍວຽງຈັນບໍ່ຄວນໄລ່ຝ່າຍແນວລາວຮັກຊາດໜີຈາກວຽງຈັນ ແລະ ຄວນສະແດງເຈດຕະນາດີເພື່ອພ້ອມກັນເຮັດວຽກການຂອງຊາດທຸກອັນ ຢ່າງຮັກແພງສະໜິດສະໜົມກັນ. ທູດອາເມລິກາເວົ້າວ່າ ເຫັນດີຕາມຄວາມເວົ້າ

ຂອງປະທານຄູ່ທັງສອງ.

ເຈົ້າສຸວັນນະພູມາໄດ້ຖາມເຮົາວ່າເຮົາຄິດແນວໃດ, ເຫັນດີໃຫ້ຄະນະຜູ້ແທນແນວລາວຮັກຊາດຢູ່ວຽງຈັນຕໍ່ໄປບໍ ຫຼືວ່າຈະຖອນໜີໄປຊໍາເໜືອ. ເຮົາຕອບວ່າ : " ພວກເຮົາມາຢູ່ວຽງຈັນແມ່ນມາຕາມສັນຍາ ແລະ ມາເພື່ອສ້າງຄວາມຖືກຕ້ອງປອງດອງຊາດ ແລະພ້ອມກັນເຮັດໃຫ້ມີສັນຕິພາບຢູ່ໃນລາວ. ດຽວນີ້ຄະນະຜູ້ແທນພວກເຮົາຖືກກອງທະຫານ ພູມີ ໜໍ່ສະຫວັນ ທີ່ມີອາເມລິກາໜູນຫຼັງໄປປິດລ້ອມເຮືອນພວກເຮົາ ແລະ ຍິງຂ້າທະຫານຂອງພວກເຮົາຕາຍໄປແລ້ວຜູ້ໜຶ່ງ, ເຮັດໃຫ້ພວກເຮົາບໍ່ມີຄວາມປອດໄພ ເພື່ອຈະໄລ່ພວກເຮົາໜີຈາກວຽງຈັນ. ຖ້າວ່າ ພູມີ ໜໍ່ສະຫວັນ ແລະ ທູດອາເມລິກາຫາກຮັບປະກັນຄວາມປອດໄພໃຫ້ພວກເຮົາ ພວກເຮົາຢູ່ວຽງຈັນຕໍ່ໄປກໍ່ໄດ້, ແຕ່ຖ້າພວກເຂົາຫາກບໍ່ຮັບປະກັນຄວາມປອດໄພ ແລະ ມີເຈຕະນາບໍ່ດີຈະຍິງຂ້າພວກເຮົາຢູ່ດັ່ງເກົ່ານີ້ ແມ່ນພວກເຮົາຈໍາເປັນຕ້ອງໜີຈາກວຽງຈັນໄປ ຕາມຄວາມປະສົງຂອງ ພູມີ ໜໍ່ສະຫວັນ ແລະ ອາມເລິກາ.

ເຈົ້າສຸວັນນະພູມາຖາມພູມີ ໜໍ່ສະຫວັນວ່າຄິດແນວໃດ, ຈະເຫັນດີໃຫ້ຄະນະຜູ້ແທນ ຝ່າຍແນວລາວຮັກຊາດຢູ່ວຽງຈັນຕໍ່ໄປ ແລະ ຮັບປະກັນຄວາມປອດໄພໃຫ້ຂະເຈົ້າບໍ.

ພູມີ ໜໍ່ສະຫວັນຕອບວ່າ ເຫັນດີໃຫ້ຄະນະຜູ້ແທນແນວລາວຮັກຊາດຢູ່ວຽງຈັນຕໍ່ໄປ ແລະ ຮັບຮອງຈະຮັບປະກັນຄວາມປອດໄພໃຫ້ທຸກຢ່າງ.

ເຮົາເວົ້າຂຶ້ນວ່າ ພູມີ ໜໍ່ສະຫວັນ ຮັບປະກັນຜູ້ດຽວຍັງບໍ່ທັນພຽງພໍ ເພາະວ່າ ຜູ້ຊີ້ນໍາໃຫ້ເລື່ອງເກີດຂຶ້ນນັ້ນແມ່ນຄົນອາເມລິກາ, ເຮົາຢາກໃຫ້ທູດອາເມລິກາທີ່ມາຢູ່ທີ່ນີ້ຮັບປະກັນນໍາ.

ທູດອາເມລິກາເວົ້າວ່າ : "ເຮົາກໍ່ຮັບປະກັນຮ່ວມກັບນາຍພົນ ພູມີ ໜໍ່ສະຫວັນ".

ເຈົ້າສຸວັນນະພູມາຫຼຽວມາຖາມເຮົາວ່າ: "ທຸກຄົນຮັບປະກັນຄວາມປອດໄພໃຫ້ແລ້ວ , ຂ້ອຍກໍ່ຮັບປະກັນນໍາກັນ, ພະຍາ ພູມີ ວົງວິຈິດ ພໍໃຈແລ້ວບໍ ?".

ເຮົາເວົ້າຂຶ້ນວ່າການຮັບປະກັນແຕ່ຄວາມປາກຍັງບໍ່ທັນພຽງພໍ, ເພາະວ່າສັນຍາທີ່ເຊັນຊື່ນໍາກັນແລ້ວກໍ່ຍັງລະເມີດໄດ້. ດັ່ງນັ້ນ ເຮົາຈຶ່ງສະເໜີໃຫ້ຂຽນຈົດໝາຍບັນທຶກ ທີ່ມີເນື້ອໃນດັ່ງກ່າວມາແລ້ວນັ້ນໃຫ້ທຸກຄົນທີ່ມາປະຊຸມທີ່ນີ້ເຊັນຊື່ນໍາກັນ ຈຶ່ງຈະເປັນທີ່ເຊື່ອຖືໄດ້. ທຸກຄົນເຫັນດີນໍາຄວາມເວົ້າຂອງເຮົາ ແລະ ສະເໜີໃຫ້ເຮົາເປັນຜູ້ຂຽນຮ່າງຈົດໝາຍບັນທຶກນັ້ນ. ເຮົາໄດ້ຂຽນແລ້ວອ່ານໃຫ້ທີ່ປະຊຸມຟັງ, ທຸກຄົນເຫັນດີແລ້ວກໍ່ເອົາໄປຕີພິມດີດເປັນ 8 ສະບັບມາໃຫ້ທຸກຄົນເຊັນໃນທັນໄດນັ້ນໂລດ, ເຊັນແລ້ວກໍ່ໄດ້ເອົາມອບໃຫ້ເຮົາເອງ, ເຈົ້າສຸວັນນະພູມາ, ພູມີ ໜໍ່ສະຫວັນ, ປະທານຄະນະກໍາມະການສາກົນ, ທູດໂຊວຽດ, ທູດອັງກິດ, ທູດອາເມລິກາຄົນລະສະບັບ ແລະ ອີກສະບັບໜຶ່ງເອົາສົ່ງໄປອອກວິທະຍຸກະຈາຍສຽງ.

ຫຼັງຈາກນັ້ນເຮົາຍັງສະເໜີຕໍ່ທີ່ປະຊຸມວ່າ ກອງທະຫານ ພູມີ ໜໍ່ສະຫວັນ ໄດ້ຍິງປືນໃສ່ທະຫານຝ່າຍແນວລາວຮັກຊາດຕາຍໄປຜູ້ໜຶ່ງ ແລະ ຂໍໃຫ້ທີ່ປະຊຸມຕົກລົງໃຫ້ຝ່າຍ ພູມີ ໜໍ່ສະຫວັນ

ຈັດການສົ່ງສະການທະຫານພວກເຮົາຜູ້ນັ້ນ ເພື່ອເລີ້ມຕົ້ນສະແດງຈິດໃຈບໍ່ລິສຸດຕໍ່ກັນ. ພົດທຸກຄົນເຫັນດີນຳ, ພູມີ ໜໍ່ສະຫວັນ ກໍ່ຮັບວ່າຈະແຕ່ງໃຫ້ ບຸນທົງ ວໍລະວົງ ຮັບຜິດຊອບ ຮ່ວມກັບຝ່າຍແນວລາວຮັກຊາດຈັດການເລື່ອງນີ້.

ເຮົາໄດ້ຕາງໜ້າແນວລາວຮັກຊາດ ສະແດງຄວາມຂອບໃຈນຳພົດທຸກຄົນ ທີ່ໄດ້ຊ່ວຍແກ້ໄຂບັນຫາຂັດແຍ່ງກັນເທື່ອນີ້ໃຫ້ຕົກໄປ ແລະ ຢັ້ງຢືນຕໍ່ທີ່ປະຊຸມວ່າ ຄະນະຜູ້ແທນ ແລະ ກອງທະຫານແນວລາວຮັກຊາດຈະສືບຕໍ່ຢູ່ວຽງຈັນຄືເກົ່າ, ແຕ່ເຮົາຍັງເວົ້າຕື່ມວ່າສຳລັບເຮົາເອງ ໃນມື້ອື່ນນີ້ ຈະໄດ້ໄປລາຍງານໃຫ້ສູນກາງແນວລາວຮັກຊາດຮູ້ລະອຽດ ກ່ຽວກັບເຫດການທີ່ໄດ້ເປັນມານີ້, ຖ້າວ່າສູນກາງຫາກເຫັນດີນຳຈຶ່ງຈະກັບຄືນມາ ; ຂໍໃຫ້ຄະນະກຳມະການສາກົນຈັດເຮືອບິນສົ່ງເຮົາໄປມາຕາມຄວາມຕ້ອງການ.

ຫຼັງຈາກກອງປະຊຸມນີ້ ບຸນທົງ ວໍລະວົງ ລັດຖະມົນຕີຊ່ວຍວ່າການຂອງຝ່າຍວຽງຈັນ ໄດ້ມາຫາເຮົາຕາມຄຳສັ່ງຂອງພູມີ ໜໍ່ສະຫວັນ ເພື່ອຈັດການສົ່ງສະການອ້າຍນ້ອງທະຫານທີ່ຕາຍຍ້ອນທະຫານຝ່າຍວຽງຈັນ ບັນຊາໂດຍນາຍພົນ ກຸປະສິດ ອະໄພ ຍິງມາໃສ່ເຮືອນພວກເຮົາໃນຄືນແລ້ວນັ້ນ ! ການຊຸ້ມຫຼົບຫໍ່, ລາຍຈ່າຍລ້ຽງພະສົງ ແລະ ອື່ນໆ ແມ່ນຝ່າຍວຽງຈັນເປັນຜູ້ຈ່າຍທັງໝົດ. ຕອນບ່າຍມື້ນັ້ນ ໄດ້ແຫ່ສົບອ້າຍນ້ອງເຮົາໄປວັດທາດຝຸ່ນ. ທະຫານຝ່າຍວຽງຈັນພື້ງໝູ່ແຫ່ຂ້າງສົບເບື້ອງຂວາ, ທະຫານຝ່າຍແນວລາວຮັກຊາດແຫ່ຂ້າງສົບເບື້ອງຊ້າຍ. ຍົກຫີບສົບຂຶ້ນກອງຟອນແລ້ວ ນາຍທະຫານຝ່າຍແນວລາວຮັກຊາດໄດ້ອ່ານບົດໄວ້ອາໄລ ຫາອ້າຍນ້ອງເຮົາຜູ້ຕາຍ ແລະ ໂຈມຕີຝ່າຍວຽງຈັນລູກມືອາເມລິກາທີ່ຂ້າຄົນລາວດ້ວຍກັນ ເພື່ອຈະຢູ່ເປັນຂ້ອຍຈັກກະພັດອາເມລິກາ ; ມັນເປັນການຂ້າຄົນຜູ້ຮັກຊາດ ແລະ ຕໍ່ສູ້ເພື່ອເອກະລາດຂອງປະເທດຊາດ ແລະ ຄວາມຢູ່ເຢັນເປັນສຸກຂອງປະຊາຊົນ ; ຄົນລາວຂາຍຊາດພວກນັ້ນຈະຕ້ອງຖືກປະຊາຊົນລາວລົງໂທດໃຫ້ປະລາໄຊຮາບຄາບໃນມື້ໜຶ່ງທາງໜ້ານີ້.

ເປັນອັນວ່າເລື່ອງຮ້າຍແຮງທີ່ພູມີ ໜໍ່ສະຫວັນ ພາຍໃຕ້ການນຳຂອງຈັກກະພັດອາເມລິກາໄດ້ກໍ່ຂຶ້ນໃຫ້ເກີດມີສະພາບການເຄັ່ງຕຶງສອງສາມມື້ຫຼັງມານີ້ ໄດ້ຮັບການແກ້ໄຂຢ່າງມີໄຊ ໃຫ້ແກ່ຝ່າຍເຮົາ.

ຕອນບ່າຍມື້ນັ້ນ, ເຮົາໄດ້ຮຽກປະຊຸມນັກໜັງສືພິມລາວ ແລະ ຕ່າງປະເທດທີ່ເຮືອນເຮົາ, ມີຄົນມາຮ່ວມ 30 ກວ່າຄົນ. ເຮົາໄດ້ຊີ້ແຈງເຈຕະນາດີຂອງເຮົາ ທີ່ຈະມາຮ່ວມເຮັດວຽກໃນລັດຖະບານປະສົມ ໃນຖານະລັດຖະມົນຕີຂອງຝ່າຍແນວລາວຮັກຊາດ ທີ່ຍາມໃດກໍ່ຈິງໃຈຮ່ວມມືກັບຝ່າຍອື່ນເພື່ອສັນຕິພາບຂອງບ້ານເມືອງ ແລະ ຄວາມຢູ່ເຢັນເປັນສຸກຂອງປະຊາຊົນ. ເຮົາໄດ້ເວົ້າແຈ້ງວ່າ ການຮ່ວມເຮັດວຽກຂອງເຮົາໃນລັດຖະບານເປັນໄປບໍ່ໄດ້ຍ້ອນວ່າ ພູມີ ໜໍ່ສະຫວັນ ໄດ້ເອົານາຍທະຫານຂອງເຂົາໄປເປັນຫົວໜ້າກະຊວງຖະແຫຼງຂ່າວ, ໂຄສະນາການ ແລະ ທ່ອງທ່ຽວ ແລ້ວບໍ່ຍອມໃຫ້ເຮົາເຮັດວຽກຢູ່ກະຊວງນີ້ອີກ, ເຊິ່ງເປັນການນ້າງ

ເພສັນຍາທົ່ງໄຫຫີນທີ 3 ຝ່າຍໄດ້ເຊັນກັນໃນເດືອນມິຖຸນາປີກາຍນັ້ນ. ເມື່ອບໍ່ໄດ້ເຮັດວຽກແລ້ວ ເຮົາກໍກຽມຕົວຈະກັບຄືນໄປເຂດປົດປ່ອຍຂອງພວກເຮົາ. ແຕ່ວ່າຝ່າຍພູມີ ໜໍ່ສະຫວັນໄດ້ໃຊ້ປືນກົນໜັກຍິງໃສ່ເຮືອນພວກເຮົາ ເຮັດໃຫ້ອ້າຍນ້ອງທະຫານພວກເຮົາເສັຽຊີວິດໄປໜຶ່ງຄົນ ແລະ ເອົາກອງທະຫານພ້ອມດ້ວຍລົດເກາະລົດຖັງ ມາປິດລ້ອມເຮືອນຂອງພວກເຮົາ - ຫວັງຈະບັງຄັບໃຫ້ຝ່າຍແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດຍອມຈຳນົນ ແລ້ວປ່ອຍໃຫ້ພວກເຂົາກຳອຳນາດແຕ່ຝ່າຍດຽວ. ເຮົາໄດ້ປະກາດຕໍ່ນັກໜັງສືພິມວ່າ ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດຈະບໍ່ຍອມຈຳນົນຕໍ່ຈັກກະພັດອາເມລິກາ ແລະລູກມືຂອງເຂົາຢ່າງເດັດຂາດ, ຖ້າວ່າພວກເຂົາຫາກໃຊ້ສົງຄາມຕ້ານແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດພວກເຮົາກໍ່ຈະພ້ອມກັບປະຊາຊົນລາວໝົດທັງຊາດ ຕ້ານຄືນຈົນປົດປ່ອຍເອົາປະເທດຊາດລາວໃຫ້ເປັນເອກະລາດ ແລ້ວຈຶ່ງຈະເຊົາ.

ມື້ລຸນມາເຮົາໄດ້ຂຶ້ນເຮືອບິນໂຊວຽດກັບຄືນໄປຫາເຂດປົດປ່ອຍຂອງພວກເຮົາ, ປະແຕ່ເຈົ້າສຸກ ວົງສັກ, ທ່ານໂຊດ ເພັດລາສີ ແລະ ທ່ານຄຳເຜືອນ ຕຸນາລົມ ພ້ອມກັບທະຫານຂອງພວກເຮົາກອງຮ້ອຍໜຶ່ງສືບຕໍ່ຢູ່ວຽງຈັນ ເພື່ອຕິດຕາມເບິ່ງການກະທຳຂອງສັດຕູ.

ຈັກກະພັດອາເມລິກາ ແລະ ລູກມື ບໍ່ຢຸດເຊົາການເກາະພິດເພື່ອນາງແຜນການລົ້ມລາວ. ພວກເຂົາປ່າວຂ່າວຢູ່ເລື້ອຍວ່າຈະໃຊ້ກຳລັງທະຫານ ເຮັດລັດຖະປະຫານໂຄ່ນລົ້ມ ເຈົ້າສຸວັນນະພູມາເພື່ອລົບລ້າງສັນຍາທີ່ໄດ້ເຊັນກັນ ແລະ ນາບຂູ່ວ່າຈະທຳລາຍຊີວິດຂອງພວກຮອງນາຍົກ ແລະ ຮອງລັດຖະມົນຕີຂອງຝ່າຍແນວລາວຮັກຊາດ ເຮັດໃຫ້ເຈົ້າສຸກ ວົງສັກ, ໂຊດ ເພັດລາສີ ແລະ ຄຳເຜືອນ ຕຸນາລົມຈຳຕ້ອງໄປຫຼົບໄພຢູ່ເຮືອນຄະນະພູແທນໂປໂລຍ ທີ່ເປັນສະມາຊິກຄະນະກຳມະການກວດກາສາກົນຕັ້ງຫຼາຍເທື່ອ. ທ້າຍສຸດເຈົ້າສຸກ ວົງສັກ ແລະຄຳເຜືອນ ຕຸນາລົມ ກໍ່ໄດ້ໜີຈາກວຽງຈັນກັບຄືນມາເຂດປົດປ່ອຍ ປະແຕ່ສະຫາຍ ໂຊດ ເພັດລາສີ ແລະ ທະຫານຂອງພວກເຮົາກອງຮ້ອຍໜຶ່ງຢູ່ວຽງຈັນ.

ຕັ້ງແຕ່ນັ້ນມາ ພວກພູມີ ໜໍ່ສະຫວັນ ກໍ່ຕັດເງິນເດືອນພວກເຮົາ, ເອົາຄົນປະຕິການຂອງພວກເຂົາມາວ່າການແທນໃນກະຊວງຂອງພວກເຮົາ, ຕັ້ງໜ້າໂຄສະນາກ່າວຮ້າຍປ້າຍສີພວກເຮົາ ແລະ ໃຊ້ພວກທະຫານປະຕິການມາເກາະພິດກອງທະຫານພວກເຮົາ, ໂດຍຖິ້ມລະເບີດເຂົ້າມາໃນຂອງບ້ານພວກເຮົາຫຼາຍເທື່ອ, ຫວັງຈະເຮັດໃຫ້ພວກເຮົາໜີຈາກວຽງຈັນ ໝົດທຸກຄົນ, ແຕ່ສະຫາຍ ໂຊດ ເພັດລາສີ ແລະ ອ້າຍນ້ອງທະຫານເຮົາໄດ້ພ້ອມກັນສູ້ຊົນຢ່າງອາດຫານເພື່ອສືບຕໍ່ຢູ່ວຽງຈັນຕໍ່ມາ.

ປະຊາຊົນໃນຕະຫຼາດວຽງຈັນລ້ວນແຕ່ເຫັນອົກເຫັນໃຈອ້າຍນ້ອງທະຫານພວກເຮົາ. ເວລາອ້າຍນ້ອງທະຫານພວກເຮົາຫາມກະບຸງໄປຊື້ຂອງກິນທີ່ຕະຫຼາດ ກໍ່ມີປະຊາຊົນຖິ້ມຕ່ອນຊີ້ນໝູ, ຊີ້ນງົວ, ຜັກ ແລະ ໝາກໄມ້ໃສ່ກະບຸງໃຫ້ອ້າຍນ້ອງພວກເຮົາເຫຼົ່ານັ້ນຈົນເຕັມກະບຸງ, ອ້າຍ

ນ້ອງພວກເຮົາເອົາເງິນໃຫ້ຂະເຈົ້າກໍ່ບໍ່ຍອມຮັບເອົາ, ໃພງກໍ່ວ່າແມ່ນເອົາໃຫ້ລາງ ເພາະເຫັນອົກເຫັນໃຈ ແລະ ອິດູຕົນອ້າຍນ້ອງພວກເຮົາ. ແຕ່ລະມື້ກໍ່ເປັນແນວນັ້ນຕະຫຼອດມາ ຈົນຮອດປີ 1973, ສິ່ງທີ່ອ້າຍນ້ອງເຮົາໄດ້ຊົມາກິນແມ່ນມີໜ້ອຍທີ່ສຸດ.

ພວກຈັກກະພັດອາເມລິກາ ໂດດເຂົ້າມາເຮັດເສິກຢູ່ປະເທດລາວໂດຍກົງ ຕັ້ງແຕ່ປີ 1964 ເປັນຕົ້ນມາ, ພວກເຂົາເອົາກອງທະຫານອາກາດອາເມລິກາ ຈາກຖານທັບຂອງພວກເຂົາຢູ່ປະເທດໄທ, ຟີລິບປິນ ແລະ ຫວຽດນາມໃຕ້ເຂົ້າມາຖິ້ມລະເບີດ ແລະ ຍິງທຳລາຍເຂດປົດປ່ອຍຂອງພວກເຮົານັບມື້ນັບຮ້າຍແຮງ, ເອົາກອງທະຫານໄທ ແລະ ກອງທະຫານຫວຽດນາມໃຕ້ ພາຍໃຕ້ການບັນຊາຂອງນາຍທະຫານອາເມລິກາ ເຂົ້າມາເຮັດສົງຄາມພິເສດ ຢູ່ໃນທົ່ວແຜ່ນດິນລາວ ໂດຍໃຊ້ເງິນຄ່ຳຊື້ຈ້າງເອົາຄົນລາວຈຳນວນໜຶ່ງ ໄປເປັນກອງກຳລັງພິເສດ ເພື່ອຮັບໃຊ້ເລັ້ກນຮຸກຮານຂອງພວກເຂົາ. ສົງຄາມພິເສດນີ້ ໄດ້ຂະຫຍາຍຕົວນັບມື້ນັບກວ້າງຂວາງ ແລະ ຮ້າຍແຮງຂຶ້ນເຖິງຂັ້ນທີ່ພວກຈັກກະພັດອາເມລິກາວ່າ ແມ່ນສົງຄາມພາກສ່ວນທີ່ພວກເຂົາເປັນຕົວຕັ້ງຕົວຕີເຮັດ ໂດຍໃຊ້ກອງທັບອາກາດຂອງພວກເຂົາເອງສົມທົບກັບກອງກຳລັງພິເສດ ທີ່ພວກເຂົາສ້າງຂຶ້ນດ້ວຍການຊື້ຈ້າງເອົາຊາວໜຸ່ມລາວສູງ, ລາວເທິງ ແລະ ລາວລຸ່ມ ມາເປັນເຄື່ອງມືຂອງພວກເຂົາ. ຕັ້ງແຕ່ພາກໃຕ້ຮອດພາກເໜືອ ຂອງລາວ ຈັກກະພັດອາເມລິກາໄດ້ໃຊ້ທັງກຳລັງພ້າດິນ ແລະ ກຳລັງອາກາດເປີດບັ້ນຮົບຫຼາຍຄັ້ງທີ່ດຸເດືອດທີ່ສຸດ, ເຊັ່ນບັ້ນຮົບລາມເຊີນ 719 ທີ່ທາງເລກ 9 ແຂວງສະຫວັນນະເຂດ, ບັ້ນຮົບສາມສອນທີ່ແຂວງຄຳມ່ວນ, ບັ້ນຮົບສອນໄຊ, ບັ້ນຮົບກູ້ກຽດ, ບັ້ນຮົບພູກູດ ທີ່ແຂວງຊຽງຂວາງ ແລະ ບັ້ນຮົບຜາທີທີ່ແຂວງຫົວພັນ. ແຕ່ລະບັ້ນຮົບພວກເຂົາໄດ້ຍິງທຳລາຍປ່າວເຮືອນ, ບ້ານຊ່ອງ, ໄຮ່ນາ, ສັດສາວາສິ່ງ ແລະ ກວາດເອົາປະຊາຊົນພົ້ນອອກຈາກບ້ານເຮືອນຂອງຂະເຈົ້າໄປຄວບຄຸມໄວ້ໃນເຂດຍຶດຄອງຂອງພວກເຂົາ ຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ.

XII. ຍຸດທະສາດ ແລະ ຍຸດໂທບາຍຂອງແນວລາວຮັກຊາດ

ຕໍ່ໜ້າການກະທຳຂອງສັດຕູທີ່ໃຊ້ອາວຸດທຸກຊະນິດ ເພື່ອຂະຫຍາຍສົງຄາມຮຸກຮານປະເທດລາວດັ່ງກ່າວມາຂ້າງບົນນີ້ ແນວລາວຮັກຊາດພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ ໄດ້ໃຊ້ນະໂຍບາຍອັນເດັດດ່ຽວອາດຫານແຕ່ອ່ອນໂຍນທີ່ສຸດ ເພື່ອປົດປ່ອຍປະເທດຊາດ. ໜ້າທີ່ທີ່ແນວລາວຮັກຊາດໄດ້ວາງອອກແມ່ນທັງຕີປ້ອງກັນຕົວ, ຂະຫຍາຍກຳລັງຂອງຕົນເອງ, ດັບສູນກຳລັງຂອງສັດຕູ, ທັງຄັດຄ້ານສັດຕູດ້ວຍໂທລະເລກ, ຈົດໝາຍ ແລະ ໜັງສືພິມ, ທັງສະເໜີເຈລະຈາກັບຄົນລາວຝ່າຍວຽງຈັນ ທີ່ເປັນລູກມືຂອງຈັກກະພັດອາເມລິກາ ເພື່ອປົດປ່ອຍປະເທດຊາດດ້ວຍສັນຕິວິທີ.

ພວກຈັກກະພັດອາເມລິກາ ແລະ ລູກມືຖືວ່າການສະເໜີເຈລະຈາຂອງແນວລາວຮັກຊາດ

ເປັນຄວາມອ່ອນແອຂອງບັນດາກຳລັງປະຕິວັດລາວ ; ພວກເຂົາກໍ່ຍິ່ງເພີ່ມທະວີ ການໂຈມຕີບຸກຍຶດທາງພາກດິນ ແລະ ການຖິ້ມລະເບີດຍິງທຳລາຍຂອງພວກເຂົາ, ຫວັງຈະເອົາຊະນະດ້ວຍກຳລັງອາວຸດ. ແຕ່ວ່າທຸກການບຸກຕີທາງພາກດິນຂອງພວກເຂົາ, ແມ່ນວ່າຈະມີການສົມທົບຢ່າງແຂງແຮງດ້ວຍການໂຈມຕີທາງອາກາດປານໃດກໍ່ຕາມ, ກໍ່ຖືກບັນດາກຳລັງ ຮັກຊາດຕ້ານຄືນຈົນສາມາດປົດປ່ອຍດິນແດນປະເທດຊາດ ນັບມື້ນັບກວ້າງຂວາງອອກ.

ມາຮອດກາງປີ 1964 ພວກຈັກກະພັດອາເມລິກາໄດ້ຍອມໃຫ້ພວກລູກມື ຂອງພວກເຂົາໄປເຈລະຈາກັບຝ່າຍແນວລາວຮັກຊາດທີ່ນະຄອນປາລີປະເທດຝະລັ່ງ. ການເຈລະຈາກິນເວລາຫົກເດືອນກວ່າ ແຕ່ບໍ່ຕົກລົງກັນໄດ້ຈັກບັນຫາ, ຕ່າງຝ່າຍຕ່າງກັບຄືນບ້ານໃຜລາວ. ເຈົ້າສຸວັນນະພູມາ, ກອງແລ ພ້ອມທັງ ເພັງ ພົງສະຫວັນ ແລະ ພັກພວກຂອງເຂົາໄດ້ຕີໂຕອອກຫາງຈາກແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ໄປເຂົ້າຮ່ວມກັບພວກປະຕິການຝ່າຍວຽງຈັນ ກັບມາຕ້ານການປະຕິວັດລາວ. ຈັກກະພັດອາເມລິກາໄດ້ເພີ່ມທະວີ ການໃຊ້ເຮືອບິນເຮັດສົງຄາມທາງອາກາດ ແລະ ເພີ່ມທະວີການໃຊ້ກຳລັງພິເສດ ທີ່ພວກເຂົາສ້າງຂຶ້ນເພື່ອຂະຫຍາຍສົງຄາມພິເສດ ໃຫ້ເປັນສົງຄາມພາກສ່ວນນັບມື້ນັບມີລະດັບສູງຂຶ້ນ, ຫວັງຈະໃຊ້ກຳລັງອາວຸດບັງຄັບໃຫ້ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດຍອມຈຳນົນ.

ເມື່ອບໍ່ມີວິທີໃດພໍ່ຈະແກ້ໄຂບັນຫາດ້ວຍສັນຕິວິທີແລ້ວ ແນວລາວຮັກຊາດ ແລະກຳລັງເປັນກາງຮັກຊາດກໍ່ຕົກລົງຫັນທິດມາສ້າງກຳລັງປະກອບອາວຸດຂອງປວງຊົນ ເພື່ອກຽມຕ້ານສົງຄາມຮຸກຮານອັນຍາວນານຂອງຈັກກະພັດອາເມລິກາ ແລະ ລູກມື. ບັນຍາກາດໃນທົ່ວປະເທດນັບມື້ນັບເຄັ່ງຕຶງ. ສົງຄາມຮຸກຮານຂອງຈັກກະພັດອາເມລິກາ ນັບມື້ນັບຮ້າຍແຮງຂຶ້ນຈົກໄຈ້. ປະຊາຊົນທຸກໝູ່ບ້ານທົ່ວເຂດປົດປ່ອຍຈຳຕ້ອງໜີອອກຈາກບ້ານໄປຢູ່ໃນຖ້ຳກາງປ່າເລິກ ຫຼືຂຸດຖ້ຳເຂົ້າໃນພູຫີນ ແລະ ພູດິນເພື່ອຫຼົບຫຼີກລະເບີດ ແລະ ລູກປືນຈາກເຮືອບິນໃນມື້ສວາຍ, ຮອດກາງຄືນຈິ່ງອອກມາເຮັດການເພີ່ມພູນພະລິດຜົນ ຫຼື ເຄື່ອນໄຫວຮ່ຳຮຽນການສຶກສາ,ວັດທະນະທຳ, ການເມືອງ ແລະ ອື່ນໆ.

ແຕ່ປີ 1965 ຮອດ 1967 ເຮົາຮັບຜິດຊອບແຂວງຊຽງຂວາງ, ໄດ້ຮ່ວມກັບຄະນະພັກແຂວງນຳພາປະຊາຊົນທົ່ວເຂດປົດປ່ອຍຂອງແຂວງນີ້ ເຮັດການເພີ່ມພູນພະລິດຜົນ, ລົບລ້າງຄວາມບໍ່ຮູ້ໜັງສື ແລະ ຮ່ວມມືກັບກອງທະຫານຫຼວງຕໍ່ສູ້ຕ້ານສັດຕູ ທີ່ມາລັງຄວານທາງອາກາດ, ບຸກຕີບຸກຍຶດເຂົ້າມາທາງດິນ ໃນນັ້ນແມ່ນການປົກປັກຮັກສາປ້ອມໝັ້ນພູກູດ ເປັນການຕ້ານສັດຕູຢ່າງຮ້າຍແຮງ ແລະ ຍາວນານກວ່າໝູ່. ເຮົາກໍ່ໄດ້ໃຊ້ເວລາກາງຄືນຄືກັນ ເພື່ອໄປຢາມ ພີ່ນ້ອງປະຊາຊົນເມືອງແປກ, ເມືອງຄຳ, ເມືອງຄູນ ແລະ ກອງທະຫານ ທີ່ເຄື່ອນໄຫວຢູ່ທ້ອງຖິ່ນຕ່າງໆ ເພື່ອແນະນຳໃຫ້ຂະເຈົ້າຜ່ານຜ່າຄວາມຫຍຸ້ງຍາກ ປະຕິບັດໜ້າທີ່ຂອງຕົນ ໄດ້ຜົນດີ. ການປຸກລຸກມະຫາຊົນເມືອງແປກ, ເມືອງຄຳ ແລະ ເມືອງຄູນ ເປັນການອົບຮົມປະ

ຊາຊົນທາງດ້ານການເມືອງ, ເຮັດໃຫ້ທຸກຊົນເຜົ່າມີຫຼັກພົ້ນຊົນຊັ້ນໜັກແໜ້ນກວ່າເກົ່າ, ເຫັນມິດ ແລະສັດຕູແຈ້ງກວ່າເກົ່າ, ສາມັກຄີກັນແໜ້ນກວ່າເກົ່າ, ພ້ອມກັນຕໍ່ຕ້ານສັດຕູ ປົກປັກຮັກສາປະເທດຊາດ, ຕັ້ງໜ້າເຮັດການເພີ່ມພູນຜະລິດຜົນ, ຂະຫຍາຍວັດທະນະທຳ ແລະ ຮ່ຳຮຽນໜັງສືເພື່ອໃຫ້ກູ້ມຕົນເອງທາງດ້ານສະບຽງອາຫານ, ຟື້ນຟູວັດທະນະທຳອັນດີງາມ ຂອງຊົນເຜົ່າຕົນ, ລົບລ້າງຄວາມໂງ່ຈ້າຫຼ້າຫຼັງ ແລະ ຄວາມເຊື່ອຖືງົມງາຍ. ການປຸກລຸກມະຫາຊົນດັ່ງກ່າວນັ້ນ ໄດ້ຮັບຜົນດີຫຼາຍ. ມັນໄດ້ຍົກລະດັບຄວາມຮູ້ທາງດ້ານການເມືອງຂອງປະຊາຊົນໃຫ້ສູງຂຶ້ນຕື່ມ, ໄດ້ຊຸກຍູ້ປະຊາຊົນທຸກເຜົ່າໃຫ້ລົບລ້າງຄວາມບໍ່ຮູ້ໜັງສື ພິດທັງຕາແສງຄາຍ ແລະ ພິດທັງບ້ານໃນຫຼາຍບ້ານຂອງຕາແສງອື່ນໃນເມືອງແປກ, ເມືອງຄຳ ແລະ ເມືອງຄູນ ແລະໄດ້ສ້າງພະນັກງານທີ່ດີເພື່ອໄປຊ່ວຍເມືອງພອກ ແລະ ເມືອງໜອງແຮດ ໃຫ້ສືບຕໍ່ເຮັດການປຸກລຸກມະຫາຊົນຢ່າງໄດ້ຜົນດີ. ສັດຕູເພີ່ມທະວີສົງຄາມພິເສດຂອງພວກເຂົາ ຢ່າງຮ້າຍແຮງຂຶ້ນຈັກໄຊ ແຕ່ປະຊາຊົນທຸກຊົນເຜົ່າ ແລະ ກອງທະຫານພວກເຮົາກໍ່ບໍ່ຫວັ່ນໄຫວ ຄອນແຄນ, ຍິ່ງສາມັກຄີກັນແໜ້ນຂຶ້ນຈັກໄຊ, ນຳໃຊ້ທຸກຄວາມສາມາດ ແລະ ທຸກຊະນິດອາວຸດທີ່ຕົນມີເພື່ອຕໍ່ຕ້ານສັດຕູຢ່າງມີໄຊ. ຄວາມເຊື່ອໝັ້ນຕໍ່ແນວລາວຮັກຊາດ ທີ່ຢູ່ໃຕ້ການນຳພາຂອງພັກມາກ-ເລນິນ ທີ່ແທ້ຈິງ, ຄວາມເຊື່ອໝັ້ນຕໍ່ກຳລັງແຮງຂອງຄວາມສາມັກຄີປວງຊົນ ທັງຊາດ ແລະ ຄວາມເຊື່ອໝັ້ນໃນໄຊຊະນະອັນແນ່ນອນຂອງການປະຕິວັດ ເປັນກຳລັງໃຈ ໃຫ້ກອງທະຫານ ແລະ ປະຊາຊົນພວກເຮົາບຸກໜ້າບືນຕົວເຮັດການປະຕິວັດ ດ້ວຍຄວາມມ່ວນຊື່ນ ເບີກບານ.

ໃນເດືອນ 2 ປີ 1966 ເຮົາໄດ້ນຳຄະນະຜູ້ແທນພັກໄປຮ່ວມກອງປະຊຸມໃຫຍ່ຄັ້ງທີ່ 23 ຂອງພັກກອມມູນິດໂຊວຽດ ແລ້ວກໍ່ໄປແຈ້ງຂ່າວສະພາບການປະຕິວັດຂອງລາວ ໃຫ້ທຸກປະເທດສັງຄົມນິຍົມ, ເຮັດໃຫ້ພັກອ້າຍນ້ອງດີໃຈ ທີ່ໄດ້ຮູ້ແນວທາງປະຕິວັດຂອງພັກລາວເຮົາ , ໄດ້ 3 ເດືອນ ພວກເຮົາຈຶ່ງກັບມາເຖິງບ້ານ.

ເດືອນ 12 ປີດຽວກັນນັ້ນ ເຮົາໄດ້ນຳຄະນະຜູ້ແທນແນວລາວຮັກຊາດ ໄປຮ່ວມບຸນອັນຊາດກູບາ ແລະ ຮ່ວມກອງປະຊຸມ 3 ທະວີບທີ່ໄຂຂຶ້ນຢູ່ນະຄອນຫຼວງລາຮາວານ. ມັນເປັນເທື່ອທຳອິດທີ່ທຸກປະເທດໃນໂລກເຂົ້າໃຈການປະຕິວັດລາວ ແລະ ເຮັດໃຫ້ພວກເຮົາ ໄດ້ສະແດງບົດບາດສຳຄັນຢູ່ໃນກອງປະຊຸມນີ້.

ຕົ້ນປີ 1968 ສູນກາງພັກໄດ້ເອີ້ນເອົາເຮົາຂຶ້ນໄປໂຮມກັນຢູ່ເມືອງວຽງໄຊ, ແຂວງຫົວພັນ ເພື່ອພ້ອມກັນຊີ້ນຳການປະຕິວັດທົ່ວປະເທດ ທີ່ຂະຫຍາຍຕົວກວ້າງຂວາງແລ້ວ. ເຮົາຄິດຮອດວຽກງານປະຕິວັດທີ່ພວມຂະຫຍາຍຕົວດີ, ຄິດຮອດແຂວງຊຽງຂວາງ ທີ່ແມ່ນບ້ານເກີດຂອງເຮົາ, ຄິດຮອດອ້າຍນ້ອງທະຫານ ແລະ ພໍ່ແມ່ປະຊາຊົນທີ່ເຮົາລ້ຽງເຄີຍ ; ແຕ່ເມື່ອສູນກາງພັກເອີ້ນເຮົາກໍ່ຕ້ອງໄປເພື່ອຮັບໃຊ້ວຽກງານປະຕິວັດຂອງທົ່ວປະເທດ. ການເດີນທາງ

ຫຼັງຈາກເຂົ້າຮ່ວມກອງປະຊຸມ 3 ທະວີບ 1966 ແລະ ສະຫຼອງບຸນວັນຊາດກູບາແລ້ວ ຄະນະຜູ້ແທນ ໂດຍແມ່ນທ່ານ ພູມີ ວົງວິຈິດ ເປັນຫົວໜ້າ ເຂົ້າຮ່ວມພິທີປູກຕົ້ນໄມ້ ຢູ່ ແຂວງ ໂອລຽງເຕ .

ຕ້ອງຜ່ານຜ່າອັນຕະລາຍຫຼາຍ ເພາະວ່າໄດ້ອອກເດີນທາງແຕ່ກາງຄືນ ເພື່ອຫຼີກເວັ້ນເຮືອບິນ ສັດຕູ ທີ່ເຄື່ອນໄຫວແຮງໃນກາງເວັນ ; ເສັ້ນທາງເດີນປ່ເພຫຼາຍບ່ອນເຮັດໃຫ້ລົດກອນນັງ ກາ ທີ່ເຮົາຂີ່ໄປນັ້ນຕ້ອງເດີນຊ້າໆ ໂດຍສະເພາະການຂ້າມຫ້ວຍນ້ຳຍິ່ງກິນເວລາຫຼາຍ; ດ້ວຍ ເຫດນັ້ນການເດີນທາງແຕ່ຊຽງຂວາງ ໄປຮອດວຽງໄຊຈຶ່ງກິນເວລາຮອດ 4 ວັນ, ແຕ່ວ່າ ສິ່ງທີ່ດີແມ່ນເຮົາ ແລະ ຄອບຄົວໄປຮອດວຽງໄຊຢ່າງປອດໄພ.

ທີ່ວຽງໄຊ ສູນກາງພັກໄດ້ເຈາະຖ້ຳໄວ້ໃຫ້ພວກເຮົາ. ຖ້ຳນັ້ນແມ່ນເຈາະເຂົ້າພູ ຜາຫີນ ແຫ່ງໜຶ່ງ, ມີຫ້ອງບ່ອນໄວ້ລົດ, ເຮືອນຄົວ, ຫ້ອງຮັບແຂກ, ຫ້ອງກິນເຂົ້າ ແລະ ຫ້ອງນອນ ພຽງພໍໃຫ້ທຸກຄົນໃນຄອບຄົວເຮົາ ແລະ ອ້າຍນ້ອງປ້ອງກັນໜຶ່ງໝູ່. ນອກຈາກນັ້ນ ຍັງມີເຮືອນ ນອນຂອງເຮົາຢູ່ນອກຖ້ຳ ເພື່ອໃຊ້ໃນເວລາສະພາບການໂຍະຍານ. ຖ້ຳບ່ອນນີ້ ຕັ້ງຢູ່ບ່ອນ ທາງທ່ຽວໄປມາຂອງເຮືອບິນສັດຕູ, ດັ່ງນັ້ນສັດຕູຈຶ່ງມັກຍິງປືນຈັກແລະຖິ້ມລະເບີດໃສ່ເລື້ອຍໆ ຕັ້ງແຕ່ພວກເຮົາໄປຢູ່ຖ້ຳນີ້ ເຮືອບິນສັດຕູໄດ້ຖິ້ມລະເບີດໃສ່ 6 ເທື່ອງລະ 2 ລູກ ແລະ ຍິງ ປືນຈັກໃສ່ຕາມເສັ້ນທາງ ແລະ ປາກປະຕູຖ້ຳຫຼາຍເທື່ອ ແຕ່ພວກເຮົາກໍ່ປອດໄພທຸກຄົນ.

ຕົ້ນປີ 1970, ເຮົາໄດ້ນຳຄະນະຜູ້ແທນກຳມະບານລາວ ໄປຮ່ວມກອງປະຊຸມກຽມທີ່ນະ ຄອນຫຼວງປະລາຮາ ປະເທດເຊໂກສະໂລວາກີ ແລ້ວກໍ່ໄປຮ່ວມກອງປະຊຸມກຳມະບານໂລກທີ່

ທີ່ວຽງໄຊ ສູນກາງພັກໄດ້
ເຈາະຖ້ຳ ໃຫ້ພວກເຮົາຢູ່
ຕີນພູຜາຫີນແຫ່ງນີ້

ນີ້ແມ່ນທາງຂຶ້ນຫາຖ້ຳ
ພວກເຮົາທີ່ວຽງໄຊ

ຢູ່ປາກຖ້ຳ ພວກເຮົາບິກໍາແພງ
ຫີນກໍ່ບັງໄວ້ຢ່າງແໜ້ນໜາ

ນະຄອນຫຼວງປາລີປະເທດຝະລັ່ງ. ຫຼັງຈາກນັ້ນ ພວກເຮົາໄດ້ໄປຮ່ວມບຸນສະຫຼອງວັນ ບຸກຕີຄ່າຍມົນກາດາຂອງປະເທດກູບາ. ໄປຮອດນະຄອນຫຼວງລາຮາວານ ເຮົາໄດ້ລົ້ມປ່ວຍພັກສົມຄວນ, ເຮັດໃຫ້ສອງໜ່ວຍຕາຂອງເຮົາເບິ່ງບໍ່ຖືກຈຸດດຽວກັນ, ທັງໄຂ້, ທັງເຈັບຫົວ, ທັງຮາກອອກ ຈົນນອນບໍ່ໄດ້ເປັນເວລາສອງເດືອນ, ບັນດາແພດ, ພະນັກງານ ຕະຫຼອດຮອດສະຫາຍໃນສູນກາງພັກກູບາ ແລະເອກອັກຄະລັດຖະທູດປະເທດຫວຽດນາມທັງ 2 ພາກແລະປະເທດສັງຄົມນິຍົມອ້າຍນ້ອງໄດ້ເອົາໃຈໃສ່ປິ່ນປົວ ດ້ວຍທຸກວິທີຈຶ່ງເຮັດໃຫ້ເຮົາ ຂຶ້ນເຮືອບິນມາສະຫະພາບໂຊວຽດໄດ້. ໃນເວລາເຈັບພັກຢູ່ປະເທດກູບາ ເຮົາມີຄວາມຕໍ່າຕ້ອຍນ້ອຍໃຈຫຼາຍ ເພາະວ່າຈະອົດທົນເດີນທາງກັບມາບ້ານ ແມ່ນເປັນສິ່ງທີ່ເຮັດບໍ່ໄດ້, ຈະໃຫ້ລູກເມຍແລະພີ່ນ້ອງເດີນທາງໄປເບິ່ງເຮົາກໍ່ບໍ່ເປັນ ສິ່ງທີ່ຈະເຮັດໄດ້ງ່າຍ ; ມະຫາສະໝຸດອັດລັງຕິກອັນກວ້າງໃຫຍ່ມະຫາສານຂວາງຂັ້ນທະວີບອາເມລິກາກາງ ກັບແຜ່ນດິນໃຫຍ່ເອີໂລບ ; ຕ້ອງນັ່ງໃນເຮືອບິນ 10 ຊົ່ວໂມງ ຈຶ່ງຮອດປະເທດມາລົກ ແລ້ວຈາກນັ້ນຍັງຕ້ອງບິນອີກ 6 ຊົ່ວໂມງຈຶ່ງຮອດນະຄອນຫຼວງ ໂມສະກູແຫ່ງສະຫະພາບໂຊວຽດໄດ້. ສິ່ງທີ່ເຮັດໃຫ້ເຮົາ ອຸ່ນໃຈແລະເຊື່ອໝັ້ນແມ່ນຄວາມຮັກແພງຂອງບັນດາສະຫາຍກູບາ ແຕ່ຂັ້ນສູນກາງລົງຮອດແພດຂັ້ນສູງ, ຂັ້ນຕົ້ນ ແລະ ພະນັກງານທຸກພະແນກໄດ້ເບິ່ງແຍງເຮົາ ດ້ວຍຄວາມຮັກແພງສະໜິດສະໜົມເໝືອນດັ່ງເປັນອ້າຍນ້ອງຄີງກັນແທ້.

ທ້າຍເດືອນ 9 ປີ 1970 ເຮົາໄດ້ຂຶ້ນນອນໃນເຮືອບິນອາເອໂລຟະລົດ ທີ່ແມ່ນສະຖານທູດໂຊວຽດຈັດໃຫ້ເພື່ອເດີນທາງກັບມາປະເທດໂຊວຽດ ໂດຍມີແພດກູບາໜຶ່ງຄົນຕິດຕາມເບິ່ງແຍງເຮົາຕະຫຼອດເວລາເດີນທາງ. ມາຮອດໂມສະກູເວລາໃດ ຈິດໃຈຂອງເຮົາ ກໍ່ມ່ວນຊື່ນເບີກບານຂຶ້ນ ເພາະວ່າໄດ້ຂ້າມມະຫາສະໝຸດອັດລັງຕິກພົ້ນແລ້ວ ແລະ ມາຮອດແຜ່ນດິນໃຫຍ່ຂອງທະວີບເອີໂລບທີ່ບໍ່ໄກຈາກບ້ານເຮົາປານໃດ. ທີ່ໂມສະກູເຮົາໄດ້ເຂົ້ານອນໂຮງແຮມຄືນໜຶ່ງ ແລ້ວຕໍ່ມາເຊົ້າວັນໃໝ່ກໍເຂົ້ານອນໂຮງໝໍໂລດ. ທ່ານໝໍໄດ້ສຸມກໍາລັງໃສ່ກວດເຮົາທີ່ດົນນັ້ນ ແລ້ວກໍ່ບົ່ງມະຕິພະຍາດວ່າ ເຮົາເຮັດວຽກອິດເມື່ອຍໂພດເຮັດໃຫ້ເສັ້ນປະສາດຕາເຮົາເມື່ອຍທັງສອງເບື້ອງ ແຕ່ວ່າເບື້ອງຂວາເມື່ອຍຫຼາຍກວ່າ, ມັນເຮັດໃຫ້ເຮົາຖືຄີງໄຂ້ ແລະ ນອນບໍ່ຫຼັບຍ້ອນເຈັບຫົວແຮງ. ກວດແລ້ວທ່ານໝໍກໍ່ວາງຢາປົວເຮົາໂລດ. ອາການຮາກ ແລະຖ່າຍໜັກແຫຼວທີ່ເຮົາເປັນມາແຕ່ປະເທດກູບາກໍ່ຄ່ອຍບັນເທົາລົງ. ແຕ່ວ່າທ່ານໝໍຍັງຕີລາຄາວ່າ ພະຍາດຂອງເຮົາມີອາການໜັກ ຈຶ່ງລາຍງານມາໃຫ້ສູນກາງພັກເຮົາຢູ່ທາງບ້ານ, ບັນດາສະຫາຍໃນສູນກາງຮູ້ແນວນັ້ນກໍ່ເປັນຫ່ວງຫຼາຍ ຈຶ່ງຈັດສົ່ງເມຍເຮົາໄປຫາເຮົາ ເພື່ອຊ່ວຍທ່ານໝໍເບິ່ງແຍງ ແລະ ອົບອຸ່ນເຮົາ.

ຫຼັງຈາກໄດ້ຮັບການປິ່ນປົວເດືອນໜຶ່ງແລ້ວ ພະຍາດຂອງເຮົາກໍ່ເລີ່ມເບົາບາງລົງ ;ຮອດເດືອນທີສອງຄື ເດືອນ 11 ປີ 1970 ເຮົາເກືອບຈະຫາຍປ່ວຍ ແລະ ພວມກຽມຈະອອກ

ໂຮງໝໍ. ແຕ່ວ່າມາຮອດຕົ້ນເດືອນ 12 ເຮົາໄດ້ກັບເຈັບຄືນແບບຜິດປົກກະຕິ, ຄືວ່າຫຼັງຈາກໄປຫັດແຮງມາແລ້ວ ເຮົາເຈັບຄໍຫອຍເປັນເໝືອນວ່າສູບລົມເຂົ້າຕົວຮູຄໍເຮົາ ເປັນເວລານານຮອດ 5 ນາທີ ກໍ່ບໍ່ດີ. ເຮົາບອກໃຫ້ແພດຊັ້ນຕົ້ນໄປເອີ້ນທ່ານໝໍມາເບິ່ງ. ທ່ານໝໍມາກວດເບິ່ງແລ້ວບອກວ່າ ເຮົາເຈັບຫົວໃຈວາຍ ແລະ ສັ່ງໃຫ້ເຮົານອນຫງາຍຢູ່ບໍ່ໃຫ້ຕິງ, ກິນເຂົ້ານ້ຳ ແລະ ຖ່າຍໜັກຖ່າຍເບົາກັບບ່ອນ ; ແຕ່ລະມື້ທ່ານໝໍສັກຢາໃສ່ແຂນ ແລະ ກົກຂາເຮົາ 3 ເທື່ອ ແລະ 15 ນາທີໃດກໍ່ໃຫ້ນາງແພດຊັ້ນຕົ້ນສັກເອົາເລືອດປາຍນິ້ວມື ໄປຍອດໃສ່ນ້ຳເບິ່ງ ແລະ ຜັດປ່ຽນກັນມານັ່ງເຝົ້າເຮົາທັງກາງວັນ ແລະ ກາງຄືນ. ໂທລະພາບ ແລະ ໂທລະສັບກໍ່ປົດອອກໝົດ, ບໍ່ໃຫ້ຜູ້ໃດມາອົມເຮົາ ; ເມຍເຮົາເພີ້ນກໍ່ໃຫ້ນອນຢູ່ຫ້ອງທາງຂ້າງນັ້ນ ເພື່ອກວດພະຍາດ ແລະ ປິ່ນປົວລາວ, ອະນຸຍາດໃຫ້ລາວມາເບິ່ງເຮົາແຕ່ມື້ລະເທື່ອ ແລະ ບໍ່ໃຫ້ລົມເຮົາເກີນກວ່າ 15 ນາທີ. ເຮົາເຂົ້າໃຈດີວ່າພະຍາດຂອງເຮົາໜັກ, ເຮົາຈຶ່ງປະຕິບັດຕາມຄຳສັ່ງຂອງທ່ານໝໍທຸກປະການດ້ວຍຄວາມພໍໃຈ.

ເຮົາໄດ້ນອນຢູ່ແນວນັ້ນໄດ້ 35 ມື້. ໃນລະຫວ່າງນັ້ນມີແຕ່ນາງແພດຊັ້ນຕົ້ນປິ່ນປົວບົວລະບັດເຮົາ, ເອົາເຂົ້າມາປ້ອນໃສ່ປາກເຮົາ, ເອົາງຽງມາໃຫ້ເຮົາຖ່າຍໜັກ ແລະຖ່າຍເບົາ; ທຸກວັນຈັນໄດ້ເອົາຜ້າຈຸບນ້ຳຮ້ອນມາເຊັດຕົວ ແລະ ເອົາໂສ້ງເສື້ອມາຖ່າຍໃຫ້ເຮົາ. ໃນ 10 ມື້ທຳອິດເຮົາຮູ້ສຶກເມື່ອຍຫຼາຍ, ບໍ່ຢາກກິນເຂົ້າ, ອິດກິນແຕ່ເຂົ້າປຽກໃສ່ນ້ຳນົມສົດ ແລະນ້ຳຕານ, ຕ້ອງກິນຢາຫຼາຍຈຶ່ງນອນໄດ້. ຫຼັງຈາກນັ້ນເຮົາຮູ້ສຶກວ່າໄດ້ຂຶ້ນແດ່, ບໍ່ອິດເມື່ອຍຫຼາຍຄືແຕ່ກ່ອນ, ຮູ້ຄຶດຢາກກິນນ້ຳນົມສົ້ມ, ຢາກກິນເຂົ້າຈີ່ກັບພາກໄມ້ກວນຫວານ. ຄວາມເຊື່ອໝັ້ນວ່າຈະດີຂຶ້ນມີຫຼາຍກວ່າເກົ່າ. ສາດສະດາຈານ ແລະ ທ່ານໝໍຜູ້ຮັບຜິດຊອບປົວກໍ່ດີໃຈແລະໃຫ້ຄວາມເວົ້າອົບອຸ່ນເຮົາຕື່ມ. ຕໍ່ຈາກນັ້ນເຮົາກໍ່ຮູ້ສຶກສະບາຍໃຈ ແລະ ມີແຮງກວ່າເກົ່າຂຶ້ນຊຸ່ມ.

ມື້ທີ 35 ຕອນເຊົ້າ ສາດສະດາຈານ ແລະ ທ່ານໝໍພ້ອມກັນມາກວດເຮົາ ແລ້ວບອກວ່າໃຫ້ເຮົາລຸກນັ່ງຢູ່ເທິງຕຽງ. ເຮົາຮູ້ສຶກດີໃຈຫຼາຍເພາະເຂົ້າໃຈວ່າພະຍາດເຮົາດີແລ້ວ. ເຮົາລຸກຂຶ້ນຈາກນອນຫງາຍມານັ່ງ ເປັນການຍາກທີ່ສຸດເພາະວ່ານອນຫງາຍຢູ່ເປັນເວລາ ເດືອນກວ່າ ມັນເຮັດໃຫ້ກະດູກສັນຫຼັງຂອງເຮົາຊື່ກະດ້າງ, ນັ່ງ 3 ນາທີແລ້ວຕ້ອງນອນ 5 ນາທີຈຶ່ງລຸກນັ່ງອີກ, ເຮັດຫຼາຍເທື່ອກໍ່ໄດ້ດີກວ່າເກົ່າ, ອາທິດໜຶ່ງຈຶ່ງນັ່ງເປັນປົກກະຕິໄດ້. ຫຼັງຈາກນັ້ນທ່ານໝໍກໍ່ສັ່ງໃຫ້ເອົາຕີນຢ່ອນລົງຢຽບຕັ່ງອີ້ ໂດຍມີນາງແພດຊັ້ນຕົ້ນ ແລະ ເມຍເຮົາຊ່ວຍໂຊມຂຶ້ນໂຊມລົງ. ເມື່ອຊິນເຄີຍເຮັດແນວນັ້ນແລ້ວ ທ່ານໝໍກໍ່ໃຫ້ເຮົາລົງຕຽງມານັ່ງຕັ່ງອີ້, ລຸກຢືນຂຶ້ນແລ້ວນັ່ງລົງ, ເທື່ອນີ້ປະກົດວ່າຕີນຕົວເຮົາໜັກກວ່າແຕ່ກ່ອນ, ຢືນເຕັ້ງໃສ່ພື້ນຕີນຮູ້ສຶກວ່າເຈັບຫຼາຍ ເພາະວ່າເດືອນກວ່າແລ້ວບໍ່ໄດ້ຢືນ. ເມື່ອຢືນໄດ້ດີແລ້ວ ທ່ານໝໍກໍ່ບອກໃຫ້ຍ່າງຢູ່ໃນກາງຫ້ອງນອນໂດຍຊຸກຕັ່ງອີ້ໄປນຳ ມີນາງແພດຊັ້ນຕົ້ນ ແລະ ເມຍເຮົາ ຍ່າງແຝງ

ຂ້າງໄປນຳ. ແຕ່ລະອິລິຍາບົດກິນເວລາອາທິດໜຶ່ງ ຈຶ່ງປ່ຽນໄປເຮັດອິລິຍາບົດອື່ນໄດ້. ເມື່ອຍ່າງໂດຍຕີນເອງຢູ່ໃນຫ້ອງນອນໄດ້ດີແລ້ວ ທ່ານໝໍຈຶ່ງໃຫ້ອອກໄປຍ່າງທາງນອກ ຕາມແຄບທາງກາງເຮືອນໂຮງໝໍ. ອາທິດຫຼັງຕໍ່ມາ ສາດສະດາຈານ ແລະ ທ່ານໝໍກໍຕົກລົງໃຫ້ເຮົາ - ພ້ອມທັງເມຍເຮົາອອກໂຮງໝໍໄປພັກຜ່ອນຢູ່ໂຮງພັກຟື້ນ ທີ່ມີຊື່ວ່າ ປຸດສະກິໂນ (Sanatorium Puskino) ຢູ່ໃກ້ກັບໂຮງໝໍນັ້ນ.

ໂຮງພັກຟື້ນມີລັກສະນະຄືກັນກັບໂຮງໝໍ, ມີຫ້ອງກວດພະຍາດ, ມີທ່ານໝໍ ແລະ ແພດຊັ້ນຕົ້ນກໍ່ກັບຫ້ອງເຄື່ອງຈັກອັນຄົບຖ້ວນເພື່ອກວດພະຍາດ ແລະ ປິ່ນປົວຄົນເຈັບທຸກຊະນິດ, ມີຫ້ອງຈ່າຍຢາ, ຫ້ອງຫັດກາຍະບໍລິຫານ, ຫ້ອງກິນເຂົ້າ ແລະ ຮ້ານຄ້າຂາຍເຄື່ອງ ນຸ່ມຍ່ອຍເພື່ອໃຫ້ຄົນເຈັບໄປຊື້. ສິ່ງທີ່ຕ່າງໂຮງໝໍແມ່ນລະບຽບອ່ອນໂຍນກວ່າ, ຄົນເຈັບຈະອອກໄປທ່ຽວຫຼິ້ນທາງນອກ ຫຼື ຄົນທາງນອກຢາກເຂົ້າມາຢາມຫຼາຍຄົນ ແລະ ເຫິງປານໃດກໍ່ໄດ້.ແຕ່ວ່າເຮົາກໍ່ບໍ່ຮູ້ອອກໄປທ່ຽວຫຼິ້ນຫຼາຍປານໃດ ເພາະວ່າມັນແມ່ນກາງເດືອນທັນວາ ແລະເດືອນມັງກອນ ເຊິ່ງເປັນເວລາໜາວທີ່ສຸດຂອງລະດູໜາວຢູ່ໃນສະຫະພາບໂຊວຽດ. ມີສິ່ງໜຶ່ງທີ່ເຮົາລືມບໍ່ໄດ້ ແມ່ນທ້າວ ສີນອນ ກັບເມຍຂອງລາວຊື່ນາງສີນສະເດັດ ທີ່ເຮັດວຽກປາກພາສາລາວ ຢູ່ສະຖານີວິທະຍຸກະຈາຍສຽງໂມສະກູ ໄດ້ຄົ້ວອາຫານລາວແລ້ວພາກັນຍ່າງຜ່າຫິມະອັນດົກໜາ ທັງກາງວັນ ແລະ ກາງຄືນເອົາອາຫານນັ້ນໄປສົ່ງໃຫ້ເຮົາກິນທຸກມື້ ; ນັ້ນເປັນຄວາມຮັກແພງ ທີ່ປະເສີດທີ່ສຸດ. ອາຫານລາວໄປຕື່ມໃສ່ອາຫານໂຊວຽດ ມັນຊ່ວຍໃຫ້ເຮົາກິນເຂົ້າໄດ້ຫຼາຍ ແລະມີແຮງໄວ.

ຖ່າຍຮ່ວມກັບສະຫາຍ ພູມ ສີປະເສີດ ທີ່ໄປຢາມເຮົາທີ່ໂຮງພັກຟື້ນປູສະກິໂນ ໃນປີ 1971 .

ອັນທີ່ຕ່າງຈາກປະເທດນາຍທຶນແມ່ນຕະຫຼອດເວລາທີ່ເຮົານອນໂຮງໝໍ ແລະ ໂຮງພັກຟື້ນ ເຮົາບໍ່ໄດ້ເສຍເງິນຈັກອັດ , ທ່ານໝໍ ແລະ ນາງແພດທຸກໆຄົນທີ່ປິ່ນປົວເຮົານັ້ນໄດ້ເອົາໃຈໃສ່ເບິ່ງແຍງເຮົາດ້ວຍຄວາມຮັກແພງເໝືອນດັ່ງແມ່ນ້ອງອ້າຍເອື້ອຍນ້ອງໃນຄອບຄົວດຽວກັນແລະປີ້ຍົນແຕ່ໂມສະກູ ຮອດ ຮ່າໂນ່ຍ ກໍ່ແມ່ນລັດຖະບານໂຊວຽດເສຍໃຫ້ພົດ ; ອັນນີ້ເປັນ ສິ່ງປະທັບໃຈຢ່າງໃຫຍ່ຫຼວງທີ່ເຮົາຈະບໍ່ຫຼົງລືມໄດ້ຈັກເທື່ອໃນຊີວິດຂອງເຮົາ , ມັນຢືນຢັນ ໃຫ້ເຫັນແຈ້ງໃນຕົວຈິງວ່າສະຫະພາບໂຊວຽດເປັນເສົາຄ້ຳອັນໝັ້ນແກ່ນໃຫ້ແກ່ການປະຕິວັດລາວແທ້ .

ຫຼັງຈາກປິ່ນປົວຕົວຢູ່ໂຮງພັກຟື້ນທັງເດືອນກັບ 4 ມື້ແລ້ວ ເຮົາຮູ້ສຶກວ່າແຮງຂຶ້ນກວ່າເກົ່າຫຼາຍ ; ທ່ານໝໍຕົກລົງໃຫ້ພວກເຮົາອອກຈາກໂຮງພັກຟື້ນ ໄປພັກຢູ່ໂຮງແຮມຂອງພັກ. ອາທິດທັງຕໍ່ມາພວກສະຫາຍພະນັກງານຫ້ອງການສູນກາງພັກກອມມູນິດໂຊວຽດ ໄດ້ພາພວກເຮົາອອກຈາກໂມສະກູໄປຢ້ຽມຢາມເມືອງເລນິນກະລາດ, ຂຶ້ນລົດໄຟຢູ່ໂມສະກູເວລາ 10 ໂມງກາງຄືນ, ລົດໄຟແລ່ນພົດຄືນຮອດ 5 ໂມງເຊົ້າກໍ່ໄປເຖິງເລນິນກະລາດ ; ເຮົາພະຍາຍາມນອນໃນລົດໄຟ ແຕ່ນອນບໍ່ໄດ້ຈັກເມັດ ເພາະວ່າມັນມີການຊະເນືອນ ແລະ ມີສຽງດັງບໍ່ມີເວລາຈະສິ້ນສຸດ. ຮອດເລນິນກະລາດເຮົາຮູ້ສຶກເມື່ອຍຫຼາຍ. ທ່ານໝໍມາກວດເບິ່ງ ກໍ່ເຫັນວ່າເຮົາເມື່ອຍແທ້, ເພິ່ນຫ້າມບໍ່ໃຫ້ເຮົາເຄື່ອນໄຫວເປັນເວລາ 3 ມື້ ເພື່ອໃຫ້ເຮົານອນພັກຜ່ອນ. ຫຼັງຈາກນັ້ນເຮົາກໍ່ໄດ້ໄປເຄື່ອນໄຫວຢ້ຽມຢາມສະຖານທີ່ສຳຄັນຕ່າງໆ ຂອງເມືອງເລນິນກະລາດ. ການເຄື່ອນໄຫວໄປມາໃນເວລານັ້ນ ເປັນການທົດສອບສຸຂະພາບຂອງເຮົາເພາະວ່າເມືອງເລນິນກະລາດໃນທ້າຍເດືອນມັງກອນຕໍ່ຕົ້ນເດືອນກຸມພາ ປົກຄຸມໄປດ້ວຍຫິມະອັນດົກໜາທີ່ຕົກປານຫວ່ານຍອງຝາຍທັງກາງວັນ ແລະ ກາງຄືນ. ທ່ານໝໍທີ່ໄປມານຳເຮົາໄດ້ແທກອາການດັນຂອງເລືອດ ແລະ ຟັງການເຕັ້ນຂອງຫົວໃຈເຮົາທຸກເຊົ້າ ແລະ ທຸກແລງ ເປັນຕົ້ນແມ່ນເວລາເຮົາກັບມາແຕ່ການໄປຢ້ຽມຢາມ.

ເວລາກັບຈາກເລນິນກະລາດມາໂມສະກູ ທ່ານໝໍໄດ້ສັ່ງໃຫ້ພວກເຮົາມາຕາມທາງລົດໄຟຄືເກົ່າ ແຕ່ຫາກໃຫ້ມາມື້ສວາຍ ເພື່ອບໍ່ໃຫ້ຣົບກວນການນອນຂອງເຮົາ. ອອກຈາກເລນິນກະລາດແຕ່ເຊົ້າໆ ພວກເຮົາມາຮອດໂມສະກູເວລາຕາເວັນຕົກ. ການເດີນທາງມື້ສວາຍ ເປັນອັນມ່ວນຊື່ນ ແລະ ເປັນປະໂຫຍດໃຫ້ແກ່ເຮົາຫຼາຍກວ່າເດີນກາງຄືນ ເພາະວ່າ ມັນເຮັດໃຫ້ເຮົາເຫັນບ້ານເມືອງ ແລະ ທິວທັດອັນສວຍງາມຂອງສະຫະພາບໂຊວຽດ ຕາມສອງຟາກທາງທີ່ລົດໄຟພາພວກເຮົາແລ່ນໄປ. ແຜ່ນດິນປົກຄຸມໄປດ້ວຍຫິມະຂາວຈະຈ່າງ ໄປສຸດຊົ່ວຕາ ແລະ ຕົ້ນໄມ້ໃບຫຼື່ນມີຫິມະການຫຸ້ມຮອດງ່ານອຍກາຍເປັນກົກໄມ້ຂາວທົ່ວທັງປ່າ ເປັນສິ່ງແປກປະຫຼາດ ແລະ ງົດງາມເຊິ່ງພວກເຮົາບໍ່ເຄີຍເຫັນຢູ່ໃນບ້ານເມືອງເຮົາ.

ເວລາພວກເຮົາກັບເມືອຮອດໂມສະກູແລ້ວ ທ່ານໝໍໄດ້ບອກໃຫ້ເຮົາພັກຢູ່ໂຮງແຮມ ອີກ

ສອງອາທິດ ແລະ ໄປປ່ຽນຢາມແຕ່ບ່ອນທີ່ບໍ່ຈຳເປັນຕ້ອງຍ່າງຫຼາຍ, ເປັນຕົ້ນແມ່ນຍ່າງຂຶ້ນຂັ້ນໄດ ຫຼື ພູສູງ. ທ້າຍສຸດ ທ່ານໝໍໄດ້ພາເຮົາໄປຂີ່ລິບໄຟຟ້າຂຶ້ນເສົາໂທລະພາບສູງ 300 ກວ່າແມັດ ເພື່ອທົດລອງເບິ່ງວ່າເຮົາຈະສາມາດເດີນທາງກັບບ້ານດ້ວຍເຮືອບິນຫຼືບໍ່. ການທົດລອງໄດ້ຜົນດີ, ທ່ານໝໍຈຶ່ງຕົກລົງວ່າຕື່ມອີກອາທິດໜຶ່ງ ເຮົາສາມາດຂຶ້ນເຮືອບິນກັບເມືອບ້ານໄດ້ ແຕ່ຫາກຍັງຫ້າມບໍ່ໃຫ້ເຮົາຂີ່ເຮືອບິນນານກວ່າ 4 ຊົ່ວໂມງໃນມື້ໜຶ່ງ ແລະ ໃຫ້ພັກຜ່ອນເປັນຍາມໆໄປບ່ອນລະອາທິດໜຶ່ງ. ດັ່ງນັ້ນ ເຮົາຂຶ້ນເຮືອບິນຢູ່ມົສະກູ ຈຶ່ງໄປລົງເມືອງໂອມສະເກີ, ພັກຢູ່ເມືອງນີ້ອາທິດໜຶ່ງຈຶ່ງຂຶ້ນເຮືອບິນໄປເມືອງອຽກກຸດ, ອາທິດໜຶ່ງອີກຈຶ່ງຂຶ້ນເຮືອບິນໄປລົງນະຄອນຫຼວງປັກກິ່ງ ຂອງສາທາລະນະລັດປະຊາຊົນຈີນ. ນະທີ່ນີ້ ທ່ານໝໍຈີນໄດ້ສະເໜີດ້ວຍຄວາມຈິງໃຈໃຫ້ເຮົາເຂົ້ານອນໂຮງໝໍຂອງເພິ່ນອີກ ເພື່ອກວດເບິ່ງສຸຂະພາບຂອງເຮົາ. ເຮົາເຫັນວ່າເວລານັ້ນປະຕິເສດຈະບໍ່ເປັນການດີ, ຈຶ່ງໄດ້ເຂົ້າໄປນອນ ໂຮງໝໍຂອງສູນກາງເພິ່ນ ເພື່ອໃຫ້ທ່ານໝໍກວດເບິ່ງຫົວໃຈຂອງເຮົາ ແລະ ຮັບການປິ່ນປົວຂອງເພິ່ນຕື່ມອີກ.

ການກວດ ແລະ ປົວພະຍາດຂອງເຮົາຢູ່ໂຮງໝໍປັກກິ່ງກິນເວລາໜຶ່ງເດືອນ, ຫຼັງຈາກນັ້ນກໍ່ອອກມາພັກຢູ່ນອກອາທິດໜຶ່ງແລ້ວ ກໍ່ອອກເດີນທາງກັບໄປຫາໂນ້ຍ ໂດຍຜ່ານເມືອງຊຽງໄຮ, ທ່ານເຈົາ, ກວາງເຈົາ ແລະ ນານນິນ. ຫຼັງຈາກເຂົ້ານອນໂຮງໝໍຫາໂນ້ຍສອງອາທິດແລະອອກມາພັກຢູ່ນອກອາທິດໜຶ່ງ ແລ້ວເຮົາກໍ່ຂຶ້ນລົດກອມມັງກາ ທີ່ພວກສະຫາຍຫວຽດນາມ ກະກຽມໃຫ້ກັບຄືນສູ່ເມືອງວຽງໄຊ ອັນເປັນສຳນັກສູນກາງແນວລາວຮັກຊາດຂອງພວກເຮົາ. ໄປຮອດເຮືອນເຮົາທີ່ວຽງໄຊ ເຮົາຮູ້ສຶກດີໃຈຢ່າງຫາອັນປຽບບໍ່ໄດ້ ແລະ ພວກສະຫາຍ ໃນສູນກາງພ້ອມທັງສະຫາຍອື່ນກໍ່ສະແດງຄວາມດີໃຈທີ່ໄດ້ເຫັນເຮົາກັບມາ ດ້ວຍສຸຂະພາບແຂງແຮງດີ ຫຼັງຈາກຫາຍໜ້າໄປເກືອບໜຶ່ງປີ. ນັ້ນລຸນມາເຮົາກໍ່ເລີ່ມເຮັດວຽກໂລດ ໃນຖານະທີ່ເປັນເລຂາທິການແນວລາວຮັກຊາດ ຊີ້ນຳກຸ່ມວຽກສຶກສາ, ໂຄສະນາອົບຮົມ ແລະ ວັດທະນະທຳ.

ເວລານັ້ນເປັນເວລາທີ່ສັດຕູຖິ້ມລະເບີດໃສ່ເຂດປົດປ່ອຍຂອງພວກເຮົາ ຢ່າງຮ້າຍແຮງທີ່ສຸດຈົນວ່າມໍ່ສວາຍພົດທຸກຄົນຕ້ອງຢູ່ໃນຖ້ຳ, ຕາເວັນຕົກແລ້ວຈຶ່ງອອກມາເຮັດວຽກ. ແຕ່ປານນັ້ນກອງທະຫານ ແລະປະຊາຊົນລາວພວກເຮົາກໍ່ຍັງສາມາດຕີສັດຕູຢ່າງມີໄຊຫຼາຍຂຶ້ນເລື້ອຍໆ; ການປົດປ່ອຍຜາທີບ່ອນສັດຕູກໍ່ສ້າງຢ່າງສົມເປືອງທີ່ສຸດ, ການຕີດັບມອດບັ້ນຮົບສາມັກຄີ, ບັ້ນຮົບສາມສອນ, ສອນໄຊເຮັດໃຫ້ສັດຕູເຫັນແຈ້ງວ່າ ການເຄື່ອນໄຫວຂອງເຮືອບິນພວກເຂົາບໍ່ຊ່ວຍໃຫ້ພວກເຂົາຫຼີກເວັ້ນຄວາມປະລາໄຊໄດ້.

ເດືອນກຸມພາ ປີ 1972, ພັກປະຊາຊົນລາວໄດ້ໄຂກອງປະຊຸມໃຫຍ່ ເທື່ອທີສອງຂຶ້ນ. ກອງປະຊຸມໄດ້ຕີລາຄາສະພາບການຂອງໂລກ ແລະ ສະພາບການພາຍໃນປະເທດ ຢ່າງລະອຽດຖີ່ຖ້ວນ ແລະ ຮອບດ້ານທີ່ສຸດ. ກອງປະຊຸມໄດ້ເຫັນເປັນເອກະສັນກັນວ່າ ມາຮອດປີ

1972 ນີ້ ຈັກກະພັດອາເມລິກາໄດ້ອ່ອນແຮງລົງແລ້ວ, ຫຼັກຖານກໍ່ແມ່ນພວກເຂົາ ຈໍາເປັນຕ້ອງຍອມເຈລະຈາຢູ່ນະຄອນປາລີ ກັບຝ່າຍຫວຽດນາມ. ການເຈລະຈາແມ່ນເພື່ອໃຫ້ຈັກກະພັດອາເມລິກາຖອນອອກຈາກພາກໃຕ້ຫວຽດນາມ. ມີບາງຄົນບໍ່ຢາກເຊື່ອບັນຫານີ້ ເພາະວ່າເວລານັ້ນ ຈັກກະພັດອາເມລິກາພວມຖິ້ມລະເບີດໃສ່ຫວຽດນາມ ແລະລາວແຮງທີ່ສຸດ. ແຕ່ສູນກາງພັກພວກເຮົາເຫັນວ່າ ການຖິ້ມລະເບີດແຮງແມ່ນປະກົດການທີ່ຫຼອກລວງໃຫ້ຄົນຜູ້ເບິ່ງພິວເຜີນ ຫຼົງເຊື່ອວ່າຈັກກະພັດອາເມລິກາ ຍັງມີແຮງ ແລະ ບໍ່ເຫັນຄັກວ່າ ພວກເຂົາໄດ້ໃຊ້ອາວຸດທີ່ມີເຂົ້າໃສ່ສົງຄາມອິນດູຈີນນີ້, ລວມທັງເຮືອບິນຍຸດທະສາດ B-52 ດ້ວຍ, ແຕ່ຜົນທີ່ໄດ້ຮັບກໍ່ຄືພວກເຂົາປະລາໄຊໃນທຸກສະໜາມຮົບ, ພາຍໃນພວກນາຍທຶນເອງກໍ່ຂັດແຍ້ງກັນ, ພວກກໍາອໍານາດກັບປະຊາຊົນກໍ່ຂັດແຍ້ງກັນ, ທະຫານຂອງພວກເຂົາໂຕນໜີນັບມື້ນັບຫຼາຍ, ຂະບວນຊາວໜຸ່ມບໍ່ຍອມໄປເປັນທະຫານກວ້າງຂວາງອອກຊັກໄຊ້, ພວກທະຫານກິນເຮໂລອິນແລ້ວບໍ່ຍອມໄປສູ້ຮົບຫຼາຍຂຶ້ນຊັກໄຊ້ ; ພວກເຂົາວ່າແພງໃຫ້ພວກນາຍຈັບໃສ່ຄຸກ ດີກວ່າໄປຕາຍໃນສະໜາມຮົບ. ນອກຈາກນັ້ນ ທາງສຽງຂອງໂລກ ແລະ ຂອງປະຊາຊົນ ອາເມລິກາເອງ ກໍ່ຄັດຄ້ານສົງຄາມຮຸກຮານອັນໄຮ້ມະນຸດສະທໍາຂອງຈັກກະພັດອາເມລິກາແຮງຂຶ້ນຊັກໄຊ້. ສິ່ງທີ່ກ່າວມານັ້ນ ເປັນຈຸດອ່ອນພື້ນຖານຂອງຈັກກະພັດອາເມລິກາອັນບັງຄັບໃຫ້ພວກເຂົາຕ້ອງຊອກຫາທາງອອກຢ່າງມີກຽດ.

ກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກເຮົາ ໄດ້ຕີລາຄາວ່າສັດຕູອ່ອນລົງແລ້ວ, ພວກເຮົາມີຄວາມອາດສາມາດປົດປ່ອຍປະເທດຊາດ ແລະ ຫຼັງຈາກປົດປ່ອຍແລ້ວກໍ່ພາປະເທດລາວເຮົາກ້າວຂຶ້ນສັງຄົມນິຍົມ ໂດຍບໍ່ຜ່ານການຂະຫຍາຍຕົວຂອງລະບອບທຶນນິຍົມ, ເພາະວ່າ ພວກສັກດີນາ ແລະ ນາຍທຶນແຫ່ງຊາດທີ່ຍັງອ່ອນນ້ອຍນັ້ນ ບໍ່ສາມາດກີດຂວາງທາງເດີນຂອງພວກເຮົາໄດ້. ກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກ ເຮົາໄດ້ຕົກລົງປ່ຽນຊື່ພັກມາເປັນ ພັກປະຊາຊົນປະຕິວັດລາວ ແລະ ໄດ້ວາງໜ້າທີ່ສອງປະການໃຫ້ພວກເຮົາຄື ເພີ່ມທະວີການເຄື່ອນໄຫວດ້ານທະຫານເພື່ອຕີດັບສູນກໍາລັງດີບຂອງສັດຕູໃຫ້ຫຼາຍ ແລະ ພ້ອມກັນນັ້ນກໍ່ບຸກສັດຕູທາງດ້ານການເມືອງ ຄືໃຊ້ທຸກວິທີສະເໜີໃຫ້ພວກເຂົາຍອມມານັ່ງໂຕະເຈລະຈາກັບພວກເຮົາ ເພື່ອແກ້ໄຂບັນຫາລາວດ້ວຍສັນຕິວິທີ.

ກອງປະຊຸມຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກເຮົາ ໃນຕົ້ນປີ 1972 ໄດ້ຢັ້ງຢືນວ່າ ການຕີລາຄາສັດຕູຢູ່ໃນກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກເຮົາ ເປັນອັນຖືກຕ້ອງ,ວ່າສັດຕູສືບຕໍ່ອ່ອນລົງ ແລະ ປະລາໄຊຢູ່ຫຼາຍບ່ອນຕິດຕໍ່ກັນມາ ທັງຢູ່ໃນຫວຽດນາມ ແລະ ໃນລາວ, ວ່າຖ້າພວກເຮົາຮູ້ສ້າງກາລະໂອກາດ ແລະ ຍາດເວລາກໍ່ມີຄວາມອາດສາມາດ ຈະເອົາຊະນະສັດຕູ ແລະ ພາປະເທດຊາດຂອງພວກເຮົາກ້າວຂຶ້ນສັງຄົມນິຍົມໄດ້. ມະຕິ 3 ທີ່ກອງປະຊຸມສູນກາງພັກເທື່ອນີ້ວາງອອກໄດ້ຊີ້ທິດທາງໃຫ້ພວກເຮົາປະຕິບັດຄື ສຸມກໍາລັງໃສ່ດັບ

ສູນກຳລັງດິບຂອງສັດຕູໃຫ້ໄດ້ຫຼາຍ ແລະ ພ້ອມກັນນັ້ນກໍ່ໃຫ້ໃຊ້ທຸກວິທີຕິດຕໍ່ກັບເຈົ້າ ສຸວັນນະພູມາທີ່ເປັນຫົວໜ້າລັດຖະບານຫຸ່ນວຽງຈັນ, ຊັກຊວນໃຫ້ເຂົາເປີດການເຈລະຈາກັບພວກເຮົາເພື່ອພ້ອມກັນແກ້ໄຂບັນຫາລາວດ້ວຍສັນຕິວິທີ.

ປະຕິບັດຕາມມະຕິ 3 ຂອງສູນກາງພັກເຮົາດັ່ງກ່າວນັ້ນ, ໃນທົ່ວປະເທດໄດ້ມີການຕີສັດຕູແຮງກວ່າເກົ່າ ແລະ ໄດ້ຮັບໄຊຊະນະໃຫຍ່ຫຼວງ ແລະ ງົດງາມຂັ້ນຈັກໄຊ, ຈົນສາມາດປົດປ່ອຍໄດ້ 4/5 ຂອງດິນແດນທົ່ວປະເທດລາວ. ພ້ອມກັນນັ້ນສະຫາຍສຸພານຸວົງ, ປະທານແນວລາວຮັກຊາດກໍ່ໄດ້ຕີສາຍ ແລະ ຂຽນຈົດໝາຍຫາເຈົ້າສຸວັນນະພູມາ ທີ່ເປັນອ້າຍຕ່າງແມ່ກັນ, ສະແດງຄວາມຄັດຄ້ານໃນການທີ່ເຂົາປ່ອຍໃຫ້ຈັກກະພັດອາເມລິກາເອົາເຮືອບິນມາຖິ້ມລະເບີດ ແລະ ຍິງຂ້າປະຊາຊົນລາວ ແລະ ທວງໃຫ້ເຂົາພ້ອມກັນກັບພວກເຮົາເປີດການເຈລະຈາ ເພື່ອຍຸດຕິສົງຄາມຢູ່ໃນລາວ. ເມື່ອມີໂອກາດອຳນວຍພວກເຮົາກໍ່ແຕ່ງສະຫາຍສຸກວົງສັກ ຖືຈົດໝາຍຂອງສະຫາຍສຸພານຸວົງ ໄປຫາເຈົ້າສຸວັນນະພູມາເພື່ອຊັກຊວນໃຫ້ເຂົາ ເປີດການເຈລະຈາກັບພວກເຮົາ.

ໃນເດືອນ 4 ປີ 1972, ເຈົ້າສຸວັນນະພູມາຕອບມາວ່າເຫັນດີເຈລະຈາ ແຕ່ໃຫ້ພວກເຮົາສົ່ງຄະນະຜູ້ແທນຂອງພວກເຮົາໄປປະຊຸມກັນທີ່ວຽງຈັນ. ພວກເຮົາສະເໜີໃຫ້ ຈັກກະພັດອາເມລິກາຢຸດເຊົາການຖິ້ມລະເບີດແລ້ວຈຶ່ງເປີດການເຈລະຈາ ແຕ່ເຈົ້າສຸວັນນະພູມາບໍ່ຍອມຮັບ. ພວກເຮົາສະເໜີໃຫ້ດຳເນີນການເຈລະຈາສັບປ່ຽນກັນຄື ເຈລະຈາກັນເທື່ອໜຶ່ງຢູ່ທົ່ງໄຫຫີນ ແລ້ວເທື່ອລຸນມາກໍ່ເຈລະຈາຢູ່ວຽງຈັນ, ປ່ຽນໄປປ່ຽນມາແນວນັ້ນຈົນເຊັນສັນຍາ ນຳກັນໄດ້, ແຕ່ເຈົ້າສຸວັນນະພູມາກໍ່ບໍ່ຍອມຮັບ. ທ້າຍສຸດມາພວກເຮົາກໍໄດ້ເຮັດການຜ່ອນຜັນ ແລະ ສົ່ງໄພສົ່ງຄະນະຜູ້ແທນແນວລາວຮັກຊາດ ເຊິ່ງແມ່ນສະຫາຍ ພູມ ສີປະເສີດ ເປັນຫົວໜ້າໄປວຽງຈັນເຮັດການເຈລະຈາກັບເພັງ ພົງສະຫວັນ ທີ່ເປັນຫົວໜ້າຄະນະຜູ້ແທນ ລັດຖະບານຂອງເຈົ້າສຸວັນນະພູມາ. ການເຈລະຈາຖືກແກ່ຍາວມາຫຼາຍເດືອນ, ຝ່າຍວຽງຈັນ ທວງໃຫ້ຝ່າຍແນວລາວຮັກຊາດ ຍອມເຂົ້າມອບຕົວຢ່າງບໍ່ມີເງື່ອນໄຂ ເພື່ອໃຫ້ຝ່າຍວຽງຈັນ ອະໄພໂທດໃຫ້. ຝ່າຍແນວລາວຮັກຊາດທວງໃຫ້ຝ່າຍວຽງຈັນແຍກຕົວອອກຈາກ ການເປັນລູກມືອາເມລິກາ ແລະ ມາພ້ອມກັນຕັ້ງລັດຖະບານປະສົມຮ່ວມກັນ ເພື່ອເຮັດການລວມລາວໂດຍສັນຕິວິທີ. ການຖົກຖຽງກັນກ່ຽວກັບສອງບັນຫານີ້ ບໍ່ມີບ່ອນຈະຫຍັບເຂົ້າໃກ້ກັນຈັກເທື່ອ, ຕ່າງຝ່າຍຕ່າງອ້າງເຫດຜົນມາຢືນຢັນຄວາມເວົ້າຂອງຕົນ. ເຫດຜົນຂອງຝ່າຍວຽງຈັນ ບໍ່ສາມາດຊວນເຊື່ອຝ່າຍແນວລາວຮັກຊາດ ໃຫ້ຍອມປະເອກະລາດແຫ່ງຊາດໄປຮ່ວມຝ່າຍວຽງຈັນ ເປັນເມືອງຂຶ້ນແບບໃໝ່ຂອງຈັກກະພັດອາເມລິກາ. ຝ່າຍວຽງຈັນກໍ່ບໍ່ຍອມຟັງຄຳເຫັນ ຂອງຝ່າຍແນວລາວຮັກຊາດ ທີ່ຊັກຊວນໃຫ້ຄົນລາວທັງສອງຝ່າຍລວມກັນ ປ້ອງກັນເອກະລາດແຫ່ງຊາດແລະ ຂັບໄລ່ພວກຈັກກະພັດອາເມລິກາ ແລະ ລູກມືອອກຈາກລາວ ເພື່ອໃຫ້ຄົນລາວເປັນ

ເຈົ້າຕົນເອງ. ການເຈລະຈາໄດ້ຖືກແກ່ຍາວ, ຈັກກະພັດອາເມລິກາ ແລະ ລູກມືສືບຕໍ່ຖິ້ມລະເບີດ ແລະ ຍິງທຳລາຍຊີວິດ ແລະ ຊັບສິນຂອງປະຊາຊົນລາວແຮງກວ່າເກົ່າຂຶ້ນຊັກໄຊ, ຫວັງຈະໃຊ້ກຳລັງອາວຸດບັງຄັບໃຫ້ຝ່າຍແນວລາວຮັກຊາດຍອມຈຳນົນ.

ເມື່ອສະພາບການເປັນແນວນັ້ນ ສູນກາງແນວລາວຮັກຊາດໄດ້ປະຊຸມກັນ ຕົກລົງແຕ່ງຕັ້ງເຮົາເປັນຕົວແທນທີ່ມີອຳນາດເຕັມຂອງປະທານແນວລາວຮັກຊາດ ໄປເຈລະຈາໂດຍກົງ ກັບເຈົ້າສຸວັນນະພູມາທີ່ເປັນຫົວໜ້າສູງສຸດຂອງຝ່າຍວຽງຈັນ. ເຮົາໄປຮອດວຽງຈັນ ໃນກາງເດືອນ 6 ປີ 1972. ຫຼັງຈາກພົບເຈົ້າສຸວັນນະພູມາ 3 ເທື່ອແລ້ວ ເຮົາໄດ້ລົ້ມປ່ວຍເຈັບກະເພາະອາຫານ ແລະ ໄສ້ແກ່. ທ່ານໝໍໂຊວຽດ ແລະ ຫວຽດນາມໄດ້ມາປົວເຮົາ ເດືອນໜຶ່ງຈຶ່ງດີພໍໄປສືບຕໍ່ການເຈລະຈາກັບເຈົ້າສຸວັນນະພູມາໄດ້. ບັດນັ້ນຈຶ່ງແມ່ນເວລາ ເຈລະຈາຕົວຈິງ ເພາະວ່າການຖົກຖຽງກັນໄດ້ເຮັດບົນພື້ນຖານຂອງຮ່າງສັນຍາ ທີ່ພວກເຮົາກຽມໄປແຕ່ວຽງໄຊ. ການຖົກຖຽງກິນເວລາຍືດຍາວສົມຄວນ. ບັນຫາເຊິ່ງຄຳເຫັນຂັດກັນມີຫຼາຍແຕ່ຕ້ອງຖົກຖຽງກັນຫຼາຍກວ່າໝູ່ ແມ່ນຂໍ້ຄວາມທີ່ວ່າ : "ລັດຖະບານສະຫະລັດອາເມລິກາ ແລະ ລັດຖະບານໄທຕ້ອງເຄົາລົບນັບຖື ແລະ ປະຕິບັດສັນຍາສະບັບນີ້".

ຫຼັງຈາກຖົກຖຽງກັນຢ່າງລຽນຕິດ ແລະ ຍືດຍາວແລ້ວ, ມາຮອດວັນທີ 20/2/73 ຈຶ່ງເຫັນດີນຳກັນກ່ຽວກັບທຸກບັນຫາ ; ທັງສອງຝ່າຍໄດ້ເຊັນຫຍໍ້ໃສ່ຮ່າງສັນຍາ ແລະ ຕົກລົງກັນວ່າຈະເຮັດພິທີລົງນາມກັນໃນມື້ຕໍ່ໄປໃນຕອນເຊົ້າ ; ວັນທີ 21 ກຸມພາ 1973, ຄະນະເຈລະຈາຂອງທັງສອງຝ່າຍພ້ອມດ້ວຍພວກນັກສື່ຂ່າວ ແລະ ນັກໜັງສືພິມທັງໝົດທີ່ມີຢູ່ວຽງຈັນ ໄດ້ໄປເຕົ້າໂຮມຢູ່ທີ່ເຮືອນເຈົ້າສຸວັນນະພູມາ. ເມື່ອແຕ່ລະຝ່າຍໄດ້ອ່ານເບິ່ງບົດສັນຍາທີ່ຕີຈັກມານັ້ນແລ້ວ ພິທີລົງນາມໄດ້ຈັດຂຶ້ນທີ່ໂຕະປະຊຸມລັດຖະບານຂອງເຈົ້າສຸວັນນະພູມາ. ຫຼັງຈາກລົງນາມຢ່າງຮຽບຮ້ອຍແລ້ວ ເຈົ້າສຸວັນນະພູມາ ແລະ ເຮົາເອງກໍ່ພັດປ່ຽນກັນ ໃຫ້ສຳພາດຕໍ່ນັກໜັງສືພິມ, ສະແດງຄວາມດີໃຈຂອງຕົນທີ່ເຫັນວ່າທັງສອງຝ່າຍຕົກລົງກັນໄດ້, ເຮັດໃຫ້ສົງຄາມອັນທຳລາຍລ້າງຜານຂອງຈັກກະພັດອາເມລິກາ ແລະ ລູກມືທີ່ແກ່ຍາວມາເປັນເວລາຫຼາຍສິບປີ ໄດ້ຢຸດຕິລົງ. ການຕີກັນບົນໜ້າດິນ ແລະ ການຖິ້ມລະເບີດຂອງພວກຈັກກະພັດອາເມລິກາຈະຢຸດເຊົາໃນສານວັນຕໍ່ມາ.

ຂ່າວການເຊັນສັນຍາຟື້ນຟູສັນຕິພາບ ແລະ ສ້າງຄວາມຖືກຕ້ອງປອງດອງຊາດທີ່ກະຈາຍອອກໄປທາງວິທະຍຸກະຈາຍສຽງຂອງຝ່າຍວຽງຈັນ ແລະ ຝ່າຍແນວລາວຮັກຊາດ ໄດ້ເຮັດໃຫ້ປະຊາຊົນລາວໝົດທັງຊາດ ແລະ ປະຊາຊົນຜູ້ຮັກຫອມສັນຕິພາບໃນທົ່ວໂລກ ພ້ອມກັນຊົມຊື່ນຍິນດີເໝືອນດັ່ງຕົ້ນເຂົ້າໃນນາທີ່ແຫ້ງແລ້ງມາເຖິງນານ ໄດ້ຕ້ອນຮັບນ້ຳຝົນຫ່າທຳອິດ ທີ່ມາເຮັດໃຫ້ທົ່ວແຄວ້ນແດນລາວມີຄວາມຊຸ່ມເຢັນ ແລະ ເຮັດໃຫ້ປະຊາຊົນທີ່ຖືກຈັກກະພັດອາເມລິກາ ແລະ ລູກມືບັງຄັບໃຫ້ອົບພະຍົບທີ່ມາຢູ່ໃນເຂດຄຸມຂັງຂອງພວກເຂົານັ້ນ ມ່ວນຊື່ນເບີກ

ພິທີເຊັນສັນຍາວຽງຈັນໃນວັນທີ 21 ກຸມພາ 1973 .

ກັບຄືນມາວຽງໄຊ ແລະ ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກປະທານສຸພານຸວົງ
ຫຼັງຈາກເຊັນສັນຍາວຽງຈັນ ໃນວັນທີ 21 ກຸມພາ 1973 ແລ້ວ.

ບ້ານຍອມມີຄວາມຫວັງວ່າຈະໄດ້ກັບຄືນໄປຢູ່ບ້ານເດີມຂອງຕົນ.

ແຕ່ວ່າການເຊັນສັນຍາວຽງຈັນດັ່ງກ່າວນັ້ນ ຍັງບໍ່ທັນເປັນການແລ້ວຢ່າງສົມບູນເທື່ອ; ທັງສອງຝ່າຍຍັງຕ້ອງສືບຕໍ່ເຈລະຈາກັນເພື່ອເຊັນອານຸສັນຍາ ໃຫ້ກ້າວໄປເຖິງບ່ອນຈັດຕັ້ງລັດຖະບານປະສົມຮ່ວມກັນອັນເປັນການເລີ່ມຕົ້ນສ້າງຄວາມປອງດອງຊາດ. ແຕ່ວ່າພວກພູຍ ຊະນະນິກອນ ແລະ ລູກສະໝຸນອື່ນໆຂອງຈັກກະພັດອາເມລິກາຊ້ຳພັດບໍ່ດີໃຈ, ຖືວ່າສັນຍາທີ່ເຊັນກັນໃນວັນທີ 21/2/73 ນັ້ນເປັນຜົນປະໂຫຍດໃຫ້ແຕ່ຝ່າຍແນວລາວຮັກຊາດ ແລະ ເປັນການເສຍຫາຍໃຫ້ແກ່ຝ່າຍວຽງຈັນ ແລ້ວພວກເຂົາກໍ່ເປັນເດືອດເປັນແຄ້ນພາກັນຂຶ້ນປັ້ນ, ຂຶ້ນໜັງສືພິມ ແລະ ຮ້ອງໂຮໂອທະການອື້ນ ຈົນວ່າວັນທີ 20/8/73 ພວກເຂົາໄດ້ພ້ອມກັບ ພູມີ ໜໍ່ສະຫວັນ ແລະ ພວກປະຕິການໄທເອົາກອງທະຫານຂອງພວກເຂົາມາເຮັດລັດຖະປະຫານ, ຢຶດເອົາສະໜາມບິນ, ຢຶດເອົາທະນາຄານ ແລະ ຢຶດເອົາສະຖານີວິທະຍຸກະຈາຍສຽງ ແຫ່ງຊາດ ແລ້ວກໍ່ຂຶ້ນສຽງດ່າເຈົ້າສຸວັນນະພູມາ, ດ່າແນວລາວຮັກຊາດ ຕັ້ງແຕ່ 6 ໂມງເຊົ້າເປັນຕົ້ນມາ, ຫວັງຈະໂຄ່ນລົ້ມລັດຖະບານເຈົ້າສຸວັນນະພູມາລົງ ເພື່ອຈະລົບລ້າງສັນຍາວຽງຈັນ ແລະ ລົບລ້າງການລວມລາວ.

ສຽງວິທະຍຸປະຕິການນັ້ນ ເຮັດໃຫ້ບ້ານເມືອງຈົມຢູ່ໃນຄວາມງຽບເຫງົາ ປະຊາຊົນຢ້ານກົວບໍ່ກ້າອອກເຮືອນມາເດີນຕາມຖະໜົນ, ຕະຫຼາດກໍ່ມິດງຽບບໍ່ມີຄົນມາ, ນະຄອນຫຼວງວຽງຈັນກາຍເປັນບ່ອນກຽມສະໜາມຮົບ ເຊິ່ງບໍ່ມີຜູ້ໃດປາຖະໜາຢາກພົບເຫັນ. ພະສົງເກືອບທຸກວັດມີແຕ່ສູດມົນເພື່ອວິງວອນໃຫ້ມີສັນຕິພາບ, ໃຫ້ທຳມະຊະນະອະທຳ.

ໃນເວລານັ້ນ, ເຮົາໄດ້ເຊີນເອົາທູດອັງກິດ, ທູດໂຊວຽດ, ທູດຝະລັ່ງ, ທູດອາເມລິກາ ແລະ ຄະນະກຳມະການສາກົນມາທີ່ເຮືອນເຮົາຢູ່ຂ້າງຕະຫຼາດເຊົ້າ, ອະທິບາຍເຈຕະນາດີຂອງແນວລາວຮັກຊາດທີ່ຢາກເຮັດການລວມລາວ ເພື່ອນຳເອົາສັນຕິພາບມາໃຫ້ແກ່ບ້ານເມືອງລາວ ແລະ ອະທິບາຍຜົນຮ້າຍຂອງລັດຖະປະຫານທີ່ອາເມລິກາໜູນຫຼັງ ເພື່ອດຳເນີນສົງຄາມຮຸກຮານລາວ, ມ້າງເພບ້ານເມືອງລາວ, ທຳລາຍຊີວິດ ແລະ ຊັບສິນຂອງປະຊາຊົນລາວຕໍ່ໄປອີກ. ດ້ວຍຄວາມຊີ້ແຈງອະທິບາຍນັ້ນ ເຮົາສາມາດຍາດແຍ່ງເອົາຄວາມເຫັນດີເຫັນພ້ອມຂອງຄະນະກຳມະການສາກົນ ພ້ອມກັບທູດໂຊວຽດ, ທູດອັງກິດ ແລະ ທູດຝະລັ່ງ ເປັນກຳລັງບີບບັງຄັບໃຫ້ອຸປະທູດອາເມລິກາຜູ້ຊື່ວ່າ ໂຢນດິນ (ເພາະວ່າໂຕທູດບໍ່ຢູ່) ໃຫ້ໄປດັບມອດລັດຖະປະຫານ ເພື່ອຮັກສາຄວາມສະຫງົບໃຫ້ແກ່ນະຄອນຫຼວງວຽງຈັນ ແລະ ສືບຕໍ່ປະຕິບັດສັນຍາວຽງຈັນ ເຮັດໃຫ້ທົ່ວປະເທດລາວມີຄວາມຖືກຕ້ອງປອງດອງຊາດ ແລະ ມີສັນຕິພາບ. ຫຼັງຈາກຖົກຖຽງກັນຍືດຍາວສົມຄວນແລ້ວ, ອຸປະທູດອາເມລິກາຜູ້ນັ້ນກໍ່ຈຳຕ້ອງຍອມປະຕິບັດຕາມກຳລັງໜີບຂອງສຽງສ່ວນຫຼາຍ ແລະ ອອກໄປບອກໃຫ້ທ້າວມາ, ບຸນເລີດ ໄຊໂກສີ ແລະ ທ້າວປານີ ທີ່ມາຢຶດຄອງສະຖານທີ່ຕ່າງໆໃຫ້ເລີກເຊົາການເຮັດລັດຖະປະຫານ.

ແຕ່ວ່າທ້າວມາໄດ້ຂັບເຮືອບິນໄປຖິ້ມລະເບີດໃສ່ກອງບັນຊາການຂອງ ກຸປະສິດ ທີ່ຈື່ນາຍໂນ້ ກ່ອນແລ້ວ.

ເວລາ 10 ໂມງເຊົ້າ, ກຸປະສິດ ໄດ້ແລ່ນມາຫາເຮົາແລ້ວເວົ້າວ່າ ກອງບັນຊາການ ບ່ອນເຂົາເຮັດວຽກນັ້ນຖືກພວກທີ່ເຮັດລັດຖະປະຫານຖິ້ມລະເບີດມ້າງເພຫຼາຍ ເຮັດໃຫ້ເຂົາ ຄຽດແຄ້ນທີ່ສຸດ, ເຂົາສະເໜີຮ່ວມມືກັບແນວລາວຮັກຊາດເພື່ອປາບພວກມັນ. ເຮົາຕອບວ່າ ເຮົາເຫັນດີຮ່ວມກັບກຸປະສິດ ຕີຕ້ານພວກທີ່ເຮັດລັດຖະປະຫານ, ສະເໜີໃຫ້ເຂົາສົ່ງທະຫານ-ໄປຍຶດເອົາສະໜາມບິນ, ທະນາຄານ ແລະ ສະຖານີວິທະຍຸກະຈາຍສຽງໃຫ້ໄດ້ ; ເຮົາໄດ້ ບອກອຸປະທູດອາເມລິກາໄປຫ້າມພວກທີ່ເຮັດລັດຖະປະຫານ ໃຫ້ຢຸດເຊົາການກະທຳ ອັນໂຫດ ຫ້ຽມຂອງພວກມັນແລ້ວ, ຖ້າພວກມັນຫາກບໍ່ຟັງ ແລະ ດື້ເຮັດຕາມແຜນການອັນຊົ່ວຊ້າ ຂອງ ພວກມັນນັ້ນ ເຮົາຈະເຕົ້າໂຮມກຳລັງທີ່ພວກເຮົາມີຢູ່ໃນບໍລິເວນອ້ອມຕົວເມືອງວຽງຈັນ ຕີ ມ້າງລັດຖະປະຫານໂດຍບໍ່ຍອມໃຫ້ພວກບ້າສົງຄາມ ເຮັດໄປຕາມໃຈຊອບຂອງພວມັນໄດ້ຢ່າງ ເດັດຂາດ.

ອຸປະທູດອາເມລິກາໄດ້ເອົາເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີ ລັດຖະບານຝ່າຍວຽງ ຈັນໄປຮັກສາໄວ້ທີ່ສະຖານທູດອາເມລິກາແຕ່ເຊົ້າຂອງມື້ນັ້ນ. ຕາມຄຳສະເໜີຂອງເຮົາ, ທູດ ຝະລັ່ງໄປຊອກເຫັນ ແລະ ໄດ້ເອົາທູດທະຫານພ້ອມທັງນາຍພົນທະຫານຝະລັ່ງ ໄປຮັກສາ ຄວາມປອດໄພໃຫ້ ແລະ ຈັດເອົາສຽງເວົ້າຂອງເພິ່ນໄປອອກອາກາດ ຢູ່ໃນສະຖານີວິທະຍຸ ກະຈາຍສຽງບ່ອນອື່ນ ເພື່ອຕ້ານຄວາມກ່າວຮ້າຍປ້າຍສີຂອງສັດຕູ, ຮຽກຮ້ອງໃຫ້ທົ່ວກອງທະ ຫານ ແລະ ທົ່ວປວງຊົນເຊື່ອໝັ້ນ ແລະ ເຊື່ອຟັງແຕ່ຄຳສັ່ງຂອງເພິ່ນແຕ່ຝ່າຍດຽວ.

ພວກເຮົາພ້ອມກັບອ້າຍນ້ອງທະຫານ ທີ່ສົມທົບກັບຊາວໜຸ່ມກຳມະກອນ ແລະ ນັກສຶກສາ ພ້ອມກັນກຽມຕົວທຸກດ້ານເພື່ອຈະປະເຊີນໜ້າກັບທຸກເຫດການອັນຮ້າຍແຮງ ທີ່ອາດຈະເກີດຂຶ້ນ. ການຕິດຕໍ່ລະຫວ່າງພວກເຮົາກັບບັນດາອົງການຊາວໜຸ່ມທີ່ກ້າວໜ້າ ແລະ ກັບສະຖານທູດ ທີ່ ພວກເຮົາໄດ້ພົວພັນມາມື້ເຊົ້ານັ້ນ ດຳເນີນໄປຢ່າງໃກ້ຊິດທີ່ສຸດ. ພົດທຸກຄົນພ້ອມກັນເຊື່ອໝັ້ນ-ວ່າ ທຳມະຕອງຊະນະອະທຳ ແລະ ພ້ອມກັນເຮັດທຸກສິ່ງທຸກຢ່າງທີ່ຈຳເປັນ ເພື່ອຈະເຮັດໃຫ້ ພວກທີ່ເຮັດລັດຖະປະຫານ ປະສົບຄວາມປະລາໄຊ.

ເວລາ 12 ໂມງ ຕໍ່ມາ ທ້າວໂຢນດີນໄດ້ກັບຄືນມາແຈ້ງໃຫ້ເຮົາຮູ້ວ່າ ເຂົາໄດ້ພົບປາມີ ແລະ ບຸນເລີດ ແລະ ໄດ້ບອກພວກມັນເລີກເຊົາລັດຖະປະຫານແລ້ວ, ພວກມັນກໍ່ຮັບວ່າຈະ ເຊົາ ແລະ ສຽງປືນທີ່ຍິງກັນຢູ່ລະຫວ່າງສະໜາມບິນ ມາຫາຕົວເມືອງກໍ່ມິດລົງຫຼາຍແລ້ວ, ມີ ແຕ່ຍິງກັນຢ່າງປະປາຍຢູ່ບາງບ່ອນເທົ່ານັ້ນ. ເຮົາຍັງບໍ່ໄວ້ໃຈຈຶ່ງບອກໃຫ້ເຂົາກັບຄືນ ໄປສັ່ງ ໃຫ້ສຽງປືນເຊົາຢ່າງແທ້ຈິງໃນທົ່ວທຸກບ່ອນ ແລ້ວໃຫ້ເຂົາມາເວົ້າໃຫ້ເຮົາຟັງຢ່າງຄັກໃຈ. ຫຼັງ ຈາກສູ່ຖຽງກັນພ້ອຍໜຶ່ງແລ້ວ ເຂົາກໍ່ກັບຄືນໄປອີກ, ຈົນຮອດບ່າຍສອງໂມງເຂົາຈຶ່ງຄືນມາຮັບ

ຮອງຕໍ່ເຮົາວ່າ ລັດຖະປະຫານສົ້ນສຸດລົງແລ້ວ, ເຂົາເອງໄດ້ຂຶ້ນໄປທີ່ບັນຊາເຮືອບິນ ຂຶ້ນລົງ ແລະ ໄດ້ສັ່ງໃຫ້ກອງທະຫານກຸປະສິດຍິງເຮືອບິນຕົກລົງລຳໜຶ່ງ ຄືຈະແມ່ນຂອງທ້າວມາ, ສ່ວນລຳໜຶ່ງທີ່ຄືຈະແມ່ນບຸນເລີດຂັບ ໄດ້ບິນໜີໄປປະເທດໄທແລ້ວບໍ່ກັບຄືນມາອີກ. ເຮົາໄດ້ຊົມເຊີຍໂຢນດິນທີ່ປະຕິບັດໜ້າທີ່ໄດ້ດີ. ເມື່ອໂຢນດິນວ່າຈະໄປລາຍງານຕໍ່ບຸນປອນ ທີ່ເປັນຜູ້ບັນຊາການສູງສຸດຂອງຝ່າຍວຽງຈັນ ເຮົາໄດ້ຂຽນໂທລະເລກໃນນາມເຈົ້າສຸວັນນາບອກຂ່າວຄວາມປະລາໄຊຂອງພວກທີ່ເຮັດລັດຖະປະຫານ, ບອກວ່າລັດຖະບານເຈົ້າສຸວັນນະພູມາ ກຳສະພາບການທັງໝົດໄວ້ໃນກຳມື, ພວກກໍ່ການຮ້າຍຈຳນວນໜຶ່ງຖືກຈັບ, ໃຫ້ກອງບັນຊາການທະຫານຝ່າຍວຽງຈັນທຸກແຂວງ ສົມທົບກັບອຳນາດການປົກຄອງອົບຮົມປະຊາຊົນໃຫ້ທຸ່ນທ່ຽງ , ເຊື່ອໝັ້ນ ແລະ ຄອຍຖ້າຟັງຄຳສັ່ງເຈົ້າສຸວັນນະພູມາແຕ່ຝ່າຍດຽວ ແລະ ພ້ອມກັນປາບພວກກໍ່ການຮ້າຍຢ່າງເດັດຂາດ. ຫຼັງຈາກຂຽນແລ້ວເຮົາໄດ້ມອບໃຫ້ໂຢນດິນຖືໄປໃຫ້ນາຍພົນ ບຸນປອນ ຜູ້ບັນຊາການສູງສຸດຂອງກອງທະຫານຝ່າຍວຽງຈັນ ຕີໄປໃຫ້ທຸກແຂວງແລະເມື່ອຕີແລ້ວເວລາໃດໃຫ້ເອົາສົ່ງຄືນມາໃຫ້ເຮົາ ເພື່ອຈະເອົາໃຫ້ເຈົ້າສຸວັນນະພູມາເບິ່ງ. ບ່າຍ 3 ໂມງ ໂຢນດິນ ຄືນມາຫາເຮົາອີກ, ເອົາໂທລະເລກນັ້ນມາສົ່ງຄືນໃຫ້ເຮົາ ມີລາຍເຊັນຂອງນາຍພົນບຸນປອນ ຮັບຮອງວ່າໄດ້ຕີໄປແລ້ວແຕ່ເວລາ 2 ໂມງ 45 ນາທີ. ເຮົາຂອບໃຈນຳໂຢນດິນ ແລະ ບອກໃຫ້ເອົາສົ່ງເຈົ້າສຸວັນນະພູມາຄືນມາເຮືອນຂອງລາວ, ໂຢນດິນຮັບວ່າຈະເຮັດຕາມແລ້ວກໍ່ລາໜີໄປ, ເປັນອັນວ່າການເຮັດລັດຖະປະຫານຂອງທ້າວມາ ແລະ ປານີປະລາໄຊຢ່າງສົ້ນເຊີງ, ທ້າວມາຖືກກຸປະສິດຈັບໄດ້ຄາເຮືອບິນທີ່ຕົກ ແລະ ປານີຖືກຈັບທີ່ສະຖານີວິທະຍຸກະຈາຍສຽງ, ເອົາໄປທຸບຕີຢູ່ຄ້າຍຈີນາຍໂມ້ຈົນຕາຍ. ພວກເຮົາບໍ່ລືມວ່າ ໄຊຊະນະເທື່ອນີ້ແມ່ນໄດ້ມາຍ້ອນການຊີ້ນຳຂອງສູນກາງພັກ ທີ່ໃກ້ຊິດຕິດແທດກັບພວກເຮົາສະເໝີ, ຍ້ອນພາຍໃນຄະນະພວກເຮົາສາມັກຄີກັນແໜ້ນ ແລະ ສາມາດດູດດຶງເອົາຊາວໜຸ່ມກຳມະກອນ ແລະ ນັກສຶກສາທົ່ວເມືອງວຽງຈັນມາເພີ່ມກຳລັງໃຫ້ພວກເຮົາ, ຍ້ອນສະຫາຍວາລັງແຕງໂດວິນ ເອກອັກຄະລັດຖະທູດໂຊວຽດປະຈຳລາວ, ຍ້ອນຄະນະຜູ້ແທນໂປໂລຍ ໃນຄະນະກຳມະການສາກົນ ພ້ອມທັງປະທານທີ່ແມ່ນຄົນອິນເດຍ ໄດ້ຕັ້ງໜ້າຊ່ວຍເຫຼືອຮ່ວມມືນຳພວກເຮົາໂດຍໄດ້ສົ່ງພະນັກງານຂອງພວກເພິ່ນຕິດຕາມໄປຊຸກຍູ້ທ້າວໂຢນດິນ ແລະ ກຸປະສິດ ໃຫ້ປະຕິບັດໜ້າທີ່ຕາມທີ່ໄດ້ຕົກລົງກັນ.

ເວລາບ່າຍ 4 ໂມງແລງໃນມື້ນັ້ນ ເຈົ້າສຸວັນນະພູມາໄດ້ແຕ່ງທ້າວຄຳສິງ ເລຂານຸການປະຈຳເພິ່ນມາເຮືອນເຮົາ, ບອກໃຫ້ເຮົາຮູ້ວ່າເພິ່ນໄດ້ໜີຈາກສະຖານທູດອາເມລິການາຮອດເຮືອນເພິ່ນແລ້ວ, ເພິ່ນຂໍຂອບໃຈເຮົາທີ່ໄດ້ເປັນຫ່ວງເປັນໃຍ ນຳຄວາມປອດໄພຂອງເພິ່ນ ແລະ ຂໍເຊີນເຮົາໄປຫາເພິ່ນ ; ແຕ່ເຮົາໄດ້ຕອບວ່າມື້ນັ້ນໄປບໍ່ໄດ້ເທື່ອ ເພາະຍັງບໍ່ຮັບປະກັນຄວາມປອດໄພ ມື້ອື່ນເຮົາຈຶ່ງຈະໄປຫາເພິ່ນ.

ວັນທີ 21 ສິງຫາ 1973 ເຮົາໄດ້ໄປຫາເຈົ້າສຸວັນນະພູມາ, ໄດ້ຢືນຢັນວ່າຂ່າວທີ່ເຮົາໄດ້ເລົ່າໃຫ້ເພິ່ນຟັງຕັ້ງແຕ່ອາທິດກ່ອນນັ້ນແມ່ນຖືກຕ້ອງ. ເຈົ້າສຸວັນນະພູມາເຫັນພ້ອມນຳເຮົາ ສະແດງຄວາມເຊື່ອໝັ້ນຕໍ່ເຮົາເພີ່ມຂຶ້ນອີກ. ຫຼັງຈາກນັ້ນ ການເຈລະຈາກ່ຽວກັບພິທີສານ (ຫຼືອະນຸສັນຍາ) ກໍໄດ້ສືບຕໍ່ດຳເນີນໄປ, ແມ່ນວ່າຝ່າຍປະຕິການວຽງຈັນຈະຄັດຄ້ານ ຕໍ່ທີແນວໃດກໍຕາມ. ຮອດວັນທີ 14/ 9/73 ທັງສອງຝ່າຍໄດ້ເຊັນພິທີສານນີ້, ຕົກລົງຕັ້ງລັດຖະບານປະສົມສອງຝ່າຍຂຶ້ນ ໂດຍແມ່ນເຈົ້າສຸວັນນະພູມາເປັນນາຍົກລັດຖະມົນຕີ ແລະ ຕັ້ງຄະນະມົນຕີປະສົມການເມືອງ ໂດຍແມ່ນສະຫາຍສຸພານຸວົງເປັນປະທານ ແລະ ມີຄົນຂອງທັງສອງຝ່າຍ-ເຂົ້າຮ່ວມເປັນຈຳນວນເທົ່າກັນ, ເຮັດໃຫ້ 2 ຕົວເມືອງວຽງຈັນ ແລະ ຫຼວງພະບາງເປັນກາງ, ມີກອງທະຫານ ແລະ ຕຳຫຼວດເປັນຈຳນວນເທົ່າກັນຕັ້ງຢູ່ ເພື່ອຮັກສາຄວາມປອດໄພ. ຜ່ານເຫດການອັນຮ້າຍແຮງ ແລະ ເກືອບວ່າຈະຫາທາງອອກບໍ່ໄດ້ເທື່ອນີ້ ມັນເຮັດໃຫ້ເຮົາເຫັນແຈ້ງຕື່ມອີກວ່າ ແນວທາງຂອງພັກເຮົາເປັນອັນຖືກຕ້ອງ ແລະສະຫຼາດສະຫຼຽວທີ່ສຸດ; ປະຊາຊົນທົ່ວປະເທດພ້ອມທັງຕົວເຮົາເອງກໍຊົມຊື່ນເບີກບານຫຼາຍທີ່ສຸດ ທີ່ເຫັນວ່າ ທຳມະໄດ້ເອົາຊະນະອະທຳຢ່າງຮາບຄາບແລ້ວ ແລະ ຍິ່ງເພີ່ມທະວີຄວາມເຊື່ອໝັ້ນຕໍ່ການນຳ ອັນນິພົບໄຫວທັນການຂອງສູນກາງພັກເຮົາ.

ຄະນະລັດຖະບານປະສົມສອງຝ່າຍທີ່ສ້າງຕັ້ງຂຶ້ນໃນປີ 1973 ຕາມອະນຸສັນຍາ (ພິທີສານ) ວຽງຈັນທີ່ໄດ້ເຊັນກັນໃນວັນທີ 14 ກັນຍາ 1973.

ຄະນະມົນຕີປະສົມການເມືອງ ໄດ້ປະຊຸມຜ່ານເອກະສານສຳຄັນສອງສະບັບຄື ໂຄງການ 18 ຂໍ້ ເພື່ອໃຫ້ລັດຖະບານປະສົມປະຕິບັດ ແລະ ຂໍ້ກຳນົດຮັບປະກັນສິດເສລີພາບປະຊາທິປະໄຕໃຫ້ແກ່ປະຊາຊົນ. ຫຼັງຈາກນັ້ນ ສະມາຊິກຄະນະມົນຕີປະສົມການເມືອງ ກໍໄດ້ແບ່ງກັນລົງໄປເຜີຍແຜ່ ແລະ ອະທິບາຍຊີ້ແຈງສອງເອກະສານນີ້ ໃຫ້ແກ່ພະນັກງານສຳນັກງານອົງການຕ່າງໆ ຂອງລັດຖະບານ ໂຮງໝໍ, ໂຮງຮຽນ, ໂຮງຈັກ, ໂຮງງານ, ແຂວງ, ເມືອງ, ຕາແສງ ແລະ ປະຊາຊົນບ້ານຕ່າງໆໃນທົ່ວປະເທດ.

ການເຜີຍແຜ່ສອງເອກະສານນັ້ນໃຫ້ແກ່ປະຊາຊົນຟັງ ໄດ້ເຮັດໃຫ້ປະຊາຊົນທຸກເຜົ່າ ຕື່ນຕົວທາງດ້ານການເມືອງ, ຮູ້ວ່າ ຜູ້ໃດກ້າວໜ້າ ແລະ ຜູ້ໃດປະຕິການ, ຜູ້ໃດເປັນມິດ ແລະ ຜູ້ໃດເປັນສັດຕູ. ຂະບວນປະຊາຊົນລຸກຮື້ນປະທ້ວງໄດ້ເກີດຂຶ້ນໃນທົ່ວປະເທດ. ພວກນາຍບ້ານ, ຕາແສງ, ເຈົ້າເມືອງ ແລະ ເຈົ້າແຂວງໄດ້ຖືກປະຊາຊົນໂຄ່ນລົ້ມລົງ ແລ້ວແຕ່ງຕັ້ງພວກຄົນທີ່ກ້າວໜ້າ, ຮັກຊາດ, ຮັກປະຊາຊົນຂຶ້ນແທນ. ບັນຍາກາດທົ່ວປະເທດໃນເວລານັ້ນເຄັ່ງຕຶງຫຼາຍທີ່ສຸດ. ພວກປະຕິການໃຊ້ທຸກຄວາມສາມາດຂອງພວກເຂົາ ເພື່ອເກາະຫ້ອຍຢູ່ໃນຖານະເກົ່າຂອງພວກເຂົາ. ການຕໍ່ສູ້ທາງຊົນຊັ້ນທີ່ເດັ່ນກວ່າໝູ່ແມ່ນຢູ່ເມືອງໜອງບົກ , ແຂວງຄຳມ່ວນ ບ່ອນທີ່ພວກປະຕິການໃຊ້ກຳລັງອາວຸດຂ້າປະຊາຊົນຜູ້ລຸກຮື້ນປະທ້ວງ. ການວັນສົບຜູ້ຕາຍນັ້ນ ໄດ້ກາຍເປັນກະແສຟອງແຫ່ງຄວາມຄຽດແຄ້ນສັດຕູອັນນັບມື້ນັບກວ້າງຂວາງໄປສົມທົບກັບຂະບວນການລຸກຮື້ນຂອງປະຊາຊົນທົ່ວປະເທດ ທີ່ນັບມື້ນັບຟົດຟື້ນຂຶ້ນຊຶກໄຊ້ . ພວກເຈົ້າແຂວງ ແລະ ເຈົ້າເມືອງປະຕິການທີ່ຢ້ານກົວຕໍ່ໜ້າຂະບວນການລຸກຮື້ນ ຂອງປະຊາຊົນໄດ້ເອົາຕົວລອດໜີມາເພິ່ງກະຊວງພາຍໃນຢູ່ທີ່ວຽງຈັນ.

ກອງທະຫານຝ່າຍວຽງຈັນຫຼາຍກອງ ປະກາດບໍ່ຍອມຂຶ້ນກັບກອງບັນຊາການ ຂອງເຂົາ ແລ້ວຕ່າວມາຮ່ວມມືກັບກອງທະຫານຂອງແນວລາວຮັກຊາດ, ເຊີນເອົາກອງທະຫານ ຂອງຝ່າຍແນວລາວຮັກຊາດເຂົ້າມາຮ່ວມກັນຢູ່ຕົວເມືອງວຽງຈັນ ແລະ ຕົວເມືອງໃຫຍ່ ຫຼາຍບ່ອນ ຕາມແຄມນ້ຳຂອງຫຼາຍຂຶ້ນຊຶກໄຊ້. ລັດຖະມົນຕີປ້ອງກັນປະເທດ ພ້ອມທັງລັດຖະມົນຕີອື່ນໆ ແລະ ນາຍທະຫານປະຕິການຊັ້ນສູງຫຼາຍຄົນໄດ້ພາກັນໂຕນໜີໄປປະເທດໄທ, ປະກອງທະຫານຂອງເຂົາໄວ້ຢ່າງບໍ່ມີຜູ້ບັນຊາ ໃນກາງຄືນວັນທີ 10/5/75. ນາຍພົມ ຄຳອ້ວນ ບຸບຜາທີ່ເປັນຄົນຂອງຝ່າຍບັນດາກຳລັງຮັກຊາດ ແລະ ເປັນຮອງລັດຖະມົນຕີກະຊວງປ້ອງກັນປະເທດ ໄດ້ຮັບຄຳສັ່ງເປັນລາຍລັກອັກສອນຈາກເຈົ້າສຸວັນນະພູມາ, ນາຍົກລັດຖະມົນຕີ, ໃຫ້ເປັນຜູ້ບັນຊາການທະຫານສູງສຸດຂອງກຳລັງປະກອບອາວຸດຝ່າຍວຽງຈັນ. ນາຍພົມຄຳອ້ວນ ໄດ້ອອກຄຳສັ່ງໃຫ້ນາຍ ແລະ ພົນທະຫານຝ່າຍວຽງຈັນ ເອົາອາວຸດເຂົ້າມ້ຽນໃນສາງ ແລ້ວໄປຮຽນການເມືອງເພື່ອກຽມຮ່ວມມືກັບກຳລັງປະກອບອາວຸດຂອງແນວລາວຮັກຊາດ ທີ່ເຂົ້າມາຮັກສາລະບຽບຮຽບຮ້ອຍໃນນະຄອນຫຼວງວຽງຈັນ ແລະ ຕົວເມືອງໃຫຍ່ຕ່າງໆ, ນາຍທະ

ຕາມຊັ້ນສູງໄດ້ຂຶ້ນໄປຮຽນການເມືອງຢູ່ທີ່ເມືອງວຽງໄຊແຂວງຫົວພັນ. ວິທີການດັ່ງກ່າວນັ້ນໄດ້ກະທຳໄປຢ່າງວ່ອງໄວ, ສະຫຼາດສະຫຼຽວ, ມີດາງຮບ ແລະ ພໍອົກພໍໃຈຂອງປະຊາຊົນທັງມວນ.

ວັນທີ 23/8/75 ຫຼັງຈາກປະຊາຊົນແຂວງອື່ນໃນທົ່ວປະເທດໄດ້ລຸກຂຶ້ນຍຶດອຳນາດແລ້ວ ປະຊາຊົນວຽງຈັນໄດ້ລຸກຮື້ຂຶ້ນໂຄ່ນລົ້ມເຈົ້າຄອງກຳແພງນະຄອນວຽງຈັນລົງເປັນເທື່ອມວນທ້າຍ ແລະ ໄດ້ຈັດຕັ້ງການລວມຊຸມນຸມປະຊາຊົນຄັ້ງໃຫຍ່ຂຶ້ນ ເພື່ອສະຫຼອງໄຊຊະນະອັນນັ້ນ. ຮອດທ້າຍເດືອນ 11 ປີ 1975, ທຸກໆແຂວງໄດ້ສົ່ງຜູ້ແທນປະຊາຊົນເຂົ້າມາເປີດກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດຂຶ້ນທີ່ວຽງຈັນ. ກອງປະຊຸມໃຫຍ່ນີ້ໄດ້ທວງໃຫ້ລັດຖະບານ ປະສົມ ແລະ ຄະນະມົນຕີປະສົມການເມືອງລາອອກແລ້ວຍຸບຕົວ ແລະ ແຕ່ງຕັ້ງໃຫ້ສະຫາຍ ສຸພານຸວົງ ແລະເຮົາເອງຂຶ້ນໄປເມືອງຫຼວງພະບາງ ເພື່ອຂໍໃຫ້ເຈົ້າຊີວິດສີສະຫວ່າງວັດທະນາ ລາການດ້ວຍການເຊັນຊື່ໃສ່ໃບປະກາດສະຫຼະລາຊະບັນລັງລົງມາເປັນປະຊາຊົນສາມັນ. ເຈົ້າສຸວັນນະພູມາທີ່ເປັນນາຍົກລັດຖະມົນຕີລັດຖະບານປະສົມ ແລະ ສະຫາຍສຸພານຸວົງ ທີ່ເປັນປະທານ ຄະນະມົນຕີປະສົມການເມືອງ ໄດ້ຍິນດີລາອອກການ ແລະ ຕໍ່ໜ້າການລວມຊຸມນຸມຮຽກຮ້ອງ ເລັ່ງທວງຂອງປະຊາຊົນນະຄອນຫຼວງພະບາງ, ເຈົ້າຊີວິດສີສະຫວ່າງວັດທະນາກໍ່ໄດ້ລົງ ລາຍເຊັນໃສ່ໃບລາອອກການ ແລະ ສະຫຼະລາຊະບັນລັງ ແລ້ວແຕ່ງຕັ້ງເຈົ້າວົງສະຫວ່າງລູກຊາຍກົກ - ຂອງເຂົາທີ່ຖືກແຕ່ງຕັ້ງເປັນອົງມົງກຸດລາຊະກຸມມານເມື່ອກ່ອນນັ້ນ ລົງມາວຽງຈັນເພື່ອອ່ານໃບລາອອກການ ແລະ ສະຫຼະລາຊະບັນລັງຂອງເຈົ້າຊີວິດຕໍ່ກອງປະຊຸມໃຫຍ່ຜູ້ແທນ ປະຊາຊົນທົ່ວປະເທດ.

ນັ້ນສະແດງໃຫ້ເຫັນວ່າ ຈັກກະພັດອາເມລິກາ ແລະລູກມື, ແມ່ນຈະຮັ່ງມີເຂັ້ມແຂງ ແລະມີເລ້ກົນອຸບາຍແນບນຽນສ່ຽມແຫຼມພຽງໃດ, ກໍ່ຕ້ອງຍອມຖອຍຫຼັງໄປຈົນວ່າໃນທີ່ສຸດ ກໍ່ຕ້ອງຍອມຖອນໜີອອກຈາກປະເທດລາວ ພ້ອມທັງຖອນໜີຈາກອິນດູຈີນ ແລະ ອາຊີອາຄະເນດ້ວຍ. ເຈົ້າຊີວິດລາວ ແມ່ນຈະດື້ດ້ານຫົວແຂງພຽງໃດ ເມື່ອບໍ່ມີຈັກກະພັດອາເມລິກາ ແລະ ລູກມືເປັນບ່ອນອີງແລ້ວ ກໍ່ຕ້ອງຍອມສະຫຼະບັນລັງລົງມາເປັນປະຊາຊົນສາມັນ. ສິ່ງເຫຼົ່ານັ້ນ ເຮັດໃຫ້ເຮົາເຊື່ອໝັ້ນຕໍ່ພັກ ແລະຕໍ່ກຳລັງຂອງປະຊາຊົນເພີ່ມຂຶ້ນອີກ, ເຊິ່ງກໍ່ເປັນຄວາມເຊື່ອໝັ້ນໃນໄຊຊະນະຂອງກຳລັງປະຕິວັດ ແລະ ອະນາຄົດອັນແຈ່ມໃສຂອງປະເທດຊາດ ບ້ານເມືອງນັ້ນເອງ.

ກອງປະຊຸມໃຫຍ່ດັ່ງກ່າວນັ້ນ ໄດ້ເປັນເອກະສັນກັນຮັບຮອງ ເອົາການລາອອກຂອງນາຍົກລັດຖະມົນຕີ, ຂອງປະທານຄະນະມົນຕີປະສົມການເມືອງ ແລະ ຂອງເຈົ້າຊີວິດ ແລ້ວໄດ້ເປັນເອກະສັນກັນລົງມະຕິປະກາດສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ, ລົບລ້າງຊື່ລາຊະອານາຈັກລາວ ປະກາດໃຊ້ພາສາລາວເປັນພາສາທາງການ, ລົບລ້າງ

ການໃຊ້ລາຊາສັບ ເວັ້ນໄວ້ແຕ່ໃນການແຕ່ງກາບກອນ ຫຼື ບົດປະພັນ, ຮັບຮອງເອົາທຸງຊາດຕາມຮູບທີ່ໃຊ້ຢູ່ໃນການປະຕິວັດເປັນທຸງຊາດຂອງລະບອບໃໝ່ ແທນທຸງຊ້າງສາມຫົວ ທີ່ຖືກລົບລ້າງ, ຮັບເອົາທຳນອງເພງຊາດຂອງລະບອບເກົ່າ ແຕ່ປ່ຽນເນື້ອຮ້ອງໃໝ່, ວາງນະໂຍບາຍກ້າວຂຶ້ນສັງຄົມນິຍົມໂດຍກົງ ບໍ່ຜ່ານການຂະຫຍາຍຕົວຂອງລະບອບທຶນນິຍົມ, ແຕ່ງຕັ້ງສະຫາຍສຸພານຸວົງເປັນປະທານປະເທດ ແລະ ແຕ່ງຕັ້ງເຈົ້າຊີວິດເກົ່າສີສະຫວ່າງວັດທະນາເປັນທີ່ປຶກສາປະທານປະເທດ.

ຫຼັງຈາກນັ້ນ ທີ່ປະຊຸມໄດ້ແຕ່ງຕັ້ງສະພາປະຊາຊົນສູງສຸດ ໂດຍແມ່ນສະຫາຍ ສຸພານຸວົງ ເປັນປະທານ, ສະຫາຍສີສົມພອນ ລໍວັນໄຊ, ທ່ານຄຳສຸກ ແກ້ວລາ, ທ່ານໄຟດາງ ລໍບະເລຍຢາວ ແລະ ທ່ານສີທົນ ກົມມະດຳ ເປັນຮອງປະທານ, ມີສະມາຊິກປະຈຳການ ແລະ ສະມາຊິກບໍ່ປະຈຳການຈຳນວນໜຶ່ງ. ສະພາປະຊາຊົນສູງສຸດປະຕິບັດໜ້າທີ່ຄືກັນກັບ ລັດຖະສະພາທຳມະດາ ແຕ່ຫາກມີໜ້າທີ່ຄົ້ນຄວ້າກະກຽມ ສ້າງຮ່າງກົດໝາຍລັດຖະທຳມະນູນຕື່ມອີກໜ້າທີ່ໜຶ່ງ.

ປະທານປະເທດໄດ້ບົ່ງຕົວເອົາສະຫາຍ ໄກສອນ ພົມວິຫານ ເປັນປະທານສະພາລັດຖະມົນຕີ ແລ້ວສະຫາຍປະທານສະພາລັດຖະມົນຕີ ກໍແຕ່ງຕັ້ງຄະນະສະພາລັດຖະມົນຕີ ໂດຍມີສະຫາຍໜູຮັກ ພູມສະຫວັນ, ເຣົາເອງ, ສະຫາຍຄຳໄຕ ສີພັນດອນ ແລະ ສະຫາຍ ພູນ ສີປະເສີດເປັນຮອງປະທານ, ມີສະມາຊິກສະພາລັດຖະມົນຕີອີກຫຼາຍຄົນ ທີ່ຮັບຜິດຊອບກະຊວງຕາງກັນ ແລະ ໃຫ້ເຈົ້າສຸວັນນະພູມາເປັນທີ່ປຶກສາຂອງປະທານສະພາລັດຖະມົນຕີ. ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ລົງມະຕິເຫັນດີອະນຸມັດຄະນະສະພາລັດຖະມົນຕີ-ນັ້ນ ທີ່ມີໜ້າທີ່ປະຕິບັດນະໂຍບາຍການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ຕ່າງປະເທດ ແລະ ປ້ອງກັນປະເທດ ທີ່ກອງປະຊຸມໃຫຍ່ໄດ້ຜ່ານແລ້ວ ; ນັ້ນແມ່ນພວກເຮົາ ໄດ້ປະຕິບັດມະຕິ 3 ສະໄໝທີສອງຂອງກອງປະຊຸມສູນກາງພັກຂອງພວກເຮົາຢ່າງຖືກຕ້ອງ ແລະ ສຳເລັດຜົນເປັນຢ່າງດີ. ແລະໄດ້ສຳເລັດການປົດປ່ອຍຊາດອັນເປັນການປະຕິວັດຊາດປະຊາທິປະໄຕໃນທົ່ວປະເທດ ແລະ ຍຶດເອົາອຳນາດມາສູ່ກຳມືປະຊາຊົນຜູ້ອອກແຮງງານ.

ຂ່າວກ່ຽວກັບເຫດການທີ່ກ່າວມາຂ້າງບົນນີ້ ໄດ້ເຮັດໃຫ້ປະຊາຊົນທຸກຊົນເຜົ່າ ພ້ອມທັງພະສົງສາມະເນນໃນທົ່ວປະເທດ ຊົມຊື່ນຍິນດີຫາອັນປຽບບໍ່ໄດ້. ຄວາມຍິນດີອັນທີໜຶ່ງແມ່ນສົງຄາມຮຸກຮານຂອງພວກຈັກກະພັດທີ່ໄດ້ເຜົາຜານຊີວິດ ແລະ ຊັບສິນຂອງປະຊາຊົນລາວ ມາເປັນເວລາ 30 ກວ່າປີໄດ້ຍຸດຕິລົງ ເຮັດໃຫ້ພົດທຸກຄົນສິ້ນສຸດຄວາມຢ້ານກົວ, ແລະ ຢູ່ທຳມາຫາກິນພາຍໃນສັນຕິພາບທີ່ຂະເຈົ້າມຸ້ງມາດປາຖະໜາມາແຕ່ເຫິງນານແລ້ວ. ຄວາມຍິນດີອັນທີສອງແມ່ນຄົນລາວ ເຊິ່ງເມື່ອກ່ອນນັ້ນຖືກແບ່ງແຍກອອກເປັນສອງຝ່າຍຄື ຝ່າຍທີ່ເຮັດການຕໍ່ສູ້ກູ້ຊາດ ແລະ ຝ່າຍທີ່ໄດ້ອົດທົນຕໍ່ຄວາມລຳບາກຍາກແຄ້ນທາງຮ່າງກາຍ ແລະ ຈິດ

ໃຈຢູ່ໃນເຂດສັດຕູຢຶດຄອງ ຈະໄດ້ໂຮມກັນເຂົ້າເປັນຄົນລາວອັນດຽວກັນ, ພໍ່ແມ່ພີ່ນ້ອງ ລູກເມຍທີ່ໄດ້ພັດພາກຈາກກັນໄປຢູ່ຄົນລະທາງ ດ້ວຍຄວາມໂສກເສົ້າອາໄລອາວອນຫາກັນ ຈະໄດ້ພົບໜ້າພໍ້ຕາກັນ ແລະ ພ້ອມກັນສ້າງສາບ້ານເມືອງດ້ວຍຄວາມມ່ວນຊື່ນເບີກບານ. ປະຊາຊົນບັນດາປະເທດອ້າຍນ້ອງ ທີ່ໄດ້ຊ່ວຍເຫຼືອການຕໍ່ສູ້ກູ້ຊາດລາວ ກໍ່ຊົມຊື່ນຍິນດີທີ່ໄດ້ເຫັນປະຊາຊົນລາວມີໄຊຊະນະ ເຮັດໃຫ້ຄອບຄົວສັງຄົມນິຍົມທີ່ນັບມື້ນັບກ້າວໜ້າເຂັ້ມແຂງ ໄດ້ມີປະເທດລາວທີ່ມີພັກມາກ-ເລນິນ ນຳພາຢ່າງສັດຊື່ບໍລິສຸດກາຍມາເປັນປ້ອມດ່ານໜ້າ ຂອງວົງຄະນາຍາດສັງຄົມນິຍົມຕື່ມອີກປະເທດໜຶ່ງຢູ່ໃນພາກພື້ນອາຊີອາຄະເນ.

ຕັ້ງແຕ່ເຮັດການປະຕິວັດມາ ເຮົາໄດ້ເຂົ້າຮ່ວມລັດຖະບານ 5 ຄັ້ງ, ຄັ້ງທຳອິດແມ່ນເຂົ້າຮ່ວມເປັນຮອງນາຍົກແລະ ລັດຖະມົນຕີກະຊວງພາຍໃນ ໃນລັດຖະບານລາວຕໍ່ຕ້ານໃນປີ 1950 ເຊິ່ງໄດ້ຍຸບຕົວໃນເວລາຕັ້ງລັດຖະບານປະສົມຊຸດທຳອິດໃນວັນທີ 2 ພະຈິກປີ 1957 ເຊິ່ງເຮົາກໍ່ໄດ້ເຂົ້າຮ່ວມເປັນຄັ້ງທີ່ສອງ, ເປັນລັດຖະມົນຕີກະຊວງທຳມະການ ແລະ ສິລະປະກຳ ; ຄັ້ງທີ່ສາມເຮົາໄດ້ເຂົ້າຮ່ວມໃນລັດຖະບານປະສົມສາມຝ່າຍ ໃນວັນທີ 23 ມິຖຸນາ ປີ 1962 ເປັນລັດຖະມົນຕີກະຊວງຖະແຫຼງຂ່າວ ໂຄສະນາການ ວັດທະນະທຳ ແລະ ທ່ອງທ່ຽວ ; ຄັ້ງທີ 4 ເຮົາໄດ້ເຂົ້າຮ່ວມລັດຖະບານປະສົມສອງຝ່າຍໃນວັນທີ 5 ເມສາ 1974 ເປັນຮອງນາຍົກ ແລະ ລັດຖະມົນຕີກະຊວງການຕ່າງປະເທດ ; ຄັ້ງທີ 5 ໄດ້ເຂົ້າຮ່ວມໃນລັດຖະບານສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງສຶກສາ, ກິລາ ແລະ ທຳມະການ ; ຕໍ່ມາຮອດເດືອນສິງຫາ ປີ 1982 ເຮົາໄດ້ອອກຈາກກະຊວງດັ່ງກ່າວນັ້ນມາຮັບພາລະຊີ້ນຳ 4 ກະຊວງຄື ກະຊວງສຶກສາ, ວັດທະນະທຳ, ສາທາລະນະສຸກ ແລະ ຄະນະກຳມະການ ສະຫວັດດີການສັງຄົມ ແລະ ນັກຮົບເກົ່າ ລັດຖະບານປະສົມຊຸດທີ 2, 3 ແລະ 4 ແມ່ນເວທີຕໍ່ສູ້ທາງການເມືອງທີ່ດຸເດືອດທີ່ສຸດ. ລວມປະຊຸມລັດຖະບານເທື່ອໃດມີແຕ່ສູ້ຖຽງກັນ ໂດຍຝ່າຍປະຕິການ ໄດ້ກ່າວຫາວ່າ ຝ່າຍແນວລາວຮັກຊາດບໍ່ຈິງໃຈ ແລະ ຈະຮ່ວມກັບຫວຽດນາມມາມ້າງລັດຖະບານລາວ ແລະ ຝ່າຍແນວລາວຮັກຊາດຕອບຄືນວ່າ ຝ່າຍປະຕິການອີງໃສ່ຈັກກະພັດອາເມລິກາ ເພື່ອມ້າງລັດຖະບານປະສົມ ແລະ ມ້າງການລວມລາວ. ແມ່ນວ່າຝ່າຍກົງກັນຂ້າມຈະສູ້ຖຽງດ້ວຍທ່າທີອັນໂຫດຫ້ຽມ ຈອງຫອງພຽງໃດເຮົາກໍ່ທຸ່ນທ່ຽງຕອບຕ້ານຄືນດ້ວຍເຫດຜົນອັນຖືກແທດກັບສະພາບການຕົວຈິງ ເພາະວ່າເຮົາມີສູນກາງພັກເປັນບ່ອນອີງ, ມີປະຊາຊົນເປັນກຳລັງໜູນ ແລະຕົວເຮົາເອງກໍ່ມີບົດຮຽນໃນການຕໍ່ສູ້ທາງການເມືອງເປັນເວລາເຫິງນານສົມຄວນ. ຕໍ່ສູ້ຊະນະຄັ້ງໃດກໍ່ຍິ່ງເຮັດໃຫ້ເຮົາກ້າຫານ, ທຸ່ນທ່ຽງ ແລະ ເພີ່ມຄວາມເຊື່ອໝັ້ນໃນໄຊຊະນະຂຶ້ນຕື່ມອີກ. ອັນນັ້ນມັນຊ່ວຍໃຫ້ເຮົາອົດທົນ ຕໍ່ສູ້ກັບໄພອັນຕະລາຍທຸກຢ່າງ ຈົນວ່າທ້າຍສຸດ ພວກເຮົາກໍ່ເປັນຝ່າຍຊະນະແທ້.

ເມື່ອຖອດຖອນບົດຮຽນແລ້ວພວກເຮົາເຫັນວ່າ ໃນການຕໍ່ສູ້ກັບສັດຕູນັ້ນ, ຕາບໃດການຊົ່ງຊາກຳລັງລະຫວ່າງເຮົາກັບສັດຕູ ຫາກບໍ່ກ້ຳເກິ່ງກັນນັ້ນ ພວກເຮົາແມ່ນບໍ່ສາມາດ ໄດ້ຮັບຜົນສົມປະສົງໃນການເຈລະຈາທາງການເມືອງ. ໃນການຮ່ວມມືຄັ້ງທຳອິດກັບຝ່າຍສັດຕູ ພວກເຮົາໄດ້ເຮັດການຕໍ່ສູ້ໃນການເລືອກຕັ້ງ, ໃນລັດຖະສະພາ ແລະ ໃນລັດຖະບານປະສົມ ແຕ່ທ້າຍສຸດພວກເຮົາກໍ່ໄດ້ຖືກຈັບຂັງຄຸກ 10 ເດືອນ ແລະ ໄດ້ໂຕນໜີຈຶ່ງພົ້ນອັນຕະລາຍ. ໃນການເຂົ້າຮ່ວມມືຄັ້ງທີ່ສອງ, ພວກເຮົາມີເຂດປົດປ່ອຍ ແລະ ມີກອງທະຫານຫຼາຍສົມຄວນ . ແຕ່ລັດຖະບານປະສົມກໍ່ຖືກມ້າງເພດ້ວຍການຄາດຕະກຳລັດຖະມົນຕີຕ່າງປະເທດ ຜູ້ກ້າວໜ້າ ແລະ ມີການນາບຂູ່ເຖິງຊີວິດຂອງພວກເຮົາເອງອີກດ້ວຍ. ພວກເຮົາຈຳເປັນຕ້ອງຫັນທິດມາເຮັດການຕໍ່ສູ້ດ້ວຍກຳລັງອາວຸດ ເພື່ອເພີ່ມທະວີກຳລັງຂອງຝ່າຍເຮົາ ແລະ ລຶດຜ່ອນກຳລັງຂອງສັດຕູ. ຮອດເວລາພວກເຮົາເຂົ້າຮ່ວມລັດຖະບານປະສົມເທື່ອທີ່ສາມ ພວກເຮົາຈຶ່ງມີກຳລັງປະກອບອາວຸດ ແລະ ກຳລັງການເມືອງໃນໝູ່ປະຊາຊົນກ້ຳເກິ່ງກັບສັດຕູ ; ພວກເຮົາຈຶ່ງສາມາດໃຊ້ສານບາດຄ້ອນຕີເອົາຊະນະສັດຕູໄດ້, ນັ້ນຄືການລຸກຮື້ຂຶ້ນຂອງປະຊາຊົນໃນທົ່ວປະເທດ, ການລຸກຮື້ຂຶ້ນຮ່ວມມືກັບພວກເຮົາຂອງກອງທະຫານສັດຕູ ແລະ ການບຸກເຂົ້າ ຕີສັດຕູຢ່າງແຂງແຮງຂອງກອງທະຫານຝ່າຍເຮົາ. ສານບາດຄ້ອນດັ່ງກ່າວນັ້ນ ພາໃຫ້ພວກເຮົາຢຶດເອົາອຳນາດການປົກຄອງມາມືຂອງພວກເຮົາດ້ວຍສັນຕິວິທີໃນວັນທີ່ 2 ທັນວາ 1975, ຂັບໄລ່ພວກຈັກກະພັດອາເມລິກາ ແລະ ລູກມືອອກຈາກດິນແດນລາວ, ລົບລ້າງລະບອບລາຊາທິປະໄຕທີ່ຫຼ້າສະໄໝແລ້ວສ້າງຕັ້ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວຂຶ້ນ ຢ່າງສະຫງ່າຜ່າເຜີຍ. ນັ້ນແມ່ນການສິ້ນສຸດຂອງການແຊກແຊງຮຸກຮານກໍ່ສົງຄາມຂອງພວກຈັກກະພັດຕ່າງດ້າວທັງລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ຢ່າງສິ້ນເຊີງ ; ນັ້ນແມ່ນການບັ້ນລຸຜົນສຳເລັດຂອງການຕໍ່ສູ້ປົດປ່ອຍຊາດ ຫຼື ການປະຕິວັດຊາດປະຊາທິປະໄຕ ຂອງປະຊາຊົນລາວພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ທີ່ດຳເນີນມາຢ່າງເຈັບແສບເປັນເວລາ-30 ກວ່າປີ.

ເມື່ອກຳອຳນາດການປົກຄອງມາມືພວກເຮົາແລ້ວ, ພັກເຮົາເວົ້າວ່າ ພວກເຮົາຕ້ອງພາປະເທດຊາດອັນແສນຮັກຂອງພວກເຮົາ ກ້າວຂຶ້ນສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງລະບອບທຶນນິຍົມ. ພວກເຮົາເຫັນດີ ແລະເຊື່ອໝັ້ນວ່າ ພວກເຮົາຈະກ້າວຂຶ້ນສັງຄົມນິຍົມໄດ້ຢ່າງແນ່ນອນ. ແຕ່ວ່າໃນ 30 ກວ່າປີທີ່ຜ່ານມານີ້ພວກເຮົາໄດ້ຮ່ຳຮຽນ ແລະ ອົບຮົມໃຫ້ພະນັກງານ ແລະ ກອງທະຫານພວກເຮົາເຂົ້າໃຈແຕ່ທິດສະດີປະຕິວັດຊາດ ແລະ ປະຊາທິປະໄຕ, ພາຍຄວາມວ່າວິທີຕີມ້າງກຳລັງທັບ ທັງທຳລາຍທຸກອັນທີ່ສັດຕູໃຊ້ເພື່ອຕໍ່ຕ້ານພວກເຮົາ. ພວກເຮົາບໍ່ທັນໄດ້ຮຽນ ແລະ ອົບຮົມໃຫ້ພະນັກງານ ແລະ ກອງທະຫານຂອງພວກເຮົາເຂົ້າໃຈວິທີພາປະເທດຊາດກ້າວຂຶ້ນສັງຄົມນິຍົມ.

ໄປຢາມນັກສຶກສາລາວທີ່ ສ.ປ. ເຢຍລະມັນ 1976

ທີ່ປະເທດ ສ ປ ຮົງກາລີ, ສະຫາຍຢາໂນດ ກາດາ ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ
ໃນໂອກາດ ວັນທີ 1 ພຶດສະພາ 1980 .

ທ່ານ ພູມີ ວົງວິຈິດ ນຳພາຄະນະຜູ້ແທນພັກປະຊາຊົນ ປະຕິວັດລາວ
ໄປຢ້ຽມຢາມປະເທດ ມົງໂກລີ ປີ 1976 .

ທ່ານ ພູມີ ວົງວິຈິດ ແລະ ພັນລະຍາ ໄປຢ້ຽມຢາມປະເທດ ບູນກາລີ
ເທື່ອທີ 2 ເດືອນ ມິຖຸນາ ປີ 1977 .

ໄປຢ້ຽມຢາມສະມາຄົມມິດຕະພາບ ໂຊວຽດ - ລາວ ທີ່ ໂມສະກູ

ເຈົ້າພິບສະຫາຍຣອນແນກເກີ ແລະ ພັນລະຍາ ຫຼັງຈາກຮ່ວມສະຫຼອງ
ວັນ ກາກມາກ ທີ່ ສ ປ ຍ 1979 .

ຕໍ່ຈາກນັ້ນມາເຮົາກໍ່ຖືກແຕ່ງຕັ້ງໃຫ້ນຳຄະນະຜູ້ແທນພັກເຮົາໄປຢ້ຽມຢາມ ຫຼື ເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກໃນປະເທດສັງຄົມນິຍົມອ້າຍນ້ອງເຮັດໃຫ້ເຮົາມີໂອກາດໄດ້ພົບພໍ້ລົງເລີຍກັບຜູ້ນຳຂອງປະເທດເຫຼົ່ານັ້ນພິດທຸກຄົນທີ່ສະແດງທ່າທີລະພິດສະໜິດຮັກແພງເຮົາເຮັດ ໃຫ້ເຮົາຮູ້ສຶກປິ້ມປີຕິຍິນດີຫຼາຍທີ່ສຸດ .

ປີ 1977 ສູນກາງພັກຂອງພວກເຮົາໄດ້ເປີດກອງປະຊຸມຄົບຄະນະເປັນເທື່ອທີ 4 ແລະ ໄດ້ອອກມະຕິ 4 ທີ່ໄດ້ຢືນຢັນວ່າ ທຸກປະເທດໃນໂລກຈະທະຍອຍກັນ ກ້າວຂຶ້ນສັງຄົມນິຍົມຕາມແນວທາງທີ່ມະຫາປະຕິວັດເດືອນຕຸລາ 1917 ຂອງປະເທດລັດເຊຍ ພາຍໃຕ້ການນຳພາຂອງເລນິນຜູ້ຍິ່ງໃຫຍ່ໄດ້ຂີດໝາຍໄວ້. ປັດໃຈທີ່ພາໃຫ້ໂລກກ້າວຂຶ້ນສູ່ສັງຄົມນິຍົມແມ່ນພວກນາຍທຶນຈັກກະພັດ ບໍ່ສາມາດໃຊ້ການປົກຄອງດ້ວຍອາວຸດຂອງພວກເຂົາ ສືບຕໍ່ກົດຂີ່ຂູດຮີດປະຊາຊົນທີ່ຕື່ນຕົວທາງການເມືອງດີເກົ່າອີກ ; ປະຊາຊົນກໍ່ບໍ່ຍອມຢູ່ພາຍໃຕ້ການປົກຄອງອັນອະທຳອີກ ແລະ ພາກັນຊອກຫາສັງຄົມໃໝ່ທີ່ເປັນປະຊາທິປະໄຕ ແລະ ຍຸດຕິທຳກວ່າ ; ທຸກຄົນໄດ້ເຫັນບັນດາປະເທດສັງຄົມນິຍົມທີ່ມີພັກມາກ-ເລນິນ ນຳພານັ້ນວ່າ ເປັນສັງຄົມອັນຖືກກັບຄວາມມຸ່ງມາດປາຖະໜາຂອງປະຊາຊົນກວ່າເພິ່ນ ແລະ ຜູ້ໃດກໍ່ຕັດສິນໃຈຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ສັງຄົມນິຍົມ. ບ່ອນໃດຕ່ອງໂສ້ຂອງການ ຜູກມັດຂອງນາຍທຶນຈັກກະພັດຫາກອ່ອນກວ່າໝູ່, ບ່ອນນັ້ນ ປະຊາຊົນກໍ່ລຸກຂຶ້ນເຮັດການປະຕິວັດ-ປົດປ່ອຍຊາດໄວກວ່າເພິ່ນ. ມະຕິ 4 ໄດ້ເວົ້າໄວ້ວ່າ ສິ່ງຕັດສິນວ່າປະເທດໜຶ່ງຈະກ້າວຂຶ້ນສູ່ສັງຄົມນິຍົມໄດ້ນັ້ນ ແມ່ນປະເທດນັ້ນຕ້ອງມີພັກມາກ-ເລນິນ ທີ່ແທ້ຈິງນຳພາ.

ມະຕິ 4 ໄດ້ເວົ້າວ່າ ປະເທດລາວເຮົາທີ່ຕີເອົາຊະນະຈັກກະພັດອາເມລິກາ ອັນເປັນຈັກກະພັດຕົວຮ້າຍມີເຂັ້ມແຂງກວ່າໝູ່ໃນໂລກນີ້ ມາເປັນເອກະລາດຢ່າງສົມບູນແລ້ວນັ້ນ ກໍ່ຈະກ້າວຂຶ້ນສູ່ສັງຄົມນິຍົມໂດຍກົງໂດຍບໍ່ຜ່ານການຂະຫຍາຍຕົວຂອງລະບອບທຶນນິຍົມໄດ້, ເພາະວ່າພວກເຮົາສາມາດທັບມ້າງລະບອບປົກຄອງອັນອະທຳຂອງນາຍທຶນຈັກກະພັດໄດ້ແລ້ວ, ພວກເຮົາເຫັນແບບຢ່າງອັນດີຂອງສະຫະພາບໂຊວຽດ ແລະ ປະເທດສັງຄົມນິຍົມອື່ນ ທີ່ຖືກກັບຄວາມມຸ່ງມາດປາຖະໜາຂອງປະຊາຊົນເຮົາ ແລະ ພວກເຮົາມີພັກປະຊາຊົນປະຕິວັດລາວອັນເປັນພັກມາກ-ເລນິນ ແທ້ຈິງນຳພາການປະຕິວັດຢ່າງຖືກຕ້ອງ ແລະ ມີໄຊມາແລ້ວ.

ແຕ່ວ່າປະເທດຂອງພວກເຮົາຊ້ຳພັດແມ່ນປະເທດດ້ອຍພັດທະນາ, ພື້ນຖານເສດຖະກິດ ຍັງອ່ອນນ້ອຍ, ມີກະສິກຳເອກະຊົນທີ່ຫຼ້າຫຼັງຂຶ້ນກັບທຳມະຊາດ, ຄົນບໍ່ຮູ້ໜັງສືຍັງກວມ 65% ຂອງພົນລະເມືອງບັນດາຊົນເຜົ່າ, ວັດທະນະທຳຍັງຕ່ຳເຮັດໃຫ້ປະຊາຊົນເຊື່ອຖືງົມງາຍ, ອັນເປັນສິ່ງກີດໜ່ວງຄວາມກ້າວໜ້າຂອງຊາດ. ພວກເຮົາໄດ້ໂຄ່ນລົ້ມລະບອບນາຍທຶນ ຈັກກະພັດ ແລະ ສັກດີນາທີ່ຫຼ້າສະໄໝລົງແລ້ວ, ແຕ່ວ່າແນວຄິດຂອງຊົນຊັ້ນດັ່ງກ່າວນັ້ນ ພັດຍັງຄົງຄ້າງຢູ່ໃນຫົວສະໝອງຂອງປະຊາຊົນເຮົາໃນລະດັບຕ່າງກັນ, ພວກປະຕິການພາຍໃນປະເທດ ຍັງພີ

ປ້ອງສ່ວຍໃຊ້ທຸກໂອກາດ ເພື່ອໂງ່ຫົວຂຶ້ນມາຟື້ນຟູລະບອບເກົ່າຄືນ ແລະ ພວກປະຕິການຕ່າງປະເທດກໍ່ພໍ່ປ້ອງຍັງບໍ່ເຊົາມາຊ່ວຍ ພວກປະຕິການເຫຼົ່ານັ້ນໃຫ້ກີດຂວາງການກ້າວຂຶ້ນສັງຄົມນິຍົມຂອງປະເທດເຮົາ.

ມະຕິ 4 ໄດ້ເວົ້າວ່າໃນເງື່ອນໄຂສະພາບການເປັນແນວນັ້ນ, ປະເທດລາວຕ້ອງຜ່ານໄລຍະຂ້າມຜ່ານອັນຍາວສົມຄວນກ່ອນຈະກ້າວເຂົ້າສູ່ສັງຄົມນິຍົມ. ໄລຍະຂ້າມຜ່ານ ແມ່ນໄລຍະທີ່ພວກເຮົາຕ້ອງປະຕິບັດພະເດັດການກຳມາຊີບ, ໝາຍຄວາມວ່າປະຊາຊົນຜູ້ອອກແຮງງານບັນດາເຜົ່າ ທີ່ເປັນສ່ວນຫຼວງຫຼາຍກຳອຳນາດ ແລະ ພະເດັດການຕໍ່ພວກຝືນປະຕິວັດ ທີ່ເປັນຈຳນວນນ້ອຍ ໂດຍໃຊ້ສອງພາລະບົດບາດຄື ໂຄສະນາ, ຈັດຕັ້ງ, ອົບຮົມ, ນຳພາ, ກໍ່ສ້າງເພື່ອໃຫ້ປະແນວຄິດເກົ່າ ແລະ ສ້າງຕົວໃຫ້ເປັນຄົນລາວໃໝ່, ຄົນລາວສັງຄົມນິຍົມ ; ຖ້າວ່າໃຊ້ພາລະບົດບາດທີ່ໜຶ່ງນັ້ນບໍ່ໄດ້ຜົນໃນພວກຫົວດື້ນັ້ນແທ້ ຈຶ່ງໃຊ້ພາລະບົດບາດທີ່ສອງຄື ໃຊ້ການຮຸນແຮງປາບປາມໃນເມື່ອມີການຈຳເປັນແທ້.

ປະຕິບັດພະເດັດການກຳມາຊີບ ແມ່ນເຮັດໃຫ້ຖືກຕາມລະບົບພັກນຳພາ, ລັດຄຸ້ມຄອງ ແລະ ປະຊາຊົນເປັນເຈົ້າ, ເພື່ອດຳເນີນການປະຕິວັດ 3 ປະການ ຄື ການປະຕິວັດທາງດ້ານການພົວພັນການຜະລິດເພື່ອສ້າງເງື່ອນໄຂໃຫ້ກຳລັງການຜະລິດຂະຫຍາຍຕົວ, ການປະຕິວັດທາງດ້ານເຕັກນິກວິທະຍາສາດອັນເປັນຂໍກະແຈຕົ້ນຕໍ ໄຂຊ່ອງທາງໃຫ້ຜະລິດຕະພາບຂອງງານ ກ້າວຂຶ້ນສູ່ລະດັບສູງ ແລະ ການປະຕິວັດທາງດ້ານວັດທະນະທຳ ແລະ ແນວຄິດທີ່ຕ້ອງໄປກ່ອນການປະຕິວັດທາງດ້ານອື່ນບາດກ້າວໜຶ່ງ ເພື່ອກໍ່ສ້າງຄົນໃໝ່ສັງຄົມນິຍົມ. ອາໄສການປະຕິວັດ 3 ປະການນີ້, ພວກເຮົາຕ້ອງຈັດຕັ້ງການຜະລິດຄືນໃໝ່, ຈັດຕັ້ງການແບ່ງງານຄືນໃໝ່ ເພື່ອເຮັດການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ ໂດຍເອົາການດັດສ້າງ ເປັນສຳຄັນ ແລະ ເອົາການກໍ່ສ້າງເປັນຕົ້ນຕໍ, ດັດສ້າງອັນທີ່ມີແລ້ວແຕ່ບໍ່ຖືກຕາມລັກສະນະສັງຄົມນິຍົມ ກໍ່ສ້າງອັນທີ່ດັດສ້າງແລ້ວ ຫຼື ອັນທີ່ບໍ່ທັນມີເພື່ອສ້າງພື້ນຖານດ້ານວັດຖຸ ແລະ ເຕັກນິກໃຫ້ແກ່ການກໍ່ສ້າງສັງຄົມນິຍົມ.

ມະຕິ 4 ນັ້ນໄດ້ວາງໜ້າທີ່ຍຸດທະສາດໄວ້ 3 ໜ້າທີ່ຄື ປ້ອງກັນປະເທດຊາດ ແລະຄວາມສະຫງົບຂອງບ້ານເມືອງ, ກໍ່ສ້າງເສດຖະກິດສັງຄົມນິຍົມ ແລະ ຂະຫຍາຍການສຶກສາ ແລະ ວັດທະນະທຳຢ່າງຕັ້ງໜ້າ.

ມະຕິ 5,6,7,8 ຂອງສູນກາງພັກສະໄໝທີ່ສອງແມ່ນສຳຫຼວດເບິ່ງການປະຕິບັດມະຕິ 4 ແລະມະຕິອື່ນໆດັ່ງກ່າວນັ້ນ, ກວດເບິ່ງຈຸດດີ, ຈຸດອ່ອນ ແລ້ວວາງໜ້າທີ່ຍຸດທະສາດອອກເປັນແຕ່ 2 ໜ້າທີ່ຄືປົກປັກຮັກສາປະເທດຊາດ, ປ້ອງກັນຄວາມສະຫງົບສຸກຂອງປະຊາຊົນ ແລະ ກໍ່ສ້າງເສດຖະກິດສັງຄົມນິຍົມ ; ເພາະວ່າໜ້າທີ່ຂະຫຍາຍການສຶກສາ ແລະ ວັດທະນະທຳນັ້ນກໍ່ລວມເຂົ້າຢູ່ໃນ 2 ໜ້າທີ່ຍຸດທະສາດດັ່ງກ່າວນັ້ນແລ້ວ.

ຫຼັງຈາກຄົ້ນຄວ້າບັນດາມະຕິດັ່ງກ່າວນັ້ນມັນໄດ້ເຮັດໃຫ້ເຮົາເອງກໍ່ເຊັ່ນດຽວກັນກັບພະນັກງານ, ທະຫານ ແລະ ປະຊາຊົນເຂົ້າໃຈແຈ້ງຕື່ມວ່າທີ່ຈະພາປະເທດຊາດຂອງພວກເຮົາກ້າວຂຶ້ນສັງຄົມນິຍົມ ; ມັນເຮັດໃຫ້ຄວາມເຊື່ອໝັ້ນໃນໄຊຊະນະເປັນອັນໜັກແໜ້ນຂຶ້ນຈັກໃຈ ແລະ ເຊື່ອໝັ້ນວ່າພວກເຮົາຈະສາມາດເຮັດໃຫ້ການປະຕິວັດສັງຄົມນິຍົມໃນລາວ ໄດ້ຮັບຜົນດີກວ່າເກົ່າຂຶ້ນເລື້ອຍໆ.

ກອງປະຊຸມໃຫຍ່ຂອງພັກເທື່ອທີ 3 ທີ່ໄຂຂຶ້ນໃນເດືອນ 4 ປີ 1982 ໄດ້ສັງເກດຕີລາຄາເບິ່ງຜົນງານທີ່ໄດ້ຮັບຕັ້ງແຕ່ກອງປະຊຸມໃຫຍ່ເທື່ອທີ 2 ທີ່ໄດ້ໄຂຂຶ້ນແຕ່ເດືອນກຸມພາ 19-72 ຕົ້ນມາ. ພວກເຮົາດີໃຈວ່າໃນ 10 ປີທີ່ຜ່ານມານັ້ນ ພວກເຮົາໄດ້ຜ່ານ 2 ໄລຍະ ຂອງການປະຕິວັດ, ຄືວ່າແຕ່ປີ 1972 ມາຮອດປີ 1975 ພວກເຮົາໄດ້ເຮັດການປະຕິວັດ ປົດປ່ອຍຊາດ ; ຫຼັງຈາກປົດປ່ອຍຊາດສຳເລັດໃນວັນທີ 2 ທັນວາ 1975 ມາຮອດດຽວນີ້ພວກເຮົາໄດ້ເຮັດ ແລະ ພວມເຮັດການປະຕິວັດສັງຄົມນິຍົມ. ກອງປະຊຸມໃຫຍ່ເທື່ອທີສາມໄດ້ສັງເກດເຫັນວ່າ ພວກເຮົາປະຕິບັດມະຕິ 3 ຂອງສະໄໝທີ 2 ທີ່ຕີລາຄາວ່າສັດຕູອ່ອນກຳລັງແລ້ວຈຶ່ງຍອມໄປເຈລະຈາກັບຫວຽດນາມຢູ່ນະຄອນຫຼວງປາລີ, ດັ່ງນັ້ນ ພວກເຮົາຈັດຕັ້ງການຕໍ່ສູ້ສັດຕູດີກໍ່ຈະສາມາດຍາດເອົາໄຊຊະນະມາໄດ້. ຜົນງານທີ່ພວກເຮົາໄດ້ຮັບມາຮອດດຽວນີ້ ຢືນຢັນໃຫ້ພວກເຮົາເຫັນແຈ້ງວ່າ ແນວທາງທີ່ພັກຂອງພວກເຮົາວາງອອກ ຕັ້ງແຕ່ພວມລວມຢູ່ໃນພັກກອມມູນິດອິນດູຈີນ ອັນມີປະທານໂຫ່ຈິມິນເປັນຜູ້ນຳແມ່ນຖືກຕ້ອງ. ມະຕິຕ່າງໆທີ່ສູນກາງພັກປະຊາຊົນປະຕິວັດລາວ ອັນມີສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານ ເປັນຜູ້ນຳພາກໍ່ຢັ້ງຢືນຄວາມຖືກຕ້ອງຂອງພັກເຮົາ. ມັນຊີ້ໃຫ້ເຫັນວ່າ ພວກເຮົາທີ່ເປັນລູກສິດ ຂອງປະທານໂຫ່ຈິມິນ ແລະ ເປັນເພື່ອນສະໜິດຂອງພວກສະຫາຍຫວຽດນາມ ໄດ້ສະແດງຄວາມສັດຊື່ບໍລິສຸດຂອງຕົນ ຕໍ່ທິດສະດີມາກ-ເລນິນ ແລະ ໄດ້ກ້າວໜ້ານຳວຽກງານເລື້ອຍມາ ຈົນສາມາດຮ່ຳຮຽນນຳກັນ, ຜູ້ຮູ້ຫຼາຍຊ່ວຍກໍ່ສ້າງຜູ້ຮູ້ໜ້ອຍ, ເຮັດໃຫ້ຄວາມສາມັກຄີພາຍໃນ ກົມການເມືອງ ແລະ ພາຍໃນສູນກາງພັກແໜ້ນແຟ້ນຢູ່ສະເໝີ ແລະ ເຮັດໃຫ້ປະຊາຊົນລາວ ທຸກຊົນເຜົ່າໄວ້ວາງໃຈ ແລະ ພ້ອມກັນສາມັກຄີແໜ້ນແຟ້ນອ້ອມຂ້າງພັກເຮົາ ເປັນກຳລັງອັນດຽວພ້ອມກັນຈັບອາວຸດຕໍ່ສູ້ສັດຕູໃນເມື່ອຈຳເປັນ ແລະ ພ້ອມກັນດັດສ້າງ ແລະ ກໍ່ສ້າງເສດຖະກິດຂອງຊາດໃຫ້ຄ່ອຍໆກ້າວຂຶ້ນເປັນເສດຖະກິດສັງຄົມນິຍົມເທື່ອລະກ້າວ, ເຮັດໃຫ້ປະເທດຊາດຈະເລີນຮຸ່ງເຮືອງ ແລະ ອຸດົມຮັ່ງມີຂຶ້ນເລື້ອຍໆ, ເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນລາວທຸກຊົນເຜົ່າ ນັບມື້ນັບດີຂຶ້ນຢ່າງບໍ່ຢຸດຢັ້ງ, ເຊິ່ງແມ່ນຈຸດປະສົງຕົ້ນຕໍ ຂອງການປະຕິວັດ ແລະ ຂອງພັກເຮົາ.

XIII . ພາກສະຫຼຸບ

ເມື່ອຫວນຄິດເບິ່ງຊີວິດອັນປ່ຽນປັ່ນໄປມາ ເປັນຫຼາຍຂັ້ນຫຼາຍທ່ອນຂອງເຮົາແລ້ວ, ເຮົາພໍສະຫຼຸບເປັນບົດຮຽນໄດ້ດັ່ງນີ້ :

1/ ແມ່ນວ່າເຮົາຈະເປັນລູກພະນັກງານລະບອບເກົ່າຢູ່ບ້ານນອກ, ຫຼັງຈາກພໍ່ຕາຍປະແຕ່ຍັງນ້ອຍ, ຕ້ອງພຶກພື້ນຢູ່ນຳການເຮັດໄຮ່ນາ ແລະ ລ້ຽງມ້າ, ງົວ, ຄວາຍ ປານໃດກໍ່ຕາມ, ຖ້າວ່າຕົນເອງມີນ້ຳໃຈບຸກບືນຢາກຮຽນ ແລະ ມີພີ່ນ້ອງຊ່ວຍເຫຼືອກໍ່ສາມາດສ້າງຕົວເປັນນັກຮຽນຮູ້ ທີ່ສາມາດກຸ້ມຕົວເອງໄດ້.

2/ ຢູ່ໃນໂຮງຮຽນ, ຖ້າວ່າໂຕເອງມີຄວາມຢາກໄດ້ຄວາມຮູ້, ບໍ່ເນົານົວນຳການຫຼິ້ນກິນຕາມຄວາມຊັກຊວນຂອງໝູ່ຜູ້ມາລະຍາດບໍ່ດີນັ້ນ ກໍ່ສາມາດຮຽນໄດ້ເກັ່ງ ແລະ ເສັງໄດ້ໝາທ້ອນດີສົມດັ່ງຄວາມມຸ່ງຫວັງຂອງຕົນ.

3/ ການຮຽນທັງສີ່ຢູ່ໃນໂຮງຮຽນລະບອບນາຍທຶນ ຍ່ອມພາໃຫ້ເກີດມີແນວຄິດຢາກເປັນນາຍທຶນຄືຕັ້ງໃຈຮຽນໃຫ້ເກັ່ງ, ເສັງໄດ້ຖານະສູງເພື່ອໃຊ້ຖານະອັນນັ້ນ ໄປສ້າງຄວາມຮັ່ງມີ ແລະ ຄວາມສະພຸກສະພານໃຫ້ແກ່ສ່ວນຕົວຂອງຕົນ.

4/ ການເຮັດວຽກຮັບໃຊ້ພວກສັກດີນາ ແລະນາຍທຶນ ມັນຍ່ອມສ້າງໃຫ້ຕົນເອງ ມີແນວຄິດແລະທ່າທີເປັນສັກດີນາ ແລະ ນາຍທຶນ ຄືຢາກມີຍົດສູງ, ຢາກໄດ້ຄວາມຮັກຈາກນາຍ, ຢາກມີເງິນຫຼາຍ ແລະ ວາງທ່າທີສູງເພື່ອໃຫ້ນາຍເຊື່ອໃຈ ແຕ່ນັ້ນຊ້ຳພັດເປັນໜ້າຊັງແກ່ປະຊາຊົນຜູ້ອອກແຮງງານ.

5/ ຕະຫຼອດຊົ່ວໄລຍະເວລາເຮັດການນຳຝະລັ່ງ ເຮົາເຄີຍໄດ້ຄຽດຈົນເຖິງດ່າ ຫຼື ຕີກັບພວກຝະລັ່ງບາງຄົນ, ແຕ່ອັນນັ້ນ ມັນແມ່ນຄຽດໃສ່ບາງບຸກຄົນ, ມັນບໍ່ແມ່ນຄຽດໃສ່ ລະບອບລ່າເມືອງຂຶ້ນທີ່ນຳເອົາພວກເຂົາມາປົກຄອງບ້ານເມືອງເຮົາ. ເມື່ອເວລາຍີ່ປຸ່ນມາໄລ່ຝະລັ່ງອອກຈາກຊຳເໜືອ ເຮົາໄດ້ຕັດສິນໃຈບໍ່ໄປນຳຝະລັ່ງໃນຄາວນັ້ນ ຍັງບໍ່ທັນແມ່ນຍ້ອນມີແນວຄິດຢາກເຮັດການປະຕິວັດ, ມັນແມ່ນຍ້ອນເປັນຫ່ວງຄອບຄົວພີ່ນ້ອງ ແລະຄິດວ່າໜີໄປທາງໜ້າຈະພົບຄວາມທຸກຍາກລຳບາກຫຼາຍແນວ.

6/ ເຮົາໄດ້ເຮັດການຮັບໃຊ້ກອງທະຫານຍີ່ປຸ່ນ ດ້ານໜຶ່ງແມ່ນມີຈິດໃຈຢ້ານ ເພາະວ່າເຮົາໄດ້ເຮັດວຽກນຳພວກຝະລັ່ງມາກ່ອນແລ້ວແລະ ອີກດ້ານໜຶ່ງກໍ່ບໍ່ເຂົ້າໃຈວ່າ ຍີ່ປຸ່ນເປັນຈັກກະພັດທີ່ຈະມາກົດຂີ່ຂູດຮີດປະຊາຊົນລາວຄືກັນ. ແນວຄິດຂອງເຮົາຍັງບໍ່ທັນຄິດຢາກກອບກູ້ເອກະລາດ, ຍັງແມ່ນຄິດວ່າຜູ້ໃດມາເປັນນາຍກໍ່ຮັບໃຊ້ຜູ້ນັ້ນ ເພາະວ່າເຮົາບໍ່ເຄີຍໄດ້ຮຽນທິດສະດີປະຕິວັດຈັກເທື່ອ.

7/ ເມື່ອໄດ້ຮັບຂ່າວວ່າຫວຽດນາມໄດ້ເຮັດການປະຕິວັດຢຶດອຳນາດທົ່ວປະເທດ ເຮົາຍັງບໍ່ເຂົ້າໃຈວ່າປະເທດລາວຈະເຮັດການປະຕິວັດຄືກັນຫຼືບໍ່, ເພາະວ່າຕິສາຍຕິດຕໍ່ກັບວຽງຈັນ ແລະ ຫຼວງພະບາງກໍບໍ່ໄດ້, ດັ່ງນັ້ນ ເຮົາຈຶ່ງເຮັດໜ້າທີ່ເຈົ້າແຂວງຊຳເໜືອ ຕໍ່ໄປຄືເກົ່າ, ບໍ່ຮູ້ວ່າເຮັດໜ້າທີ່ເຈົ້າແຂວງຕາມແບບປະຕິວັດແມ່ນເຮັດແນວໃດ. ມາຄິດຄືນເບິ່ງເວລານັ້ນແມ່ນເຮົາດຳລົງຊີວິດຢູ່ດ້ວຍຈິດໃຈກະວົນກະວາຍທີ່ສຸດ ເພາະບໍ່ຮູ້ວ່າອະນາຄົດຂອງບ້ານເມືອງຈະເປັນໄປແນວໃດ.

8/ ເມື່ອຍີ່ປຸ່ນປະລາໄຊຖອຍໜີໄປ ແລະ ກອງທະຫານຝະລັ່ງກັບຄືນມາໃນທ້າຍປີ 1945 ເຮົາຍິ່ງເພີ່ມທະວີຄວາມກະວົນກະວາຍ, ບໍ່ຮູ້ວ່າຈະເຮັດແນວໃດ, ຈຶ່ງຈຳເປັນຕ້ອງປົ້ນກັບຄືນມາເຮັດການນຳຝະລັ່ງຢ່າງບໍ່ມີທາງເລືອກ, ມີແຕ່ຄວາມຢ້ານອັນຕະລາຍເຖິງຊີວິດ ເພາະວ່າເຮົາໄດ້ຮ່ວມມືກັບຍີ່ປຸ່ນຊອກຈັບເອົາຄົນຝະລັ່ງ ທີ່ລີ້ຊ່ອນຢູ່ຕາມບ້ານນອກ ແລະ ຕາມປ່ານາມອບໃຫ້ຍີ່ປຸ່ນຫຼາຍຮ້ອຍຄົນ. ພໍ່ເມຍເຮົາທີ່ເປັນເຈົ້າແຂວງຊຽງຂວາງບໍ່ໄດ້ຮ່ວມມືກັບຍີ່ປຸ່ນປາບພວກຝະລັ່ງຫຼາຍປານເຮົາ ກໍຍັງຖືກພວກຝະລັ່ງ ແລະ ລູກມືຈັບໄປຂ້າຖິ້ມເວລາພວກເຂົາເຂົ້າຢຶດເອົາຕົວເມືອງຊຽງຂວາງ.

9/ ເວລາກອງທະຫານຝະລັ່ງຖອຍໜີຈາກຊຳເໜືອອີກ ເຮົາຈຳເປັນຕ້ອງໜີໄປນຳເຂົາເພາະເທື່ອນີ້ແມ່ນຖືກບັງຄັບໃຫ້ເຮົາ ແລະ ຄອບຄົວຕ້ອງພາກຈາກກັນໄປຄົນລະທາງ ດ້ວຍຈິດໃຈວົ້ງເວທີ່ສຸດເພາະບໍ່ມອງເຫັນອະນາຄົດວ່າຈະເປັນໄປແນວໃດ .

10/ ເມື່ອຮູ້ຂ່າວວ່າຢູ່ວຽງຈັນໄດ້ມີການຈັດຕັ້ງລັດຖະບານ ລາວອິດສະຫຼະທີ່ປະກາດຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງ, ເຮົາໄດ້ຕັດສິນໃຈໂຕນໜີຈາກກອງທະຫານຝະລັ່ງ ໄປຫາລັດຖະບານລາວ, ການຕັດສິນໃຈເທື່ອນີ້ແມ່ນຖືກຕ້ອງ ເພາະວ່າສິ່ງຊຸກຍູ້ແມ່ນ ຄວາມຮັກຊາດ ທີ່ມີປະຈຳຢູ່ໃນໃຈເຮົາ.

11/ ບໍ່ມີທິດສະດີປະຕິວັດ ຈະບໍ່ມີຂະບວນການປະຕິວັດນັ້ນແມ່ນຖືກຕ້ອງແທ້. ປີ 1945 ເຮົາໄດ້ເຂົ້າຮ່ວມໃນແນວໂຮມ ລ.ປ.ລ, ໄດ້ເຂົ້າຮ່ວມໃນການປົດເຈົ້າຊີວິດສີສະຫວ່າງວົງລົງເພາະວ່າລາວບໍ່ຍອມເຊັນຊື່ໃສ່ກົດໝາຍລັດຖະທຳມະນູນ ທີ່ລັດຖະບານລາວອິດສະຫຼະໄດ້ແຕ່ງຄະນະຜູ້ແທນຖືມາແຕ່ວຽງຈັນ, ໄດ້ຈັບເຈົ້າແຂວງ ແລະ ຄະນະປົກຄອງເກົ່າຂອງແຂວງຫຼວງພະບາງ ແລ້ວແຕ່ງຕັ້ງເຈົ້າແຂວງ ແລະ ຄະນະປົກຄອງຊຸດໃໝ່ ຂອງພວກເຮົາຂຶ້ນ ; ນັ້ນແມ່ນຂະບວນການປະຕິວັດອັນໜຶ່ງແລ້ວ ; ແຕ່ວ່າໃນຈຳນວນຄົນ - ຂອງພວກເຮົາ, ລວມທັງຕົວເຮົາດ້ວຍ, ຍັງບໍ່ຮູ້ທິດສະດີປະຕິວັດ. ພວກເຮົາເອົາໃຈໃສ່ແຕ່ການຈັດຕັ້ງກອງທະຫານຕາມແບບຝະລັ່ງ ແຕ່ບໍ່ໄດ້ຈັດຕັ້ງອົງການມະຫາຊົນເພື່ອເປັນກຳລັງໜູນຫຼັງນັ້ນແມ່ນບໍ່ຖືກ ເພາະວ່າເມື່ອພວກຝະລັ່ງກັບຄືນມາ ດ້ວຍກຳລັງອັນ

ຫຼາຍກວ່າ ພວກເຮົາກໍ່ສູ້ພວກເຂົາບໍ່ໄດ້. ເຮົາຕັດສິນໃຈເຂົ້າຮ່ວມການປະຕິວັດ ເທື່ອນັ້ນແມ່ນຖືກ, ແຕ່ວ່າເຮົາບໍ່ຊອກຮຽນທິດສະດີປະຕິວັດໃນເວລາເຮັດການປະຕິວັດແມ່ນເປັນການບົກພ່ອງ.

12/ ເວລາພວກລ່າເມືອງຂຶ້ນຝະລັ່ງກັບຄືນເຂົ້າມາຫຼວງພະບາງ ໃນເດືອນ 4 ປີ 1946 ເຮົາພວມປະຕິບັດໜ້າທີ່ຢູ່ປາກແບງ ; ເວລານັ້ນທັງທະຫານ ແລະ ພົນລະເຮືອນ ໄດ້ແຕກພ່າຍຈາກຫຼວງພະບາງຂຶ້ນໄປຢູ່ປະເທດໄທ. ພວກນັ້ນບອກວ່າໃຫ້ເຮົາຮີບໜີ ໄປຢູ່ປະເທດໄທ ບໍ່ດັ່ງນັ້ນພວກຝະລັ່ງຂຶ້ນມາຮອດປາກແບງເຮົາຈະພົບອັນຕະລາຍ ; ໃນເວລາດຽວກັນນັ້ນ ພວກເຈົ້ານາຍໃຫຍ່ທີ່ເປັນລູກ, ເປັນຫຼານ, ເປັນນ້ອງເຈົ້າຊີວິດແລະຂ້າລາຊະການຊັ້ນເຈົ້າແຂວງ ແລະ ພະຍາຫຼວງເຄີຍກັບແຕ່ກ່ອນມາ ຊ້ຳຂຽນຈົດໝາຍມາເຊີນເຮົາລົງໄປຫຼວງພະບາງ ເພື່ອເຮັດວຽກຊ່ວຍກັນ ເນື່ອງຈາກວ່າ ຂ້າລາຊະການຫຼາຍຄົນໄດ້ໂຕນໜີໄປແລ້ວ, ພວກເພິ່ນຮັບປະກັນຄວາມປອດໄພໃຫ້ເຮົາ ແລະຮັບຮອງວ່າເຮົາຢາກເຮັດໜ້າທີ່ຫຍັງ ແລະ ຢາກໄປຢູ່ໃສກໍ່ຈະຈັດໃຫ້ໄດ້ຕາມຄວາມປະສົງ. ອັນນີ້ເປັນເລື່ອງພາໃຫ້ເຮົາຄິດຫຼາຍວ່າ ຈະລົງໄປຫຼວງພະບາງ ຫຼື ໜີຂ້າມໄປຢູ່ປະ. ເທດໄທດີກວ່າ. ທ້າຍສຸດເຮົາຕັດສິນໃຈປະຕຳແໜ່ງເຈົ້າແຂວງໄປຢູ່ປະເທດໄທ ແມ່ນຖືກຕ້ອງ ເພາະວ່ານັ້ນແມ່ນເຮົາຕັດສິນໃຈໄປນຳການປະຕິວັດຢ່າງບໍ່ລັ້ງເລ.

13/ ຫຼັງຈາກເຮັດສວນຢາດູດຂາຍໄປຢາໃຫ້ເຖົ້າບົ່ມແລະດູທົ່ງແລ້ວ, ໃນປີ 1947 ເຮົາຕັດສິນໃຈພາອ້າຍນ້ອງທະຫານລາວອິດສະຫຼະເຂົ້າໄປໃນດິນລາວ ທີ່ແຂວງໄຊຍະບູລີເພື່ອສ້າງເຂດຕໍ່ຕ້ານຂຶ້ນນັ້ນ ກໍ່ເປັນການຕັດສິນໃຈອັນຖືກຕ້ອງ ເພາະມັນສະແດງເຖິງຄວາມຄຽດແຄ້ນສັດຕູ, ເຖິງນ້ຳໃຈຮັກຊາດສູງ, ເຖິງນ້ຳໃຈເສຍສະຫຼະທຸກສິ່ງ ທຸກຢ່າງເພື່ອປະເທດຊາດ ແລະ ເຖິງຄວາມເຊື່ອໝັ້ນວ່າການປະຕິວັດຈະມີໄຊຊະນະ . ເມື່ອອ້າຍນ້ອງຫວຽດນາມເຂົ້າມາຮ່ວມນຳ ກໍ່ຍິ່ງເຮັດໃຫ້ເຮົາດີໃຈຂຶ້ນຕື່ມ ເພາະວ່າມັນເຮັດໃຫ້ພວກເຮົາມີພະນັກງານ.ແລະ ທະຫານເພີ່ມຂຶ້ນຕື່ມອີກ, ນອກຈາກນັ້ນພວກສະຫາຍຫວຽດນາມທີ່ມາຈາກທ່າໂບ່ຍ ຍັງເອົາປຶ້ມບົດຮຽນທີ່ປະທານໂຮ່ຈິມິນຂຽນແລະປຶ້ມທິດສະດີ ມາກ-ເລນິນຈຳນວນໜຶ່ງມາໃຫ້ເຮົາອ່ານ ເຮັດໃຫ້ເຮົາເຫັນແຈ້ງ ຕື່ມວ່າເສັ້ນທາງປະຕິວັດທີ່ເຮົາພວມເດີນຕາມຢູ່ນັ້ນແມ່ນເສັ້ນທາງ ທີ່ຈະພາພວກເຮົາໄປສູ່ໄຊຊະນະແທ້ ແລະ ເຮັດໃຫ້ເຮົາເຂົ້າໃຈວ່າ ຕ້ອງສ້າງຄຸນສົມບັດ, ສົນທຳປະຕິວັດແນວໃດ ເພື່ອຈະໄປນຳການປະຕິວັດໄດ້.

14/ ເມື່ອອ່ານເອກະສານດັ່ງກ່າວຂ້າງບົນນີ້ ເຮົາຮູ້ສຶກວ່າ ເຮົາອອກຈາກຕຳແໜ່ງ ເຈົ້າແຂວງມາ ເຮົາຍັງມີແນວຄິດຂອງຊົນຊັ້ນສັກດີນາແກມນັກຮຽນຮູ້, ນາຍທຶນນ້ອຍ ແລະຊາວນາ ; ເຮົາຕ້ອງຕໍ່ສູ້ລົດຜ່ອນໄປເຖິງລຶບລ້າງແນວຄິດດັ່ງກ່າວນັ້ນ ແລ້ວສ້າງແນວ

ຄິດຂອງຈີນຊົນກຳມະກອນ ແລະ ສັດຊື່ບໍລິສຸດຕໍ່ທິດສະດີມາກ-ເລນິນ ຈຶ່ງຈະໄປນຳການປະຕິວັດຈີນສຸດກົກສຸດປາຍໄດ້. ໃນຕົວຈິງກໍ່ເປັນແນວນັ້ນແທ້. ເວລາຖາງປ່າໄມ້ອີ້ ແລະ ຂຸດກົກເຫງົ້ານັ້ນອອກເພື່ອເຮັດສວນຢາຄູດ ຢູ່ຊຽງແສນປະເທດໄທ, ເຮົາຮູ້ສຶກອິດເມື່ອຍ ແລະ ຄິດຮອດຖານະຂອງເຮົາທີ່ພວມເປັນເຈົ້າແຂວງ, ບໍ່ໄດ້ອອກແຮງງານພັກປານນີ້ຈັກເທື່ອ. ເວລາເຈົ້າຂອງເຕົາບົ່ນໃບຢາມາຮ້າຍດ່າ ແລະ ສະແດງທ່າທີດູຖູກກໍ່ຍິ່ງເຮັດໃຫ້ເຮົາຄຽດແຄ້ນ ເພາະເວລາເປັນເຈົ້າແຂວງ ບໍ່ມີຜູ້ໃດມາສະແດງຕົວແບບນີ້ໃສ່ເຮົາໄດ້.

15/ ເວລາເຮົາຖືເປືອນພູລົງຫ້ວຍ ຫຼື ກິນເຂົ້າປ່າອາຫານຢ່າງຂາດໆເຂີນໆ ຢູ່ໃນເຂດຕໍ່ຕ້ານ, ເປັນຕົ້ນແມ່ນເວລາເຮົາຮ່ວມກັບອ້າຍນ້ອງທະຫານໄປດັກສະກັດຕີສັດຕູ, ມັນຍິ່ງເຮັດໃຫ້ແນວຄິດຫຼາກຫຼາຍອັນເກີດຂຶ້ນ. ບາງທີກໍ່ຄິດເຖິງເວລາເປັນເຈົ້າແຂວງບໍ່ເຄີຍພົບຄວາມທຸກຍາກແນວນີ້, ບາງທີກໍ່ຄິດຢາກໃຊ້ຄວາມຮູ້ທີ່ເຮົາມີ ໄປຂໍເຮັດການນຳບໍລິສັດຕ່າງໆ ເພື່ອຫາເງິນມາລ້ຽງຄອບຄົວ, ບາງທີກໍ່ຢາກໄປຂໍແຜ່ເງິນນຳປະຊາຊົນມາຊື້ອາຫານອັນແຊບນົວມາກິນ, ບາງທີກໍ່ຢາກພົບກັບເມຍຢູ່ນຳຄອບຄົວ ທີ່ຊຽງແສນເພື່ອຫາລ້ຽງຊີບດ້ວຍວິທີອັນສະດວກສະບາຍກວ່ານີ້ ແລະ ອື່ນໆອີກຮ້ອຍຢ່າງພັນແນວ. ແຕ່ວ່າເຮົາກໍເອົານ້ຳໃຈຮັກຊາດ ແລະ ເອົາການຕັດສິນໃຈອັນຖືກຕ້ອງຫຼາຍເທື່ອ ໃນເມື່ອກ່ອນນີ້ ມາເປັນກຳລັງໃຈເພື່ອຕໍ່ສູ້ສະກັດກັ້ນແນວຄິດທີ່ບໍ່ຖືກຕ້ອງເຫຼົ່ານັ້ນ ໃຫ້ລຶດຜ່ອນລົງ, ເຮັດໃຫ້ການດຳລົງຊີວິດຂອງເຮົາເປັນແບບຢ່າງອັນດີໃຫ້ແກ່ຜູ້ອື່ນ.

16/ ເວລາເຮົາໄດ້ຖືກຮັບເອົາເຂົ້າພັກກອມມູນິດອິນດູຈີນ ແມ່ນການຊຸກຍູ້ກຳລັງໃຈ ຂອງເຮົາໃຫ້ເດັດດ່ຽວຕໍ່ສູ້ແນວຄິດທີ່ຜິດພາດ ແລະ ສ້າງຕົວເຮົາໃຫ້ເປັນນັກປະຕິວັດ ດີຂຶ້ນກວ່າເກົ່າ. ເຈົ້າເພັດຊະລາດທີ່ເປັນປະມຸກລັດແຕ່ງຕັ້ງໃຫ້ເຮົາເປັນຜູ້ຕາງໜ້າ ລັດຖະບານ ແລະ ເປັນປະທານເຂດໄຊຍະບູລີ ແລະ ນ້ຳທາກໍ່ບໍ່ເຮັດໃຫ້ເຮົາຢ້ານກົວ ຫຼືອວດອົ່ງທະນົງຕົວຢ່າງໃດ, ມີແຕ່ຕັ້ງໜ້າເຮັດວຽກ ແລະ ສ້າງຕົວໃຫ້ອ້າຍນ້ອງພະນັກງານ, ທະຫານ ແລະ ປະຊາຊົນຮັກແພງ, ເຊື່ອຖື ແລະ ນັບຖື, ເຮັດໃຫ້ ທັງສອງເຂດຂະຫຍາຍຕົວກວ້າງອອກຢ່າງບໍ່ຢຸດຢັ້ງ.

17/ ຫຼັງຈາກຖືກເລືອກຕັ້ງຈາກກອງປະຊຸມໃຫຍ່ຜູ້ແທນ ແນວລາວຕໍ່ຕ້ານ ໃນວັນທີ 13-8-50 ໃຫ້ເຂົ້າເປັນກຳມະການສູນກາງແນວລາວອິດສະຫຼະແລ້ວ, ເຮົາໄດ້ພ້ອມກັບຄະນະໄປຢາມສູນກາງພັກກອມມູນິດອິນດູຈີນ ອັນແມ່ນສະຫາຍໂຫຈີ່ມິນເປັນປະທານ. ພວກສະຫາຍຫວຽດນາມໃນຄະນະກຳມະການສູນກາງພັກ ໄດ້ໃຫ້ຄວາມອົບອຸ່ນແກ່ພວກເຮົາເປັນຢ່າງດີ ແລະ ໄດ້ເອົາເອກະສານຮ່ຳຮຽນໃຫ້ເຮົາຫຼາຍອັນ. ປະທານໂຫຈີ່ມິນໄດ້ໃຊ້ເວລາຫຼາຍສົມຄວນ ເພື່ອຊີ້ແຈງໃຫ້ເຮົາຮູ້ແຈ້ງຕື່ມວ່າ ເປັນຫຍັງໂລກຈຶ່ງເຮັດການ

ປະຕິວັດສັງຄົມນິຍົມ, ເຮັດການປະຕິວັດຕ້ອງເຮັດແນວໃດ, ເຮັດການປະຕິວັດ ເພື່ອຈຸດປະສົງຫຍັງ, ແມ່ນອັນໃດພາໃຫ້ການປະຕິວັດມີໄຊຢ່າງເດັດຂາດ. ທຸກສິ່ງທີ່ເພິ່ນເລົ່ານັ້ນລ້ວນແຕ່ແມ່ນສິ່ງທີ່ເຮົາຢາກຟັງ ແລະ ລ້ວນແຕ່ແມ່ນສິ່ງທີ່ຊ່ວຍໃຫ້ເຮົາ ລຶງຈິດລຶງໃຈ, ເພິ່ນທະວີຄວາມເຊື່ອໝັ້ນໃນໄຊຊະນະຂອງການປະຕິວັດ ແລະ ເພິ່ນທະວີກຳລັງແຮງດ້ານແນວຄິດໃຫ້ເຮົາຕໍ່ສູ້ລົບລ້າງ ແນວຄິດຊົນຊັ້ນເດີມອັນສັບສົນ ຂອງເຮົາລົງໄດ້ເທື່ອລະກ້າວ.

18/ ການທີ່ເຮົາຖືກເລືອກຕັ້ງເຂົ້າເປັນກຳມະການສູນກາງ ແລະ ເປັນຄະນະປະຈຳໃນກອງປະຊຸມໃຫຍ່ຂອງພັກປະຊາຊົນລາວເທື່ອທີ່ໜຶ່ງ, ເປັນກຳມະການສູນກາງແລະເປັນກຳມະການກົມການເມືອງຂອງພັກປະຊາຊົນປະຕິວັດລາວເທື່ອທີ່ສອງແລະທີ່ສາມໄດ້ເຮັດໃຫ້ເຮົາມີໂອກາດຄົ້ນຄວ້າຮ່ຳຮຽນທິດສະດີ ມາກ-ເລນິນ ເລິກເຊິ່ງ ແລະ ເປັນລະບົບກວ່າເກົ່າຂຶ້ນຈັກໄຈ ; ການຕຳໜິກໍ່ສ້າງຂອງເພື່ອນສະຫາຍໃນສູນກາງ ແລະ ທ້ອງຖິ່ນໄດ້ຊ່ວຍເຫຼືອເຮົາຫຼາຍໃນການຕໍ່ສູ້ແນວຄິດເກົ່າ ໃຫ້ລຶດນ້ອຍຖອຍລົງ ແລະ ກໍ່ສ້າງແນວຄິດໃໝ່, ແນວຄິດສັງຄົມນິຍົມ, ໃຫ້ເພີ່ມທະວີຂຶ້ນເທື່ອລະກ້າວ. ເຮົາໄດ້ຖືກແຕ່ງຕັ້ງໄປຮ່ວມກອງປະຊຸມພັກ ຫຼື ພິທີອື່ນໆຫຼາຍສິບເທື່ອໃນຕ່າງປະເທດ,ອັນນີ້ກໍ່ໄດ້ຊ່ວຍໃຫ້ເຮົາຮ່ຳຮຽນເອົາບົດຮຽນອັນດີ ແລະ ປັບປຸງຫຼັກໝັ້ນຊົນຊັ້ນຂອງເຮົາ ໃຫ້ໝັ້ນກວ່າເກົ່າ ແລະ ໃນຕົວຂອງມັນກໍ່ແມ່ນການຊ່ວຍໃຫ້ເຮົາຕໍ່ສູ້ແນວຄິດຫຼ້າຫຼັງຂອງເຮົາ ໃຫ້ງ່າຍ ແລະ ດີຂຶ້ນເທື່ອລະກ້າວອີກຄືກັນ.

19/ ເວົ້າລວມແລ້ວ, ຄົນບ້ານນອກຜູ້ໜຶ່ງ, ຄືເຮົານີ້ ເມື່ອໄດ້ຮ່ຳຮຽນ ແລະ ເຮັດການຈົນກ້າວຂຶ້ນເປັນຊົນຊັ້ນສັກດີນາ, ຖ້າຫາກມີນ້ຳໃຈຮັກຊາດ ແລະ ນ້ຳໃຈຢາກກ້າວໜ້າສູງ, ຕັດສິນໃຈຕໍ່ສູ້ແນວຄິດລົງມາເຮັດການປະຕິວັດ ແລະ ສູ້ຊົນສ້າງຕົວຕາມການຕຳໜິ ກໍ່ສ້າງຂອງຜູ້ເພື່ອນ ແລະ ປະຊາຊົນ, ກໍ່ສາມາດກ້າວຂຶ້ນນຳການປະຕິວັດ ຈົນເປັນກຳມະການສູນກາງພັກ, ເປັນກຳມະການກົມການເມືອງແລະເປັນຮອງປະທານສະພາລັດຖະມົນຕີໄດ້. ດັ່ງນັ້ນ, ຜູ້ທີ່ບໍ່ໄດ້ເປັນສັກດີນາ, ບໍ່ຈຳເປັນຕ້ອງຕໍ່ສູ້ລົງ, ມີແຕ່ຕໍ່ສູ້ເພື່ອກ້າວຂຶ້ນນຳການປະຕິວັດນັ້ນ, ຄົງຈະຕໍ່ສູ້ສ້າງຕົວໃຫ້ກ້າວຂຶ້ນເຖິງຂັ້ນສູງຂອງການປະຕິວັດ ສະດວກດີກວ່າເຮົາ, ບັນຫາສຳຄັນແມ່ນມີຄວາມຕັດສິນໃຈຕໍ່ສູ້ແນວຄິດຫຼ້າຫຼັງຂອງຕົນເພື່ອສ້າງຕົວໃຫ້ມີຄວາມສາມາດແລະຄຸນສົມບັດສົມທຳປະຕິວັດເທົ່ານັ້ນ. ການຕໍ່ສູ້ກັບຕົນເອງນັ້ນມັນແມ່ນຕົນເອງຕ້ອງຊອກໃຫ້ເຫັນແນວຄິດ, ຄວາມເວົ້າຫຼືການກະທຳທີ່ຜິດພາດຂອງຕົນເອົາເອງແລ້ວຕັດສິນໃຈເດັດດ່ຽວຕໍ່ສູ້ເຮັດໃຫ້ອັນເກົ່າທີ່ຜິດພາດຂອງຕົນ ລຶດນ້ອຍຖອຍລົງຈົນສູນຫາຍໄປແລ້ວບຸກບືນສ້າງແຕ່ອັນໃໝ່ທີ່ຖືກຕ້ອງໃສ່ຕົວເພື່ອເປັນການເປັນອັນກ້າວໜ້າຖືກຕາມທີ່ ທິດສະດີ ມາກ-ເລນິນແລະມະຕິຕ່າງໆຂອງພັກໄດ້ບອກໄວ້.ຖ້າ

ວ່າເຮົາມີແຕ່ການໜ້າເຮັດວຽກວິຊາສະເພາະໃຫ້ດີເທົ່ານັ້ນ ເຮົາກໍ່ຈະມີແຕ່ຈົມເຄີຍໃນວຽກງານເທົ່ານັ້ນ, ຄັນຫາກບໍ່ຕັ້ງໃຈຮ່ຳຮຽນທິດສະດີການເມືອງໄປພ້ອມກັນ ແລ້ວເອົາຄວາມເຂົ້າໃຈອັນນັ້ນ ມາດັດແປງແນວຄິດຈິດໃຈຂອງຕົນເອງ ເຮົາກໍ່ຈະບໍ່ມີຄວາມກ້າວໜ້າ ທາງດ້ານການເມືອງ ແລະ ແນວຄິດໄດ້. ດ້ວຍເຫດນັ້ນ ເຮົາຈຶ່ງເຂົ້າໃຈເຊື່ອມຊຶມອີກໃນຄວາມເວົ້າຂອງພັກເຮົາທີ່ວ່າ ໃນສາມການປະຕິວັດທີ່ພວກເຮົາຕ້ອງເຮັດນັ້ນ ເອົາການປະຕິວັດດ້ານວັດທະນະທຳ ແລະ ແນວຄິດໄປກ່ອນ ໂດຍເອົາການສຶກສາເປັນໃຈກາງນັ້ນ ແມ່ນຖືກຕ້ອງທີ່ສຸດ ເພື່ອສ້າງຕົວເອງໃຫ້ເປັນຄົນລາວໃໝ່, ຄົນລາວສັງຄົມນິຍົມ.

ຖ້າປຽບໃສ່ເມື່ອຍັງເຮັດວຽກ ແລະ ດຳລົງຊີວິດຢູ່ໃນລະບອບເກົ່າ ກັບຄວາມຮູ້ສຶກ ຕົນຕົວຢູ່ໃນເວລານີ້ແລ້ວ, ເຮົາຮູ້ສຶກວ່າຄວາມຕັດສິນໃຈໂຕນໜີຈາກພວກລ່າເມືອງຂຶ້ນຟະລັ່ງໄປນຳການປະຕິວັດຢ່າງສຸດກົກສຸດປາຍ ມັນໄດ້ຊ່ວຍໃຫ້ເຮົາກັບກາຍມາເປັນຄົນເກີດໃໝ່ ໝົດທຸກດ້ານ. ອັນນີ້ກໍ່ແມ່ນຍ້ອນພັກ ແລະ ປະຊາຊົນລາວພ້ອມທັງເພື່ອນມິດປະເທດອ້າຍນ້ອງ ພ້ອມກັນໂຜດຜາຍສະສາງລ້າງສ່ວຍ ແລະ ກໍ່ສ້າງເອົາເຮົາ, ຍ້ອນພາກສ່ວນທິດສະດີມາກ- ເລນິນທີ່ເຮົາສາມາດເຂົ້າໃຈໄດ້ນັ້ນ ເປັນແສງປະທີບເຍືອງທາງໃຫ້ເຮົາ ຮູ້ເດີນໄປສູ່ບ່ອນສ້າງຕົວຈົນມີສະພາບແລະຖານະດີຂຶ້ນດຽວນີ້. ເຮົາຂໍອາໄສປຶ້ມຫົວນີ້ເພື່ອສະແດງຄວາມຂອບໃຈອັນຈິງໃຈ ແລະ ຄວາມຮູ້ບຸນຄຸນອັນເລິກເຊິ່ງຂອງເຮົາຕໍ່ໝົດທຸກຄົນ ທີ່ໄດ້ອົດທົນກໍ່ສ້າງເຮົາ ໃຫ້ຮູ້ຊອກຫາເອົາຄຸນຄ່າຂອງມະນຸດຄືນມາໃສ່ຕົວເຮົາ ຕາມຄວາມສາມາດອັນຍັງອ່ອນນ້ອຍຂອງເຮົາ. ເຮົາຈະຕັ້ງໜ້າສືບຕໍ່ບຸກບືນສ້າງຕົວເອງ ໃຫ້ມີຄວາມກ້າວໜ້າຕື່ມອີກ ເພື່ອລະເລັ່ງລະນ້ອຍຕາມຄວາມສາມາດຂອງເຮົາ ໃຫ້ສົມກັບຄວາມຮັກແພງຂອງເພື່ອນມິດທີ່ຢູ່ໃກ້ ແລະ ໄກທຸກໆຄົນ.

ສາລະບານ

ຫົວເລື່ອງ ... ໜ້າ

ຄຳນຳ ... ກ

ຄຳນຳໜ້າ ... ຄ

ເຮົາໄດ້ເຂົ້າຮ່ວມການປະຕິວັດແນວໃດ ?

I ບັ້ນເຍົາໄວ ... 1

II ບັ້ນເຮັດການນຳຝະລັ່ງ ... 16

III ບັ້ນຍີ່ປຸ່ນມາໄລ່ຝະລັ່ງ ... 30

IV ບັ້ນຍີ່ປຸ່ນປະລາໄຊ ... 36

V ຝະລັ່ງກັບຄືນມາລາວ ... 52

VI ການເຂົ້າໄປຕັ້ງເຂດຕໍ່ຕ້ານໃນດິນລາວ ... 57

VII ການກໍ່ສ້າງກຳລັງການເມືອງ ແລະ ກຳລັງປະກອບອາວຸດ ... 83

VIII ຈັກກະພັດອາເມລິກາແຊກແຊງຮຸກຮານລາວ ... 90

IX ການໂຕນອອກຈາກຄຸກ ... 127

X ການລັດຖະປະຫານຂອງກອງທະຫານຮາບອາກາດຝ່າຍວຽງຈັນ ໃນວັນທີ 9/8/60 ... 142

XI ການເຮັດວຽກໃນລັດຖະບານປະສົມ ... 162

XII ຍຸດທະສາດ ແລະ ຍຸດໂທບາຍຂອງແນວລາວຮັກຊາດ ... 172

XIII ພາກສະຫຼຸບ ... 201

ແກ້ຄຳຜິດ

ໜ້າ	ແຖວ	ຄຳຜິດ	ໃຫ້ປ່ຽນເປັນ
3	19	ແຮ້ມ	15 ມ້
3	26	ຄອກມ້າເຖິງ	ຄອກມ້າເຖິກ
8	17	ດັງວຽງ	ຄັງວຽງ
8	22	ວົງເຕັ້ນ	ວິງເຕັ້ນ
11	8	ພູກັງ	ພູກິງ
11	9	ເມືອງຊອນ	ເມືອງຊ່ອນ
11	8	ພູເລີດ	ພູເລີຍ
19	22	ບົກຜອງ	ບົກພອງ
23	1	ກອນມີແຊອິນດູຈີນ	ກອນມີອິນດູຈີນ
23	26	ແຂວງສາມລຽມ	ແຂວງສຽມລາຍ
39	28	ແຈວປານ້ຳ	ແຈວປາບ້ຳ
44	9	ຂັນແຊວງງ	ຂັນແຊວ ໆ
45	ສຸດທ້າຍ	ສົມບູລະພາ	ສົມບູລະຍາ
49	20	ພວກຍຶດຄອງ	ພວມຍຶດຄອງ
53	1	1945	1946
53	17	ຈຳນວນ	ຈ່ຳນວນ
55	21	ຈຳນວນ	ຈ່ຳນວນ
55	25	ໝາກຜົນ	ໝານຜັກ
59	23	ຜານພາຍ	ຜານກາຍ
62	26	–	ໃຫ້ຕື່ມນາຍຈຳລອງດາວເຮືອງ
71	19	ຕອບ	ຄອບ
77	17	ໄດ້	ໄປ
82	23	ຍັງ	ຟັງ
82	25	ດັງສາງ	ຄັງສາງ
90	5	ຂ້າມຄຳ	ໃຫ້ຕື່ມຄະນະຜູ້ແທນປະເທດ ໂປໂລຍ ແລະ
93	22	ທຽບເຫງົາ.	ງຽບເຫງົາ
103	25	8 ຄືນ	9 ຄືນ
103	28	ໃຫ້ຂ້າຈື່ສະຫາຍຄຳພາຍ ບຸບຜາອອກ	
104	1		ໃຫ້ຕື່ມວ່າສະຫາຍຄຳພາຍບຸບຜາ ເປັນຜູ້ແທນແຂວງຜົ້ງສາລີ
104	2	5 ເດືອນ	6 ເດືອນ
120	7	ດີແນວນັ້ນ	ຄືແນວນັ້ນ
135	29	ແຍກ	ແບກ
179	11	ບໍ່ຮູ້	ບໍ່ສູ້

ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ
ພິມຄັ້ງທີ່ 1 ຈຳນວນ 5.000ຫົວ